

# ການເປີດເຜີຍພະລັງ ຄວາມສາມາດຂອງເຍົາວະຊົນ



ສະຖາບັນຮູຣີ





ປຶ້ມຫົວທີ 5

# ການເປີດເຜີຍພະລັງ
# ຄວາມສາມາດຂອງເຍົາວະຊົນ

ສະຖາບັນຣູອີ

**ບັນດາປື້ມທີ່ຢູ່ໃນຊຸດ:**

ຂ້າງລຸ່ມນີ້ແມ່ນລາຍຊື່ປື້ມ ໃນຊຸດທີ່ມີຢູ່ໃນປະຈຸບັນ ເຊິ່ງໄດ້ຮັບການອອກແບບໂດຍສະຖາບັນຣູຮີ. ປື້ມເລົ່ານີ້ແມ່ນໄດ້ມີຄວາມຕັ້ງໃຈໄວ້ວ່າ ຈະໄດ້ນຳໃຊ້ເປັນລຳດັບຕົ້ນຂອງຫຼັກສູດໃນແຜນງານ ຂອງການສຶກສາທີ່ຈັດໄວ້ເປັນລະບົບສຳລັບຊາວໜຸ່ມແລະຜູ້ໃຫຍ່ ມຸ້ງໝາຍເພື່ອການເພີ້ມປະສິດຕິພາບ ຫຼືຄວາມອາດສາມາດໃນການຮັບໃຊ້. ທາງສະຖາບັນຣູຮີ ພວມກຳລັງພັດທະນາຊຸດຫຼັກສູດທີ່ເຊື່ອມໂຍງມາຈາກປື້ມຫົວທີສາມໃນຊຸດປື້ມດັ່ງກ່າວ ແມ່ນເພື່ອເຝິກອົບຮົມຄູສອນຊັ້ນຮຽນເດັກນ້ອຍ ແລະ ສິ່ງເລົ່ານີ້ແມ່ນໄດ້ຮັບການບົ່ງຊີ້ຢູ່ໃນລາຍການເຊັ່ນກັນ. ແລະຂໍໃຫ້ຈົດຈຳໄວ້ວ່າລາຍການຈະຜ່ານການປ່ຽນແປງ, ອີງຕາມປະສົບການ ດ້ານຄວາມກ້າວໜ້າຈາກພາກສະໜາມ ແລະ ສິ່ງໃໝ່ໆຈະໄດ້ຮັບການເພີ່ມພູນໃນຈຳນວນທີ່ເພີ່ມຂຶ້ນ ຂອງອົງປະກອບຕ່າງໆໃນຫຼັກສູດ ເຊິ່ງຢູ່ພາຍໃຕ້ການພັດທະນາ ທີ່ດຳເນີນໄປຮອດຂັ້ນຕອນທີ່ຫຼັກສູດ ດັ່ງກ່າວສາມາດສ້າງໃຫ້ມີໄວ້ຢ່າງກວ້າງຂວາງ.

| | | |
|---|---|---|
| ປື້ມຫົວທີ 1: | ການໄຕ່ຕອງກ່ຽວກັບຊີວິດແຫ່ງຈິດວິນຍານ |
| ປື້ມຫົວທີ 2: | ການລຸກຂຶ້ນມາຮັບໃຊ້ |
| ປື້ມຫົວທີ 3: | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 1 |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 2 (ຫຼັກສູດເຊື່ອມໂຍງ) |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 3 (ຫຼັກສູດເຊື່ອມໂຍງ) |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 4 (ຫຼັກສູດເຊື່ອມໂຍງ) |
| ປື້ມຫົວທີ 4: | ການປະກົດຂອງພຣະສາສະດາຄູ່ |
| ປື້ມຫົວທີ 5: | ການປົດປ່ອຍພະລັງຂອງເຍົາວະຊົນ |
| | ແຮງບັນດານໃຈໃນການລິເລີ້ມ: ຫຼັກສູດເຊື່ອມໂຍງທຳອິດຂອງເຫຼັ້ມ 5 |
| | ກຸ່ມທີ່ກວ້າງຂຶ້ນ: ຫຼັກສູດເຊື່ອມໂຍງທີ່ສອງຂອງເຫຼັ້ມ 5 |
| ປື້ມຫົວທີ 6: | ການເຜີຍແຜ່ສາສະໜາ |
| ປື້ມຫົວທີ 7: | ການຍ່າງກ້າວໄປດ້ວຍກັນໃນເສັ້ນທາງແຫ່ງການຮັບໃຊ້ |
| ປື້ມຫົວທີ 8: | ພຣະປະຕິນຍາຂອງພຣະບາຮາອຸລລາຫ໌ |
| ປື້ມຫົວທີ 9: | ການຮັບຮູ້ມຸມມອງທາງປະຫວັດສາດ |
| ປື້ມຫົວທີ 10: | ການສ້າງຊຸມຊົນທີ່ມີຊີວິດຊີວາ |
| ປື້ມຫົວທີ 11: | ປັດໃຈທາງດ້ານວັດຖຸ |
| ປື້ມຫົວທີ 12: | ຄອບຄົວແລະຊຸມຊົນ |
| ປື້ມຫົວທີ 13: | ການມີສ່ວນຮ່ວມກັບພຶດຕິກຳທາງສັງຄົມ |
| ປື້ມຫົວທີ 14: | ການເຂົ້າຮ່ວມໃນການປະທະກະຖາຕໍ່ສາທາລະນະຊົນ |

Copyright © 2007, 2023, 2024 by the Ruhi Foundation, Colombia
All rights reserved. Edition 2.1.1.PE.PV (provisional translation) published in April 2024
Printed in Laos

Originally published in Spanish as *Liberando los poderes de los prejóvenes*
Copyright © 2006, 2014, 2022 by the Ruhi Foundation, Colombia
ISBN 978-628-95102-2-5

Permission for a limited printing of this book in Lao has been granted to the Spiritual Assembly of the Bahá'ís of Lao PDR by the Ruhi Institute.

Ruhi Institute
Apartado Postal: 402032
Cali, Colombia
Tel: 57 2 828-2599
Email: instituto@ruhi.org
Website: www.ruhi.org

Spiritual Assembly of the Bahá'ís of Lao PDR
Nonsavanh Village, Saysettha District
Vientiane Capital, Lao PDR
Tel: +856 21 216996
Email: nsa@bahailao.org
Website: www.bahailao.org

## ສາລະບານ


ຂໍ້ຄິດບາງປະການສຳລັບຜູ້ອຳນວຍຄວາມສະດວກ v

ຊ້ວງແລກເລີ້ມຂອງຊີວິດ 1

ຊ້ວງໄວແຫ່ງພັນທະສັນຍາ 60

ການຮັບໃຊ້ເປັນຜູ້ຊຸກຍູ້ເຍົາວະຊົນ 110

## ຂໍ້ຄິດບາງປະການສຳລັບຜູ້ອຳນວຍຄວາມສະດວກ

ເລີ່ມຕັ້ງແຕ່ຍຸກກໍ່ຕັ້ງໃນຕົ້ນທົດສະວັດ 1970, ສະຖາບັນຣູຮີ ໄດ້ບຸກບືນຮັບໃຊ້ຜ່ານກິດຈະກຳດ້ານການສຶກສາສຳລັບຄົນລຸ້ນເຍົາອາຍຸລະຫວ່າງ 12 ເຖິງ 15 ປີ, ສ່ວນຫຼາຍເອີ້ນວ່າ "ເຍົາວະຊົນ", ຜູ້ເຊິ່ງເປັນສ່ວນສຳຄັນໃນສັງຄົມ. ເມື່ອໄດ້ເຫັນຄວາມມີອຸດົມການ ແລະ ມີພາລະກຳລັງຂອງຫຼາຍຕໍ່ຫຼາຍຄົນໃນໄວນີ້, ສະຖາບັນກໍ່ເລີ່ມເຊື່ອໝັ້ນໃນຄວາມສຳຄັນ ຂອງການໃຫ້ໂອກາດແກ່ພວກເຂົາໄດ້ຄົ້ນຄວ້າຫຼາຍແນວຄວາມຄິດ ແລະ ມຸມມອງທີ່ຈະອຳນວຍໃຫ້ພວກເຂົາສາມາດຮັບມືກັບຄວາມຊັບຊ້ອນຂອງຊີວິດ, ຕໍ່ສູ້ກັບແຮງພັກດັນແຫ່ງການເຊື່ອມສະຫຼາຍທາງສິນລະທັມ ທີ່ກຳລັງເພີ່ມທະວີຂຶ້ນໃນທຸກຫົນແຫ່ງ ແລະ ກາຍເປັນໂຕແທນແຫ່ງຄວາມປ່ຽນແປງທາງສັງຄົມ. ໃນຫຼາຍທົດສະວັດຕໍ່ມາ ເປັນໄລຍະຂອງພາກປະຕິບັດ ແລະ ການທົບທວນທີ່ໄດ້ເພີ່ມພູນຜົນຮັບຈາກປະສົບການທົ່ວໂລກ ໃນການຮັບໃຊ້ເຍົາວະຊົນຈາກພື້ນຖານຈົນຫຼາກຫຼາຍ ລວມເຖິງວຽກງານໃນດ້ານການພັດທະນາທີ່ໂດດເດັ່ນທີ່ສຸດກໍ່ແມ່ນໃນຄວາມຮູ້ໜັງສື. ເມື່ອເຖິງປະມານປີ 2000 ແນວຄວາມຄິດຂອງການເພີ່ມພະລັງທາງຈິດວິນຍານຂອງເຍົາວະຊົນໄດ້ກຳເນີດຂຶ້ນ, ແລະດ້ວຍເຫດນີ້ ຈຶ່ງມີແງ່ມູມຕ່າງໆຂອງໂຄງການໄລຍະເວລາສອງປີ ທີ່ມຸ່ງຫວັງທີ່ຈະປົດປ່ອຍພະລັງທາງສະຕິປັນຍາ ແລະ ຈິດວິນຍານເພື່ອຮັບໃຊ້ມະນຸດຊາດ.

ເຊັ່ນດຽວກັບຄວາມພະຍາຍາມອື່ນໆຂອງສະຖາບັນຣູຮີ, ໂຄງການເສີມສ້າງພະລັງທາງຈິດວິນຍານຂອງເຍົາວະຊົນ ໄດ້ຮັບການສະເໜີໃນລະດັບຮາກຫຍ້າ ຜ່ານຂະບວນການສຶກສາທາງໄກທີ່ໃນກໍລະນີນີ້ປະກອບດ້ວຍ, ອົງປະກອບຫຼັກສາມປະການໄດ້ແກ່: "ກຸ່ມເຍົາວະຊົນ", "ຜູ້ຊຸກຍູ້ເຍົາວະຊົນ", ແລະ ຊຸດເອກະສານສະເພາະ. *ການປົດປ່ອຍພະລັງຂອງເຍົາວະຊົນ*, ປື້ມເຫຼັ້ມທີຫ້າຂອງລຳດັບຫຼັກສູດຂອງສະຖາບັນ, ມີຈຸດມຸ່ງໝາຍເພື່ອຊ່ວຍເຫຼືອຜູ້ທີ່ຕ້ອງການໃຫ້ກຸ່ມຂອງຄົນລຸ້ນເຍົາ ຈາກໝູ່ບ້ານຫຼືລະແວກບ້ານຂອງເຂົາໄດ້ເຂົ້າຮ່ວມໂຄງການ. ເປັນຊຸດທຳອິດຂອງຫຼັກສູດ, ຫຼັກສູດເຊື່ອມໂຍງຈາກລຳດັບຂອງຫຼັກສູດ, ທີ່ຈະຊ່ວຍບຸກຄົນເລົ່ານີ້ພັດທະນາຄວາມສາມາດ ທີ່ຈຳເປັນໃນການເຮັດໜ້າທີ່ເປັນ "ຜູ້ຊຸກຍູ້ເຍົາວະຊົນ" - ການກຳໜົດໃນຕົວຂອງມັນເອງ, ບົ່ງບອກເຖິງລັກສະນະການກະທຳການຮັບໃຊ້ທີ່ກ່ຽວຂ້ອງ. ແມ່ນວ່າບໍ່ແມ່ນທຸກຄົນຈະສຶກສາປື້ມເຫຼັ້ມນີ້ ແລ້ວຈະເຂົ້າສູ່ຄວາມພະຍາຍາມດ້ານນີ້, ແຕ່ກໍ່ຫວັງວ່າທຸກຄົນຈະໄດ້ຮັບແຮງບັນດານໃຈຈາກຫົວຂໍ້ທີ່ກ່າວເຖິງ ແລະ ຕະໜັກເຖິງຄວາມສຳຄັນຂອງການໃຫ້ຄວາມເອົາໃຈໃສ່ ຕໍ່ຄວາມມຸ່ງມາດປາດຖະໜາອັນສູງສົ່ງຂອງເຍົາວະຊົນ - ນີ້ເປັນສ່ວນສຳຄັນໃນການສ້າງວັດທະນະທຳທີ່ສົ່ງເສີມທັດສະນະຄະຕິຕໍ່ຄົນໜຸ່ມສາວ ທີ່ແຕກຕ່າງຈາກທັດສະນະຄະຕິທີ່ແຜ່ຫຼາຍໃນສັງຄົມປັດຈຸບັນ. ໃນສະພາບແວດລ້ອມເຊັ່ນນີ້, ແມ່ນແຕ່ບຸກຄົນທີ່ບໍ່ກ່ຽວຂ້ອງໂດຍຕົງ ກັບໂຄງການກໍ່ຍັງພ້ອມທີ່ຈະໃຫ້ການສະໜັບສະໜູນກິດຈະກຳທີ່ກຳລັງເຕີບໂຕຂອງໂຄງການ.

ສິ່ງທີ່ຜູ້ເຮັດໜ້າທີ່ເປັນຜູ້ອຳນວຍຄວາມສະດວກເຫຼັ້ມ 5 ຄວນຮັບຮູ້ກໍຄື, ໃນບັນດາຜູ້ເຂົ້າຮ່ວມຈະມີຊາວໜຸ່ມຈຳນວນຫຼາຍໃນຊ່ວງໄວລຸ້ນຕອນປາຍ ຫຼືໄວຊາວປາຍປີຕົ້ນໆ ທີ່ເຂົ້າສູ່ລຳດັບຂອງຫຼັກສູດດ້ວຍຄວາມປາດຖະໜາທີ່ຈະຮັບໃຊ້ເປັນ ຜູ້ຊຸກຍູ້ເຍົາວະຊົນ ແລະ ດ້ວຍຄວາມສາມາດຂອງພວນ

ສະຫວັນທັງໝົດທີ່ຈຳເປັນໃນການຮັບໃຊ້ດ້ານນີ້. ບາງຄົນຈະມາຕິດຕໍ່ກັບຄວາມເຊື່ອຜ່ານການປຶກສາຫາລືກັບໝູ່ເພື່ອນ ເຊິ່ງເນັ້ນໃສ່ບົດບາດທີ່ພວກເຂົາສາມາດໃຫ້ຄວາມຮູ້ແກ່ຄົນລຸ້ນເຍົາໄດ້. ບາງຄົນເຄີຍໄດ້ຜ່ານ ໂຄງການເສີມສ້າງພະລັງທາງຈິດວິນຍານຂອງເຍົາວະຊົນ ຕົນທີ່ພວກເຂົາເປັນເຍົາວະຊົນ ແລະ ຫຼັງຈາກນັ້ນບໍ່ດົນກໍເລີ່ມສຶກສາປື້ມເຫຼັ້ມ 1. ບໍ່ວ່າເສັ້ນທາງໃດກໍໄດ້ນຳພາພວກເຂົາສູ່ຂະບວນການຂອງສະຖາບັນ, ບັດນີ້ພວກເຂົາຈະເປັນສ່ວນໜຶ່ງຂອງບຸກຄົນໃນກຸ່ມແກນກາງທີ່ກຳລັງເຕີບໂຕ ຂອງໝູ່ບ້ານຫຼືລະແວກບ້ານຂອງພວກເຂົາ ທີ່ມຸ່ງໝັ້ນໃນການພັດທະນາໃຫ້ດີຂຶ້ນ, ແລະ ໃນບໍລິບົດນີ້ຈະສະສົມປະສົບການໃນການຢ້ຽມບ້ານ ເພື່ອສຳຫຼວດໂດຍໃຊ້ຫົວຂໍ້ເລື່ອງຄອບຄົຍທີ່ເປັນສູນກາງຂອງຄວາມສັດທາ - ການກະທຳການຮັບໃຊ້ນີ້ໄດ້ກ່າວໄວ້ໃນປື້ມເຫຼັ້ມ 2. ໃນຖານະທີ່ເປັນສ່ວນໜຶ່ງຂອງກຸ່ມແກນກາງ ນອກຈາກນີ້ພວກເຂົາຫຼາຍຄົນກໍໄດ້ປະສານຢ່າງໃກ້ຊິດ ກັບກຸ່ມເຍົາວະຊົນຢ່າງໜ້ອຍໜຶ່ງກຸ່ມໃນທ້ອງຖິ່ນ ແລະ ຈະຊ່ວຍຜູ້ຊຸກຍູ້ເຍົາວະຊົນດຳເນີນກິດຈະກຳຕ່າງໆ ແລະ ໄປຢ້ຽມຢາມພໍ່ແມ່ຮ່ວມກັນເປັນປະຈຳ ເພື່ອປຶກສາຫາລືກ່ຽວກັບແນວຄິດ ແລະ ແນວທາງທີ່ກ່ຽວຂ້ອງກັບໂຄງການ. ມາຮອດຈຸດນີ້ , ພວກເຂົາທຸກຄົນຈະມີຄວາມຮູ້ຫຼາຍກ່ຽວກັບຄຳສອນຂອງບາຮາຍ, ເຊິ່ງຈະເລິກເຊິ່ງຍິ່ງຂຶ້ນຜ່ານການສຶກສາປື້ມເຫຼັ້ມ 3 ແລະ 4, ແລະ ຈະສະແດງທັກສະ, ຄວາມສາມາດ, ທັດສະນະຄະຕິ ແລະ ຄຸນລັກສະນະທາງຈິດວິນຍານຕ່າງໆທີ່ຈຳເປັນໃນການລິເລີ່ມ ແລະ ຮັກສາການສົນທະນາທີ່ມີຄວາມໝາຍກັບໝູ່ເພື່ອນ ແລະ ເພື່ອນບ້ານ. ໂດຍສະເພາະຢ່າງຍິ່ງ ເມື່ອພວກເຂົາຮຽນໄປຮອດເຫຼັ້ມ 5, ຄວາມສຳຄັນຂອງຂະບວນການເສີມສ້າງຄວາມສາມາດ ທີ່ມີຢູ່ໃນລຳດັບຂອງຫຼັກສູດຂອງສະຖາບັນຣູຮີ - ເຊິ່ງເປັນຂະບວນການທີ່ຄິດຂຶ້ນ ໃນດ້ານຂອງການເດີນໃນເສັ້ນທາງຂອງການຮັບໃຊ້ - ຈະປາກົດຊັດເຈນຂຶ້ນ. ການມີສ່ວນຮ່ວມກັບກຸ່ມເຍົາວະຊົນໃນໂຄງການສາມປີ ເພື່ອເພີ້ມພະລັງທາງຈິດວິນຍານຂອງພວກເຂົາແມ່ນມີຄວາມຕ້ອງການໆກະທຳຂອງການຮັບໃຊ້, ແລະ ຄວາມພະຍາຍາມຂອງຜູ້ຊຸກຍູ້ເຍົາວະຊົນມືໃໝ່ທີ່ຈະເຮັດໜ້າທີ່ນີ້ ແມ່ນຂຶ້ນກັບຄວາມສາມາດທີ່ພວກເຂົາສ້າງຂຶ້ນຢ່າງຕໍ່ເນື່ອງບົນເສັ້ນທາງນີ້.

ພາກທຳອິດຂອງປື້ມນີ້ແມ່ນ "ຊ່ວງແລກເລີ້ມຂອງຊີວິດ", ສຸມໃສ່ຄຸນສົມບັດຕ່າງໆ ທີ່ຄຳສອນຂອງຄວາມສັດທາຊີ້ໃຫ້ເຫັນຄວາມພົ້ນເດັ່ນຂອງໄລຍະໄວໜຸ່ມ. ຈາກການວິເຄາະພົບວ່າ, ວິໃສທັດຄ່ອຍໆປາກົດໃຫ້ເຫັນເຖິງການມີສ່ວນຮ່ວມຂອງຊາວໜຸ່ມແຕ່ລະລຸ້ນ ໃນການຮັບໃຊ້ຈຸດປະສົງຂອງພຣະຜູ້ເປັນເຈົ້າ ແລະ ຮັບໃຊ້ມະນຸດຊາດ. ຜູ້ອຳນວຍຄວາມສະດວກຈະຈ້ອງໃຫ້ແນ່ໃຈວ່າ ຜູ້ເຂົ້າຮ່ວມໄດ້ລະຖິ້ມການສຶກສາຂອງພາກທີ່ໄດ້ຮັບການສະໜັບສະໜູນ ຈາກວິໃສທັດທີ່ແຜ່ອອກມາ, ເພາະວິໃສທັດນີ້ເອງທີ່ບອກກ່ຽວກັບ ໂຄງການເສີມສ້າງພະລັງທາງຈິດວິນຍານຂອງເຍົາວະຊົນ ແລະ ຄວນເປັນແນວທາງໃນຄວາມພະຍາຍາມ ໃຫ້ຄົນລຸ້ນເຍົາມີສ່ວນຮ່ວມໃນກິດຈະກຳຕ່າງໆ.

ແທ້ຈິງແລ້ວພາກນີ້ເປີດຂຶ້ນໂດຍການຂໍໃຫ້ຜູ້ເຂົ້າຮ່ວມ ຄິດກ່ຽວກັບຄຸນລັກສະນະທີ່ພວກເຂົາຫວັງວ່າຄົນລຸ້ນເຍົາຈະພັດທະນາ ເມື່ອເວລາທີ່ພວກເຂົາອາຍຸ 15 ປີ ສຳເລັດໂຄງການສາມປີແລ້ວ - ໄວນີ້ຖືກມອງເບິ່ງວ່າເປັນເກນຂອງວຸດທິພາວະ ໃນຄຳສອນຂອງບາຮາຍ - ແລະເຂົ້າສູ່ "ໄວໜຸ່ມ" ຂອງຊ່ວງຊາວໜຸ່ມ. ຜູ້ອຳນວຍຄວາມສະດວກຄວນເຂົ້າໃຈວ່າ ຈຸດປະສົງຂອງບົດເຝິກທັດບໍ່ແມ່ນເພື່ອເຈາະ

ເລິກລາຍລະອຽດຂອງໂຄງການ ຫຼືເພື່ອພິຈາລະນາເຖິງສັກກະຍະພາບຂອງເຢົາວະຊົນ, ການສຳຫຼວດດັ່ງກ່າວແມ່ນຈະຈັດໄວ້ໃນພາກທີສາມ ແລະ ພາກທີສອງຂອງປື້ມເຫຼັ້ມນີ້ຕາມລຳດັບ. ແຕ່ຈຸດປະສົງຄືການນຳເອົາພາກລັກ ຂອງຄົນໜຸ່ມທີ່ພ້ອມຮັບຕຳແໜ່ງໃນໝູ່ຄົນລຸ້ນຕໍ່ໄປ ຂອງຜູ້ທີ່ສະໜັບສະໜູນຈຸດປະສົງຂອງພຣະຜູ້ເປັນເຈົ້າໃນທັນທີ ແລະ ອຸທິດຕົນເພື່ອຄວາມກ້າວໜ້າຂອງອາລິຍະທັມ. ສຳລັບຜູ້ເຂົ້າຮ່ວມ, ບົດເຝິກຫັດນີ້ຈະເພີ້ມຄວາມເລິກເຊິ່ງໃນທັມມະຊາດຂອງກິດຈະກຳ ທີ່ພວກເຂົາເຈົ້າຈະດຳເນີນໃນຖານະຜູ້ຊຸກຍູ້ເຢົາວະຊົນ ແລະ ຊ່ວຍໃຫ້ການສົນທະນາໃນພາຍຫຼັງມີຄວາມໝາຍເລິກເຊິ່ງຍິ່ງຂຶ້ນ.

ຫຼັງຈາກນັ້ນເມື່ອທຽບກັບພື້ນຫຼັງ, ພາກນີ້ນຳສະເໜີຂໍ້ຄວາມຈຳນວນໜຶ່ງຈາກບົດຂຽນ ທີ່ຊີ້ແຈງແນວຄິດບາງປະການທີ່ກ່ຽວຂ້ອງກັບຊ່ວງເວລາຂອງຊາວໜຸ່ມ. ຈຳນວນແນວຄິດທີ່ນຳມາໃຊ້ໃນຊ່ວງຕົ້ນຂອງພາກນີ້ ແມ່ນການເຮັດວຽກຮ່ວມກັນລະຫວ່າງການຮັບໃຊ້, ການສຶກສາ, ແລະການກະກຽມສຳລັບອານາຄົດ, ເຊິ່ງເປັນບັນຫາໜຶ່ງທີ່ບາງຄັ້ງອາດຄອບງຳຄວາມຄິດຂອງຊາວໜຸ່ມ. ສິ່ງທີ່ຊັດເຈນກໍ່ຄື, ເມື່ອເບິ່ງຊີວິດໂດຍລວມແລ້ວ ດ້ານຕ່າງໆຂອງມັນທີ່ບໍ່ຂັດແຍ່ງກັນ, ສາມາດຊ່ວຍສົ່ງເສີມກັນໄດ້. ບົດເຝິກຫັດໃນຕອນທີ 10 ຈະຊ່ວຍໃຫ້ຜູ້ເຂົ້າຮ່ວມພິຈາລະນາວ່າ ສິ່ງນີ້ໝາຍຄວາມວ່າແນວໃດໃນທາງປະຕິບັດ. ຈຳເປັນຕ້ອງມີການດູແລ, ເພື່ອວ່າພວກເຂົາຈະຜ່ານບົດເຝິກຫັດແບບເຄື່ອງຈັກ ແລະ ບໍ່ເຂົ້າໃຈການເລືອກຊີວິດ ແລະ ວິທີການຄິດບາງຢ່າງທີ່ສາມາດກໍ່ໃຫ້ເກີດການແບ່ງແຍກຈິນຕະນາການໄດ້ ແລະ ຄວາມຕຶງຄຽດທີ່ພວກເຂົາສ້າງຂຶ້ນ.

ແນວຄິດອີກປະການໜຶ່ງທີ່ກ່າວເຖິງໃນພາກນີ້, ເຊິ່ງເປັນສູນກາງຂອງຈຸດມຸ່ງໝາຍປະການໜຶ່ງກໍຄື ວັດຖຸປະສົງສອງດ້ານທາງສິນລະທັມ. ແນ່ນອນວ່າຜູ້ເຂົ້າຮ່ວມຈະຄຸ້ນເຄີຍ ກັບແນວຄິດຈາກການສຶກສາປື້ມເຫຼັ້ມກ່ອນໆ. ໃນເຫຼັ້ມນີ້ໄດ້ຮັບການປະບັດແບບເລິກເຊິ່ງກວ່າເກົ່າ, ແລະ ຜູ້ເຂົ້າຮ່ວມຄວນໃຫ້ຄວາມສົນໃຈເປັນພິເສດກັບສ່ວນທີ່ອຸທິດໃຫ້ກັບການສຳຫຼວດ ເຊິ່ງເລີ້ມຕົ້ນດ້ວຍການອະທິບາຍການປ່ຽວແປງແບບຄູ່ - ໃນລະດັດຂອງບຸກຄົນ ແລະ ໃນໂຄງສ້າງຂອງສັງຄົມ - ທີ່ຈິນຕະນາການໄວ້ໃນບົດຂຽນຂອງບາຮາຍ. ພາກນີ້ສະເໜີແນະໃນແງ່ທີ່ວ່າ ຄົນລຸ້ນເຢົາຄວນປຸ່ງມໄປດ້ວຍຄວາມຮູ້ສຶກເຂັ້ມແຂງ ໃນຈຸດປະສົງທີ່ຈະດູແລການເຕີບໂຕທາງສະຕິປັນຍາ ແລະ ຈິດວິນຍານຂອງຕົນເອງ ແລະ ເພື່ອສ້າງພື້ນງານທີ່ຮັບປະກັນຄວາມກ້າວໜ້າຂອງສັງຄົມ. ນອກຈາກນີ້ຍັງກ່າວໄດ້ອີກວ່າ ວັດຖຸປະສົງສອງດ້ານທາງສິນລະທັມນີ້ມີການສົ່ງເສີມກັນ ແລະ ໂດຍພື້ນຖານແລ້ວແຍກຈາກັນບໍ່ໄດ້, ເນື່ອງຈາກມາດຕະຖານ ແລະ ພຶດຕິກຳຂອງແຕ່ລະບຸກຄົນຫຼໍ່ຫຼອມສະພາບແວດລ້ອມຂອງຕົນ ແລະ ໃນທາງກົງກັນຂ້າມກໍຖືກຫຼໍ່ຫຼອມໂດຍໂຄງສ້າງ ແບະ ຂະບວນການທາງສັງຄົມ. ຜູ້ເຂົ້າຮ່ວມບາງຄົນອາດພົບວ່າເປັນການທ້າທາຍທີ່ຈະເຂົ້າໃຈຄວາມໝາຍເຊື່ອງຊ້ອນຂອງການກ່າວອ້າງນີ້, ເຊິ່ງມີການກວດສອບໃນບົດເຝິກຫັດໃນຕອນທີ 16. ໂລກະທັດທີ່ຄອບງຳ - ເຊິ່ງໃນດ້ານໜຶ່ງມີແນວໂນ້ມທີ່ຈະໃຫ້ຄວາມສຳຄັນກັບສິດທິສ່ວນບຸນຄົນ ແລະ ເສລີພາບສ່ວນບຸກຄົນຫຼາຍເກີນໄປ ຫຼືອີກດ້ານໜຶ່ງ, ເວົ້າເກີນຈິງເຖິງຄວາມສຳຄັນຂອງພະລັງທາງສັງຄົມ ແລະ ຂະບວນການທາງການເມືອງ - ສາມາດບິດເບືອນຄວາມເປັນຈິງ

ແລະ ຫຼໍ່ຫຼອມຄວາມເຊື່ອ ແລະ ແບບແຜນຂອງຄວາມຄິດເຊິ່ງມັນຈະເບິ່ງບໍ່ເຫັນ. ເມື່ອເຮັດບົດເຝິກຫັດຮ່ວມກັບກຸ່ມ, ຜູ້ອຳນວຍຄວາມສະດວກຄວນຕະໜັກເຖິງຄວາມທ້າທາຍທີ່ອາດເກີດຂຶ້ນ ແລະ ຊ່ວຍເຫຼືອສະມາຊິກຫາກຈຳເປັນ, ໃນການຮັບຮູ້ເຖິງການຢືນຢັນທີ່ບໍ່ສອດຄ່ອງກັບຄຳຖະແຫຼງຂອງ ທ່ານຜູ້ພິທັກສາສະໜາ ທີ່ອ້າງເຖິງໃນຕອນດັ່ງກ່າວ. ການສຳຫຼວດແນວຄິດກ່ຽວກັບວັດຖຸປະສົງສອງດ້ານສິ້ນສຸດລົງແລ້ວ, ໂດຍການສະເໜີວ່າວັດຖຸປະສົງດັ່ງກ່າວ ສາມາດບັນລຸຜົນໄດ້ສະເພາະໃນດ້ານການການຮັບໃຊ້ເທົ່ານັ້ນ., ເປັນພາກທີ່ໂຕ້ແຍ້ງການຮັບໃຊ້ ລວມເອົາການເຕີມເຕັມສັກກະຍະພາບຂອງແຕ່ລະບຸກຄົນກັບຄວາມກ້າວໜ້າຂອງສັງຄົມ.

ພາກທີສອງມີຊື່ວ່າ "ຊ້ວງໄວ້ແຫ່ງພັນທະສັນຍາ", ແລະກ່ຽວຂ້ອງກັບເຍົາວະຊົນ ແລະ ສັກກະຍະພາບອັນຍິ່ງໃຫຍ່ທີ່ພວກເຂົາມີ. ພາກນີ້ພະຍາຍາມສ້າງຄວາມເຂັ້ມແຂງໃນຈິດໃຈ ຂອງຜູ້ທີ່ສຶກສາຄວາມເຂົ້າໃຈທີ່ວ່າ ເຍົາວະຊົນເປັນສະມາຊິກຂອງກຸ່ມອາຍຸທີ່ໂດດເດັ່ນ ເຊິ່ງເປັນກຸ່ມທີ່ມີຄຸນລັກສະນະສະເພາະຕົວ - ຄຸນລັກສະນະເລົ່ານີ້ບໍ່ມີຂໍ້ສົງໃສເລີຍວ່າ, ມັນບໍ່ຜິດທີ່ຈະປະຕິບັດຕໍ່ພວກເຂົາແບບເດັກນ້ອຍ, ຄືງເປັນແນວທາງທີ່ຜິດເທົ່າໆກັນ ຫາກສະໜັບສະໜູນໃຫ້ພວກເຂົາຮຽນແບບຮູບແບບແກ່ນແທ້ຂອງການເປັນຜູ້ໃຫຍ່ແບບຜິດເພີນ, ເຊິ່ງສາມາດພົບເຫັນໄດ້ການຢັ່ງຮາກໃນຫຼາຍແຫ່ງຫົນ ຫຼາຍຂຶ້ນເລື້ອຍໆ. ພາກນີ້ຫວັງທີ່ຈະຊີ້ແຈງໃຫ້ຊັດເຈນວ່າ ແນວທາງທີ່ຊຸມຊົນບາຮາຍນຳມາໃຊ້ຕໍ່ກຸ່ມອາຍຸນີ້, ເຊິ່ງຖືກກຳໜົດໂດຍບົດຂຽນຂອງສາສະໜາ ແລະ ກ່າວດ້ວຍຫຼາຍຕົວຢ່າງຂອງຊາວໜຸ່ມຊື່ ຣູຮຸລລາຫ໌, ເຊິ່ງແຕກຕ່າງໂດຍສິ້ນເຊີງຈາກການອີງອ້າງຕາມການສົມມຸດ ແລະ ທິດສະດີທີ່ມີຢູ່ແພ່ຫຼາຍ, ຫຼາຍໆເລື່ອສະແດງໃຫ້ເຫັນວ່າ ເຍົາວະຊົນເປັນກະບົດ ແລະ ມີແນວໂນ້ມທີ່ຈະເກີດວິກິດ.

ໃຫ້ຈື່ຈຸດມຸ່ງໝາຍຂ້າງເທິງໄວ້ໃນໃຈ, ພາກນີ້ຈະພິຈາລະນາໂດຍການສະຫຼຸບກ່ຽວກັບລັກສະນະຂອງໄວລຸ້ນຕອນຕົ້ນ ແລະ ຈາກນັ້ນຂໍໃຫ້ຜູ້ເຂົ້າຮ່ວມທົບທວນເຖິງສິ່ງທ້າທາຍໃນການດູແລ ການເຕີບໂຕຂອງຄົນລຸ້ນເຍົາໃນຊ້ວງອາຍຸນີ້ຢ່າງເໝາະສົມ. ໃນທີ່ນີ້, ພາກນີ້ໄດ້ເຕືອນວ່າ: ຄວາມພະຍາຍາມດັ່ງກ່າວຈະຕ້ອງຫຼີກລ້ຽງຫຼຸມພາງຂອງໂຄງການ, ເຊິ່ງແທນທີ່ຈະມຸ່ງຄວາມຕະໜັກໃນຕົນເອງເພີ້ມຂຶ້ນສຳລັບຜູ້ທີ່ຢູ່ໃນໄລຍະກໍ່ຕັ້ງສ້າງຊີວິດນີ້ ໄປສູ່ການຮັບໃຊ້ຜູ້ອື່ນຢ່າງບໍ່ເຫັນແກ່ຕົວ, ຫັນໄປເພິ່ງ "ຕົນເອງ" ແລະ ສຸດທ້າຍກໍເຮັດໃຫ້ພວກເຂົາເປັນສະເລີຍຂອງ "ການຢືນຢັດໃນຕົວເອງ". ຕອນທີ 5 ຈົນໄປເຖິງ 9 ແມ່ນພະຍາຍາມແຈ້ງຜູ້ເຂົ້າຮ່ວມ ໃຫ້ຮູ້ເຖິງອັນຕະລາຍເລັກໆນ້ອຍໆຂອງຫຼຸມພາງນີ້ ໂດຍນຳພາພວກເຂົາຜ່ານຊຸດພຣະວັດຈະນະ ທີ່ກ່ຽວຂ້ອງຈາກວັດຈະນະບາຮາຍ. ພາກນີ້ພິຈາລະນາເຖິງຜົນກະທົບຂອງສະພາບແວດລ້ອມທາງສັງຄົມທີ່ມີຕໍ່ຊີວິດຂອງໄວລຸ້ນຕອນຕົ້ນ, ແນະນຳແນວຄິດຂອງ "ກຸ່ມເຍົາວະຊົນ" ວ່າເປັນສະພາບແວດລ້ອມທີ່ໃຫ້ການສະໜັບສະໜູນເຊິ່ງກັນແລະກັນ, ແລະ ກຳໜົດອະລິຍະບົດຂອງທຸກຄົນຜູ້ລຸກຂຶ້ນຮັບໃຊ້ ໃນຖານະຜູ້ຊຸກຍູ້ກຸ່ມເຍົາວະຊົນດັ່ງກ່າວ.

ພາກທີສາມ, "ການຮັບໃຊ້ໃນຖານະເປັນຜູ້ຊຸກຍູ້ເຍົາວະຊົນ" ໄດ້ຍົກແງ່ມູມໜຶ່ງ, ເມື່ອພາກທີສອງຈົບລົງ ແລະ ພະຍາຍາມເຮັດໃຫ້ຜູ້ເຂົ້າຮ່ວມຄຸ້ນເຄີຍ ກັບລັກສະນະຂອງການປະຕິບັດການຮັບໃຊ້.

ຫຼັງຈາກທວນຄືນລັກສະນະບາງປະການຂອງກຸ່ມເຍົາວະຊົນ, ພາກນີ້ຈະເລີ່ມປຶກສາຫາລືກ່ຽວກັບເອກະສານຕ່າງໆ, ທີ່ສຶກສາສິ່ງທີ່ສະແດງເຖິງໂຄງການຫຼັກ. ການແບ່ງປັນທີ່ດີກວ່າເກົ່າຂອງພາກນີ້ແມ່ນໄດ້ມອບໃຫ້ແກ່ການປຶກສາຫາລື, ແລະ ຜູ້ອໍານວຍຄວາມສະດວກຄວນເຂົ້າໃຈເຈດຕະນາຂອງການປຶກສາຫາລືເປັນຢ່າງດີ, ເຊິ່ງບໍ່ພຽງແຕ່ເພື່ອການປຶກສາຫາລືເນື້ອຫາເອກະສານສໍາລັບຜູ້ເຂົ້າຮ່ວມເທົ່ານັ້ນ ແຕ່ເພື່ອໃຫ້ພວກເຂົາເຂົ້າໃຈເຖິງ ຂະບວນການເສີມສ້າງພະລັງທາງຈິດວິນຍານກ່ຽວຂ້ອງກັບຫຍັງ ແລະ ເອກະສານຕ່າງໆຈະສົ່ງເສີມການຂັບເຄື່ອນຂອງຂະບວນການຄືແນວໃດ. ລວມເອກະສານຕ່າງໆທີ່ຂັດອອກມາຈາກສື່ຕ່າງໆ, ແຕ່ມີການວິເຄາະສອງເນື້ອຫາຄວາມຢ່າງຄົບຖ້ວນ - ປຶ້ມ *ສາຍລົມແຫ່ງການຮັບຮອງ* ແລະ *ດວງຈິດແຫ່ງຄວາມສັດທາ* - ແລະ ຜູ້ເຂົ້າຮ່ວມສຶກສາຈໍາເປັນຕ້ອງມີສະບັບສໍາເນົາຂອງສອງປຶ້ມນີ້ໃນມື.

ໂດຍທົ່ວໄປແລ້ວ, ຄໍາຖາມເລື່ອງການເສີມສ້າງພະລັງທາງຈິດວິນຍານ ຈໍາເປັນຕ້ອງມີການຄິດ ແລະ ການທົບທວນຢ່າງຫຼວງຫຼາຍຈາກຜູ້ອໍານວຍຄວາມສະດວກ. ແທ້ຈິງແລ້ວ ຂະບວນການສຶກສາທີ່ຫຼັກສູດຂອງສະຖາບັນດໍາເນີນການຢູ່ນັ້ນ ໃນການວິເຄາະຂັ້ນສຸດທ້າຍນັ້ນ ສາມາດເຫັນໄດ້ວ່າເປັນວິທີໜຶ່ງໃນການເສີມສ້າງພະລັງທາງສິນລະທັມ ແລະ ທາງຈິດວິນຍານ, ເຊິ່ງເປັນຊ່ອງທາງໜຶ່ງທີ່ເຮັດໃຫ້ຜູ້ຄົນຈາກທຸກສາຂາອາຊີບ ແລະ ທຸກພູມຫຼັງສາມາດລຸກຂຶ້ນມາ ແລະ ມີສ່ວນຮ່ວມໃນການສ້າງໂລກທີ່ດີຂຶ້ນກວ່າເກົ່າ. ແນວຄິດກ່ຽວກັບອໍານາດທີ່ໃຊ້ທີ່ນີ້ແຕກຕ່າງຫຼາກຈາກຄໍາຈໍາກັດຄວາມທົ່ວໄປ ທີ່ເຊື່ອມໂຍງກັບຄວາມຕັ້ງໃຈທີ່ຈະຄອບງໍາຫຼືຊັກຈູງຜູ້ອື່ນ ໃຫ້ຍອມຮັບຄວາມປາດຖະໜາ ແລະ ຄວາມຕ້ອງການຂອງຜູ້ອື່ນ. ແທນທີ່ຈະເປັນເຊັ່ນນັ້ນ ຈຸດປະສົງແມ່ນກາຍເປັນຊ່ອງທາງສໍາລັບການໄຫຼວຽນຂອງພະລັງແຫ່ງຈິດວິນຍານຂອງມະນຸດ: ພະລັງແຫ່ງຄວາມສະມັກຄີ, ຄວາມຮັກ, ການຮັບໃຊ້ຢ່າງຖ່ອມຕົນ, ການກະທໍາອັນບໍລິສຸດ. ວິທີມີສ່ວນຮ່ວມໃນການຂັບເຄື່ອຍທີ່ຈໍາເປັນ ສໍາລັບຂະບວນການດັ່ງກ່າວເພື່ອຄວາມກ້າວໜ້າ - ຫຼືເລັ່ງຄວາມໄວ - ເປັນສູນກາງຂອງການປະຕິບັດການຮັບໃຊ້ໃນຖານະຜູ້ອໍານວຍຄວາມສະດວກ, ແລະ ດ້ວຍປະສົບການໃນການມີສ່ວນຮ່ວມເປັນກຸ່ມແລ້ວກຸ່ມເລົ່າ ໃນການສຶກສາຫຼັກສູດ, ຜູ້ອໍານວຍຄວາມສະດວກທຸກຄົນສາມາດມອງເຫັນປັດໃຈສໍາພັນຕ່າງໆທີ່ກ່ຽວຂ້ອງໄດ້, ບໍ່ມີສິ່ງໃດທີ່ຈະມີພະລັງຫຼາຍກວ່າການບໍາລຸງລ້ຽງຄວາມເຂົ້າໃຈທີ່ແທ້ຈິງ.

ແນ່ນອນວ່າໃນປຶ້ມເຫຼັ້ມນີ້, ຄວາມກັງວົນກ່ອນທີ່ຜູ້ອໍານວຍຄວາມສະດວກຈະຂະຫຍາຍໄປເຖິງຄົນລຸ້ນຕໍ່ໄປ ແລະ ເຖິງລັກສະນະຂອງຂະບວນການສຶກສາ ທີ່ຈະຊ່ວຍໃຫ້ຄົນລຸ້ນເຍົາສາມາດໃຊ້ພະລັງທີ່ເກີດຂຶ້ນໃໝ່ໄດ້ຢ່າງມີປະສິດທິຜົນ. ຫົວໃຈຂອງຂະບວນການນີ້ຄືພະລັງແຫ່ງຄວາມຄິດ ແລະ ການສະແດງອອກທີ່ເສີມເຊິ່ງກັນແລະກັນ. ພະລັງຂອງຈິດໃຈໃນການຄິດທາງນາມປະທັມ, ເຊິ່ງເພີ່ມຂຶ້ນຢ່າງຫຼວງຫຼາຍໃນຊ່ວງໄວລຸ້ນຕອນຕົ້ນ, ສ້າງຄວາມເຂັ້ມແຂງໃຫ້ເຍົາວະຊົນ ເມື່ອພວກເຂົາຮຽນຮູ້ທີ່ຈະໃຊ້ແນວຄິດທາງວິທະຍາສາດ, ສິນລະທັມ, ແລະ ຈິດວິນຍານທີ່ກ່ຽວຂ້ອງໃນການວິເຄາະໂລກທີ່ອ້ອມຮອບຕົວພວກເຂົາ ແລະ ຄວາມພະຍາຍາມລິເລີ່ມໃນການການດໍາເນີນການຕໍ່ສັງຄົມ. ຢ່າງໃດກໍຕາມ ບໍ່ວ່າອໍານາດຂອງການວິເຄາະທາງເຫດຜົນຈະມີຄວາມສໍາຄັນພຽງໃດ ກໍຍັງຈໍາເປັນຕ້ອງມີການຮັບຮູ້ທາງຈິດ

ວິນຍານ. ໂດຍຊ່ອງທາງດັ່ງກ່າວ, ຊ່ອງທາງແຫ່ງຄວາມເຂົ້າໃຈເຊິ່ງບໍ່ສາມາດຫາໄດ້ຈາກການໃຊ້ພະລັງພຽງຢ່າງດຽວກໍ່ຖືກເປີດອອກ. ສະນັ້ນ ເຍົາວະຊົນຈະຕ້ອງໄດ້ຮັບການຊ່ວຍເຫຼືອໃຫ້ຮັບຮູ້ເຖິງພະລັງທາງຈິດວິນຍານ ແລະ ລະບຸລະບຽບທາງຈິດວິນຍານໃນສະຖານະການທີ່ພວກເຂົາປະເຊີນ ຫາກພວກເຂົາຕ້ອງການເລືອກທາງສິນລະທັມທີ່ດີ. ໂຄງສ້າງທາງສິນລະທັມທີ່ຄວບຄຸມຄວາມຄິດ ແລະ ພຶດຕິກຳຂອງບຸກຄົນນັ້ນເຊື່ອມໂຍງກັນຢ່າງໃກ້ຊິດ ກັບໂຄງສ້າງຂອງພາສາທີ່ເຂົາສະແດງຄວາມຄິດນັ້ນ ເປັນພື້ນຖານສຳຄັນຂອງຂະບວນການສຶກສາທີ່ຈິນຕະນາການໄວ້. ຄວາມຢັ່ງຮູ້ໃດກໍຕາມໃນສອງພາກທຳອິດຂອງປຶ້ມເຫຼັ້ມ 5 ອາດນຳສະເໜີໃນຂະບວນການນີ້, ຕອນທີ 5 ຈົນເຖິງ 19 ຂອງພາກທີສາມພະຍາຍາມເຮັດໃຫ້ມິຕິຕ່າງໆຊັດເຈນຂຶ້ນ, ໂດຍຍົກຕົວຢ່າງຈາກຂໍ້ຄວາມທີ່ໃຊ້ໃນໂຄງການຕາມຄວາມຈຳເປັນ. ຜູ້ອຳນວຍຄວາມສະດວກທຸກຄົນຄວນທົບທວນຕອນເຫຼົ່ານີ້ຢ່າງຮອບຄອບ ເພື່ອກະກຽມແນະນຳກຸ່ມຜ່ານຕາມຕອນເຫຼົ່ານີ້. ຫວັງວ່າຜູ້ເຂົ້າຮ່ວມຈະໄດ້ຮັບຄວາມເຂົ້າໃຈໃນສັກກະຍະພາບຂອງເນື້ອຫາທີ່ຈະເສີມພະລັງໃຫ້ເຍົາວະຊົນ ຜ່ານວັດທະນາທັມທີ່ຫຼາກຫຼາຍ.

ເມື່ອພິຈາລະນາການປຶກສາຫາລືນີ້, ຜູ້ເຂົ້າຮ່ວມຈະໄດ້ຮັບໂອກາດໃນການວິເຄາະຂໍ້ຄວາມເຕັມສອງສະບັບ, ສະບັບໜຶ່ງຈະຢູ່ໃນປະເພດທີ່ "ໄດ້ຮັບແຮງບັນດານໃຈຈາກບາຮາຍ" ແລະອີກສະບັບໜຶ່ງສະແດງເຖິງອົງປະກອບຂອງບາຮາຍທີ່ໂດດເດັ່ນຂອງໂຄງການ. ທັງສອງປະເພດນີ້ໄດ້ແນະນຳຜູ້ເຂົ້າຮ່ວມແລ້ວໃນພາກຕົ້ນໆ, ແລະ ທວນຄືນໃນປຶ້ມ *ສາຍລົມແຫ່ງການຮັບຮອງ* ແລະ *ດວງຈິດແຫ່ງຄວາມສັດທາ* ມີວັດຖຸປະສົງເພື່ອຊ່ວຍພວກເຂົາໃຫ້ເຫັນວ່າ ເນື້ອຫາທັງສອງມີສ່ວນສະໜັບສະໜູນເປົ້າໝາຍຂອງໂຄງການທີ່ອະທິບາຍໄວ້ຂ້າງເທິງຄືແນວໃດ ໃນເນື້ອຫາແລະແນວຄິດທີ່ກ່າວເຖິງ ແລະ ໃນພາສາທີ່ໃຊ້. ແນວຄິດເລື່ອງການຢືນຢັນທີ່ໄດ້ຮັບການປະຕິບັດໃນອາດີດ, ເຊັ່ນ - ຖ້າເຮົາພະຍາຍາມໄປສູ່ເປົ້າໝາຍທີ່ຄູ່ຄວນ, ເຮົາຈະດຶງດູດການຢືນຢັນຈາກສະຫວັນ - ເຊິ່ງສະທ້ອນຢູ່ໃນໃຈ ແລະ ຄວາມຄິດຂອງຄົນໜຸ່ມທຸກແຫ່ງຫົນ. ຄວາມເຂົ້າໃຈທີ່ພວກເຂົາໄດ້ຮັບຈາກການສຶກສາເນື້ອຫາ ເບິ່ງຄືວ່າຈະຊ່ວຍພວກເຂົາໄດ້, ເມື່ອຕ້ອງຮັບໜ້າທີ່ໃໝ່ໆ ແລະ ທ້າທາຍ, ເອົາຊະນະຄວາມກັງວົນໃຈ ແລະ ການຂາດຄວາມໝັ້ນໃຈທີ່ມັກຈະຕາມມາຢູ່ເລື້ອຍໆ, ໂດຍບໍ່ສ້າງພຶດຕິກຳກ້າວລ້າວ ຈົນບົ່ງບອກເຖິງການໃຫ້ຄວາມສຳຄັນກັບ "ຕົນເອງ" ຫຼາຍຈົນເກີນໄປ. ໃນວິທີນີ້, ເລື່ອງລາວທີ່ລຽບງ່າຍແຕ່ເລິກເຊິ່ງທີ່ເຜີຍອອກມາໃນປຶ້ມເຫຼັ້ມນີ້, ມັກຈະເປັນໜຶ່ງໃນເລື່ອງທຳອິດທີ່ສຶກສາໂດຍເຍົາວະຊົນ, ກຳໜົດເສັ້ນທາງຫຼວງຫຼາຍເພື່ອປົກປ້ອງພວກເຂົາ, ຢ່າງໜ້ອຍກໍ່ບາງສ່ວນຈາກພະລັງແຫ່ງຄວາມແຕກສະຫຼາຍທີ່ທຳລາຍໂຄງສ້າງຂອງສັງຄົມ, ແຮງຜັກດັນທີ່ຈະປຸ້ນເອົາພວກເຂົາຈາກເອກະລັກທີ່ແທ້ຈິງຂອງເຂົາ ໃນຖານະສິ່ງມີຊີວິດທີ່ສູງສົ່ງ.

ໃນທຳນອງດຽວກັນ ການຊີ້ແຈງແນວຄິດທີ່ໃຫ້ໄວ້ໃນປຶ້ມ *ດວງຈິດແຫ່ງຄວາມສັດທາ* ຊ່ວຍໃຫ້ເຍົາວະຊົນຈາກທຸກພູມຫຼັງ ໄດ້ທົບທວນປະເດັນທາງປັດສະຊາຢ່າງເລິກເຊິ່ງ ທີ່ເລີ່ມຄອບງຳຈິດໃຈໃນຊ່ວງຊີວິດນີ້ ແລະ ມອງເຫັນຄວາມເຊື່ອມໂຍງອັນຊັບຊ້ອນທີ່ມີຢູ່ລະຫວ່າງຈິດວິນຍານແລະວັດຖຸ. ໃນບັນດາແນວຄິດເຫຼົ່ານີ້ ເຊັ່ນ ວິວັດທະນາການທາງກາຍຍະພາບ ແລະ ຮູບລັກສະນະຂອງຈິດວິນຍານ

ຂອງມະນຸດ. ສິ່ງທີ່ຜູ້ອຳນວຍຄວາມສະດວກຄວນຍ້ອງຍໍກໍຄື, ສຳລັບຄົນໜຸ່ມຈຳນວນຫຼາຍທີ່ກຳລັງສຶກສາປຶ້ມເຫຼັ້ມ 5 ແລະ ປາດຖະໜາທີ່ຈະເປັນຜູ້ຊຸກຍູ້ເຍົາວະຊົນ, ນອກເໜືອຈາກພວກເຂົາຈະສຳເລັດໂຄງການເສີມສ້າງພະລັງທາງຈິດວິນຍານດ້ວຍຕົນເອງໃນຖານະເປັນເຍົາວະຊົນແລ້ວ, ການທວນຄືນປຶ້ມ *ດວງຈິດແຫ່ງຄວາມສັດທາ* ຈະຖືເປັນໂອກາດທຳອິດສຳລັບພວກເຂົາ ທີ່ຈະສຳຫຼວດແນວຄິດທີ່ນຳສະເໜີຢ່າງເປັນລະບົບ, ແລະ ຄວນໃຫ້ເວລາແກ່ພວກເຂົາ ໃນການຄົ້ນຄິດຄວາມໝາຍທີ່ເຊື່ອງຊ້ອນຂອງມັນ.

ໃນຕອນສະຫຼຸບຂອງການທວນຄືນ, ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມທົບທວນຫຼັກການແຫ່ງຄວາມກົມກືນລະຫວ່າງວິທະຍາສາດ ແລະ ສາສະໜາ, ບໍ່ແມ່ນເປັນແນວຄິດທີ່ໄດ້ຮັບການປະຕິບັດຢ່າງຊັດເຈນໃນຂໍ້ຄວາມ ແຕ່ເປັນແນວຄິດທີ່ສະໜັບສະໜູນການປຶກສາຫາລືທັງໝົດ. ສິ່ງທີ່ແນະນຳກໍຄື ວິທະຍາສາດ ແລະ ສາສະໜາມສາມາດມອງໄດ້ວ່າເປັນສອງລະບົບທີ່ເສີມສ້າງຄວາມຮູ້ ແລະ ການປະຕິບັດອະລິຍະທັມທີ່ກ້າວໜ້າຕໍ່ໄປ. ຄວາມສຳຄັນຂອງການທົບທວນນີ້ບໍ່ຄວນສູນເສຍໄປກັບຜູ້ເຂົ້າຮ່ວມສຶກສາ, ໂດຍສະເພາະຢ່າງຍິ່ງຜູ້ທີ່ກຽມເຂົ້າສູ່ວຽກງານການຮັບໃຊ້. ທ້າຍທີ່ສຸດແລ້ວ, ຫາກການໄດ້ຮັບຄວາມເຂົ້າໃຈທີ່ສົມບູນຍິ່ງຂຶ້ນ ກ່ຽວກັບຄວາມເປັນຈິງເປັນສ່ວນສຳຄັນ ຂອງຂະບວນການເສີມສ້າງພະລັງທາງຈິດວິນຍານ, ສະນັ້ນເນື້ອຫາບົດຮຽນຂອງເຍົາວະຊົນຈະຕ້ອງດຶງເອົາແຫຼ່ງຄວາມຮູ້ເລົ່ານີ້ມາໃຊ້.

ແມ່ນວ່າການສຶກສາເນື້ອຫາຈະເປັນຈຸດສົນໃຈຫຼັກຂອງກຸ່ມເຍົາວະຊົນໃດກໍຕາມ ທີ່ເຂົ້າຮ່ວມໃນໂຄງການ, ພວກເຂົາຈະເຮັດກິດຈະກຳອື່ນໆຮ່ວມກັນອີກດ້ວຍ. ເຊິ່ງລວມເຖິງໂຄງການຮັບໃຊ້, ກິລາ, ສິນລະປະ ແລະ ງານຫັດຖະກຳ, ແລະ ກິດຈະກຳໂອກາດພິເສດ. ຕອນທີ 25 ແລະ 26 ນຳສະເໜີຫຼັກການ ແລະ ແນວຄິດບາງປະການທີ່ກ່ຽວຂ້ອງກັບກິດຈະກຳເລົ່ານີ້ ແຕ່ບໍ່ໄດ້ລົງລາຍລະອຽດຫຼາຍຈົນເກີນໄປ, ໂດຍສັງເກດວ່າຂໍ້ມູນສະເພາະຂອງກິດຈະກຳເລົ່ານີ້ ຈະຕ້ອງປາກົດຕາມສະຖານະການໃນທ້ອງຖິ່ນ. ຢ່າງໃດກໍຕາມ, ຫວັງວ່າການອອກແບບ ແລະ ການດຳເນີນໂຄງການຮັບໃຊ້ຈະໄດ້ຮັບການເນັ້ນໜັກໃນໂຄງການນີ້, ເພາະການຮັບໃຊ້ເປັນເວທີ ທີ່ວັດຖຸປະສົງສອງດ້ານທາງສິນລະທັມໄດ້ກ່າວໄວ້ກ່ອນໜ້ານີ້ວ່າສາມາດສ່ອງແສງອອກມາດ້ວຍຕົວມັນເອງໄດ້. ໃນເລື່ອງນີ້, ຜູ້ເຂົ້າຮ່ວມຄວນເຂົ້າໃຈວ່າໂຄງການດັ່ງກ່າວຈະຕ້ອງໄດ້ຮັບຄຳປຶກສາຢູ່ເລື້ອຍໆ ໃນການປະຊຸມກັບຜູ້ຊຸກຍູ້ເຍົາວະຊົນ.

ພາກນີ້ປິດທ້າຍດ້ວຍການປຶກສາປະເດັນຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຂອງຜູ້ຊຸກຍູ້ເຍົາວະຊົນ, ການແບ່ງປັນຄວາມຢັ່ງຮູ້ກ່ຽວກັບວິທີການຊ່ວຍຕັ້ງກຸ່ມເຍົາວະຊົນຄືແນວໃດ, ວິທີດຳເນີນການປະຊຸມສອງສາມຄັ້ງທຳອິດຄືແນວໃດ, ແລະ ວິທີການສົນທະນາກັບພໍ່ແມ່ກ່ຽວກັບລັກສະນະຂອງໂຄງການຄືແນວໃດ ແລະ ຄວາມກ້າວໜ້າຂອງລູກຊາຍລູກສາວຂອງພວກເຂົາ. ຕັ້ງແຕ່ເລີ່ມຕົ້ນ, ຜູ້ເຂົ້າຮ່ວມຄວນຮັບຮູ້ຄວາມສາມາດທີ່ຈຳເປັນ ຂອງການຮັບໃຊ້ຢ່າງມີປະສິດທິຜົນໃນຖານະຜູ້ຊຸກຍູ້ເຍົາວະຊົນ ພັດທະນາໄປຕາມການເວລາຜ່ານປະສົບການຢ່າງຕໍ່ເນື່ອງ ແລະ ການສຶກສາຫຼັກສູດເຊື່ອມໂຍງຂອງປຶ້ມເຫຼັ້ມ 5. ສິ່ງນີ້ຮຽກຮ້ອງໃຫ້ມີລະດັບຂອງການໃຫ້ຄຳໝັ້ນໝາຍ ທີ່ຈະໃຫ້ການສຶກສາແກ່ເຍົາວະຊົນ ເຊິ່ງຫຼາຍ

ຄົນຢູ່ໃນຊ່ວງໄວລຸ້ນຕອນປາຍ ແລະ ອາຍຸຊາວປີຕົ້ນໆ - ໃນລະດູບານໃໝ່ແຫ່ງຊີວິດຂອງພວກເຂົາ - ໄດ້ສະແດງໃຫ້ເຫັນເຖິງຄວາມສາມາດໃນການບັນລຸ. ສະນັ້ນ ຈາກອັນດັບຂອງພວກເຂົາ ເຊິ່ງຈະມີຜູ້ທີ່ຈະປະຕິບັດຕາມເສັ້ນທາງການຮັບໃຊ້ສະເພາະດ້ານນີ້ເພີ້ມຈຳນວນຫຼາຍຂຶ້ນ, ການມີສ່ວນຮ່ວມຂອງກຸ່ມແລ້ວກຸ່ມເລົ່າໃນໂຄງການເສີມສ້າງພະລັງທາງຈິດວິນຍານ ແລະ ໃຜຈະເປັນຜູ້ປະຕິບັດ, ດ້ວຍວິທີນີ້ຈະເຮັດໃຫ້ໝັ້ນໃຈວ່າ ຄຳໝັ້ນສັນຍາຂອງຄົນລຸ້ນຕໍ່ໄປຈະບັນລຸຜົນ.



# ຊ້ວງແລກເລີ້ມຂອງຊີວິດ

## ຈຸດປະສົງ

ເພື່ອໃຫ້ເຂົ້າໃຈຄຸນລັກສະນະບາງຢ່າງ
ທີ່ແຕກຕ່າງຈາກຊາວໜຸ່ມ, ເຊິ່ງເປັນຂໍ້ກຳໜົດເບື້ອງຕົ້ນ
ຂອງການມີສ່ວນຮ່ວມຂອງເຍົາວະຊົນໃນໂຄງການ
ເສີມສ້າງພະລັງທາງຈິດວິນຍານຂອງພວກເຂົາ

## ຕອນທີ 1

ຊ່ວງອາຍຸລະຫວ່າງສິບສອງເຖິງສິບຫ້າປີ ເປັນຊ່ວງເວລາທີ່ພິເສດຂອງຊີວິດຂອງຄົນໆໜຶ່ງ, ເພາະເປັນຊ່ວງເວລາທີ່ເດັກຊາຍຫຼືເດັກຍິງ ຈະລະຖິ້ມໄວເດັກໄວ້ເບື້ອງຫຼັງແລະຈະປະສົບກັບການປ່ຽນແປງຢ່າງຫຼວງຫຼາຍ. ດ້ວຍການທີ່ຍັງບໍ່ເປັນຊາວໜຸ່ມຢ່າງເຕັມຕົວ ບຸກຄົນໃນຊ່ວງໄວນີ້ຈຶ່ງມັກຖືກເອີ້ນວ່າ "**ເຍົາວະຊົນ**". ການຊ່ວຍໃຫ້ເຍົາວະຊົນໄດ້ມີສ່ວນຮ່ວມເຂົ້າໃນໂຄງການ ທີ່ມີຈຸດປະສົງທີ່ຈະສົ່ງເສີມເພີ່ມພູນຄວາມສາມາດທາງຈິດວິນຍານ ແລະ ຄວາມສາມາດທາງສະຕິປັນຍາຂອງພວກເຂົາ ແລະ ກະກຽມພວກເຂົາໃຫ້ພ້ອມ ສຳລັບການເຂົ້າມີສ່ວນຮ່ວມໄດ້ຢ່າງມີປະສິດທິພາບ ໃນພາລະກິດຂອງການຮັບໃຊ້ໃນຊຸມຊົນຂອງຕົນເອງນັ້ນ ນັບວ່າເປັນການກະທຳເພື່ອຮັບໃຊ້ທີ່ສຳຄັນທີ່ສຸດອັນໜຶ່ງ. ເນື້ອຫາສາມພາກຂອງຫຼັກສູດນີ້ ມຸ້ງເນັ້ນໄປທີ່ແນວຄວາມຄິດ, ທັກສະ, ຄຸນລັກສະນະ ແລະ ເຈດຕະນາບາງປະການທີ່ປະສົບການໄດ້ສະແດງໃຫ້ເຫັນວ່າ ເປັນສິ່ງຈຳເປັນສຳລັບຜູ້ທີ່ປາດຖະໜາຈະລົງມືປະຕິບັດ ໃນໂຄງການດັ່ງກ່າວນີ້ທີ່ມຸ່ງໄປຂ້າງໜ້າໂດຍສະຖາບັນຮູຮີ.

ບັນດາກິດຈະກຳສ່ວນຫຼາຍແລ້ວ ແມ່ນເປັນກິດຈະກຳທີ່ປະຕິບັດໃນລັກສະນະຂອງກຸ່ມຍ່ອຍ ໃນລະດັບທ້ອງຖິ່ນ. ໃນຖານະທີ່ເປັນຜູ້ຊຸກຍູ້ທີ່ຄອຍກະຕຸ້ນສົ່ງເສີມຄວາມພະຍາຍາມຕ່າງໆຂອງກຸ່ມ, ເຈົ້າຈະເປັນຫ່ວງເປັນໃຍການພັດທະນາທາງດ້ານຈິດວິນຍານ ແລະ ສະຕິປັນຍາຂອງຄົນລຸ່ນເຍົາໄວຫຼາຍຄົນທີ່ໃກ້ຈະເຂົ້າສູ່ໄວສິບຫ້າປີ, ເຊິ່ງເປັນໄວຂອງການບັນລຸສູ່ວຸດທິພາວະ ທີ່ພວກເຂົາຈະເລີ່ມມີຄວາມຮັບຜິດຊອບໃໝ່ໆ. ໃນເນື້ອຫາພາກທຳອິດ, ເຮົາຈະບໍ່ໃຊ້ເວລາໄຕ່ຕອງຫຼາຍຈົນເກີນໄປ ກ່ຽວກັບຄຸນສົມບັດຕ່າງໆຂອງເຍົາວະຊົນ, ແຕ່ເຮົາຈະເນັ້ນ ໃສ່ການພັດທະນາກ່ຽວກັບລັກສະນະຄຸນນະສົມບັດຂອງຄົນລຸ່ນເຍົາທີ່ໄດ້ຖືກກຳນົດໄວ້ໃນຄຳສອນຂອງສາສະໜາວ່າ ເຂົາຄວນຈະເຕີບໃຫຍ່ຂຶ້ນສູ່ການມີລັກສະນະເລົ່ານີ້. ສິ່ງທີ່ຄວນຈະເປັນທີ່ກະຈ່າງແຈ້ງຂຶ້ນຈາກຂໍ້ຄວາມທີ່ທ່ານຈະສຶກສາກໍ່ຄື ການທີ່ມີຄຸນລັກສະນະບາງຢ່າງທີ່ຈະເຮັດໃຫ້ຊາວໜຸ່ມລຸ່ນນີ້ມີຄວາມໂດດເດັ່ນ ແລະ ມີພະລັງບາງຢ່າງທີ່ຈະຕ້ອງຫຼໍ່ຫຼອມຊີວິດຂອງພວກເຂົາ. ເປັນສິ່ງທີ່ເປັນໄປໄດ້ທີ່ເຈົ້າເອງຈະເປັນຊາວໜຸ່ມທີ່ມີອາຍຸໃນຊ່ວງໄວລຸ້ນ, ຖ້າຫາກເປັນເຊັ່ນນັ້ນ ເນື້ອຫາໃນຫຼັກສູດກໍ່ຈະໃຫ້ໂອກາດແກ່ເຈົ້າໃນການກວດສອບເປົ້າໝາຍ ແລະ ການຈັດລຳດັບຄວາມສຳຄັນເປົ້າໝາຍຕ່າງໆຂອງທ່ານເອງເຊັ່ນກັນ.

## ຕອນທີ 2

ໃນການເລີ່ມຕົ້ນ, ໃຫ້ພິຈາລະນາກຸ່ມເຍົາວະຊົນທີ່ເຈົ້າຈະເຮັດວຽກນຳໃນໄວໆນີ້. ໃນອີກສາມປີຂ້າງໜ້າເຈົ້າຈະພົບກັບພວກເຂົາເລື້ອຍໆ ແລະ ຈະກາຍເປັນເພື່ອນແທ້, ຈະຊ່ວຍພວກເຂົາໃນການສຶກສາ ແລະ ສຳຫຼວດແນວຄິດຮ່ວມກັນ, ໃນການວາງແຜນ ແລະ ດຳເນີນໂຄງການຮັບໃຊ້ແບບງ່າຍໆ, ແລະ ໃນການທົບທວນສິ່ງທີ່ພວກເຂົາຮຽນຮູ້ເປັນກຸ່ມຈາກປະສົບການ. ມັນຈະຄຸ້ມຄ່າສຳລັບເຈົ້າທີ່ຈະໃຊ້

ເວລາຕອນນີ້ເພື່ອຄິດລ່ວງໜ້າໄວ້ ກ່ອນເຖິງມື້ສິ້ນສຸດໄລຍະເວລາສາມປີນັ້ນ, ເມື່ອພວກເຂົາຈົບໂຄງການ. ເພື່ອຊ່ວຍຊີ້ແຈງໃນໃຈຂອງເຈົ້າເອງ ໃຫ້ນຶກເຖິງຄຸນລັກສະນະທີ່ເຈົ້າຫວັງວ່າຈະເຮັດໃຫ້ຄົນລຸ້ນເຍົາຂອງເຈົ້າແຕກຕ່າງ, ໃຫ້ເຮັດບົດເຝິກຫັດຂ້າງລຸ່ມຮ່ວມກັບຜູ້ເຂົ້າຮ່ວມສຶກສາຫຼັກສູດນີ້.

1. ຊາວໜຸ່ມທີ່ເຈົ້າຈິນຕະນາການຈະມີລັກສະນະທີໂດດເດັ່ນດ້ວຍຈຸດປະສົງອັນສູງສົ່ງບໍ? ພວກເຂົາຈະພິຈາລະນາວ່າ ຈຸດປະສົງດັ່ງກ່າວນີ້ແມ່ນຫຍັງ?

_______________________________________________

_______________________________________________

_______________________________________________

2. ພວກເຂົາຈະມຸ່ງເນັ້ນພາລະກຳລັງຂອງຕົນເອງໄປໃນສິ່ງໃດແດ່?

_______________________________________________

_______________________________________________

_______________________________________________

3. ແມ່ນຫຍັງຈະເປັນສິ່ງທີ່ຈູງໃຈໃຫ້ພວກເຂົາປະຕິບັດຕາມ ເພື່ອໃຫ້ບັນລຸເປົ້າໝາຍຂອງຕົນ?

_______________________________________________

_______________________________________________

_______________________________________________

4. ເຈົ້າຄາດຫວັງວ່າພວກເຂົາຈະຕະໜັກເຖິງຄວາມທ້າທາຍ ທີ່ມະນຸດຊາດປະເຊີນຢູ່ໃນປັດຈຸບັນຫຼາຍໜ້ອຍພຽງໃດ? ພວກເຂົາຈະໝັ້ນໃຈໄດ້ບໍວ່າພວກເຂົາສາມາດມີສ່ວນຮ່ວມ ເຮັດໃຫ້ໂລກນີ້ເປັນສະຖານທີ່ໆດີກວ່າເກົ່າ?

_______________________________________________

_______________________________________________

_______________________________________________

5. ເຈົ້າຕ້ອງການໃຫ້ເພື່ອນລຸ້ນເຍົາມີທັດສະນະຄະຕິຕໍ່ການຮຽນຮູ້ ໃນຊ່ວງເວລາທີ່ເຈົ້າຢູ່ຮ່ວມກັນ. ຂໍ້ຄວາມຂ້າງລຸ່ມນີ້ເປັນຂໍ້ຄວາມທີ່ສະແດງເຖິງທັດສະນະຄະຕິຕໍ່ການຮຽນຮູ້. ຂໍໃຫ້ເຈົ້າເພີ້ມເຕີມອີກສອງສາມຂໍ້ໄດ້ບໍ?
   - ພວກເຂົາຈະເປັນຄົນດຸໝັ້ນໃນການຮຽນ ແລະ ຈະພະຍາຍາມນຳສິ່ງທີ່ຮຽນຮູ້ໄປລົງມືປະຕິບັດ.
   - ພວກເຂົາຈະມີນິໄສໃນການໄຕ່ຕອງເຖິງຜົນການກະທຳຂອງຕົນ.

- ພວກເຂົາຈະມີຈິດໃຈທີ່ເປີດກວ້າງ ແລະ ຈະເຂົ້າສູ່ການຮຽນຮູ້ດ້ວຍຄວາມຖ່ອມຕົນ.
- ພວກເຂົາຈະມີຄວາມປາດຖະໜາຢ່າງແຮງກ້າ ທີ່ຈະປູກຝັງຄວາມສາມາດໃນການຮັບໃຊ້ມະນຸດຊາດ.
- ພວກເຂົາຈະປາດຖະໜາທີ່ຈະບັນລຸສູ່ຄວາມດີເລີດໃນສິ່ງທີ່ພວກເຂົາກະທຳ.
- ພວກເຂົາຈະຫຼົງໄຫຼກ່ຽວກັບການສຶກສາທາງດ້ານວິທະຍາສາດ ແລະ ສິລະປະຂະແໜງຕ່າງໆ.
- ພວກເຂົາຈະໄດ້ຮັບຄວາມປິຕິຍິນດີຫຼາຍຈາກການຮຽນຮູ້ ການເຮັດວຽກເພື່ອຄວາມຈະເລີນກ້າວໜ້າຂອງມະນຸດຊາດ ເຊິ່ງພວກເຂົາປະຕິບັດຈາກ ການຈະເລີນເຕີບໂຕທາງດ້ານສະຕິປັນຍາ ແລະ ທາງຈິດວິນຍານຂອງຕົນເອງ.
- ______________________________________________

  ______________________________________________
- ______________________________________________

  ______________________________________________
- ______________________________________________

  ______________________________________________

6. ຂໍ້ຄວາມໃດຕໍ່ໄປນີ້ບັນຍາຍເຖິງວິທີທີ່ເຈົ້າຫວັງວ່າ ຄົນລຸ້ນເຍົາທີ່ເຈົ້າມີໃນໃຈຈະປະຕິບັດຕົນເອງແນວໃດ?

   _____ ມາດຕະຖານຂອງພວກເຂົາຈະສອດຄ່ອງ ກັບມາດຕະຖານທີ່ກຳໜົດໄວ້ສຳລັບຊາວໜຸ່ມຕາມກະແສໂລກ ແລະ ແຟຊັ້ນໃນທົ່ວໂລກບໍ່ຫຼາຍກໍໜ້ອຍ.

   _____ ພວກເຂົາຈະຊອກຫາມາດຕະຖານໃນການດຳເນີນຊີວິດຂອງພວກເຂົາ ຈາກສື່ຕ່າງໆທີ່ນິຍົມກັນ.

   _____ ພວກເຂົາຈະເດີນຕາມຮອຍຂອງຜູ້ທີ່ພະຍາຍາມດຳເນີນຊີວິດ ຕາມມາດຕະຖານຂອງສິນລະທັມອັງສູງສົ່ງ, ແມ່ນວ່າຈະມີຄວາມທ້າທາຍທີ່ໜ້າຢ້ານກົວ.

   _____ ພວກເຂົາຈະສາມາດຮູ້ໄດ້ ເມື່ອການກະທຳຂອງພວກເຂົາຂັດແຍ່ງກັບຄວາມເຊື່ອຂອງພວກເຂົາ, ເມື່ອມີຄວາມຂັດແຍ່ງເກີດຂຶ້ນ.

   _____ ພວກເຂົາຈະເຊື່ອໃນອຸດົມຄະຕິຕ່າງໆເຊັ່ນ ຄວາມເປັນອັນໜຶ່ງອັນດຽວກັນຂອງມະນຸດຊາດ, ຄວາມເທົ່າທຽມກັນຂອງຊາຍແລະຍິງ, ແລະ ຄວາມຍຸຕິທັມ, ແຕ່ວ່າການກະທຳຂອງພວກເຂົາຈະສະທ້ອນໃກ້ຄຽງກັບ ການກະທຳທີ່ເປັນທີ່ຍອມຮັບທາງສັງຄົມ, ແມ່ນວ່າຈະຊ່ຽວຊານໃນອຸດົມຄະຕິ, ແຕ່ກໍລົ້ມເຫຼວໃນທາງປະຕິບັດ.

   _____ ພວກເຂົາຈະລະຖິ້ມມາດຕະຖານສູງສົ່ງ ເພື່ອຈະໄດ້ຢູ່ຢ່າງສະດວກສະບາຍໃນສະພາບແວດລ້ອມທາງສັງຄົມທີ່ບໍ່ສະໜັບສະໜູນພວກເຂົາ.

7. ຂໍ້ຄວາມຂ້າງລຸ່ມສະແດງເຖິງ ຄວາມໝາຍເຊື່ອງຊ້ອນບາງປະການຂອງຊີວິດທີ່ບໍລິສຸດ ແລະ ສັກສິດ. ເຈົ້າກຳລັງຄິດວ່າເຍົາວະຊົນທີ່ເຈົ້າຄິດໄວ້ໃນໃຈ ຈະສາມາດທົບທວນຄວາມໝາຍເລົ່ານີ້ແນວໃດ? ຂໍໃຫ້ເຈົ້າເພີ້ມເຕີມອີກສອງສາມຂໍ້ໄດ້ບໍ?

- ບໍ່ປະຕິບັດຕົນຟຸ່ມເຟືອຍ
- ການບໍ່ຍຶດຕິດຈາກຄວາມສຸກເລັກໆນ້ອຍ ແລະ ຫຼົງທາງໄປໃນທາງມີ່ຜິດ
- ບໍ່ຍອມໃຫ້ຄວາມສຸກທາງໂລກຫັນເຫໄປຈາກຈຸດມຸ່ງໝາຍອັນສູງສົ່ງຂອງຕົນ
- ບໍ່ຕາມກະແສ ແລະ ແຟຊັ້ນ ເມື່ອຂັດກັບມາດຕະຖານຂອງຄວາມສັກສິດ
- ການບໍ່ຄິດເຖິງຄວາມບໍລິສຸດ ບໍ່ໄດ້ໝາຍເຖິງພຽງແຕ່ການລະເວັ້ນຈາກການມີເພດສຳພັນນອກສົມລົດເທົ່ານັ້ນ
- ໃຊ້ຄວາມພໍປະມານໃນການແຕ່ງກາຍ
- ໃຊ້ຄວາມພໍປະມານໃນການເວົ້າຈາ
- ໃຊ້ຄວາມພໍປະມານໃນການເລືອກຄວາມບັນເທີງຂອງຕົນເອງ
- ເປັນຄົນທີ່ໂດດເດັ່ນດ້ວຍຄວາມສຸພາບຮຽບຮ້ອຍ ແລະ ຄວາມຖ່ອມຕົນ
- ເປັນຄົນທີ່ປາດສະຈາກຄວາມອິດສາ ແລະ ລິດສະຫຍາ
- ເປັນຄົນທີ່ໂດດເດັ່ນດ້ວຍຄວາມບໍລິສຸດ, ຄວາມເໝາະສົມ ແລະ ຈິດໃຈທີ່ສະອາດ
- ເປັນຄົນລະວັງໃນການຄວບຄຸມກິເລດຕັນຫາອັນຕໍ່າຕ້ອຍຂອງຕົນ
- ____________________
- ____________________
- ____________________

8. ໃນຊ່ວງສອງສາມປີທີ່ເຈົ້າໃຊ້ເວລາຮ່ວມກັບເພື່ອນລຸ້ນເຍົາ, ເຈົ້າຫວັງວ່າພະລັງຂອງພວກເຂົາທັງດ້ານສະຕິປັນຍາ ແລະ ຈິດວິນຍານຈະເຂັ້ມແຂງຊໍາໃດ, ຈະສາມາດ

- ເອົາຊະນະຄວາມທ້າທາຍຕ່າງໆໄດ້ບໍ?
- ອົດທົນໃນຄວາມພະຍາຍາມທີ່ຈະບັນລຸເປົ້າໝາຍຂອງພວກເຂົາໄດ້ບໍ?
- ຕ້ານທານຕໍ່ແຮງກົດດັນທີ່ປະຕິບັດເສັ້ນທາງ ທີ່ຂັດກັບມາດຕະຖານທາງສິນລະທັມອັນສູງສົ່ງບໍ?

## ຕອນທີ 3

ຕອນນີ້ຂໍໃຫ້ພວກເຮົາຫັນມາພິຈາລະນາຂໍ້ຄວາມບາງຕອນ ທີ່ຄັດມາຈາກພຣະວັດຈະນະຂອງສາສະໜາ ແລະ ກວດສອບເບິ່ງວ່າ ຂໍ້ຄວາມເລົ່ານີ້ພັນລະນາເຖິງຊາວໜຸ່ມແນວໃດແດ່. ພຣະອັບດຸລບາຮາ ຊົງກ່າວວ່າ:

**“ໂອ ບັນດາຜູ້ເປັນທີ່ຮັກຂອງ ພຣະອັບດຸລບາຮາ! ຊີວິດຂອງມະນຸດນັ້ນມີຊ່ວງເວລາຂອງລະດູໃບໄມ້ປົ່ງ ແລະ ໄດ້ຮັບການປະສິດປະສາດດ້ວຍຄວາມຮຸ່ງເຮືອງອັນໜ້າອັດສະຈັນ. ໃນຊ່ວງເວລາເປັນຊາວໜຸ່ມນັ້ນສະແດງໃຫ້ເຫັນລັກສະນະສະເພາະດ້ວຍຄວາມແຂງແຮງ ແລະພາລະກຳລັງ, ເປັນຊ່ວງເວລາທີ່ເຫັນໄດ້ຢ່າງໂດດເດັ່ນໃນຖານະຊ່ວງເວລາທີ່ດີທີ່ສຸດໃນຊີວິດຂອງມະນຸດ. ດັ່ງນັ້ນ ເຈົ້າຈຶ່ງຄວນພະຍາຍາມທັງເວັນແລະຄືນ ເພື່ອວ່າເມື່ອເຈົ້າໄດ້ຮັບການປະສິດປະສາດ ດ້ວຍຄວາມແຂງແຮງຈາກສະຫວັນ, ໄດ້ຮັບການບັນດານໃຈຈາກແຮງຈູງໃຈອັນຫຼັກແຫຼມ ແລະ ໄດ້ຮັບການຊ່ວຍເຫຼືອໂດຍພະລັງແຫ່ງສະຫວັນ ແລະ ກະລຸນາທິຄຸນແຫ່ງສະຫວັນ ແລະ ການຮັບຮອງ, ແລ້ວເຈົ້າຈະກາຍເປັນເຄື່ອງປະດັບຂອງໂລກມະນຸດ ແລະໂດດເດັ່ນຢູ່ທ່າມກາງບັນດາຜູ້ທີ່ໄດ້ຮັບການນຳເຂົ້າສູ່ການຮຽນຮູ້ທີ່ແທ້ຈິງ ແລະ ຄວາມຮັກຂອງພຣະຜູ້ເປັນເຈົ້າ. ເຈົ້າຈະຕ້ອງໂດດເດັ່ນຢູ່ທ່າມກາງມະນຸດທັງຫຼາຍດ້ວຍຄວາມໜ້າເຄົາລົບ ແລະ ຄວາມບໍ່ຜູກພັນ, ຄວາມສູງສົ່ງຂອງເຈດຕະນາ, ຄວາມໃຈກວ້າງ, ຄວາມຕັ້ງໃຈໝັ້ນ, ຄວາມຄິດອັນປະເສີດ, ຄວາມຍືນຍັດ, ການຍົກລະດັບຂອງເປົ້າໝາຍ ແລະ ຄຸນລັກສະນະທາງທັມຂອງເຈົ້າ, ທັງນີ້ເພື່ອວ່າເຈົ້າຈະກາຍເປັນຫົນທາງໄປສູ່ຄວາມສູງສົ່ງ ແລະຄວາມຮຸ່ງເຮືອງໃຫ້ແກ່ສາສະໜາຂອງພຣະຜູ້ເປັນເຈົ້າ ແລະ ເປັນອະລຸໂນໄທສະຖານທີ່ປະທານຈາກສະຫວັນ, ເພື່ອວ່າເຈົ້າຈະປະພຶດຕົນຢ່າງສອດຄ້ອງກັບຄຳແນະນຳ ແລະ ຄຳສັ່ງສອນຂອງພຣະຜູ້ຊົງຄວາມງາມອັນອຸດົມພອນ - ຂໍຊີວິດຂອງຂ້າພະອົງເປັນການເສຍສະຫຼະແກ່ບັນດາຜູ້ເປັນທີ່ຮັກຂອງພຣະອົງ - ໂດຍການສ່ອງສະທ້ອນຄຸນລັກສະນະ ແລະຄຸນສົມບັດທັງຫຼາຍຂອງບາຮາຍ, ເຈົ້າຈະແຕກຕ່າງຢ່າງໂດດເດັ່ນຈາກຜູ້ອື່ນ. ພຣະອັບດຸລບາຮາ ຫວັງຢ່າງກະຕືລືລົ້ນວ່າ ແຕ່ລະຄົນຈະເປັນເໝືອນຣາຊະສີທີ່ປາດສະຈາກຄວາມຢ້ານກົວ, ຜູ້ທີ່ກ້າວຢ່າງຢູ່ເທິງທົ່ງຫຍ້າແຫ່ງຄວາມສົມບູນພ້ອມຂອງມະນຸດ ແລະ ເປັນດັ່ງສາຍລົມທີ່ເຕັມໄປດ້ວຍກິ່ນຫອມ ທີ່ພັດຜ່ານທ້ອງທົ່ງແຫ່ງຄຸນນະທັມ.”** [1]

1. ຈົ່ງຕື່ມຂໍ້ຄວາມນີ້ໃຫ້ສົມບູນໂດຍອີງໃສ່ພຣະວັດຈະນະຂ້າງເທິງນີ້:
   ກ. ຊີວິດຂອງມະນຸດນັ້ນມີຊ່ວງເວລາຂອງລະດູໃບໄມ້ປົ່ງແລະໄດ້ຮັບການປະສິດປະສາດດ້ວຍ ________________.
   ຂ. ໃນຊ່ວງເວລາຂອງການເປັນຊາວໜຸ່ມສະແດງໃຫ້ເຫັນລັກສະນະສະເພາະດ້ວຍ ________ ແລະ ________.
   ຄ. ຊ່ວງເວລາຂອງການເປັນຊາວໜຸ່ມເປັນຊ່ວງເວລາທີ່ເຫັນໄດ້ຢ່າງໂດດເດັ່ນໃນຖານະ ________ ໃນຊີວິດຂອງມະນຸດ.
   ງ. ລະຫວ່າງຊ່ວງເວລາຂອງການເປັນຊາວໜຸ່ມ ເຈົ້າຈຶ່ງຄວນພະຍາຍາມທັງເວັນແລະຄືນ ເພື່ອວ່າເມື່ອເຈົ້າໄດ້ຮັບການປະສິດປະສາດດ້ວຍ ________, ໄດ້ຮັບການດົນບັນດານໃຈຈາກ ________ ແລະໄດ້ຮັບການຊ່ວຍເຫຼືອໂດຍ ________

________ ແລະ ____________________________________ ແລະ ____________________ , ແລ້ວເຮົາຈະກາຍເປັນ ____________________ ຂອງໂລກມະນຸດ.

ຈ. ລະຫວ່າງຊ່ວງເວລາຂອງການເປັນຊາວໜຸ່ມ ເຮົາຄວນພະຍາຍາມທັງເວັນແລະຄືນເພື່ອວ່າເຮົາຈະໂດດເດັ່ນຢູ່ທ່າມກາງບັນດາຜູ້ທີ່ໄດ້ຮັບການນຳເຂົ້າສູ່ ____________________ ແລະ ____________________.

ສ. ລະຫວ່າງຊ່ວງເວລາຂອງການເປັນຊາວໜຸ່ມເຮົາຕ້ອງໂດດເດັ່ນດ້ວຍ ____________________ ແລະ ____________________.

ຊ. ລະຫວ່າງຊ່ວງເວລາຂອງການເປັນຊາວໜຸ່ມເຮົາຈະຕ້ອງໂດດເດັ່ນດ້ວຍ ____________________ຂອງເຈດຕະນາ.

ຍ. ລະຫວ່າງຊ່ວງເວລາຂອງການເປັນຊາວໜຸ່ມເຮົາຈະຕ້ອງໂດດເດັ່ນດ້ວຍ __________ , ____________________, ຄວາມຄິດ____________________, ____________________ ການຍົກລະດັບຂອງ ________________ ແລະ ____________________ ຂອງທ່ານ.

ດ. ລະຫວ່າງຊ່ວງເວລາຂອງການເປັນຊາວໜຸ່ມເຮົາຕ້ອງກາຍເປັນ ____________________ສູ່ຄວາມສູງສົ່ງແລະຄວາມຮຸ່ງເຮືອງໃຫ້ແກ່ ________________ ແລະເປັນ ____________________.

ຕ. ລະຫວ່າງຊ່ວງເວລາຂອງການເປັນຊາວໜຸ່ມເຮົາຕ້ອງປະພຶດຕົນ ________________ ກັບ ____________________ ແລະ ____________________ ຂອງພຣະຜູ້ຊົງຄວາມງາມອັນອຸດົມພອນ.

ຖ. ພຣະອັບດຸລບາຮາ ຫວັງຢ່າງກະຕືລືລົ້ນວ່າຊາວໜຸ່ມແຕ່ລະຄົນຈະເປັນເໝືອນດັ່ງ ____________________ ຜູ້ກ້າວຢ່າງຢູ່ເທິງທົ່ງຫຍ້າແຫ່ງ ____________________ແລະເປັນດັ່ງສາຍລົມທີ່ ____________________ ທີ່ພັດຜ່ານທ້ອງທົ່ງແຫ່ງ ____________________.

2. ເຈົ້າອາດຈະເຄີຍໄດ້ຍິນຄຳເວົ້າກ່ຽວກັບຄວາມເຊື່ອທີ່ເປັນທີ່ນິຍົມວ່າ ຊາວໜຸ່ມຄວນປ່ອຍຕົນເອງໃຫ້ສະໜຸກສະໜານ, ເພາະວ່າອີກບໍ່ດົນ ພວກເຂົາກໍ່ຈະຕ້ອງປະເຊີນໜ້າກັບເລື່ອງຈິງຈັງຕ່າງໆໃນຊີວິດ. ສິ່ງນີ້ບໍ່ສອດຄ້ອງກັບຄຳກ່າວຂ້າງຕົ້ນຂອງ ພຣະອັບດຸລບາຮາ ຢ່າງເຫັນໄດ້ແຈ້ງ. ມີຂໍ້ສັນນິຖານອັນໃດແດ່ທີ່ຢູ່ເບື້ອງຫຼັງຄວາມຄິດທີ່ເປັນທີ່ນິຍົມກັນນີ້? ໃຫ້ເຈົ້າອະທິບາຍຄຳຖາມນີ້ກັບເພື່ອນໃນກຸ່ມທີ່ເຈົ້າສຶກສາ ແລະ ຂຽນຂໍ້ສະຫຼຸບຂອງເຈົ້າລົງໃນຊ່ອງວ່າງຂ້າງລຸ່ມນີ້.

________________________________________

________________________________________

________________________________________

______________________________________________

______________________________________________

______________________________________________

## ຕອນທີ 4

ໃນບົດອະທິຖານຕໍ່ໄປນີ້, ພຣະອັບດຸລບາຮາ ສະແດງຄວາມຫວັງບາງຢ່າງຂອງພຣະອົງສຳລັບຊາວໜຸ່ມໄວ້ວ່າ:

**"ໂອ ຂ້າແດ່ພຣະຜູ້ເປັນນາຍຜູ້ຊົງເມດຕາ! ຂໍຊົງໂປດປະທານປີກສອງຂ້າງຈາກສະຫວັນໃຫ້ແກ່ລູກນົກນ້ອຍເລົ່ານີ້ທຸກໂຕ ແລະ ຂໍຊົງປະທານພະລັງທາງຈິດວິນຍານໃຫ້ແກ່ພວກເຂົາເພື່ອວ່າພວກເຂົາຈະເຫີນບິນໄປໃນວັງເວຫາອັນໄຮ້ຂີດຈຳກັດ ແລະ ທະຍານຂຶ້ນໄປສູ່ອານາຈັກອັບຮາເບື້ອງບົນ.**

**"ຂ້າແດ່ພຣະຜູ້ເປັນນາຍ ຂໍຊົງເຮັດໃຫ້ເບ້ຍໄມ້ທີ່ອ່ອນແອເລົ່ານີ້ແຂງແຮງ ເພື່ອວ່າພວກເຂົາແຕ່ລະຄົນຈະກາຍເປັນຕົ້ນໄມ້ທີ່ໃຫ້ໝາກຜົນອຸດົມສົມບູນ, ຂຽວສົດ ແລະ ຈະເລີນງອກງາມ. ຂໍໃຫ້ຈິດວິນຍານເລົ່ານີ້ປະສົບໄຊຊະນະ ໂດຍອາໄສພະລັງອຳນາດຂອງໝູ່ເທວັນແຫ່ງສະຫວັນຂອງພຣະອົງ, ເພື່ອວ່າພວກເຂົາຈະສາມາດທຳລາຍພະລັງແຫ່ງຄວາມຜິດພາດ ແລະ ອະວິຊາ ແລະ ຍົກທຸງໄຊແຫ່ງມິດຕະພາບ ແລະ ການນຳທາງອອກທ່າມກາງປະຊາຊົນທັງຫຼາຍ, ເພື່ອວ່າພວກເຂົາຈະປຽບເໝືອນສາຍລົມ ທີ່ໃຫ້ຊີວິດແຫ່ງລະດູໃບໄມ້ປົ່ງ, ໃຫ້ຄວາມສົດຊື່ນ ແລະ ປຸກໃຫ້ພືກສາຊາດແຫ່ງຈິດວິນຍານຂອງມະນຸດຕື່ນຂຶ້ນ ແລະ ສາຍຝົນທີ່ເຮັດໃຫ້ທົ່ງຫຍ້າໃນພາກພື້ນຂຽວສົດ ແລະ ອຸດົມສົມບູນ.**

**"ພຣະອົງຄືພຣະຜູ້ຊົງມະຫິທານຸພາບ ແລະ ພຣະຜູ້ຊົງອຳນາດ, ພຣະອົງຄືພຣະຜູ້ຊົງປະທານພອນ ແລະ ພຣະຜູ້ຊົງຮັກແພງ."** [2]

1. ຈົ່ງຕື່ມຂໍ້ຄວາມຕໍ່ໄປນີ້ໃຫ້ສົມບູນໂດຍອີງໃສ່ພຣະວັດຈະນະຂ້າງເທິງ:

   ກ. ພຣະອັບດຸລບາຮາໄດ້ປຽບທຽບຜູ້ທີ່ຍັງຢູ່ໃນຊ່ວງເລີ່ມຕົ້ນຂອງການເປັນຊາວໜຸ່ມ ວ່າເປັນສະເໝືອນລູກນົກນ້ອຍທີ່ຕ້ອງການ ____________________ແລະ ຮຽກຮ້ອງໃຫ້ພຣະຜູ້ເປັນເຈົ້າຊົງປະທານ ______________________________ ໃຫ້ພວກເຂົາ ເພື່ອວ່າພວກເຂົາຈະ_______________________ໃນວັງເວຫາອັນໄຮ້ຂີດຈຳກັດ ແລະ ________ __________ສູ່ອານາຈັກອັບຮາເບື້ອງບົນ.

ຂ. ພຣະອົງໄດ້ປຽບທຽບຜູ້ທີ່ຍັງຢູ່ໃນຊ່ວງເລີ່ມຕົ້ນຂອງການເປັນຊາວໜຸ່ມວ່າເປັນເໝືອນ _ ___________________ ທີ່ອ່ອນແອ ແລະ ໄດ້ວິງວອນໃຫ້ພຣະຜູ້ເປັນເຈົ້າຊົງເຮັດໃຫ້ພວກເຂົາແຂງແຮງ ເພື່ອວ່າພວກເຂົາແຕ່ລະຄົນຈະກາຍເປັນຕົ້ນໄມ້ທີ່ໃຫ້ ________ ________, _____________________ ແລະ ______________________ ______________

ຄ. ພຣະອົງຂໍໃຫ້ພຣະຜູ້ເປັນເຈົ້າຊົງເຮັດໃຫ້ພວກເຂົາປະສົບໄຊຊະນະ ເພື່ອວ່າພວກເຂົາຈະສາມາດທຳລາຍພະລັງແຫ່ງຄວາມຜິດພາດ ແລະ ອະວິຊາ ແລະ _____________ ແຫ່ງ ______________________ແລະ _____________________________

ງ. ພຣະອົງອະທິຖານຂໍໃຫ້ພວກເຂົາປຽບເໝືອນດັ່ງເປັນ __________ ອັນໃຫ້ຊີວິດແຫ່ງ ____________________, ໃຫ້ຄວາມສົດຊື່ນແລະ ______________________ ພຶກສາຊາດແຫ່ງ ________________________ ແລະເປັນດັ່ງ ____________ ________ ທີ່ເຮັດໃຫ້ທົ່ງຫຍ້າໃນພາກພື້ນ ____________ ແລະ____________

2. ໃນບົດອະທິຖານຂ້າງເທິງນັ້ນ, ພຣະອັບດຸລບາຮາຂໍໃຫ້ພຣະຜູ້ເປັນເຈົ້າຊົງປະທານພະລັງທາງຈິດວິນຍານແກ່ຊາວໜຸ່ມ. ຕໍ່ໄປນີ້ຂໍ້ໃດທີ່ເຈົ້າຖືວ່າມີຄວາມກ່ຽວໂຍງກັບພະລັງທາງຈິດວິນຍານ?

______ ຄວາມສູງສົ່ງຂອງຈຸດປະສົງ
______ ຄວາມໄວ້ວາງໃຈໃນພຣະຜູ້ເປັນເຈົ້າ
______ ຄວາມບໍລິສຸດ
______ ການໃຊ້ອຸບາຍລໍ້ລວງ
______ ການຊົງດີຊົງເດັ່ນ
______ ຄວາມເປັນປຶກແຜ່ນ
______ ອຸປະນິໄສທີ່ທ່ຽງທຳ
______ ຄວາມທະເຍີທະຍານທາງໂລກ
______ ຄວາມໃຈກວ້າງ
______ ຄວາມບໍລິສຸດຂອງເຈດຕະນາ
______ ຄວາມປາດຖະໜາທາງສັງຄົມ
______ ຄວາມຮັກໃນພຣະຜູ້ເປັນເຈົ້າ
______ ຄວາມດຶງດູດຢູ່ກັບຄວາມຫຼູຫຼາ

3. ໃນບົດອະທິຖານນີ້, ພຣະອັບດຸລບາຮາ ຂໍໃຫ້ພຣະຜູ້ເປັນເຈົ້າຊົງຊ່ວຍໃຫ້ຊາວໜຸ່ມສາມາດທຳລາຍພະລັງແຫ່ງຄວາມຜິດພາດ ແລະ ອະວິຊາ. ຈົ່ງຕັດສິນໃຈວ່າຂໍ້ໃດຕໍ່ໄປນີ້ຈະຊ່ວຍໃຫ້ຊາວໜຸ່ມພະຍາຍາມຕໍ່ສູ້ກັບພະລັງດັ່ງກ່າວ.

______ ຄວາມສາມາດໃນການເອົາຊະນະອະຄະຕິ

_______ ຄວາມສາມາດສະໜັບສະໜູນຄວາມສາມັກຄີໃນຄວາມຄິດເຫັນ
_______ ຄວາມສາມາດໃນການລໍ້ລວງ
_______ ຄວາມສາມາດໃນການມອງເຫັນຄວາມແຕກຕ່າງລະຫວ່າງສິ່ງທີ່ຖືກກັບສິ່ງທີ່ຜິດ
_______ ຄວາມສາມາດໃນການສະແດງອອກເຊິ່ງຄວາມຄິດທີ່ເລິກເຊິ່ງໄດ້ຢ່າງຊັດເຈນ
_______ ຄວາມສາມາດໃນການສະສົມຄວາມມັ່ງຄັ່ງໄດ້ຢ່າງມະຫາສານ
_______ ຄວາມສາມາດໃນການຄວບຄຸມຜູ້ອື່ນ
_______ ຄວາມສາມາດໃນການເອົາຊະນະແຮງກະຕຸ້ນຂອງທຳມະຊາດຝ່າຍຕ່ຳ
_______ ຄວາມສາມາດໃນການບໍ່ເຂົ້າຂ້າງຝ່າຍໃດຝ່າຍໜຶ່ງໃນການພິຈາລະນາຕັດສິນ
_______ ຄວາມສາມາດໃນການສົ່ງເສີມຄວາມຍຸຕິທັມ

4. ໃນບົດອະທິຖານນີ້, ພຣະອັບດຸລບາຮາ ຂໍໃຫ້ພຣະຜູ້ເປັນເຈົ້າຊົງຊ່ວຍໃຫ້ຊາວໜຸ່ມສາມາດຊູທຸງໄຊແຫ່ງມິດຕະພາບ ແລະ ການນຳທາງ. ຈົ່ງຕັດສິນໃຈວ່າສິ່ງໃດຕໍ່ໄປນີ້ຈະຊ່ວຍຊາວໜຸ່ມໄດ້ມາເຊິ່ງຄວາມພະຍາຍາມນີ້:

_______ ຄວາມສາມາດໃນການສ້າງມິດຕະພາບທີ່ຜູກພັນ
_______ ຄວາມສາມາດໃນການເອົາຊະນະບົດທົດສອບແລະຄວາມຍາກລຳບາກ
_______ ຄວາມສາມາດໃນການລະບຸຄວາມຜິດພາດ ແລະ ຂໍ້ບົກຜ່ອງຂອງຜູ້ອື່ນ
_______ ຄວາມສາມາດໃນການມອງຂ້າມຄວາມຜິດພາດຂອງຜູ້ອື່ນ
_______ ຄວາມສາມາດໃນການຮັບໃຊ້ສັງຄົມຢ່າງບໍ່ເຫັນແກ່ຕົວ
_______ ຄວາມສາມາດໃນການຍິນດີກັບຄວາມສຳເລັດຂອງຜູ້ອື່ນ
_______ ຄວາມສາມາດໃນການເພາະປູກຄວາມຫວັງໃຫ້ແກ່ຜູ້ອື່ນ
_______ ຄວາມສາມາດໃນການເອົາຊະນະອະຄະຕິ
_______ ຄວາມສາມາດໃນການສົ່ງເສີມປະໂຫຍດສ່ວນຕົວຂອງຕົນ
_______ ຄວາມສາມາດໃນການສົ່ງເສີມຄວາມຜາສຸກຂອງຊຸມຊົນໜຶ່ງ

## ຕອນທີ 5

ພຣະວັດຈະນະຕອນທີ່ເຮົາສຶກສາໄປແລ້ວ ໃນຫຼັກສູດສອງຕອນທີຜ່ານມາ ໄດ້ຊ່ວຍໃຫ້ເຮົາມີຄວາມຢັ່ງຮູ້ກ່ຽວກັບຄຸນສົມບັດບາງຢ່າງທີ່ຊາວໜຸ່ມຄວນມີ. ເປັນທີ່ຊັດເຈນວ່າເມື່ອເຖິງເວລາທີ່ຄົນລຸ້ນເຍົາອາຍຸໄດ້ສິບຫ້າປີ, ພວກເຂົາຈະຖືກຄາດຫວັງໃນຫຼາຍຢ່າງ. ແທ້ຈິງແລ້ວເຮົາຮູ້ດີວ່າ ພຣະວັດຈະນະສັກສິດກ່າວເຖິງອາຍຸສິບຫ້າປີ, ວ່າເປັນຈຸດເລີ້ມຕົ້ນຂອງວຸດທິພາວະ. ເມື່ອກ້າວມາເຖິງອາຍຸສິບຫ້າປີນີ້ເອງທີ່ມີກົດຕ່າງໆຂອງບາຮາຍ ທີ່ເປັນການຜູກມັດກັບບຸກຄົນຕ້ອງປະຕິບັດເຊັ່ນ ກົດກ່ຽວກັບການອະທິຖານ ແລະ ການຖືສິນອົດ. ພຣະອັບດຸລບາຮາ ຊົງກ່າວໄວ້ກ່ຽວກັບການຜ່ານເຂົ້າສູ່ການມີວຸດທິພາວະວ່າ:

**"ທາລົກທີ່ຍັງບໍ່ອອກນົມໄດ້ກ້າວຜ່ານໄລຍະຕ່າງໆທາງກາຍະພາບ, ເຕີບໃຫຍ່ ແລະ ພັດທະນາຂຶ້ນໃນທຸກໄລຍະ, ຈົນກະທັ່ງຮ່າງກາຍຂອງທາລົກນັ້ນເຂົ້າສູ່ໄວແຫ່ງວຸດທິພາວະ. ເມື່ອມາເຖິງໄລຍະນີ້ກໍ່ໄດ້ມາເຊິ່ງຄວາມສາມາດທີ່ຈະສະແດງປາກົດ ເຊິ່ງຄວາມສົມບູນພ້ອມທາງຈິດວິນຍານ ແລະ ສະຕິປັນຍາ. ແສງສະຫວ່າງຂອງຄວາມເຂົ້າໃຈ, ສະຕິປັນຍາ ແລະ ຄວາມຮູ້ຈະປາກົດແຈ້ງຂຶ້ນໃນທາລົກນັ້ນ ແລະ ພະລັງຕ່າງໆຂອງຈິດວິນຍານຂອງເຂົາກໍ່ຈະເປັນທີ່ເປີດເຜີຍອອກມາ."** [3]

ແລະ ເມື່ອບຸກຄົນອາຍຸເຖິງໄວນີ້, ພຣະອັບດຸລບາຮາ ກ່າວວ່າ

**"ເຂົາເຂົ້າໃຈຄວາມເປັນຈິງຂອງສິ່ງຕ່າງໆ ແລະ ສັດຈະທັມທີ່ຢູ່ພາຍໃນແລ້ວ. ແທ້ຈິງແລ້ວ, ໃນຄວາມເຂົ້າໃຈຂອງເຂົາ, ຄວາມຮູ້ສຶກຂອງເຂົາ, ຄວາມຫຼຸດຜ່ອນຂອງເຂົາ ແລະ ການຄົ້ນພົບຂອງເຂົາ, ທຸກໆມື້ຂອງຊີວິດຂອງເຂົາຫຼັງຈາກມີວຸດທິພາວະ ຈະເທົ່າກັບໜຶ່ງປີກ່ອນມີວຸດທິພາວະ."** [4]

1. ມີແນວຄວາມຄິດຢູ່ຫຼາຍຢ່າງທີ່ສາມາດນໍາມາກວດສອບ ເມື່ອພິຈາລະນາກ່ຽວກັບຂໍ້ຄວາມຂ້ອງເທິງຂອງ ພຣະອັບດຸລບາຮາ. ເຈົ້າຄິດວ່າຂໍ້ຄວາມໃດແດ່ຕໍ່ໄປນີ້ທີ່ປະຍຸກໃຊ້ໄດ້ກັບ ຜູ້ມີອາຍຸສິບຫ້າປີ? ຊາຍ ຫຼື ຍິງ
   _____ ມີຄວາມສາມາດທາງຈິດວິນຍານ ທີ່ຈະສະທ້ອນໃຫ້ເຫັນເຖິງຄວາມໝາຍຂອງຊີວິດ ແລະ ຄວາມຕາຍ.
   _____ ສາມາດທີ່ຈະພິຈາລະນາແນວຄວາມຄິດທີ່ເລິກເຊິ່ງໄດ້ ສະເພາະເມື່ອແນວຄວາມຄິດເປັນເລື່ອງກ່ຽວກັບຄວາມສະນຸກສະໜານເທົ່ານັ້ນ.
   _____ ມີຄວາມສາມາດທາງສະຕິປັນຍາ ທີ່ຈະວິເຄາະກ່ຽວກັບພະລັງຕ່າງໆທີ່ກໍາລັງມີອິດທິພົນກັບຊີວິດຂອງເຂົາ.
   _____ ມີຄວາມສາມາດທີ່ຈະຜູກມັດຕົນກັບວຽກງານ ທີ່ຕ້ອງການຄວາມຂະຫຍັນໝັ້ນພຽນ.
   _____ ມີຄວາມສາມາດທາງຈິດວິນຍານ ທີ່ຈະເອົາຊະນະຄວາມທ້າທາຍຍາກໆໄດ້.
   _____ ມີຄວາມສາມາດທີ່ຈະຈັດຊັ້ນຮຽນທີ່ໃຫ້ການສຶກສາທາງຈິດວິນຍານສໍາລັບເດັກນ້ອຍໄດ້.
   _____ ມີຄວາມສາມາດທີ່ຈະອະທິບາຍຄໍາສອນ ແລະ ຫຼັກຄວາມເຊື່ອຂອງສາສະໜາໄດ້ດ້ວຍຄວາມເວົ້າທີ່ຄ່ອງແຄ້ວ ແລະ ຄວາມເຊື່ອໝັ້ນ.
   _____ ບໍ່ຕ້ອງການຄວາມຮັກ ແລະ ການສະໜັບສະໜູນຈາກພໍ່ແມ່.
   _____ ສາມາດຮັບຜິດຊອບຕໍ່ການປະຕິບັດຕາມກົດຕ່າງໆຂອງບາຮາຍໄດ້.
   _____ ມີຄວາມສາມາດທາງສະຕິປັນຍາທີ່ຈະເຂົ້າໃຈຂະບວນການທາງສັງຄົມໄດ້.
   _____ ສາມາດໃຊ້ເວລາໄປໃນການຮັບໃຊ້ທີ່ມີຄວາມໝາຍຕໍ່ສັງຄົມ.

2. ເຈົ້າອາດປາດຖະໜາທີ່ຈະທ່ອງຈຳບົດອະທິຖານຕໍ່ໄປນີ້.

> **"ຂ້າແດ່ພຣະຜູ້ເປັນນາຍ ຂໍຊົງດົນບັນດານໃຫ້ຊາວໜຸ່ມຜູ້ນີ້ຮຸ່ງເຮືອງ, ຂໍຊົງປະທານພອນໃຫ້ແກ່ຊາວໜຸ່ມຜູ້ອ່ອນແອນີ້. ຂໍຊົງປະທານຄວາມຮູ້ ແລະ ເພີ່ມພູນກຳລັງໃຫ້ແກ່ເຂົາທຸກຮຸ່ງອາລຸນ. ຂໍຊົງປົກປ້ອງເຂົາໄວ້ໃນທີ່ກຳບັງແຫ່ງຄວາມຄຸ້ມຄອງຂອງພຣະອົງ ເພື່ອພວກເຂົາຈະບໍ່ຫຼົງຜິດ, ຈະອຸທິດຕົນຮັບໃຊ້ສາສະໜາຂອງພຣະອົງ, ຊີ້ແນະຜູ້ທີ່ມີທິດຖິ, ນຳທາງຜູ້ເຄາະຮ້າຍ, ປົດປ່ອຍຜູ້ຖືກຄຸມຂັງ ແລະ ປຸກຜູ້ປະໝາດໃຫ້ມີສະຕິ, ເພື່ອວ່າທຸກຄົນຈະໄດ້ຮັບພຣະພອນ ດ້ວຍການສັນລະເສີນ ແລະ ລະລຶກເຖິງພຣະອົງ. ພຣະອົງຄືພຣະຜູ້ຊົງອຳນາດ, ພຣະຜູ້ຊົງອານຸພາບ."** [5]

## ຕອນທີ 6

ພະລັງທາງດ້ານກາຍຍະພາບ, ສະຕິປັນຍາ ແລະ ຈິດວິນຍານຈະເປັນສິ່ງທີ່ເຂົ້າມາສູ່ຄວາມສົນໃຈເປັນພິເສດ ເມື່ອຄົນເຮົາກ້າວຜ່ານທໍລະນີປະຕູຂອງໄວແຫ່ງວຸດທິພາວະ ຫຼືເມື່ອມີອາຍຸສິບຫ້າປີ. ຈຳເປັນຕ້ອງລະຖິ້ມເຈດຕະນາ, ຄວາມຄິດ ແລະ ນິໄສຕ່າງໆຂອງໄວເດັກໄວ້ເບື້ອງຫຼັງ, ພວກເຂົາຕ້ອງເພາະປູກຄວາມສາມາດໃໝ່ໆຂຶ້ນມາ. ການຈັດທິດທາງຂອງພະລັງເລົ່ານີ້ ໄປສູ່ການຮັບໃຊ້ສາສະໜາຂອງພຣະຜູ້ເປັນເຈົ້ານັ້ນ ຄືການເລີ່ມຕົ້ນຂອງເວລາທີ່ຮຸ່ງເຮືອງທີ່ສຸດຂອງຊີວິດ ໃນໄລຍະຂອງຊາວໜຸ່ມຄົນໜຶ່ງ. ພຣະບາຮາອຸລລາຫ໌ ຊົງກ່າວວ່າ:

> **"ພອນຈົ່ງມີແດ່ຜູ້ທີ່ຢູ່ໃນຊ່ວງເວລາທີ່ດີທີ່ສຸດຂອງຊາວໜຸ່ມ ແລະ ເວລາທີ່ຮຸ່ງເຮືອງທີ່ສຸດຂອງຊີວິດຂອງເຂົາ ທີ່ໄດ້ລຸກຂຶ້ນຮັບໃຊ້ສາສະໜາຂອງພຣະຜູ້ເປັນນາຍຕັ້ງແຕ່ການເລີ້ມຕົ້ນ ແລະ ຈົນກະທັ່ງສິ້ນສຸດ, ແລະ ໄດ້ຕົບແຕ່ງຫົວໃຈຂອງເຂົາດ້ວຍຄວາມຮັກຂອງພຣະອົງ. ການສະແດງປາກົດຂອງຄວາມສະຫງ່າງາມເຊັ່ນນີ້ ຍິ່ງໃຫຍ່ກວ່າການສ້າງສັນສະຫວັນ ແລະ ໂລກ. ຂໍພອນຈົ່ງມີແດ່ຜູ້ທີ່ໝັ້ນຄົງ ແລະ ຂໍຄວາມສະຫວັດດີຈົ່ງມີແດ່ຜູ້ທີ່ໜັກແໜ້ນ."** [6]

ການຮັບໃຊ້ຕາມຈຸດປະສົງໂດຍຊາວໜຸ່ມແຕ່ລະລຸ້ນຄົນ ເປັນສິ່ງທີ່ຂາດບໍ່ໄດ້ຕໍ່ຄວາມຈະເລີນກ້າວໜ້າ. ຈົດໝາຍທີ່ຂຽນໃນນາມ ທ່ານ ໂຊກີ ເອຟເຟັນດີ ເນັ້ນຢ້ຳເຖິງຄວາມສຳຄັນຂອງການມີສ່ວນຮ່ວມທີ່ພວກເຂົາປະຕິບັດວ່າ "ພຣະອົງຊົງວາງຄວາມຮັບຜິດຊອບທັງໝົດໄວ້ເທິງບ່າຂອງພວກເຂົາ ໃນການດູແລຮັກສາຈິດວິນຍານຂອງການຮັບໃຊ້ຢ່າງບໍ່ເຫັນແກ່ຕົວ" ໃນບັນດາຜູ້ທີ່ເຮັດວຽກເພື່ອບັນລຸຈຸດມຸ່ງໝາຍແຫ່ງຈຸດປະສົງຂອງພຣະຜູ້ເປັນເຈົ້າ. "ຫາກບໍ່ມີຈິດວິນຍານນັ້ນ" ຈົດໝາຍກ່າວຕໍ່ວ່າ "ຈະບໍ່ມີວຽກງານໃດທີ່ຈະປະສົບຄວາມສຳເລັດໄດ້."

ສຳລັບຄຸນລັກສະນະເລົ່ານັ້ນທີ່ເຮັດໃຫ້ຊາວໜຸ່ມເໝາະສົມເປັນພິເສດ ສຳລັບວຽກງານການຮັບໃຊ້, ສະພາຍຸຕິທັມແຫ່ງສາກົນຂຽນຂໍ້ຄວາມເຖິງ ທັມມະສະພາປະຈຳປະເທດທັງໝົດວ່າ:

**"ຄວາມທົນທານຂອງຊາວໜຸ່ມພາຍໃຕ້ສະພາບທີ່ຍາກລຳບາກ, ຄວາມສົດຊື່ນ ແລະ ຄວາມມີຊີວິດຊີວາຂອງພວກເຂົາ, ຄວາມສາມາດທີ່ພວກເຂົາຈະປັບຕົວເຂົ້າກັບສະພາບແວດລ້ອມໃນທ້ອງຖິ່ນ, ປະເຊີນໜ້າກັບຄວາມທ້າທາຍໃໝ່ໆ, ແລະ ການໃຫ້ຄວາມອົບອຸ່ນ ແລະ ຄວາມກະຕືລືລົ້ນແກ່ຜູ້ທີ່ພວກເຂົາໄປຢ້ຽມຢາມ, ເມື່ອສິ່ງດັ່ງກ່າວຮ່ວມກັນເຂົ້າກັບມາດຕະຖານການປະພຶດຂອງຊາວໜຸ່ມບາຮາຍທີ່ພວກເຂົາຍຶດຖື, ພວກເຂົາກາຍເປັນເຄື່ອງມືທີ່ມີສັກກະຍະພາບໃນການດຳເນີນໂຄງການຕ່າງໆທີ່ກຳໜົດໄວ້. ແທ້ຈິງແລ້ວ ໂດຍອາໄສຄຸນລັກສະນະອັນໂດດເດັ່ນເລົ່ານີ້ ພວກເຂົາສາມາດເປັນຫົວຫອກຂອງກິດຈະກຳຕ່າງໆ ແລະ ເປັນພະລັງຂັບເຄື່ອນຂອງພາລະກິດທີ່ພວກເຂົາເຂົ້າຮ່ວມ, ບໍ່ວ່າຈະເປັນໃນລະດັບທ້ອງຖິ່ນ ຫຼື ລະດັບປະເທດ."** [7]

ແລະ ກ່າວເຖິງຊາວໜຸ່ມທົ່ວໂລກ, ໂດຍ ສະພາຍຸຕິທັມແຫ່ງສາກົນ ອະທິບາຍເພີ່ມເຕີມວ່າ:

**"ແມ່ນວ່າຄວາມເປັນຈິງຕ່າງໆຂອງເຈົ້າ ຈະຖືກຫຼໍ່ຫຼອມໂດຍສະຖານະການທີ່ຫຼາກຫຼາຍ, ແຕ່ຄວາມປາດຖະໜາທີ່ຈະນຳມາເຊິ່ງການປ່ຽນແປງໃນທາງສ້າງສັນ ແລະ ຄວາມສາມາດໃນການຮັບໃຊ້ທີ່ມີຄວາມໝາຍ, ທັງສອງຄຸນລັກສະນະໃນໄລຍະຊີວິດຂອງເຈົ້າ, ບໍ່ໄດ້ຈຳກັບຢູ່ພຽງແຕ່ເຊື້ອຊາດ ຫຼື ສັນຊາດໃດ, ບໍ່ໄດ້ຂຶ້ນກັບປັດໃຈທາງວັດຖຸ. ໃຫ້ຊ່ວງເວລາອັນສົດໃສຂອງຊາວໜຸ່ມທີ່ເຈົ້າແບ່ງປັນໃຫ້ທຸກຄົນໄດ້ປະສົບ..."** [8]

1. ຈົ່ງຕື່ມຄຳເວົ້າໃຫ້ປະໂຫຍກຕໍ່ໄປນີ້ໃຫ້ສົມບູນ ໂດຍອີງໃສ່ບັນດາພຣະວັດຈະນະຂ້າງເທິງ:
   ກ. ຜູ້ທີ່ລຸກຂຶ້ນເພື່ອຮັບໃຊ້ສາສະໜາຂອງພຣະຜູ້ເປັນເຈົ້າ ໃນຊ່ວງເວລາທີ່ດີທີ່ສຸດຂອງການເປັນຊາວໜຸ່ມ ແລະ ໄດ້ຕົບແຕ່ງຫົວໃຈຂອງເຂົາດ້ວຍຄວາມຮັກຂອງພຣະອົງ ແມ່ນໄດ້ຮັບ ____________________________.
   ຂ. ຊາວໜຸ່ມແບກຄວາມຮັບຜິດຊອບໃນການບຳລຸງຮັກສາ ______________________ ຂອງ ___________________________________ ໃນບັນດາຄົນທີ່ເຮັດວຽກເພື່ອຄວາມກ້າວໜ້າໃນຈຸດປະສົງຂອງພຣະຜູ້ເປັນເຈົ້າ.
   ຄ. ຫາກບໍ່ມີຈິດໃຈຂອງການຮັບໃຊ້ຢ່າງບໍ່ເຫັນແກ່ຕົວ, ຂອງຜູ້ທີ່ດູແລແບກພາລະນີ້ຂອງຊາວໜຸ່ມ, ກໍ່ບໍ່ມີວຽກງານໃດທີ່ຈະສາມາດ ____________________________________.
   ງ. _______________ ຂອງຊາວໜຸ່ມພາຍໃຕ້ສະພາບທີ່ຍາກລຳບາກ ແລະ _________ _____________________ ແລະ __________________________ຂອງຊາວໜຸ່ມເຮັດໃຫ້ພວກເຂົາກາຍເປັນເຄື່ອງມືທີ່ມີສັກກະຍະພາບ ໃນການດຳເນີນແຜນງານ ແລະ ໂຄງການຕ່າງໆ.

ຈ. ໃນຖານະທີ່ເປັນເຄື່ອງມືທີ່ມີສັກກະຍະພາບ ໃນການດຳເນີນແຜນງານ ແລະ ໂຄງການຕ່າງໆ, ຊາວໜຸ່ມມີຄວາມສາມາດທີ່ຈະ ____________________ ເຂົ້າກັບສະພາບແວດລ້ອມ ______________________ ກັບຄວາມທ້າທາຍໃໝ່ຕ່າງໆ ແລະ ___ ______________ ອົບອຸ່ນ ແລະ ຄວາມກະຕືລືລົ້ນແກ່ຜູ້ທີ່ພວກເຂົາໄປຢ້ຽມຢາມ.

ສ. ໂດຍອາໄສຄຸນລັກສະນະອັນໂດດເດັ່ນທັງຫຼາຍ, ຊາວໜຸ່ມສາມາດເປັນ __________ __________ຂອງກິດຈະກຳຕ່າງໆ ແລະ ເປັນ____________________________ ຂອງພາລະກິດໃດກໍ່ຕາມທີ່ພວກເຂົາມີສ່ວນຮ່ວມ.

ຊ. ບໍ່ວ່າສະຖານະການໃດກໍຕາມ ທີ່ຫຸ້ມຫຼອມຄວາມເປັນຈິງຂອງຊາວໜຸ່ມໃນທົ່ວໂລກ, ຄວາມປາດຖະໜາທີ່ຈະ ________________________________________ ແລະ ຄວາມສາມາດໃນ _______________________ ລ້ວນເປັນຄຸນລັກສະນະທັງໝົດຂອງໄລຍະຊີວິດນີ້.

## ຕອນທີ 7

ມີຫຼາຍແນວຄວາມຄິດທີ່ກ່ຽວຂ້ອງກັບການຮັບໃຊ້ ເຊິ່ງໄດ້ກະທຳໂດຍຊາວໜຸ່ມ, ແນວຄວາມຄິດເລົ່ານີ້ໄດ້ແກ່ ການກະທຳທີ່ເກີດຂື້ນເອງ, ຄວາມຕື່ນເຕັ້ນ, ແລະ ອິດສະລະໃນການທຳ ສິ່ງທີ່ຢູ່ໃນຈິນຕະນາການຂອງພວກເຂົາ. ໃນຂະນະທີ່ມີບາງຄວາມໜ້າເຊື່ອຖືໃນການກ່ຽວໂຍງແນວຄວາມຄິດເລົ່ານີ້ເຂົ້າກັບການຮັບໃຊ້, ເຮົາກໍ່ຄວນເອົາໃຈໃສ່ທີ່ຈະບໍ່ເນັ້ນຢ້ຳສິ່ງເລົ່ານີ້ກັບພວກເຂົາຫຼາຍຈົນເກີນໄປ. ມັນເປັນການງ່າຍທີ່ຈະມີນິໄສໃນການຫຼຸດຜ່ອນກິດຈະກຳຂອງຊາວໜຸ່ມລົງ ເປັນພຽງຊຸດຂອງເຫດການທີ່ໜ້າຕື່ນເຕັ້ນເທົ່ານັ້ນ, ໂດຍລືມຄິດເຖິງຄຸນຄ່າຂອງການມີຄວາມເຂົ້າໃຈ ໃນທຳມະຊາດຂອງຂະບວນການ ແລະ ລະເລີຍຄວາມຈຳເປັນທີ່ຈະຮຽນຮູ້ລະບຽບວິທີຂອງການລົງມືກະທຳຢ່າງເປັນລະບົບ. ຂໍໃຫ້ນຶກເຖິງຂະບວນການທີ່ເປັນລະບົບຜ່ານທາງຄຳສອນ ແລະ ລະບຽບຫຼັກການຂອງສາສະໜາ ເພື່ອເສີມສ້າງຄວາມເຂັ້ມແຂງພື້ນຖານຂອງຈິດວິນຍານຂອງໝູ່ບ້ານ ແລະ ລະແວກບ້ານ - ຕົວຢ່າງເຊັ່ນ, ການສຶກສາແກ່ເດັກນ້ອຍ, ການສ້າງຄວາມເຂັ້ມແຂງໃຫ້ແກ່ຊີວິດຊຸມຊົນ, ແລະ ການພັດທະນາຊັບພະຍາກອນມະນຸດ. ຕອນນີ້ ຮ່ວມກັບກັບເພື່ອນໆໃນກຸ່ມຂອງເຈົ້າທີ່ກຳລັງສຶກສາຫຼັກສູດນີ້, ຂໍໃຫ້ນຶກເຖິງການກະທຳຂອງການຮັບໃຊ້ບາງຢ່າງ ທີ່ຊາວໜຸ່ມສາມາດກະທຳໄດ້ ເຊິ່ງເປັນການກະທຳທີ່ປະກອບສ່ວນໃນຂະບວນການເລົ່ານີ້. ກິດຈະກຳເລົ່ານີ້ນຳມາເຊິ່ງຄວາມສຸກທັນສາຫຼືບໍ່? ພວກເຂົາບໍ່ອະນຸຍາດໃຫ້ສຶກສາໃນລະດັບຕາມທີ່ເໝາະສົມບໍ? ພວກເຂົາບໍ່ສົ່ງເສີມຄວາມຄິດສ້າງສັນ ຜ່ານການໃຊ້ຄວາມຄິດລິເລີ່ມໃນລັກສະນະທີ່ມີລະບຽບວິໄນແມ່ນບໍ?

______________________________________________________________

______________________________________________________________

______________________________________________________________

______________________________________________________________

## ຕອນທີ 8

ເຮົາມັກໄດ້ຍິນຢູ່ເລື້ອຍໆວ່າຊ່ວງເວລາຂອງການເປັນຊາວໜຸ່ມ ເປັນຊ່ວງເວລາຂອງການຕຽມຕົວ. ຂໍ້ຄວາມນີ້ເປັນຄວາມຈິງໃນການກ່າວເຖິງການປ່ຽນແປງຂະໜາດໃຫຍ່ ທີ່ຈຳເປັນສຳລັບໂລກໃນປະຈຸບັນ, ສະພາຍຸຕິທັມແຫ່ງສາກົນຂຽນໄວ້ວ່າ: "ການປ່ຽນແປງທີ່ຈະຕ້ອງເກີດຂຶ້ນໃນການທຳໜ້າທີ່ຂອງສັງຄົມ ແນ່ນອນທີ່ສຸດ ຈະອີງຕາມຄວາມຫຼວງຫຼາຍຂອງປະສິດຕິພາບ ໃນການຕຽມການຕ່າງໆທີ່ຊາວໜຸ່ມໄດ້ກະທຳໄວ້ໃຫ້ແກ່ໂລກທີ່ພວກເຂົາຈະເປັນຜູ້ສືບທອດ." ສະນັ້ນ ຄຳຖາມທີ່ເຮົາຄວນຈະຖາມຄືຄຳຖາມທີ່ວ່າ, ຊາວໜຸ່ມຄວນຕຽມຕົວພວກເຂົາໃຫ້ດີທີ່ສຸດແນວໃດ ສຳລັບຄວາມຮັບຜິດຊອບທັງຫຼາຍທີ່ພວກເຂົາຈະຕ້ອງແບກຮັບ ເມື່ອພວກເຮົາກາຍມາເປັນຜູ້ໃຫຍ່. ສານທີ່ຂຽນໂດຍສະພາຍຸຕິທັມແຫ່ງສາກົນ ອະທິບາຍວ່າ:

> **"ສຳລັບຜູ້ໃດກໍ່ຕາມບໍ່ວ່າຈະເປັນບາຮາຍຫຼືບໍ່, ຊ່ວງເວລາທີ່ເປັນຊາວໜຸ່ມນັ້ນເປັນເວລາທີ່ເຂົາຈະຕ້ອງທຳການຕັດສິນໃຈຫຼາຍຢ່າງ ເຊິ່ງຈະກຳນົດແນວທາງຊີວິດຂອງເຂົາໃນຊ່ວງປີເລົ່ານີ້. ເປັນໄປໄດ້ຫຼາຍທີ່ສຸດທີ່ເຂົາຈະເລືອກອາຊີບທີ່ຈະເຮັດ, ສຶກສາໃຫ້ສຳເລັດ, ເລີ່ມຕົ້ນຫາລ້ຽງຊີບຂອງຕົນເອງ, ແຕ່ງງານ ແລະ ສ້າງຄອບຄົວຂອງຕົນເອງ. ສິ່ງທີ່ສຳຄັນທີ່ສຸດກໍ່ຄືໃນຊ່ວງເວລານີ້ເອງທີ່ຈິດໃຈສະແຫວງຫາຫຼາຍທີ່ສຸດ ແລະ ມີການຮັບເອົາຄ່ານິຍົມທາງທັມທີ່ຈະຊີ້ນຳພຶດຕິກຳຂອງບຸກຄົນຜູ້ນັ້ນໃນອານາຄົດເຂົ້າໄປ."** [9]

ດ້ວຍເຫດນີ້, ຈົດໝາຍທີ່ຂຽນໃນນາມຂອງທ່ານຜູ້ພິທັກສາສະໜາ ຈຶ່ງກ່າວເຖິງຄວາມຈຳເປັນທີ່ຊາວໜຸ່ມຈຳເປັນຕ້ອງພັດທະນາຄວາມສາມາດທັງສະຕິປັນຍາ ແລະ ຈິດວິນຍານ ເຊິ່ງເປັນສ່ວນໜຶ່ງຂອງການກຽມຄວາມພ້ອມສຳລັບອະນາຄົດ. "ເຈົ້າຄວນຈະມີອຸປະກອນຄົບເຄື່ອງ," ຈົດໝາຍລະບຸໄວ້. "ເຈົ້າຄວນຈະພັດທະນາດ້ານສະຕິປັນຍາ ແລະ ຈິດວິນຍານຂອງເຈົ້າໃຫ້ດີເທົ່າທຽມກັນ."

ຄຳຖາມນີ້ມັກເຮັດໃຫ້ມີຄຳຖາມອື່ນເກີດຕາມມາ ເຊິ່ງເປັນຄຳຖາມທີ່ກ່ຽວກັບຄວາມສຳພັນລະຫວ່າງການສຶກສາຮຽນຮູ້ - ບໍ່ວ່າຈະເປັນການຮຽນໃນສາຍສາມັນ, ສາຍອາຊີວະ ຫຼື ທາງດ້ານວິຊາຊີບ - ແລະ ການຮັບໃຊ້ສາສະໜາ. ໂດຍສະເພາະຢ່າງຍິ່ງບາງຄັ້ງກໍ່ບໍ່ເປັນທີ່ຊັດເຈນວ່າ ຊາວໜຸ່ມຄວນຈະອຸທິດພາລະກຳລັງໃຫ້ກັບແຕ່ລະຢ່າງຫຼາຍໜ້ອຍພຽງໃດ. ແນວຄວາມຄິດທີ່ສຸດໂຕ່ງດ້ານໜຶ່ງຄື ການແນະນຳໃຫ້ຊາວໜຸ່ມອຸທິດຕົນເອງໃຫ້ກັບການສຶກສາຂອງພວກເຂົາ ແລະ ຄອຍຖ້າຈົນກວ່າພວກເຂົາຈະເກັບກ່ຽວປະສົບການໃນຊີວິດພຽງພໍ ກ່ອນທີ່ພວກເຂົາຈະເອົາຈິງເອົາຈັງກັບການຮັບໃຊ້ສາສະໜາ. ອີກດ້ານໜຶ່ງຄືການສົ່ງເສີມໃຫ້ຊາວໜຸ່ມປ່ອຍປະລະເລີຍການສຶກສາຮຽນຮູ້ ແລ້ວໃຊ້ພາລະກຳລັງຂອງພວກເຂົາທັງໝົດໃນສະໜາມຂອງການຮັບໃຊ້. ເປັນຄວາມຈິງທີ່ວ່າ "ໃນທຸກໆກໍລະນີ, ການໄດ້ຮັບການສຶກສາພາຍໃນຂອບເຂດທີ່ເປັນໄປໄດ້ຂອງຕົນ ແລະ ການໄດ້ມາເຊິ່ງການຄ້າ ຫຼື ວິຊາຊີບທີ່ໃຊ້ຫາລ້ຽງຊີບນັ້ນ ຈະຕ້ອງໃຫ້ຄວາມສຳຄັນຢ່າງຍິ່ງ." ຢ່າງໃດກໍຕາມ ດັ່ງທີ່ສະພາຍຸຕິທັມແຫ່ງສາກົນສະແດງໄວ້ຢ່າງຊັບເຈນວ່າ "ໃຫ້ນິຍາມຊ່ວງປີແຫ່ງຄວາມສຳເລັດຂອງຊາວໜຸ່ມໂດຍສະເພາະ" ວ່າເປັນຂັ້ນຕອນຂອງການກຽມພ້ອມສຳລັບການປະກອບອາຊີບ ຫຼື ການຄ້າຂາຍ

> **"ມອງຂ້າມພະລັງອັນສ້າງສັນທີ່ມີຢູ່ໃນຊາວໜຸ່ມຫຼວງຫຼາຍເຊັ່ນນີ້. ທ້າຍທີ່ສຸດແລ້ວ, ມີວິລະບູລຸໃນຍຸກເລີ່ມຕົ້ນຂອງສາສະໜາຈຳນວນຫຼວງຫຼາຍ ເປັນຜູ້ຊາຍແລະແມ່ຍິງທີ່ຍັງໜຸ່ມ ຜູ້ທີ່ໄດ້ລຸກຂຶ້ນກະທຳສິ່ງທີ່ຍິ່ງໃຫຍ່ທີ່ສຸດໃຫ້ສຳເລັດ ໃນເສັ້ນທາງຂອງພຣະຜູ້ເປັນທີ່ຮັກຂອງພວກເຂົາ."** [10]

ສຸດຂົ້ວອີກປະການໜຶ່ງ ຄືການສົ່ງເສີມໃຫ້ຊາວໜຸ່ມລະຖິ້ມການສຶກສາສາຍສາມັນ ຫຼື ອະຊີວະສຶກສາໄປໂດຍສິ້ນເຊີງ ແລະ ໃຫ້ທຸມເທພາລະກຳລັງຂອງພວກເຂົາ ໂດຍສະເພາະໃນຊ່ວງເວລາແຫ່ງໂອກາດນີ້ ທັງໝົດໄປໃນດ້ານການຮັບໃຊ້. ການຮັບໃຊ້ນັ້ນຄວນເປັນສູນກາງຂອງຊີວິດຂອງຊາວໜຸ່ມທຸກຄົນ ເຊິ່ງເປັນທີ່ຊັດເຈນຈາກຫຼາຍໆຂໍ້ຄວາມ, ເຊັ່ນຂໍ້ຄວາມທີ່ເຮົາໄດ້ສຶກສາໃນຕອນທີ່ຜ່ານມາ. ຊ່ວງເວລາທີ່ເຂັ້ມຂົ້ນໃນການຮັບໃຊ້, ບໍ່ວ່າຈະກ່ຽວຂ້ອງກັບການພັກຮຽນຫຼືບໍ່ກໍຕາມ, ສາມາດເປັນ "ອົງປະກອບທີ່ມີຄຸນຄ່າໃນການກະກຽມພວກເຂົາ" ໄດ້ເຊັ່ນກັນ. ໃນຂະນະດຽວກັນ, ສະພາຍຸຕິທັມແຫ່ງສາກົນ ສັງເກດເຫັນວ່າ:

> **"ແມ່ນວ່າຈະເປັນເລື່ອງຖືກຕ້ອງ ທີ່ຈະຄາດຫວັງສິ່ງທີ່ຍິ່ງໃຫຍ່ຈາກພວກເຂົາ ຜູ້ມີຢ່າງຫຼວງຫຼາຍໃຫ້ໃນເສັ້ນທາງແຫ່ງການຮັບໃຊ້, ເພື່ອນໆຈະຕ້ອງລະວັງບໍ່ໃຫ້ມີທັດສະນະຄະຕິແຄບວ່າການພັດທະນາໄປສູ່ວຸດທິພາວະເປັນແນວໃດ. ອິດສະຫຼະໃນການເຄື່ອນຍ້າຍ ແລະ ຄວາມພ້ອມຂອງເວລາ ເຮັດໃຫ້ຊາວໜຸ່ມຈຳນວນຫຼາຍສາມາດຮັບໃຊ້ ໃນລັກສະນະທີ່ກ່ຽວຂ້ອງໂດຍກົງກັບຄວາມຕ້ອງການຂອງຊຸມຊົນ, ແຕ່ເມື່ອພວກເຂົາກ້າວເຂົ້າສູ່ໄວຊາວປາຍປີ, ເສັ້ນຂອບເຂດຂອງພວກເຂົາກໍກວ້າງອອກ.... ສຳລັບຫຼາຍໆຄົນ, ບູລິມະສິດອັນສຳຄັນໃນທັນທີຄືການສຶກສາເພີ່ມເຕີມ, ທາງສາຍສາມັນ ຫຼື ອາຊີວະສຶກສາ, ຕາມຄວາມເປັນໄປໄດ້**

**ທີ່ຢູ່ຂ້າງໜ້າພວກເຂົາ, ແລະ ພື້ນທີ່ໃໝ່ໆສຳລັບການມີປະຕິສຳພັນກັບສັງຄົມທີ່ເປີດກວ້າງຂຶ້ນ.... ການຕັດສິນໃຈຄັ້ງສຳຄັນທີ່ພວກເຂົາຕ້ອງຕັດສິນ ກ່ຽວກັບທິດທາງຂອງຊີວິດຜູ້ໃຫຍ່ຂອງເຂົາ ຈະຕັດສິນໃຈວ່າການຮັບໃຊ້ຈຸດປະສົງຂອງພຣະຜູ້ເປັນເຈົ້າ ເປັນພຽງໄລຍະສັ້ນໆ ແລະ ໜ້າຈົດຈຳໃນຊ່ວງໄວໜຸ່ມຂອງພວກເຂົາ, ຫຼື ສູນກາງທີ່ຕາຍຕົວແຫ່ງການດຳລົງຢູ່ທາງໂລກ, ເປັນແວ່ນສາຍຕາເບິ່ງຜ່ານການກະທຳທັງໝົດມາສູ່ຈຸດສິນໃຈ.”** [11]

ກ່ອນທີ່ພວກເຮົາຈະພິຈາລະນາຄວາມສຳພັນເພີ່ມເຕີມລະຫວ່າງ ການສຶກສາແລະການຮັບໃຊ້, ເຈົ້າອາດຕ້ອງການຢຸດໄລຍະໜຶ່ງ ແລະ ຂຽນຂໍ້ຄວາມສັ້ນໆທີ່ສະທ້ອນຄວາມເຂົ້າໃຈຂອງເຈົ້າວ່າ ຊ່ວງເວລາຂອງການເປັນຊາວໜຸ່ມເປັນເວລາແຫ່ງການກະກຽມ ໝາຍຄວາມວ່າແນວໃດ.

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

## ຕອນທີ 9

ບໍ່ເປັນທີ່ສົງໄສເລີຍວ່າ ຂໍ້ຄວາມທີ່ເຈົ້າຂຽນໃນຕອນຜ່ານມານັ້ນໄດ້ເນັ້ນຍ້ຳໃຫ້ເຫັນວ່າ ເປັນສິ່ງສຳຄັນພຽງໃດສຳລັບຊາວໜຸ່ມທີ່ຈະກະຕຽມຕົນເອງໃຫ້ພ້ອມ ສຳລັບໂລກທີ່ພວກເຂົາຈະຕ້ອງເປັນຜູ້ສືບທອດ ໂດຍການເຂົ້າຮັບການສຶກສາສາຍສາມັນ ຫຼືການເຝິກອົບຮົມທາງດ້ານອາຊີວະ ຫຼືວິຊາຊີບຕ່າງໆ. ແລະ ກໍ່ເປັນທີ່ແນ່ນອນວ່າເຈົ້າເອງກໍ່ຮັບຮູ້ ແລະ ສັງເກດເຫັນໄດ້ວ່າ ການຮັບໃຊ້ສາສະໜາ ບໍ່ສາມາດທີ່ຈະ **“ພັກໄວ້ກ່ອນ”** ໃນຂະນະທີ່ຊາວໜຸ່ມນັ້ນກຳລັງສຶກສາຮ່ຳຮຽນຢູ່. ທັດສະນະຄະຕິເຊັ່ນນີ້ມີແນວໂນ້ມທີ່ຈະຄົງຢູ່ຕໍ່ໄປໃນອານາຄົດເມື່ອຊາວໜຸ່ມຄົນນັ້ນມີອາຍຸຫຼາຍຂຶ້ນ, ແລະ ຄົນໆນັ້ນອາດຈະມີຈຸດຈົບ ດ້ວຍການລໍຄອຍໄປຕະຫຼອດຊີວິດ ເພື່ອລໍຖ້າສະພາວະທີ່ເໝາະສົມ ກ່ອນທີ່ຈະເລີ່ມຕົ້ນຮັບໃຊ້ຢ່າງກະຕືລືລົ້ນ. ທັດສະນະເຊັ່ນນີ້ ມີການກ່ຽວພັນລະກັນລະຫວ່າງການສຶກສາຮ່ຳຮຽນ ແລະ ການຮັບໃຊ້ ສາມາດເກີດຂຶ້ນໄດ້ເມື່ອການສຶກສາຖືກຈຳກັດຄວາມໝາຍວ່າ ເປັນພຽງການຮຽນຮູ້ຈາກໜັງສືເທົ່ານັ້ນ. ຖ້າເມື່ອໃດເຮົາພິຈາລະນາວ່າ ການຮັບໃຊ້ເປັນເວທີທີ່ນຳເອົາຄວາມຮູ້ມາປະຍຸກໃຊ້ ແລະ ເປັນໂອກາດທີ່ສະຕິປັນຍາຈະສາມາດພັດທະນາເພີ່ມຂຶ້ນ, ຄວາມຄິດແບບນີ້ກໍ່ຈະຖືກຫຼີກລ້ຽງໄປໄດ້ໂດຍງ່າຍດາຍ ແລະ ແທນທີ່ທີ່ການຮັບໃຊ້ຈະຖືກເບິ່ງຄືວ່າ ເປັນພຽງສ່ວນໜຶ່ງ ແຕ່ຈະກາຍເປັນສ່ວນສຳຄັນທີ່ເປັນຫົວໃຈຂອງ

ຂະບວນການຕຽມຕົວທີ່ດີທັງຫຼາຍເພື່ອອະນາຄົດ. ແທ້ຈິງແລ້ວ, ເມື່ອການຮັບໃຊ້ສາສະໜາເລີ່ມຕົ້ນຂຶ້ນໃນເວລາທີ່ດີທີ່ສຸດຂອງການເປັນຊາວໜຸ່ມ ການຮັບໃຊ້ນັ້ນຈະກາຍເປັນຫຼັກການທີ່ໃຫ້ການນຳທາງແກ່ຄົນ-ຄົນນັ້ນໄປຕະຫຼອດຊີວິດ, ເຊິ່ງຈະຊ່ວຍໃຫ້ພວກເຂົາວາງແຜນຊີວິດໄດ້ຢ່າງເໝາະສົມ ແລະ ມີທິດທາງທີ່ຊັດເຈນຢູ່ສະເໝີ.

ການເນັ້ນຢ້ຳນີ້, ໂດຍທຳມະຊາດແລ້ວ ໄດ້ນຳໄປສູ່ຄຳຖາມທີ່ກ່ຽວກັບລັກສະນະການຕຽມຕົວທີ່ຊາວໜຸ່ມຄວນກະທຳ ເພື່ອເພີ່ມພູນສັກກະຍະພາບໃນການຮັບໃຊ້ຂອງພວກເຂົາ. ມີແນວໂນ້ມທີ່ຈະເຮັດໃຫ້ຄິດວ່າ ໂດຍການເຂົ້າມີສ່ວນຮ່ວມໃນງານ ຫຼື ກິດຈະກຳຢ່າງຫຼວງຫຼາຍຂອງຊຸມຊົນບາຮາຍ, ລວມທັງກິດຈະກຳຕ່າງໆທີ່ຕອບສະໜອງ ຕໍ່ຄວາມປາດຖະໜາທີ່ຈະໃຊ້ເວລາຮ່ວມກັນກັບເພື່ອນໆ, ຊາວໜຸ່ມເລົ່ານີ້ກໍ່ຈະສາມາດພັດທະນາສັກກະຍະພາບ ແລະ ຕຽມຕົວພວກເຂົາໄດ້ຢ່າງພຽງພໍ ສຳລັບຊີວິດແຫ່ງການຮັບໃຊ້. ເຖິງຢ່າງໃດກໍ່ຕາມ, ພຣະວັດຈະນະທັງຫຼາຍກໍ່ແນະນຳວ່າ ການໃຫ້ການສຶກສາຢ່າງບໍ່ເປັນທາງການ ນັ້ນແມ່ນວ່າຈະເປັນສິ່ງທີ່ຈຳເປັນແຕ່ກໍ່ບໍ່ພຽງພໍ.

ຖ້າເຮົາພິຈາລະນາຢ່າງລະອຽດຖີ່ຖ້ວນແລ້ວ, ເຮົາຈະເຫັນວ່າ ທ່ານ ໂຊກີເອຟເຟັນດີ້ ໄດ້ສະແດງຄວາມຫວັງໄວ້ວ່າ ຊາວໜຸ່ມຄວນຈະໄດ້ຮັບ **"ການສຶກສາ ແລະ ການອົບຮົມເປັນຢ່າງດີ"** ກ່ຽວກັບຄຳສອນ ແລະ ພວກເຂົາຄວນຈະມີຄວາມຮູ້ **"ຢ່າງລະອຽດ"** ແລະ **"ດີ"** ກ່ຽວກັບສາສະໜາ. ທ່ານຊຸກຍູ້ໃຫ້ພວກເຂົາຮຽນຮູ້ "ດ້ວຍຄວາມກະຕືລືລົ້ນ, ຄວາມເຕັມໃຈ, ແລະ ການມີສ່ວນຮ່ວມຢ່າງຕໍ່ເນື່ອງ" ໃນກິດຈະກຳຂອງຊຸມຊົນຂອງພວກເຂົາ. ໃນການເຊື່ອມໂຍງນີ້, ທ່ານອະທິບາຍວ່າຊີວິດຊຸມຊົນກະກຽມ "ຫ້ອງທົດລອງຫ້ອງໜຶ່ງທີ່ຂາດບໍ່ໄດ້", ບ່ອນທີ່ຄົນລຸ້ນເຍົາສາມາດ "ແປຫຼັກທັມ ມາໃຊ້ໃນການດຳເນີນຊີວິດ ແລະ ປະຕິບັດຢ່າງສ້າງສັນ" ພວກເຂົາລວບລວມຈາກການສຶກສາໃນຄວາມສັດທາ. ຄວາມສັດທານັ້ນ "ກາຍເປັນສ່ວນທີ່ແທ້ຈິງຂອງສິ່ງທີ່ມີຊີວິດ", ທ່ານລະບຸວ່າ, ພວກເຂົາສາມາດ "ເຂົ້າເຖິງຈິດວິນຍານທີ່ແທ້ຈິງເຊິ່ງໄຫຼຜ່ານທາງຄຳສອນຂອງບາຮາຍ", ດັ່ງນັ້ນ, ຈຳເປັນຕ້ອງມີຂະບວນການສຶກສາຢ່າງເປັນທາງການເພື່ອຊ່ວຍໃຫ້ຄົນລຸ້ນເຍົາມີຄວາມພ້ອມໃນການຮັບໃຊ້, ເຊິ່ງເປັນສິ່ງໜຶ່ງທີ່ຝັງຢູ່ໃນຄວາມເປັນຈິງຂອງຊີວິດຊຸມຊົນ. ກິດຈະກຳເພື່ອປະໂຫຍດຂອງກິດຈະກຳ, ການສຶກສາເພື່ອປະໂຫຍດຂອງການສຶກສາ ນັ້ນບໍ່ເປັນໄປຕາມຄວາມຕ້ອງການ.

ສານຫຼາຍສະບັບຂອງ ທັມມະສະພາຍຸຕິທັມແຫ່ງສາກົນ ກໍ່ກ່າວໃນລັກສະນະດຽວກັນ. ຄວາມເຂົ້າໃຈທີ່ເພີ້ມຂຶ້ນຢ່າງຫຼວງຫຼາຍ, ເຊິ່ງໃນສານສະບັບໜຶ່ງໄດ້ກ່າວຊັດເຈນວ່າ "ເມື່ອການສຶກສາ ແລະ ການຮັບໃຊ້ຮວມເຂົ້າກັນ ແລະ ດຳເນີນຄວບຄູ່ກັນໄປ". ສານໄດ້ກ່າວວ່າ "ທີ່ນັ້ນ, ໃນດ້ານການຮັບໃຊ້, ຄວາມຮູ້ຈະຖືກທົດສອບ, ບັນດາຄຳຖາມເກີດຂຶ້ນຈາກການປະຕິບັດ, ແລະ ລະດັບຄວາມເຂົ້າໃຈໃໝ່ໆຈະບັນລຸຂຶ້ນ". ໃນປະເທດຕ່າງໆທົ່ວໂລກ ສະຖາບັນການເຝິກອົບຮົມໄດ້ສ້າງຕັ້ງຂຶ້ນເພື່ອຈຸດປະສົງທີ່ຊັດເຈນ ໃນການພັດທະນາຫຼັກສູດຂອງຊັບພະຍາກອນມະນຸດ ຜ່ານທາງການສຶກສາຫຼັກສູກຢ່າງເປັນທາງການ. ຈຳນວນຜູ້ຄົນຈາກທຸກແຫ່ງ ທີ່ມີສ່ວນຮ່ວມໃນຂະບວນການສຶກສາກໍ່ເພີ້ມຂຶ້ນຢ່າງເປັນລະບົບ ເພື່ອເພີ້ມຄວາມສາມາດ

ຂອງເຂົາເຈົ້າໃນການຮັບໃຊ້, ແລະ ຊາວໜຸ່ມຍັງຄົງຢູ່ໃນແນວໜ້າຂອງຂະບວນນີ້. ກ່ຽວກັບສາຂາຂອງສະຖາບັນການເຝິກອົບຮົມ, ໄດ້ມີສານສະບັບໜຶ່ງໃນນາມຂອງ ສະພາຍຸຕິທັມແຫ່ງສາກົນອະທິບາຍວ່າ:

"ມຸ່ງໝັ້ນທີ່ຈະໃຫ້ແຕ່ລະບຸກຄົນມີສ່ວນຮ່ວມໃນຂະບວນການສຶກສາ ເຊິ່ງຄວາມປະພຶດທີ່ມີຄຸນນະທັມ ແລະ ຄວາມມີວິໄນໃນຕົນເອງໄດ້ຮັບການພັດທະນາເນື້ອຫາຂອງການຮັບໃຊ້, ສົ່ງເສີມຮູບແບບຊີວິດທີ່ສອດຄ່ອງ ແລະ ສຸກທັນສາ ເຊິ່ງປະສົມປະສານຮ່ວມກັບການສຶກສາ, ການນະມັດສະການ, ການເຜີຍແຜ່, ການສ້າງຊຸມຊົນ, ແລະໂດຍທົ່ວໄປ ການມີສ່ວນຮ່ວມໃນຂະບວນການອື່ນໆ ທີ່ມຸ່ງຫວັງທີ່ຈະປັ່ງປແປງສັງຄົມ. ຫົວໃຈຂອງຂະບວນການສຶກສາຄືການຕິດຕໍ່ກັບຖ້ອຍຄຳຂອງພຣະຜູ້ເປັນເຈົ້າ, ພຣະຜູ້ຊົງອຳນາດປະຄັບປະຄອງຄວາມພະຍາຍາມຂອງແຕ່ລະບຸກຄົນໃນການຊຳລະຈິດໃຈຂອງຕົນໃຫ້ບໍລິສຸດ ແລະ ຍ່າງເທິງເສັ້ນທາງແຫ່ງການຮັບໃຊ້ດ້ວຍ 'ຕີນແຫ່ງການປ່ອຍວາງ'."[12]

ຈົດໝາຍສະບັບອື່ນທີ່ຂຽນໂດຍ ສະພາຍຸຕິທັມແຫ່ງສາກົນ ກ່າວວ່າ:

"...ຫຼັກສູດຂອງສະຖາບັນມີຈຸດມຸ່ງໝາຍ ເພື່ອກຳໜົດບຸກຄົນບົນເສັ້ນທາງຂອງຄຸນນະພາບ ແລະ ທັດສະນະຄະຕິ, ທັກສະ ແລະ ຄວາມສາມາດ, ແມ່ນຄ່ອຍໆຮຽນຮູ້ຜ່ານການຮັບໃຊ້ - ການຮັບໃຊ້ທີ່ມີຈຸດມຸ່ງໝາຍ ເພື່ອລະງັບຄວາມຕ້ອງການຂອງຕົນເອງ, ຊ່ວຍຍົກລະດັບບຸກຄົນໃຫ້ອອກຈາກເຂດຈຳກັດ ແລະ ເຮັດໃຫ້ພວກເຂົາຢູ່ໃນຂະບວນການຂັບເຄື່ອນຂອງການສ້າງຊຸມຊົນ."[13]

ແລະ ເມື່ອກ່າວເຖິງກຸ່ມຄົນເຍົາວະຊົນທົ່ວໂລກ, ສະພາຍຸຕິທັມສາກົນ ຂຽນວ່າ:

"ໂດຍບໍ່ຄຳນຶງເຖິງລາຍລະອຽດຕ່າງໆ ພວກເຂົ້າແຕ່ລະຄົນລ້ວນແລ້ວແຕ່ມີຄວາມປາດຖະໜາດຽວກັນຄືຕ້ອງການອຸທິດເວລາ ແລະ ພະລັງງານ ທັກສະຄວາມສາມາດຕ່າງໆໃຫ້ກັບການຮັບໃຊ້ໃຫ້ແກ່ຊຸມຊົນຂອງເຂົາ. ຫຼາຍໆຄົນເມື່ອໄດ້ຮັບໂອກາດຈະຍິນດີ ອຸທິດເວລາເປັນປີໆຂອງຊີວິດໃຫ້ກັບຄວາມຈຳເປັນ ໃນການໃຫ້ການສຶກສາທາງຈິດວິນຍານໃຫ້ແກ່ຄົນລຸ້ນຕໍ່ໄປທີ່ກຳລັງເຕີບໂຕຂຶ້ນ. ດັ່ງນັ້ນແລ້ວຄົນໜຸ່ມນ້ອຍໃນໂລກຈຶ່ງເຕັມໄປດ້ວຍສັກກະຍາພາບ ຄວາມສາມາດທີ່ຈະປັ່ງປແປງສັງຄົມ ທີ່ລໍຖ້າການຖືກນຳອອກມາໃຊ້ ແລະ ການປົດປ່ອຍສັກກະຍາພາບຄວາມສາມາດນີ້ຄວນເປັນທີ່ຍ້ອມຮັບໂດຍທຸກໆສະຖາບັນ ວ່າເປັນໜ້າທີ່ອັນສັກສິດ." [14]

## ຕອນທີ 10

ດັ່ງທີ່ເຮົາໄດ້ເຫັນແລ້ວໃນສອງຕອນທີ່ຜ່ານມາ, ເຮົາຕ້ອງເອົາໃຈໃສ່ໃນເວລາທີ່ເຮົາພິຈາລະນາສະຖານະການໃດສະຖານະການໜຶ່ງ ເພື່ອວ່າເຮົາຈະບໍ່ແຍກສະຖານະການນັ້ນໆອອກເປັນສ່ວນໆ ໃນລັກສະນະຄືກັນກັບການທີ່ເຮົາແຍກສ່ວນດ້ານຕ່າງໆຂອງວິຖີຊີວິດຂອງເຮົາ, ເຊິ່ງສິ່ງນີ້ຈະສາມາດນຳເຮົາໄປສູ່ສິ່ງທີ່ຂັດແຍ້ງກັນໂດຍບໍ່ມີຄວາມຈຳເປັນໄດ້. ໂດຍທົ່ວໄປແລ້ວ, ຄວາມຄິດຂອງມະນຸດແມ່ນມີແນວໂນ້ມທີ່ຈະແບ່ງແຍກສິ່ງທີ່ມັນພົບເຈີຢູ່ໃນໂລກນີ້ອອກເປັນສ່ວນ. ແລະດ້ວຍຄວາມຈິງທີ່ວ່າ ກາຍະພາບ, ສັງຄົມ ຫຼື ຈິດວິນຍານ ລ້ວນເປັນເລື່ອງທີ່ກວ້າງໃຫຍ່ໄພສານເກີນກວ່າຈະເປັນທີ່ເຂົ້າໃຈໄດ້ທັງໝົດ. ດັ່ງນັ້ນ ຈຶ່ງເປັນສິ່ງທີ່ມີເຫດຜົນພໍທີ່ຈະແບ່ງການດຳລົງຢູ່ນີ້ເພື່ອສຶກສາເທື່ອລະສ່ວນ. ຢ່າງໃດກໍ່ຕາມ, ໃນການເຮັດແນວນັ້ນຖ້າອົງປະກອບລວມຂອງການດຳລົງຢູ່ບໍ່ໄດ້ຖືກນຳມາພິຈາລະນາ ກໍ່ຈະເກີດບັນຫາຂຶ້ນ. ຄວາມຂັດແຍ້ງລະຫວ່າງຜູ້ຄົນທີ່ແຕກຕ່າງທາງເຜົ່າພັນ, ສີຜິວ, ເຊື້ອຊາດ ແລະ ສາສະໜາ ເປັນຕົວຢ່າງຂອງບັນຫາຫຼວງຫຼາຍ ທີ່ອາດເກີດຂຶ້ນໄດ້ຈາກວິໄສທັດແບບແຍກສ່ວນຂອງການດຳລົງຢູ່. ເນື່ອງຈາກຄວາມເປັນອັນໜຶ່ງອັນດຽວກັນຂອງຊົນຊາດມະນຸດນັ້ນ ເປັນສະພາບການດຳລົງຢູ່ທີ່ແທ້ຈິງ ແລະການແບ່ງແຍກອອກເປັນເຜົ່າພັນສີຜິວ ແລະ ເຊື້ອຊາດຕ່າງໆນັ້ນ ເປັນການສ້າງສັນຂຶ້ນຂອງຄວາມຄິດຂອງມະນຸດ ແລະ ເປັນຜົນຂອງສະພາວະການຕ່າງໆໃນປະຫວັດສາດ.

ຖ້າເຮົາບໍ່ລະມັດລະວັງ ແລະ ນຳເອົາວິທີການຄິດແບບແຍກສ່ວນ ມາໃຊ້ໃນຊີວິດຂອງເຮົາ, ເຮົາອາດຈະເຮັດໃຫ້ເກີດທາງສອງແຍກ ທີ່ສ່ວນໃຫຍ່ເປັນເລື່ອງທີ່ຈິນຕະນາການຂຶ້ນມາ. ເຊັ່ນວຽກງານ, ການພັກຜ່ອນຍ່ອນໃຈ, ຊີວິດຄອບຄົວ, ຊີວິດທາງທັມ, ການເບິ່ງແຍງສຸຂະພາບຮ່າງກາຍ, ການສະແຫວງຫາຄວາມກ້າວໜ້າຂອງສະຕິປັນຍາ, ການສຶກສາຂອງລູກ, ການພັດທະນາສ່ວນບຸກຄົນ, ການພັດທະນາຂອງສ່ວນລວມ ແລະອື່ນໆ ເຊິ່ງໄດ້ຖືກແບ່ງອອກເປັນສ່ວນໆ ແລະ ເມື່ອເອົາມາຮ່ວມເຂົ້າກັນແລ້ວ ກໍກາຍເປັນການດຳລົງຢູ່ຂອງເຮົາ. ເມື່ອໃດທີ່ເຮົາຍອມຮັບວ່າການແບ່ງແຍກດັ່ງກ່າວນັ້ນເປັນຄວາມຈິງ ເຮົາກໍຈະຮູ້ສຶກວ່າຕົນເອງໄດ້ຖືກດຶງໄປໃນຫຼາຍທິດທາງ, ພະຍາຍາມທີ່ຈະຕອບສະໜອງໃນສິ່ງທີ່ເຮົາຄິດວ່າເປັນຄວາມຕ້ອງການຈາກຫຼາຍໆແງ່ມຸມຂອງຊີວິດ. ເຮົາມັກຈະສັບສົນກັບຈຸດມຸ້ງໝາຍທີ່ເບິ່ງຄືຈະຂັດແຍ້ງເຊິ່ງກັນແລະກັນເຊັ່ນ: ຂ້ອຍຄວນຈະເສຍສະຫຼະຊີວິດຄອບຄົວຂອງຂ້ອຍເພື່ອຮັບໃຊ້ສາສະໜາຫຼືບໍ? ການຮັບໃຊ້ສາສະໜາຂອງຂ້ອຍຈະລົບກວນຄວາມພະຍາຍາມຂອງຂ້ອຍ ທີ່ຈະລ້ຽງດູລູກໃຫ້ດີຫຼືບໍ? ທັງສອງຄຳຖາມນີ້ເປັນຕົວຢ່າງຂອງຄຳຖາມຫຼວງຫຼາຍທີ່ອາດຈະເກີດຂຶ້ນ.

ໃນການຈັດການສອງທາງແຍກທີ່ເຮົາສ້າງຂຶ້ນມາ, ບາງຄັ້ງເຮົາກໍພະຍາຍາມທີ່ຈະແບ່ງເວລາອອກເທົ່າໆກັນ ໃຫ້ກັບຂໍ້ຮຽກຮ້ອງທັງຫຼາຍທີ່ເຮົາມີ. ໃນອີກໂອກາດໜຶ່ງ, ເຮົາກໍພະຍາຍາມທີ່ຈະຈັດລຳດັບຄວາມສຳຄັນສິ່ງຕ່າງໆ ແລະ ເນັ້ນພາລະກຳລັງຂອງເຮົາໄປໃນສິ່ງທີ່ເຮົາຄິດວ່າ ມີຄວາມສຳຄັນທີ່ສຸດໃນຊ່ວງເວລານັ້ນ. ແນ່ນອນທີ່ສຸດ, ການຈັດສັນເວລາ ແລະ ພາລະກຳລັງໃຫ້ກັບກິດຈະກຳຕ່າງໆຢ່າງລະມັດລະວັງນັ້ນເປັນສິ່ງທີ່ຈຳເປັນ. ແຕ່ການຈັດເວລານັ້ນຈະໃຫ້ຜົນກໍ່ຕໍ່ເມື່ອ ເຮົາເນັ້ນຢໍ້າເຖິງຄວາມເຊື່ອມໂຍງກັນຂອງຫຼາຍໆແງ່ມຸມໃນຊີວິດຂອງເຮົາ. ຫາກເຮົາເບິ່ງບໍ່ເຫັນພາບລວມແລ້ວ ຄວາມ

ເຄັ່ງຄຽດທີ່ເກີດຂຶ້ນລະຫວ່າງແຕ່ລະສ່ວນທັງຫຼາຍ ຈະສາມາດກໍ່ໃຫ້ເກີດຄວາມວິຕົກກັງວົນ ແລະ ຄວາມສັບສົນໄດ້.

ຂ້າງລຸ່ມນີ້ມີແງ່ມຸມຕ່າງໆຂອງຊີວິດຈັດເປັນຄູ່ ເຊິ່ງຄວນເສີມແຮງເຊິ່ງກັນແລະກັນ, ແຕ່ບາງຄັ້ງກໍຖືກພິຈາລະນາວ່າ ເປັນສິ່ງທີ່ຂັດແຍ້ງເຊິ່ງກັນແລະກັນ. ສຳລັບແຕ່ລະຂໍ້ຄວາມຂໍໃຫ້ເຈົ້າຕັດສິນວ່າເປັນລັກສະນະຄວາມຄິດທີ່ນຳໄປສູ່ຊີວິດທີ່ປະສານລວມກັນ ຫຼື ມີແນວໂນ້ມທີ່ຈະເປັນການແຍກສ່ວນ. ໃຫ້ຂຽນຄຳສັບທາງໜ້າຂໍ້ຄວາມນັ້ນດ້ວຍຕົວອັກສອນ "ລ" ສຳລັບປະສານລວມ ຫຼື "ຍ" ສຳລັບແຍກສ່ວນຕາມລຳດັບ.

1. ຄອບຄົວ ກັບ ວຽກງານ

____ ຊີວິດຄອບຄົວຂອງຂ້ອຍຈະຫຍຸ້ງຍາກລຳບາກ ຖ້າຂ້ອຍເຮັດວຽກໜັກໃນໜ້າທີ່.

____ ຂ້ອຍປຶກສາຫາລືກັບຄອບຄົວຂອງຂ້ອຍກ່ຽວກັບຄວາມສຳເລັດ ແລະ ຄວາມທ້າທາຍຕ່າງໆທີ່ຂ້ອຍໄດ້ພົບໃນບ່ອນເຮັດວຽກຂອງຂ້ອຍ.

____ ແນ່ນອນວ່າແມ່ຍິງສາມາດເປັນເລີດໃນອາຊີບຂອງຕົນເອງ ແຕ່ກໍ່ຈະມີເວລາໃຫ້ກັບລູກໆໜ້ອຍລົງ.

____ ຖ້າຂ້ອຍຕ້ອງການລ້ຽງລູກໃຫ້ດີ ຂ້ອຍຄວນຈະລືມເລື່ອງອາຊີບຂອງຕົວເອງ.

____ ຂ້ອຍສາມາດບຸກບືນສູ່ຄວາມດີເລີດໃນອາຊີບຂອງຂ້ອຍ ແລະ ຮັບຜິດຊອບໜ້າທີ່-ທີ່ຂ້ອຍມີຕໍ່ຄອບຄົວຢ່າງເຕັມທີ່ໄປພ້ອມໆກັນ.

2. ການສຶກສາ ກັບ ການຮັບໃຊ້ມະນຸດຊາດ

____ ຂ້ອຍຕ້ອງເລືອກລະຫວ່າງການເປັນອາສາສະໝັກກັບການສຶກສາ ເພາະເປັນໄປບໍ່ໄດ້ທີ່ຈະກະທຳທັງສອງຢ່າງ.

____ ຄວາມສຳເລັດທາງການສຶກສາ ເປັນສິ່ງທີ່ຕ້ອງມາກ່ອນການເຂົ້າສູ່ສະໜາມຂອງການຮັບໃຊ້.

____ ຄວາມຮູ້ທີ່ຂ້ອຍໄດ້ມາຈາກການສຶກສາເປັນຊັບສິນຂອງການຮັບໃຊ້ ໃນຂະນະທີ່ປະສົບການທີ່ຂ້ອຍໄດ້ຮັບໃນສະໜາມຂອງການຮັບໃຊ້ ຊ່ວຍເສີມພອນສະຫວັນ ແລະ ຄວາມສາມາດຂອງຂ້ອຍ.

____ ຂ້ອຍຕ້ອງລະຖິ້ມການສຶກສາ ຖ້າຂ້ອຍຢາກຈະອຸທິດຕົນໃຫ້ກັບສາສະໜາແທ້ໆ.

____ ຄວາມໄຝ່ຝັນທີ່ຍິ່ງໃຫຍ່ທີ່ສຸດຢ່າງໜຶ່ງຂອງຂ້ອຍ ຄືການນຳເອົາຄຳສອນຂອງສາສະໜາໄປໃຊ້ໃນຄວາມພະຍາຍາມ ເພື່ອສະແຫວງຫາຄວາມຈະເລີນຂອງໂລກ.

____ ຄວາມສາມາດທີ່ພວກເຮົາພັດທະນາບົນເສັ້ນທາງການຮັບໃຊ້ ເພື່ອສົ່ງເສີມຄວາມເປັນຢູ່ທີ່ດີຂອງຊຸມຊົນຂອງເຮົາ ຈະຊ່ວຍເຮົາໃນການເລືອກສາຂາວິຊາຮຽນທີ່ເໝາະສົມ.

3. ການພັດທະນາສະຕິປັນຍາ ກັບ ການພັດທະນາຄຸນລັກສະນະທາງທັມ

____ ການຄົ້ນຄວ້າຫາຄວາມຈິງໂດຍອິດສະຫຼະ ຈຳເປັນຕ້ອງມີການປູກຝັງສະຕິປັນຍາ ຮ່ວມທັງການໄດ້ມາເຊິ່ງຄຸນລັກສະນະທາງທັມດ້ວຍ.

____ ໃນການສອນສາສະໜາໃຫ້ກັບຜູ້ອື່ນ ເຮົາຄວນມີແຕ່ຄວາມຮັກໃຫ້ກັບເຂົາ ສິ່ງທີ່ເຮົາເວົ້ານັ້ນບໍ່ສຳຄັນເທົ່າໃດ.

____ ການພັດທະນາສະຕິປັນຍາຕ້ອງມີຄວາມຍຸຕິທັມ, ຄວາມຊື່ສັດ ແລະ ຄວາມປາດສະຈາກອັກຄະຕິ.

____ ເພື່ອຈະພັດທະນາທາງຈິດວິນຍານ ເຮົາຕ້ອງລະຖິ້ມສະຕິປັນຍາຂອງເຮົາໄປ.

____ ຄວາມຄິດ ແລະ ຫົວໃຈຂອງເຮົາແຍກອອກຈາກກັນບໍ່ໄດ້, ທັງສອງຢ່າງຕ່າງກໍ່ເປັນຕົວແທນຂອງແງ່ມຸມທີ່ເປັນອົງປະກອບ ແລະ ເພິ່ງພາກັນແລະກັນໃນການດຳລົງຢູ່ນັ້ນຄືຈິດວິນຍານຂອງເຮົາ.

____ ຄຸນລັກສະນະທາງທັມ ພັດທະນາຂຶ້ນໂດຍຄວາມຮູ້ຢ່າງມີສະຕິ ແລະ ການກະທຳທີ່ດີງາມ.

4. ຊີວິດທາງວັດຖຸ ກັບ ຊີວິດທາງທັມ

____ ຂ້ອຍຕ້ອງປະຕິເສດຄວາມເພິ່ງພໍໃຈທາງວັດຖຸ ເພື່ອທີ່ຈະພັດທະນາທາງຈິດວິນຍານ.

____ ເລື່ອງທາງທັມຕ້ອງຖືກລະວາງໄວ້ຈົນກວ່າເຮົາຈະເຖົ້າ ຕອນທີ່ເຮົາເປັນຊາວໜຸ່ມເຮົາຄວນໃຊ້ປະໂຫຍດຈາກທຸກໂອກາດທີ່ຈະກ້າວໜ້າໄປໃນທາງວັດຖຸ.

____ ຜູ້ຄົນຈຳເປັນຕ້ອງໄດ້ຮັບການຕອບສະໜອງຄວາມຕ້ອງການທາງວັດຖຸ ກ່ອນທີ່ພວກເຂົາຈະມີຄວາມພ້ອມທີ່ຈະເອົາໃຈໃສ່ເລື່ອງທາງທັມ.

____ ຈຸດປະສົງຂອງຊີວິດຂອງຂ້ອຍບົນໂລກວັດຖຸນີ້ ເພື່ອການພັດທະນາພະລັງ ແລະ ຄຸນລັກສະນະທາງທັມ.

____ ຈຸດປະສົງຂອງຊີວິດຂອງຂ້ອຍບົນໂລກວັດຖຸນີ້ ເພື່ອສືບສານອາລິຍະທັມທີ່ກ້າວໜ້າຢ່າງຕໍ່ເນື່ອງ.

____ ເຮົາຄວນເພີດເພີນກັບຄວາມກະລຸນາທັງຫຼາຍ ທີ່ໂລກໄດ້ຮັບການປະສິດປະສາດມາໃຫ້ແກ່ເຮົາ ແຕ່ເຮົາບໍ່ຄວນປ່ອຍໃຫ້ຄວາມປາດຖະໜາທາງໂລກ ມາກີດກັ້ນເຮົາອອກຈາກການເຂົ້າໃກ້ພຣະຜູ້ເປັນເຈົ້າໃຫ້ຫຼາຍຍິ່ງໆຂຶ້ນ.

## ຕອນທີ 11

ໃນພາກນີ້ເຮົາຈະບໍ່ໄດ້ພິຈາລະນາຫຼາຍປານໃດ ກ່ຽວກັບຄຸນລັກສະນະທີ່ເປັນທີ່ນິຍາມຂອງເຍົາວະຊົນ, ແຕ່ເຮົາຈະພິຈາລະນາເຖິງລັກສະນະສະເພາະຂອງຄົນໜຸ່ມສາວ ທີ່ພຣະວັດຈະນະໄດ້ກ່າວໄວ້ເຖິງລັກສະນະທີ່ພວກເຂົາຄວນເຕີບໂຕຂຶ້ນ. ພວກເຮົາເລີ່ມຕົ້ນທຳການສຳຫຼວດດ້ວຍການພິຈາລະນາພຣະທັມ

ມະລິຂິດສອງຕອນ ທີ່ຈະໃຫ້ຄວາມຢັ່ງຮູ້ແກ່ເຮົາກ່ຽວກັບຄຸນລັກສະນະສະເພາະເລົ່ານີ້. ຈາກນັ້ນເຮົາໄດ້ເຫັນວ່າອາຍຸ 15 ປີ, ເປັນເຄື່ອງໝາຍຂອງຈຸດສຳຄັນໃນຊີວິດຂອງຄົນ-ຄົນໜຶ່ງ, ເພາະເປັນສະເໝືອນທໍລະນີປະຕູໄປສູ່ວຸດທິພາວະ, ເຊິ່ງເປັນພາວະທີ່ພະລັງ ແລະ ຄວາມສາມາດໃໝ່ໆທັງຫຼາຍທີ່ຈະເຂົ້າມາສູ່ຄວາມສົນໃຈ. ເຮົາຮູ້ວ່າແມ່ນຫຍັງຄືບົດບາດອັນສຳຄັນທີ່ຄົນລຸ່ນເຍົາສາມາດເຮັດໄດ້ ໃນວິຖີຊີວິດຂອງສາສະໜາ ແລະ ເປັນສິ່ງສຳຄັນພຽງໃດທີ່ຄວາມສາມາດອັນຫຼວງຫຼາຍຂອງພວກເຂົາ ຈະໄດ້ຮັບການຊີ້ນຳໄປໃນທິດທາງຂອງການຮັບໃຊ້ຕໍ່ສາສະໜາ. ເຮົາຍັງໄດ້ຮູ້ເຖິງຄວາມຈຳເປັນ ສຳລັບຊາວໜຸ່ມທີ່ຈະຕ້ອງຕຽມຕົວເອງຢ່າງມີສະຕິສຳລັບຊີວິດໃນອານາຄົດ, ແລະ ເຮົາໄດ້ເຫັນວ່າ ການຮັບໃຊ້ນັ້ນເປັນສ່ວນສຳຄັນຢ່າງຍິ່ງຂອງຂະບວນການໃນການຕຽມຕົວ ພ້ອມໆໄປກັບການສຶກສາຮ່ຳຮຽນຂອງພວກເຂົາ ເຊິ່ງກໍ່ຄືທັງຄວາມຈຳເປັນຈະຕ້ອງໄດ້ມາທັງຄວາມຮູ້ ແລະ ຄວາມຊຳນານ ເພື່ອການຫາລ້ຽງຊີບ ແລະ ສິ່ງທີ່ຈະເພີ່ມພູນຄວາມສາມາດໃນການຮັບໃຊ້ເພື່ອສາສະໜາດ້ວຍ.

ເຈົ້າອາດຈະພົບວ່າ ເປັນສິ່ງທີ່ມີປະໂຫຍດທີ່ຈະຢຸດໄລະຍະໜຶ່ງ ແລ້ວໄຕ່ຕອງໃນສິ່ງທີ່ໄດ້ສຶກສາມາຈົນເຖິງຕອນນີ້. ຂໍໃຫ້ເຈົ້າພິຈາລະນາຂໍ້ຄວາມຂ້າງລຸ່ມນີ້ ແລະ ພິຈາລະນາວ່າຂໍ້ຄວາມຕໍ່ໄປນີ້ ຖືກ ຫຼື ຜິດ, ແມ່ນວ່າຄຳຕອບໃນບາງກໍລະນີຈະຊັດເຈນ ເຮົາກໍ່ຍັງຫວັງວ່າເຈົ້າຈະໃຫ້ຄວາມສົນໃຈ ກັບບົດເຝິກຫັດນີ້ທັງໝົດ. ບົດເຝິກຫັດນີ້ມຸ້ງຫວັງທີ່ຈະໃຫ້ເຈົ້າໄດ້ພິຈາລະນາແນວຄວາມຄິດ ທີ່ຈະຊ່ວຍໃຫ້ເຈົ້າໄດ້ຈັດລຳດັບໃຫ້ກັບຄວາມຄິດຂອງເຈົ້າເອງ ກ່ຽວກັບສິ່ງທີ່ເຈົ້າໄດ້ສຶກສາໄປແລ້ວ.

______ ສຳລັບຄົນໃດຄົນໜຶ່ງແລ້ວ ການມີອາຍຸຄົບ 15 ປີ, ໝາຍເຖິງການມາເຖິງໄວແຫ່ງວຸທິພາວະ, ແຕ່ນີ້ເປັນພຽງເຄື່ອງໝາຍຢ່າງໜຶ່ງເທົ່ານັ້ນ ແລະ ບໍ່ໄດ້ມີຜົນກະທົບທີ່ມີຄວາມໝາຍ ແຕ່ຢ່າງໃດກັບຊີວິດຂອງເຂົາເຈົ້າ.

______ ຊາວໜຸ່ມສ່ວນໃຫຍ່ຍັງບໍ່ມີວຸທິພາວະ ແລະ ຍັງບໍ່ມີຄວາມຮັບຜິດຊອບທີ່ສຳຄັນຕ່າງໆໄດ້; ພວກເຂົາເສຍສະມາທິ ແລະ ຄວາມຕັ້ງໃຈໄດ້ງ່າຍ ແລະ ບໍ່ສາມາດເປັນທີ່ໄວ້ວາງໃຈໄດ້.

______ ຊາວໜຸ່ມມີຄວາມກະຕືລືລົ້ນ ທີ່ຈະເຂົ້າຮັບຜິດຊອບວຽກຂອງສາສະໜາ, ແຕ່ຍ້ອນປະສົບການທີ່ຍັງໜ້ອຍ ແລະ ຄວາມບໍ່ມີວຸດທິພາວະຂອງພວກເຂົາ, ພວກເຂົາຈຶ່ງບໍ່ສາມາດປະສົບຄວາມສຳເລັດໄດ້ຫຼາຍເທົ່າທີ່ຄວນ.

______ ຊາວໜຸ່ມມີສັກກະຍາພາບທັງໝົດທີ່ຈຳເປັນເພື່ອລຸກຂຶ້ນ ແລະ ຮັບໃຊ້ສາສະໜາແລະມະນຸດຊາດໄດ້ດ້ວຍຄວາມໝັ້ນຄົງ ແລະ ບໍ່ເຫັນແກ່ຕົວ.

______ ຊາວໜຸ່ມສາມາດສະແດງຄວາມຕັ້ງໃຈ ແລະ ການອຸທິດຕົນທີ່ຈຳເປັນໃນການດຳເນີນການຢ່າງເປັນລະບົບ ໃນການຮັບໃຊ້ແກ່ຊຸມຊົນຂອງພວກເຂົາ.

______ ຜູ້ທີ່ລຸກຂຶ້ນມາຮັບໃຊ້ສາສະໜາ ໃນຊ່ວງເວລາທີ່ດີທີ່ສຸດຂອງການເປັນຊາວໜຸ່ມຈະໄດ້ຮັບພຣະພອນທີ່ຍິ່ງໃຫຍ່.

______ ຊາວໜຸ່ມຄວນມຸ້ງເນັ້ນຄວາມສົນໃຈສ່ວນໃຫຍ່ ໄປທີ່ການສຶກສາຂອງຕົນເອງ; ສ່ວນເວລາທີ່ເຫຼືອຈາກນັ້ນ ສາມາດອຸທິດໃຫ້ກັບການຮັບໃຊ້.

______ ຖ້າຫາກບໍ່ໄດ້ຮັບການເຝິກອົບຮົມທາງວິຊາການໃນລະດັບສູງສຸດ, ຊາວໜຸ່ມຈະບໍ່ສາມາດຮັບໃຊ້ສັງຄົມຢ່າງມີປະສິດທິພາບ.

______ ທຸກເວທີຂອງຄວາມພະຍາຍາມຂອງມະນຸດ ເປີດໃຫ້ກັບຊາວໜຸ່ມ; ພວກເຂົາຄວນເລືອກເວທີທີ່ເໝາະກັບພອນສະຫວັນ ແລະ ສະພາບການຂອງຕົນເອງ, ແລ້ວເຂົ້າສູ່ເວທີນັ້ນດ້ວຍດວງຈິດແຫ່ງການຮັບໃຊ້ ແລະ ບຸກບືນຢ່າງໜັກສູ່ຄວາມດີເລີດ.

______ ຊາວໜຸ່ມບໍ່ມີປະສົບການ ແລະ ບໍ່ມີຄວາມຮູ້ທີ່ຈະມີສ່ວນຮ່ວມໃນບົດສົນທະນາຢ່າງມີຄວາມໝາຍກ່ຽວກັບສາສະໜາ ກັບຄົນທີ່ພວກເຂົາພົບເຫັນ; ເປັການດີທີ່ສຸດທີ່ພວກເຂົາຈະຮັບໃຊ້ໃນທາງອື່ນ.

______ ຊາວໜຸ່ມບໍ່ມີປະສົບການ ແລະ ບໍ່ມີຄວາມຮູ້ອັນຈຳເປັນທີ່ຈະມີສ່ວນຮ່ວມໃນບົດສົນທະນາຢ່າງມີຄວາມໝາຍກ່ຽວກັບສາສະໜາ ກັບຄົນທີ່ພວກເຂົາພົບເຫັນ ແລະ ແທນທີ່ເປັນແນວນັ້ນ, ເຂົາຄວນໄດ້ຮັບການຊຸກຍູ້ໃຫ້ສະແດງອອກ ການປະຕິບັດທີ່ເປັນແບບຢ່າງ.

______ ຊາວໜຸ່ມມີສັກກະຍາພາບຫຼາຍໃນການເຂົ້າໃຈຄຳສອນຂອງສາສະໜາ ແລະ ແບ່ງປັນຄຳສອນເລົ່ານີ້ແກ່ເພື່ອນໆຂອງພວກເຂົາ.

______ ຊາວໜຸ່ມມີສັກກະຍະພາບຫຼາຍໃນການເຂົ້າໃຈຄຳສອນຂອງສາສະໜາ ແລະ ແບ່ງປັນຄຳສອນເລົ່ານີ້ແກ່ທຸກຄົນທີ່ຍ່າງເຂົ້າມາໃນຊີວິດ, ບໍ່ວ່າໜຸ່ມສາວແລະຜູ້ເຖົ້າ.

______ ຊາວໜຸ່ມກະຕືລືລົ້ນທີ່ຈະໄດ້ມາເຊິ່ງຄວາມຮູ້ ແລະ ຄວາມສາມາດທີ່ຈຳເປັນເພື່ອເຜີຍແຜ່ຄວາມສັດທາແກ່ຄົນອື່ນໆ.

______ ຊາວໜຸ່ມເປັນຊັບພະຍາກອນທີ່ສຳຄັນຫຼາຍທີ່ສຸດ ຂອງຈຸດປະສົງຂອງພຣະຜູ້ເປັນເຈົ້າ ແລະ ຄວນໄດ້ຮັບການຊ່ວຍເຫຼືອດ້ວຍການເຝິກສອນຢ່າງເໝາະສົມ ແລະ ການໃຫ້ກຳລັງໃຈ, ເພື່ອໃຫ້ສາມາດຮັບໃຊ້ຊຸມຊົນ ແລະ ມະນຸດຊາດຂອງພວກເຂົາ.

______ ຊາວໜຸ່ມຕ້ອງການກິດຈະກຳພິເສດ ທີ່ຈະຊ່ວຍໃຫ້ພວກເຂົາມີຄວາມສະໜຸກສະໜານ; ມັນເປັນການຍາກທີ່ຈະໃຫ້ພວກເຂົາເອົາຈິງເອົາຈັງເປັນເວລາຍາວນານ.

______ ການຮຽນຮູ້ທີ່ຈະເຮັດໃຫ້ເປັນລະບົບ ຈະເກີດຂຶ້ນໃນຊ່ວງເວລາສຸດທ້າຍຂອງຊີວິດ, ເມື່ອຄວາມປ່ອຍໃຫ້ເປັນໄປຕາມທຳມະຊາດ ຫາຍໄປແລ້ວ.

______ ຄວາມສາມາດຂອງຊາວໜຸ່ມໃນການອົດທົນ ຕໍ່ສະພາບທີ່ຍາກລຳບາກ ແລະ ປັບຕົວເຂົ້າກັບສະຖານະການໃໝ່ ເປີດຊ່ອງທາງຫຼວງຫຼາຍໃນການຮັບໃຊ້ແກ່ພວກເຂົາ.

______ ຊາວໜຸ່ມມີຈິດໃຈທີ່ໄຝ່ຮູ້ ແລະ ສາມາດຄົ້ນພົບຄຳຕອບສຳລັບຄຳຖາມຕ່າງໆຂອງຕົນຜ່ານການສຶກສາ ແລະ ການເຂົ້າຮ່ວມຢ່າງເຕັມທີ່ໃນວິຖີຊີວິດຂອງຊຸມຊົນຂອງຕົນ.

______ ສັກກະຍາພາບຂອງພອນສະຫວັນທີ່ຍິ່ງໃຫຍ່ທັງຫຼາຍ ເຊື່ອງຊ້ອນຢູ່ພາຍໃນຊຸມຊົນຂອງພວກເຮົາ ສາມາດຖືກເປີດເຜີຍອອກມາໄດ້ ດ້ວຍດວງຈິດແຫ່ງການຮັບໃຊ້ຢ່າງບໍ່ເຫັນແກ່ຕົວ ທີ່ຊາວໜຸ່ມສະແດງອອກມາ.

______ ພະລັງແຫ່ງພຣະວັດຈະນະຂອງພຣະຜູ້ເປັນເຈົ້າ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມ ໃນການເດີນເທິງເສັ້ນທາງແຫ່ງການຮັບໃຊ້ ດ້ວຍຄວາມບໍລິສຸດ ແລະ ການປ່ອຍວາງ.

______ ທັດສະນະຄະຕິ ແລະ ຄຸນລັກສະນະທາງທັມ, ທັກສະ ແລະ ຄວາມສາມາດ, ທີ່ຊາວໜຸ່ມພັດທະນາໂດຍການສຶກສານຫຼັກສູດສະຖາບັນ ແລະ ໂດຍການມີສ່ວນຮ່ວມໃນການຮັບໃຊ້ທີ່ສອດຄ່ອງການ ເຮັດໃຫ້ພວກເຂົາມີສ່ວນສະໜັບສະໜູນຂະບວນການສ້າງຊຸມຊົນໄດ້ຢ່າງເດັດຂາດ.

______ ແຫຼ່ງເກັບຄວາມສາມາດເພື່ອຫັນປ່ຽນສັງຄົມທີ່ຢູ່ໃນຊາວໜຸ່ມຂອງໂລກ ສາມາດເກີດຂຶ້ນໄດ້ຈາກການມີສ່ວນຮ່ວມຂອງພວກເຂົາ ໃນຂະບວນການສຶກສາທີ່ເປັນລະບົບທີ່ລວມເອົາການສຶກສາ ແລະການຮັບໃຊ້.

## ຕອນທີ 12

ເປັນສິ່ງທີ່ຄາດຫວັງວ່າບົດເຝິກຫັດຢູ່ໃນຕອນທີ່ຜ່ານມານັ້ນ ຈະຊ່ວຍໃຫ້ເຈົ້າລວບລວມຄວາມຄິດກ່ຽວກັບຊ່ວງເວລາຂອງການເປັນຊາວໜຸ່ມ ແລະ ພາບທີ່ເຈົ້າມີໃນຊ່ວງເວລານີ້ຂອງຊີວິດຂອງການຮັບໃຊ້ທີ່ຂະຫຍັນຂັນແຂງ ຮ່ວມກັບການສຶກສາ - ທັງເປັນການຕຽມຄວາມພ້ອມຢ່າງເຂັ້ມຂົ້ນເພື່ອອານາຄົດ. ຂໍໃຫ້ພວກເຮົາມາລອງພິຈາລະນາປະເດັນນີ້ເພີ່ມເຕີມອີກ.

ຄວາມກ່ຽວເນື່ອງກັນທີ່ເຮົາໄດ້ອະທິບາຍໄປແລ້ວຂອງການຮັບໃຊ້, ການສຶກສາ ແລະ ການຕຽມຕົວນັ້ນຕ້ອງເປີດເຜີຍອອກມາໃນບົດທີ່ສະເພາະເຈາະຈົງ. ໂດຍສະເພາະຢ່າງຍິ່ງ ຄວາມກ່ຽວເນື່ອງກັນນີ້ ຄວນມີສ່ວນສະໜັບສະໜູນຕໍ່ຂະບວນການສອງດ້ານຂອງການປ່ຽນແປງ ທີ່ຄາດການໄວ້ໃນພຣະວັດຈະນະຂອງສາສະໜາ ເຊິ່ງກໍ່ຄືການຈະເລີນເຕີບໂຕຢ່າງເລິກເຊິ່ງທາງສະຕິປັນຍາ ແລະທາງຈິດວິນຍານຂອງຕົວບຸກຄົນ ແລະ ການປ່ຽນແປງຂອງສັງຄົມ. ເຮົາຮູ້ດີວ່າ **"ໜ້າທີ່ອັນສູງສຸດ ແລະໂດດເດັ່ນຂອງການເປີດເຜີຍພຣະທັມຂອງ ພຣະບາຮາອຸລລາຫ໌ ບໍ່ແມ່ນສິ່ງອື່ນໃດນອກຈາກການກໍ່ຕັ້ງຊົນຊາດໃໝ່ຂອງມະນຸດຂຶ້ນມາ,"** ແລະ ພວກເຮົາທຸກຄົນກໍ່ພະຍາຍາມທຸກໆວັນທີ່ຈະຈັດລະບຽບຄວາມຄິດ ແລະ ການກະທຳໃຫ້ສອດຄ່ອງກັບການກະທຳຂອງຕົວບຸກຄົນ ທີ່ຖືກພັນລະນາໄວ້ໃນທັມມະລິຂິດທີ່ສັກສິດ. ພຣະວັດຈະນະບາຮາຍເນັ້ນຢ້ຳເຖິງການປ່ຽນແປງຢ່າງເລິກເຊິ່ງ ໃນລະດັບທີ່ຫຼາຍພໍໆກັນຂອງໂຄງສ້າງຂອງສັງຄົມ **"ໃນບໍ່ຊ້າລະບົບໂລກໃນປັດຈຸບັນຈະຖືກມ້ວນເກັບ,"** ພຣະບາຮາອຸລລາຫ໌ ຊົງບອກແກ່ເຮົາວ່າ **"ແລະ ລະບົບໃໝ່ຈະຖືກກາງອອກແທນທີ່"** ພຣະອົງຊົງປະກາດວ່າ **"ມະນຸດທຸກຄົນຖືກສ້າງສັນຂຶ້ນ ເພື່ອພັດທະນາອະລິຍະທັມທີ່ກ້າວໜ້າໄປຕະຫຼອດເວລາ."**

ການປ່ຽນແປງທັງສອງດ້ານນີ້ຈະເກີດຂຶ້ນມາໄດ້ ໂດຍຜ່ານຄວາມພະຍາຍາມຢ່າງມີສະຕິເທົ່ານັ້ນ, ແລະ ມັນກໍ່ເປັນສິ່ງສຳຄັນທີ່ຄົນລຸ່ນເຍົາທັງຫຼາຍ ຈະຮັບຮູ້ເຖິງຄວາມໝາຍໂດຍເນື້ອໃນຂອງການປ່ຽນແປງນີ້ທີ່ມີຕໍ່ຊີວິດຂອງພວກເຂົາ ແລະ ພວກເຂົາຄວນຈະມີຄວາມຮູ້ສຶກຢ່າງແຮງກ້າໃນຄວາມມີຈຸດມຸ້ງໝາຍ, ທັງໃນການຮັບຜິດຊອບຕໍ່ຄວາມຈະເລີນເຕີບໂຕສ່ວນບຸກຄົນຂອງຕົນເອງ ແລະ ການມີ ສ່ວນສະໜັບສະໜູນຕໍ່ການປ່ຽນແປງຂອງສັງຄົມ. ຈຸດມຸ້ງໝາຍສອງດ້ານທາງສິນລະທັມເຊັ່ນນີ້ ຈະຖືກສະແດງອອກມາໃຫ້ເຫັນຢ່າງເປັນທຳມະຊາດໃນວິຖີຊີວິດແຫ່ງການຮັບໃຊ້.

ບັນດາພຣະວັດຈະນະຕໍ່ໄປນີ້ ຈະໃຫ້ຄວາມກະຈ່າງແຈ້ງໃຫ້ແກ່ດ້ານໜຶ່ງຂອງຈຸດປະສົງທາງສິນລະທັມ ໃນສ່ວນທີ່ກ່ຽວໂຍງກັບການຈະເລີນເຕີບໂຕທາງສະຕິປັນຍາ ແລະ ທາງຈິດວິນຍານຂອງຕົວເຮົາເອງ:

**"ຈຸດປະສົງຂອງພຣະຜູ້ເປັນເຈົ້າທີ່ແທ້ຈິງອົງດຽວໃນການປາກົດອົງ ກໍ່ເພື່ອຮຽກຮ້ອງໃຫ້ມະນຸດຊາດທັງໝົດມາສູ່ອາຈາສັດ ແລະ ຄວາມຈິງໃຈ, ຄວາມເຄັ່ງຄັດໃນສາສະໜາ ແລະ ຄວາມໄວ້ວາງໃຈ, ຄວາມລະຖິ້ມຕົນເອງ ແລະ ຄວາມຍອມຈຳນົນຕໍ່ພຣະປະສົງຂອງພຣະຜູ້ເປັນເຈົ້າ, ຄວາມອົດກັ້ນ ແລະ ຄວາມເມດຕາກະລຸນາ, ຄວາມທ່ຽງທັມ ແລະ ຄວາມສຸຂຸມຮອບຄອບ. ຈຸດມຸ້ງໝາຍຂອງພຣະອົງ ກໍ່ຄືການແຕ່ງກາຍໃຫ້ມະນຸດທີ່ດຳລົງຢູ່ທຸກຄົນດ້ວຍເສື້ອຄຸມແຫ່ງລັກສະນະນິໄສເໝືອນດັ່ງນັກບຸນ, ແລະ ເພື່ອຕົບແຕ່ງພວກເຂົາດ້ວຍເຄື່ອງປະດັບແຫ່ງການກະທຳທີ່ດີງາມ ແລະ ສັກສິດ."** [15]

**"ສິລາລຶກຂອງຊີວິດທີ່ໃຊ້ໃນວິຖີຂອງພຣະຜູ້ເປັນເຈົ້າ ຄືການສະແຫວງຫາຄວາມດີເລີດທາງສິລະທັມ, ແລະ ການໄດ້ມາເຊິ່ງລັກສະນະນິໄສທີ່ມີຄຸນລັກສະນະທາງທັມ ເຊິ່ງເປັນທີ່ພໍພຣະໄທໃນສາຍພຣະເນດຂອງພຣະອົງ."** [16]

**"ເປັນສິ່ງທີ່ກຳໜົດໃຫ້ມະນຸດຕ້ອງໄດ້ມາເຊິ່ງຄວາມຮູ້, ຕ້ອງບັນລຸສູ່ຄວາມສົມບູນພ້ອມທາງຈິດວິນຍານ, ຕ້ອງຄົ້ນພົບສັດຈະທັມທີ່ເຊື່ອງຊ້ອນຢູ່ ແລະ ຕ້ອງສະແດງອອກໃຫ້ເທົ່າທຽມກັບຄຸນລັກສະນະທັງຫຼາຍຂອງພຣະຜູ້ເປັນເຈົ້າ."** [17]

**"ຈຸດປະສົງໃນການສ້າງສັນມະນຸດຂອງພຣະຜູ້ເປັນເຈົ້າທີ່ເຄີຍເປັນມາ ແລະ ຈະຄົງເປັນເຊັ່ນນັ້ນຕະຫຼອດໄປ ກໍ່ຄືການຊ່ວຍໃຫ້ເຂົາຮູ້ຈັກພຣະຜູ້ສ້າງຂອງເຂົາ ແລະ ບັນລຸສູ່ທີ່ປະທັບຂອງພຣະອົງ."** [18]

1. ຈົ່ງຕື່ມຂໍ້ຄວາມໃສ່ປະໂຫຍກຕໍ່ໄປນີ້ໃຫ້ສົມບູນ ໂດຍໃຊ້ຂໍ້ມູນຈາກພຣະວັດຈະນະຂ້າງເທິງ.

ກ. ຈຸດປະສົງຂອງພຣະຜູ້ເປັນເຈົ້າທີ່ແທ້ຈິງອັນດຽວ ໃນການປາກົດອົງກໍ່ເພື່ອຮຽກຮ້ອງໃຫ້ມະນຸດຊາດທັງໝົດມາສູ່ ________________________________

ຂ. ຈຸດມຸ້ງໝາຍຂອງພຣະຜູ້ເປັນເຈົ້າຄື ________________ ການແຕ່ງກາຍໃຫ້ມະນຸດທີ່ດຳລົງຢູ່ທຸກຄົນດ້ວຍ ________________________________ , ແລະ ເພື່ອຕົບແຕ່ງພວກເຂົາດ້ວຍ ________________________________.

ຄ. ສີລາລຶກຂອງຊີວິດທີ່ໃຊ້ໃນວິຖີຂອງພຣະຜູ້ເປັນເຈົ້າຄື ________________ ແລະ ________________________________

ງ. ເປັນໜ້າທີ່ຂອງເຮົາທີ່ຈະຕ້ອງໄດ້ມາເຊິ່ງ________________ ຕ້ອງບັນລຸສູ່ ________________ ຕ້ອງຄົ້ນພົບ ________________ ແລະ ຕ້ອງສະແດງອອກ ________________________________

ຈ. ຈຸດປະສົງໃນການສ້າງສັນມະນຸດຂອງພຣະຜູ້ເປັນເຈົ້າທີ່ເຄີຍເປັນມາ ແລະ ຈະຄົງເປັນເຊັ່ນນັ້ນຕະຫຼອດໄປກໍ່ຄື ________________ ແລະ ________________

2. ການຄາດການ (ວິໄສທັດ) ກ່ຽວກັບຄວາມເປັນໄປໄດ້ຕ່າງໆທີ່ເຊື່ອງຊ້ອນຢູ່ໃນຈິດວິນຍານຂອງມະນຸດນັ້ນ ຊ່ວຍຫຼໍ່ຫຼອມຄວາມມີຈຸດມຸ້ງໝາຍຂອງແຕ່ລະບຸກຄົນ. ທັງສອງສິ່ງນີ້ກ່ຽວໂຍງກັນຢ່າງໃດແດ່? ________________________________

________________________________

________________________________

3. ຍັງມີຄວາມກ່ຽວໂຍງກັນຢ່າງແຂງແຮງລະຫວ່າງ ຄວາມມີຈຸດມຸ້ງໝາຍຂອງບຸກຄົນກັບຄວາມເຂົ້າໃຈທີ່ວ່າ ຊີວິດທາງໂລກນີ້ເປັນພຽງສ່ວນນ້ອຍໆຂອງການເດີນທາງຊົ່ວນິລັນດອນ ໄປສູ່ທີ່ປະທັບຂອງພຣະຜູ້ເປັນເຈົ້າ. ຂໍໃຫ້ເຈົ້າອະທິບາຍວ່າເພາະເຫດໃດສອງສິ່ງນີ້ຈຶ່ງກ່ຽວໂຍງກັນ.

________________________________

________________________________

________________________________

________________________________

ບັນດາພຣະວັດຈະນະຊຸດຕໍ່ໄປຈະໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບອີກດ້ານໜຶ່ງຂອງຈຸດປະສົງທາງສິນລະທັມ ເຊິ່ງກໍ່ຄືການມີສ່ວນສະໜັບສະໜຸນຕໍ່ການປ່ຽນແປງຂອງສັງຄົມ:

“ພຣະຜູ້ຊົງຖືກປະທຸບຮ້າຍຜູ້ນີ້ຂໍເປັນພະຍານວ່າ ຈຸດປະສົງທີ່ມະນຸດຜູ້ຕ້ອງມະລາຍໄປ ມີນັບຕັ້ງແຕ່ການກ້າວຈາກສູນຍະພາບສູ່ອານາຈັກແຫ່ງການດຳລົງຢູ່ ກໍ່ເພື່ອວ່າພວກເຂົາຈະເຮັດວຽກເພື່ອຄວາມຈະເລີນຂອງໂລກ ແລະ ອາໄສຢູ່ຮ່ວມກັນດ້ວຍຄວາມປອງດອງ ແລະ ຄວາມກົມກຽວ.” [19]

“ແລະກຽດຕິຍົດ ແລະ ຄວາມໂດດເດັ່ນຂອງບຸກຄົນຜູ້ໜຶ່ງປະກອບຢູ່ໃນສິ່ງນີ້ ນັ້ນຄືພວກເຂົາຕ້ອງກາຍເປັນແຫຼ່ງກຳເນີດຂອງຄວາມດີງາມທາງສັງຄົມທັງປວງ ໃນທ່າມກາງຝູງຊົນຈຳນວນຫຼວງຫຼາຍຂອງໂລກ. ຈະມີພຣະກະລຸນາທິຄຸນໃດທີ່ນຶກເຫັນໄດ້ທີ່ຍິ່ງໃຫຍ່ໄດ້ຫຼາຍກວ່ານີ້ ທີ່ບຸກຄົນຜູ້ໜຶ່ງເມື່ອເບິ່ງເຂົ້າໄປໃນຕົນເອງແລ້ວຄົ້ນພົບວ່າ ດ້ວຍຄວາມໂປດປານທີ່ໃຫ້ການຮັບຮອງຂອງພຣະຜູ້ເປັນເຈົ້າ ເຂົາໄດ້ກາຍເປັນຕົ້ນເຫດຂອງສັນຕິພາບ ແລະ ຄວາມຜາສຸກຂອງຄວາມສຸກ ແລະ ປະໂຫຍດຕໍ່ເພື່ອນມະນຸດຂອງເຂົາ? ບໍ່ເລີຍ, ໂດຍພຣະຜູ້ເປັນເຈົ້າແທ້ຈິງອົງດຽວແລ້ວ, ບໍ່ມີຄວາມສຸກສຳລານໃດຍິ່ງໃຫຍ່ກວ່ານີ້, ບໍ່ມີຄວາມຍິນດີໃດທີ່ສົມບູນຫຼາຍກວ່ານີ້.” [20]

“ມະນຸດຈະດີເລີດ ແລະ ມີກຽດພຽງໃດຖ້າເຂົາລຸກຂຶ້ນເພື່ອເຮັດໃຫ້ບັນລຸຄວາມຮັບຜິດຊອບຂອງຕົນ. ເຂົາຈະຮ້າຍກາດ ແລະ ໜ້າຕຳໜິພຽງໃດຖ້າເຂົາປິດຕາຂອງຕົນເອງຈາກຄວາມປອດໄພຂອງສັງຄົມ ແລະ ປ່ອຍໃຫ້ຊີວິດອັນມີຄ່າຂອງເຂົາສິ້ນເປືອງໄປກັບການດຳເນີນຕາມຄວາມສົນໃຈທີ່ເຫັນແກ່ຕົວ ແລະ ຜົນປະໂຫຍດຂອງຕົນ.” [21]

“ຈົ່ງຢ່າສາລະວົນຕົວເຈົ້າຢູ່ກັບທຸລະຂອງຕົນເອງ, ຂໍໃຫ້ຄວາມຄິດຂອງເຈົ້າມຸ້ງໄປໃນສິ່ງທີ່ຈະຟື້ນຟູ ໂຊກສະຕາຂອງມະນຸດຊາດ ແລະ ເຮັດໃຫ້ຫົວໃຈ ແລະ ຈິດວິນຍານຂອງມະນຸດບໍລິສຸດ.” [22]

“ພວກເຂົາຜູ້ເປັນປະຊາຊົນຂອງພຣະຜູ້ເປັນເຈົ້າ ຈະບໍ່ມີຄວາມທະເຍີທະຍານໃດນອກຈາກການຟື້ນຟູໂລກ, ການເຮັດໃຫ້ວິຖີວິດຂອງໂລກມີສິລະທັມ ແລະ ການໃຫ້ຊີວິດໃໝ່ແກ່ຊາວໂລກ.” [23]

1. ຈົ່ງຕື່ມຂໍ້ຄວາມຕໍ່ໄປນີ້ໃຫ້ສົມບູນ ໂດຍໃຊ້ຂໍ້ມູນຈາກພຣະວັດຈະນະຂ້າງເທິງ:
   ກ. ຈຸດປະສົງທີ່ມະນຸດເຮົາມີນັບຕັ້ງແຕ່ກ້າວຈາກສູນຍະພາບມາສູ່ອານາຈັກແຫ່ງການດຳລົງຢູ່ ກໍ່ຄື ______________________________ ແລະ ______________________________

ຂ. ກົດຕາຍຕົວ ແລະ ຄວາມໂດດເດັ່ນຂອງບຸກຄົນຜູ້ໜຶ່ງປະກອບຢູ່ໃນສິ່ງນີ້ ນັ້ນຄື: _____

_______________________________________________

_______________________________________________

ຄ. ບໍ່ມີພຣະກະລຸນາທິຄຸນໃດທີ່ນຶກເຫັນໄດ້ທີ່ຍິ່ງໃຫຍ່ໄດ້ຫຼາຍກວ່ານີ້ທີ່ບຸກຄົນຜູ້ໜຶ່ງ ເມື່ອເບິ່ງເຂົ້າໄປໃນຕົນເອງແລ້ວຄົ້ນພົບວ່າ ___________________________

_______________ ເຂົາຈຶ່ງໄດ້ກາຍເປັນ ___________________________

_______________________________________________

ງ. ມະນຸດຈະດີເລີດ ແລະ ມີກຽດພຽງໃດຖ້າເຂົາລຸກຂຶ້ນເພື່ອ ___________________

___________________________. ເຂົາຈະຮ້າຍກາດ ແລະ ໜ້າຕຳໜິພຽງໃດຖ້າເຂົາປິດຕາຂອງຕົນເອງຈາກ ___________________________________ແລະ _

_______________________________________________

_______________________________________________

ຈ. ເຮົາບໍ່ຄວນສາລະວົນຕົວເຮົາກັບ ___________________________

ແຕ່ເຮົາຄວນມຸ້ງ ຄວາມຄິດຂອງເຮົາໄປໃນສິ່ງທີ່ຈະ_______________________

_______________________________________________

_______________________________________________

ສ. ພວກເຂົາຜູ້ເປັນປະຊາຊົນຂອງພຣະຜູ້ເປັນເຈົ້າ ຈະບໍ່ມີຄວາມທະເຍີທະຍານໃດນອກຈາກ

_______________________________________________ແລະ _

_______________________________________________

2. ຄວາມມີຈຸດມຸ້ງໝາຍຂອງແຕ່ລະບຸກຄົນນັ້ນ ໄດ້ຮັບການຫຼໍ່ຫຼອມສ່ວນໜຶ່ງໂດຍການຄາດການເຖິງໂອກາດອັນຍິ່ງໃຫຍ່ທີ່ເປີດໃຫ້ກັບມະນຸດຊາດ, ໃນໄລຍະນີ້ຂອງການພັດທະນາການເຊິ່ງເປັນໄລຍະທີ່ການຮ່ວມຕົວເຂົ້າເປັນຄອບຄົວດຽວກັນ ເປັນສິ່ງທີ່ເປັນໄປໄດ້ຢ່າງແທ້ຈິງ, ຮູບຮ່າງ ແລະ ທິດທາງຄວາມຮູ້ສຶກເຖິງຈຸດປະສົງຂອງແຕ່ລະບຸກຄົນ. ເຈົ້າສາມາດອະທິບາຍຄືແນວໃດ?

_______________________________________________

_______________________________________________

_______________________________________________

3. ຍັງມີຄວາມກ່ຽວໂຍງກັນຢູ່ລະຫວ່າງຄວາມມີຈຸດມຸ້ງໝາຍຂອງຕົວບຸກຄົນ ກັບຄວາມເຂົ້າໃຈວ່າມະນຸດຊາດນັ້ນຢູ່ໃນວິຖີທາງອັນຍາວໄກ ທີ່ຈະນຳໄປສູ່ອາລິຍະທັມແຫ່ງສະຫວັນ. ຂໍໃຫ້ເຈົ້າອະທິບາຍເຫດຜົນທີ່ຢູ່ເບື້ອງຫຼັງຄວາມກ່ຽວໂຍງນີ້? _______________________

_______________________________________________

## ຕອນທີ 13

ດັ່ງທີ່ໄດ້ແນະນຳໄວ້ໃນບົດເຝິກຫັດຂອງຕອນທີ່ແລ້ວ, ຄວາມເຂົ້າໃຈໃນທຳມະຊາດຂອງການປ່ຽນແປງໃນຕົວບຸກຄົນ ແລະ ສັງຄົມ ດັ່ງທີ່ມີການຄາດການໄວ້ໃນພຣະວັດຈະນະຂອງສາສະໜານັ້ນມີຄວາມສຳຄັນຍິ່ງຕໍ່ຄວາມມີຈຸຸ້ງໝາຍທີ່ຊາວໜຸ່ມຄວນຈະມີ. ການຈະໄດ້ມາເຊິ່ງຄຸນລັກສະນະດັ່ງກ່າວ, ດັ່ງເຊັ່ນອັນຍະມະນີທີ່ **"ເຊື່ອງຊ້ອນຢູ່ໃນເໝືອງແຫ່ງອັດຕາທີ່ແທ້ຈິງ ແລະ ຢູ່ພາຍໃນທີ່ສຸດ"** ແລະການທີ່ຈະມີສ່ວນສະໜັບສະໜຸນຕໍ່ການສ້າງສັນອະລິຍະທັມໂລກທີ່ຮຸ່ງເຮືອງ ທັງທາງດ້ານວັດຖຸ ແລະຈິດວິນຍານນັ້ນ ພວກເຂົາຕ້ອງສຳນຶກໃນຄຸນຄ່າຂອງການປ່ຽນແປງທີ່ ພຣະບາຮາອຸລລຫາຫ໌ ຮຽກຮ້ອງໃຫ້ເກີດຂື້ນ. ແນ່ນອນທີ່ສຸດວ່າປະຊາຊົນໃນທຸກແຫ່ງກຳລັງເວົ້າກ່ຽວກັບຄວາມຈຳເປັນ ທີ່ຈະຕ້ອງມີການປ່ຽນແປງໃນປັດຈຸບັນນີ້. ສິ່ງທີ່ເຮົາຄວນຈະສຳນຶກເຖິງກໍ່ຄືການປ່ຽນແປງທີ່ກຳໜົດໄວ້ ວ່າຈະຕ້ອງເກີດຂື້ນໃນຕົວບຸກຄົນ ແລະ ສັງຄົມ ໂດຍອຳນາດໂນ້ມນ້າວໃຈໂດຍຕົງຂອງການເປີດເຜີຍທັມຂອງ ພຣະບາຮາອຸລລາຫ໌ ນັ້ນຍິ່ງໃຫຍ່ທີ່ສຸດເກີນກວ່າສິ່ງທີ່ຄົນສ່ວນໃຫຍ່ຈະຈິນຕະນາການເຖິງ ວ່າຈະເປັນສິ່ງທີ່ເປັນໄປໄດ້.

ຂໍໃຫ້ເຮົາລອງຄິດເບິ່ງໄລຍະໜຶ່ງ ເຖິງຂະໜາດຄວາມເຕີບໂຕຂອງການປ່ຽນແປງ ທີ່ຈະເກີດຂື້ນໃນລະດັບຕົວບຸກຄົນ ໂດຍການຕຶກຕອງພຣະວັດຈະນະຫຼາຍໆຕອນທີ່ ພຣະບາຮອຸລລາຫ໌ ຊົງກ່າວຕໍ່ພວກເຮົາວ່າ:

> **"ຊົນຊາດມະນຸດ, ໃນລັກສະນະທີ່ບໍ່ມີໃຜປຽບປານໄດ້, ໄດ້ຮັບການບຳລຸງລ້ຽງຂື້ນມາດ້ວຍຕີນທີ່ບໍ່ຜູກພັນ, ຊົນຊາດນັ້ນຈະສາມາດຍ່າງຢູ່ພາຍໃຕ້ທຸກຄົນທີ່ຢູ່ໃນສະຫວັນ ແລະບົນໂລກ ແລະ ຈະກາງແຂນເສື້ອແຫ່ງຄວາມສັກສິດ ຢູ່ເໜືອທຸກສິ່ງທີ່ໄດ້ຮັບການສ້າງສັນຈາກນ້ຳ ແລະ ດິນໜຽວ."** [24]

ແລະ ອີກໃນພຣະວັດຈະນະໜຶ່ງທີ່ພຣະອົງໄດ້ຊົງກ່າວວ່າ:

> **"ຈົ່ງກ່າວວ່າ: ຜູ້ທີ່ປ່ອຍໃຈໄປຕາມຄວາມປາດຖະໜາທາງໂລກຂອງຕົນເອງ ຫຼື ຜູ້ທີ່ປັກໃຈຢູ່ກັບສິ່ງຕ່າງໆທາງໂລກ, ເຂົາຜູ້ນັ້ນບໍ່ນັບວ່າເປັນສາວົກທີ່ແທ້ຈິງຂອງເຮົາ. ຫາກເຂົາເດີນມາເຖິງຫຸບເຂົາແຫ່ງທອງຄຳບໍລິສຸດ ເຂົາຈະຍ່າງໄປຢ່າງເມີນເສີຍ ດັ່ງເຊັ່ນກ້ອນເມກ ແລະຈະບໍ່ຫັນຫຼັງກັບ ຫຼື ຢຸດສະງັກ, ເຂົາຜູ້ນັ້ນຈະເປັນຄົນຂອງເຮົາຢ່າງແນ່ນອນ. ເລົ່າເທບເທວັນ**

**ເບື້ອງບົນຈະສາມາດສູດດົມ ກິ່ນຫອມຫວານແຫ່ງຄວາມສັກສິດຈາກເສື້ອຜ້າອາພອນຂອງເຂົາໄດ້.”** [25]

ແລະ ໃນພຣະທັມມະຈາລຶກອີກຕອນໜຶ່ງພຣະອົງຊົງຕັດວ່າ:

**“ບັນດາສະຫາຍຂອງພຣະຜູ້ເປັນເຈົ້າ ຄືກ້ອນນໍ້າຕານທີ່ຕ້ອງໃຊ້ໝັກແປ້ງຂະໜົມປັງແຫ່ງປະຊາຊາດຂອງໂລກນັ້ນໃຫ້ຟື້ນຟູ. ພວກເຂົາຕ້ອງສະແດງອອກເຖິງຄວາມໄວ້ວາງໃຈໄດ້, ວາຈາສັດ, ຄວາມດຸໝັ່ນຂະຫຍັນພຽນ ດ້ວຍການກະທຳ ແລະ ລັກສະນະນິໄສໃນແບບຢ່າງທີ່ມະນຸດຊາດທັງຫຼາຍຈະໄດ້ຮັບປະໂຫຍດ ຈາກການທຳຕົນເປັນຕົວຢ່າງຂອງພວກເຂົາ.”** [26]

ແລະ ພຣະອົງຍັງຊົງໄດ້ອະທິບາຍເພີ່ມເຕີມອີກວ່າ:

**“ພາຍໃນລົມຫາຍໃຈຂອງຈິດວິນຍານດັ່ງກ່າວ ມີສັກກະຍາພາບທີ່ບໍລິສຸດສັກສິດ ແລະ ຊົງອິດທິພົນຊ້ອນເລັ້ນຢູ່. ສັກກະຍະພາບເລົ່ານີ້ຍິ່ງໃຫຍ່ຫຼາຍ ຈົນເຖິງຂັ້ນທີ່ມີອິດທິພົນຕໍ່ທຸກຊັບພະສິ່ງທີ່ໄດ້ຮັບການສ້າງສັນຂຶ້ນມາ.”** [27]

ພຣະອັບດຸລບາຮາ ບອກແກ່ພວກເຮົາວ່າ:

**“ໂອ ເຈົ້າຜູ້ເປັນສະຫາຍຂອງພຣະຜູ້ເປັນເຈົ້າ! ຈົ່ງໃຊ້ຄວາມພະຍາຍາມອັນສູງສົ່ງທີ່ສຸດຂອງເຈົ້າ ເພື່ອວ່າມະນຸດຊາດທັງໝົດ ແລະ ຍາດຕິພີ່ນ້ອງດຽວກັນໃນໂລກ, ເຖິງວ່າຈະເປັນສັດຕູກໍ່ຈະມີຄວາມເຊື່ອໝັ້ນໃນທ່ານ, ມີຄວາມໄວໃຈ ແລະ ຄວາມຫວັງໃນຕົວທ່ານ. ເຖິງແມ່ນວ່າດວງວິນຍານນັ້ນຈະກະທຳຜິດທາງສິນລະທັມເຖິງຮ້ອຍຄັ້ງພັນຄັ້ງກໍ່ຕາມ ແຕ່ດວງວິນຍານນັ້ນກໍ່ຫວັງທີ່ຈະໄດ້ຮັບການໃຫ້ອະໄພ ແລະ ຈະບໍ່ກາຍເປັນຜູ້ທີ່ໝົດຫວັງ ແລະ ເສົ້າໂສກ. ນັ້ນຄືການປະຕິບັດ ແລະ ພຶດຕິກຳຂອງປະຊາຊົນແຫ່ງບາຮາ. ເປັນເສັ້ນທາງພື້ນຖານຂອງຄວາມສູງສົ່ງ. ຂໍໃຫ້ການປະພຶດ ແລະ ມາລະຍາດຂອງເຈົ້າ ເປັນໄປຕາມຄຳແນະນຳຂອງພຣະອັບດຸລບາຮາ.”** [28]

ຄວາມຮຸ່ງເຮືອງຂອງຄຸນລັກສະນະທີ່ເປັນລັກສະນະສະເພາະຂອງມະນຸດຊົນຊາດໃໝ່, ດັ່ງເຊັ່ນທີ່ອະທິບາຍໄວ້ ໃນພຣະວັດຈະນະນັ້ນຈະແຈ້ງທີ່ສຸດ, ແລະ ເຮົາເອງກໍ່ຮູ້ສຶກຕື້ນຕັນໃຈກັບພາບແມ່ນພຽງໜ້ອຍດຽວຂອງພະລັງອຳນາດ ແລະ ສັກກະຍາພາບຂອງ “ມະນຸດຊົນຊາດໃໝ່”. ເມື່ອໄດ້ອ່ານພຣະວັດຈະນະແລ້ວ ພວກເຮົາອາດຈະມີປະຕິກິລິຍາທີ່ແຕກຕ່າງກັນອອກໄປ. ພວກເຮົາອາດຈະຄິດວ່າມາດຕະຖານທີ່ກຳນົດໄວ້ໃນຄຳສອນນັ້ນ ສູງສົ່ງເກີນກວ່າທີ່ພວກເຮົາຈະເອື້ອມເຖິງ ຈົນເປັນຜົນເຮັດໃຫ້ມັນໄຮ້ປະໂຫຍດ ທີ່ຈະໃຊ້ຄວາມພະຍາຍາມຫຼາຍຈົນເກີນໄປ ໃນການດຳເນີນຊີວິດຕາມນັ້ນແລະ,

ໃນພາວະດັ່ງກ່າວ, ເຮົາປ່ອຍໃຫ້ຕົນເອງຖືກຫຼອກໃຫ້ເຊື່ອວ່າ ເປັນການພຽງພໍແລ້ວທີ່ຈະພຽງແຕ່ຫຼີກລ້ຽງຄວາມປະພຶດທີ່ບໍ່ເໝາະສົມ. ແຕ່ເຖິງຢ່າງໃດ, ເມື່ອບຸກຄົນ-ຄົນໜຶ່ງໄດ້ຮັບການປະສິດປະສາດ ດ້ວຍຄວາມມີຈຸດມຸ້ງໝາຍທີ່ແຮງກ້າ, ແລ້ວພຣະວັດຈະນະຄືທີ່ອ່ານມາເບື້ອງຕົ້ນ ຍ່ອມຈະກາຍເປັນແຫຼ່ງກໍາເນີດຂອງກໍາລັງໃຈ ແລະ ຈະກະຕຸ້ນໃຫ້ເຂົາຜູ້ນັ້ນໄປສູ່ລະດັບທີ່ສູງຍິ່ງໆຂຶ້ນໄປ.

ເຖິງຢ່າງໃດເຮົາທັງຫຼາຍຍັງໄດ້ຮັບພຣະພອນ ດ້ວຍການມີແຫຼ່ງກໍາເນີດອີກແຫຼ່ງໜຶ່ງຂອງແຮງບັນດານໃຈໃນຕົວຕົນຂອງ ພຣະອັບດຸລບາຮາ ຜູ້ເປັນແບບຢ່າງອັນສົມບູນພ້ອມກັບຄໍາສອນຂອງບິດາຂອງທ່ານ. ແມ່ນວ່າເຮົາຈະສໍານຶກດີວ່າ ພຣະອັບດຸລບາຮາ ໄດ້ເຄື່ອນໄຫວໃນຂອບເຂດຄວາມສົນໃຈຂອງທ່ານເອງ ແລະ ບໍ່ມີມະນຸດຄົນໃດສາມາດຫວັງທີ່ຈະບັນລຸເຖິງສະຖານະອັນສູງສົ່ງຂອງທ່ານໄດ້, ເຮົາກໍ່ຍັງເຫັນໄດ້ເຖິງຄວາມເປັນຕົວຕົນ ຂອງອຸດົມຄະຕິບາຮາຍທຸກປະການໃນຕົວທ່ານ ແລະ ເຮົາກໍ່ພະຍາຍາມທີ່ຈະໄປສູ່ມາດຕະຖານຂອງຄວາມປະພຶດທີ່ທ່ານໄດ້ເປັນຕົວຢ່າງ. ເຈົ້າແລະເພື່ອນຂອງເຈົ້າທີ່ສຶກສາຫຼັກສູດນີ້ຢູ່ ອາດຈະພົບວ່າເປັນສິ່ງທີ່ເປັນປະໂຫຍດທີ່ຈະເລືອກຂໍ້ຄວາມບາງວາລີ ຈາກພຣະວັດຈະນະເບື້ອງຕົ້ນ ແລະ ຄິດເຖິງເຫດການຕ່າງໆທີ່ເກີດຂຶ້ນໃນຊີວິດຂອງ ພຣະອັບດຸລບາຮາ ທີ່ສະທ້ອນໃຫ້ເຫັນເຖິງຄຸນລັກສະນະຕ່າງໆ ທີ່ໄດ້ກ່າວໄວ້ໃນພຣະວັດຈະນະແຕ່ລະຕອນເຫຼົ່ານັ້ນ. ຍົກຕົວຢ່າງເຊັ່ນ: ເມື່ອເຮົາພະຍາຍາມທີ່ຈະນຶກພາບກ່ຽວກັບການຍ່າງດ້ວຍ “ຕີນທີ່ບໍ່ຜູກພັນ” ເຮົາກໍ່ຈະນຶກເຖິງເລື່ອງລາວໃນຊີວິດຂອງ ພຣະອັບດຸລບາຮາ ທີ່ໄດ້ສະແດງໃຫ້ເຮົາເຫັນເຖິງຄວາມໝາຍຂອງການໃຊ້ຊີວິດໃນໂລກນີ້ຢ່າງບໍ່ຜູກພັນກັບສິ່ງສ້າງສັນໃດໆ. ເມື່ອເຮົາຄິດເຖິງ “ກິ່ນຫອມຫວານຂອງຄວາມສັກສິດ” ເຮົາຮູ້ດີວ່າ “ເຫຼົ່າເທບເທວັນເບື້ອງບົນ” ຈະສາມາດສູດດົມຄວາມຫອມຫວານຂອງກິ່ນນີ້ໄດ້ ຈາກ “ເສື້ອຜ້າອາພອນ” ຂອງທ່ານໄດ້ ແລະ ເຮົາຈະນຶກເຖິງເລື່ອງລາວທີ່ທ່ານສະແດງໃຫ້ເຫັນ ເຖິງຄວາມສັກສິດຢ່າງທີ່ສຸດຂອງທ່ານ.

## ຕອນທີ 14

ໃນຕອນນີ້, ຂໍໃຫ້ເຮົາພິຈາລະນາຂະບວນການທີ່ເລິກເຊິ່ງຂອງການປ່ຽນແປງ ທີ່ຈະຕ້ອງເກີດຂຶ້ນໃນລະດັບຂອງສັງຄົມ. ພຣະບາຮາອຸລລາຫ໌ ຊົງກ່າວວ່າ:

> **“ເຮົາຂໍເປັນພະຍານ, ວັນເວລານັ້ນໃກ້ມາເຖິງແລ້ວ ອັນເປັນເວລາທີ່ເຮົາຈະມ້ວນເກັບໂລກ ແລະ ທຸກສິ່ງທີ່ຢູ່ພາຍໃນ, ແລ້ວກາງລະບົບໃໝ່ອອກມາແທນທີ່.”** [29]

ພຣະອົງຍັງຊົງບອກແກ່ເຮົາອີກວ່າ:

"ຄວາມສົມດູນຂອງໂລກຖືກລົບກວນ ໂດຍອານຸພາບສັ່ນສະເທືອນຂອງລະບົບແຫ່ງໂລກໃໝ່ທີ່ຍິ່ງໃຫຍ່ທີ່ສຸດນີ້. ແບບແຜນຊີວິດຂອງມະນຸດຊາດຖືກປະຕິວັດ ໂດຍປະຕິບັດການຂອງລະບົບທີ່ພິເສດ ແລະ ອັດສະຈັນນີ້ຢ່າງທີ່ບໍ່ເຄີຍປາກົດຕໍ່ສາຍຕາຂອງມະນຸດມາກ່ອນ." [30]

ແລະ ພຣະອັບດຸລບາຮາ ກໍ່ຢືນຢັນວ່າ:

"... ຄວາມຍຸຕິທັມ ແລະ ຄວາມຊອບທັມຈະອ້ອມຮອບໂລກ; ຄວາມກຽດຊັງ ແລະ ຄວາມເປັນສັດຕູກັນກໍຈະຫາຍໄປ; ສິ່ງໃດກໍຕາມທີ່ເປັນເຫດຂອງການແບ່ງແຍກ ລະຫວ່າງຜູ້ຄົນ, ຊົນເຜົ່າ, ແລະ ຊົນຊາດຈະຖືກລົບລ້າງ; ແລະ ສິ່ງທີ່ເຮັດໃຫ້ເກີດຄວາມສາມັກຄີ, ຄວາມກົມກຽວກັນ, ແລະ ຄວາມປອງດອງຈະຖືກສົ່ງເສີມ; ຜູ້ທີ່ບໍ່ເອົາໃຈໃສ່ຈະຕື່ນຂຶ້ນຈາກການຫຼັບໄຫຼ; ຄົນຕາບອດຈະມອງເຫັນ; ຄົນຫູໜວກຈະໄດ້ຍິນ; ຄົນໄບ້ຈະເວົ້າໄດ້; ຄົນປ່ວຍຈະຫາຍດີ; ຄົນຕາຍຈະຟື້ນຄືນ; ແລະ ສົງຄາມຈະຫຼີກທາງໃຫ້ສັນຕິພາບ. ຄວາມເປັນສັດຕູກັນຈະຖືກປ່ຽນກາຍເປັນຄວາມຮັກ; ສາເຫດທີ່ແທ້ຈິງຂອງການໂຕ້ແຍ້ງ ແລະ ການຖົກຖຽງກັນຈະໝົດໄປ; ມະນຸດຊາດຈະບັນລຸຄວາມສຸກທັນສາທີ່ແທ້ຈິງ; ໂລກນີ້ຈະເປັນພາບສະທ້ອນອານາຈັກສະຫວັນອອກມາ. ແລະ ແຜ່ນດິນເບື້ອງລຸ່ມຈະກາຍເປັນບັນລັງແຫ່ງອານາຈັດເບື້ອງບົນ." [31]

ໃນພຣະວັດຈະນະອີກຕອນໜຶ່ງ ທ່ານຍັງອະທິບາຍໄວ້ອີກວ່າ:

"ສິ່ງຕອບສະໜອງໄດ້ຕໍ່ຄວາມຕ້ອງການຂອງມະນຸດ ລະຫວ່າງຊ່ວງທຳອິດຂອງປະຫວັດສາດຂອງຊົນຊາດຈະບໍ່ສາມາດຕອບສະໜອງ ຫຼື ເປັນທີ່ເພິ່ງພໍໃຈແກ່ຄວາມຕ້ອງການຂອງຍຸກນີ້ ແລະ ຊ່ວງເວລາຂອງຄວາມໃໝ່ ແລະ ຄວາມບໍລິບູນ. ມະນຸດຊາດໄດ້ກ້າວພົ້ນຈາກຂໍ້ຈຳກັດທີ່ມີມາແຕ່ກ່ອນ ແລະ ການເຝິກຝົນເບື້ອງຕົ້ນແລ້ວ. ໃນຕອນນີ້ມະນຸດຕ້ອງປ່ຽນໄປດ້ວຍຄຸນນະທັມ ແລະ ພະລັງອຳນາດໃໝ່, ສິລະທັມໃໝ່ ແລະ ຄວາມສາມາດໃໝ່. ພຣະພອນໃໝ່ ຂອງປະທານໃໝ່ ແລະ ຄວາມສົມບູນພ້ອມໃໝ່ກຳລັງລໍຄອຍຢູ່ ແລະ ກຳລັງລົງມາສູ່ພວກເຂົາແລ້ວ." [32]

ແລະ ທ່ານໃຫ້ຄຳແນະນຳແກ່ພວກເຮົາວ່າ:

"...ເຮົາຕ້ອງພຽນພະຍາຍາມດ້ວຍຫົວໃຈແລະວິນຍານ ເພື່ອວ່າຄວາມມືດມົນຂອງໂລກອັນບໍ່ແນ່ນອນນີ້ຈະຖືກປັດເປົ່າໄປ, ເພື່ອທີ່ແສງສະຫວ່າງແຫ່ງອານາຈັກສະຫວັນຈະໄດ້ສາດສ່ອງຢູ່ເໜືອທຸກຂອບຟ້າ ໂລກແຫ່ງມະນຸດຊາດຈະໄດ້ຮັບການສ່ອງສະຫວ່າງ, ພາບສະທ້ອນຂອງພຣະຜູ້ເປັນເຈົ້າປາກົດຂຶ້ນເທິງກະຈົກຂອງມະນຸດ, ກົດຂອງພຣະຜູ້ເປັນເຈົ້າໄດ້ຮັບການສະຖາປານາຂຶ້ນຢ່າງໝັ້ນຄົງ ແລະ ທຸກພູມີພາກຂອງໂລກໄດ້ຮັບຄວາມເພິ່ງພໍໃຈຈາກສັນ

**ຕິພາບ, ຄວາມສະບາຍ ແລະ ຄວາມສະຫງົບພາຍໃຕ້ ການປົກປ້ອງອັນຍຸຕິທັມຂອງພຣະຜູ້ເປັນເຈົ້າ."** [33]

ໃນກໍລະນີຂອງແຕ່ລະບຸກຄົນ, ເປັນສິ່ງທີ່ຍາກສໍາລັບເຮົາທີ່ຈະຈິນຕະນາການເຖິງຄວາມຮຸ່ງເຮືອງຢ່າງບໍລິບູນ ຂອງອະລິຍະທັມທີ່ກໍານົດໄວ້ວ່າຈະບັງເກີດຂຶ້ນ. ແທ້ຈິງແລ້ວ, ຄົງຈະເປັນການຍາກທີ່ຈະພັນລະນາເຖິງລັກສະນະຂອງອະລິຍະທັມນັ້ນ. ເຖິງຢ່າງໃດເຮົາກໍ່ບໍ່ຄວນຕື້ນຕັນໃຈຫຼາຍເກີນໄປກັບຂະໜາດຄວາມໃຫຍ່ໂຕຂອງການປ່ຽນແປງ ທີ່ເຮົາຄິດວ່າການປ່ຽນແປງນີ້ອາດຈະເກີດຂຶ້ນຢ່າງມະຫັດສະຈັນ ໂດຍບໍ່ຕ້ອງອາໄສຜົນຈາກຄວາມພະຍາຍາມຂອງເຮົາ. ສາຍຕາຂອງພວກເຮົາຄວນເນັ້ນເບິ່ງໄປທີ່ລະບົບຂອງໂລກຂອງ ພຣະບາຮາອຸລລາຫ໌ ແລະ ເຮົາຄວນຈະສໍານຶກວ່າ ແມ່ນວ່າການກະທໍາທີ່ເລັກໜ້ອຍທີ່ສຸດ ກໍ່ສາມາດສົ່ງຜົນຕໍ່ໂຄງສ້າງດັ່ງກ່າວ. ເພື່ອທີ່ຈະໄຕ່ຕອງເພີ່ມເຕີມກ່ຽວກັບຂະໜາດຂອງການປ່ຽນແປງທີ່ເກີດຂຶ້ນກັບສັງຄົມ. ຂໍໃຫ້ເຈົ້າຕື່ມຂໍ້ຄວາມຂ້າງລຸ່ມນີ້ໃຫ້ສົມບູນໂດຍໃຊ້ຄໍາ ຫຼື ກຸ່ມຄໍາທີ່ໃຫ້ໄວ້ຂ້າງລຸ່ມນີ້:

ສາບສູນໄປ, ຖືກລົບລ້າງ, ຫຼີກທາງໃຫ້, ກາງອອກ, ສ່ອງແສງ,
ສ້າງຕັ້ງ, ຖືກປ່ຽນ, ໝົດໄປ, ມ້ວນເກັບ, ປັດເປົ່າ, ບັນລຸ,
ອ້ອມຮອບ, ຖືກສົ່ງເສີມ, ຄວາມມ່ວນຊື່ນ, ພາບສະທ້ອນ, ເປັ່ງລັດສະໝີ

ກ. ວັນເວລານັ້ນໃກ້ມາເຖິງແລ້ວ ອັນເປັນເວລາທີ່ໂລກ ແລະ ທຸກສິ່ງທີ່ຢູ່ໃນນັ້ນຈະຖືກ ________________________.

ຂ. ວັນເວລານັ້ນໃກ້ມາເຖິງແລ້ວ ອັນເປັນເວລາທີ່ລະບົບໃໝ່ຈະຖືກ ________________ ___ແທນທີ່ລະບົບໃນປະຈຸບັນ.

ຄ. ຄວາມຍຸຕິທັມ ແລະ ຄວາມຊອບທັມຈະ____________________________ ໂລກ.

ງ. ຄວາມກຽດຊັງ ແລະ ຄວາມເປັນສັດຕູກັນ ຈະ ______________________.

ຈ. ສິ່ງໃດກໍຕາມທີ່ເປັນເຫດຂອງການແບ່ງແຍກ ລະຫວ່າງຜູ້ຄົນ, ຊົນເຜົ່າ, ແລະ ຊົນຊາດຈະ __________________________________.

ສ. ສິ່ງທີ່ເຮັດໃຫ້ເກີດຄວາມສາມັກຄີ, ຄວາມກົມກຽວກັນ, ແລະ ຄວາມປອງດອງຈະ____ __________________________________.

ຊ. ສົງຄາມຈະ _______________________________ ສັນຕິພາບ

ຍ. ຄວາມເປັນສັດຕູກັນຈະຖືກ _________________________ ກາຍເປັນຄວາມຮັກ.

ດ. ສາເຫດທີ່ແທ້ຈິງຂອງການໂຕ້ແຍ້ງ ແລະ ການຖົກຖຽງກັນຈະ _________________.

ຕ. ມະນຸດຊາດຈະ _____________________ຄວາມສຸກທັນສາທີ່ແທ້ຈິງ.

ຖ. ໂລກນີ້ຈະເປັນ ______________________ ອານາຈັກສະຫວັນອອກມາ.

ທ. ຄວາມມືດມົນຂອງໂລກອັນບໍ່ແນ່ນອນນີ້ຈະຖືກ _______________________ໄປ.

ນ. ໂລກແຫ່ງມະນຸດຊາດຈະໄດ້ຮັບການ __________________________________.

ບ. ແສງສະຫວ່າງແຫ່ງອານາຈັກສະຫວັນຈະໄດ້ ______________________________
   __ຢູ່ເໜືອທຸກຂອບຟ້າ.

ປ. ກິດຂອງພຣະຜູ້ເປັນເຈົ້າໄດ້ຮັບການ ___________________________________
   ຂຶ້ນຢ່າງດີ.

ຜ. ທຸກພູມມິພາກຂອງໂລກຈະໄດ້ຮັບ _____________________________________
   ຈາກສັນຕິພາບ ຄວາມສະບາຍແລະຄວາມສະຫງົບ ພາຍໃຕ້ການປົກປ້ອງອັນຍຸຕິທັມຂອງພຣະຜູ້ເປັນເຈົ້າ.

## ຕອນທີ 15

ພຣະວັດຈະນະ ແລະ ບົດເຝິກຫັດໃນສອງຕອນທີ່ຜ່ານມາ ໄດ້ໃຫ້ຄວາມກະຈ່າງແຈ້ງແກ່ ເຮົາກ່ຽວກັບການປ່ຽນແປງອັນເລິກເຊິ່ງທີ່ຈະເກີດຂຶ້ນກັບຕົວບຸກຄົນ ແລະ ສັງຄົມອັນເປັນຜົນຂອງການເປີດເຜີຍພຣະທັມຂອງ ພຣະບາຮາອຸລລາຫ໌. ເພື່ອທີ່ຈະພິຈາລະນາຕໍ່ໄປອີກເຖິງຂະໜາດຂອງການປ່ຽນແປງທີ່ ພຣະບາຮາອຸລລາຫ໌ ຊົງນຶກພາບໄວ້, ຂໍໃຫ້ເຮົາອ່ານຂໍ້ຄວາມຂ້າງລຸ່ມນີ້. ແຕ່ລະຂໍ້ຄວາມຈະສະແດງໃຫ້ເຫັນເຖິງຄຸນລັກສະນະທີ່ໜ້າສັນລະເສີນບາງປະການຂອງຕົວບຸກຄົນ ຫຼື ສັງຄົມ ເຊັ່ນ: ຄວາມຍຸຕິທັມ, ຄວາມຖືກຕ້ອງ, ຫຼື ຄວາມເມດຕາຮັກແພງ. ເຖິງຢ່າງໃດພຣະວັດຈະນະທີ່ຢູ່ໃນຕອນກ່ອນໜ້ານີ້ ເກືອບຈະບໍ່ຖິ້ມຂໍ້ສົງໃສ່ໄວ້ເລີຍວ່າ ພຣະບາຮາອຸລລາຫ໌ ຊົງຮຽກຮ້ອງໃຫ້ມະນຸດຊາດໄປສູ່ມາດຕະຖານທີ່ສູງຂຶ້ນ ທັງຄວາມປະພຶດໃນສ່ວນບຸກຄົນ ແລະ ຄວາມປະພຶດຂອງສ່ວນລວມ. ຂໍໃຫ້ເຈົ້າລອງພະຍາຍາມຂຽນຂໍ້ຄວາມຂ້າງລຸ່ມນີ້ໃໝ່ ໃນລັກສະນະທີ່ຈະສາມາດສະແດງໃຫ້ເຫັນໄດ້ຊັດເຈນ ຍິ່ງຂຶ້ນ ເຖິງມາດຕະຖານທີ່ກຳນົດໄວ້ໃນການເປີດເຜີຍທັມຂອງ ພຣະບາຮາອຸລລາຫ໌ ໂດຍເບິ່ງຕົວຢ່າງຈາກປະໂຫຍກທຳອິດທີ່ໃຫ້ໄວ້.

ກ. ເຮົາຕ້ອງຄວບຄຸມຄວາມຮູ້ສຶກອິດສາຂອງເຮົາໄວ້ ແລະ ຕ້ອງບໍ່ປະໃຫ້ຄວາມຮູ້ສຶກອິດສານັ້ນເຜົາຜານຕົວເຮົາ.

ຂ. ເຮົາຄວນລົບຮ່ອງຮອຍຂອງຄວາມຮູ້ສຶກອິດສາພຽງເລັກນ້ອຍ ອອກຈາກຫົວໃຈຂອງເຮົາ ແລະ ໃຫ້ຮູ້ສຶກປິຕິຍິນດີຢ່າງຈິງໃຈ ໃນຄວາມສຳເລັດຂອງຜູ້ອື່ນ.

ກ. ເຮົາຄວນພະຍາຍາມສະແດງຄວາມສຸພາບຕໍ່ທຸກຄົນທີ່ເຮົາພົບ, ບໍ່ວ່າເຂົາຈະເປັນເພື່ອນ ຫຼື ຄົນແປກໜ້າ.

ຂ. ___________________________________________________________
   ___________________________________________________________

ກ. ເຮົາຄວນກະຕັນຍູຮູ້ບຸນຄຸນສຳລັບຄວາມມັ່ງຄັ່ງ ທີ່ພຣະຜູ້ເປັນເຈົ້າຊົງປະທານແກ່ເຮົາ ແລະ ຄວນບໍລິຈາກໃຫ້ແກ່ການກຸສົນຢູ່ສະເໝີ ເມື່ອໄດ້ຮັບການຮ້ອງຂໍ.

ຂ. ________________________________________________

ກ. ຄົນເຮົາຄວນພະຍາຍາມທີ່ຈະບໍ່ໄປຂັດແຍ້ງກັບຄົນອື່ນ.

ຂ. ________________________________________________

ກ. ການໃຊ້ຊີວິດຢ່າງຄົນມີສິລະທັມ ໝາຍຄວາມວ່າເຮົາບໍ່ຄວນທຳອັນຕະລາຍຕໍ່ໃຜທັງນັ້ນ.

ຂ. ________________________________________________

ກ. ໃນການໃຊ້ຊີວິດຢູ່ຢ່າງສັນຕິເຮົາຕ້ອງຮຽນຮູ້ທີ່ຈະມີຄວາມອົດທົນ ຕໍ່ຜູ້ຄົນຈາກຫຼາກຫຼາຍວັດທະນະທຳ, ປະເພນີ ແລະ ສາສະໜາ.

ຂ. ________________________________________________

ກ. ຄົນເຮົາຄວນຮຽນຮູ້ທີ່ຈະລຸກຂຶ້ນຕໍ່ສູ້ເພື່ອສິດຂອງຕົນເອງ.

ຂ. ________________________________________________

ກ. ເປັນສິ່ງຈຳເປັນຢ່າງຫຼີກລ້ຽງບໍ່ໄດ້ ທີ່ລັດຖະບານຄວນໃຊ້ຊັບພະຍາກອນທີ່ຈຳເປັນໃນການສ້າງຫຼັກສູດທີ່ດີທີ່ສຸດເທົ່າທີ່ຈະເປັນໄປໄດ້ ສຳລັບໂຮງຮຽນທີ່ເປັນສະຖານທີ່ເຝິກອົບຮົມຄວາມຄິດ ແລະ ຈິດໃຈຂອງຜູ້ນຳໃນອານາຄົດຂອງພວກເຮົາ.

ຂ. ________________________________________________

ກ. ສະຖານທີ່ຄຸມຂັງຄວນໄດ້ຮັບການເຮັດໃຫ້ທັນສະໃໝ່, ເພື່ອທີ່ຈະຟື້ນຟູພວກຖືກໂທດ

ຂ. ________________________________________________

ໃນຕອນນີ້ຂໍໃຫ້ເຈົ້າທົບທວນປະໂຫຍກທີ່ເຈົ້າໄດ້ຂຽນໄປ ໂດຍນຳເອົາພຣະວັດຈະນະທີ່ຢູ່ຂ້າງລຸ່ມນີ້ມາພິຈາລະນາ. ພຣະວັດຈະນະຕອນທຳອິດ ຊ່ວຍໃຫ້ພວກເຮົາຄິດເຖິງຫົວໃຈຂອງເຮົາຕ້ອງບໍລິສຸດຈາກຄວາມປາດຖະໜາທາງໂລກນັ້ນຈະຕ້ອງ:

**"ໂອ ບຸດແຫ່ງປັດທະພີ! ແທ້ຈິງແລ້ວ, ຈົ່ງຮູ້ເຖີດວ່າ ຫົວໃຈທີ່ຍັງມີຄວາມອິດສາເຫຼືອຢູ່ ເຖິງແມ່ນມີພຽງໜ້ອຍທີ່ສຸດ ກໍ່ຈະໄປບໍ່ເຖິງອານາຈັກນິລັນດອນຂອງເຮົາ ແລະ ຈະບໍ່ໄດ້ສູດສຸຄົນທະລົດແຫ່ງຄວາມບໍລິສຸດ ທີ່ໂຊຍມາຈາກອານາຈັກບໍລິສຸດຂອງເຮົາ."** [34]

ກ່ຽວກັບວິທີທີ່ເຮົາຄວນປະຕິບັດຕໍ່ກັນແລະກັນນັ້ນ. ພຣະວັດຈະນະຕອນຕໍ່ໄປນີ້ ໄດ້ໃຫ້ຄວາມກະຈ່າງແຈ້ງບາງຢ່າງແກ່ເຮົາດັ່ງນີ້:

**"ດວງຈິດແຫ່ງຄວາມຮັກ ແລະ ຄວາມເມດຕາຮັກແພງນັ້ນຕ້ອງແຮງກ້າຫຼາຍທີ່ສຸດ ຈົນຄົນແປກໜ້າຍັງພົບວ່າຕົນເອງກາຍເປັນເພື່ອນ, ສັດຕູກາຍເປັນພີ່ນ້ອງທີ່ແທ້ຈິງ, ບໍ່ມີຄວາມແຕກຕ່າງໃດໆຢູ່ເລີຍລະຫວ່າງຄົນເລົ່ານີ້."** [35]

ພຣະວັດຈະນະຕອນຕໍ່ໄປນີ້ໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບທັດສະນະຄະຕິທີ່ຖືກຕ້ອງກ່ຽວກັບການໃຫ້:

**"ໂອ ບຸດແຫ່ງທຸລີ! ຜູ້ຍາກໄຮ້ຖອນຫາຍໃຈໃນຍາມຄ່ຳຄືນ, ຈົ່ງບອກຄົນຮັ່ງມີໃຫ້ຮູ້ໄວ້ເພື່ອບໍ່ໃຫ້ພວກເຂົາປະໝາດຈົນຫຼົງທາງໄປສູ່ຄວາມຫາຍຍະນະ ແລະ ຖືກພາກຈາກພຶກສາສະຫວັນແຫ່ງຄວາມມັ່ງຄັ່ງ. ການໃຫ້ ແລະ ຄວາມເອື້ອເຟື້ອ ຄືຄຸນລັກສະນະຂອງເຮົາ; ຂໍຄວາມສຸກສະຫວັດດີຈົ່ງມີແດ່ຜູ້ທີ່ປະດັບຕົນເອງດ້ວຍຄຸນນະທັມຂອງເຮົາ."** [36]

ພຣະວັດຈະນະຕອນຕໍ່ໄປນີ້ ກ່ຽວກັບການມີປະຕິສຳພັນຂອງເຮົາກັບຜູ້ອື່ນ:

**"ຈົ່ງເປັນຜູ້ອອກໝາຍຮຽກໃຫ້ຄົນຮັກກັນ ແລະ ຈົ່ງເມດຕາກະລຸນາຕໍ່ມະນຸດຊາດທັງໝົດ, ຈົ່ງຮັກລູກຫຼານຂອງມະນຸດ ແລະ ຮ່ວມຮັບຄວາມໂສກເສົ້າກັບພວກເຂົາ, ຈົ່ງເປັນໜຶ່ງໃນຜູ້ສະໜັບສະໜູນສັນຕິພາບ, ຈົ່ງຍຶບຍືນມິດຕະພາບຂອງທ່ານ, ຈົ່ງເປັນຜູ້ມີຄຸນຄ່າແກ່ການໄວ້ວາງໃຈ, ຈົ່ງເປັນຢາສະໝານສຳລັບທຸກບາດແຜ່, ຈົ່ງເປັນຢາຮັກສາສຳລັບທຸກຄວາມເຈັບປວດ, ຈົ່ງເຊື່ອມໂຍງຈິດວິນຍານເຂົ້າດ້ວຍກັນ, ຈົ່ງທ່ອງສວດຖ້ອຍຄຳພຣະວັດຈະນະແຫ່ງການນຳທາງ, ຈົ່ງຫຍຸ້ງຢູ່ກັບການບູຊາພຣະຜູ້ເປັນນາຍຂອງທ່ານ, ແລະ ຈົ່ງລຸກຂຶ້ນເພື່ອນຳປະຊາຊົນໄປໃນທາງທີ່ຖືກຕ້ອງ, ຈົ່ງເປັ່ງວາຈາຂອງທ່ານແລະເຜີຍແຜ່, ຈົ່ງໃຫ້ໃບໜ້າຂອງທ່ານເບີກບານດ້ວຍເພີງແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ. ຈົ່ງຢ່າຢຸດພັກແມ່ນແຕ່ວິນາທີ**

**ດຽວ, ຈົ່ງຢ່າສະແຫວງຫາທີ່ຖອນຫາຍໃຈຢ່າງສະບາຍອາລົມ. ດັ່ງນີ້ ຂໍໃຫ້ທ່ານກາຍເປັນເຄື່ອງໝາຍ ແລະ ສັນຍາລັກແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ແລະ ເປັນທຸງໄຊແຫ່ງກະລຸນາທິຄຸນຂອງພຣະອົງ."** [37]

ພຣະວັດຈະນະຕອນຕໍ່ໄປນີ້ ຕອບຄຳຖາມກ່ຽວກັບຄວາມປະພຶດທາງສິນລະທັມ:

**"ວັນເວລາທີ່ການບູຊາໂດຍໄຮ້ການປະຕິບັດ ຖືກພິຈາລະນາວ່າເປັນສິ່ງທີ່ພຽງພໍນັ້ນໝົດລົງແລ້ວ, ເວລານັ້ນມາເຖິງແລ້ວ ອັນເປັນທີ່ບໍ່ມີສິ່ງໃດນອກຈາກເຈດຕະນາອັນບໍລິສຸດທີ່ສຸດ ທີ່ຮັບການເສີມແຮງດ້ວຍການກະທຳອັນບໍລິສຸດຢ່າງໄຮ້ມົນທິນ ຈະຂຶ້ນໄປສູ່ບັນລັງຂອງພຣະຜູ້ຊົງຄວາມສູງສົ່ງທີ່ສຸດ ແລະ ເປັນທີ່ຍອມຮັບໄດ້ຂອງພຣະອົງ."** [38]

ກ່ຽວກັບການປະຕິບັດຕໍ່ຜູ້ຄົນທີ່ມາຈາກພູມຫຼັງທີ່ແຕກຕ່າງກັນ. ພຣະວັດຈະນະຕອນຕໍ່ໄປນີ້ໃຫ້ຄວາມກະຈ່າງແຈ້ງໃນບາງຢ່າງດັ່ງນີ້:

**"ຈົ່ງຄົບຫາສະມາຄົມກັບຜູ້ຄົນທຸກເຊື້ອຊາດ ແລະ ສາສະໜາຂອງໂລກ ດ້ວຍອາຈາສັດ, ຄວາມທ່ຽງທັມ, ຄວາມເຊື່ອຖື, ຄວາມເມດຕາກະລຸນາ, ຄວາມປາດຖະໜາດີ ແລະ ຄວາມມິໄມຕີຈິດຢ່າງທີ່ສຸດ; ເພື່ອວ່າໂລກແຫ່ງການດຳລົງຢູ່ທັງໝົດຈະເຕັມໄປດ້ວຍຄວາມປິຕິຍິນດີຢ່າງເຫຼືອລົ້ນອັນສັກສິດ ແຫ່ງກະລຸນາທິຄຸນແຫ່ງບາຮາ, ເພື່ອວ່າອະວິຊາ, ຄວາມເປັນສັດຕູ, ຄວາມກຽດຊັງ ແລະ ຄວາມແຄ້ນ ຈະສູນສິ້ນໄປຈາກໂລກ ແລະ ຄວາມມືດມົນຂອງຄວາມບາດໝາງກັນທ່າມກາງໝູ່ປະຊາຊາວໂລກ ຈະຫຼີກທາງໃຫ້ກັບແສງສະຫວ່າງແຫ່ງຄວາມສາມັກຄີ. ຫາກປະຊາຊົນຜູ້ໃດສະແດງຄວາມບໍ່ຊື່ສັດຕໍ່ທ່ານ ຈົ່ງສະແດງຄວາມຈົ່ງຮັກພັກດີຂອງທ່ານຕໍ່ເຂົາ, ຫາກພວກເຂົາອະຍຸຕິທັມກັບທ່ານ ກໍ່ຂໍໃຫ້ທ່ານສະແດງຄວາມຍຸຕິທັມຕໍ່ພວກເຂົາ, ຫາກພວກເຂົາຫຼີກຕົວຫ່າງຈາກທ່ານ ກໍ່ຈົ່ງດຶງດູດພວກເຂົາມາຫາທ່ານ, ຫາກພວກເຂົາສະແດງການເປັນສັດຕູ ກໍ່ຈົ່ງມີໄມຕີຈິດກັບພວກເຂົາ, ຫາກພວກເຂົາວາງຢາພິດແກ່ຊີວິດຂອງທ່ານ ກໍ່ຈົ່ງໃຫ້ຄວາມຫອມຫວານແກ່ຈິດວິນຍານຂອງພວກເຂົາ, ຫາກພວກເຂົາເຮັດໃຫ້ທ່ານມີບາດແຜ່ກໍ່ຈົ່ງເປັນຢາຮັກສາແຜ່ແກ່ພວກເຂົາ. ຄຸນສົມບັດເລົ່ານີ້ເປັນຂອງຜູ້ມີຄວາມຈິງໃຈ! ຄຸນສົມບັດເລົ່ານີ້ເປັນຂອງຜູ້ມີອາຈາສັດ."** [39]

ພຣະວັດຈະນະຕອນຕໍ່ໄປນີ້ຊ່ວຍໃຫ້ເຮົາເຂົ້າໃຈ ເຖິງການມີຄວາມສຳນຶກກ່ຽວກັບຄວາມເປັນອັນໜຶ່ງອັນດຽວກັນຂອງມະນຸດຊາດ ມີຜົນກັບຄວາມສຳພັນທາງສັງຄົມ.

**"ຂ້າພະເຈົ້າຫວັງວ່າ ທ່ານແຕ່ລະຄົນຈະກາຍເປັນຜູ້ທີ່ມີຄວາມຍຸຕິທັມ ແລະ ມຸ້ງຄວາມຄິດຂອງທ່ານໄປສູ່ຄວາມສາມັກຄີຂອງມະນຸດຊາດ; ທ່ານຈະບໍ່ທຳອັນຕະລາຍຕໍ່ເພື່ອນບ້ານຂອງ**

**ທ່ານເລີຍ ແລະ ຈະບໍ່ກ່າວໃນສິ່ງທີ່ບໍ່ດີກ່ຽວກັບຜູ້ໃດ, ທ່ານຈະເຄົາລົບໃນສິດຂອງມະນຸດທຸກຄົນ ແລະ ມີຄວາມເອົາໃຈໃສ່ຕໍ່ປະໂຫຍດສໍາລັບຜູ້ອື່ນຫຼາຍກວ່າຕົນເອງ.”** [40]

ພຣະວັດຈະນະຕອນຕໍ່ໄປນີ້ ກ່າວກ່ຽວກັບການເຂົ້າເຖິງການສຶກສາ:

**“ພຣະບາຮາອຸລລາຫ໌ ໄດ້ຊີ້ງປະກາດວ່າດ້ວຍເຫດທີ່ອະວິຊາ ແລະ ການຂາດການສຶກສາເປັນອຸປະສັກທີ່ແບ່ງແຍກມະນຸດອອກຈາກກັນ, ທຸກຄົນຕ້ອງໄດ້ຮັບການເຝິກອົບຮົມ ແລະການສັ່ງສອນ. ໂດຍການຈັດຫານີ້ ການຂາດຄວາມເຂົ້າໃຈເຊິ່ງກັນແລະກັນ ຈະໄດ້ຮັບການຢຽວຢາ ແລະ ຄວາມສາມັກຄີຂອງມະນຸດຊາດຈະໄດ້ຮັບການສົ່ງເສີມ ແລະ ຈະກ້າວໜ້າຕໍ່ໄປ. ການສຶກສາ-ສາກົນ ເປັນກົດສາກົນ.”** [41]

ພຣະວັດຈະນະຕອນຕໍ່ໄປນີ້ ກ່າວໄວ້ກ່ຽວກັບການບໍລິຫານຄວາມຍຸຕິທັມ:

**“ອະລິຍະທັມສະຫວັນ, ໃຫ້ການອົບຮົມແກ່ສະມາຊິກທຸກຄົນໃນສັງຄົມທີ່ບໍ່ມີຜູ້ໃດ, ຍົກເວັ້ນຄົນພຽງຈໍານວນໜ້ອຍຫຼາຍຈຶ່ງສາມາດລະເລີຍໄດ້ທີ່ຈະເຂົ້າທໍາການກໍ່ອາຊະຍາກໍາ. ດັ່ງນັ້ນຈຶ່ງມີຄວາມແຕກຕ່າງຢູ່ຢ່າງຫຼວງຫຼາຍ ລະຫວ່າງການປ້ອງກັນອາດຊະຍາກໍາ ໂດຍອາໄສມາດຕະການທີ່ຮຸນແຮງ, ແລະ ອາໄສການເຝິກອົບຮົມປະຊາຊົນໃຫ້ພວກເຂົາໄດ້ຮັບຄວາມສະຫວ່າງ ແລະ ເຮັດໃຫ້ພວກເຂົາມີຈິດໃຈທີ່ບໍລິສຸດ ໃນລັກສະນະທີ່ພວກເຂົາຈະລັງກຽດການກະທໍາທີ່ເປັນຄວາມຜິດທາງອາຍາທັງໝົດ ໂດຍປາດສະຈາກເຊິ່ງຄວາມຢ້ານກົວຕໍ່ການລົງໂທດ ຫຼື ການແກ້ແຄ້ນທີ່ຈະຕາມມາ. ແທ້ຈິງແລ້ວ ພວກເຂົາຈະພິຈາລະນາວ່າ ການລົງມືກະທໍາອາຊະຍາກໍານັ້ນເປັນຄວາມເສື່ອມເສັຍຢ່າງໃຫຍ່ຫຼວງ ແລະ ໃນຕົວມັນເອງແລ້ວເປັນການລົງໂທດທີ່ຮຸນແຮງທີ່ສຸດ.”** [42]

ເມື່ອທົບທວນຂໍ້ຄວາມຂ້າງເທິງແລ້ວ, ເຈົ້າອາດຕ້ອງການທວນຄືນຂໍ້ຄວາມທີ່ເຈົ້າໄດ້ຂຽນ ແລະພິຈາລະນາວ່າເຈົ້າສາມາດຂະຫຍາຍຄວາມຂໍ້ຄວາມເລົ່ານັ້ນໄດ້ແນວໃດ.

## ຕອນທີ 16

ເຮົາໄດ້ກ່າວເຖິງຈຸດປະສົງສອງລະດັບທີ່ພັກດັນໃຫ້ແຕ່ລະບຸກຄົນ ເຂົ້າຄວບຄຸມການຈະເລີນເຕີບໂຕທາງຈິດວິນຍານ ແລະ ສະຕິປັນຍາຂອງຕົນເອງ ແລະ ມີສ່ວນສະໜັບສະໜຸນຕໍ່ຄວາມຜາສຸກຂອງສັງຄົມ. ເຮົາໄດ້ເຫັນມາແລ້ວວ່າ ຈຸດປະສົງສອງລະດັບນີ້ມີຄວາມຈໍາເປັນສໍາລັບຄົນລຸ້ນເຍົາໃນປະຈຸບັນຫຼາຍພຽງໃດ, ສ້າງຄວາມເຂັ້ມແຂງດ້ວຍຄວາມເຂົ້າໃຈໃນທໍາມະຊາດ ແລະ ຂະໜາດຂອງການປ່ຽນແປງໃນຕົວບຸກຄົນ ແລະ ໃນສັງຄົມ ດັ່ງທີ່ຖືກຄາດການໄວ້ໃນພຣະວັດຈະນະ. ສິ່ງ

ທີ່ເຮົາຈຳເປັນທີ່ຈະຕ້ອງຄຳນຶງເຖິງກໍ່ຄື ຂະບວນການຂອງການປ່ຽນແປງຂອງບຸກຄົນ ແລະ ຂອງສັງຄົມນັ້ນມີຄວາມກ່ຽວໂຍງກັນຢ່າງໃກ້ຊິດ. ການພັດທະນາສັກະຍາພາບຂອງບຸກຄົນ-ຄົນໜຶ່ງ ແລະ ການເຮັດວຽກງານເພື່ອຄວາມຜາສຸກຂອງສັງຄົມບໍ່ອາດແຍກອອກຈາກກັນໄດ້, ເພາະມາດຕະຖານທາງສິລະທັມ ແລະ ຄວາມປະພຶດຂອງຄົນຜູ້ໜຶ່ງຈະເປັນສິ່ງຫຼໍ່ຫຼອມສະພາບແວດລ້ອມຂອງຄົນຜູ້ນັ້ນ ແລະ ໃນທາງກັບກັນ, ກໍ່ໄດ້ຮັບຜົນກະທົບຢ່າງຫຼວງຫຼາຍຈາກມັນ. ຈົດໝາຍສະບັບໜຶ່ງທີ່ຂຽນໃນນາມຂອງ ທ່ານ ສາສະນະພິບານ ກ່າວໄວ້ວ່າ:

> **"ເຮົາບໍ່ສາມາດແຍກຫົວໃຈຂອງມະນຸດ ອອກຈາກສິ່ງແວດລ້ອມພາຍນອກຂອງເຮົາ ແລະ ກ່າວວ່າ ເວລາໃດມີການປະຕິຮູບຝ່າຍໃດຝ່າຍໜຶ່ງທຸກສິ່ງທຸກຢ່າງກໍ່ຈະດີຂຶ້ນເອງ. ມະນຸດເປັນນ້ຳໜຶ່ງດຽວກັນກັບໂລກ. ຈິດໃຈຂອງມະນຸດປັ້ນແຕ່ງສິ່ງແວດລ້ອມ ແລະ ຖືກກະທົບຢ່າງເລິກເຊິ່ງໂດຍສິ່ງແວດລ້ອມເຊັ່ນດຽວກັນ. ທັງສອງມີຜົນຕໍ່ກັນແລະກັນ ແລະ ການປ່ຽນແປງທຸກຢ່າງທີ່ຍັ້ງຢືນໃນຊີວິດຂອງມະນຸດ ຄືຜົນທີ່ມາຈາກປະຕິກິລິຍາຕໍ່ກັນແລະກັນນັ້ນເອງ."** [43]

ອີງໃສ່ພຣະວັດຈະນະຂ້າງເທິງ, ຂໍໃຫ້ພິຈາລະນາວ່າປະໂຫຍກຕໍ່ໄປນີ້ອັນໃດ ຖືກຕ້ອງ:

______ ບຸກຄົນຈະປ່ຽນແປງໄດ້ກໍ່ຕໍ່ເມື່ອສັງຄົມມີການປະຕິຮູບຢ່າງສົມບູນແລ້ວເທົ່ານັ້ນ.

______ ຄວາມເຈັບປ່ວຍຂອງສັງຄົມຈະຫາຍໄປທັງໝົດກໍ່ຕໍ່ເມື່ອສະມາຊິກແຕ່ລະຄົນຂອງສັງຄົມເປັນຜູ້ມີຄຸນນະທັມເທົ່ານັ້ນ.

______ ເມື່ອມີການປະກາດໃຊ້ກົດໝາຍທີ່ຍຸຕິທັມ ສັງຄົມກໍ່ຈະປາດສະຈາກການກົດຂີ່, ໂດຍບໍ່ຕ້ອງ ໄປຄຳນຶງວ່າ ແຕ່ລະບຸກຄົນຈະປະພຶດຕົນຢ່າງໃດ.

______ ສັງຄົມຈະປາດສະຈາກການກົດຂີ່ໄດ້ ເມື່ອສາມາຊິກແຕ່ລະຄົນຮຽນຮູ້ທີ່ຈະເປັນຄົນຍຸຕິທັມ.

______ ສະມາຊິກທຸກຄົນໃນສັງຄົມສາມາດເປັນຜູ້ມີຄວາມຍຸຕິທັມໄດ້ ແມ່ນວ່າລະບົບກົດໝາຍທີ່ມີຢູ່ໃນສັງຄົມນັ້ນຈະໄຮ້ຄວາມຍຸຕິທັມກໍ່ຕາມ.

______ ມະນຸດຊາດຈະກ້າວໜ້າໄປ ເມື່ອມະນຸດແຕ່ລະຄົນມີການປ່ຽນແປງທາງຈິດວິນຍານ.

______ ຄວາມປະພຶດຂອງບຸກຄົນມີອິດທິພົນຕໍ່ສະພາບແວດລ້ອມຂອງສັງຄົມ.

______ ສັງຄົມທີ່ຍຸດຕິທັມຈະວິວັດທະນາການໄປເມື່ອສັງຄົມນັ້ນພະຍາຍາມກຳຈັດໂຄງສ້າງທີ່ບໍ່ຍຸຕິທັມອອກໄປແລະເມື່ອສະມາຊິກແຕ່ລະຄົນຂອງສັງຄົມນັ້ນໄດ້ຮັບການສຶກສາໃຫ້ເປັນຄົນມີໃຈຍຸດຕິທັມ ແລະ ເປັນຜູ້ສະແຫວງຫາຄວາມຈິງ.

______ ບໍ່ມີໃຜສາມາດໜີໄປຈາກຜົນກະທົບຂອງສະພາບແວດລ້ອມໄດ້.

______ ມະນຸດສາມາດເອົາຊະນະອິດທິພົນໃນທາງລົບຂອງສະພາບແວດລ້ອມໄດ້

ໂດຍຄວາມຊ່ວຍເຫຼືອຂອງພະລັງທາງຈິດວິນຍານຂອງພວກເຂົາ.

______ ເມື່ອທຸກຄົນຮຽນຮູ້ທີ່ຈະຮັກຄົນອື່ນແລ້ວ ອັກຄະຕິກໍ່ຈະຫາຍໄປ.

______ ອັກຄະຕິຈະຫາຍໄປກໍ່ຕໍ່ເມື່ອສັງຄົມໄດ້ກຳຈັດທຸກຮ່ອງຮອຍຂອງການແບ່ງແຍກ ອອກໄປໃຫ້ໝົດສິ້ນຈາກກົດ ແລະ ສະຖາບັນຂອງສັງຄົມແລ້ວເທົ່ານັ້ນ.

______ ອັກຄະຕິຈະຖືກຍົກເລີກໄປໄດ້ໂດຍການປະກາດໃຊ້ກົດໝາຍທີ່ຍຸຕິທັມ ແລະການເຝິກຝົນໃຫ້ຈິດວິນຍານທັງຫຼາຍຄົ້ນຄວ້າຫາຄວາມຈິງແລະຄົບຫາສະມາຄົມກັບທຸກຄົນດ້ວຍຄວາມຮັກ ແລະ ມິດຕະພາບ.

______ ການສະຖາປານາຄວາມສາມັກຄີໃນໂລກນີ້ ຈຳເປັນຕ້ອງມີການປ່ຽນແປງ ໃນແຕ່ລະບຸກຄົນ ແລະ ໂຄງສ້າງຂອງສັງຄົມ.

## **ຕອນທີ 17**

ແນວຄວາມຄິດທີ່ນຳສະເໜີໄປໃນຕອນທີ່ແລ້ວ ນຳເຮົາກັບໄປສູ່ຄຳຖາມກ່ຽວກັບການຮັບໃຊ້, ເພາະໃນສະໜາມຂອງການຮັບໃຊ້ນັ້ນເອງ ທີ່ເຮົາພັດທະນາສັກກະຍາພາບຕ່າງໆຂອງເຮົາ ແລະ ມີຜົນກະທົບຕໍ່ການປ່ຽນແປງຂອງສັງຄົມ. ການເຂົ້າມີສ່ວນຮ່ວມໃນຂະບວນການຂອງການປ່ຽນແປງທາງສັງຄົມບົ່ງບອກເຖິງຊີວິດທີ່ອຸທິດໃຫ້ການຮັບໃຊ້ນັ້ນ ຈຳເປັນຕ້ອງໄດ້ຮັບການກ່າວເຖິງໃຫ້ລະອຽດຕື່ມຈັກໜ້ອຍ. ຢ່າງໃດກໍ່ຕາມ ສິ່ງທີ່ອາດຈະຕ້ອງໃຊ້ຄວາມຄິດເພີ່ມເຕີມກໍ່ຄື ວິທີການຂອງການຮັບໃຊ້ນັ້ນມີສ່ວນສະໜັບສະໜູນຕໍ່ການຈະເລີນເຕີບໂຕທາງສະຕິປັນຍາ ແລະ ທາງຈິດວິນຍານຂອງບຸກຄົນຜູ້ນັ້ນ. ຂ້າງລຸ່ມນີ້ເປັນລາຍການກິດຈະກຳ. ຂໍໃຫ້ເຈົ້າຄິດເຖິງຄຸນລັກສະນະທາງທັມບາງຢ່າງ ທີ່ຈຳເປັນໃນການທຳກິດຈະກຳແຕ່ລະຢ່າງ ແລະ ໃນການຮັບປະກັນຄວາມມີປະສິດທິຜົນ ຂອງກິດຈະກຳນັ້ນໆ.

ກ. ການຈັດການຊຸມນຸມເພື່ອການອະທິຖານຮ່ວມກັນເປັນປະຈຳ ໃນລະແວກບ້ານຫຼືໃນໝູ່ບ້ານ:

______________________________

______________________________

______________________________

ຂ. ເຂົ້າຮ່ວມໂຄງການຢ່າງຕໍ່ເນື່ອງ ໃນການຢ້ຽມຢາມບ້ານໝູ່ເພື່ອນ ແລະ ເພື່ອນບ້ານເພື່ອສົນທະນາຫົວຂໍ້ທາງຈິດວິນຍານ ທີ່ມາຈາກຄຳສອນຂອງຄວາມເຊື່ອ ແລະ ສະຊັບຄວາມສຳພັນຂອງການສາມັກຄີທັມ: ______________________________

______________________________

______________________________

______________________________

ຄ. ການສອນຊັ້ນຮຽນທີ່ໃຫ້ການສຶກສາທາງຈິດວິນຍານແກ່ເດັກນ້ອຍເປັນປະຈຳ ໃນໝູ່ບ້ານຫຼືໃນລະແວກບ້ານ: ______________________________

______________________________

______________________________

ງ. ການໃຫ້ຄວາມຊ່ວຍເຫຼືອແກ່ຄວາມພະຍາຍາມຂອງກຸ່ມເຍົາວະຊົນ, ເປັນໄລຍະເວລາຍາວນານຮ່ວມກັບຜູ້ຊຸກຍູ້ກຸ່ມເຍົາວະຊົນ ເຊິ່ງເປັນຜູ້ທີ່ຄອຍຊີ້ແນະກິດຈະກຳຂອງກຸ່ມເຍົາວະຊົນ: ______________________________

______________________________

______________________________

ຈ. ຢ້ຽມຢາມຜູ້ປົກຄອງທີ່ມີໄວໜຸ່ມເປັນປະຈຳ ໃຫ້ເຂົ້າໃນໂຄງການສຶກສາທີ່ສະຖາບັນສົ່ງເສີມ ແລະ ໃຫ້ພວກເຂົາສາມາດສົນທະນາໃນປະເດັນສຳຄັນ ໃນການພັດທະນາລູກຊາຍລູກສາຍຂອງພວກເຂົາ: ______________________________

______________________________

______________________________

ບົດເຝິກຫັດຂ້າງເທິງໄດ້ຊ່ວຍໃຫ້ພວກເຮົາຄິດກ່ຽວກັບ ຄຸນລັກສະນະທາງທັມ ແລະ ທັດສະນະຄະຕິ ຈະມີສ່ວນຊ່ວຍແນວໃດຕໍ່ຄວາມສາມາດຂອງບຸກຄົນ ໃນສືບຕໍ່ປະຕິບັດການຮັບໃຊ້. ແຕ່ກໍ່ເປັນຄວາມຈິງທີ່ເທົ່າທຽມກັນໃນການປະຕິບັດຮັບໃຊ້ ເຮົາສາມາດພັດທະນາ ແລະ ສ້າງຄວາມເຂັ້ມແຂງແກ່ຄຸນລັກສະນະດັ່ງກ່າວເລົ່ານັ້ນ. ຂ້າງລຸ່ມນີ້ເປັນລາຍການຂອງຄຸນລັກສະນະທາງທັມບາງຢ່າງທີ່ພວກເຮົາທຸກຄົນບຸກບືນພະຍາຍາມຮຽນຮູ້. ສຳລັບແຕ່ລະກຸ່ມ, ຂໍໃຫ້ເລືອກໜຶ່ງໃນກິດຈະກຳທາງຂ້າງເທິງ ແລະ ອະທິບາຍວ່າເຈົ້າຄິດວ່າກິດຈະກຳດັ່ງກ່າວ ຈະສົ່ງຜົນຕໍ່ການພັດທະນາ ຄຸນລັກສະນະທາງທັມດັ່ງກ່າວ ໃຫ້ແກ່ຜູ້ກະທຳໄດ້ໃນທາງໃດແດ່.

ກ. ວາຈາສັດ, ຄວາມໄວ້ວາງໃຈໄດ້, ແລະ ຄວາມຍຸຕິທັມ: ______________________________

______________________________

______________________________

______________________________

______________________________

ຂ. ຄວາມອົດກັ້ນ ແລະ ຄວາມເມດຕາ:________________________________

_______________________________________________

_______________________________________________

_______________________________________________

_______________________________________________

ຄ. ຄວາມໜ້າເຄົາລົບ, ຄວາມຈິງໃຈ, ແລະ ຄວາມຜ່ອງໃສ່: ______________

_______________________________________________

_______________________________________________

_______________________________________________

_______________________________________________

ງ. ຄວາມກ້າຫານ, ຄວາມໄວ້ວາງໃຈໃນພຣະຜູ້ເປັນເຈົ້າ, ແລະ ຄວາມຖ່ອມຕົນ: ____

_______________________________________________

_______________________________________________

_______________________________________________

_______________________________________________

ຈ. ການຍອມຮັບໃນສິ່ງທີ່ບໍ່ປາດຖະໜາ ແລະ ຄວາມຍອມຈຳນົນຕໍ່ພຣະປະສົງຂອງພຣະຜູ້ເປັນເຈົ້າ:________________________________________

_______________________________________________

_______________________________________________

_______________________________________________

## ຕອນທີ 18

ການຮັບໃຊ້ມີຄວາມເຊື່ອມໂຍງການຢ່າງໃກ້ຊິດ ກັບສະຖານະຄວາມເປັນຢູ່ຂອງເຮົາ. ເມື່ອເຮົາໄດ້ຮັບແຮງກະຕຸ້ນຈາກເຈດຕະນາລົມຂອງການຮັບໃຊ້ຢ່າງບໍ່ເຫັນແກ່ຕົວແລ້ວ, ທຸກປະຕິສຳພັນທີ່ເຮົາມີ, ທຸກການກະທຳໃນການໃຊ້ຊີວິດຕາມວິຊາຊີບຂອງເຮົາ, ໃນການທີ່ເຮົາຕິດຕໍ່ກັບຄົນອື່ນໃນ ຖານະສະມາຊິກຂອງຊຸມຊົນ ລ້ວນໄດ້ຮັບອິດທິພົນຈາກເຈດຕະນາລົມນີ້. ດັ່ງນັ້ນ ບໍ່ວ່າເຮົາຈະອຸທິດໃຫ້ກັບການຮັບໃຊ້ໃດກໍ່ຕາມ ເຮົາກໍ່ຕ້ອງສຳນຶກຢູ່ສະເໝີເຖິງຄວາມຈິງທີ່ວ່າ ມີແຜນງານອັນເປັນລະບົບ ສຳລັບການເຜີຍແຜ່ສາສະໜາຂອງ ພຣະບາຮາອຸລລາຫ໌ ໄປຍັງປະຊາຊົນຂອງໂລກ, ຂໍ້ຄວາມທີ່ປະກາດຄວາມເປັນໜຶ່ງດຽວຂອງມະນຸດຊາດ, ຮຽກຮ້ອງໃຫ້ມີການຮວມກັນເປັນໜຶ່ງດຽວ, ແລະ ຈັດຕຽມກົດ ແລະ ລະບຽບ

ຫຼັກການ, ຄຳສອນທາງຈິດວິນຍານ ແລະ ສັງຄົມ, ເຊິ່ງພຽງຢ່າງດຽວເທົ່ານັ້ນກໍສາມາດສ້າງຮູບແບບສຳລັບສັງຄົມໃນອະນາຄົດ ທີ່ແຕກຕ່າງໄປຈາກແບບທີ່ເຄີຍເຫັນມາໃນອາດີດ. ແຜນນີ້ກຳໜົດໄດ້ໂດຍພຣະອັບດຸລບາຮາ ພຣະອົງເອງ, ແຜນງານບໍ່ໄດ້ສະແຫວງຫາສິ່ງອື່ນໃດນອກຈາກການຟື້ນຟູທາງຈິດວິນຍານຂອງໂລກ, ແລະ ເມື່ອມັນຄ່ອຍເປີດເຜີຍອອກມາຜ່ານຂັ້ນຕອນທີ່ແຕກຕ່າງ, ແລະ ປະຊາຊົນຈຳນວນຫຼາຍຂຶ້ນເລື້ອຍໆ ຮ່ວມພະຍາຍາມປະຕິບັດຕາມແຜນນັ້ນ, "ທາງເລືອກທີ່ມອງເຫັນໄດ້ສຳລັບຄວາມຂັດແຍ້ງທີ່ຄຸ້ນເຄີຍຂອງສັງຄົມກຳລັງເກີດຂຶ້ນ." ຕໍ່ສິ່ງນີ້ - ພວກເຮົາຄວນອຸທິດຕົນໃຫ້ກັບ - ແຜນງານສະຫວັນ. ຕໍ່ສິ່ງນີ້ ຜູ້ພິທັກສາສະໜາໄດ້ອ້າງອີງວ່າເປັນ "ແຜນງານອັນຍິ່ງໃຫຍ່ທີ່ສຸດເທົ່າທີ່ເຄີຍສ້າງມາ ໂດຍພະລັງອັນສ້າງສັນຂອງພຣະນາມທີ່ຍິ່ງໃຫຍ່ທີ່ສຸດ". ທ່ານບອກພວກເຮົາວ່າແຜນງານນີ້ "ກຳລັງກ້າວໄປຂ້າງໜ້າ",

> **"...ດ້ວຍການດຳເນີນໄປ ໂດຍພະລັງຄັບເຄື່ອນຫຼາຍຂຶ້ນໃນທຸກໆວັນທີ່ຜ່ານໄປ, ພ້ອມກັບການຮື້ຖອນສິ່ງກີດຂວາງໃນທຸກສະຖານທີ່ ການຂະຫຍາຍຂອບເຂດປະຕິບັດການທີ່ເປັນປະໂຫຍດຢ່າງບໍ່ອາດຕ້ານທານໄດ້ທ່າມກາງປະຊາຊົນ ແລະ ເຊື້ອຊາດ, ທີ່ມີຄວາມຫຼາກຫຼາຍ, ແລະ ການເປີດເຜີຍສັນຍາລັກອັນຈັບໃຈຂອງຄວາມເຂັ້ມແຂງທີ່ຊ້ອນເລັ້ນຢູ່ພາຍໃນແຜນງານນີ້ ກຳລັງກ້າວໄປສູ່ການພິຊິດຈິດວິນຍານຂອງທັງໂລກນີ້."** [44]

ໂດຍຜ່ານແຜນງານສະຫວັນ ແສງສະຫວ່າງຂອງການເປີດເຜີຍພຣະທັມຂອງ ພຣະບາຮາອຸລລາຫ໌ ຈະຊຶມຊາບໄປທົ່ວທຸກສ່ວນຂອງໂລກ ແລະ ປ່ຽນແປງວິຖີຊີວິດຂອງບຸກຄົນ ແລະ ສ່ວນລວມ. ທ່ານ ໂຊກີ ເອັຟເຟນດີ້ ຍັງໃຫ້ການຮັບຮອງເພີ່ມເຕີມອີກວ່າ:

> **"ສະໜາມນັ້ນກວ້າງໃຫຍ່ໄພສານຢ່າງແທ້ຈິງ, ຊ່ວງເວລາກໍ່ວິກິດຫຼາຍ, ສາສະໜານີ້ຊ່າງຍິ່ງໃຫຍ່ທີ່ສຸດ ແລະ ຜູ້ທີ່ຮັບໃຊ້ກໍ່ມີຢູ່ໜ້ອຍທີ່ສຸດ, ເວລາກໍ່ສັ້ນຫຼາຍ ແລະ ສິດທິພິເສດນັ້ນຊ່າງລ້ຳຄ່າຍິ່ງ ຈົນບໍ່ມີສາວົກຄົນໃດຂອງສາສະໜາຂອງພຣະບາຮາອຸລລາຫ໌ ທີ່ມີຄຸນຄ່າພໍຕໍ່ການສະແດງອອກເຖິງພຣະນາມຂອງພຣະອົງ, ຈະສາມາດຍອມໃຫ້ມີຊ່ວງເວລາຂອງການລັງເລໃຈໄດ້ແມ່ນພຽງນາທີດຽວ."** [45]

ໃນແຕ່ລະໄລຍະຂອງການເປີດເຜີຍອອກມາຂອງແຜນງານສະຫວັນນັ້ນ ແມ່ນຈະຖືກໝາຍໄວ້ໂດຍການສອນສາສະໜາທີ່ມີເຄືອຂ່າຍຄອບຄຸມທັງໂລກ ມີຜູ້ນຳຂອງສາສະໜາເປັນຜູ້ກຳໜົດຂຶ້ນ. ແຕ່ລະແຜນງານຈະມີເງື່ອນໄຂທີ່ຈຳເປັນບາງຢ່າງ ແລະ ສ້າງຄວາມສຳເລັດ ແລະ ບົດຮຽນທີ່ໄດ້ສຶກສາຈາກຄັ້ງກ່ອນ. ດ້ວຍຄວາມພະຍາຍາມທີ່ດຳເນີນການຕາມແຜນງານຕໍ່ເນື່ອງ, "ຫຼັກແນວຄິດ, ແນວຄິດ ແລະ ຍຸດທະສາດຕ່າງໆທີ່ເປັນສາກົນ" ຕໍ່ວິສາຫະກິດທີ່ເຮົາມີສ່ວນຮ່ວມໄດ້ເປັນຮູບເປັນຮ່າງສູ່ "ຂອບເຂດການດຳເນີນງານ". ຂອບເຂດການດຳເນີນງານນີ້ເອງ ທີ່ສ້າງຮູບແບບໃຫ້ກັບການດຳເນີນການຮ່ວມກັນ ແລະ ເຮັດໃຫ້ແນ່ໃຈວ່າເຮົາມີຄວາມສະໝ່ຳສະເໝີ ໃນສິ່ງທີ່ເຮົາກະທຳ. ເຈົ້າຈະມີໂອກາດສຳຫຼວດ

ລັກສະນະຂອງຂອບເຂດການດຳເນີນງານນີ້ ໃນຫຼັກສູດຕໍ່ໄປໃນອະນາຄົດ. ໃນຕອນນີ້ ສິ່ງສຳຄັນຄື ຕ້ອງຕະໜັກວ່າການມີຢູ່ຂອງຂອບເຂດການດຳເນີນງານ ເຮັດໃຫ້ມັນເປັນໄປໄດ້ສຳລັບ "ການຂະຫຍາຍບຸກຄົນທີ່ເປັນກຸ່ມແກນກາງ" ໃນລະດັບທ້ອງຖິ່ນເພື່ອສ້າງຄວາມເຄື່ອນໄຫວຂອງປະຊາກອນ "ໄປສູ່ເປົ້າໝາຍຂອງລະບົບໂລກໃໝ່". ດ້ວຍເຫດນີ້, ສານທີ່ຂຽນໂດຍສະພາຍຸຕິທັມແຫ່ງສາກົນ ເຖິງຜູ້ເຂົ້າຮ່ວມໃນຊຸດກອງປະຊຸມຊາວໜຸ່ມ ທີ່ໄດ້ຈັດຂຶ້ນທົ່ວໂລກໃນປີ 2013 ອະທິບາຍວ່າ:

> **"ຫຼັງຈາກຜ່ານໄປຫຼາຍທົດສະວັດ, ຜູ້ເຮັດວຽກທີ່ໂອບອ້ອມຮອບໂລກຂອງຊຸມຊົນທີ່ຢູ່ຫ່າງໄປນີ້ ເພື່ອໃຫ້ໄດ້ຄວາມເຂົ້າໃຈທີ່ພຽງພໍຫຼາຍຂຶ້ນ ກ່ຽວກັບການເປີດເຜີຍພຣະທັມຂອງ ພຣະບາຮາອຸລລາຫ໌ ແລະ ນຳຫຼັກການທີ່ຍຶດຖືໄວ້ຈົນເຖິງທີ່ສຸດ ໃນການເກີດຂຶ້ນຂອງຂອບເຂດການດຳເນີນການທີ່ມີສັກກະຍະພາບ ເຊິ່ງໄດ້ຮັບການຂັດເກົາຜ່ານທາງປະສົບການ. ເຈົ້າໂຊກດີທີ່ຄຸ້ນເຄີຍກັບວິທີການ ແລະ ແນວທາງຂອງການປະຕິບັດ ເຊິ່ງເປັນທີ່ຍອມຮັບການດີໃນປັດຈຸບັນ. ດ້ວຍຄວາມອົດສາພະຍາຍາມໃນການນຳໄປປະຕິບັດ, ພວກເຈົ້າຫຼາຍຄົນຈະໄດ້ເປັນສັນຍານແຫ່ງພະລັງການສ້າງສັງຄົມ ຂອງຄຳສອນອັນສັກສິດດ້ວຍຕົນເອງແລ້ວ. ໃນກອງປະຊຸມທີ່ເຈົ້າເຂົ້າຮ່ວມ, ເຈົ້າໄດ້ຮັບເຊີນໃຫ້ພິຈາລະນາການມີສ່ວນຮ່ວມທີ່ຊາວໜຸ່ມຄົນໃດກໍຕາມ ທີ່ປະສົງຈະຕອບຮັບຄຳຮຽກຮ້ອງຂອງພຣະບາຮາອຸລລາຫ໌ ແລະ ຊ່ວຍປົດປ່ອຍອຳນາດນັ້ນໄດ້."** [46]

ແລະໃນສານສະບັບດຽວກັນກ່າວເພີ່ມເຕີມວ່າ:

> **"ຄວາມເປັນໄປໄດ້ທີ່ນຳສະເໜີ ໂດຍການດຳເນີນການຮ່ວມກັນນັ້ນຊັດເຈນ ໂດຍສະເພາະຢ່າງຍິ່ງໃນວຽກງານການສ້າງຊຸມຊົນ, ຂະບວນການທີ່ກຳລັງໄດ້ຮັບແຮງພັກດັນໃນຫຼາຍຂົງເຂດ ແລະ ໃນລະແວກບ້ານທົ່ວໂລກ ທີ່ກາຍມາເປັນສູນກາງຂອງກິດຈະກຳທີ່ເຂັ້ມຂົ້ນ. ຊາວໜຸ່ມມັກຈະຢູ່ແຖວໜ້າຂອງວຽກງານໃນສະພາບແວດລ້ອມເລົ່ານີ້ - ບໍ່ພຽງແຕ່ຊາວໜຸ່ມບາຮາຍເທົ່ານັ້ນ, ແຕ່ແມ່ນຊາວໜຸ່ມທີ່ຄິດຄືກັນ ຜູ້ທີ່ສາມາດເປັນຜົນບວກຂອງສິ່ງທີ່ບາຮາຍໄດ້ລິເລີ້ມ ແລະ ເຂົ້າໃຈວິໄສທັດທີ່ເຊື່ອງຊ້ອນຢູ່ຂອງຄວາມສາມັກຄີ ແລະ ການປ່ຽນແປງທາງຈິດວິນຍານ. ໃນສະຖານທີ່ດັ່ງກ່າວ, ຄວາມຈຳເປັນທີ່ຈະຕ້ອງແບ່ງປັນການເປີດເຜີຍພຣະທັມຂອງພຣະບາຮາອຸລລາຫ໌ ດ້ວຍໃຈທີ່ເປີດກວ້າງ ແລະ ສຳຫຼວດຄວາມໝາຍຂອງສານຂອງພຣະອົງທີ່ມີຕໍ່ໂລກປັດຈຸບັນນັ້ນຮູ້ສຶກໄດ້ຢ່າງດີ. ເມື່ອສັງຄົມຈຳນວນຫຼາຍເຊີນຊວນໃນເມີນເສີຍ ແລະ ບໍ່ສົນໃຈ ຫຼືຮ້າຍໄປກວ່ານັ້ນ, ກໍສົ່ງເສີມຄວາມປະພຶດທີ່ເປັນອັນຕະລາຍຕໍ່ຕົນເອງ ແລະ ຜູ້ອື່ນ, ຜູ້ທີ່ເພີ່ມຂີດຄວາມສາມາດຂອງປະຊາກອນໃນການປູກຝັງ ແລະ ຮັກສາຮູບແບບຊີວິດໃນຊຸມຊົນທີ່ມີຄຸນຄ່າທາງຈິດວິນຍານນັ້ນ ສະເໜີຄວາມແຕກຕ່າງທີ່ຊັດເຈນ."** [47]

ແລະ ໃນສານສະບັບອື່ນໆດ້ວຍຖ້ອຍຄຳເລົ່ານີ້ ສະພາຍຸຕິທັມແຫ່ງສາກົນ ສົ່ງເສີມທັກສະຂອງເຍົາວະຊົນບາຮາຍ ແລະ ຜູ້ທີ່ປາດຖະໜາຈະເຂົ້າຮ່ວມກັບພວກເຂົາໃນການຍົກລະດັບຊີວິດການຮັບໃຊ້:

**"ເຖິງສາສະນິກະຊົນລຸ້ນເຍົາທຸກໆລຸ້ນຄົນ ມີໂອກາດທີ່ຈະມີສ່ວນຮ່ວມໃນໂຊກຊະຕາຂອງມະນຸດຊາດ, ໂດຍສະເພາະໃນຊ່ວງເວລາແຫ່ງຊີວິດຂອງພວກເຂົາ. ສຳລັບຄົນລຸ້ນປັດຈຸບັນ, ເຖິງເວລາແລ້ວທີ່ຈະຕ້ອງມາທົບທວນ, ຕັ້ງໝັ້ນ, ເສີມສ້າງຕົວພວກເຂົາເອງເພື່ອຊີວິດແຫ່ງການຮັບໃຊ້ ຈາກພຣະພອນທີ່ຈະຫຼັ່ງໄຫຼມາຢ່າງຫຼວງຫຼາຍ. ໃນການອະທິຖານຂອງພວກເຮົານະທໍລະນີປະຕູອັນສັກສິດ, ພວກເຮົາຂໍວິງວອນຕໍ່ຄວາມງາມມາແຕ່ບູຮານວ່າ, ອອກຈາກມະນຸດຊາດທີ່ເພີ້ຝັນ ແລະ ສັບສົນ, ພຣະອົງຊົງກັ່ນຕອງດວງວິນຍານອັນບໍລິສຸດ ປະສິດປະສາດດ້ວຍສາຍຕາອັນຊັດເຈນ: ຊາວໜຸ່ມຜູ້ມີຄວາມຊື່ສັດ ແລະ ຄວາມທ່ຽງທັມຈະບໍ່ຈົມຢູ່ກັບຄວາມຜິດພາບຂອງຜູ້ອື່ນ ແລະ ບໍ່ຍຶດຕິດກັບຂໍ້ພົບຜ່ອງຂອງຕົນເອງ; ຊາວໜຸ່ມຜູ້ທີ່ມອງໄປທີ່ທ່ານນາຍ ແລະ 'ນຳພາຜູ້ທີ່ຖືກກີດກັ້ນ ໃຫ້ເຂົ້າສູ່ແວດວອງຂອງເພື່ອນສະໜິດ'; ຊາວໜຸ່ມຜູ້ທີ່ສຳນຶກເຖິງຄວາມລົ້ມເຫຼວຂອງສັງຄົມ ກະຕຸ້ນໃຫ້ພວກເຂົາເຮັດວຽກເພື່ອການປ່ຽນແປງຂອງສັງຄົມ, ບໍ່ແມ່ນເອົາຕົວເອງອອກຫ່າງຈາກຄວາມລົ້ມເຫຼວຂອງສັງຄົມ; ຊາວໜຸ່ມຜູ້ທີ່ບໍ່ວ່າຈະດ້ວຍມູນຄ່າໃດກໍຕາມ, ເຂົາຈະປະຕິເສດມອງຂ້າມຄວາມບໍ່ສະເໝີພາບໃນຫຼາຍໆຊົນຊາດ ແລະ ຈະເຮັດວຽກ, ໃນທາງກົງກັນຂ້າມ, ກໍເພື່ອ 'ແສງສະຫວ່າງແຫ່ງຄວາມຍຸຕິທັມ ຈະກະຈາຍແສງລົງມາສູ່ໂລກທັງໝົດ.'"** [48]

ບັນດາພຣະວັດຈະນະຂ້າງເທິງ ໜ້າຈະຄາຍຄວາມສົງໃສ່ໃນຈິດໃຈຂອງເຈົ້າໜ້ອຍໜຶ່ງ ກ່ຽວກັບຄວາມຈຳເປັນທີ່ຫຼີກຫຼ່ຽງບໍ່ໄດ້ສຳລັບຄົນລຸ້ນເຍົາໄວ ທີ່ຈະກ້າວໄປຢູ່ແນວໜ້າຂອງບັນດາຜູ້ທີ່ກຳລັງຮັບໃຊ້ແຜນງານສະຫວັນ. ເພື່ອຈົບຕອນນີ້, ໜ້າຈະເປັນສິ່ງທີ່ເປັນປະໂຫຍດຖ້າເຈົ້າທີ່ຈະທົບທວນກ່ຽວກັບສານຕໍ່ໄປນີ້ຂອງ ສະພາຍຸຕິທັມແຫ່ງສາກົນ ທີ່ຂຽນເຖິງການຊຸມນຸມຊາວໜຸ່ມໃນ 2000 ແຫ່ງທີ່ຈັດຂຶ້ນໃນແຖບອາເມລິກາລາຕິນ:

**"ໃນຂະນະທີ່ຊາວໜຸ່ມລຸ້ນນີ້ກຳລັງແບກຫາບຄວາມຮັບຜິດຊອບ ຂອງການດຳເນີນກິດຈະກຳຂອງສັງຄົມ, ພວກເຂົາຈະປະສົບກັບຜູ້ມີທັດສະນະທີ່ມີຄວາມແຕກຕ່າງກັນຢ່າງໜ້າງຶ້ງງວຍ. ໃນດ້ານໜຶ່ງ, ພູມມີພາກນີ້ສາມາດອວດຄວາມສຳເລັດອັນສຸດຍອດໄດ້ຢ່າງຍຸຕິທັມ ໃນແວດວົງດ້ານສະຕິປັນຍາ, ຄວາມຮູ້, ເທກໂນໂລຢີ ແລະ ເສດຖະກິດ. ແຕ່ໃນອີກທາງດ້ານໜຶ່ງພູມມີພາກນີ້ລົ້ມເຫຼວໃນການລົດຄວາມຍາກຈົນທີ່ແຜ່ລະບາດໄປທົ່ວ ຄວາມລົ້ມເຫຼວໃນການຫຼີກຫຼ່ຽງທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍຂອງທະເລແຫ່ງຄວາມຮຸນແຮງ ເຊິ່ງກຳລັງຄຸກຄາມທີ່ຈະຈູດໃຫ້ປະຊາຊົນໃນພູມມີພາກນີ້ຈົມດິ່ງລົງໄປ. ຄຳຖາມທີ່ຈະຕ້ອງຖາມຢ່າງຕົງໆກໍ່ຄື ແມ່ນວ່າຈະມີຄວາມມັ່ງຄັ່ງຢູ່ຢ່າງຫຼວງຫຼາຍ ແຕ່ເພາະເຫດໃດສັງຄົມນີ້ຈຶ່ງໄຮ້ສະມັດຕະພາບໃນການກຳຈັດຄວາມອະຍຸຕິທັມ ທີ່ກຳລັງມ້າງທຳລາຍສາຍໃຍຂອງສັງຄົມໃຫ້ຂາດສະບັ້ນລົງ?**

**"ຄຳຕອບສຳລັບຄຳຖາມນີ້, ດັ່ງທີ່ເຫັນປະຈັກແຈ້ງຫຼາຍພໍໃນຫຼາຍທົດສະຫວັດຂອງການໂຕ້ແຍ້ງກັນ ແມ່ນບໍ່ສາມາດພົບໄດ້ໃນການຫຼົງໄຫຼໃນການເມືອງ, ການສະແດງອອກຢ່າງຂັດແຍ້ງໃນຄວາມສົນໃຈຂອງຊົນຊັ້ນຕ່າງໆ ຫຼື ສູດທາງເທກນິກໃດໆ. ສິ່ງທີ່ຖືກຮຽກຮ້ອງໃຫ້ມີຄືການຟື້ນຊີວິດທາງຈິດວິນຍານ ເຊິ່ງເປັນສິ່ງທີ່ຈຳເປັນຕ້ອງກະທຳກ່ອນຂອງການປະຍຸກໃຊ້ໃຫ້ປະສົບຄວາມສຳເລັດຂອງເຄື່ອງມືທາງດ້ານການເມືອງ, ທາງເສດຖະກິດ ແລະ ເທັກໂນໂລຢີ. ແຕ່ມັນມີຄວາມຈຳເປັນທີ່ຈະຕ້ອງມີຕົວເລັ່ງປະຕິກິລິຍາ. ຂໍໃຫ້ທ່ານໝັ້ນໃຈວ່າແມ່ນວ່າພວກທ່ານຈະມີຈຳນວນໜ້ອຍ, ພວກທ່ານນັ້ນຄືຊ່ອງທາງທີ່ຈະເຮັດໃຫ້ເປັນຕົວເລັ່ງປະຕິກິລິຍາຂຶ້ນມາ."** [49]

1. ສານທີ່ຜ່ານມານີ້ຖາມວ່າ ເປັນຫຍັງສັງຄົມທີ່ເຕັມໄປດ້ວຍຄວາມກ້າວໜ້າພຽບພ້ອມທັງທາງເທັກໂນໂລຢີ ແລະ ຄວາມພ້ອມທາງດ້ານເສດຖະກິດ ແຕ່ກໍ່ບໍ່ສາມາດທີ່ຈະແກ້ໄຂ ແລະ ລົບລ້າງຄວາມບໍ່ຍຸຕິທັມໃນສັງຄົມໄດ້. ເຊິ່ງກໍ່ເປັນຂໍ້ສະແດງໃຫ້ເຫັນວ່າ ຄຳຕອບນັ້ນແມ່ນບໍ່ສາມາດຫາໄດ້ຈາກຄວາມຫຼົງອຳນາດທາງດ້ານການເມືອງ, ຄວາມຄັດແຍ້ງທາງດ້ານແນວຄິດແລະຊົນຊັ້ນ ຫຼື ກົດເກນທາງດ້ານເທັກໂນໂລຢີ. ຂໍໃຫ້ທ່ານລອງຄິດເຖິງສັງຄົມທີ່ທ່ານກຳລັງດຳເນີນຊີວິດຢູ່ ແລະ ຈົ່ງຍົກຕົວຢ່າງຂອງແຕ່ລະເຫດການດັ່ງລຸ່ມນີ້:

   ກ. ອຳນາດທາງດ້ານການເມືອງທີ່ຫຼູ່ຫອມສັງຄົມ ____________________

   ____________________

   ____________________

   ____________________

   ຂ. ຄວາມຄັດແຍ້ງທາງດ້ານແນວຄິດແລະຊົນຊັ້ນໃນສັງຄົມ ____________________

   ____________________

   ____________________

   ____________________

   ຄ. ຮູບການທາງດ້ານເທັກໂນໂລຢີທີ່ສັງຄົມກຳລັງຫຼົງ ____________________

   ____________________

   ____________________

   ____________________

2. ແມ່ນຫຍັງເປັນສິ່ງຈຳເປັນເພື່ອຜົນສຳເລັດຂອງຜົນຂອງການເມືອງ, ເສດຖະກິດ, ແລະເຄື່ອງມື ທາງດ້ານເທັກໂນໂລຢີໃນສັງຄົມ, ອີງຕາມທັມມະສະພາຍຸຕິທັມແຫ່ງສາກົນ? _________

_________________________________________________

_________________________________________________

3. ອີງຕາມທັມມະສະພາຍຸຕິທັມແຫ່ງສາກົນ ແມ່ນຫຍັງເປັນສິ່ງຈຳເປັນສຳລັບການນຳມາເຊິ່ງການ ຟື້ນຊີວິດທາງຈິດວິນຍານຂອງສັງຄົມ? _________________________

_________________________________________________

_________________________________________________

4. ແມ່ນໃຜທີ່ທັມມະສະພາຍຸຕິທັມແຫ່ງສາກົນໄດ້ກ່າວເຖິງ ວ່າເປັນຊ່ອງທາງທີ່ຈະສາມາດເຮັດໃຫ້ ຂ່າວສານກ່ຽວກັບສາສະໜາກະຈາຍໄດ້? _________________________

_________________________________________________

_________________________________________________

ບັດນີ້ ເມື່ອຄຳນຶງເຖິງຄວາມຄິດຂ້າງເທິງແລ້ວ, ໃຫ້ປຶກສາຫາລືກັບເພື່ອນທີ່ກຳລັງສຶກສາຫຼັກສູດນີ້ວ່າ ຈະເຮັດແນວໃດໃຫ້ການມີສ່ວນຮ່ວມໃນການດຳເນີນການຕາມແຜນງານອັນສັກສິດ ຊ່ວຍຄົນລຸ້ນເຢົາເປັນຊ່ອງທາງໃນການຟື້ນຟູຈິດວິນຍານຂອງສັງຄົມ.

## ຕອນທີ 19

ບໍ່ເປັນທີ່ສົງໃສເລີຍວ່າບົດເຝິກຫັດໃນຕອນທີ່ຜ່ານມາ ເຮັດໃຫ້ເຈົ້າຄິດເພີ່ມເຕີມເຖິງບົດບາດສຳຄັນ ທີ່ຊາວໜຸ່ມຈຳເປັນຈະຕ້ອງສະແດງອອກໃນຄວາມກ້າວໜ້າຕໍ່ໄປຂອງສາສະໜາ. ໃນຂໍ້ຄວາມຕໍ່ໄປນີ້ ເຊິ່ງຄັດມາຈາກໜັງສື *ພຣະຜູ້ເປັນເຈົ້າສະເດັດຜ່ານມາ (God Passes By),* ທ່ານ ໂຊກິ ເອຟເຟນດີ ໄດ້ພັນລະນາເຖິງພາບຂອງຜູ້ກຳໄຊຊະນະໃນຍຸກກ່ອນໆຂອງສາສະໜາ, ເຊິ່ງວິລະກຳຂອງທ່ານເຫຼົ່ານັ້ນໄດ້ໃຫ້ແຮງບັນດານໃຈແກ່ບາຮາຍໃນທຸກຍຸກສະໄໝ. ດ້ວຍເຫດຫຼາຍທ່ານມີອາຍຸນ້ອຍ ຈຶ່ງເປັນການເໝາະສົມທີ່ຈະໄຕ່ຕອງຖ້ອຍຄຳຂອງ ທ່ານສາສະນະພິບານ ໃຊ້ອະທິບາຍເຖິງຄຸນລັກສະນະທີ່ໂດດເດັ່ນຂອງທ່ານເຫຼົ່ານັ້ນ. ກ່ອນຈະປະຕິບັດເຊັ່ນນັ້ນ ອາດຈະເປັນປະໂຫຍດທີ່ເຈົ້າຈະອ່ານຄຳອະທິບາຍຄຳສັບບາງຄຳຕໍ່ໄປນີ້:

| | |
|---|---|
| ດາວບໍລິວານ: | ດາວດວງນ້ອຍໆ ທີ່ໝຸນຮອບໆດາວດວງໃຫຍ່ |
| ຜາດຜ່ານ: | ການເດີນທາງຂ້າມ |
| ມືດມົນ: | ຄວາມໂສກເສົ້າ ແລະ ມືດມົນ |

| | |
|---|---|
| ດາວຫຼຽມ: | ການໝູນວຽນຂອງສິ່ງໄດ້ສິ່ງໜຶ່ງອ້ອບຮ້ອມວັດຖຸທີ່ມີຂະໜາດໃຫຍ່ |
| ຈັກກະວານ: | ຝູງດວງດາວຂະໜາດໃຫຍ່ |
| ສ່ອງແສງສະຫວ່າງ: | ການສົ່ງແສງສະຫວ່າງອອກມາ |
| ຄວາມຮຸ່ງເຮືອງ: | ການຮຸ່ງແສງອອກດ້ວຍຄວາມຮ້ອນ, ແສງສະຫວ່າງຮຸ່ງແຈ້ງ |
| ກໍາລັງເລີ້ມ: | ການທີ່ຫາກໍ່ເລີ້ມຕົນປະກົດຂຶ້ນ |
| ການຕໍ່ສູ້: | ການດີນລົນເພື່ອໄຊຊະນະ |
| ເປັນຜູ້ເບີກທາງ: | ຜູ້ລິເລີ່ມ |
| ລັບລົມຄົມໃນ: | ການຕິດຕໍ່ແບບລັບໆ |
| ຄວາມເຊື່ອມຊາມ: | ການຕິດສິນບົນ, ຈຸດບົກພ່ອງ |
| ຢ່າງກວ້າງຂວາງ: | ຄວາມຫຼາກຫຼາຍ, ຄວາມເຫຼືອລົ້ນ |
| ຄວາມສັດທາໃນສາສະໜາ: | ການເຄົາລົບນັບຖືຕໍ່ພຣະຜູ້ເປັນເຈົ້າ ແລະ ຄວາມຍຶດໝັ້ນໃນໜ້າທີ່ທາງສາສະໜາ |
| ແຮງກ້າ: | ຄວາມຮູ້ສຶກທີ່ແຮງກ້າ |
| ດັ່ງລາດສະສີ: | ມີລັກສະນະຄືໂຕສິງ |
| ການລະຖີ້ມ: | ການປ່ອຍວາງ, ການຍ້ອມແພ້ |
| ຄວາມຕັ້ງໃຈໝັ້ນ: | ຄວາມຮູ້ສຶກທີ່ເຂັ້ມແຂງ |
| ຫີນອັກຄະນີ: | ຫີນຈາກພູເຂົາໄຟເປັນຫີນທີ່ແຂງທີ່ສຸດ |
| ຄວາມຍິ່ງໃຫຍ່: | ຄວາມພິເສດທີ່ໜ້າມະຫັດສະຈັນ |
| ເຄົາລົບ: | ຄວາມໜ້າເຄົາລົບ |
| ຄວາມອຶດອັດ: | ການເຮັດໃຫ້ງົງງວຍ, ຄວາມງົງ |

ທ່ານ ສາສະນະພິບານ ຂຽນໄວ້ວ່າ:

**"ຈົ່ງເບິ່ງເຖີດ, ເມື່ອພວກເຮົາສໍາຫຼວດເບິ່ງສາກເຫດການທໍາອິດຂອງບົດລະຄອນອັນສູງສົ່ງນີ້, ພາບຂອງຜູ້ທີ່ເປັນຫົວໜ້າວິລະຊົນຂອງເລື່ອງຄື ພຣະບ໊ອບ, ເຊິ່ງຊົງປາກົດຂຶ້ນເໝືອນດາວບໍລິວານຢູ່ເໜືອຂອບຟ້າເມືອງຊີຣາຊ, ຜາດຜ່ານທ້ອງຟ້າອັນມືດມົນຂອງເປີເຊັຍຈາກທິດເໜືອໄປເຖິງທິດໃຕ້, ຕົກລົງມາດ້ວຍຄວາມວ່ອງໄວຢ່າງໜ້າເສົ້າໃຈ ແລະ ສູນສິ້ນໄປໃນແສງໂຊດຊ່ວງຂອງຄວາມຮຸ່ງເຮືອງ. ເຮົາເຫັນດາວຫຼຽມຂອງພຣະອົງ ເຊິ່ງເປັນຈັກກະວານຂອງເລົ່າວິລະຊົນ ຜູ້ຫຼົງໄຫຼໃນພຣະຜູ້ເປັນເຈົ້າ ກໍ່ຂຶ້ນຢູ່ເໜືອຂອບຟ້າດຽວກັນນັ້ນ, ສ່ອງແສງສະຫວ່າງຢູ່ໃນແສງອັນຄວາມຮຸ່ງເຮືອງດຽວກັນນັ້ນ, ເຜົາໄໝ້ຕົນເອງຢູ່ໃນຄວາມວ່ອງໄວນັ້ນ ແລະ ໄດ້ໃຫ້ແຮງກະຕຸ້ນເພີ່ມເຕີມແກ່ພະລັງແຫ່ງການເຄື່ອນໄຫວ ທີ່ເພີ່ມພູນຂຶ້ນຢ່າງຕໍ່ເນື່ອງຂອງສາສະໜາທີ່ຫາກໍ່ກໍາເນີດຂຶ້ນຂອງພຣະຜູ້ເປັນເຈົ້າ...**

"ເລົ່າວິລະຊົນຜູ້ເຊິ່ງການກະທຳສ່ອງສະຫວ່າງຢູ່ ສະເໝືອນບັນທຶກແຫ່ງການຕໍ່ສູ້ທາງຈິດວິນຍານທີ່ດຸເດືອດ, ເຊິ່ງມີປະຊາຊົນ, ນັກບວດ, ກະສັດ ແລະ ລັດຖະບານເຂົ້າມາກ່ຽວຂ້ອງດ້ວຍ, ນີ້ກໍ່ຄືສານຸສິດ ພຣະບ໊ອບ ຊົງເລືອກສັນ, ຄືບັນດາພະຍັນຊະນະແຫ່ງການມີຊີວິດ, ພ້ອມດ້ວຍມິດສະຫາຍຂອງພວກເຂົາ, ເປັນຜູ້ເບີກທາງຂອງຍຸກໃໝ່, ຜູ້ຕໍ່ຕ້ານຄວາມລັບລົມຄົມໃນ, ອະວິຊາ, ຄວາມເຊື່ອມຊາມ, ຄວາມອຳມະຫິດ, ຄວາມເຊື່ອທີ່ຜິດ ແລະ ຄວາມຢ້ານກົວທັງຫຼາຍດ້ວຍຄວາມສູງສົ່ງຂອງຈິດວິຍານ, ເຈດຕະນາລົມອັນສູງສົ່ງທີ່ບໍ່ມີວັນດັບລົງໄດ້ ແລະ ຄວາມໜ້າເກງຂາມ, ຄວາມຮູ້ອັນເລິກເຊິ່ງຢ່າງໜ້າປະຫຼາດ, ຄຳເວົ້າທີ່ມີພະລັງໂນ້ມນ້າວຢ່າງກວ້າງຂວາງ, ຄວາມສັດທາໃນສາສະໜາອັນແຮງກ້າຢ່າງບໍ່ມີໃຜເໜືອກວ່າ, ຄວາມກ້າຫານທີ່ດຸດັນດັ່ງລາດສະສີ, ການລະຖິ້ມຕົນເອງຢ່າງບໍລິສຸດເໝືອນນັກບຸນ, ຄວາມຕັ້ງໃຈໝັ້ນທີ່ໝັ້ນຄົງດັ່ງຫີນອັກຄະນີ, ວິໄສທັດທີ່ຍິ່ງໃຫຍ່ຢ່າງໃຫຍ່ຫຼວງ, ຄວາມເຄົາລົບຢຳເກງຕໍ່ພຣະສາສະດາ ແລະ ນັກບວດຂອງພຣະອົງ ທີ່ທຳໃຫ້ເລົ່າສັດຕູອຶດອັດ, ພະລັງອຳນາດໃນການຈູງໃຈທີ່ທຳໃຫ້ປໍລະປັກຢ້ານກົວ, ມາດຕະຖານຂອງຄວາມສັດທາ ແລະ ຄວາມປະພຶດທີ່ທ້າທາຍ ແລະ ປະຕິວັດວິຖີຊີວິດຂອງເພື່ອນຮ່ວມຊາດຂອງພວກເຂົາ." [50]

1. ຈົ່ງຕື່ມຂໍ້ຄວາມລຸ່ມນີ້ໃຫ້ສົມບູນ:

   ກ. ພະຍັນຊະນະແຫ່ງການມີຊີວິດກ່ຽວຂ້ອງ ______________________ ໃນການຕໍ່ສູ້.

   ຂ. ໃນການຕໍ່ສູ້ຄັ້ງນີ້ປະກອບມີ ______________ , ______________ , ______________ ແລະ ______________

   ຄ. ວິລະຊົນຂອງສາສະໜາໃນຍຸກທຳອິດ ຕ້ອງຕໍ່ຕ້ານຄວາມລັບລົມຄົມໃນ, ອະວິຊາ, ຄວາມເຊື່ອມຊາມ, ຄວາມອຳມະຫິດ, ຄວາມເຊື່ອທີ່ຜິດ ແລະ ຄວາມຂີ້ຂາດທັງຫຼາຍ ດ້ວຍ

   – ຄວາມສູງສົ່ງ ______________ , ______________ ແລະ ______________,
   – ຄວາມຮູ້ ______________,
   – ຄຳເວົ້າທີ່ໂນ້ມໃຈ ______________,
   – ຄວາມສັດທາໃນສາສະໜາ ______________,
   – ຄວາມກ້າຫານ______________,
   – ຄວາມລະຖິ້ມຕົນເອງ ______________,
   – ຄວາມຕັ້ງໃຈໝັ້ນ ______________,
   – ວິໄສທັດ ______________,

- ຄວາມເຄົາລົບຍຳເກງຕໍ່ພຣະສາສະດາ ແລະ ນັກບວດຂອງພຣະອົງ __________
  ____________________________________________,
- ພະລັງອຳນາດໃນການຈູງໃຈ ________________________________________,
- ມາດຕະຖານຂອງຄວາມສັດທາແລະຄວາມປະພຶດ ________________________
  ____________________________________________,

2. ວິລະຊົນໃນຍຸກເລີ່ມຕົ້ນຂອງສາສະໜາ ເຂົ້າສູ່ການຕໍ່ສູ້ທາງຈິດວິນຍານດັ່ງທີ່ທ່ານສະນະພິບານ ອະທິບາຍໄວ້ ໃນພຣະວັດຈະນະຕອນຂ້າງເທິງນັ້ນ ເພື່ອຈຸດປະສົງອັນໃດ? __________
____________________________________________________________________
____________________________________________________________________
____________________________________________________________________

3. ຊາວໜຸ່ມໃນຍຸກປະຈຸບັນ ມີຄວາມຄ້າຍຄືກັນກັບຊາວໜຸ່ມລຸ້ນອ້າຍຂອງພວກເຂົາຫຼືບໍ່ ໃນການຜູກມັດຕົນເອງເຂົ້າໃນການຕໍ່ສູ້ທາງຈິດວິນຍານ? ______________________________
____________________________________________________________________
____________________________________________________________________

4. ການຕໍ່ສູ້ນີ້ຄ້າຍຄືກັນກັບການຕໍ່ສູ້ຂອງວິລະຊົນໃນຍຸກເລີ່ມຕົ້ນຂອງສາສະໜາຢ່າງໃດ? ___
____________________________________________________________________
____________________________________________________________________
____________________________________________________________________

5. ຊາວໜຸ່ມໃນປັດຈຸບັນຈະໝັ້ນໃຈໄດ້ຢ່າງໃດວ່າ ພວກເຂົາຈະສາມາດເອົາຊະນະ ການຕໍ່ສູ້ທາງຈິດວິນຍານນີ້ໄດ້ ຄືກັນກັບອ້າຍແລະເອື້ອຍຂອງພວກເຂົາໃນຍຸກວິລະຊົນ? __________
____________________________________________________________________
____________________________________________________________________
______________________________________________________________

ກ່ອນທີ່ຈະຍ້າຍໄປຕອນຕໍ່ໄປ, ເຈົ້າອາດປາດຖະໜາທີ່ຈະທົບທວນຂໍ້ຄວາມຕໍ່ໄປນີ້ຈາກຂໍ້ຄວາມທີ່ຂຽນໂດຍສະພາຍຸຕິທັມແຫ່ງສາກົນ:

**"ເມື່ອພຣະຮູບອັນສູງສົ່ງຂອງພຣະບ໊ອບ, ຕອນທີ່ອາຍຸພຽງຊາວຫ້າພັນສາ, ໄດ້ປາກົດຂຶ້ນສົ່ງສານການປະຕິວັດຂອງພຣະອົງໄປທົ່ວໂລກ, ຫຼາຍຄົນໃນກຸ່ມຄົນທີ່ເປັນຜູ້ຍອມຮັບ ແລະ**

ເປັນຜູ້ເຜີຍແຜ່ຄຳສອນຂອງພຣະອົງຍັງໜຸ່ມນ້ອຍຢູ່, ອາຍຸນ້ອຍກວ່າພຣະບ໊ອບອີກ. ຄວາມກ້າຫານຂອງພວກເຂົາ ເຊິ່ງໄດ້ຄົງຢູ່ຕະຫຼອດໄປໃນຄວາມເຂັ້ມຂົ້ນອັນໜ້າຕື່ນຕາໃນປຶ້ມ ຜູ້ເບີກຮຸ່ງອາລຸນ (The Dawn-Breakers), ຈະສ່ອງສະຫວ່າງບັນທຶກປະວັດສາດຂອງມະນຸດມາດົນນານຫຼາຍສັດຕະວັດຕໍ່ຈາກນີ້. ດ້ວຍເຫດນີ້ເອງຈຶ່ງໄດ້ເລີ້ມຕົ້ນຮູບແບບທີ່ຊາວໜຸ່ມທຸກລຸ້ນໄດ້ຮັບແຮງບັນດານໃຈ ຈາກແຮງກະຕຸ້ນອັນສັກສິດດຽວກັນ ໃນການສ້າງສັນໂລກໃໝ່, ໄດ້ຄວ້າໂອກາດທີ່ຈະມີສ່ວນຮ່ວມໃນຂັ້ນຕອນຫຼ້າສຸດ ໃນຂະບວນການທີ່ກຳລັງເປີດເຜີຍ ເຊິ່ງກໍຄືການປ່ຽນແປງຊີວິດຂອງມະນຸດຊາດ ເປັນຮູບແບບທີ່ບໍ່ເຄີຍຖືກລົບກວນຕັ້ງແຕ່ສະໄໝພຣະບ໊ອບ ຈົນເຖິງເວລາປັດຈຸບັນ.” [51]

## ຕອນທີ 20

ໂດຍຜ່ານວົງຮອບທີ່ໝູນວຽນຕໍ່ເນື່ອງຂອງວິກິດການ ແລະ ໄຊຊະນະ, ຊາວໜຸ່ມຂອງທຸກລຸ້ນຄົນໄດ້ເດີນຕາມເສັ້ນທາງທີ່ຮຸ່ງເຮືອງໂດຍບັນດາຜູ້ເບີກຮຸ່ງອາລຸນ ແລະ ຍັງຄົງຢູ່ໃນແນວໜ້າຂອງກິດຈະກຳບາຮາຍ, ອອກເຫື່ອເທແຮງເພື່ອການນຳເອົາສານຂອງ ພຣະບາຮາອຸລລາຫ໌ ໄປສູ່ມະນຸດຊາດ. ສະພາຍຸຕິທັມແຫ່ງສາກົນຂຽນໄວ້ວ່າ:

“ນັບຕັ້ງແຕ່ຕອນເລີ້ມຕົ້ນຂອງບາຮາຍສັກກະຫຼາດ, ຊາວໜຸ່ມໄດ້ສະແດງບົດບາດອັນຈຳເປັນທີ່ສຸດໃນການປະກາດ ກ່ຽວກັບການເປີດເຜີຍທັມຂອງພຣະຜູ້ເປັນເຈົ້າ. ພຣະບ໊ອບເອງຊົງມີອາຍຸພຽງຊາວຫ້າພັນສາ ໃນຕອນທີ່ຊົງປະກາດພັນທະກິດຂອງພຣະອົງ, ໃນຂະນະທີ່ພະຍັນຊະນະແຫ່ງການມີຊີວິດຫຼາຍຄົນຍັງມີອາຍຸນ້ອຍກວ່ານີ້. ທ່ານນາຍໃນຕອນທີ່ຍັງເປັນຊາຍໜຸ່ມ, ກໍ່ໄດ້ຮັບການຮຽກຮ້ອງໃຫ້ແບກຄວາມຮັບຜິດຊອບ ໃນການຮັບໃຊ້ບິດາຂອງທ່ານໃນອີຣັກ ແລະ ຕຸລະກີ, ແລະ ນ້ອງຊາຍຂອງທ່ານ ເຊິ່ງກໍ່ຄືກິ່ງໄມ້ທີ່ບໍລິສຸດທີ່ສຸດ ກໍ່ໄດ້ສະຫຼະຊີວິດຂອງຕົນໃຫ້ກັບພຣະຜູ້ເປັນເຈົ້າໃນຄຸກທີ່ໂຫດຫ້ຽມທີ່ສຸດ ເມື່ອມີອາຍຸພຽງຊາວສອງປີເພື່ອວ່າຄົນຮັບໃຊ້ທັງຫຼາຍຂອງພຣະຜູ້ເປັນເຈົ້າອາດຈະ ‘ໄດ້ຮັບການປຸກໃຫ້ຕື່ນ ແລະ ທຸກຄົນທີ່ອາໄສຢູ່ບົນໂລກຈະສາມັກຄີກັນ.’ ທ່ານ ໂຊກີ ເອັບເຟນດີ ກໍ່ຍັງເປັນນັກສຶກສາທີ່ມະຫາວິທະຍາໄລ ອັອກຊ໌ເຟີຊ໌ ໃນຕອນທີ່ໄດ້ຮັບການຮຽກຮ້ອງໃຫ້ຂຶ້ນສູ່ບັນລັງຂອງການເປັນທ່ານສາສະນະພິບານ, ແລະ ອັດສະວິນຂອງ ພຣະບາຮາອຸລລາຫ໌ ຫຼາຍຄົນຜູ້ເຊິ່ງສ້າງຊື່ສຽງທີ່ບໍ່ມີວັນໝົດສິ້ນ, ໃນຊ່ວງເວລາຂອງແຜນງານສິບປີກໍ່ເປັນຄົນໜຸ່ມສາວ.” [52]

ໃນຈົດໝາຍອີກສະບັບໜຶ່ງໃນປີ 1984, ສະພາຍຸຕິທັມແຫ່ງສາກົນ ໄດ້ຂຽນເພື່ອສັນລະເສີນວິລະຊົນໃນອາດີດ ທີ່ຫາກໍ່ຜ່ານໄປບໍ່ດົນນີ້ວ່າ:

“ຈົ່ງພິຈາລະນາເບິ່ງ ຕົວຢ່າງເຊັ່ນ, ເຫດການທີ່ເກີດຂຶ້ນໃນຊີຣາຊ ເມື່ອລະດູຮ້ອນປີທີ່ແລ້ວ ແມ່ຍິງທຶກຄົນເຊິ່ງມີອາຍຸຢູ່ລະຫວ່າງ 18 ເຖິງ 25 ປີ, ຜູ້ເຊິ່ງຖືກປະຫານຊີວິດໄປດ້ວຍການແຂວນຄໍ. ທຸກຄົນຕ້ອງປະເຊີນໜ້າກັບຄວາມພະຍາຍາມ ທີ່ຈະຊັກຊວນໃຫ້ພວກເຂົາປະຕິເສດຄວາມເຊື່ອຂອງຕົນເອງ, ທັງໝົດປະຕິເສດທີ່ຈະບໍ່ຍອມຮັບພຣະຜູ້ເປັນທີ່ຮັກຂອງພວກເຂົາ. ຂໍໃຫ້ພິຈາລະລະນາເບິ່ງເຖິງເລື່ອງເລົ່າ ທັງຫຼາຍກ່ຽວກັບຄວາມແຂງແກ່ນຢ່າງໜ້າອັດສະຈັນ ທີ່ສະແດງອອກມາຫຼາຍຄັ້ງຫຼາຍຄາວໂດຍເດັກນ້ອຍ ແລະ ຊາວໜຸ່ມຜູ້ຕ້ອງໄດ້ຮັບການສອບສວນ ແລະ ການກະທຳຢ່າງທາລຸນຂອງຄູແລະນັກບວດ ແລະ ການຖືກໄລ່ອອກຈາກໂຮງຮຽນ ເພາະການຍຶດຖືໃນຄວາມເຊື່ອຂອງຕົນເອງ. ຍິ່ງໄປກວ່ານັ້ນຍັງເປັນຂໍ້ສັງເກດວ່າ ພາຍໃຕ້ຂໍ້ຈຳກັດທັງຫຼາຍທີ່ບັງຄັບໃຊ້ຢ່າງໂຫດຮ້າຍກັບຊຸມຊົນຂອງພວກເຂົາ ຊາວໜຸ່ມກໍ່ຍັງອຸທິດການຮັບໃຊ້ຢ່າງໂດດເດັ່ນ, ຈັດວາງພາລະກຳລັງຂອງຕົນຕາມອຳນາດຈັດການຂອງສະຖາບັນບາຮາຍທົ່ວປະເທດ. ບໍ່ມີຄຳເວົ້າໃດທີ່ງົດງາມ ຈະເປັນພະຍານເຖິງຄວາມຜູກມັດຕົນທາງຈິດວິນຍານ ແລະ ຄວາມຈົ່ງຮັກພັກດີຂອງພວກເຂົາໄດ້ດີກວ່າການກະທຳອັນບໍລິສຸດເລົ່ານີ້ຂອງຄວາມບໍ່ເຫັນແກ່ຕົວ ແລະ ການອຸທິດຖວາຍ. ບໍ່ມີສະຖານແຫ່ງໃດເລີຍໃນໂລກຕີລາຄາຂອງສັດທາ ທີ່ບາຮາຍຖືກຮຽກຮ້ອງໃຫ້ຈ່າຍຈະຫຼວງຫຼາຍພຽງນີ້. ແລະ ບໍ່ມີໃຜສາມາດພົບເຫັນ ຜູ້ຖືຖ້ອຍແຫ່ງການເສຍສະຫຼະທີ່ເຕັມໃຈ ແລະ ມີຄວາມຜ່ອງໃສຫຼາຍກວ່າຊາວໜຸ່ມບາຮາຍຜູ້ອົງອາດແຫ່ງອີຣ່ານ. ດັ່ງນັ້ນ ຈຶ່ງບໍ່ເປັນການຄາດຫວັງທີ່ສົມເຫດສົມຜົນໄດ້ຫຼືບໍທີ່ທ່ານທັງຫຼາຍຜູ້ເປັນຊາວໜຸ່ມ ແລະ ຜູ້ໃຫຍ່ລຸ້ນເຍົາ ເຊິ່ງມີຊີວິດຢູ່ໃນຊ່ວງເວລາອັນພິເສດຍິ່ງເຊັ່ນນີ້ ຜູ້ໄດ້ເປັນພະຍານຮູ້ເຫັນເຖິງຕົວຢ່າງອັນໜ້າຕື່ນເຕັ້ນ ຂອງຄວາມອົງອາດຂອງເພື່ອນຮ່ວມຊາດຊາວອີຣ່ານຂອງທ່ານ ແລະ ເປັນຜູ້ທີ່ມີອິດສະຫຼະໃນການເຄື່ອນໄຫວ ຈະອອກໄປຢ່າງ ‘ບໍ່ມີວັນຖືກຍຶດໜ່ຽວໄວ້ດັ່ງສາຍລົມ’ ສູ່ສະໜາມຂອງການລົງມືກະທຳຂອງບາຮາຍ?” [53]

ໂອກາດໃນການທົບທວນກ່ຽວກັບເຫດການສຳຄັນ ໃນຊີວິດຂອງຊາວໜຸ່ມບາຮາຍຮອບໂລກຈະສາມາດຊ່ວຍໃຫ້ຊາວໜຸ່ມໃນແຕ່ລະລຸ້ນ ໄດ້ມາເຊິ່ງຄວາມສຳນຶກກ່ຽວກັບພັນທະກິດ. ພັນທະອັນໃກ້ຊິດໄດ້ເລີ້ມກໍ່ຕົວຂຶ້ນໃນຕົວບຸກຄົນຜູ້ໂດດເດັ່ນເລົ່ານີ້ ໃນຕອນທີ່ພວກເຂົາຢູ່ໃນໄວເດັກໂດຍຜ່ານທາງເລື່ອງລາວທີ່ເລົ່າໃຫ້ຟັງໃນຊັ້ນຮຽນເດັກ ແລະ ທີ່ບ້ານ, ແຕ່ມັນຈຳເປັນຕ້ອງມີຄວາມພະຍາຍາມຈະຕ້ອງເອົາໃຈໃສ່ຫຼາຍກວ່ານີ້ ທີ່ຈະຕອບສະໜອງຕໍ່ຄວາມຕ້ອງການໃນລະຫວ່າງຊ່ວງໄວລຸ້ນ ແລະ ຕະຫຼອດຊ່ວງເວລາຂອງການເປັນຊາວໜຸ່ມ. ຈົ່ງເລືອກຕົວຢ່າງມາຢ່າງຮອບຄອບ ເຊິ່ງບາງຕົວຢ່າງອາດເປັນເລື່ອງລາວທີ່ເໝືອນກັບລະຄອນທີ່ສາມາດສະແດງໃຫ້ເຫັນເຖິງຄຸນລັກສະນະຢ່າງເຊັ່ນ ຄວາມກ້າຫານ, ຄວາມຕັ້ງໃຈໝັ້ນ, ຄວາມກະຕືລືລົ້ນຢ່າງຫຼວງຫຼາຍ ແລະ ການຮັບໃຊ້ຢ່າງບໍ່ເຫັນແກ່ຕົວ, ເຊິ່ງຊາວໜຸ່ມຄວນພາກພຽນພະຍາຍາມທີ່ຈະເອົາເປັນຕົວຢ່າງ.

1. ຂໍໃຫ້ເຈົ້າລະບຸເຫດການຈາກປະຫວັດສາດໃນຍຸກເລີ່ມຕົ້ນຂອງສາສະໜາ ຫຼື ຈາກຊ່ວງເວລາທີ່ຜ່ານມາບໍ່ດົນເທົ່າໃດນີ້ ໃຫ້ຍົກຕົວຢ່າງມາຈັກສອງສາມເຫດການ ທີ່ເຈົ້າຄິດວ່າຊາວໜຸ່ມຄວນທົບທວນ. ______________________________________________

______________________________________________

______________________________________________

______________________________________________

2. ຂໍໃຫ້ບອກເຫດຜົນຂອງເຈົ້າ ໃນການເລືອກເຫດການສະເພາະຂ້າງເທິງນີ້. __________

______________________________________________

______________________________________________

______________________________________________

## ຕອນທີ 21

ແມ່ນແຕ່ພຣະວັດຈະນະ ພຽງບໍ່ເທົ່າໃດຕອນທີ່ໄດ້ຄັດມາເບື້ອງຕົ້ນກໍ່ເປັນສິ່ງທີ່ເປັນໄປໄດ້ທີ່ຈະມອງເຫັນວ່າ ຊີວິດຂອງຜູ້ກໍາໄຊຊະນະໃນຍຸກເລີ້ມຕົ້ນຂອງສາສະໜາ ແລະ ວິນຍານຂອງຜູ້ເປັນວິລະຊົນລຸ້ນຕໍ່ມານັ້ນໂດດເດັ່ນດ້ວຍຄວາມມີຈຸດມຸ້ງໝາຍ. ເປັນສິ່ງທີ່ຊັດເຈນພໍໆກັນທີ່ພວກເຂົາແຕ່ລະຄົນຈະຕ້ອງມີຄວາມເຂົ້າໃຈໃນຄວາມສໍາຄັນຂອງຊ່ວງເວລາແຫ່ງປະຫວັດສາດ ທີ່ຕົນເອງກໍາລັງໃຊ້ຊີວິດຢູ່ຮ່ວມທັງວິໄສທັດກ່ຽວກັບຂະໜາດຂອງການປ່ຽນແປງ ທີ່ມະນຸດຊາດກໍາລັງຖືກຮຽກຮ້ອງໃຫ້ເປັນຜູ້ກະທໍາການທີ່ມີຈຸດມຸ້ງໝາຍ. ນີ້ໄດ້ສະແດງອອກມາໃຫ້ເຫັນດ້ວຍຊີວິດທີ່ອຸທິດໃຫ້ກັບການແຜ່ກະຈາຍຂ່າວສານແຫ່ງສະຫວັນ ນັ້ນກໍ່ເປັນສິ່ງທີ່ສັດເຈນເຊັ່ນກັນ. ຢ່າງໃດກໍຕາມໃນຂະນະທີ່ພວກເຮົາທົບທວນກ່ຽວກັບການກະທໍາເໝືອນວິລະຊົນ ທີ່ພວກເຂົາເລົ່ານັ້ນໄດ້ສະແດງອອກມາ ແລະ ການເສັຍສະຫຼະຂັ້ນສູງສຸດທີ່ຫຼາຍທ່ານໄດ້ກະທໍາໄປ, ເຮົາບໍ່ສາມາດເຊື່ອໄດ້ວ່າມີພຽງຄຸນລັກສະນະທາງທັມທັງຫຼາຍເທົ່ານັ້ນທີ່ເຮັດໃຫ້ພວກເຂົາເລົ່ານັ້ນໂດດເດັ່ນ, ມີສິ່ງໃດອີກບໍ່ທີ່ເຮັດໃຫ້ຊີວິດຂອງພວກເຂົາເລົ່ານັ້ນໂດດເດັ່ນຢ່າງທີ່ສຸດ? ຄວາມຮູ້ສຶກແຮງກ້າໃດແດ່ທີ່ເຂົ້າຄອບຄອງຈິດໃຈຂອງພວກເຂົາເລົ່ານັ້ນ ແລະ ສິ່ງໃດທີ່ຜັກດັນໃຫ້ພວກເຂົາເລົ່ານັ້ນໄປສູ່ຂັ້ນສູງຂອງການຮັບໃຊ້ຢ່າງບໍ່ເຫັນແກ່ຕົວ? ສິ່ງນັ້ນບໍ່ແມ່ນຄວາມຮັກທີ່ພວກເຂົາມີຕໍ່ພຣະຜູ້ເປັນເຈົ້າບໍ ທີ່ລຸກໄໝ້ຢ່າງເຈີດຈ້າໃນຫົວໃຈຂອງພວກເຂົາເລົ່ານັ້ນ? ຫຼືບໍ່ແມ່ນຍ້ອນພວກເຂົາເລົ່ານັ້ນດື່ມດ່ໍາຢູ່ກັບຄວາມງາມຂອງພຣະຜູ້ເປັນທີ່ຮັກຍິ່ງຂອງຕົນບໍ? ເຮົາຈະຄາດຫວັງໄດ້ຫຼືບໍ່ທີ່ຈະມີສ່ວນສະໜັບສະໜູນ ຕໍ່ການເສີມຄວາມສາມາດທາງຈິດວິນຍານແກ່ຊາວໜຸ່ມລຸ້ນຕໍ່ໄປ ຖ້າພວກເຮົາບໍ່ສົ່ງເສີມພວກເຂົາໃຫ້ດຶງດູດເຂົ້າຫາຄວາມງາມ, ຖ້າພວກເຮົາບໍ່ບໍາລຸງລ້ຽງຄວາມປາດຖະໜາທີ່ຢູ່ພາຍໃນຂອງພວກເຂົາ ໃຫ້ໄດ້ຮັບຄວາມຮູ້ອັນແທ້ຈິງທີ່ເປັນສາຍທານໄຫຼຜ່ານຢ່າງອ່ອນໂຍນ, ຖ້າພວກເຮົາບໍ່ຊ່ວຍພວກເຂົາໃຫ້ພັດທະນາຄວາມສໍາພັນອັນໃກ້ຊິດ ກັບພຣະຜູ້ສ້າງຂອງພວກເຂົາ? ຂໍໃຫ້ພວກເຮົາຈົບພາກນີ້ດ້ວຍການດໍາດິ່ງຕົວເຮົາ ລົງໄປໃນຖ້ອຍຄໍາພຣະວັດຈະນະຕໍ່ໄປນີ້:

“ເພາະເມື່ອຄົນຮັກທີ່ແທ້ຈິງ ແລະ ສະຫາຍຜູ້ອຸທິດຕົນເຂົ້າມາເຖິງທີ່ປະທັບຂອງພຣະຜູ້ເປັນທີ່ຮັກຍິ່ງ, ຄວາມງາມອັນເປັ່ງປະກາຍຂອງພຣະຜູ້ເປັນທີ່ຮັກ ແລະ ເພີງໃນຫົວໃຈຂອງຄົນຮັກຈະຊ່ວຍຈູດໄຟ ແລະ ເຜົາຜານມ່ານກັ້ນ ແລະ ເປືອກຫຸ້ມຫໍ່ທັງປວງ. ແມ່ນແລ້ວ ທຸກສິ່ງທີ່ເຂົາມີຢູ່ຕັ້ງແຕ່ຫົວໃຈໄປຈົນເຖິງຜິວໜັງຈະລຸກເປັນໄຟ ເພື່ອວ່າຈະບໍ່ມີອັນໃດເຫຼືອຢູ່ເລີຍ ນອກຈາກພຣະຜູ້ເປັນສະຫາຍເທົ່ານັ້ນ.” [54]

“ໂອ ສະຫາຍ! ຈົ່ງຢ່າລະຖິ້ມຄວາມງາມນິລັນດອນ ເພື່ອຄວາມງາມທີ່ຈະຕ້ອງມະລາຍໄປ ແລະ ຈົ່ງຕັດສະເໜ່ຫາກັບໂລກແຫ່ງທຸລີນີ້.” [55]

“ເຈົ້າຈົ່ງຮູ້ໄວ້ເຖີດວ່າ ຜູ້ທີ່ເປັນຜູ້ຮູ້ແຈ້ງນັ້ນຄືຜູ້ທີ່ຍອມຮັບການເປີດເຜີຍທັມຂອງເຮົາ, ແລະ ໄດ້ດື່ມຈາກມະຫາສະໝຸດແຫ່ງຄວາມຮູ້ຂອງເຮົາ ແລະ ທະຍານຂຶ້ນໄປໃນຫ້ອງບັນຍາກາດແຫ່ງຄວາມຮັກຂອງເຮົາ ແລະ ລະຖິ້ມທຸກສິ່ງນອກຈາກເຮົາ, ແລະ ຍຶດໝັ້ນຢູ່ກັບສິ່ງທີ່ສົ່ງລົງມາຈາກອານາຈັກ ແຫ່ງຖ້ອຍຄຳພຣະວັດຈະນະອັດສະຈັນຂອງເຮົາ. ແທ້ຈິງແລ້ວ ເຂົາເປັນດັ່ງດວງຕາຂອງມະນຸດຊາດ ແລະ ເປັນດັ່ງຈິດວິນຍານຂອງຊີວິດແຫ່ງຮ່າງກາຍຂອງການສ້າງສັນທັງປວງ. ຂໍຄວາມຮຸ່ງເຮືອງຈົ່ງມີແດ່ພຣະຜູ້ຊົງຄວາມປານີ ຜູ້ຊົງໃຫ້ຄວາມສະຫວ່າງແກ່ເຂົາ ແລະ ຊົງເຮັດໃຫ້ເຂົາລຸກຂຶ້ນ ແລະ ຮັບໃຊ້ສາສະໜາອັນຍິ່ງໃຫຍ່ ແລະ ຊົງອານຸພາບຂອງພຣະອົງ. ແທ້ຈິງແລ້ວ ມະນຸດຜູ້ນັ້ນໄດ້ຮັບພຣະພອນ ຈາກເຫຼົ່າເທວັນເບື້ອງບົນ ແລະ ຈາກຜູ້ທີ່ອາໄສຢູ່ໃນມົນທຽນສະຖານແຫ່ງຄວາມໂອພາດ, ຜູ້ເຊິ່ງໄດ້ດື່ມນໍ້າອຳມະຕະແຫ່ງພຣະນາມຂອງເຮົາ, ພຣະຜູ້ຊົງສັກດານຸພາບ, ພຣະຜູ້ຊົງພາລານຸພາບ.” [56]

“ໂອ ບັນດາທະຫານຂອງພຣະຜູ້ເປັນເຈົ້າ! ຫາກພວກເຈົ້າສັງເກດເຫັນວ່າ ຈິດວິນຍານດວງໃດໄດ້ຫັນໜ້າເຂົ້າຫາສາສະໜາຂອງພຣະຜູ້ເປັນເຈົ້າຢ່າງແທ້ຈິງ; ຄວາມຕັ້ງໃຈຂອງເຂົາຄືການຢັ່ງເລິກລົງໄປໃນພຣະວັດຈະນະຂອງພຣະຜູ້ເປັນເຈົ້າ; ເຂົາກຳລັງຮັບໃຊ້ສາສະໜາຢູ່ທັງເວັນແລະຄືນ ດ້ວຍຄວາມຈົງຮັກພັກດີຢ່າງທີ່ສຸດ; ບໍ່ມີກິ່ນອາຍຂອງຄວາມເຫັນແກ່ຕົວໄຊຍມາຈາກມາລະຍາດ ແລະ ການກະທຳຂອງເຂົາ, ແລະ ບໍ່ມີຮ່ອງຮອຍຂອງອັດຕາ ຫຼື ອັກຄະຕິຢູ່ເລີຍໃນຄວາມປະພຶດຂອງເຂົາ, ຫາກຈະກ່າວໃຫ້ຖືກແລ້ວ ເຂົາເປັນຜູ້ທີ່ທ່ອງໄປໃນປ່າແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ, ແລະ ເປັນຜູ້ທີ່ດື່ມດຳກັບຈອກນໍ້າແຫ່ງຄວາມຮູ້ຂອງພຣະຜູ້ເປັນເຈົ້າ, ມົກໝຸ້ນຢ່າງເຕັມທີ່ກັບການແຜ່ກະຈາຍສຸຄົນທະລົດຂອງພຣະຜູ້ເປັນເຈົ້າ, ແລະ ດຶງດູດຢູ່ກັບສັນຍາລັກທັງຫຼາຍຂອງອານາຈັກຂອງພຣະຜູ້ເປັນເຈົ້າ, ເຊັ່ນນີ້ແລ້ວຈົ່ງຮູ້ເຖິງຄວາມແນ່ນອນວ່າ ເຂົາຜູ້ນັ້ນໄດ້ຮັບການຢືນຢັນດ້ວຍອຳນາດແຫ່ງອານາຈັກສະຫວັນ, ໄດ້ຮັບການຊ່ວຍເຫຼືອຈາກສະຫວັນແຫ່ງອານຸພາບ ແລະ ເຂົາຈະສ່ອງແສງສະຫວ່າງ ແລະ ມີປະກາຍແວວວາວດັ່ງເຊັ່ນດາວປະກາຍດ້ວຍຄວາມເຈີດຈ້າ ແລະ ຄວາມຮຸ່ງເຮືອງ

ຢ່າງທີ່ສຸດຈາກຂອບຟ້າແຫ່ງຂອງຂວັນອັນບໍ່ຮູ້ສິ້ນ. ແຕ່ຫາກເຂົາມີຮ່ອງຮອຍຂອງກິເລດ, ຄວາມປາດຖະໜາການໂອ້ອວດ ຫຼື ປະໂຫຍດສ່ວນຕົວເຈືອປົນແມ່ນພຽງໜ້ອຍທີ່ສຸດແລ້ວ ຍ່ອມເປັນສິ່ງທີ່ແນ່ນອນວ່າ ຄວາມພະຍາຍາມທັງໝົດທີ່ເຂົາກະທຳຈະໄຮ້ຜົນ ແລະ ເຂົາຈະເປັນຜູ້ທີ່ຖືກຕັດສິດ ແລະ ສິ້ນຫວັງ.” [57]

“ຂໍໃຫ້ເຈົ້າຈົ່ງຮູ້ໄວ້ເຖີດວ່າ ແທ້ຈິງແລ້ວ ພຣະຫັດຂອງພຣະຜູ້ຊົງຈັດຫາແຫ່ງສະຫວັນ ໄດ້ດຶງດູດເຈົ້າມາສູ່ບັນລັງແຫ່ງອານາຈັກສະຫວັນ ແລະ ຂ່າວອັນໜ້າຍິນດີແຫ່ງສະຫວັນໄດ້ສ້າງຄວາມປິຕິຍິນດີ ແລະ ຄວາມສຸກໃຫ້ກັບເຈົ້າ, ທີ່ວ່າພຣະອົງໄດ້ຊົງກຳຈັດສິ່ງຫໍ່ຫຸ້ມ ແລະ ໄດ້ເປີດຜ້າຄຸມອອກຈາກໂສມພຣະພັກ ຂອງພຣະຜູ້ຊົງຄວາມງາມແຫ່ງສະຫວັນ, ໄດ້ມອງເຫັນພຣະພັກອັນສົດໃສດ້ວຍຄວາມຢັ່ງຮູ້ຂອງພຣະອົງ ແລະ ໄດ້ກາຍເປັນຜູ້ສຳນຶກໃນຄວາມເລັ້ນລັບແຫ່ງຄວາມບໍລິສຸດ ແລະ ຄວາມສັກສິດໃນສາສະໜາແຫ່ງສະຫວັນຂອງພຣະອົງ!

“ໃນຕອນນີ້, ດ້ວຍຫົວໃຈທີ່ເຕັມປ່ຽມດ້ວຍຄວາມຮັກຂອງພຣະຜູ້ເປັນເຈົ້າ ຈົ່ງວິງວອນຕໍ່ພຣະຜູ້ເປັນເຈົ້າດ້ວຍຄວາມປິຕິຍິນດີ ແລະ ຈົ່ງຂອບໃຈພຣະຜູ້ເປັນເຈົ້າສຳລັບການນຳທາງ ແລະ ຂອງຂວັນອັນສູງສົ່ງນີ້. ແລະ ຈົ່ງຮູ້ໄວ້ວ່າແທ້ຈິງແລ້ວ ກອງທັບແນວໜ້າຂອງຂວັນຂອງສະຫວັນທັງປວງຂອງພຣະຜູ້ເປັນນາຍ ຈະນຳໜ້າເຈົ້າໄປໃນທຸກໆດ້ານ ຫາກຕີນຂອງເຈົ້າໝັ້ນຄົງ ຢູ່ໃນວິຖີຂອງພຣະອົງ.” [58]

“ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພະອົງ! ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພະອົງ! ຄົນຮັບໃຊ້ຜູ້ນີ້ໄດ້ມຸ້ງໜ້າມາຫາພຣະອົງ, ກຳລັງທ່ອງໄປດ້ວຍໃຈປາດຖະໜາໃນທະເລຊາຍແຫ່ງຄວາມຮັກຂອງພຣະອົງ ເດີນຢູ່ໃນວິຖີຂອງການຮັບໃຊ້ຂອງພຣະອົງ, ຄາດໝາຍຄວາມໂປດປານຂອງພຣະອົງ, ຫວັງໃນຄວາມກະລຸນາທິຄຸນຂອງພຣະອົງ, ວາງໃຈໃນອານາຈັກຂອງພຣະອົງ ແລະ ດື່ມດ່ຳຢູ່ກັບຈອກນ້ຳແຫ່ງຂອງຂວັນຂອງພຣະອົງ. ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພະອົງ ຂໍຊົງເພີ່ມພູນຄວາມແຮງກ້າແຫ່ງຄວາມສະເໜ່ຫາ ຂອງຄົນຮັບໃຊ້ຜູ້ນີ້ຕໍ່ພຣະອົງ, ຄວາມສະໝ່ຳສະເໝີໃນການສັນລະເສີນຂອງເຂົາຕໍ່ພຣະອົງ ແລະ ຄວາມກະຕືລືລົ້ນຢ່າງຍິ່ງໃນຄວາມຮັກຂອງເຂົາຕໍ່ພຣະອົງ.

“ແທ້ຈິງແລ້ວ ພຣະອົງຄືພຣະຜູ້ຊົງເອື້ອເຟື້ອຢ່າງທີ່ສຸດ, ພຣະຜູ້ເປັນນາຍແຫ່ງຄວາມກະລຸນາອັນອຸດົມພອນ. ບໍ່ມີພຣະຜູ້ເປັນເຈົ້າອື່ນໃດນອກຈາກພຣະອົງ, ພຣະຜູ້ຊົງໃຫ້ອະໄພ, ພຣະຜູ້ຊົງປານີ.” [59]

# ໜັງສືອ້າງອີງ:


1. ‘Abdu’l-Bahá, in *Bahá’í Prayers and Tablets for the Young* (Wilmette: Bahá’í Publishing Trust, 1978), no. 38, p. 30.
2. ‘Abdu’l-Bahá, in *Bahá’í Prayers: A Selection of Prayers Revealed by Bahá’u’lláh, the Báb, and ‘Abdu’l-Bahá* (Wilmette: Bahá’í Publishing Trust, 2002, 2017 printing), pp. 246–47.
3. *Selections from the Writings of ‘Abdu’l-Bahá* (Wilmette: Bahá’í Publishing, 2010, 2015 printing), no. 225.9, p. 394.
4. ‘Abdu’l-Bahá, cited in a letter dated 11 April 1985 written on behalf of the Universal House of Justice to an individual, published in *Messages from the Universal House of Justice, 1963–1986: The Third Epoch of the Formative Age* (Wilmette: Bahá’í Publishing Trust, 1996), no. 426.3a, p. 665.
5. ‘Abdu’l-Bahá, in *Bahá’í Prayers*, p. 248.
6. Bahá’u’lláh, cited in the Riḍván 1982 message to the Bahá’ís of the world, published in *Messages from the Universal House of Justice, 1963–1986*, no. 321.5a, p. 538.
7. From a message dated 25 May 1975 written by the Universal House of Justice to all National Spiritual Assemblies, ibid., no. 162.34, p. 310.
8. From a message dated 1 July 2013 written to the participants in the forthcoming 114 youth conferences throughout the world, published in *Framework for Action: Selected Messages of the Universal House of Justice and Supplementary Material, 2006–2016* (West Palm Beach: Palabra Publications, 2017), no. 27.3, p. 176.
9. From a message dated 10 June 1966 written to the Bahá’í youth in every land, published in *Messages from the Universal House of Justice, 1963–1986*, no. 37.2, p. 92.
10. From a letter dated 23 February 1995 written on behalf of the Universal House of Justice to selected National Spiritual Assemblies.
11. From a message dated 29 December 2015 written to the Conference of the Continental Boards of Counsellors, published in *Framework for Action*, no. 35.39, p. 226.
12. From a letter dated 23 April 2013 written on behalf of the Universal House of Justice to a National Spiritual Assembly, ibid., no. 52.3, p. 296.
13. From a letter dated 19 April 2013 written on behalf of the Universal House of Justice to a small group of individuals, ibid., no. 51.9, p. 293.
14. From a message dated 12 December 2011 written by the Universal House of Justice to all National Spiritual Assemblies, ibid., no. 20.21, p. 138.
15. *Gleanings from the Writings of Bahá’u’lláh* (Wilmette: Bahá’í Publishing Trust, 1983, 2017 printing), CXXXVII, par. 4, p. 338.
16. From a letter dated 8 December 1923 written by Shoghi Effendi to a Bahá’í community, in “Trustworthiness: A Cardinal Bahá’í Virtue”, compiled by the Research Department of the Universal House of Justice, published in *The Compilation of Compilations* (Maryborough: Bahá’í Publications Australia, 1991), vol. 2, no. 2075, p. 345.
17. *‘Abdu’l-Bahá in London: Addresses and Notes of Conversations* (London: Bahá’í Publishing Trust, 1987), p. 66.
18. *Gleanings from the Writings of Bahá’u’lláh*, XXIX, par. 1, p. 78.
19. Bahá’u’lláh, in “Trustworthiness”, published in *The Compilation of Compilations*, vol. 2, no. 2032, p. 332.
20. ‘Abdu’l-Bahá, *The Secret of Divine Civilization* (Wilmette: Bahá’í Publishing, 2007, 2016 printing), par. 5, p. 5.
21. Ibid., par. 6, p. 6.
22. *Gleanings from the Writings of Bahá’u’lláh*, XLIII, par. 4, p. 105.
23. Ibid., CXXVI, par. 2, p. 306.
24. Bahá’u’lláh, cited by Shoghi Effendi, *The Advent of Divine Justice* (Wilmette: Bahá’í Publishing Trust, 2006, 2018 printing), par. 48, p. 47.
25. *Gleanings from the Writings of Bahá’u’lláh*, LX, par. 3, p. 133.
26. Bahá’u’lláh, cited by Shoghi Effendi, *The Advent of Divine Justice*, par. 39, p. 34.

27. Ibid., par. 39, pp. 34–35.
28. *Tablets of Abdul-Baha Abbas* (New York: Bahá'í Publishing Committee, 1915, 1940 printing), vol. 2, p. 436. (authorized translation)
29. *Gleanings from the Writings of Bahá'u'lláh*, CXLIII, par. 3, p. 354.
30. Ibid., LXX, par. 1, p. 154.
31. 'Abdu'l-Bahá, in *Some Answered Questions* (Wilmette: Bahá'í Publishing, 2014, 2016 printing), no. 10.8, p. 58.
32. From a talk given on 17 November 1912, published in *The Promulgation of Universal Peace: Talks Delivered by 'Abdu'l-Bahá during His Visit to the United States and Canada in 1912* (Wilmette: Bahá'í Publishing, 2012), par. 4, p. 618.
33. From a talk given by 'Abdu'l-Bahá on 29 August 1912, ibid., par. 4, p. 405.
34. Bahá'u'lláh, *The Hidden Words* (Wilmette: Bahá'í Publishing Trust, 2003, 2012 printing), Persian no. 6, p. 24.
35. *Will and Testament of 'Abdu'l-Bahá* (Wilmette: Bahá'í Publishing Trust, 1944, 2013 printing), pp. 26–27.
36. *The Hidden Words*, Persian no. 49, p. 39.
37. *Selections from the Writings of 'Abdu'l-Bahá*, no. 10.2, pp. 41–42.
38. The Báb, cited in *The Dawn-Breakers: Nabíl's Narrative of the Early Days of the Bahá'í Revelation* (Wilmette: Bahá'í Publishing Trust, 1932, 2018 printing), p. 93.
39. *Will and Testament of 'Abdu'l-Bahá*, pp. 27–28.
40. From a talk given on 17 November 1911, published in *Paris Talks: Addresses Given by 'Abdu'l-Bahá in 1911* (Wilmette: Bahá'í Publishing, 2006, 2016 printing), no. 49.17, pp. 199−200.
41. From a talk given by 'Abdu'l-Bahá on 1 September 1912, published in *The Promulgation of Universal Peace*, par. 7, p. 417.
42. *Selections from the Writings of 'Abdu'l-Bahá*, no. 105.2, p. 186.
43. From a letter dated 17 February 1933 written on behalf of Shoghi Effendi to an individual, in *Social Action: A Compilation Prepared by the Research Department of the Universal House of Justice* (Wilmette: Bahá'í Publishing Trust, 2020), no. 90, p. 44.
44. From a message dated April 1955 written by Shoghi Effendi, published in *Messages to the Bahá'í World, 1950–1957* (Wilmette: Bahá'í Publishing Trust, 1971, 1999 printing), p. 76.
45. From a letter dated 4 May 1953 written by Shoghi Effendi, ibid., p. 155.
46. From a message dated 1 July 2013 written by the Universal House of Justice to the participants in the forthcoming 114 youth conferences throughout the world, published in *Framework for Action*, no. 27.2, p. 175.
47. Ibid., no. 27.6, p. 177.
48. From a message dated 8 February 2013 written by the Universal House of Justice to the Bahá'ís of the world, ibid., no. 22.4, p. 147.
49. From a message dated 8 January 2000 written to the friends gathered at the youth congress in Paraguay, published in *Turning Point: Selected Messages of the Universal House of Justice and Supplementary Material, 1996–2006* (West Palm Beach: Palabra Publications, 2006), no. 20.3–4, pp. 123–24.
50. Shoghi Effendi, *God Passes By* (Wilmette: Bahá'í Publishing Trust, 1974, 2019 printing), pp. 4–6.
51. From a message dated 1 July 2013 written by the Universal House of Justice to the participants in the forthcoming 114 youth conferences throughout the world, published in *Framework for Action*, no. 27.1, p. 175.
52. From a message dated 10 June 1966 written to the Bahá'í youth in every land, published in *Messages from the Universal House of Justice, 1963–1986*, no. 37.1, p. 92.
53. From a message dated 3 January 1984 written by the Universal House of Justice to the Bahá'í youth of the world, ibid., no. 386.6, p. 616.
54. *The Call of the Divine Beloved: Selected Mystical Works of Bahá'u'lláh* (Haifa: Bahá'í World Centre, 2018), no. 2.76 p. 46.
55. *The Hidden Words*, Persian no. 14, p. 26.
56. *Tablets of Bahá'u'lláh Revealed after the Kitáb-i-Aqdas* (Wilmette: Bahá'í Publishing

Trust, 1988, 2005 printing), no. 14.4, pp. 207–8.
57. *Selections from the Writings of ‘Abdu’l-Bahá*, no. 35.7, pp. 103–4.
58. *Tablets of Abdul-Baha Abbas* (New York: Bahá’í Publishing Committee, 1909, 1930 printing), vol. 1, p. 182.
59. ‘Abdu’l-Bahá, in *Bahá’í Prayers*, p. 173.



# ຊ້ວງໄວແຫ່ງພັນທະສັນຍາ

## ຈຸດປະສົງ

ການສຳຫຼວດກ່ຽວກັບສັກສະຍະພາບອັນມະຫາສານ
ຂອງຄົນລຸ້ນເຍົາ ທີ່ຢູ່ໃນຊ່ວງອາຍຸລະຫວ່າງສິບສອງຫາສິບຫ້າປີ
ແລະ ຊື່ນຊົມຄວາມສຳຄັນຂອງການຈັດຫາສະພາບແວດລ້ອມ
ທີ່ເອື້ອຍອຳນວຍຕໍ່ການເສີມສ້າງພະລັງທາງຈິດວິນຍານຂອງພວກເຂົາ

## ຕອນທີ 1

ໃນພາກທີ່ຜ່ານມາ, ພວກເຮົາໄດ້ປຶກສາເຖິງຄຸນລັກສະນະບາງປະການທີ່ເຮັດໃຫ້ຊາວໜຸ່ມໂດດເດັ່ນ. ຈຸດປະສົງຂອງພາກນີ້ ຄືເພື່ອທົບທວນສັກກະຍະພາບອັນຍິ່ງໃຫຍ່ຂອງເຍົາວະຊົນ ແລະ ພະລັງທີ່ລໍ່ຫຼອມຊີວິດຂອງພວກເຂົາ. ແນວຄິດທີ່ເຈົ້າຈະກວດສອບໃນພາກນີ້ ໄດ້ຮັບການຮວບຮວມຢ່າງຕໍ່ເນື່ອງຜ່ານປະສົບການຫຼາຍທົດສະວັດ. ຄວາມຕ້ອງການພິເສດຂອງຜູ້ທີ່ມີອາຍຸລະຫວ່າງ ສິບສອງເຖິງສິບຫ້າປີ ໄດ້ຮັບການຍອມຮັບຈາກຊຸມຊົນບາຮາຍມາດົນແລ້ວ. ຈາກຄວາມພະຍາຍາມໃນເບື້ອງຕົ້ນ ທີ່ຈະໃຫ້ຄວາມຮູ້ແກ່ສະມາຊິກກຸ່ມອາຍຸນີ້ ແລະ ຄວາມພະຍາຍາມໃນເວລາຕໍ່ມາເພື່ອຮຽນຮູ້ວິທີປົດປ່ອຍຄວາມສາມາດຂອງພວກເຂົາ ແລະ ຖ່າຍທອດພະລັງອັນເຫຼືອລົ້ນຂອງພວກເຂົາ, ໂຄງເສີມສ້າງພະລັງທາງຈິດວິນຍານຂອງເຍົາວະຊົນ ທີ່ເຮົາກຳລັງສຳຫຼວດໃນໜັງສືເຫຼັ້ມນີ້ ຄ່ອຍໆປາກົດອອກມາ. ເຈົ້າອາດຄຸ້ນເຄີຍກັບໂຄງການນີ້, ໂດຍເຄີຍເຂົ້າຮ່ວມໂຄງການນີ້ດ້ວຍຕົວເອງ ເມື່ອຕອນຍັງໜຸ່ມນ້ອຍ, ເຄີຍເຮັດວຽກຮ່ວມກັບເພື່ອນຄົນໜຶ່ງຂອງເຈົ້າ ກັບກຸ່ມເຍົາວະຊົນ, ຫຼື ຮ່ວມກັບຄົນອື່ນໄປພໍ່ແມ່ຜູ້ປົກຄອງໃນໝູ່ບ້ານຫຼືລະແວກບ້ານຂອງເຈົ້າ ເພື່ອປຶກສາຫາລືກ່ຽວກັບແນວທາງ ແລະ ຫົວຂໍ້ຕ່າງໆ. ເອກະສານທີ່ເຈົ້າກຳລັງສຶກສາຢູ່ຕອນນີ້ ມີຈຸດມຸ່ງໝາຍເພື່ອຊ່ວຍໃຫ້ເຈົ້າອຸທິດເວລາເບື້ອງຕົ້ນສາມປີ, ແຕ່ອາດຈະຫຼາຍກວ່ານັ້ນ, ໃນວຽກງານການຮັບໃຊ້ອັນຊົງກຽດ, ຊ່ວຍໃຫ້ເຈົ້າສາມາດຊ່ວຍເຫຼືອຫຼາກຫຼາຍສະມາຊິກກຸ່ມອາຍຸຄົນ ສະນັ້ນຈຶ່ງເຕັມໄປດ້ວຍຄຳໝັ້ນສັນຍາ ໃນການກ້າວໄປສູ່ຊ່ວງສຳຄັນຂອງຊີວິດຂອງພວກເຂົາ.

ກ່ຽວກັບໂຄງການເສີມສ້າງພະລັງທາງຈິດວິນຍານຂອງເຍົາວະຊົນ, ສະພາຍຸຕິທັມແຫ່ງສາກົນຂຽນໄວ້ວ່າ:

> **"ການເຜີຍແຜ່ໂຄງການເສີມສ້າງພະລັງ ທາງຈິດວິນຍານຂອງເຍົາວະຊົນຢ່າງວ່ອງໄວ ເປັນອີກການສະແດງອອກເຖິງ ຄວາມກ້າວໜ້າທາງວັດທະນະທຳໃນຊຸມຊົນບາຮາຍ. ໃນຂະນະທີ່ໂຄງການເປັນກະແສທົ່ວໂລກ ພາບລັກຂອງຄົນກຸ່ມອາຍຸນີ້ເປັນບັນຫາ, ຈົມຢູ່ໃນຄວາມທຸກແຫ່ງການປ່ຽນແປງທັງຮ່າງກາຍ ແລະ ອາລົມ, ບໍ່ຕອບສະໜອງ ແລະ ເອົາແຕ່ໃຈຕົນເອງ, ຊຸມຊົນບາຮາຍ - ໃນພາສາທີ່ໃຊ້ ແລະ ແນວທາງທີ່ໃຊ້ - ກຳລັງເຄື່ອນໄປໃນທິດທາງກົງກັນຂ້າມຢ່າງສິ້ນເຊີງ, ໂດຍມອງເຫັນວ່າເຍົາວະຊົນ ເຫັນແກ່ປະໂຫຍດຂອງຜູ້ອື່ນ, ຮູ້ສຶກເຖິງຄວາມຍຸຕິທັມໂດຍທັນທີ, ມີຄວາມກະຕືລືລົ້ນທີ່ຈະຮຽນຮູ້ກ່ຽວກັບຈັກກະວານ ແລະ ຄວາມປາດຖະໜາທີ່ຈະມີສ່ວນຮ່ວມໃນການສ້າງໂລກທີ່ດີກວ່າ. ເລື່ອງແລ້ວເລື່ອງເລົ່າ, ເຊິ່ງເຍົາວະຊົນໃນປະເທດຕ່າງໆທົ່ວໂລກ ໄດ້ສະແດງຄວາມຄິດເຫັນຂອງຕົນໃນຖານະຜູ້ເຂົ້າຮ່ວມໂຄງການ, ເປັນພະຍານເຖິງຄວາມຖືກຕ້ອງຂອງວິໄສທັດນີ້. ມີຂໍ້ບົ່ງບອກທຸກໆປະການວ່າໂຄງການນີ້ມີສ່ວນຮ່ວມ ໃນການຂະຫຍາຍຈິດສຳນຶກໃນການສຳຫຼວດຄວາມເປັນຈິງ ທີ່ຊ່ວຍໃຫ້ພວກເຂົາວິເຄາະພະລັງສ້າງສັນ ແລະການທຳລາຍລ້າງໃນສັງຄົມ ແລະ ເພື່ອຮັບຮູ້ເຖິງອິດທິ**

**ພົນທີ່ພະລັງເລົ່ານີ້ມີຕໍ່ຄວາມຄິດ ແລະ ການກະທຳຂອງພວກເຂົາ, ຫຼໍ່ຫຼອມການຮັບຮູ້ທາງຈິດວິນຍານຂອງພວກເຂົາ, ຍົກລະດັບພະລັງໃນການສະແດງອອກຂອງພວກເຂົາ ແລະ ເສີມສ້າງໂຄງສ້າງທາງສິນລະທັມ ທີ່ຈະຮັບໃຊ້ພວກເຂົາໄປຕະຫຼອດຊີວິດ. ໃນຊ່ວງອາຍຸທີ່ພະລັງທາງສະຕິປັນຍາ, ທາງຈິດວິນຍານ ແລະ ທາງຮ່າງກາຍ ກຳລັງຂະຫຍາຍຕົວເຂົ້າເຖິງພວກເຂົາ, ພວກເຂົາກຳລັງໄດ້ຮັບເຄື່ອງມືທີ່ຈຳເປັນໃນການຕໍ່ສູ້ ກັບກອງກຳລັງທີ່ຈະລັກເອົາລັກສະນະທີ່ແທ້ຈິງຂອງພວກເຂົາ ໃນຖານະຜູ້ສູງສົ່ງ ແລະ ເຮັດວຽກເພື່ອປະໂຫຍດສ່ວນລວມ." [1]**

ແນວຄວາມຄິດ ແລະ ຄວາມຄິດຫຼາຍປະການທີ່ ສະພາຍຸຕິທັມແຫ່ງສາກົນກ່າວເຖິງໃນຂໍ້ຄວາມຂ້າງເທິງ ເປັນຈຸດສົນໃຈຂອງການສຶກສາໃນພາກນີ້, ແລະ ເມື່ອເຈົ້າກ້າວຜ່ານມັນໄປ, ສິ່ງເລົ່ານີ້ກໍຈະຊັດເຈນຂຶ້ນໃນຄວາມຄິດຂອງເຈົ້າ. ຕອນນີ້, ເຈົ້າອາດປາດຖະໜາຕອບຄຳຖາມຂ້າງລຸ່ມນີ້:

1. ໂຄງການຕາມກະແສລະດັບໂລກຂອງກຸ່ມອາຍຸ ທີ່ເປັນເຍົາວະຊົນມີລັກສະນະແນວໃດ?

___

___

___

2. ມຸມມອງຂອງຊຸມຊົນບາຮາຍເຫັນແທນທີ່ໃນກຸ່ມອາຍຸນີ້ແມ່ນຫຍັງ?

___

___

___

3. ໂຄງການສຳລັບການເສີມພະລັງທາງຈິດວິນຍານ ຊ່ວຍໃຫ້ເຍົາວະຊົນເຮັດຫຍັງໄດ້ແດ່ ໂດຍການມີສ່ວນຮ່ວມກັບຈິດສຳນຶກທີ່ເພີ້ມຫຼາຍຂຶ້ນຂອງເຍົາວະຊົນ ໃນການສຳຫຼວດຄວາມເປັນຈິງ?

___

___

___

___

___

4. ເຄື່ອງມືທີ່ເຍົາວະຊົນໄດ້ຮັບຈາກໂຄງການ ຊ່ວຍໃຫ້ພວກເຂົາເຮັດຫຍັງໄດ້ແດ່?

___

___

___

5. ເປັນຫຍັງເຈົ້າຈຶ່ງຄິດວ່າ ຄົນລຸ້ນເຍົາທີ່ມີອາຍຸຢູ່ລະຫວ່າງ ສິບສອງເຖິງສິບຫ້າປີ, ຈຶ່ງເປັນກຸ່ມຄົນທີ່ພິເສດ?

6. ຈາກການກ່າວມາຂ້າງເທິງ, ແລະ ລະລຶກເຖິງເຍົາວະຊົນສອງສາມຄົນທີ່ເຈົ້າຮູ້ຈັກຢູ່ແລ້ວ, ເຈົ້າສາມາດລະບຸ ຄວາມຕ້ອງການພິເສດຂອງຄົນລຸ້ນເຍົາໄວກຸ່ມນີ້ມີຫຍັງແດ່?

7. ແມ່ນຫຍັງເປັນສິ່ງທີ່ຈູງໃຈເຈົ້າໃຫ້ເຂົ້າມາເລີ່ມຮັບໃຊ້ໃນດ້ານນີ້?

## ຕອນທີ 2

ພຣະບາຮາອຸລລາຫ໌ ຊົງບອກພວກເຮົາວ່າ ບຸກຄົນເລີ່ມເຂົ້າສູ່ໄວຂອງການມີວຸດທິພາວະ ເມື່ອອາຍຸໄດ້ສິບຫ້າປີ ເຊິ່ງເປັນອາຍຸທີ່ຕ້ອງປະຕິບັດຕາມກົດຂອງການສວດມົນອະທິຖານບົດບັງຄັບປະຈຳວັນ ແລະ ການຖືສິນອົດ. ເມື່ອພິຈາລະນາໃນແງ່ມູມນີ້ແລ້ວຈະເຫັນວ່າ ຊ່ວງເວລາຫຼາຍປີກ່ອນໜ້ານີ້ມີຄວາມສຳຄັນເປັນພິເສດ. ເວລາດັ່ງກ່າວນີ້ເປັນຊ່ວງເວລາຫົວລ້ຽວຫົວຕໍ່ ຈາກໄວເດັກສູ່ໄວຂອງການເປັນຊາວໜຸ່ມ ເຊິ່ງມີລັກສະນະສະເພາະເປັນການປ່ຽນແປງທີ່ເກີດຂຶ້ນ ໂດຍກະທັນຫັນ ແລະ ວ່ອງໄວ. ການປ່ຽນແປງທາງດ້ານກາຍະພາບ, ຄວາມຄິດ ແລະ ອາລົມທີ່ເກີດຂຶ້ນ ມີຜົນກະທົບຕໍ່ພຶດຕິກຳໃນຫຼາຍໆທາງ.

ເມື່ອມາເຖິງອາຍຸສິບສອງປີ, ສັນຍາລັກຂອງການປ່ຽນແປງກໍ່ເລີ່ມປະກົດຂຶ້ນ. ເດັກຍິງຫຼືເດັກຊາຍຫຼາຍຄົນຈະເຕີບໂຕຂຶ້ນຫຼາຍໃນຊ່ວງສາມເຖິງສີ່ປີຂ້າງໜ້າ ເຊິ່ງການຈະເລີນເຕີບໂຕນີ້ ອາດມີຫຼາຍກວ່າໃນຊ່ວງອື່ນຂອງຊີວິດ. ພວກເຂົາຈະມີຕົວສູງຂຶ້ນ, ມີກ້າມ, ແລະ ເລີ່ມປະສົບກັບການປ່ຽນແປງຂອງຮໍ

ໂມນທາງເພດ. ເດັກຊາຍຈະເລີ່ມມີສຽງທີ່ແຕກໜຸ່ມ ແລະ ເດັກຍິງຈະເລີ່ມມີຮູບຮ່າງທີ່ເປັນຜູ້ສາວ. ທັງສອງເພດຈະຜ່ານເຂົ້າສູ່ໄວຈະເລີນພັນ ເຊິ່ງມີຄວາມສາມາດທີ່ຈະມີລູກໄດ້.

ການປ່ຽນແປງທາງດ້ານຮ່າງກາຍ ແລະ ອາລົມທີ່ບຸກຄົນໃນໄວນີ້ຈະປະສົບໃນຊ່ວງນີ້ ຈະມີຄວາມກ່ຽວໂຍງເຊິ່ງກັນແລະກັນ. ໃນຂະນະທີ່ມີຄວາມຕື່ນເຕັ້ນຂອງການປະກົດຂຶ້ນຂອງພະລັງໃໝ່ໆນັ້ນ ມັນກໍ່ຈະມີຄວາມອຶດອັດ, ຄວາມອ່ອນໄຫວ ແລະຄວາມກັງວົນທີ່ເຊື່ອງຊ້ອນຢູ່. ອາລົມເລົ່ານີ້ອາດກໍ່ໃຫ້ເກີດຄວາມຂັດແຍ້ງໃນພຶດຕິກໍາຂອງບຸກຄົນຜູ້ນັ້ນ. ຄົນໜຶ່ງອາດຈະເບິ່ງວ່າ ຂີ້ອາຍ, ແຕ່ບາງຄັ້ງກໍ່ມັກເຂົ້າສັງຄົມ, ອາດຈະສະແດງຄວາມຮູ້ສຶກວ່າຢາກຢູ່ຄົນດຽວ ແຕ່ໃນເວລາດຽວກັນກໍ່ຢາກໄດ້ຄວາມເອົາໃຈໃສ່, ອາດຈະມີຄວາມກ້າຫານຢ່າງບໍ່ໜ້າເຊື່ອ ແຕ່ໃນບາງສະຖານະການພັດມີຄວາມຢ້ານກົວ. ໃນລະຫວ່າງນີ້ລະດັບຂອງຄວາມສໍານຶກໃໝ່ໆຈະເລີ່ມປະກົດຢ່າງຊ້າໆ ແລະ ເລີ່ມມີການສະແດງອອກເຖິງຄວາມສົນໃຈກ່ຽວກັບພອນສະຫວັນ ແລະ ຄວາມສາມາດຂອງຕົນເອງ ໂດຍສະເພາະຢ່າງຍິ່ງໃນສ່ວນທີ່ກ່ຽວກັບຄວາມສໍາພັນກັບເພື່ອນໆແລະຜູ້ໃຫຍ່. ສິ່ງທີ່ເລີ່ມເຫັນວ່າມີຄວາມສໍາຄັນ ແລະ ໂດດເດັ່ນເປັນພິເສດໄດ້ແກ່ທັດສະນະຄະຕິ ຫຼື ຄວາມຄິດເຫັນທີ່ຄົນອື່ນມີຕໍ່ຕົນເອງ, ການສະແດງຄວາມຄິດເຫັນຕໍ່ຄວາມຄິດຂອງຄົນອື່ນ ແລະ ການທີ່ຈະສະແດງອອກເຖິງສັນຍາລັກຂອງຕົນເອງໃຫ້ຄົນອື່ນຮັບຮູ້ນັ້ນ ກໍ່ຖືວ່າມີຄວາມສໍາຄັນຫຼາຍ.

ໃນຊ່ວງເວລາພຽງບໍ່ດົນທີ່ເຮົາຈະມີອາຍຸຄົບສິບຫ້າປີ, ເປັນຊ່ວງເວລາທີ່ແນວຄວາມຄິດພື້ນຖານກ່ຽວກັບຕົວບຸກຄົນ ແລະ ຊີວິດໂດຍລວມປະກົດເປັນຮູບເປັນຮ່າງຂຶ້ນໃນຄວາມຄິດຂອງເຮົາ. ເຮົາເລີ່ມຕັ້ງຄໍາຖາມກ່ຽວກັບສິ່ງທີ່ເຮົາຖືກສອນມາກ່ອນໜ້ານີ້ ແລະ ເລີ່ມສໍານຶກກ່ຽວກັບສິ່ງຕ່າງໆທີ່ຂັດແຍ້ງກັນທີ່ຢູ່ຮອບຕົວເຮົາ. ເຮົາຈະບໍ່ເຕັມໃຈຄືແຕ່ກ່ອນທີ່ຈະຍອມໂດຍອັດຕາໂນມັດທີ່ຈະເຊື່ອ ຫຼື ເຮັດຕາມມາດຕະຖານຕ່າງໆທີ່ຜູ້ໃຫຍ່ກໍານົດຂຶ້ນ. ໃນຊ່ວງເວລາຫົວລ້ຽວຫົວຕໍ່ນີ້ ຄົນເຮົາຈະສະແຫວງຫາຄໍາຕອບຫຼາຍກວ່າເກົ່າໃຫ້ກັບຄໍາຖາມຕ່າງໆ ເຊິ່ງມັກຈະເປັນເລື່ອງກ່ຽວກັບປັດສະຍາ ເພາະຊ່ວງໄວນີ້ເປັນຊ່ວງເວລາທີ່ຄວາມຮູ້ສຶກໃໝ່ໆປະກົດຂຶ້ນຢ່າງວ່ອງໄວ.

ໃນການຊ່ວຍໃຫ້ຄົນທີ່ມີອາຍຸເຢົາໄວນີ້ ໄດ້ຮັບຜົນປະໂຫຍດສູງສຸດຂອງການປະກົດຂຶ້ນເຊິ່ງ ພະລັງ ແລະ ຄວາມສາມາດໃໝ່ໆເປັນສິ່ງຈໍາເປັນທີ່ສຸດ ທີ່ເຮົາຕ້ອງພະຍາຍາມຈະບໍ່ປະຕິບັດຕໍ່ພວກເຂົາແບບທີ່ຈະເຮັດໃຫ້ພວກເຂົາຮູ້ສຶກ ແລະ ຢາກເປັນເດັກນ້ອຍອີກຕໍ່ໄປ, ເຊິ່ງນີ້ກໍ່ເປັນອີກຄ່ານິຍົມໜຶ່ງທີ່ເກີດຂຶ້ນ ແລະ ຍັງຝັງຮາກເລິກຢູ່ໃນຫຼາຍສັງຄົມ. ພຣະອັບດຸລບາຮາ ກ່າວໄວ້ວ່າ:

> **"ພາຍຫຼັງຈາກເວລາທີ່ເຂົາເຂົ້າສູ່ ຊ່ວງຂອງການເປັນຊາວໜຸ່ມທີ່ສະພາບ ແລະ ຄວາມຕ້ອງການຕ່າງໆໃນອາດີດຂອງເຂົານັ້ນ ຖືກແທນທີ່ໂດຍຂໍ້ກໍານົດໃໝ່ໆທີ່ສາມາດນໍາມາ ໃຊ້ໄດ້ກັບການສ້າງຄວາມກ້າວໜ້າຂອງລະດັບຂອງເຂົາ. ຄວາມສາມາດໃນການສັງເກດຂອງເຂົາກວ້າງ ແລະ ເລິກເຊິ່ງຫຼາຍຂຶ້ນ, ຄວາມສາມາດທາງສະຕິປັນຍາຂອງເຂົາໄດ້ຮັບການເຝິກຝົນ ແລະ**

**ປຸກໃຫ້ຕື່ນຂຶ້ນ, ຂໍ້ຈຳກັດແລະສະພາບແວດລ້ອມຕ່າງໆຂອງໄວເດັກ ຈະບໍ່ສາມາດຈຳກັດພາລະກຳລັງ ແລະ ຄວາມສຳເລັດຕ່າງໆຂອງເຂົາໄດ້ອີກ."** [2]

ເພື່ອເສີມສ້າງຄວາມເຂົ້າໃຈຂອງເຈົ້າ ກ່ຽວກັບຄວາມແຕກຕ່າງລະຫວ່າງໄວເດັກ ແລະ ໄວຂອງການເປັນຊາວໜຸ່ມ. ຂໍໃຫ້ເຈົ້າທົບທວນເຖິງຄຳຖາມຕໍ່ໄປນີ້:

1. ການທີ່ຄວາມສາມາດໃນການສັງເກດ ໄດ້ພັດທະນາຫຼາຍຂຶ້ນຢ່າງເລິກເຊິ່ງນັ້ນໝາຍຄວາມວ່າແນວໃດ? ຂໍໃຫ້ເຈົ້າລອງຍົກຕົວຢ່າງຈັກສອງເຖິງສາມຕົວຢ່າງ ເພື່ອອະທິບາຍຄວາມເຂົ້າໃຈຂອງເຈົ້າ? ____________________

____________________

____________________

____________________

____________________

2. ຄວາມສາມາດທາງສະຕິປັນຍາຂອງຊາວໜຸ່ມນັ້ນແຕກຕ່າງຈາກເດັກຢ່າງໃດ?

____________________

____________________

____________________

____________________

3. ແມ່ນຫຍັງຄື ຂໍ້ຈຳກັດຂອງໄວເດັກ ທີ່ບໍ່ອາດຈຳກັດພະລະກຳລັງຂອງຊາວໜຸ່ມໄດ້ອີກຕໍ່ໄປ?

____________________

____________________

____________________

____________________

## ຕອນທີ 3

ຄົນເຮົາທຸກຄົນຈຳເປັນຕ້ອງໄດ້ຮັບການສຶກສາ ແລະ ການລ້ຽງດູຢ່າງທັນທີໃນຊ່ວງເວລາ ສອງສາມປີກ່ອນທີ່ຈະມີອາຍຸສິບຫ້າປີ, ເຊິ່ງຈະເປັນເຫດທີ່ຊ່ວຍໃຫ້ຄວາມສົມບູນພ້ອມທາງຈິດວິນຍານ ແລະ ສະຕິປັນຍາປາກົດຂຶ້ນເມື່ອມີອາຍຸສິບຫ້າປີ. ໂດຍສະເພາະຢ່າງຍິ່ງເມື່ອເວລາດັ່ງກ່າວ ມາຮອດແບບ

ແຜນຂອງຄວາມຄິດ ແລະ ພຶດຕິກຳທີ່ຈະກຳນົດທິດທາງຂອງຊີວິດຂອງບຸກຄົນຜູ້ນັ້ນ ຈະປ່ຽນແປງບໍ່ໄດ້ອີກແລ້ວ. ພຣະອັບດຸລບາຮາ ໄດ້ກ່າວວ່າ:

> **"ເປັນການຍາກຫຼາຍທີ່ຈະສິດສອນບຸກຄົນ ແລະ ຄັດເກົາອຸປະນິໄສຂອງເຂົາເມື່ອຜ່ານພົ້ນໄວລຸ້ນໄປແລ້ວ. ປະສົບການທີ່ມີຜ່ານມາໄດ້ສະແດງໃຫ້ເຫັນວ່າ ເມື່ອເວລາດັ່ງກ່າວນັ້ນໄດ້ລ່ວງເລີຍໄປ, ເຖິງແມ່ນຈະໃຊ້ຄວາມພະຍາຍາມທັງໝົດ ເພື່ອປັບປຸງຄວາມໂນ້ມອຽງຂອງນິໄສຂອງເຂົາແລ້ວ, ກໍ່ຈະບໍ່ເກີດປະໂຫຍດໃດໆເລີຍ ເຂົາອາດຈະດີຂຶ້ນໃນມື້ນີ້; ແຕ່ເມື່ອເວລາຜ່ານໄປສອງສາມມື້ເຂົາກໍ່ຈະລືມ, ແລະ ຫັນຫຼັງກັບໄປສູ່ສະພາບທີ່ເປັນນິໄສ ແລະ ວິທີທີ່ຄຸ້ນເຄີຍຂອງເຂົາ."** [3]

ເຈົ້າຄຸ້ນເຄີຍກັບຄຳສັບທີ່ວ່າ "ໄວລຸ້ນ", ເຊິ່ງມັນໃຊ້ຢ່າງຜິວເຜີນເພື່ອໝາຍເຖິງຄົນໜຸ່ມສາວ ເມື່ອມີອາຍຸປະມານສິບສອງປີໄປຈົນເຖິງອາຍຸສິບແປດປີ. ບາງຄັ້ງຄຳວະລີ "ໄວລຸ້ນຕອນຕົ້ນ" ເຄີຍໃຊ້ເພື່ອລະບຸກຸ່ມອາຍຸທີ່ໂດຍທົ່ວໄປພວກເຮົາເອີ້ນວ່າ "ເຍົາວະຊົນ". ໃນທີ່ນີ້ເຮົາບໍ່ໄດ້ເຈາະຈົງເປັນພິເສດໃນແງ່ນີ້ ແລະ ໃຊ້ຄຳສັບນີ້ປ່ຽນແທນກັນເພື່ອອ້າງອີງເຖິງຄົນລຸ້ນເຍົາ ອາຍຸລະຫວ່າງສິບສອງຫາສິບຫ້າປີ. ໃຫ້ຄິດເຖິງຄວາມສຳຄັນຂອງການສຶກສາໃນຊ່ວງໄວລຸ້ນ, ແລ້ວຕັດສິນໃຈວ່າຂໍ້ຄວາມຂ້າງລຸ່ມນີ້ຖືກຫຼືບໍ່:

____ ເຖິງແມ່ນວ່າ ບໍ່ໄດ້ຮັບການສຶກສາທີ່ເໝາະສົມໃນໄວເດັກ, ແຕ່ການລ້ຽງດູທີ່ເໝາະສົມໃນຊ່ວງໄວລຸ້ນ ຈະສາມາດຊ່ວຍແກ້ໄຂຮູບແບບພຶດຕິກຳອັນບໍ່ເພິ່ງປາດຖະໜາ ທີ່ສ້າງຂຶ້ນໃນໄວເດັກອອກໄປໄດ້.

____ ມີພຽງແຕ່ເດັກນ້ອຍທີ່ໄດ້ຮັບການສຶກສາທາງຈິດວິນຍານ ແລະ ຄຸນນະທັມມາຕັ້ງແຕ່ໄວເດັກເທົ່ານັ້ນ ທີ່ສາມາດພັດທະນາສັກກະຍະພາບຂອງພວກເຂົາໄດ້ຢ່າງເຕັມທີ່.

____ ຫາກປາດສະຈາກການເອົາໃຈໃສ່ ແລະ ດູແລຮັກສາທີ່ເໝາະສົມໃນຊ່ວງໄວລຸ້ນແລ້ວ, ຄົນໆນັ້ນກໍ່ສາມາດຫຼົງໄປໃນທາງທີ່ຜິດໄດ້ງ່າຍ, ເຖິງວ່າເຂົາຈະໄດ້ຮັບການສຶກສາທາງຈິດວິນຍານ ແລະ ຄຸນນະທັມມາຕະຫຼອດຊ່ວງໄວເດັກກໍ່ຕາມ.

____ ໃນຊ່ວງໄວລຸ້ນນັ້ນ ແຕ່ລະບຸກຄົນຈະມີແນວໂນ້ມ ທີ່ຈະວາງແນວທາງການໃຊ້ຊີວິດຂອງຕົນເອງ ໃຫ້ໄປຕາມພະລັງຂັບເຄື່ອນສັງຄົມທີ່ກ້າວໜ້າ ຫຼື ປ່ອຍໃຫ້ຕົວຂອງພວກເຂົາຖືກນຳພາໄປຕາມພະລັງແຫ່ງຄວາມແຕກສະຫຼາຍທາງສັງຄົມ.

## ຕອນທີ 4

ຄວາມຮູ້ສຶກທີ່ເພີ່ມທະວີຫຼາຍຂຶ້ນ ໃນຊ່ວງເວລາຂອງການເປັນໄວລຸ້ນນີ້ ອາດຈະຖືກຊີ້ນຳໄປໃນສອງທິດທາງ, ທາງໜຶ່ງໄປສູ່ການຍອມຈຳນົນຕໍ່ພຣະປະສົງຂອງພຣະຜູ້ເປັນເຈົ້າ ແລະ ການຮັບໃຊ້ຢ່າງເສຍສະລະຕົນຕໍ່ມະນຸດຊາດ ຫຼື ອີກທາງໜຶ່ງແມ່ນການຕົກເປັນທາດຂອງອັດຕາ ແລະ ກິເລດ. ພຣະອັດຸລບາຮາ ໄດ້ກ່າວວ່າ:

> **"ລັກສະນະສະເພາະຂອງຊັບພະສິ່ງສ້າງສັນ ແຕ່ລະຊະນິດນັ້ນມີພື້ນຖານຢູ່ບົນຄວາມຮອບຮູ້ແຫ່ງສະຫວັນ, ເພາະບໍ່ມີຄວາມບົກຜ່ອງໃດໃນການສ້າງສັນຂອງພຣະຜູ້ເປັນເຈົ້າ. ຢ່າງໃດກໍ່ຕາມ, ບຸກຄະລິກະພາບບໍ່ມີອົງປະກອບຂອງຄວາມຖາວອນຢູ່. ມັນເປັນຄຸນລັກສະນະໃນມະນຸດທີ່ສາມາດປ່ຽນແປງໄດ້ເລັກໜ້ອຍ ເຊິ່ງສາມາດຖືກກຳນົດໃຫ້ໄປໃນທິດທາງໃດກໍ່ໄດ້. ຖ້າຫາກເຂົາໄດ້ມາເຊິ່ງຄຸນນະທັມອັນໜ້າສັນລະເສີນທັງຫຼາຍ, ຄຸນນະທັມເລົ່ານີ້ກໍ່ຈະເພີ້ມຄວາມແຂງແຮງໃຫ້ແກ່ລັກສະນະສະເພາະຂອງມະນຸດ ແລະ ດຶງເອົາພະລັງທີ່ເຊື່ອງຊ້ອນທັງຫຼາຍຂອງເຂົາອອກມາ; ແຕ່ຖ້າເຂົາໄດ້ມາເຊິ່ງຂໍ້ບົກຜ່ອງຕ່າງໆ, ຄວາມງົດງາມ ແລະ ຄວາມລຽບງ່າຍຂອງລັກສະນະສະເພາະກໍ່ຈະສູນຫາຍໄປຈາກເຂົາ ແລະ ຄຸນນະທັມທັງຫຼາຍທີ່ພຣະຜູ້ເປັນເຈົ້າຊົງປະທານມາ ກໍ່ຈະຖືກລົບໄປໃນບັນຍາກາດອັນເໝັນເນົ່າຂອງຕົນເອງ."** [4]

ເຮົາອາໃສຢູ່ໃນຍຸກທີ່ວັດທະນະທຳຂອງວັດຖຸນິຍົມອັນກ້າວລ້າວ ກຳລັງຮຸກຮານເຂົ້າທຸກພາກສ່ວນຂອງຊີວິດ. ການໝົກໝຸ່ນຫຼາຍເກີນໄປກັບອັດຕາ ທີ່ເກາະຫຸ້ມຢູ່ໃນສາຍໃຍຂອງວັດທະນະທຳທີ່ແຜ່ຫຼາຍນີ້ ໄດ້ສ້າງຄວາມທ້າທ້າຍຢ່າງຫຼວງຫຼາຍແກ່ເຮົາ ໃນຂະນະທີ່ເຮົາພະຍາຍາມຈະຊ່ວຍເຫຼືອເຍົາວະຊົນ ໃນການພັດທະນາຄວາມສາມາດຂອງພວກເຂົາຂຶ້ນມາ, ແມ່ນກະທັ້ງ ຄວາມພະຍາຍາມຢ່າງຈິງໃຈທີ່ຈະຊ່ວຍໃຫ້ຄົນລຸ່ນເຍົາຕະໜັກ ເຖິງສັກກະຍາພາບຂອງພວກເຂົາ ແລະ ມຸ້ງພະລັງຂອງຕົນໄປສູ່ປະໂຫຍດສ່ວນລວມ ກໍ່ອາດໄດ້ຮັບຜົນກະທົບຈາກອິດທິພົນໃນທາງລົບ ຂອງກອບຂອງແນວຄວາມຄິດທີ່ມີລັກສະນະເປັນເລື່ອງສະເພາະບຸກຄົນ. ບັນຫານັ້ນມັນສັບຊ້ອນ. ລະບົບຂອງໂລກໃນປະຈຸບັນ ໄດ້ປຸ້ນເອົາຄວາມສາມາດຈຳນວນຫຼວງຫຼາຍ ໃນການຈັດການກັບຊີວິດໄປ; ດັ່ງນັ້ນ, ຄວາມເຊື່ອໝັ້ນໃນຕົນເອງຈຶ່ງເປັນເລື່ອງທີ່ຈະຕ້ອງກ່າວເຖິງ. ຄວາມເຊື່ອໝັ້ນໃນຕົນເອງນີ້ ປິດບັງການຮຽກຮ້ອງສູງຂອງປະຊາຊົນ; ດັ່ງນັ້ນ ຄວາມເຂົ້າໃຈກ່ຽວກັບອັດຕາຈຶ່ງເປັນພາລະກິດອັນຊອບທຳ. ຄວາມເຊື່ອໝັ້ນນີ້ເຮັດໃຫ້ຜູ້ຄົນຈຳນວນຫຼາຍລືມຊີວິດທາງຈິດວິນຍານ; ດັ່ງນັ້ນ ເລື່ອງຂອງການຄົ້ນພົບຕົນເອງຈຶ່ງຄວນໄດ້ຮັບຄວາມສົນໃຈ. ເຖິງຢ່າງໃດກໍ່ ຕາມຫຼັກສູດທີ່ເນັ້ນກ່ຽວກັບ "ຕົນເອງ" ບໍ່ສາມາດຊ່ວຍແກ້ໄຂສະຖານະການໄດ້ສະເໝີໄປ. ສິ່ງທີ່ເກີດຂຶ້ນຫຼາຍຄັ້ງກໍຄື ໃນນາມຂອງການຕະໜັກໃນຕົນເອງ, ການຄົ້ນພົບຕົນເອງ, ແລະ ການເຫັນຄຸນຄ່າໃນຕົນເອງ, ເຊິ່ງຫຼັກສູດດັ່ງກ່າວຈະເຮັດຍົວະເອົາບຸກຄົນ ແລະ ຈະສົ່ງເສີມອັດຕາ. ຄວາມທ້າທາຍຂອງພວກເຮົາແມ່ນການບຳລຸງລ້ຽງ ໃຫ້ຄົນລຸ້ນເຍົາມີຄວາມອ່ອນໄຫວທາງດ້ານຈິດວິນຍານ, ເພື່ອວ່າຫົວໃຈອັນອ່ອນເຍົາຂອງພວກເຂົາ ຈະໄດ້ຮັບການກະຕຸ້ນໂດຍການດຶງດູດໃຫ້ຢູ່

ກັບພຣະຜູ້ຊົງຄວາມງາມອັນຍິ່ງໃຫຍ່ທີ່ສຸດ ແລະ ຫັນໄປຫາອຸດົມການອັນສູງສົ່ງ ຂອງການຮັບໃຊ້ຢ່າງບໍ່ເຫັນແກ່ຕົວຕໍ່ສາສະໜາ. ຄວາມພະຍາຍາມຂອງພວກເຮົາທີ່ຈະຕອບສະໜອງຄວາມຈຳເປັນຂອງການສຶກສາໃນຊ່ວງການພັດທະນານີ້ ໃນຊີວິດຂອງພວກເຂົາຈະຕ້ອງປ້ອງກັນບໍ່ໃຫ້ຕົນເອງຢືນຢັນທີ່ຈະອ້າງສິດທິຂອງຕົນເອງ. ໃນການສຳຫຼວດເບິ່ງລັກສະນະຂອງຄວາມທ້າທາຍນີ້, ຂໍໃຫ້ເຈົ້າທົບທວນກ່ຽວກັບພຣະທັມມະລິຂິດ ທີ່ກ່າວເຖິງອັດຕາໃນເນື້ອຫາຕອນຕໍ່ໆໄປຂອງຫຼັກສູດນີ້. ໃນຕອນນີ້ໜ້າຈະເປັນປະໂຫຍດຖ້າເຈົ້າຈະອະທິບາຍກັບກຸ່ມຂອງເຈົ້າ ກ່ຽວກັບຄວາມໝາຍຂອງວະລີ *"ອັດຕາທີ່ຢືນຢັນການຂຶ້ນມາອ້າງສິດທິຂອງຕົນເອງ"*. ເຮົາຈະຮັບປະກັນໄດ້ຢ່າງໃດວ່າ ການຮັບໃຊ້ຈະບໍ່ກາຍເປັນສັງວຽນທີ່ອັດຕາໃຊ້ຍົກລະດັບຂອງຕົນເອງ ໃຫ້ສູງຂຶ້ນ?

## ຕອນທີ 5

ພຣະທັມມະລິຂິດຊຸດທຳອິດຂ້າງລຸ່ມນີ້ ເປັນເລື່ອງກ່ຽວກັບລັກສະນະສະເພາະຂອງເຮົາໃນບາງແງ່ມຸມ ເຊິ່ງເປັນທີ່ພໍພຣະໄທຂອງພຣະຜູ້ເປັນເຈົ້າ ແລະ ຄວນໄດ້ຮັບການພັດທະນາຂຶ້ນມາ.

> **"ໂອ ຄົນຮັບໃຊ້ຂອງເຮົາ! ຫາກເຈົ້າສາມາດເຂົ້າໃຈໄດ້ວ່າ ເຮົາໄດ້ມອບໝາຍຄວາມໜ້າອັດສະຈັນໃດຂອງຄວາມເອື້ອອາລີ ແລະ ຄວາມກະລຸນາຂອງເຮົາໃຫ້ແກ່ຈິດວິນຍານຂອງເຈົ້າແລ້ວ, ເຈົ້າຈະກຳຈັດຄວາມຜູກພັນກັບສິ່ງສ້າງສັນທັງໝົດຢ່າງແທ້ຈິງ ແລະ ຈະໄດ້ຮັບຄວາມຮູ້ທີ່ແທ້ຈິງກ່ຽວກັບຕົວເຈົ້າເອງ ເຊິ່ງກໍ່ຄືຄວາມຮູ້ທີ່ເປັນສິ່ງດຽວກັນກັບ ຄວາມເຂົ້າໃຈກ່ຽວກັບການດຳລົງຢູ່ຂອງເຮົາເອງ. ເຈົ້າຈະພົບຕົນເອງເປັນອິດສະລະຈາກທຸກສິ່ງນອກຈາກເຮົາ ແລະ ຈະມອງເຫັນໄດ້ດ້ວຍດວງຕາທັງພາຍໃນ ແລະ ພາຍນອກຂອງເຈົ້າເຖິງມະຫາສະໝຸດແຫ່ງຄວາມເມດຕາຮັກໃຄ່ ແລະ ກະລຸນາທິຄຸນຂອງເຮົາທີ່ກຳລັງສາດຊັດຢູ່ພາຍໃນເຈົ້າໄດ້ຢ່າງປະຈັກແຈ້ງ ເຊັ່ນດຽວກັບການເປີດເຜີຍນາມອັນຮຸ່ງເຮືອງຂອງເຮົາ."** [5]

> **"ໄກແສນໄກຈາກຄວາມຮຸ່ງເຮືອງຂອງພຣະອົງ ຄືສິ່ງທີ່ມະນຸດຕ້ອງມະລາຍໄປຈະສາມາດຢືນຢັນໄດ້ກ່ຽວກັບພຣະອົງ, ຫຼື ອ້າງເຫດຜົນກ່ຽວກັບພຣະອົງ, ຫຼື ກ່າວຄຳສັນລະເສີນພຣະອົງ! ໜ້າທີ່ໃດກໍ່ຕາມທີ່ພຣະອົງຊົງກຳນົດໃຫ້ຄົນຮັບໃຊ້ຂອງພຣະອົງ ໃນການສັນລະເສີນຢ່າງເຖິງທີ່ສຸດກ່ຽວກັບຄວາມສະຫງ່າງາມ ແລະ ຄວາມຮຸ່ງເຮືອງເປັນພຽງ ເຄື່ອງໝາຍຂອງຄວາມກະລຸນາຂອງພຣະອົງຕໍ່ພວກເຂົາ ພວກເຂົາຈະຖືກທຳໃຫ້ສາມາດຂຶ້ນໄປສູ່ສະຖານະ ທີ່ຊົງປະທານໃຫ້ແກ່ການດຳລົງຢູ່ພາຍໃນທີ່ສຸດຂອງພວກເຂົາ ເຊິ່ງເປັນສະຖານະຂອງຄວາມຮູ້ກ່ຽວກັບຕົວຕົນຂອງພວກເຂົາເອງ."** [6]

**"ທາຣາດ (ວິທີການ) ຂໍ້ທຳອິດ ແລະ ລັດສະໝີທຳອິດທີ່ເລີ່ມປາກົດຂຶ້ນມາຈາກຂອບຟ້າແຫ່ງພຣະຄຳພີແມ່ບົດຄື ການທີ່ມະນຸດຄວນຮູ້ຈັກຕົນເອງ ແລະ ຮູ້ວ່າສິ່ງໃດນຳໄປສູ່ຄວາມສູງສົ່ງ ຫຼື ຄວາມຕ່ຳຕ້ອຍ, ຄວາມຮຸ່ງເຮືອງ ຫຼື ຄວາມຕົກຕ່ຳ, ຄວາມລ້ຳລ້ອຍ ຫຼື ຄວາມຍາກຈົນ."** [7]

**"ໂອ ບຸດແຫ່ງທັມມະ! ເຮົາສ້າງເຈົ້າຂຶ້ນມາລ້ຳຄ່າ ເຫດໃດເຈົ້າຈຶ່ງລົດຄ່າຕົວເອງ? ເຮົາເນລະມິດເຈົ້າຂຶ້ນມາປະເສີດ ເຫດໃດເຈົ້າຈຶ່ງເຮັດໃຫ້ຕົວເອງໃຫ້ຕ່ຳລົງ? ເຮົາໃຫ້ຊີວິດຂອງເຈົ້າກຳເນີດມາຈາກສາລະແຫ່ງຄວາມຮູ້ ເຫດໃດເຈົ້າຈຶ່ງສະແຫວງຫາວິຊາຈາກຜູ້ອື່ນນອກຈາກເຮົາ? ເຮົາປັ້ນເຈົ້າຂຶ້ນມາຈາກດິນແຫ່ງຄວາມຮັກ ເຈົ້າກັບສາລະວົນຢູ່ກັບຜູ້ອື່ນໄດ້ຢ່າງໃດ? ຈົ່ງພິສູດຕົວເຈົ້າເອງເພື່ອວ່າເຈົ້າຈະເຫັນເຮົາດຳລົງຢູ່ພາຍໃນເຈົ້າ ດ້ວຍຕົນເອງຢ່າງຊົງອຳນາດ ແລະ ຊົງພຣະລານຸພາບ."** [8]

ຈົ່ງຕື່ມຂໍ້ຄວາມໃສ່ປະໂຫຍກຕໍ່ໄປນີ້ໃຫ້ສົມບູນ ຕາມພຣະວັດຈະນະຕ່າງໆທີ່ຢູ່ຂ້າງເທິງ:

ກ. ເມື່ອເຮົາສາມາດເຂົ້າໃຈໄດ້ວ່າ ພຣະຜູ້ເປັນເຈົ້າໄດ້ຊົງມອບໝາຍຄວາມໜ້າອັດສະຈັນໃດ ຂອງຄວາມເອື້ອອາລີ ແລະ ຄວາມກະລຸນາຂອງພຣະອົງໃຫ້ແກ່ຈິດວິນຍານຂອງເຮົາ ແລ້ວເຮົາຈະ ________________________________ ແລະ ຈະ _
________________________________________
________________________________________

ຂ. ເຮົາຈະພົບຕົນເອງ ________________________________
ແລະ ຈະເບິ່ງເຫັນໄດ້ດ້ວຍດວງຕາທັງພາຍໃນ ແລະ ພາຍນອກຂອງເຈົ້າເຖິງ _________
________________________________________
________________________________________
________________________________________

ຄ. ໜ້າທີ່ໃດກໍ່ຕາມທີ່ພຣະຜູ້ເປັນເຈົ້າຊົງກຳນົດໃຫ້ເຮົາ ໃນການສັນລະເສີນກ່ຽວກັບຄວາມສະຫງ່າງາມ ແລະ ຄວາມຮຸ່ງເຮືອງຂອງພຣະອົງນັ້ນ ເປັນພຽງເຄື່ອງໝາຍຂອງຄວາມກະລຸນາຂອງພຣະອົງຕໍ່ພວກເຂົາ ເພື່ອວ່າພວກເຂົາຈະເຮັດໃຫ້ສາມາດ ________________________
________________________________________
________________________________________
________________________________________

ງ. ເຮົາຄວນຮູ້ຈັກຕົນເອງ ແລະ ຮູ້ວ່າສິ່ງໃດນຳໄປສູ່ສິ່ງທີ່ ________________________
________ ຫຼື ________________________ , ________________________, ຫຼື ___
______________, ________________________, ________________________
________________________________________

ຈ. ເຮົາຖືກສ້າງຂຶ້ນມາ ______________________ ແລະ ຖືກເນລະມິດຂຶ້ນມາໃຫ້ _______

______________________________________________________________________

ພຣະຜູ້ເປັນເຈົ້າຊົງໃຫ້ຊີວິດຂອງເຮົາກຳເນີດມາຈາກສາລະແຫ່ງ ____________________

________________________________ ພຣະອົງຊົງປັ້ນເຮົາຂຶ້ນມາຈາກ ____________

______________________________________________________________________

ພຣະອົງຊົງບອກໃຫ້ເຮົາພິສູດຕົວເຮົາເອງເພື່ອວ່າເຮົາເອງ _________________________

______________________________________________________________________

ພຣະທັມມະລິຂິດຂ້າງເທິງທັງໝົດນັ້ນ ກ່າວເຖິງອັດຕາທີ່ແທ້ຈິງຂອງເຮົາ ແລະ ຄວາມສຳຄັນໃນການສ້າງຄວາມເຂົ້າໃຈໃນທັມມະຊາດຂອງອັດຕາ. ແນ່ນອນທີ່ເຮົາຄວນສຳນຶກວ່າ ຄວາມຮູ້ກ່ຽວກັບຄວາມປະເສີດຂອງການດຳລົງຢູ່ຂອງເຮົາ ຈະບໍ່ນຳໄປສູ່ການເຮັດໃຫ້ຕົວຕົນຂອງເຮົາ ຍິ່ງໃຫຍ່ຫຼາຍຂຶ້ນ ແຕ່ຈະນຳໄປສູ່ຄວາມຖ່ອມຕົນຕໍ່ໜ້າພຣະພັກຂອງພຣະຜູ້ເປັນເຈົ້າ ແລະ ຕໍ່ໜ້າຄົນຮັບໃຊ້ຂອງພຣະອົງ. ທີ່ຈິງແລ້ວການຮູ້ຈັກຕົວຕົນທີ່ແທ້ຈິງຂອງເຮົາ ຈະຊ່ວຍເຫຼືອເຮົາໃນການຕໍ່ສູ້ກັບອັດຕາ. ຂໍໃຫ້ອະທິບາຍພາຍໃນກຸ່ມຂອງເຈົ້າວ່າສິ່ງນີ້ເກີດຂຶ້ນໄດ້ຢ່າງໃດ.

## ຕອນທີ 6

ພຣະທັມມະລິຂິດຊຸດທີ່ສອງ ມີຂໍ້ຄວາມທີ່ເປັນຄຳຕັກເຕືອນ ເຖິງຜົນທີ່ຕາມມາຂອງການປ່ອຍຕົນໄປຕາມອັດຕາ.

> **"ຈິດວິນຍານທີ່ບໍ່ສົມບູນພ້ອມທຸກດວງນັ້ນ ເອົາຕົນເອງເປັນສູນກາງ ແລະ ຄິດເຖິງແຕ່ຄວາມຜາສຸກຂອງຕົນເອງ."** [9]

> **"ແຕ່ຖ້າເຂົາສະແດງອອກແມ່ນພຽງຮ່ອງຮອຍທີ່ເລັກໜ້ອຍທີ່ສຸດ ຂອງຄວາມປາດຖະໜາ ທີ່ເຫັນແກ່ຕົວ ແລະ ຄວາມຮັກແຕ່ຕົນເອງແລ້ວ, ຄວາມພະຍາຍາມຂອງເຂົາຈະບໍ່ນຳໄປສູ່ສິ່ງໃດເລີຍ ແລະ ເຂົາຈະຖືກທຳລາຍ ແລະ ຖືກປະຖິ້ມໃຫ້ໝົດຫວັງໃນທີ່ສຸດ."** [10]

> **"ໂດຍສະເພາະແລ້ວ ຫາກເຈົ້າມີຄວາມຫວັງທີ່ຈະກ່າວ ຫຼືເວົ້າໃນຄວາມຍິ່ງທະນົງ ຄວາມອວດດີຂອງຕົນ. ຄຸນນະສົມບັດດັ່ງກ່າວນີ້ຄືຄວາມທະນົງຕົນ, ເຊິ່ງເປັນສິ່ງທີ່ທຳລາຍຜູ້ຄົນທີ່ສຳຄັນໃນໂລກຫຼາຍຄົນແລ້ວ. ເຖິງແມ່ນວ່າ ຄົນໆໜຶ່ງຈະຄອບຄອງຄຸນນະສົມບັດທີ່ໜ້າສັນລະເສີນຫຼາຍໆຢ່າງ ແຕ່ວ່າມີຄວາມຍິ່ງທະນົງຖືຕົວເອງເປັນສຳຄັນ ບັນດາຄຸນນະທັມ ແລະ ຄຸນນະລັກສະນະທີ່ດີທັງຫຼາຍທີ່ມີ ກໍ່ຈະຖືກລົບເລືອນອອກຈົນບໍ່ເຫຼືອຮອງຮອຍ ແລະ ໃນທ້າຍທີ່ສຸດກໍ່ຈະຖືກປົກຄຸມດ້ວຍຂໍ້ບົກຜ່ອງທີ່ຕົກຕ່ຳທີ່ສຸດ"** [11]

“ຄວາມສິ້ນຫວັງທັງໃນຕອນນີ້ແລະຕໍ່ໄປຂ້າງໜ້າຄື ສິ່ງທີ່ເຈົ້າຈະໄດ້ຮັບຈາກການທຳຕາມໃຈຕົນເອງ, ສິ່ງທີ່ໜ້າລັງກຽດ ແລະ ຄວາມທຸກຍາກຈະເປັນທັງໝົດທີ່ເຈົ້າຈະເກັບກ່ຽວໄດ້ຈາກຄວາມຫຼົງໄຫຼຈາກການເຊື່ອໃນຄົນໂງ່ຈ້າ ແລະ ຄົນໄຮ້ຄວາມຄິດ.” [12]

“ມື້ນີ້, ປະຊາຊົນທຸກຄົນບົນໂລກກຳລັງໝົກໝຸ່ນຢູ່ກັບປະໂຫຍດສ່ວນຕົນ ແລະ ໃຊ້ຄວາມພະຍາຍາມຢ່າງທີ່ສຸດ ທີ່ຈະສົ່ງເສີມປະໂຫຍດທາງວັດຖຸຂອງຕົນເອງ. ພວກເຂົາກຳລັງບູຊາຕົນເອງ ບໍ່ແມ່ນການດຳລົງຢູ່ທີ່ແທ້ຈິງແຫ່ງສະຫວັນ ຫຼື ໂລກແຫ່ງມະນຸດຊາດ.” [13]

“ດັ່ງທີ່ເຈົ້າໄດ້ຂຽນມາເລົ່າໃຫ້ຟັງການທົດສອບເລົ່ານີ້ ເປັນການຊຳລະລ້າງຮອຍເປື້ອນ ຂອງອັດຕາອອກໄປຈາກກະຈົກແຫ່ງຫົວໃຈ, ຈົນກວ່າດວງອາທິດແຫ່ງສັດຈະທັມຈະສາຍສ່ອງລົງເທິງກະຈົກນັ້ນ ເພາະວ່າບໍ່ມີຜ້າກັ້ງໃດຈະຂວາງກັ້ນໄດ້ຫຼາຍເທົ່າອັດຕາ ແລະ ບໍ່ວ່າຜ້າກັ້ງນັ້ນຈະບາງພຽງໃດ ໃນທີ່ສຸດກໍ່ປິດກັ້ນບຸກຄົນຜູ້ນັ້ນອອກໄປ ແລະ ເຮັດໃຫ້ເຂົາບໍ່ມີສິດທິຮັບສ່ວນແບ່ງຂອງເຂົາ ຈາກພຣະກະລຸນາທິຄຸນອັນບໍ່ຮູ້ສິ້ນ.” [14]

“ຈົ່ງສັງເກດເບິ່ງວ່າດວງອາທິດສ່ອງແສງມາຍັງສັບພະສິ່ງ ແຫ່ງການສ້າງສັນທັງມວນຢ່າງໃດ, ແຕ່ສະເພາະພື້ນຜິວທີ່ບໍລິສຸດ ແລະ ໄດ້ຮັບການຂັດເງົາແລ້ວເທົ່ານັ້ນທີ່ຈະສາມາດ ສະທ້ອນຄວາມຮຸ່ງເຮືອງ ແລະ ແສງສະຫວ່າງຂອງດວງອາທິດ. ຈິດວິນຍານໃດທີ່ມືດມົນແມ່ນບໍ່ມີສ່ວນແບ່ງໃນການເປີດເຜີຍແສງເຈີດຈ້າອັນຮຸ່ງເຮືອງ ແຫ່ງການດຳລົງຢູ່ທີ່ແທ້ຈິງ, ແລະດິນແຫ່ງອັດຕາເຊິ່ງບໍ່ສາມາດໄດ້ຮັບປະໂຫຍດຈາກແສງນັ້ນ ກໍ່ບໍ່ກໍ່ໃຫ້ເກີດການຈະເລີນເຕີບໂຕໃດໆ.” [15]

“ເປັນຄວາມຕົກຕໍ່າພຽງໃດສຳລັບຈິດວິນຍານ ທີ່ສາມາດພົບຄວາມຫັນສາໄດ້ໃນຄວາມມືດມົນ, ໝົກໝຸ່ນຢູ່ກັບຕົນເອງ, ເປັນນັກໂທດຂອງອັດຕາແລະກິເລດ ແລະ ກິ້ງເກືອກຢູ່ໃນໂຄນຕົມຂອງໂລກວັດຖຸ.” [16]

“ການເອົາຕົນເອງເປັນສູນກາງ”, “ຄວາມຮັກຕົນເອງ”, “ການບູຊາຕົນເອງ”, “ຄວາມຄິດຕົນເອງ”, “ການປ່ອຍໃຈໄປກັບຄວາມສົນໃຈຂອງອັດຕາ” ແລະ “ການເປັນນັກໂທດຂອງກິເລດ ແລະອັດຕາ” ເປັນສິ່ງທີ່ກ່ຽວຂ້ອງກັບແງ່ລົບ ຂອງລັກສະນະສະເພາະຂອງຕົວພວກເຮົາ. ໂດຍນຳເອົາພຣະທັມມະລິຂິດເບື້ອງຕົ້ນມາພິຈາລະນາ, ຂໍໃຫ້ເຈົ້າຂຽນຂໍ້ຄວາມສອງສາມປະໂຫຍກເພື່ອອະທິບາຍວ່າການໝົກໝຸ່ນກັບອັດຕານັ້ນ ຢຸດຢັ້ງການຈະເລີນເຕີບໂຕທາງຈິດວິນຍານ ແລະ ບັ່ນທອນປະສິດຕິພາບຂອງການຮັບໃຊ້ຢ່າງໃດແດ່.

## ຕອນທີ 7

ພຣະທັມມະລິຂິດຊຸດທີ່ສາມ ເປັນຄຳແນະນຳຢ່າງຫຼວງຫຼາຍກ່ຽວກັບວິທີການປະຕິບັດຕໍ່ອັດຕາ ທີ່ຍຶດໝັ້ນໃນຕົວບຸກຄົນ:

"ວັນນີ້ເປັນວັນທີ່ການຮັບຮອງຂອງອານາຈັກອັບຮາ ຢູ່ກັບຜູ້ທີ່ສະລະຕົນເອງ, ລືມຄວາມຄິດເຫັນຂອງຕົນເອງ, ຖິ້ມບຸກຄະລິກະພາບຂອງຕົນ ແລະ ຄິດເຖິງສະຫວັດດີພາບຂອງຜູ້ອື່ນ. ຜູ້ໃດກໍ່ຕາມທີ່ໄດ້ສູນເສຍຕົນເອງໄປ ຈະໄດ້ຄົ້ນພົບຈັກກະວານ ແລະ ຜູ້ທີ່ອາໃສຢູ່ໃນນັ້ນ. ຜູ້ໃດກໍ່ຕາມທີ່ໝົກໝຸ່ນຢູ່ກັບຕົນເອງ ຈະເປັນຜູ້ທີ່ກຳລັງພະເນຈອນ ໄປໃນທະເລຊາຍຂອງຄວາມປະໝາດ ແລະ ຄວາມເສຍໃຈ. ກຸນແຈດອກສຳຄັນສູ່ການຄວບຄຸມຕົນເອງກໍ່ຄື ການລືມຕົນເອງ. ຖະໜົນໄປສູ່ພຣະຣາຊະວັງແຫ່ງຊີວິດນັ້ນ ຕ້ອງເຂົ້າໄປໂດຍວິຖີທາງຂອງການລະຖິ້ມ." [17]

"ພຣະອົງຊົງປະສິດປະສາດພວກເຮົາ ດ້ວຍພະລັງອຳນາດໃນການມອງເຫັນການດຳລົງຢູ່ຂອງສິ່ງຕ່າງໆໄດ້ຢ່າງທະລຸປຸໂປ່ງ, ແຕ່ເຮົາຕ້ອງລະຖິ້ມຕົນເອງ, ເຮົາຕ້ອງມີດວງຈິດທີ່ບໍລິສຸດ, ຄວາມຕັ້ງໃຈທີ່ບໍລິສຸດ, ແລະ ພະຍາຍາມດ້ວຍຫົວໃຈ ແລະ ວິນຍານໃນຂະນະທີ່ຍັງຢູ່ໃນໂລກມະນຸດ ເພື່ອບັນລຸສູ່ຄວາມຮຸ່ງເຮືອງອັນບໍ່ຮູ້ສິ້ນ." [18]

"ດ້ວຍເຫດນີ້ຜ້າກັ້ງແຫ່ງອັດຕາອັນເລວຊາມ ຈະຕ້ອງຖືກເຜົາຖິ້ມໄປດ້ວຍເພີງແຫ່ງຄວາມຮັກ, ເພື່ອວ່າດວງຈິດຈະໄດ້ຮັບການຊຳລະໃຫ້ສະອາດ ແລະ ຂັດເກົາ, ແລະ ດ້ວຍເຫດນີ້ຈຶ່ງອາດເຈົ້າໃຈເຖິງສະຖານະຂອງພຣະອົງ ພຣະຜູ້ບໍ່ໄດ້ສ້າງໂລກນີ້ຂຶ້ນມາເພື່ອພຣະອົງ." [19]

"ຈົ່ງລະຖິ້ມຄວາມຄິດທັງໝົດກ່ຽວກັບອັດຕາ, ແລະ ພະຍາຍາມທີ່ຈະເຊື່ອຟັງ ແລະ ຈຳນົນຕໍ່ພຣະປະສົງຂອງພຣະຜູ້ເປັນເຈົ້າເທົ່ານັ້ນ. ໂດຍວິທີນີ້ເທົ່ານັ້ນ, ທີ່ເຮົາຈະໄດ້ກາຍ ເປັນພົນລະເມືອງ ຂອງອານາຈັກຂອງພຣະຜູ້ເປັນເຈົ້າ ແລະ ບັນລຸສູ່ຊີວິດນິລັນດອນ." [20]

“ຈົ່ງທຳທຸກສິ່ງທີ່ສາມາດກະທຳໄດ້ ເພື່ອກາຍເປັນຄົນທີ່ເບື່ອໜ່າຍໃນອັດຕາ, ແລະ ຈົ່ງຜູກມັດຕົນເອງຕໍ່ພຣະພັກແຫ່ງຄວາມງົດງາມ, ແລະ ເມື່ອເຈົ້າໄດ້ບັນລຸເຖິງລະດັບຂອງ ການຮັບໃຊ້ນັ້ນ ເຈົ້າຈະພົບສັບພະສິ່ງແຫ່ງການສ້າງສັນທັງມວນອ້ອມຮອບຢູ່ໃກ້ເຈົ້າ. ນີ້ເປັນພຣະກະລຸນາທີ່ຄຸນອັນໄຮ້ຂອບເຂດ, ນີ້ເປັນອຳນາດອະທິປະໄຕອັນສູງສຸດ, ນີ້ເປັນຊີວິດທີ່ບໍ່ມີວັນຕາຍ. ທຸກສິ່ງນອກຈາກສິ່ງນີ້ ຈະສະແດງປະກົດເຊິ່ງການສູນສິ້ນ ແລະ ຄວາມເສຍຫາຍຢ່າງໃຫຍ່ຫຼວງ”[21]

“ໂອ ສະຫາຍ, ຈົ່ງລະຖິ້ມຕົນເອງ, ເພື່ອວ່າເຈົ້າຈະຄົ້ນພົບພຣະຜູ້ບໍ່ມີຜູ້ໃດປຽບປານໄດ້; ແລະ ຈົ່ງບິນຂຶ້ນກາຍໂລກແຫ່ງມະນຸດນີ້ໄປ, ເພື່ອວ່າເຈົ້າຈະພົບຮັງຂອງເຈົ້າ ໃນທີ່ພຳນັກແຫ່ງສະຫວັນ. ຈົ່ງເປັນດັ່ງສູນຍະພາບ ເພື່ອວ່າເຈົ້າຈະຈູດເພີງແຫ່ງການດຳລົງຢູ່ຂຶ້ນ ແລະ ເປັນຜູ້ທີ່ຄູ່ຄວນກັບວິຖີແຫ່ງຄວາມຮັກ” [22]

“ຂໍໃຫ້ພວກເຮົາລະຖິ້ມຄວາມຄິດເຖິງອັດຕາທັງໝົດ, ຂໍໃຫ້ພວກເຮົາປິດຕາຂອງເຮົາຈາກທຸກສິ່ງບົນໂລກ, ຂໍໃຫ້ພວກເຮົາຢ່າປະກາດຄວາມທຸກທໍລະມານຂອງເຮົາ ຫຼື ກ່າວເຖິງຄວາມຜິດພາດຂອງເຮົາ. ແທນທີ່ຈະເປັນເຊັ່ນນັ້ນ ຂໍໃຫ້ພວກເຮົາລືມຕົວຕົນຂອງພວກເຮົາ, ແລະ ດື່ມນ້ຳອາງຸ່ນແຫ່ງພຣະກະລຸນາທີ່ຄຸນສະຫວັນ, ຂໍໃຫ້ພວກເຮົາຈົ່ງເປັ່ງສຽງ ຮ້ອງແຫ່ງຄວາມປິຕິຍິນດີອອກມາ, ແລະ ຊຶມຊາບຕົວເຮົາເຂົ້າໄປໃນຄວາມງາມຂອງ ພຣະຜູ້ຊົງຄວາມຮຸ່ງເຮືອງທັງປວງ.” [23]

“ໂອ ປະຊາຊົນຊາວໂລກ! ຈົ່ງຢ່າທຳຕາມການກະຕຸ້ນຂອງອັດຕາທັງໝົດ ເພາະອັດຕານັ້ນຮຽກຮ້ອງຢ່າງຍຶດໝັ້ນທີ່ຈະໄປສູ່ຄວາມເລວຊາມ ແລະ ຕັນຫາ, ແທນທີ່ຈະເປັນເຊັ່ນນັ້ນ ຈົ່ງປະຕິບັດຕາມພຣະຜູ້ຊົງຄອບຄອງສັບພະສິ່ງທີ່ສ້າງສັນທັງປວງ ຜູ້ຊົງບັນຊາໃຫ້ພວກເຈົ້າສະແດງອອກເຊິ່ງຄວາມເຄັ່ງຄັດໃນສີລະທັມ ແລະ ສະແດງໃຫ້ເຫັນເຖິງຄວາມເກງກົວຕໍ່ພຣະຜູ້ເປັນເຈົ້າ.” [24]

ຄວາມສຸຂຸມຮອບຄອບໃນພຣະທັມມະລິຂິດຂ້າງເທິງ ມີຄວາມກົງກັນຂ້າມຢ່າງຊັດເຈນກັບການບູຊາອັດຕາ ແລະ ການຄອບງຳດ້ວຍການເຮັດໃຫ້ຕົນເອງມີຄວາມພໍໃຈ ເຊິ່ງເປັນລັກສະນະຂອງສັງຄົມປັດຈຸບັນ. ຈາກພຣະທັມມະລິຂິດເລົ່ານີ້ ຂໍໃຫ້ເຈົ້າລະບຸທັດສະນະຄະຕິບາງຢ່າງ ທີ່ເຮົາຕ້ອງຮຽນຮູ້ທີ່ຈະພັດທະນາຂຶ້ນກ່ຽວກັບອັດຕາ. ຍົກຕົວຢ່າງເຊັ່ນ:

- ເຮົາຄວນຮຽນຮູ້ທີ່ຈະສະລະຕົນເອງ, ລືມຄວາມຄິດເຫັນຂອງຕົນ, ປະຖິ້ມບຸກຄະລິກກະພາບ ແລະ ຄິດເຖິງສະຫວັດດີພາບຂອງຜູ້ອື່ນ.

- ເຮົາຄວນຮຽນຮູ້ທີ່ຈະລະຖິ້ມຄວາມຕ້ອງການຂອງຕົນເອງ. ____________

  ______________________________

- ເຮົາຄວນຮຽນຮູ້ທີ່ຈະ ______________________________

  ______________________________

- ເຮົາຄວນຮຽນຮູ້ທີ່ຈະ ______________________________

  ______________________________

- ເຮົາຄວນຮຽນຮູ້ທີ່ຈະ ______________________________

  ______________________________

- ເຮົາຄວນຮຽນຮູ້ທີ່ຈະ ______________________________

  ______________________________

- ເຮົາຄວນຮຽນຮູ້ທີ່ຈະ ______________________________

  ______________________________

- ເຮົາຄວນຮຽນຮູ້ທີ່ຈະ ______________________________

  ______________________________

ຂໍໃຫ້ເຈົ້າປຶກສາຫາລືກັນພາຍໃນກຸ່ມຂອງເຈົ້າວ່າ ຄຸນລັກສະນະຕ່າງໆທີ່ເຈົ້າໄດ້ຂຽນໄວ້ ຂ້າງເທິງນັ້ນ ຈະມີສ່ວນຮ່ວມເຂົ້າໃນການພັດທະນາ ຂອງການເປັນບຸກຄົນທີ່ໜ້າສັນລະເສີນ ແລະ ການປະຕິບັດການຮັບໃຊ້ທີ່ມີພະລັງແນວໃດ.

## ຕອນທີ 8

ໃນທ້າຍນີ້, ພຣະທັມມະລິຂິດຊຸດຕໍ່ໄປ ຈະຊ່ວຍເຕືອນເຮົາເຖິງຄວາມສຳພັນທີ່ມີຜົນຕອບແທນເຊິ່ງກັນແລະກັນ, ລະຫວ່າງການເສຍສະລະຕົນເອງ ກັບຄວາມສາມາດໃນການມີສ່ວນສະໜັບສະໜູນຕໍ່ການປ່ຽນແປງຂອງສັງຄົມ:

**"ຜູ້ຄົນຈຳນວນຫຼາຍກຳລັງໝົກໝຸ່ນຢູ່ກັບອັດຕາ ແລະຄວາມປາດຖະໜາທາງໂລກ ແລະກຳລັງຈົມດິ່ງລົງໄປໃນມະຫາສະມຸດຂອງໂລກທີ່ຕໍ່າກວ່າ ແລະ ເປັນນັກໂທດຂອງໂລກແຫ່ງທັມມະຊາດ, ຍົກເວັ້ນແຕ່ຈິດວິນຍານທີ່ໄດ້ເປັນອິດສະລະຈາກໂສ້ໜັກ ແລະ ພັນທະນາການແຫ່ງໂລກວັດຖຸ, ທີ່ເປັນດັ່ງນົກທີ່ໂບຍບິນຂຶ້ນຢ່າງວ່ອງໄວ ໃນອານາຈັກອັນບໍ່ມີຂີດຈຳກັດນີ້. ພວກເຂົາຕື່ນຕົວ ແລະເຝົ້າລະມັດລະວັງ, ພວກເຂົາລົບຫຼີກການປົດບັງຂອງໂລກແຫ່ງທັມມະຊາດ, ຄວາມປາດຖະໜາສູງສຸດຂອງພວກເຂົາມີສູນກາງຢູ່ ທີ່ການກຳຈັດການຕໍ່ສູ້ດີ້ນລົນເພື່ອການດຳລົງຢູ່ໃຫ້ໝົດໄປຈາກໝູ່ມະນຸດ, ການສ່ອງສະຫວ່າງໃຫ້ເຫັນເຖິງຄວາມຜ່ອງໃສທາງທັມ ແລະ ຄວາມຮັກແຫ່ງອານາຈັກເບື້ອງບົນ, ການເຝີກແອບຂອງການມີຄວາມເມດຕາກະ**

ລຸນາຢ່າງທີ່ສຸດ ໃນທ່າມກາງປະຊາຊົນ, ການສໍານຶກໃນຄວາມເຊື່ອມໂຍງຢ່າງໃກ້ຊິດ ແລະ ແໜ້ນແຟ້ນລະຫວ່າງສາສະໜາ ກັບການປະຕິບັດຕາມແນວທາງແຫ່ງການສະລະຕົນເອງ. ເມື່ອເປັນເຊັ່ນນີ້ແລ້ວ ໂລກແຫ່ງມະນຸດຊາດຈຶ່ງຈະປ່ຽນແປງໄປເປັນອານາຈັກຂອງພຣະຜູ້ເປັນເຈົ້າ." [25]

"ໂອ ກອງທັບຂອງພຣະຜູ້ເປັນເຈົ້າ! ປັດຈຸບັນໃນໂລກນີ້ທຸກຄົນກໍາລັງເລ່ລ້ອນຫຼົງທາງໄປໃນທະເລຊາຍຂອງຕົນ, ເຄື່ອນໄປທາງນັ້ນທາງນີ້ຕາມທີ່ຄວາມຄິດຟຸ້ງຊ່ານ ແລະ ຄວາມຕາມໃຈທີ່ຕ້ອງການ ເພື່ອດໍາເນີນໄປຕາມຄວາມທຸນທັນພັນແລ່ນຂອງຕົນ. ໃນໝູ່ຝູງຊົນທີ່ຫຼວງຫຼາຍຂອງໂລກນັ້ນ, ມີພຽງຊຸມຊົນແຫ່ງພຣະນາມອັນຍິ່ງໃຫຍ່ທີ່ສຸດເທົ່ານັ້ນທີ່ເປັນອິດສະລະ ແລະຢູ່ຫ່າງໄກຈາກເລ່ກົນອຸບາຍຂອງມະນຸດ ແລະ ບໍ່ມີຈຸດປະສົງອັນເຫັນແກ່ຕົວໃດໃຫ້ສົ່ງເສີມ. ຄົນເຫຼົ່ານີ້ໄດ້ລຸກຂຶ້ນຢ່າງໂດດດ່ຽວທ່າມກາງຄົນທັງໝົດ ດ້ວຍຈຸດມຸ້ງໝາຍທີ່ບໍລິສຸດປາດສະຈາກອັດຕາ ເພື່ອປະຕິບັດຕາມຄໍາສອນຂອງພຣະຜູ້ເປັນເຈົ້າ, ກະຕືລືລົ້ນຢ່າງທີ່ສຸດທີ່ຈະທໍາງານຢ່າງໜັກ ແລະ ພະຍາຍາມໃຫ້ບັນລຸເປົ້າໝາຍໜຶ່ງດຽວ ເຊິ່ງກໍ່ຄືການປ່ຽນໂລກທີ່ຕໍ່າກວ່ານີ້ ໃຫ້ເປັນສະຫວັນເບື້ອງບົນ, ການທໍາໃຫ້ໂລກນີ້ເປັນກະຈົກ ໃຫ້ກັບອານາຈັກຂອງພຣະຜູ້ເປັນເຈົ້າ, ການປ່ຽນໂລກນີ້ໃຫ້ເປັນໂລກທີ່ແຕກຕ່າງອອກໄປ, ແລະ ການທໍາໃຫ້ມະນຸດຊາດທັງໝົດ ເລີ່ມໃຊ້ວິຖີແຫ່ງຄວາມທ່ຽງທັມ ແລະ ແບບຢ່າງໃໝ່ຂອງຊີວິດ." [26]

"ໂອ ເຈົ້າຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ! ໃນຍຸກສາສະໜາບາຮາຍນີ້, ສາສະໜາຂອງພຣະຜູ້ເປັນເຈົ້າເປັນເຈດຕະນາລົມທີ່ບໍ່ມີສິ່ງໃດເຈືອປົນ. ສາສະໜາຂອງພຣະອົງບໍ່ໄດ້ ເປັນຂອງໂລກວັດຖຸ. ສາສະໜານີ້ບໍ່ໄດ້ມາເພື່ອການຕໍ່ສູ້ ຫຼື ສົງຄາມ, ການກະທໍາທີ່ປະສົງຮ້າຍ ຫຼື ໜ້າລະອາຍ, ສາສະໜານີ້ບໍ່ໄດ້ມາເພື່ອທະເລາະວິວາດກັບສາສະໜາອື່ນໆ ຫຼື ຂັດແຍ້ງກັບປະຊາຊາດອື່ນ. ກອງທັບດຽວທີ່ສາສະໜານີ້ມີຢູ່ຄືຄວາມຮັກຂອງພຣະຜູ້ເປັນເຈົ້າ, ຄວາມປິຕິຍິນດີດຽວທີ່ມີຄື ນໍ້າອາງຸ່ນອັນໃສສະອາດຂອງຄວາມຮູ້ຂອງພຣະອົງ, ການຕໍ່ສູ້ດຽວຂອງສາສະໜານີ້ຄື ການອະທິບາຍສັດຈະທັມແຫ່ງສະຫວັນ, ການລົບນະລົງດຽວທີ່ມີກໍ່ຄື ເພື່ອຕໍ່ຕ້ານອັດຕາທີ່ຍືນການ, ແຮງກະຕຸ້ນອັນຊົ່ວຮ້າຍຂອງຫົວໃຈມະນຸດ. ໄຊຊະນະຂອງສາສະໜານີ້ຄື ການຍອມຈໍານົນ ແລະຍອມແພ້, ແລະ ການໄຮ້ເຊິ່ງອັດຕາຄືຄວາມຮຸ່ງເຮືອງອັນບໍ່ຮູ້ສິ້ນຂອງສາສະໜານີ້." [27]

ພຣະທັມມະລິຂິດຂ້າງເທິງອະທິບາຍ ກ່ຽວກັບລັກສະນະໂດດເດັ່ນບາງປະການຂອງບັນດາ ຜູ້ທີ່ພຣະອັບດຸລບາຮາ ພິຈາລະນາວ່າເປັນ ***"ກອງທັບຂອງພຣະຜູ້ເປັນເຈົ້າ"***. ຜູ້ທີ່ທ່ານກ່າວເຖິງ ວ່າເປັນ ***"ຜູ້ເປັນທີ່ຮັກຍິ່ງຂອງພຣະຜູ້ເປັນເຈົ້າ"*** ແລະເປັນຜູ້ທີ່ ***"ເປັນອິດສະລະຈາກໂສ້ໜັກ ແລະ ພັນທະນາການແຫ່ງໂລກວັດຖຸ"***. ຂໍໃຫ້ເຈົ້າທົບທວນກ່ຽວກັບຄວາມໂດດເດັ່ນເຫຼົ່ານີ້ ໃນລະຫວ່າງທີ່ເຈົ້າຕື່ມຂໍ້ຄວາມຂ້າງລຸ່ມນີ້.

ກ. ຜູ້ຄົນຈຳນວນຫຼາຍກຳລັງໝົກໝຸ່ນຢູ່ກັບ ________________________________

____ແລະກຳລັງຈົມ ດິ່ງລົງໄປໃນ ________________________________

____ແລະເປັນນັກໂທດຂອງ ________________________________

________________________________________________

________________________________________________

ຂ. ບັນດາຈິດວິນຍານທີ່ໄດ້ເປັນອິດສະລະຈາກໂສ້ໜັກແລະພັນທະນາການແຫ່ງໂລກວັດຖຸ, ທີ່ເປັນດັ່ງນົກທີ່ໂບຍບິນຂຶ້ນຢ່າງວ່ອງໄວໃນອານາຈັກອັນບໍ່ມີຂີດຈຳກັດນີ້ ____________

__________ແລະ ________________________ພວກເຂົາລົບຫຼີກ ____________

____________-____________ , ຄວາມປາດຖະໜາສູງສຸດຂອງພວກເຂົາມີສູນ

ກາງຢູ່ທີ່ ________________________________

____________ , ________________________________

___ແລະ________________________ການເຝິກແອບຂອງການມີ____________

________________________________, ການສຳນຶກໃນ __________

________________________ ກັບການປະຕິບັດຕາມ ________________

________________________________________________

ຄ. ປັດຈຸບັນໃນໂລກນີ້ທຸກຄົນກຳລັງ ________________________________ ເຄື່ອນໄປ

________________________________ ເພື່ອດຳເນີນໄປ ____________

________________________________________________

ງ. ມີພຽງຊຸມຊົນແຫ່ງພຣະນາມອັນຍິ່ງໃຫຍ່ທີ່ສຸດເທົ່ານັ້ນທີ່ ________________________

____________________ ແລະ ບໍ່ມີ ________________________________

________________________________________ຄົນເລົ່ານີ້ໄດ້ລຸກຂຶ້ນ

ຢ່າງໂດດດ່ຽວທ່າມກາງຄົນທັງໝົດດ້ວຍ ________________________________

__________ ເພື່ອປະຕິບັດຕາມ ________________________________

ກະຕືລືລົ້ນຢ່າງທີ່ສຸດທີ່ຈະ ________________________________

ເຊິ່ງກໍ່ຄືການປ່ຽນ ________________________ໃຫ້ເປັນ ____________________

___ ການທຳໃຫ້ ________________________________ເປັນ ____________

____ ການປ່ຽນ ________________________ ໃຫ້ເປັນ ____________________

__________ແລະການທຳໃຫ້ມະນຸດຊາດທັງໝົດ ________________________________

________________________________________________________________________

ຈ. ສາສະໜາຂອງພຣະຜູ້ເປັນເຈົ້າເປັນເຈດຕະນາລົມ ________________________________
___. ສາສະໜາຂອງພຣະອົງບໍ່ໄດ້ເປັນຂອງ ____________________________________
_________. ກອງທັບດຽວທີ່ສາສະໜານີ້ມີຢູ່ຄື ____________________________________
__________. ຄວາມປິຕິຍິນດີດຽວທີ່ມີຄື ________________________________ .
ການຕໍ່ສູ້ດຽວຂອງສາສະໜານີ້ຄື ________________________________________.
ການລົນນະລົງດຽວທີ່ມີກໍ່ຄື _____________________________________.
ໄຊຊະນະຂອງສາສະໜານີ້ຄື ______________________ ແລະ ___________________
___. _______________________ ຄື _______________________ ຂອງສາສະໜານີ້

## ຕອນທີ 9

ເຈົ້າອາດປາດຖະໜາ ທີ່ຈະທ່ອງຈຳພຣະທັມມະລິຂິດຕອນຕໍ່ໄປນີ້ ທີ່ຄັດມາຈາກບົດອະທິຖານທີ່ເປີດເຜີຍໄວ້ໂດຍ ພຣະບາຮາອຸລລາຫ໌:

**"ຂ້າແດ່ພຣະຜູ້ເປັນນາຍ, ຂໍຊົງບັນດານຫົວໃຈພວກເຂົາດ້ວຍຄວາມສຳນຶກເຖິງຄວາມໄຮ້ເຊິ່ງອຳນາດຂອງຕົນຢູ່ເບື້ອງໜ້າ ພຣະຜູ້ຊົງເປັນທີ່ເປີດເຜີຍຕົວຕົນຂອງພຣະອົງ, ແລະ ຂໍຊົງສອນພວກເຂົາໃຫ້ສຳນຶກໃນຄວາມຍາກໄຮ້ ຂອງທັມມະຊາດຂອງພວກເຂົາຕໍ່ໜ້າເຄື່ອງໝາຍຕ່າງໆຂອງຄວາມພຽງພໍໃນຕົນເອງ ແລະ ຄວາມມັ່ງຄັ່ງຂອງພຣະອົງ, ເພື່ອວ່າພວກເຂົາຈະມາຊຸມນຸມກັນອ້ອມຮອບສາສະໜາຂອງພຣະອົງ ແລະ ຍຶດໝັ້ນຢູ່ກັບສາຍພູສາຂອງພຣະອົງແຫ່ງຄວາມປານີຂອງພຣະອົງ ແລະ ເກາະຕິດກັບສາຍໃຍແຫ່ງຄວາມຍິນດີ ແຫ່ງພຣະປະສົງຂອງພຣະອົງ."** [28]

**"ຂ້າແດ່ພຣະຜູ້ເປັນເຈົ້າ, ດັ່ງນັ້ນ ຂໍພຣະອົງຊົງປົດເປື້ອງເສື້ອຜ້າອາພອນແຫ່ງອັດຕາ ແລະ ຄວາມປາດຖະໜາໄປຈາກຄົນຮັບໃຊ້ຂອງພຣະອົງ, ຫຼື ຂໍຊົງໂປດໃຫ້ສາຍຕາຂອງປະຊາຊົນຂອງພຣະອົງຖືກຍົກຂຶ້ນໄປສູ່ລະດັບສູງ ທີ່ພວກເຂົາຈະບໍ່ສັງເກດເຫັນສິ່ງໃດ ໃນຄວາມປາດຖະໜາຂອງຕົນ ນອກຈາກການພັດທະນາຂອງສາຍລົມອັນອ່ອນໂຍນ ຂອງຄວາມຮຸ່ງເຮືອງອານັນຂອງພຣະອົງ, ແລະ ຈະສຳນຶກໃນຕົນເອງເຖິງແຕ່ພຽງການ ເປີດເຜີຍຕົວຕົນທີ່ຊົງປານີຂອງພຣະອົງເທົ່ານັ້ນ, ເພື່ອວ່າໂລກ ແລະ ທຸກສິ່ງທີ່ຢູ່ໃນໂລກຈະໄດ້ຮັບການສຳລະລ້າງຈາກສິ່ງໃດກໍ່ຕາມທີ່ແຕກຕ່າງຈາກພຣະອົງ, ແລະ ສິ່ງທີ່ສະແດງປະກົດສະເພາະແຕ່ຕົວຕົນຂອງພຣະອົງເທົ່ານັ້ນ."** [29]

## ຕອນທີ 10

ເມື່ອຄວາມສົນໃຈຂອງເຈົ້າທີ່ຈະຊ່ວຍບຳລຸງລ້ຽງເຍົາວະຊົນມີຫຼາຍຂຶ້ນ ເຈົ້າກໍ່ຈະເລີ່ມຄຸ້ນເຄີຍກັບຫຼາຍໆທິດສະດີທີ່ພະຍາຍາມອະທິບາຍ ລັກສະນະທີ່ແທ້ຈິງຂອງຄົນໃນຊ່ວງໄວນີ້. ຄຳໆໜຶ່ງທີ່ເຈົ້າຈະພົບຢູ່ສະເໜີຄືຄຳວ່າ *"ວິກິດ"* ເຊິ່ງເປັນວິກິດກ່ຽວກັບເອກກະລັກຂອງບຸກຄົນ, ການຮັບຮູ້, ອາລົມ, ຄວາມສຳພັນກັບພໍ່ແມ່, ການຕອບສະໜອງກັບຜູ້ມີອຳນາດແລະອື່ນໆ. ເຈົ້າຈຳເປັນຕ້ອງພິຈາລະນາທິດສະດີເລົ່ານີ້ຢ່າງຖີ່ຖ້ວນ ເພື່ອບໍ່ໃຫ້ເຈົ້າລະບຸວ່າພາວະວິກິດເປັນສະພາບທີ່ ຈຳເປັນຂອງເຍົາວະຊົນ. ມັນເປັນສິ່ງຈຳເປັນແທ້ໆຫຼືບໍ່ ສຳລັບໄວລຸ້ນທຸກຄົນທີ່ຈະຕ້ອງມີລັກສະ ນະຂອງການປ່ຽນແປງຂະໜາດໃຫຍ່ແບບໃດແບບໜຶ່ງ? ມີເຍົາວະຊົນໃດເຄີຍປະສົບກັບພາວະວິກິດດັ່ງກ່າວ ໃນຊ່ວງເວລາຂອງປະຫວັດສາດຂອງມະນຸດຫຼືບໍ່, ຫຼື ແມ່ນກະທັ່ງໃນປັດຈຸບັນ ພວກເຂົາຍັງຕ້ອງຜ່ານວິກິດດັ່ງກ່າວໃນທຸກວັດທະນະທັມແລະສັງຄົມຫຼືບໍ່?

ໃນການພະຍາຍາມທີ່ຈະຕອບຄຳຖາມເລົ່ານີ້, ເຈົ້າອາດຈະຈຳເປັນທີ່ຈະຕ້ອງຮູ້ວ່າ ການສຶກສາທີ່ມີຢູ່ຢ່າງແຜ່ຫຼາຍຂອງເຍົາວະຊົນນັ້ນ ແມ່ນກະທຳກັນຢູ່ໃນໂຄງຮ່າງທີ່ເນັ້ນຢ້ຳຫຼາຍເກີນໄປ ໃນເລື່ອງຂອງອັດຕາ, ການທຳໃຫ້ເປັນທີ່ພໍໃຈ, ການປ່ຽນແປງທາງຊີວະວິທະຍາ, ຄວາມຮູ້ສຶກເລື່ອງເພດ ແລະຄວາມສຳເລັດທາງວັດຖຸ. ການສຶກສາເລົ່ານີ້ມັກເນັ້ນຫຼາຍທີ່ສຸດໄປທີ່ຊົນຊັ້ນ, ເຊື້ອຊາດ, ເອກະລັກທາງເພດ, ລະເລີຍບໍ່ສົນໃຈຄຸນລັກສະນະທີ່ພຣະຜູ້ເປັນເຈົ້າ ປະທານມາໃຫ້ແກ່ຈິດວິນຍານ. ແນ່ນອນເລີຍວ່າຄວາມຢັ່ງຮູ້ບາງຢ່າງທີ່ເຈົ້າໄດ້ມາຈາກການສຶກສາເລົ່ານີ້ ຈະຊ່ວຍເຫຼືອເຈົ້າໃນການທີ່ເຈົ້າພະຍາຍາມ ທີ່ຈະເຂົ້າໃຈໃນລັກສະນະຂອງກຸ່ມເຍົາວະຊົນທີ່ເຈົ້າຫວັງທີ່ຈະຊ່ວຍ. ແຕ່ເປັນສິ່ງທີ່ໜ້າສົງໄສວ່າ ຄວາມພະຍາຍາມທີ່ໄດ້ຮັບແຮງບັນດານໃຈຈາກການສຶກສາເລົ່ານີ້ ຈະສາມາດເຮັດຫຍັງໄດ້ຫຼາຍກວ່າການທີ່ຈະຊ່ວຍໃຫ້ເຍົາວະຊົນປັບຕົວ ໃຫ້ເຂົ້າກັບບັນທັດຖານຂອງສັງຄົມປັດຈຸບັນ ເຊິ່ງເປັນສັງຄົມທີ່ມີໜ້າຕາເປັນວັດຖຸນິຍົມ, ເຮົາຮູ້ດີເຖິງແນວໂນ້ມທີ່ຈະທຳລາຍຄວາມຮັບຮູ້ທາງດ້ານຈິດວິນຍານ. ແນວຄິດກ່ຽວກັບເຍົາວະຊົນທີ່ ເຈົ້າຈະອ້າແຂນຮັບຈະມຸ້ງໄປທີ່ການພັດທະນາເອກະລັກທາງຈິດວິນຍານຂອງບຸກຄົນທີ່ຈະ "ສືບສານ ອາລິຍະທັມທີ່ກ້າວໄປຂ້າງໜ້າຕະຫຼອດເວລາ" ແລະ ເປັນບຸກຄົນທີ່ຈະກາຍເປັນ "ຜູ້ສ້າງສັນຕິພາບ" ແລະເປັນ "ຜູ້ສະໜັບສະໜຸນຄວາມຍຸຕິທັມ".

ເຈົ້າຈຳເປັນຕ້ອງຄຳນຶງຢູ່ສະເໝີວ່າ ພາບທີ່ຄົນອື່ນເບິ່ງຄົນລຸ້ນເຍົາໄວນັ້ນ ມີຜົນຫຼາຍທີ່ສຸດຕໍ່ພວກເຂົາ. ດັ່ງນັ້ນ ພາບອັນມືດມົນຂອງໄວລຸ້ນທີ່ແຜ່ຫຼາຍຢູ່ໃນສັງຄົມ ຈຶ່ງມີສ່ວນຊ່ວຍສ້າງສະພາບຄວາມເປັນຢູ່ທາງສັງຄົມ ອັນບໍ່ເປັນທີ່ເພິ່ງປາດຖະໜາໃຫ້ປະກົດຂຶ້ນ. ຕົວຢ່າງເຊັ່ນ: ມີຜູ້ອ້າງວ່າ ຊິກມັນ ຟຣອຍ ກ່າວໄວ້ວ່າ ຊ່ວງໄວລຸ້ນເປັນຄວາມເຈັບປ່ວຍຊົ່ວຄາວທາງຈິດ, ແລະ ແອນນາ ຟຣອຍ ກໍ່ສະແດງຄວາມເຫັນວ່າ ການເປັນຄົນປົກກະຕິໃນຊ່ວງໄວລຸ້ນນັ້ນນັບວ່າ ເປັນຄວາມຜິດປົກກະຕິ. ຄຳກ່າວເລົ່ານີ້ສ້າງການປິດກັ້ນຜູ້ຄົນອອກໄປ ຈາກການເບິ່ງເຫັນຄວາມສາມາດທີ່ແທ້ຈິງຂອງເຍົາວະຊົນຫຼືບໍ່?

ມີພະຍານຫຼັກຖານໃດທີ່ຊັກນຳໃຫ້ນັກວິທະຍາສາດເລົ່ານີ້ ບັນລຸເຖິງຂໍ້ສະຫຼຸບທີ່ມີຜົນກະທົບກັບຫຼາຍສິ່ງເຊັ່ນນີ້? ແນ່ນອນເລີຍວ່າ ມີນັກການສຶກສາຫຼາຍຄົນທີ່ກ່າວເຖິງຊ່ວງໄວລຸ້ນໃນທາງບວກ. ແຕ່ຄວາມຄິດເຫັນຂອງພວກເຂົາ ບໍ່ໂດດເດັ່ນໃນການອະທິບາຍກ່ຽວກັບເລື່ອງນີ້. ພາບທີ່ຢູ່ໃນຄວາມຄິດຂອງພໍ່ແມ່ ແລະ ຄູຈຶ່ງເປັນພາບທີ່ຄືກັນຂອງຄວາມຫົວດື້, ຄວາມປາດສະຈາກເຫດຜົນ ແລະ ຄວາມອໍ້ແອ່ບໍ່ເອົາຈິງເອົາຈັງ. ເຮົາອາດຈະຖາມວ່າສັງຄົມທີ່ມີຄວາມຄິດເຊັ່ນນີ້ ຢູ່ໃນກະແສເລືອດຈະຊ່ວຍໃຫ້ເຍົາວະຊົນກາຍເປັນເຍົາວະຊົນ ທີ່ເຮົາໄດ້ພັນລະນາໄວ້ໃນພາກທີໜຶ່ງຂອງຫຼັກສູດນີ້ໄດ້ຢ່າງໃດ?

## ຕອນທີ 11

ໃນການພິຈາລະນາເຖິງສິ່ງທີ່ອະທິບາຍໄວ້ເບື້ອງຕົ້ນ, ເຮົາຂໍແນະນຳໃຫ້ເຈົ້າລອງສົມມຸດວ່າ ເຈົ້າຢູ່ໃນຈຸດຢືນຕໍ່ໄປນີ້: ເມື່ອໃດກໍ່ຕາມທີ່ກຸ່ມເຍົາວະຊົນພັດທະນາພຶດຕິກຳອັນບໍ່ເພິ່ງປະສົງຂຶ້ນມາ (ເຊິ່ງເປັນພຶດຕິກຳທີ່ນອກເໜືອຈາກພຶດຕິກຳ ທີ່ເປັນຜົນໂດຍທັມມະຊາດຈາກຂັ້ນຕອນຂອງ ວິກິດ ແລະ ໄຊຊະນະ ທີ່ເປັນລັກສະນະສຳຄັນຂອງຂະບວນການໃນການຈະເລີນເຕີບໂຕ) ຕົ້ນເຫດຂອງປະກົດການຕ່າງໆນີ້ ຄວນຈະພົບເຫັນໄດ້ຈາກສະພາບແວດລ້ອມທາງສັງຄົມ, ເຊິ່ງບາງທີອາດຈະເປັນສິ່ງທີ່ຂັດແຍ້ງກັນທີ່ເຫັນໄດ້ຊັດເຈນ ທີ່ຄົນລຸ້ນເຍົາໄວຄົ້ນພົບໃນການດຳລົງຊີວິດຂອງຜູ້ໃຫຍ່ ເຊິ່ງເປັນຜູ້ທີ່ເຂົາເຄີຍເຊື່ອຖືຢ່າງໝົດຫົວໃຈມາກ່ອນ, ຫຼື ໃນຄວາມໄຮ້ສະມັດຕະພາບຂອງຜູ້ໃຫຍ່ ໃນການຍອມຮັບເຫດຜົນຂອງຄົນທີ່ກຳລັງພະຍາຍາມລະຖິ້ມນິໄສຂອງເດັກ.

ແນ່ນອນວ່າໃນສະຖານະການນີ້, ບໍ່ໃຫ້ໂຕ້ແຍ້ງດ້ວຍການບໍ່ໃຫ້ມີຄວາມໃຈຮ້ອນໂດຍສິ້ນເຊີງ ຫຼື ການຕໍ່ຕ້ານກັບພຶດຕິກຳຂອງໄວລຸ້ນ. ສິ່ງທີ່ໄດ້ແນະນຳກໍຄືສະພາບແວດລ້ອມທາງສັງຄົມ, ໂດຍສະເພາະຢ່າງຍິ່ງຄວາມປະພຶດຂອງຜູ້ໃຫຍ່ ມີສ່ວນຮັບຜິດຊອບຕໍ່ລັກສະນະທີ່ບໍ່ພຶງປະສົງຫຼາຍປະການ ທີ່ກ່ຽວຂ້ອງກັບໄວນີ້. ເພື່ອເປັນການສຳຫຼວດເບິ່ງກ່ຽວກັບຄວາມໝາຍທີ່ກ່ຽວຂອງຄຳກ່າວນີ້, ເຈົ້າອາດປາດຖະໜາທີ່ຈະອະທິບາຍໃນກຸ່ມຂອງເຈົ້າ ກ່ຽວກັບຄວາມມີເຫດຜົນຂອງຂໍ້ຄວາມເລົ່ານີ້ ແລະ ລອງຂຽນຂໍ້ຄວາມອື່ນທີ່ຈະສາມາດໃຫ້ລາຍລະອຽດເພີ່ມເຕີມ ແກ່ແນວຄວາມຄິດດັ່ງກ່າວນີ້:

- ເຍົາວະຊົນຈະຕໍ່ຕ້ານຜູ້ໃຫຍ່ທີ່ຮ້ອງຂໍໃຫ້ພວກເຂົາ ເຮັດຕາມມາດຕະຖານທີ່ຜູ້ໃຫຍ່ເອງກໍ່ບໍ່ເຮັດຕາມ.
- ເຍົາວະຊົນເບິ່ງຄືວ່າຈະຕໍ່ຕ້ານຄຳແນະນຳ ທີ່ສະແດງອອກໃນລັກສະນະຂອງການເທດສະໜາສັ່ງສອນ.
- ພວກເຂົາຈະກາຍເປັນຄົນອໍ້ແອ່ບໍ່ເອົາຈິງເອົາຈັງ ເມື່ອສັງຄົມບໍ່ໄດ້ໃຫ້ຫຍັງກັບພວກເຂົາເລີຍ, ນອກຈາກກິດຈະກຳຜິວເຜີນ ທີ່ຂັດຂວາງການພັດທະນາຄວາມສາມາດທາງສະຕິປັນຍາຂອງພວກເຂົາ.

- ພວກເຂົາສະແດງອອກເຊິ່ງຄວາມຮູ້ສຶກດູຖູກຕໍ່ລະບຽບວິໄນ, ເມື່ອຜູ້ໃຫຍ່ໃຊ້ກົດບັງຄັບທີ່ຮຸນແຮງກັບພວກເຂົາ, ໂດຍສະເພາະຖ້າພວກເຂົາໄດ້ຮັບອິດສະລະພາບ ຢ່າງໄຮ້ຂີດຈຳກັດໃນຕອນທີ່ເປັນເດັກ.
- ພວກເຂົາເບິ່ງຄືວ່າຈະຫຸນຫັນພັນແລ່ນ ເມື່ອຜູ້ໃຫຍ່ອ້ອມຂ້າງບໍ່ຮູ້ສຶກວ່າພວກເຂົາຕ້ອງການຄວາມຊ່ວຍເຫຼືອ ໃນການຄິດຢ່າງຮອບຄອບກ່ຽວກັບຜົນຂອງການຕັດສິນໃຈຕ່າງໆຂອງຕົນເອງ.
- ພວກເຂົາຈະກາຍເປັນຜູ້ມີຄວາມຍິ່ງທະນົງ ເມື່ອພວກເຂົາຖືກສອນກ່ຽວກັບຄວາມສຳຄັນຂອງຕົນເອງ ແທນທີ່ຈະເປັນການຮັບໃຊ້ສັງຄົມຢ່າງບໍ່ເຫັນແກ່ຕົວ.
- ພວກເຂົາຈະກາຍເປັນຄົນຕາມໃຈຕົນເອງ ເມື່ອມີການໂຄສະນາຊວນເຊື່ອຢ່າງຕໍ່ເນື່ອງ ຍົວະໃຫ້ພວກເຂົາສະໜອງຕອບຕໍ່ຄວາມປາດຖະໜາທາງກາຍຂອງຕົນເອງ.

## ຕອນທີ 12

ສະພາຍຸຕິທັມແຫ່ງສາກົນໄດ້ກ່າວເຖິງ "ຄວາມລະຫຼວມແລະຄວາມເຊື່ອມຊາມ" ຂອງ "ສັງຄົມທີ່ອະນຸຍາດຕາມໃຈມັກ" ແລະ ຄວາມຈຳເປັນທີ່ຊາວໜຸ່ມຈະຕ້ອງປ້ອງກັນຈາກອິດທິພົນຂອງມັນ:

> **"... ຈາກຈຸດປະສົງອັນສັກສິດຂອງພຣະຜູ້ເປັນເຈົ້າ ຈະໃຫ້ປະໂຫຍດຫຼວງຫຼາຍເມື່ອສັງເກດວ່າບາຮາຍ, ແລະ ໂດຍສະເພາະຊາວໜຸ່ມບາຮາຍ ໂດດເດັ່ນເໜືອຄວາມລະຫຼວມ ແລະ ຄວາມເຊື່ອມຊາມຂອງສັງຄົມທີ່ອະນຸຍາດຕາມໃຈມັກ, ມາດຕະຖານຄວາມປະພຶດອັນສູງສົ່ງ ທີ່ພວກເຂົາພະຍາຍາມຮັກສາໄວ້ນັ້ນ ຢັ່ງຮາກເລິກໃນຫຼັກການທາງຈິດວິນຍານ, ການໃຫ້ຄວາມໝັ້ນໃຈ, ເຄົາລົບຕົນເອງ ແລະ ມີຄວາມສຸກຢ່າງແທ້ຈິງ. ໃນອີກທາງໜຶ່ງ ມີພຽງຄວາມເສຍຫາຍທີ່ຍິ່ງໃຫຍ່ທີ່ສຸດເທົ່ານັ້ນ ທີ່ສາມາດເຮັດໄດ້ຫາກສານຸສິດຖືກກະແສນ້ຳກືນກິນ."** [30]

ຖ້ອຍຄຳຕໍ່ໄປນີ້ຂອງທ່ານສາສະນະພິບານ ໃຫ້ຄວາມຢັ່ງຮູ້ຢ່າງເລິກເຊິ່ງກ່ຽວກັບທັມມະຊາດທາງສັງຄົມ ແລະ ອິດທິພົນທີ່ສັງຄົມມີຕໍ່ພວກເຮົາທຸກຄົນ:

> **"ໂດຍແທ້ຈິງແລ້ວ ເຫດຜົນຫຼັກທີ່ຄວາມຊົ່ວຮ້າຍແຜ່ຫຼາຍຢູ່ໃນສັງຄົມໃນປັດຈຸບັນນີ້ ກໍ່ຄືການຂາດຄວາມຜ່ອງໃສທາງຈິດວິນຍານ. ອະລິຍະທັມທາງວັດຖຸແຫ່ງຍຸກສະໄໝຂອງເຮົາໄດ້ດູດຊຶມພະລັງງານ ແລະ ຄວາມສົນໃຈຂອງມະນຸດຊາດໄປຫຼາຍ ຈົນຜູ້ຄົນທົ່ວໄປບໍ່ຮັບຮູ້ເຖິງຄວາມຈຳເປັນ ທີ່ຈະຕ້ອງຍົກລະດັບພວກເຂົາເອງຂຶ້ນເໜືອແຮງພັກດັນ ແລະ ສະພາບການຕ່າງໆຂອງການດຳລົງຢູ່ທາງວັດຖຸໃນແຕ່ລະວັນຂອງພວກເຂົາ. ຍັງບໍ່ມີຄວາມຕ້ອງການທີ່ຫຼາຍພໍໃນສິ່ງທີ່ເຮົາຄວນເອີ້ນວ່າ ເປັນເລື່ອງທາງຈິດວິນຍານ ທີ່ຈະຊ່ວຍແຍກແຍະສິ່ງເລົ່ານີ້ອອກຈາກຄວາມຈຳເປັນ ແລະ ຄວາມຕ້ອງການ ຂອງການດຳລົງຢູ່ທາງກາຍະພາບຂອງເຮົາ."** [31]

ມີສັນຍານຂອງຄວາມທາຍຍະນະທາງສິນລະທັມຫຼາຍຢ່າງ ທີ່ທ່ານສາສະນະພິບານລະບຸເຖິງເມື່ອທ່ານອະທິບາຍກ່ຽວກັບພະລັງທຳລາຍລ້າງທີ່ດຳເນີນຢູ່ໃນສັງຄົມປັນຈຸບັນ. ການສື່ສານຂອງທ່ານໃນບັນດາສະພາບການເລົ່ານັ້ນທ່ານໄດ້ເນັ້ນຢ້ຳແມ່ນ ທັດສະນະຄະຕິຂອງການບໍ່ຮັບຜິດຊອບຕໍ່ຊີວິດສົມລົດ ແລະ ການເພີ່ມຂຶ້ນສູງຂອງກະແສແຫ່ງການຢ່າຮ້າງ; ຄວາມອ່ອນແອຂອງຄວາມເປັນປຶກແຜ່ນຂອງຄອບຄົວ ແລະ ຄວາມຍ່ອນຍານຢ່າງຕໍ່ເນື່ອງຂອງການຄວບຄຸມຂອງພໍ່ແມ່; ການສະແຫວງຫາຢ່າງກະວົນກະວາຍ ເພື່ອສິ່ງໄຮ້ສາລະທາງໂລກ, ຄວາມມັ່ງຄັ່ງ ແລະ ຄວາມເພີດເພີນ; ການຖະຫຼຳເຂົ້າສູ່ການເຮັດຕາມໃຈຕົນກ່ຽວກັບສິ່ງທີ່ຟຸ່ມເຟືອຍ; ຄວາມເຊື່ອມຊາມຂອງສິນລະປະແລະດົນຕີ; ຄວາມເຊື່ອມຖອຍລົງໃນມາດຕະຖານຂອງວັດທະນະທຳ ແລະ ສື່ສິ່ງພິມ; ແລະຄວາມເປັນປໍລະປັກລະຫວ່າງເຊື້ອຊາດ ແລະ ຄວາມອວດອົງທະນົງຕົວໃນຊາດຂອງຕົນ. ໃນຂະນະທີ່ບໍ່ມີໃຜເລີຍທີ່ມີພູມຄຸ້ມກັນຕໍ່ອິດທິພົນຂອງຄວາມເຈັບປ່ວຍເລົ່ານີ້, ສິ່ງເລົ່ານີ້ຍັງໄດ້ມີຜົນຕໍ່ໄວລຸ້ນໃນລັກສະນະທີ່ສະເພາະເຈາະຈົງອີກດ້ວຍ. ຍົກຕົວຢ່າງເຊັ່ນ, ລອງຄິດເຖິງຜົນກະທົບຂອງການຢ່າຮ້າງ. ບໍ່ຕ້ອງສົງໃສເລີຍວ່າເດັກນ້ອຍຈະຮູ້ສຶກເສັຍໃຈຢ່າງທີ່ສຸດ ເມື່ອພໍ່ແມ່ຂອງພວກເຂົາຢ່າຮ້າງ, ແລະ ພວກເຂົາປາດຖະໜາທີ່ຈະມີຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຄອບຄົວທີ່ສາມັກຄີກັນ. ແຕ່ຖ້າເປັນໄວລຸ້ນ ພວກເຂົາຈະເຕັມໄປດ້ວຍຫຼາຍຄວາມຮູ້ສຶກຢ່າງເຊັ່ນ: ຄວາມຮູ້ສຶກຜິດ, ຄວາມໃຈຮ້າຍ, ຄວາມອາຍ ແລະ ຄວາມເຊື່ອມເສຍກຽດເມື່ອຊີວິດສົມລົດຂອງພໍ່ແມ່ຂອງພວກເຂົາພັງທະລາຍລົງ. ແມ່ນວ່າພວກເຂົາຈະຖືວ່າພໍ່ແມ່ນຂອງຕົນຕ້ອງຮັບຜິດຊອບ, ແຕ່ພວກເຂົາກໍ່ອົດບໍ່ໄດ້ທີ່ຈະໂທດຕົວເອງກ່ຽວກັບໂຊກຮ້າຍຂອງຄອບຄົວ. ເມັດພືດແຫ່ງຄວາມສົງໄສກ່ຽວກັບການຊີວິດສົມລົດ ແລະ ຊີວິດຄອບຄົວຖືກວ່ານລົງໃນຄວາມຄິດຂອງພວກເຂົາ, ແລະ ການເບິ່ງໂລກໃນແງ່ຮ້າຍຂອງພວກເຂົາກໍ່ໄດ້ຮັບການຢືນຢັນ ໂດຍກະແສທີ່ເພີ່ມແຮງຂຶ້ນຂອງການຢ່າຮ້າງ ທີ່ພວກເຂົາເຫັນຢູ່ໃນສັງຄົມອ້ອມຮອບຕົວຂອງພວກເຂົາ.

1. ເຈົ້າອາດຈະພົບວ່າເປັນສິ່ງທີ່ມີປະໂຫຍດ ທີ່ຈະທົບທວນເຖິງລັກສະນະສະພາບການບາງຢ່າງທີ່ທ່ານສາສະນະພິບານກ່າວເຖິງ ສາມາດຫຼໍ່ຫຼອມການຮັບຮູ້ຂອງໄວລຸ້ນກ່ຽວກັບສະພາບຄວາມ

ເປັນຈິງ, ແນວທາງທີ່ພວກເຂົາຄິດກ່ຽວກັບຕົນເອງ, ທັດສະນະຂອງພວກເຂົາກ່ຽວກັບຊີວິດ, ຄວາມຮູ້ສຶກ ແລະ ອາລົມຂອງພວກເຂົາ, ຄວາມສາມາດຂອງພວກເຂົາໃນການໄຈ້ແຍກລະຫວ່າງສິ່ງທີ່ຖືກກັບສິ່ງທີ່ຜິດ, ຄວາມປະພຶດຂອງພວກເຂົາຕໍ່ຜູ້ອື່ນ ແລະ ຄວາມເຊື່ອໝັ້ນຂອງພວກເຂົາໃນສະຖາບັນຕ່າງໆຂອງສັງຄົມ. ຂໍໃຫ້ເຈົ້າຂຽນຂໍ້ຄວາມເພື່ອສະແດງຄວາມຄິດເຫັນຂອງເຈົ້າ.

ກ. ຄວາມລົ້ມເຫຼວທາງສິລະທັມ ແລະ ຄວາມລະເລີຍ ແລະ ຄວາມເຊື່ອມຊາມຂອງສັງຄົມທີ່ປ່ອຍໃຫ້ຄົນເຮັດຕາມອຳເພີໃຈ:

ຂ. ຄວາມອ່ອນແອຂອງຄວາມເປັນປຶກແຜ່ນຂອງຄອບຄົວ, ຄວາມຍ່ອນຍານຢ່າງຕໍ່ເນື່ອງຂອງການຄວບຄຸມຂອງພໍ່ແມ່:

ຄ. ການສະແຫວງຫາຢ່າງກະວົນກະວາຍ ເພື່ອສິ່ງໄຮ້ສາລະທາງໂລກ, ຄວາມມັ່ງຄັ່ງ ແລະ ຄວາມເພີດເພີນ, ລວມທັງການຖະຫຼຳເຂົ້າສູ່ການທຳຕາມໃຈຕົນກ່ຽວກັບສິ່ງຂອງຟຸ່ມເຟືອຍ:

ງ. ຄວາມເຊື່ອມຊາມຂອງສິລະປະ ແລະດົນຕີ, ແລະ ຄວາມເຊື່ອມຖອຍລົງໃນມາດຕະຖານຂອງວັດທະນາທຳ ແລະ ສື່ສິ່ງພິມ:

ຈ. ຄວາມເປັນປໍລະປັກລະຫວ່າງເຊື້ອຊາດ ແລະ ຄວາມອວດອົ່ງທະນົງຕົວໃນຊາດຂອງຕົນ:

2. ມີຄວາມຮູ້ສຶກຫຍັງແດ່ທີ່ເຂົ້າມາໃນໃຈ ແລະ ຄວາມຄິດຂອງເຈົ້າ ໃນຕອນທີ່ເຈົ້າທົບທວນເຖິງຜົນກະທົບຂອງສະພາບການຕ່າງໆເລົ່ານີ້ທີ່ມີຕໍ່ຊີວິດຂອງເຍົາວະຊົນ? ໂດຍການຄຳນຶງເຖິງຜົນກະທົບເລົ່ານີ້ຈະສາມາດຊ່ວຍເຈົ້າໃນການໃຫ້ຄວາມຊ່ວຍເຫຼືອພວກເຂົາ ໃນການພັດທະນາຄວາມສາມາດທີ່ແທ້ຈິງໄດ້ແນວໃດ?

## ຕອນທີ 13

ການຫັນເຫຄວາມສົນໃຈໄປທີ່ອົງປະກອບໃນທາງລົບ ຂອງໂລກທີ່ກຳລັງແຕກສະຫຼາຍ ບໍ່ແມ່ນເປັນການປະຕິເສດເຖິງຄວາມສຳຄັນຂອງພະລັງທາງດ້ານບວກ ທີ່ກຳລັງປະຕິບັດການຢູ່ໃນສັງຄົມປັດ

ຈຸບັນແຕ່ຢ່າງໃດ. ສິ່ງທີ່ຈຳເປັນຕ້ອງກະທຳຄືການເຮັດໃຫ້ໝັ້ນໃຈວ່າ ເຍົາວະຊົນໄດ້ຮັບອິດທິພົນຈາກພະລັງທາງສັງຄົມທີ່ເໝາະສົມ, ແລະ ການສ້າງສິ່ງແວດລ້ອມທີ່ຈະສາມາດ ຊ່ວຍບຳລຸງລ້ຽງພະລັງທາງຈິດວິນຍານຂອງພວກເຂົາ. ຄວາມພະຍາຍາມຕ່າງໆທີ່ຈະແຍກເຍົາວະຊົນອອກຈາກ ສັງຄົມທີ່ເປັນອັນຕະລາຍໂດຍຊິ້ນເຊີງ, ແນ່ນອນ ວ່າເປັນສັງຄົມທີ່ໄຮ້ປະໂຫຍດ. ພວກເຂົາຈະຕ້ອງໄດ້ຮັບການຊ່ວຍເຫຼືອໃຫ້ສາມາດປະເມີນ ແລະ ວິເຄາະເຖິງວິທີການ ທີ່ສະພາບແວດລ້ອມທາງໂລກຮອບຕົວນັ້ນມີຜົນຕໍ່ຄວາມຄິດ ແລະ ຄວາມຮູ້ສຶກຂອງພວກເຂົາ. ການວິເຄາະດັ່ງກ່າວຕ້ອງໃຫ້ ຄວາມສົນໃຈເປັນພິເສດກັບການໂຄສະນາຊວນເຊື່ອປະເພດຕ່າງໆ, ເພາະໃນສັງຄົມສ່ວນໃຫຍ່ການໂຄສະນາຊວນເຊື່ອ ກຳລັງສົ່ງຜົນຫຼາຍຂຶ້ນເລື້ອຍໆໃນການຫຼໍ່ຫຼອມຄ່ານິຍົມ, ທັດສະນະຄະຕິ ແລະ ຄວາມຄິດເຫັນຂອງເຍົາວະຊົນ. ການພິຈາລະນາເລັກໜ້ອຍ ກ່ຽວກັບລັກສະນະສຳຄັນບາງຢ່າງຂອງການໂຄສະນາ ໜ້າຈະພຽງພໍທີ່ຈະສະແດງໃຫ້ເຫັນເຖິງປະເດັນນີ້.

ພະລັງແລະອຸດົມການທາງວັດຖຸ ທີ່ຄວບຄຸມຢູ່ເບື້ອງຫຼັງຂອງການໂຄສະນາຊວນເຊື່ອບິດເບືອນສະພາບຄວາມເປັນຈິງ. ພາບຕ່າງໆທີ່ຖືກນຳສະເໜີໃນການໂຄສະນາ, ຍົກຕົວຢ່າງເຊັ່ນ: ຄວາມສົມບູນພ້ອມທີ່ບໍ່ສາມາດບັນລຸເຖິງໄດ້ທີ່ສະແດງປະກົດໃນອາລົມ ແລະ ຄວາມຮູ້ສຶກຂອງຄົນໜຸ່ມສາວໃນເວລາຂອງການຕື່ນຕົວຂອງການຮັບຮູ້ກ່ຽວກັບຕົນເອງ. ໃນຫຼາຍໆຂໍ້ຄວາມທີ່ໃຊ້ສື່ເຖິງແມ່ຍິງແມ່ນຈະສະແດງເຖິງການດຶງດູດຜູ້ຊາຍ. ແນວໂນ້ມຂອງຫຼາຍວັດທະນະທຳທີ່ມີການກຳໜົດຄວາມໝາຍຂອງຄວາມເປັນຜູ້ຊາຍ ໃນຮູບແບບຂອງພາລະກຳລັງທາງດ້ານຮ່າງກາຍ ແມ່ນເປັນໄປຢ່າງສຸດໂຕ້ງ. ແມ່ນຫຍັງກໍ່ຕາມທີ່ຖືກລະບຸວ່າ ເປັນຄວາມອ່ອນແອຈະຖືກລັງກຽດ ແລະ ພຶດຕິກຳທີ່ກ້າວລ້າວກັບແຜ່ລາມໄປທົ່ວ. ເປັນສິ່ງທີ່ໜ້າສົນໃຈທີ່ ຄວາມຮຸນແຮງຕ່າງໆ ແມ່ນຖືກຄາດຄະເນໄວ້ວ່າຈະຖືກນຳໃຊ້ໂດຍແມ່ຍິງ.

ບໍ່ເປັນທີ່ສົງໄສວ່າຈຸດປະສົງຫຼັກຂອງການໂຄສະນາສ່ວນໃຫຍ່ ທີ່ມຸ້ງໄປທີ່ຄົນໜຸ່ມສາວກໍ່ຄື ການສ້າງວັດທະນະທຳ ທີ່ພວກເຂົາຈະປາດຖະໜາເຂົ້າເປັນສ່ວນໜຶ່ງຂອງວັດທະນະທຳນັ້ນ. ໃນວັດທະນະທຳນີ້ເອງທີ່ພວກເຂົາຈະຮຽນຮູ້ທີ່ຈະເວົ້າພາສາດຽວກັນ, ທຳຕົວເໝືອນກັນ ແລະ ເໜືອສິ່ງອື່ນໃດກໍ່ຄືການບໍລິໂພກຜະລິດຕະພັນຫຼາກຫຼາຍຊະນິດຢ່າງບໍ່ຮູ້ໝົດສິ້ນ. ແນ່ນອນວ່າ ນອກເໜືອໄປຈາກຜະລິດຕະພັນເລົ່ານີ້ແລ້ວ, ຊາວໜຸ່ມກໍ່ຈະເລີ່ມເຂົ້າໄປຢູ່ໃນລະບົບຂອງຄ່ານິຍົມ ທີ່ອາດຈະເປັນຕົວກຳໜົດແບບແຜນການບໍລິໂພກຂອງພວກເຂົາ. ເປັນສິ່ງທີ່ໜ້າສົນໃຈທີ່ຈະທຳການສັງເກດວ່າ ໃນປະຫວັດສາດ, ຄຳວ່າ “ໄວລຸ້ນ” ໃນຕົວຂອງມັນເອງຢູ່ແລ້ວທີ່ຖືກຄິດຂຶ້ນມາ ເພື່ອຫາປະໂຫຍດຈາກຕະຫຼາດ ທີ່ໜ້າຈະໃຫ້ຜົນຕອບແທນສູງທີ່ຄົນກຸ່ມນີ້ຈະໃຫ້ໄດ້.

ເພື່ອຈະໃຊ້ປະໂຫຍດຢ່າງເຕັມທີ່ ຈາກການຕື່ນຕົວຂອງຄວາມປາດຖະໜາ, ວັດທະນະທຳທີ່ຖືກສ້າງຂຶ້ນໂດຍການໂຄສະນາທີ່ນຳເລື່ອງເພດຂຶ້ນມາ ເປັນຈຸດສູນກາງຂອງຊີວິດໄວລຸ້ນ. ຜະລິດຕະພັນຢ່າງເຊັ່ນ: ເຄື່ອງດື່ມທັງຫຼາຍທີ່ບໍ່ມີຄວາມກ່ຽວໂຍງກັບເລື່ອງທາງເພດ ກໍ່ຖືກນຳໄປສ້າງໃຫ້ເປັນພາບລວງຕາຂອງຄວາມສຳພັນທີ່ໂລແມນຕິກ. ຄວາມຮູ້ສຶກບໍ່ພຽງພໍຂອງບຸກຄົນ ແລະ ຄວາມກັງວົນຂອງການ

ຖືກປະຕິເສດເພາະກິ່ນກາຍ, ຜິວພັນທີ່ບໍ່ງາມ ຫຼື ເສື້ອຜ້າທີ່ລ້າສະໄໝ ແມ່ນຖືກນຳໄປຂະຫຍາຍໃຫ້ໃຫຍ່ຂຶ້ນ ເພື່ອທີ່ຈະເປັນການແນະນຳຜະລິດຕະພັນເຄື່ອງສຳອາງນາໆຊະນິດ ແລະ ຮູບແບບໃໝ່ໆທີ່ຈະຊ່ວຍດຶງດູດທາງເພດ ແລະ ປົດປ່ອຍຄວາມຮູ້ສຶກຈາກຄວາມເຂີນອາຍ. ແມ່ນກະທັ້ງລົດຍັງຖືກເອີ້ນໂດຍໃຊ້ຄຳຢ່າງເຊັ່ນ "ຮ້ອນແຮງ", "ສະຫງ່າງາມ", "ຫວານໃຈທີ່ຄວບຄຸມງ່າຍ" ເຊິ່ງທັງໝົດນີ້ແມ່ນກ່ຽວຂ້ອງກັບເລື່ອງທາງເພດ. ໃນຂະນະທີ່ມາດຕະຖານທາງສິລະທັມຕົກຕ່ຳລົງ ໃນຊ່ວງຫຼາຍທົດສະວັດທີ່ຜ່ານມາ, ເນື້ອຫາຂອງໂຄສະນາທີ່ໄຮ້ເຊິ່ງສິລະທັມ ກໍ່ຍິ່ງເປັນສິ່ງທີ່ເຫັນໄດ້ຊັດເຈນຫຼາຍຂຶ້ນເລື້ອຍໆ. ໃນອີກບໍ່ຊ້າມັນກໍຈະເບິ່ງຄືວ່າ ແງ່ມຸມບາງດ້ານຂອງລັດທິບໍລິໂພກນິຍົມນັ້ນ ຈະຄ່ອຍໆກາຍເປັນຮູບແບບຕ່າງໆຂອງພຶດຕິກຳຂອງກິດຈະກຳທາງເພດໃນຕົວມັນເອງຢ່າງຊ້າໆ.

ບົດບາດຂອງຍີ່ຫໍ້ຕ່າງໆໃນຕະຫຼາດຂອງກຸ່ມໄວລຸ້ນທົ່ວໂລກ ແມ່ນຄວນຄ່າແກ່ການກ່າວເຖິງເປັນພິເສດໃນຂະນະນີ້. ການສຶກສາວິໄຈຕ່າງໆທີ່ສຳຫຼວດເບິ່ງວ່າ ຈະຫາປະໂຫຍດຈາກຕະຫຼາດ ທີ່ມີສັກກາຍະພາບຫຼາຍແຫ່ງໄດ້ຢ່າງໃດ ໄດ້ໃຫ້ຂໍ້ຊີ້ແນະວ່າການບູຊາສັນຍາລັກຍີ່ຫໍ້ນັ້ນເປັນອົງ ປະກອບທີ່ມີພະລັງຂອງລັດທິບໍລິໂພກນິຍົມທີ່ໄຮ້ຢາງອາຍ. ເຫັນໄດ້ຊັດເຈນວ່າ ຍີ່ຫໍ້ເປັນເຄື່ອງຍຶດໜ່ຽວໃຫ້ກັບໂລກທີ່ບໍ່ແນ່ນອນຂອງໄວລຸ້ນ ແລະ ອາດຈະຖືກພິຈາລະນາວ່າເປັນຄືກັນກັບ ໜັງສືເດີນທາງໄປສູ່ໂລກແຫ່ງວັດທະນະທຳ. ແນ່ນອນທີ່ສຸດວ່າ ວັດທະນະທຳທີ່ການສຶກສາວິໄຈເລົ່ານີ້ສົ່ງເສີມນັ້ນ ເປັນວັດທະນະທຳທີ່ບໍ່ຄຳນຶງເຖິງຄວາມຍາກຈົນທີ່ກຳລັງເພີ່ມຂຶ້ນໃນທຸກປະຊາຊາດ, ວັດທະນະທຳທີ່ວ່ານີ້ ສົ່ງພາບຂອງຄວາມອຸດົມສົມບູນຂອງຄົນພຽງສ່ວນໜຶ່ງຂອງມະນຸດຊາດທີ່ໄດ້ສະເຫວີຍສຸກຢູ່ ເພື່ອເປັນການໂນ້ມນ້າວໄວລຸ້ນຈາກທຸກພູມຫຼັງ ໃຫ້ຄິດວ່າຜະລິດຕະພັນທີ່ຜູ້ບໍລິໂພກນິຍົມໃຊ້ທັງຫຼາຍນັ້ນ ເປັນແຫຼ່ງກຳເນີດຂອງຄວາມສຸກຫັນສາທີ່ບໍ່ມີຂີດຈຳກັດ.

ໃນບາງວຽກງານຂອງການສຶກສາວິໄຈຕະຫຼາດ "ໄວລຸ້ນ", ຄົນໜຸ່ມສາວໄດ້ຖືກຈັດປະເພດຕາມທັດສະນະຄະຕິ ແລະ ຄວາມປະສົງທີ່ຈະຊ່ວຍໃຫ້ພວກເຂົາສາມາດຊື້ສິ່ງຕ່າງໆ. ຍົກຕົວຢ່າງເຊັ່ນ: ໃນງານວິໄຈດັ່ງກ່າວນີ້, ໄວລຸ້ນຖືກແບ່ງອອກເປັນຫົກກຸ່ມຄື **"ກຸ່ມທີ່ບໍ່ດີ້ນລົນ"** ໄດ້ແກ່ຜູ້ທີ່ເບິ່ງວ່າ ໂຊກຊະຕາຂອງຕົນເປັນເລື່ອງທີ່ແນ່ນອນ ແລະ ຜູ້ທີ່ໃຊ້ຄວາມພະຍາຍາມໜ້ອຍທີ່ສຸດທີ່ຈະໄດ້ສິ່ງໃດສິ່ງໜຶ່ງມາ; ກຸ່ມ **"ຜູ້ທີ່ດີ້ນລົນ"** ທີ່ເປັນຜູ້ສະແຫວງຫາຄວາມເພິ່ງພໍໃຈ ແລະຜູ້ທີ່ມີຄວາມຄິດທີ່ເປັນອິດສະລະຈາກເລື່ອງທາງສັງຄົມຫຼືການເມືອງ, ຄົນກຸ່ມນີ້ຈຶ່ງເປັນກຸ່ມເປົ້າໝາຍສຳຄັນຂອງນັກການຕະຫຼາດ ເພາະຄວາມຄິດຂອງພວກເຂົາສາມາດຖືກເຕີມເຕັມໄດ້ງ່າຍດ້ວຍຊື່ຍີ່ຫໍ້ຕ່າງໆ; ກຸ່ມ **"ຕຽມພ້ອມລະບົບ"** ເຊິ່ງເປັນກຸ່ມທີ່ມີຄວາມແຕກຕ່າງຈາກກຸ່ມກ່ອນໜ້ານີ້ທີ່ວ່າ ແຮງຂັບແລະການເຮັດວຽກໜັກຂອງພວກເຂົາ, ຄົນກຸ່ມນີ້ຈະໃຊ້ສິນຄ້າ ແລະ ການບໍລິການເປັນຫົນທາງສູ່ຄວາມກ້າວໜ້າ ທີ່ຈະຊ່ວຍໃຫ້ພວກເຂົາມີຄວາມສາມາດໃນການແຂ່ງຂັນໄດ້ດີ; **"ກຸ່ມຜູ້ປະສົບຄວາມສຳເລັດຢ່າງງຽບໆ"** ເປັນພວກທີ່ລໍຖ້າທຳຕາມກະແສ ແລະ ຫຼີກລ້ຽງການປະຕິຮູບທາງການເມືອງຫຼືສັງຄົມ, ຄົນກຸ່ມນີ້ຈະໃກ້ຊິດກັບຄອບຄົວ ແລະ ຈະຊື້ສິນຄ້າໂດຍເບິ່ງທີ່ຄຸນນະພາບ ແລະ ປະໂຫຍດເປັນຫຼັກ; **"ກຸ່ມຜູ້ສະໜັບສະໜູນ"** ຍັງເປັນຜູ້ປະຕິບັດຕາມແຕ່ວ່າບໍ່ຄ່ອຍສົນໃຈເລື່ອງທາງວິຊາການ ແລະ ໃນຄວາມຄິດຂອງຄົນກຸ່ມນີ້ ສະຖິຕິການຫຼິ້ນກິລາ, ຊື່ທີມ

ແລະ ຊື່ຜູ້ຫຼິ້ນມີຄວາມສຳຄັນເໜືອກວ່າປະເດັນທາງການເມືອງແລະສັງຄົມ; ແລະກຸ່ມສຸດທ້າຍຄື **"ຜູ້ກອບກູ້ໂລກ"** ເຊິ່ງປາດຖະໜາທີ່ຈະປ່ຽນແປງໂລກໃນທາງທີ່ດີຂຶ້ນ ແລະ ຄວາມສຳຄັນຂອງພວກເຂົາແມ່ນຢູ່ທີ່ໂອກາດທີ່ພວກເຂົາ ໃຫ້ແກ່ນັກການຕະຫຼາດໃນການນຳເອົາເຈດຕະນາລົມ ທີ່ມຸ້ງທຳດີເພື່ອສັງຄົມມາຜັນປ່ຽນໃຫ້ກາຍເປັນສິນຄ້າ.

ສິ່ງຕ່າງທັງໝົດ, ເບິ່ງຄືວ່າຈະບໍ່ມີທາງໃດເລີຍທີ່ຈະໜີພົ້ນເງື້ອມມືຂອງການໃສ່ຍີ່ຫໍ້ ແລະ ບໍລິໂພກນິຍົມ. ໂດຍສະເພາະຢ່າງຍິ່ງໃນເວທີສື່ສັງຄົມ (social media) ທີ່ປ່ຽນແປງຢ່າງວ່ອງໄວ, ທຸກແງ່ມຸມຂອງຊີວິດສາມາດກາຍເປັນວັດຖຸດິບສຳລັບການບໍລິໂພກໄດ້. ຊ່ອງທາງສື່ອອນລາຍ (platforms) ທີ່ສ້າງຂຶ້ນຢ່າງຊັດເຈນເພື່ອເຮັດໃຫ້ໂລກໜ້າຢູ່ຍິ່ງຂຶ້ນຜ່ານ "ການແບ່ງປັນ", "ມິດຕະພາບ", ແລະ "ເຄືອຂ່າຍ" ແທ້ຈິງແລ້ວເຮັດໜ້າທີ່ເປັນຊ່ອງທາງສຳລັບໂຄສະນາທີ່ໜ້າສັບສົນຫຼາຍ, ຂະຫຍາຍຂອບເຂດການເຂົ້າເຖິງຊ່ອງທາງສື່ອອນລາຍ ແລະ ເຈາະເລິກຍິ່ງຂຶ້ນ. ແນ່ນອນທີ່ສຸດວ່າການວິເຄາະນີ້ ບໍ່ແມ່ນການຕຳໜິການໂຄສະນາໂດຍກົງ. ຈຸດປະສົງຂອງການວິເຄາະນີ້ ກໍ່ເພື່ອຈະເສີມຄວາມສາມາດແກ່ເຈົ້າໃນການພິຈາລະນາ ກ່ຽວກັບການໂຄສະນາຊວນເຊື່ອ - ທັງທາງດ້ານການຄ້າ, ການເມືອງ, ເຊື້ອຊາດ, ວັດທະນະທຳ - ເຊິ່ງເປັນເລື່ອງທີ່ສຳຄັນຢ່າງຍິ່ງ ເພື່ອວ່າເຈົ້າຈະສາມາດຊ່ວຍໃຫ້ເຍົາວະຊົນສາມາດລະບຸຜົນກະທົບ ທີ່ສິ່ງເຫຼົ່ານີ້ມີຕໍ່ຄວາມຄິດ ແລະ ພຶດຕິກຳຂອງພວກເຂົາ. ແບບເຝິກຫັດຕໍ່ໄປນີ້ຈະຊ່ວຍເຈົ້າໃນການທົບທວນເພີ່ມເຕີມກ່ຽວກັບເລື່ອງທີ່ມີຄວາມຊັບຊ້ອນນີ້:

1. ການໂຄສະນາໃຊ້ພາສາແລະພາບຕ່າງໆ ເພື່ອປ່ຽນແປງຜະລິດຕະພັນທັມມະດາ ໃຫ້ກາຍເປັນແຫຼ່ງກຳເນີດຂອງຄວາມຕື່ນເຕັ້ນ. ມີການໃຊ້ສັນຍາລັກຕ່າງໆເພື່ອເຮັດໃຫ້ວັດຖຸ ແລະ ເຫດການຕ່າງໆມີຄວາມສຳຄັນຫຼາຍເກີນກວ່າທີ່ຄວນຈະເປັນ. ຕົວຢ່າງເຊັ່ນ ເຄື່ອງດື່ມບໍ່ອາດຈະຖືກພັນລະນາວ່າ ເປັນສິ່ງອື່ນໄດ້ນອກໄປຈາກທີ່ມັນເປັນ ຄືສິ່ງທີ່ຊ່ວຍດັບຄວາມກະຫາຍ, ແຕ່ມັນກັບຖືກໃຫ້ຄວາມສຳຄັນໄປຫຼາຍກວ່ານັ້ນອີກ ເຊັ່ນເປັນຜູ້ນຳມາເຊິ່ງຄວາມສຸກທັນສາ ແລະ ຄວາມສົມປາດຖະໜາ. ສັນຍາລັກຂອງຄວາມຖືກສະໄໝນິຍົມ ແລະ ຄວາມເປັນຜູ້ດີ ສ້າງພາບທີ່ຊວນເບິ່ງໃຫ້ກັບເສື້ອຜ້າ ແລະ ເຄື່ອງສຳອາງ. ສັນຍາລັກຂອງຄວາມອຸດົມສົມບູນ ຂອງເຍົາໄວໃຊ້ຂາຍຂະໜົມຫວານຕ່າງໆ. ສັນຍາລັກຂອງການພະຈົນໄພ ແລະ ຄວາມເປັນນັກກິລາຊ່ວຍສົ່ງເສີມການຂາຍໃຫ້ກັບສິ່ງມຶນເມົາ. ຂໍໃຫ້ເຈົ້າລອງຄິດເຖິງຕົວຢ່າງຂອງງານໂຄສະນາ ແລະ ຂໍ້ຄວາມຫຼືຄຳເວົ້າ ແລະ ພາບທີ່ພວກເຂົາໃຊ້ໂຄສະນາ ເພື່ອສ້າງສິ່ງໃດສິ່ງໜຶ່ງໃຫ້ມັນກາຍເປັນສິ່ງທີ່ບໍ່ໜ້າຈະເປັນໄປໄດ້?

2. ພາບລວງຕາຂອງຄວາມສຸກ ທີ່ສ້າງຂຶ້ນມາຈາກການຊື້ຜະລິດຕະພັນນັ້ນຄົງຢູ່ໄດ້ບໍ່ນານ, ບໍ່ດົ່ງນັ້ນແລ້ວ ຜູ້ຄົນກໍ່ຈະພໍໃຈກັບສິ່ງທີ່ຕົນເອງມີຢູ່. ຢ່າງໃດກໍ່ຕາມ ການໂຄສະນາຈຶ່ງສ້າງສັນຄວາມຕ້ອງການຕ່າງໆຂຶ້ນມາໃໝ່ ແລະ ພະຍາຍາມເຮັດໃຫ້ຜູ້ຄົນບໍ່ພໍໃຈໃນສິ່ງທີ່ຕົນເອງມີຢູ່. ການກະທຳເຊັ່ນນີ້ປະສົບຄວາມສຳເລັດໄດ້ຢ່າງໃດ?

______________________________________________

______________________________________________

______________________________________________

______________________________________________

______________________________________________

3. ເຮົາໄດ້ກ່າວວ່າ ແມ່ນກະທັ້ງເຈດຕະນາທີ່ຈະເຮັດດີເພື່ອສັງຄົມໃນບາງຄັ້ງ ກໍ່ຖືກປຸ່ງນແປງໃຫ້ເປັນຜະລິດຕະພັນເພື່ອການບໍລິໂພກ. ຂໍໃຫ້ເຈົ້າລອງຍົກຕົວຢ່າງກ່ຽວກັບເລື່ອງນີ້?

______________________________________________

______________________________________________

______________________________________________

______________________________________________

______________________________________________

4. ໃນສະພາບປັດຈຸບັນຂອງສື່ໂຄສະນາ, ຄວາມປາດຖະໜາອັນສູງສົ່ງພັດຖືກນຳໄປໃຊ້ເພື່ອຈຸດປະສົງທາງການຄ້າ. ຄຳສັບ ແລະ ວະລີທີ່ປຸກຄວາມຮູ້ສຶກອັນສູງສົ່ງໃນຕົວເຮົາ ຖືກນຳມາໃຊ້ເພື່ອໂຄສະນາຜະລິດຕະພັນ, ແລະ ແງ່ມູມຕ່າງໆຂອງມໍລະດົກທາງຈິດວິນຍານຂອງມະນຸດຊາດ ກຳລັງໄດ້ຮັບການປະຕິບັດເໝືອນເປັນສິນຄ້າທີ່ຈະຊື້. ເຈົ້າສາມາດຍົກຕົວຢ່າງໄດ້ບໍ?

______________________________________________

______________________________________________

______________________________________________

______________________________________________

______________________________________________

5. ລອງນຶກເຖິງຊ່ອງທາງສື່ອອນລາຍ ທີ່ເຍົາວະຊົນໃນພູມີພາກຂອງເຈົ້າມີສ່ວນຮ່ວມ. ການມີເຂົ້າຊ່ອງທາງສື່ອອນລາຍດັ່ງກ່າວ ສົ່ງຜົນຕໍ່ລັກສະນະຂອງມິດຕະພາບທີ່ພວກເຂົາສ້າງຂຶ້ນ, ມຸມມອງທີ່ມີຕໍ່ຕົນເອງ, ຄວາມຫວັງຂອງພວກເຂົາ ແລະ ແຮງບັນດານໃຈຂອງພວກເຂົາເປັນແນວໃດ?

ໃນປະເດັນນີ້, ໃຫ້ພິຈາລະນາຄວາມຖືກຕ້ອງຂອງຂໍ້ຄວາມຕໍ່ໄປນີ້: ຈາການມີສ່ວນຮ່ວມໃນສື່ສັງຄົມ, ເຍົາວະຊົນສາມາດຮັບຮູ້ ແລະ ນຳສະເໜີຕົວເອງເປັນຄືກັບຜະລິດຕະພັນໂດຍບໍ່ຮູ້ສຶກຕົວ.

______________________________________________

______________________________________________

______________________________________________

______________________________________________

______________________________________________

## ຕອນທີ 14

ແມ່ນວ່າຜົນກະທົບບາງຢ່າງຂອງສັງຄົມໃນປັດຈຸບັນ ທີ່ມີຕໍ່ໜຸ່ມສາວຈະມີອັນຕະລາຍຢ່າງທີ່ກ່າວມາ ບາງເທື່ອມັນອາດຈະເປັນຄວາມຜິດພາດທີ່ເນັ້ນຢ້ຳ ກ່ຽວກັບສິ່ງເລົ່ານີ້ຫຼາຍຈົນເກີນໄປ ໃນຄວາມພະຍາຍາມຂອງເຈົ້າ. ເປັນການງ່າຍເກີນໄປທີ່ຈະເຂົ້າສູ່ການມີນິໄສຂອງການຄິດວ່າ ເຍົາວະຊົນເປັນສິ່ງທີ່ມີຊີວິດທີ່ບອບບາງ ທີ່ຈະຕ້ອງຖ້າໄດ້ຮັບການປົກປ້ອງຄຸ້ມຄອງຢູ່ສະເໝີ ຈາກຄວາມຊົ່ວຮ້າຍຕ່າງໆຂອງສະພາບແວດລ້ອມ. ວິທີການຄິດແບບນີ້ ບໍ່ມີວັນນຳພວກເຂົາໄປສູ່ການເພີ່ມພູນຄວາມສາມາດທາງຈິດວິນຍານໄດ້. ສິ່ງທີ່ຄວນຈະເປັນຈຸດເນັ້ນໜັກໃນຄວາມພະຍາຍາມຂອງເຈົ້າຄື ການຄຳນຶງເຖິງສັກກະຍະພາບຂອງພວກເຂົາ ທີ່ຈະກະທຳຕົນໃນຖານະຂອງຕົວແທນທີ່ມຸ່ງໝັ້ນຂອງການປ່ຽນແປງທາງສັງຄົມ, ແລະ ຄວາມເຕັມໃຈຂອງພວກເຂົາ ທີ່ຈະມີສ່ວນສະໜັບສະໜູນໃນການກໍ່ສ້າງສັງຄົມທີ່ດີກວ່າ. ແມ່ນກະທັ້ງໂລກທີ່ຊົ່ວຮ້າຍໃນປະຈຸບັນນີ້ມີ ຕົວຢ່າງຫຼວງຫຼາຍຂອງເຍົາວະຊົນໃນທຸກວັດທະນະທຳທີ່ໄດ້ທະຍານຂຶ້ນເໜືອສະພາບອັນໜ້າລັງກຽດ ຂອງສະພາບແວດລ້ອມທີ່ພວກເຂົາອາໄສຢູ່ ແລະ ໄດ້ສະແດງອອກຢ່າງຕໍ່ເນື່ອງເຖິງຄຸນລັກສະນະທີ່ດີງາມເຊັ່ນ: ຄວາມກະຕືລືລົ້ນທີ່ຈະຮັບໃຊ້, ໃຈຈົດຈໍ່ທີ່ຈະຮຽນຮູ້, ຄວາມຮູ້ສຶກອັນແຮງກ້າທີ່ຈະຮັກສາຄວາມຍຸຕິທັມ ແລະ ຄວາມໂນ້ມອຽງຢ່າງຫຼວງຫຼາຍທີ່ຈະເຫັນແກ່ປະໂຫຍດຂອງຄົນອື່ນ.

ມີນັກສຶກສາຫຼາຍຄົນທີ່ໄດ້ອ້າງເຖິງ ພະລັງທີ່ມີມາແຕ່ກຳເນີດທາງດ້ານສະຕິປັນຍາ ແລະ ທາງຈິດວິນຍານ ທີ່ສະແດງອອກມາໃນຊ່ວງປ່ຽນຜ່ານຂອງໄວລຸ້ນ. ຍົກຕົວຢ່າງເຊັ່ນ: ນັກສຶກສາຄົນໜຶ່ງເນັ້ນກ່ຽວກັບເລື່ອງຄວາມສົນໃຈ ທີ່ເຍົາວະຊົນມີໃນບັນຫາທາງເສດຖະກິດ. ອີກຄົນໜຶ່ງເນັ້ນກ່ຽວກັບເລື່ອງບົດບາດທີ່ເຍົາວະຊົນສາມາດສະແດງ ໃນການປ່ຽນແປງທາງສັງຄົມ ໂດຍເຂົາຮ້ອງໄວລຸ້ນໃນແຕ່ລະຍຸກວ່າເປັນ "ຜູ້ໃຫ້ຊີວິດໃໝ່ທີ່ຈຳເປັນຢ່າງຂາດບໍ່ໄດ້ ໃນຂະບວນການຂອງວິວັດທະນາການ" ຜູ້ສາມາດ "ໃຫ້ຄວາມຈົ່ງຮັກພັກດີ ແລະ ພາລະກຳລັງ ທັງແກ່ການອະນຸລັກນິຍົມທີ່ຍັງຄົງຮູ້ສຶກໄດ້ວ່າເປັນຈິງຢູ່ ແລະ ແກ່ການແກ້ໄຂຢ່າງພິກໜ້າມືເປັນຫຼັງມື ໃຫ້ກັບສິ່ງທີ່ໄດ້ສູນເສຍຄວາມສຳຄັນໃນການໃຫ້ຊີວິດໄປ". ແລະ ກໍ່ຍັງມີນັກຄິດອີກຄົນໜຶ່ງ ທີ່ຮຽກຮ້ອງໃຫ້ຄວາມສົນໃຈ ໃນສັກກະຍາພາບຂອງການປ່ຽນແປງໃນຕົວຄົນລຸ້ນເຍົາ ໂດຍກ່າວວ່າໃນຊ່ວງເວລານັ້ນຂອງຊີວິດມະນຸດຈະເປັນເໝືອນ "ພາຊະນະທີ່ມີຊີວິດ, ມີ

ການສ້າງຕົວຕົນຂຶ້ນມາຢ່າງສົມບູນແຕ່ຍັງເຕີບໂຕໄດ້, ມີຄວາມສາມາດທີ່ຈະເປັນຜູ້ຮັບໄດ້ຢ່າງເຕັມທີ່". ເຂົາເອົາໃຈໃສ່ສັກກະຍະພາບຂອງຄົນລຸ້ນເຍົາ ທີ່ຈະເຮັດໃຫ້ເກີດການປ່ຽນແປງ ແລະ ຢືນຢັນວ່າການສຶກສາຄວນໃຊ້ປະໂຫຍດຈາກການຮັບຮູ້ທີ່ຫຼາກຫຼາຍ ເຊັ່ນດຽວກັບຄວາມເຂັ້ມຂົ້ນທີ່ເຍົາວະຊົນສາມາດນຳມາສູ່ປະສົບການໃນທຸກໆດ້ານ, ໂດຍຕັ້ງຂໍ້ສັງເກດຄວາມເຂັ້ມຂົ້ນດັ່ງກ່າວ, "ພ້ອມກັບບູລະນະພາບຂອງການດຳລົງຢູ່" ສາມາດເຮັດໃຫ້ສັງຄົມມະນຸດເປັນ "ສິ່ງມີຊີວິດທີ່ມີຊີວິດ, ເຕີບໂຕ, ມີຄວາມຮັກໃຫ້ກັນຢ່າງແທ້ຈິງເຕັມອີ່ມຢ່າງທັນສາ ແລະມີຄວາມອຸດົມສົມບູນ, ແທນທີ່ຈະເປັນສັງຄົມທີ່ເຢັນຊາ, ເປັນເຄື່ອງຈັກ, ແລະ ເປັນພຽງແນວທິດສະດີທີ່ວ່າງເປົ່າ" ເຂົາເວົ້າວ່າ "ນັ້ນຄືສິ່ງທີ່ມະຫັດສະຈັນຂອງການປ່ຽນແປງຢ່າງເລິກເຊິ່ງ ແລະ ນັ້ນຄືສັກກະຍາພາບຂອງໄວລຸ້ນ".

ແຫຼ່ງອ້າງອີງເລົ່ານີ້, ລວມທັງການວິເຄາະໃນເນື້ອຫາຂອງຫຼາຍໆຕອນທີ່ຜ່ານມາບົ່ງຊີ້ວ່າ ເຈົ້າຈຳເປັນຈະຕ້ອງລະມັດລະວັງຫຼາຍພຽງໃດ ໃນການກ່າວສະແດງຄວາມເຫັນອອກມາ ກ່ຽວກັບແນວຄວາມຄິດເລື່ອງໄວລຸ້ນ. ໃນຂະນະທີ່ເຈົ້າຈະສຳຫຼວດເບິ່ງກ່ຽວກັບທັດສະນະທີ່ຫຼາກຫຼາຍ ກ່ຽວກັບເລື່ອງໄວລຸ້ນໃນເວລາຫຼາຍປີຂ້າງໜ້າຢ່າງບໍ່ຕ້ອງສົງໄສ, ຄວາມເຂົ້າໃຈຂອງເຈົ້າກ່ຽວກັບຄວາມສຳຄັນຂອງຊ່ວງເວລານີ້ໃນຊີວິດມະນຸດຈະໄດ້ຮັບການຫຼໍ່ຫຼອມທີ່ກວ້າງອອກ ໂດຍຂໍ້ຄວາມທີ່ຄັດມາຈາກພຣະທັມມະລິຂິດສັກສິດທີ່ຢູ່ໃນເນື້ອຫາຫຼັກສູດພາກນີ້ ແລະ ພາກກ່ອນໜ້ານີ້. ບໍ່ໜ້າເປັນທີ່ສົງໄສເລີຍວ່າ ຄວາມເຊື່ອໝັ້ນຂອງເຈົ້າຈະໄດ້ຮັບການຢືນຢັນ ໂດຍປະສົບການຂອງເຈົ້າເອງທີ່ເຮັດວຽກກັບເຍົາວະຊົນ.

## ຕອນທີ 15

ຊຸດຫຼັກສູດຕ່າງໆທີ່ໄດ້ພັດທະນາໂດຍສະຖາບັນຣູຮີ ສຳລັບການສຶກສາຂອງເຍົາວະຊົນນັ້ນ, ຄ້າຍຄືກັບປື້ມເຫຼັ້ມຕ່າງໆໃນຫຼັກສູດຕາມລຳດັບ, ອາດເບິ່ງຄືວ່າງ່າຍ, ໂດຍສະເພາະໃນຕອນເລີ່ມຕົ້ນ. ຄວາມງ່າຍນັ້ນຢູ່ທີ່ລະດັບ ພາສາທີ່ໃຊ້ ແລະ ແບບເຝິກຫັດທີ່ໃຫ້ເຮັດ. ແຕ່ເຖິງຢ່າງໃດ ແນວຄວາມຄິດທີ່ນຳສະເໜີໃນຫຼັກສູດແມ່ນມີຄວາມສັບຊ້ອນ ແລະ ເລິກເຊິ່ງໃນທຸກລະດັບ. ບົດສົນທະນາ ຫຼື ສິ່ງທີ່ອະທິບາຍໃນຫຼັກສູດແຕ່ລະເຫຼັ້ມ ຢູ່ຫ່າງໄກຈາກເລື່ອງລາວແບບເດັກໆ ແລະ ທີ່ຈິງແລ້ວ ມັນຈະເປັນການພິສູດເຖິງຄວາມທ້າທາຍສຳລັບ ເຍົາວະຊົນຫຼາຍຄົນທີ່ຈະມາສຶກສາຫຼັກສູດເລົ່ານັ້ນ. ເພື່ອໃຫ້ແນ່ໃຈວ່າເຈົ້າເອງຮູ້ສຶກສະບາຍໆ ກັບລະດັບຂອງການສົນທະນາ, ເຮົາຈຶ່ງນຳສະເໜີຊຸດຕົວຢ່າງຂອງຄວາມຄິດຂອງເຍົາວະຊົນຫຼາຍໆຄົນ ທີ່ໄດ້ສະແດງອອກດ້ວຍຕົວຂອງພວກເຂົາເອງໃຫ້ແກ່ເຈົ້າໃນເນື້ອຫາຕອນນີ້ ແລະ ໃນສອງສາມຕອນຕໍ່ໄປ. ຂໍ້ຄວາມທີ່ຄັດມາເປັນການສະແດງຂອງຄວາມຄິດເຫັນຂອງຄົນລຸ້ນເຍົາ ທີ່ໄດ້ຮັບຜົນກະທົບຈາກຄວາມຮຸນແຮງບໍ່ໃນທາງໃດກໍ່ທາງໜຶ່ງ. ມີຫຼາຍໆພາບທີ່ສື່ສິ່ງພິມໄດ້ສະແດງໃຫ້ເຫັນເຖິງພຶດຕິກຳທີ່ມີ ຄວາມຮຸນແຮງຂອງໄວລຸ້ນທີ່ມີຄວາມຈຳເປັນ ທີ່ຈະບອກໃຫ້ຮູ້ເຖິງອີກດ້ານຂອງເລື່ອງລາວຄວາມຮຸນແຮງເລົ່ານັ້ນເຊັ່ນກັນ.

ຂໍ້ຄວາມທີ່ຄັດມາຊຸດທໍາອິດມາຈາກເດັກຊາຍອາຍຸສິບສາມປີ - ເຮົາເອີ້ນເຂົາວ່າ ປີເຕີ້ ເພື່ອເຊື່ອງຊ້ອນຕົວຕົນທີ່ແທ້ຈິງຂອງເຂົາ - ເຂົາໄດ້ເຫັນເຖິງຜົນກະທົບຂອງຄວາມຮຸນແຮງ ແລະ ສົງຄາມມາຕັ້ງແຕ່ເຂົາອາຍຸໄດ້ແປດປີ. ເມື່ອເຂົາອາຍຸໄດ້ສິບສາມປີ ເຂົາກໍ່ເລີ່ມສົ່ງເສີມຄວາມສັນຕິພາບໃນໂຮງຮຽນ ແລະ ໃນອົງກອນຕ່າງໆຂອງຄົນລຸ້ນເຍົາ, ໂດຍເຂົາຍອມຮັບທຸກຢ່າງແຕ່ໂດຍດີ ແມ່ນກະທັ່ງອາຈາເຍາະເຍີ້ຍທີ່ຮຸນແຮງຈາກເພື່ອນລຸ້ນດຽວກັນຂອງເຂົາ:

*ຄໍາເວົ້າພວກນັ້ນບໍ່ໄດ້ເຮັດໃຫ້ຂ້ອຍລໍາຄານໃຈຈັກໜ້ອຍເລີຍ. ຄອບຄົວຂອງຂ້ອຍເຊື່ອວ່າເປັນສິ່ງສໍາຄັນທີ່ຈະເອົາໃຈໃສ່ເບິ່ງແຍງຊຸມຊົນ ແລະ ໃນສິ່ງໃດກໍ່ຕາມທີ່ເຮົາເຮັດໄດ້ເພື່ອຊ່ວຍເຫຼືອ. ເຖິງແມ່ນວ່າ ຂ້ອຍຈະອາຍຸພຽງສິບສາມປີ, ຂ້ອຍກໍ່ສາມາດເຫັນໄດ້ວ່າບັນຫາທີ່ໃຫຍ່ທີ່ສຸດທີ່ເຮົາກໍາລັງພະເຊີນຢູ່ຄື ຄວາມຮຸນແຮງ ແລະ ສົງຄາມ. ສັນຕິພາບເປັນສິ່ງທີ່ຈໍາເປັນຕ້ອງມີ ຫຼາຍກວ່າສິ່ງອື່ນໃດ. ແນ່ນອນທີ່ສຸດວ່າ ເປັນເລື່ອງທີ່ຍາກສໍາລັບເດັກ ທີ່ຈະພະຍາຍາມສ້າງສັນຕິພາບ, ແຕ່ການພະຍາຍາມກໍ່ເປັນທາງດຽວທີ່ທຸກຢ່າງຈະເກີດຂຶ້ນມາໄດ້...*

*ໃນປະເທດຂອງຂ້ອຍມີການເວົ້າຂີ້ຕົວະກັນຫຼາຍ ມາເປັນເວລາຫຼາຍປີຈົນບໍ່ຮູ້ວ່າ ຈະເຊື່ອຫຍັງ ຫຼືເຊື່ອໃຜດີ. ຜູ້ຄົນບໍ່ສາມາດເຊື່ອຖືໜັງສືພິມ, ວິທະຍຸຫຼືໂທລະທັດ, ນັກການເມືອງ, ກຸ່ມຕິດອາວຸດ, ແຕ່ເມື່ອພວກເຂົາໄດ້ຍິນເດັກເວົ້າເຖິງຄວາມຮຸນແຮງ ແລະ ລັກສະນະທີ່ມັນມີຜົນກະທົບຕໍ່ເຮົາ ແລະ ການທີ່ພວກເຮົາຕ້ອງການສັນຕິພາບຫຼາຍພຽງໃດ, ພວກເຂົາກໍ່ຮູ້ວ່າຕົວເອງກໍາລັງຟັງຄວາມຈິງຢູ່...*

*ບາງຄົນບອກວ່າ ພວກເຂົາຕໍ່ສູ້ເພື່ອຄົນຍາກຈົນ, ແຕ່ຄົນຍາກຈົນຜັດໄດ້ຮັບຄວາມລໍາບາກຫຼາຍກວ່າທຸກຄົນໃນສົງຄາມ. ຂ້ອຍຄິດວ່າບາງຄົນກໍ່ຕໍ່ສູ້ເພື່ອແກ້ແຄ້ນ ຫຼື ເພື່ອອໍານາດ, ເພາະພວກເຂົາຮູ້ສຶກວ່າບໍ່ມີທາງເລືອກອື່ນ. ຄົນໜຸ່ມບາງຄົນກໍ່ເຂົ້າຮ່ວມກັບກຸ່ມຕິດອາວຸດ ເພາະຄອບຄົວຂອງພວກເຂົາຍາກຈົນ ແລະ ມອງບໍ່ເຫັນທາງອອກອື່ນ.*

ປີເຕີ້ ແລະ ຄອບຄົວຂອງເຂົາຖືກຄຸກຄາມຈາກສົງຄາມກາງເມືອງ, ແລ້ວຕ້ອງຍ້າຍອອກຈາກຕົວເມືອງ. ພໍ່ຂອງເຂົາຕ້ອງເດີນທາງກັບໄປກັບມາລະຫວ່າງສໍານັກງານ ແລະ ຟາມທີ່ພວກເຂົາອາໄສຢູ່, ແຕ່ຄວາມສະຫງົບກໍ່ບໍ່ອາດຄົງຢູ່ໄດ້ດົນ. ຍ້ອນການສະໜັບສະໜູນຢ່າງຂະຫຍັນຂັນແຂງ ຕໍ່ຂະບວນການສັນຕິພາບຂອງພໍ່ຂອງປີເຕີ້ ຈຶ່ງເປັນຜົນໃຫ້ເຂົາຖືກລອບສັງຫານ:

*ຂ້ອຍຄິດວ່າຂ້ອຍເຂົ້າໃຈສົງຄາມ ເພາະຂ້ອຍໃຊ້ຊີວິດຢູ່ທ່າມກາງຄວາມຂັດແຍ້ງ. ມີການຕໍ່ສູ້ກັນກາງຖະໜົນໃນຕອນກາງຄືນ. ຂ້ອຍຕື່ນຂຶ້ນເລື້ອຍໆຕອນກາງຄືນເພາະສຽງປືນ. ເວລາໄປໂຮງຮຽນຕອນເຊົ້າຂ້ອຍກໍ່ເຫັນຮ່ອງຮອຍຂອງການຕໍ່ສູ້ ຄືມີຮອຍເລືອດຕິດຢູ່ນໍາກໍາແພງ ຫຼືຕົວອາຄານ*

*ທີ່ບຸ້ມໄປດ້ວຍຮອຍກະສຸນ ແລະ ຂ້ອຍກໍ່ເຫັນເຍື່ອຜູ້ເຄາະຮ້າຍ ທີ່ໂຮງເກັບສົບທີ່ຢູ່ບໍ່ໄກຈາກສຳນັກງານຂອງພໍ່ຂ້ອຍ.*

*ຂ້ອຍເຄີຍເວົ້າເລື່ອງນີ້ດ້ວຍຄວາມໝັ້ນໃຈ, ຄືກັບວ່າຂ້ອຍຮູ້ດີວ່າ ສົງຄາມໝາຍຄວາມວ່າແນວໃດ, ແຕ່ພໍພໍ່ຂ້ອຍຖືກຂ້າຕາຍ, ຂ້ອຍຮູ້ສຶກແຕກສະຫຼາຍ ແຕ່ບໍ່ແມ່ນພຽງແຕ່ຄວາມເສົ້າເສຍໃຈ, ແຕ່ເປັນເພາະຕອນນັ້ນເອງທີ່ຂ້ອຍເຂົ້າໃຈສົງຄາມ. ຂ້ອຍຮູ້ວ່າມັນຮູ້ສຶກແນວໃດ ຕອນທີ່ຢາກຈະຕໍ່ສູ້. ຂ້ອຍຮູ້ສຶກດີວ່າ ບໍ່ວ່າເຮົາຈະຕ້ອງການສັນຕິພາບຫຼາຍພຽງໃດກໍ່ຕາມ, ເຮົາກໍ່ໄດ້ກ້າວເຂົ້າໄປສູ່ຄວາມຮຸນແຮງ ເມື່ອສົງຄາມມາໂຈມຕີເຮົາເອງແບບຈິ່ງໆຈັງໆ. ນີ້ເປັນກັບດັກດຽວກັນກັບທີ່ຄົນຈຳນວນຫຼາຍໃນປະເທດຂອງຂ້ອຍຕິດຢູ່....*

*ບໍ່ມີຫຍັງຄືເກົ່າອີກຫຼັງຈາກນັ້ນ. ບ້ານເປັນຄືເປືອກຫອຍທີ່ໄຮ້ຊີວິດ. ທົ່ນທາງທີ່ຄຸ້ນເຄີຍດີກໍ່ເບິ່ງແປກໄປ. ບໍ່ມີຫຍັງແລະບ່ອນໃດທີ່ຈະຮູ້ສຶກໄດ້ວ່າປອດໄພ. ຂ້ອຍຄິດວ່າການເຮັດວຽກທັງໝົດຂອງຂ້ອຍເພື່ອສັນຕິພາບນັ້ນບໍ່ມີຄ່າຫຍັງ ເພາະມັນບໍ່ໄດ້ຊ່ວຍຮັກສາຊີວິດຂອງພໍ່ຂ້ອຍໄວ້ເລີຍ. ຄວາມຮຸນແຮງທີ່ໂຫດຮ້າຍໄດ້ກືນກິນບ້ານເມືອງຂອງພວກເຮົາ ໃນທີ່ສຸດກໍ່ໄດ້ໂຈມຕີເຂົ້າຈຸດສຳຄັນຂອງຄອບຄົວຂອງຂ້ອຍ. ຂ້ອຍກໍ່ບໍ່ສາມາດຢຸດມັນໄດ້. ຂ້ອຍຕຳໜິໂຕເອງ. ຂ້ອຍຖາມຕົນເອງວ່າ "ຂ້ອຍໄດ້ເຮັດຫຍັງລົງໄປ ພໍ່ຂອງຂ້ອຍຈຶ່ງຕ້ອງມາຕາຍໃນລັກສະນະເຊັ່ນນີ້?"*

ຄອບຄົວຂອງເຂົາຍັງຄົງຖືກຄຸກຄາມຕໍ່ໄປ. ປີເຕີ້ ໄປຊື້ປືນມາເພື່ອໃຊ້ຄຸ້ມຄອງຄົນທີ່ເຂົາຮັກ. ແລງມື້ໜຶ່ງເຊິ່ງເປັນເວລາສິບວັນຫຼັງຈາກທີ່ພໍ່ເຂົາຖືກຍິງ, ສະມາຊິກທຸກຄົນຂອງຄອບຄົວໄດ້ມາຮ່ວມກັນຢູ່ໃນຫ້ອງຊັ້ນເທິງຂອງບ້ານ. ໃນຕອນທີ່ ປີເຕີ້ ລົງມາຊັ້ນລຸ່ມເພື່ອໄປທີ່ຫ້ອງຄົວ, ເຂົາໄດ້ເຫັນຜູ້ບຸກລຸກຄົນໜຶ່ງໃນສວນ, ມີປືນຢູ່ໃນມືພ້ອມກັບຫຼຽວເບິ່ງໄປທີ່ຫ້ອງຊັ້ນເທິງຂອງບ້ານ. ປີເຕີ້ ເລົ່າວ່າ:

*ຂ້ອຍຮູ້ດີວ່າ ຂ້ອຍສາມາດໄປຈັບປືນມາ ແລະ ຂ້າຜູ້ຊາຍຄົນນັ້ນຊະ... ມັນເປັນການແກ້ແຄ້ນໃຫ້ກັບການຕາຍຂອງພໍ່ຂ້ອຍ. ມັນຈະເປັນການປົກປ້ອງຄອບຄົວຂອງຂ້ອຍ. ແລະ ຂ້ອຍຄິດວ່າຈະບໍ່ມີໃຜມາຕຳໜິຂ້ອຍຖ້າຂ້ອຍຍິງເຂົາ... ແມ່ນວ່າຄວາມຄິດພວກນີ້ຈະເປັນຄວາມຈິງ ແຕ່ຂ້ອຍກໍ່ບໍ່ໄດ້ເຮັດຫຍັງລົງໄປ. ພໍ່ຂອງຂ້ອຍຕ້ອງການໃຫ້ຂ້ອຍເຮັດວຽກເພື່ອສັນຕິພາບມາຕະຫຼອດ. ຂ້ອຍຈະໃຊ້ຄວາມຮຸນແຮງໃນຕອນນີ້ໄດ້ແນວໃດກັນ. ທາງດຽວທີ່ຂ້ອຍຈະສະແດງຄວາມເຄົາລົບ ແລະ ຄວາມຮັກຕໍ່ພໍ່ຂອງຂ້ອຍ, ທາງດຽວທີ່ຂ້ອຍຈະຊ່ວຍຮັກສາຄອບຄົວຂອງຂ້ອຍໄວ້ໄດ້ກໍ່ຄື ການພະຍາຍາມສ້າງສັນຕິພາບ. ການຂ້າຜູ້ຊາຍຄົນນັ້ນຈະບໍ່ມີທາງນຳສັນຕິພາບມາໃຫ້ຂ້ອຍ ຫຼື ຄອບຄົວ ຫຼື ປະເທດຂອງຂ້ອຍ. ທີ່ຈິງແລ້ວການຂ້າເຂົາ ຈະເຮັດໃຫ້ຂ້ອຍສູນເສຍທຸກຢ່າງໄປ ແລະ ຂ້ອຍກໍ່ຈະເປັນຄົນບໍ່ດີໄປກັບເຂົາດ້ວຍ.*

ປີເຕີ້ ເຝົ້າເບິ່ງຜູ້ບຸກລຸກຢ່າງງຽບໆ ບໍ່ຮູ້ວ່າເປັນເພາະເຫດໃດ ຊາຍຄົນນັ້ນຜັດຫັນຫຼັງກັບ ແລະ ຈາກໄປ. ບໍ່ດົນຫຼັງຈາກນັ້ນ, ປີເຕີ້ ກໍ່ຖິ້ມປືນຂອງເຂົາ ແລະ ບໍ່ເຄີຍຄິດທີ່ຈະຫາອັນໃໝ່ມາອີກ.

ກ່ອນທີ່ຈະອ່ານເລື່ອງຕໍ່ໄປ, ເຈົ້າອາດຈະປາດຖະໜາທີ່ຈະຂຽນເພື່ອລະບຸກ່ຽວກັບ ຄຸນສົມບັດທີ່ໂດດເດັ່ນຂອງປີເຕີ້. ຂໍໃຫ້ເຈົ້າຂຽນຂໍ້ຄວາມສັ້ນໆກ່ຽວກັບຄວາມສາມາດຂອງ ປີເຕີ້ ໃນການທົບທວນເລື່ອງລາວທີ່ເລິກເຊິ່ງ.

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

## ຕອນທີ 16

ແມຣີ - ເປັນນາມສົມມຸດ - ໄດ້ຮັບການລ້ຽງດູໃນສະພາບແວດລ້ອມທີ່ມີຄວາມຂັດແຍ່ງຢ່າງຕໍ່ເນື່ອງ; ລາວພົບກັບໂທດຂອງການບໍ່ເຫັນດ້ວຍກັບກຸ່ມໝູ່ເພື່ອນ ຕັ້ງແຕ່ອາຍຸຍັງນ້ອຍ:

*ຕອນທີ່ຂ້ອຍອາຍຸໄດ້ສິບເອັດປີ ຂ້ອຍໄດ້ຮັບການຮັກສາຢ່າງງຽບໆ, ເພາະວ່າຂ້ອຍປະຕິເສດທີ່ຈະເລືອກຢູ່ຂ້າງໃດຂ້າງໜຶ່ງຂອງການໂຕ້ຖຽງກັນ. ກຸ່ມໝູ່ເພື່ອນຂອງຂ້ອຍໄດ້ກ່າວຫາເດັກຍິງຄົນໜຶ່ງໃນຫ້ອງຮຽນວ່າເປັນຂີ້ລັກ ແລະ ເກີດຄວາມຂັດແຍ້ງໃຫຍ່ຫຼວງຂຶ້ນ. ເຈົ້າມີທາງເລືອກພຽງແຕ່ວ່າຈະເຂົ້າຂ້າງເດັກຍິງຄົນນັ້ນຫຼືຕໍ່ຕ້ານ, ແລະ ເພື່ອນຂອງຂ້ອຍທັງໝົດກໍ່ເລືອກທີ່ຈະຕໍ່ຕ້ານເດັກຄົນນັ້ນ. ທຸກຄົນຄິດວ່າຂ້ອຍຈະເຂົ້າຂ້າງພວກເຂົາ ແຕ່ຂ້ອຍຜັດຮູ້ສຶກວ່າບໍ່ມີຫຼັກຖານພຽງພໍທີ່ຈະບອກວ່າເດັກຍິງຄົນນັ້ນເປັນຂີ້ລັກ. ຂ້ອຍບໍ່ແນ່ໃຈ ແລະ ຂ້ອຍກໍ່ບໍ່ຢາກຢູ່ຝ່າຍກົງກັນຂ້າມກັບເພື່ອນ, ແຕ່ຂ້ອຍກໍ່ບໍ່ໄດ້ເວົ້າຫຍັງອອກໄປ. ທຸກຄົນຄຽດໃຫ້ຂ້ອຍ ແລະ ພວກເຂົາ ກໍ່ບໍ່ເວົ້າກັບຂ້ອຍຕະຫຼອດທັງປີ.*

ແມຣີ ສະນິດກັບເດັກຊາຍຄົນໜຶ່ງ ແລະ ເຖິງແມ່ນວ່າ ພວກເດັກຜູ້ຍິງຄົນອື່ນໆຈະຢອກລໍ້ ລາວກ່ຽວກັບເດັກຊາຍຄົນນັ້ນ, ແຕ່ລາວກໍ່ມີຄວາມຮູ້ສຶກອົບອຸ່ນ. ພວກເຂົາທັງສອງມັກຍ່າງຫຼິ້ນໄກໆນຳກັນ ແລະ ລົມກັນກ່ຽວກັບອານາຄົດ. ຈົນມາຮອດມື້ໜຶ່ງ ລາວພົບວ່າຊາຍຄົນນັ້ນກຳລັງ ທຳຄວາມສະອາດປືນຢູ່ ເຊິ່ງລາວບໍ່ຮູ້ມາກ່ອນວ່າເຂົາເປັນເຈົ້າຂອງ:

*ຕອນຂ້ອຍຍ່າງເຂົ້າໄປ, ເຂົາກໍ່ຍິ້ມໃຫ້ ຄືກັບວ່າບໍ່ໄດ້ເຮັດຫຍັງແປກໄປຈາກເດີມ. ຂ້ອຍຊັງຄວາມຮຸນແຮງມາຕະຫຼອດ, ຊັງປືນ ແລະ ຊັງສົງຄາມ. ເຂົາພະຍາຍາມແກ້ຕົວ, ໃນລັກສະນະທີ່ຄົນປະເພດນັ້ນເຮັດ, ແຕ່ຂ້ອຍກໍ່ບອກວ່າມິດຕະພາບຂອງເຮົາຈົບລົງພຽງເທົ່ານີ້. ຂ້ອຍບອກວ່າ 'ຂ້ອຍບໍ່ຕ້ອງການຊີວິດແບບນີ້ສຳລັບຕົວຂ້ອຍ ແລະ ລູກຂອງຂ້ອຍ'. ຕອນນັ້ນຂ້ອຍຍັງນ້ອຍຫຼາຍ ມັນເບິ່ງຄືວ່າເປັນເລື່ອງທີ່ຕະຫຼົກໃນຕອນນີ້. ແຕ່ຕອນນັ້ນຂ້ອຍຮູ້ສຶກຄືກັບວ່າ ໂລກຂອງຂ້ອຍກຳລັງແຕກອອກເປັນສອງປ່ຽງ.*

ຜົນການຮຽນຂອງ ແມຣີ ເລີ່ມຕົກຕໍ່າລົງຫຼັງຈາກເກີດເຫດການດັ່ງກ່າວ ແລະ ແມ່ຂອງລາວກໍ່ເປັນກັງວົນ. ຈາກນັ້ນ ແມຣີ ກໍເວົ້າກັບຄູຄົນໜຶ່ງຂອງລາວ:

*ຂ້ອຍໄດ້ເລົ່າເລື່ອງທັງໝົດຂອງໝູ່ຂອງຂ້ອຍ, ເລື່ອງປືນ, ເລື່ອງທີ່ເພື່ອນບໍ່ເວົ້າກັບຂ້ອຍ, ເລື່ອງທີ່ເດັກຜູ້ຍິງຍອກລໍ້ຂ້ອຍ, ຄວາມໜ້າອາຍຂອງຂ້ອຍ, ແລະ ເລື່ອງທີ່ຂ້ອຍອຶກອັດ. ຄູບໍ່ຫົວຂວັນຂ້ອຍ, ຫຼື ເຮັດໃຫ້ຂ້ອຍຮູ້ສຶກວ່າເປັນເດັກ ແລະ ເປັນຕາຫົວ...*

*ຄູບອກກັບຂ້ອຍວ່າ "ເຈົ້າຕ້ອງເຂົ້າໃຈວ່າ ອານາຄົດຂອງເຈົ້າຢູ່ໃນມືຂອງເຈົ້າເອງ. ອານາຄົດຂອງເຈົ້າບໍ່ໄດ້ເປັນຂອງຜູ້ໃດທັງນັ້ນ. ບໍ່ແມ່ນຂອງພໍ່ແມ່ເຈົ້າ ແລະ ໂດຍສະເພາະຢ່າງຍິ່ງບໍ່ແມ່ນຂອງເດັກຜູ້ຊາຍຄົນນັ້ນ. ອານາຄົດເປັນຂອງເຈົ້າ ແລະເຈົ້າກໍ່ສາມາດເຮັດຫຍັງກໍ່ໄດ້ກັບອານາຄົດຕາມທີ່ຕ້ອງການ."*

ເມື່ອແມຣີອາຍຸໄດ້ 14 ປີ, ແມຣີ ກໍ່ໄດ້ຮັບເລືອກເປັນປະທານຂອງສະພານັກຮຽນ ແລະ ເປັນຜູ້ທີ່ສົ່ງເສີມສັນຕິພາບໃນໝູ່ຄົນໄວດຽວກັນ. ຕໍ່ໄປນີ້ເປັນຄວາມຄິດທີ່ຢູ່ໃນໃຈຂອງລາວໃນຊ່ວງນັ້ນ.

*ພວກເຮົາຮູ້ດີວ່າການຢຸດຕິຄວາມຍາກຈົນສາມາດຊ່ວຍຢຸດຕິສົງຄາມໄດ້. ແຕ່ເຮົາກໍ່ເຮັດຫຍັງບໍ່ໄດ້ກ່ຽວກັບເລື່ອງນີ້. ເຮົາຮູ້ວ່າການຫຼຸດການວ່າງງານຈະຊ່ວຍໄດ້, ແຕ່ເຮົາກໍ່ເຮັດຫຍັງບໍ່ໄດ້ອີກຄືກັນ. ເຮົາບໍ່ສາມາດຢຸດກະສຸນ ຫຼື ມີດພ້າໄດ້, ເຮົາບໍ່ສາມາດຢຸດຄວາມຮຸນແຮງໄດ້, ແຕ່ເຮົາເຊື່ອວ່າເຮົາສາມາດເລີ່ມຕົ້ນສ້າງສັນຕິພາບໃນໝູ່ພວກເຮົາໄດ້....*

*ຂ້ອຍຮູ້ວ່າການເຮັດວຽກເພື່ອສັນຕິພາບອາດເປັນອັນຕະລາຍ, ແລະ ຂ້ອຍມີຄວາມຮູ້ສຶກໄວກັບທຸກຢ່າງທີ່ຜິດປົກກະຕິ. ບາງຄັ້ງກໍ່ພຽງແຕ່ຄວາມຮູ້ສຶກຢ້ານທີ່ວ່າຈະມີສິ່ງທີ່ບໍ່ດີຈະເກີດຂຶ້ນ, ໂດຍສະເພາະກັບຄອບຄົວຂອງຂ້ອຍ, ກໍ່ເຮັດໃຫ້ຂ້ອຍຮ້ອງໄຫ້ ແລະ ຮູ້ສຶກຢາກຈະໜີໄປໃຫ້ໄກໆ. ແຕ່ເດັກຄົນອື່ນໆທີ່ເພິ່ງພາຂ້ອຍ ແລະ ໃນທຳນອງດຽວກັນຂ້ອຍກໍ່ສຶກວ່າ ລູກທີ່ຍັງບໍ່ເກີດມາຂອງຂ້ອຍກໍ່ເພິ່ງພາຂ້ອຍເຊັ່ນດຽວກັນ. ຂ້ອຍບໍ່ສາມາດໜີຈາກໄປ, ບໍ່ວ່າຂ້ອຍຈະຢ້ານຫຼາຍປານໃດກໍ່ຕາມ. ຂ້ອຍເຮັດໄດ້ແຕ່ພຽງລະວັງ ແລະ ພະຍາຍາມຢູ່ໃນຄວາມປອດໄພໄວ້.*

ແມຣີ ມີຄຸນລັກສະນະທີ່ໂດດເດັ່ນໃດແດ່?

## ຕອນທີ 17

ຕໍ່ໄປນີ້ເປັນເລື່ອງທີ່ມາຈາກຄົນລຸ້ນເຍົາອີກສາມຄົນ, ເຊິ່ງແຕ່ລະຄົນສະແດງຄວາມຄິດທີ່ປະເສີດ ແລະ ຄວາມຮູ້ສຶກທີ່ອ່ອນໂຍນທີ່ສຸດ. ຄົນທໍາອິດເປັນເດັກຜູ້ຍິງອາຍຸສິບຫົກປີ, ເຊິ່ງຕອນທີ່ເຂົາອາຍຸໄດ້ສິບສອງປີ, ເຂົາເຄີຍສູນເສຍເພື່ອນສະໜິດຄົນໜຶ່ງ ເຊິ່ງຖືກຈັບເຂົ້າກຸ່ມແກ້ງການຕໍ່ສູ້ ແລະ ຖືກແທງຈົນເຖິງແກ່ຄວາມຕາຍ. ລາວບໍ່ເຄີຍລືມເພື່ອນຂອງລາວ ແລະ ຕັດສິນໃຈອຸທິດຕົນເພື່ອສົ່ງເສີມສັນຕິພາບ. ຕໍ່ມາ ລາວໄດ້ເລີ່ມຊ່ວຍເດັກໆທີ່ໄດ້ຮັບຜົນກະທົບຈາກຄວາມຮຸນແຮງ.

*ເດັກອາຍຸພຽງແປດຫຼືເກົ້າປີ ເຂົ້າຮ່ວມແກ້ງຕ່າງໆ, ເພາະພວກເຂົາຄິດວ່າມັນເທ່ ຫຼື ເພາະວ່າແກ້ງພວກນີ້ຈະຊ່ວຍຄຸ້ມຄອງເຂົາເວລາອອກມາຍ່າງຕາມຖະໜົນ. ໂດຍສ່ວນຫຼາຍແລ້ວພວກເຂົາພຽງແຕ່ໜີອອກມາຈາກຄວາມຮຸນແຮງໃນບ້ານ ແຕ່ພວກເຂົາຜັດພົບສິ່ງທີ່ໂຫດຮ້າຍກວ່າຕາມທ້ອງຖະໜົນ.*

*ຂ້ອຍຕ້ອງນັ່ງລົດເມໄປ..., ແຕ່ຄົນຂັບລົດເມຮູ້ກ່ຽວກັບວຽກທີ່ຂ້ອຍກໍາລັງພະຍາຍາມເຮັດຢູ່. ພວກເຂົາຈະເກັບເງິນຄ່າໂດຍສານເທົ່າທີ່ຄິດວ່າຂ້ອຍຈະສາມາດຈ່າຍໄດ້ ແລະ ມັກຈະໃຫ້ຂ້ອຍຂຶ້ນລົດຟີເລື້ອຍໆ. ຖະໜົນທີ່ໄປ... ຄົດລ້ຽວສູງຂຶ້ນ, ແລ່ນຜ່ານຕູບນ້ອຍໆທີ່ຕັ້ງຢູ່ໃກ້ໜ້າຜາສູງຊັນ. ເນີນເຂົານັ້ນມີຮ່ອງຮອຍຫຼວງຫຼາຍຂອງການຂຸດຫີນໄປໃຊ້ ເພື່ອການກໍ່ສ້າງໂຄງການຕ່າງໆ. ວຽກຂຸດຫີນເປັນວຽກໜັກ, ເຮັດໃຫ້ເຈັບຫຼັງ, ແລະ ຄ່າແຮງຕໍ່າ ແຕ່ເດັກຫຼາຍຄົນທີ່ຄອບຄົວພັດຖິ່ນຖານມັກເຮັດວຽກຢູ່ຕາມເໝືອງຫີນເຫຼົ່ານີ້. ຄອບຄົວຂອງພວກເຂົາຍາກຈົນຫຼາຍ, ຈົນເດັກໆຕ້ອງອອກຈາກໂຮງຮຽນ ແລະ ເຮັດທຸກຢ່າງເພື່ອໃຫ້ໄດ້ເງິນມາ.*

*ຈາກຖະໜົນນັ້ນ, ຂ້ອຍຍ່າງຢັ່ງຂີ້ຕົມທີ່ມີນໍ້າໜາຖ້ວມຕີນ, ຂ້າມຂົວສໍາລັບຄົນຍ່າງແຄບໆທີ່ແກວ່ງໄກວໂຍກເຍກ, ຂ້າມແມ່ນໍ້າເໝັນເນົ່າຈາກມົນລະພິດ. ອາຄານຂອງໂຮງຮຽນນັ້ນມີຫ້ອງຮຽນທີ່ສຸດ*

*ໂຊມຢູ່ປະມານທົ່ກຫ້ອງ, ຫຼັງຄາມຸງດ້ວຍສັງກະສີ. ໂຕະໄມ້ກໍ່ເປ່ເພແລະຫັກ. ມີຂີ້ເຫຍື້ອກະແຈກກະຈາຍຢູ່ດ້ານຂ້າງຂອງຫ້ອງຮຽນ. ບໍ່ມີໄຟຟ້າ. ຫ້ອງຮຽນຫ້ອງໜຶ່ງມີພຽງ ແສງສ່ອງເຂົ້າມາເທິງຫຼັງຄາ ແລະ ບໍ່ມີປະຕູປ່ອງຢ້ຽມ. ພື້ນກໍ່ເປັນດິນ. ສຽງຝົນຕົກກະທົບຫຼັງຄາສຽງດັງຫຼາຍຈົນທຸກຄົນຕ້ອງຮ້ອງຂຶ້ນດັງໆເພື່ອໃຫ້ຄົນອື່ນໄດ້ຍິນ ແລະ ຝົນກໍ່ຮົ່ວລົງມາທຸກຈຸດ. ຝາຂອງຫ້ອງຮຽນຫ້ອງໜຶ່ງຖືກຕົກແຕ່ງດ້ວຍຮູບແຕ້ມທີ່ເດັກໆແຕ້ມ ເຊິ່ງເປັນຮູບພາບຂອງບ້ານທີ່ສວຍງາມ ແຕກຕ່າງຢ່າງສິ້ນເຊີງກັບສະພາບແວດລ້ອມຂອງພວກເຂົາ. ບາງເທື່ອຮູບພາບເລົ່ານັ້ນອາດຈະເປັນພາບຂອງບ້ານທີ່ພວກເຂົາເຄີຍມີ ຫຼື ບ້ານທີ່ພວກເຂົາຢາກຈະມີໃນອານາຄົດ....*

*ພໍ່ແມ່ຫຼາຍຄົນມີສີໜ້າເສົ້າໝອງ. ພວກເຂົາເວົ້າຈາຮຸນແຮງກັບລູກໆຂອງຕົນເອງ, ເອີ້ນພວກເຂົາດ້ວຍສາຍາ. ແຕ່ໃນລະຫວ່າງການອົບຮົມພໍ່ແມ່ກໍ່ເລີ່ມປ່ຽນໄປໃນບາງຄັ້ງ. ບາງຄົນຄິດວ່າຕ້ອງຕີລູກ ເພື່ອໃຫ້ພວກເຂົາທຳຕົວໃຫ້ດີໆ, ແຕ່ແລ້ວພວກເຂົາກໍ່ຮູ້ສຶກວ່າການຕີເຮັດໃຫ້ພວກເດັກໆໜີໄປຢູ່ຂ້າງຖະໜົນ.*

ວັກຕໍ່ໄປໃຫ້ຂໍ້ຄິດຂອງເດັກຍິງຄົນໜຶ່ງທີ່ໜີອອກຈາກບ້ານຕອນອາຍຸ 11 ປີ, ແລະເລີ່ມຕິດ ຢາເສບຕິດ, ແລະ ຕໍ່ມາໄດ້ຮັບຄວາມຊ່ວຍເຫຼືອຈາກເພື່ອນທີ່ຢືນການຊ່ວຍເຫຼືອ, ແລະ ໃນທີ່ສຸດກໍ່ໄດ້ເຂົ້າຮ່ວມໃນການເຄື່ອນໄຫວເພື່ອສັນຕິພາບ:

*ມັນຍາກທີ່ຈະອະທິບາຍວ່າຊີວິດຂອງພວກເຮົາແທ້ຈິງແລ້ວມັນແມ່ນຫຍັງ. ຂ້ອຍຢ້ານທີ່ຈະຍອມຮັບວ່າ ບໍ່ວ່າເຮົາຈະພະຍາຍາມຫຼາຍເທົ່າໃດທີ່ຈະສ້າງສັນຕິພາບ ເຮົາກໍ່ຍັງຄົງຖືກລາກໄປຫາຄວາມຮຸນແຮງ.... ຂ້ອຍເຝົ້າປາດຖະໜາທີ່ຈະໜີໄປຈາກຊີວິດນີ້. ມັນຍາກທີ່ຈະຍອມຮັບໄດ້ ແຕ່ຕອນນີ້ຂ້ອຍເອງກໍ່ຫຼຸດອອກໄປຈາກຂະບວນການເພື່ອສັນຕິພາບອີກຄັ້ງ. ຂ້ອຍຕົວະແລະເສແສ້ງກັບຕົວເອງມາຕະຫຼອດວ່າທຸກຢ່າງຍັງດີຢູ່. ນັ້ນບໍ່ແມ່ນຄວາມຈິງເລີຍ. ບາງຄັ້ງຂ້ອຍຮູ້ສຶກເຄີ້ມໄປ. ເພາະທຸກຄືນມີການຕໍ່ສູ້ແລະຕີກັນໃນບ້ານຂ້ອຍ. ຖ້າພວກເຂົາບໍ່ຮ້ອງໃສ່ຂ້ອຍ, ແມ່ກັບພໍ່ລ້ຽງຂອງຂ້ອຍກໍ່ຈະຮ້ອງໃສ່ກັນເອງ. ຂ້ອຍທົນບໍ່ໄດ້ກໍ່ເລີຍໜີອອກໄປຢູ່ຂ້າງຖະໜົນ, ແລະຂ້າງນອກນັ້ນມີຫຼາຍສິ່ງຫຼາຍຢ່າງທີ່ເປັນອັນຕະລາຍກັບຄົນທີ່ຍັງອາຍຸນ້ອຍ.... ຂ້ອຍຍ່າງຕາມຖະໜົນສອງສາຍໃນເວລາດຽວກັນ ແລະ ຂ້ອຍກໍ່ຍັງປາດຖະໜາທີ່ຈະຍ່າງໃນຖະໜົນຂອງສັນຕິພາບຕະຫຼອດເວລາ. ຂ້ອຍຄິດວ່າການຕໍ່ສູ້ດີ້ນລົນຂອງຂ້ອຍ ແລະ ການທີ່ຂ້ອຍລອດພົ້ນມາໄດ້ ຄວນຈະເປັນສິ່ງທີ່ມີຄ່າຢ່າງໃດຢ່າງໜຶ່ງ.... ຂ້ອຍເຊື່ອວ່າຄົນລຸ້ນເຍົາຈະສາມາດເຮັດຫຼາຍສິ່ງຫຼາຍຢ່າງໄດ້ ເພື່ອທີ່ຈະຊ່ວຍໃຫ້ມີສັນຕິພາບ ຖ້າພວກຜູ້ໃຫຍ່ຫຼາຍຄົນຈະເຕັມໃຈຮ່ວມມື, ທີ່ຈະຮັບຟັງໃນສິ່ງທີ່ພວກເຮົາໄດ້ຮຽນຮູ້ມາ ແລະ ຮ່ວມເຮັດວຽກກັບພວກເຮົາ. ຖ້າພວກເຮົາມີສັນຕິພາບທີ່ບ້ານ, ນັ້ນໜ້າຈະເປັນຈຸດເລີ່ມຕົ້ນທີ່ວິເສດ.*

ຂໍ້ຄວາມສຸດທ້າຍອະທິບາຍປະສົບການຂອງເດັກຜູ້ຊາຍອາຍຸສິບຫ້າປີ ທີ່ອ້າຍຂອງລາວຖືກລັກພາຕົວໄປໂດຍກຸ່ມພວກປະຕິຮູບ. ຫຼັງຈາກນັ້ນບໍ່ດົນ ຄອບຄົວນີ້ກໍ່ໄດ້ຂ່າວຂອງເຂົາໃນຕອນທີ່ຍັງເປັນສະເລີຍຢູ່ ແລະ ກໍ່ຮູ້ສຶກດີໃຈທີ່ຕິດຕໍ່ກັບເຂົາໄດ້.

*ຂ້ອຍໄດ້ສົ່ງບົດກະວີໄປໃຫ້ອ້າຍ, ເພື່ອໃຫ້ກຳລັງໃຈໃຫ້ເຂົາຢູ່ດ້ວຍຄວາມເຊື່ອໝັ້ນ ແລະ ມີຄວາມຫວັງ. ຂ້ອຍບອກເຂົາວ່າຂ້ອຍເຊື່ອຄຳແນະນຳຂອງເຂົາ ແລະ ພະຍາຍາມຮຽນຢ່າງໜັກ. ຂ້ອຍດີໃຈທີ່ອ້າຍຂອງຂ້ອຍສາມາດຂຽນຕອບກັບມາໄດ້ວ່າ "ອ້າຍດີໃຈທີ່ເຈົ້າຮຽນດີຫຼາຍໃນໂຮງຮຽນ.... ນັ້ນເປັນສິ່ງທີ່ອ້າຍເຮັດຜິດພາດ. ອ້າຍເສຍໃຈທີ່ບໍ່ໄດ້ຕັ້ງໃຈຮຽນໃຫ້ດີພໍ.... ຕົວຢ່າງເຊັ່ນ ອ້າຍບໍ່ມັກອ່ານໜັງສື.... ແຕ່ຕອນນີ້ອ້າຍອ່ານໜັງສືຫຼາຍໆປະເພດຫຼາຍກວ່າສາມສິບເຫຼັ້ມ ແລະ ຍັງມີອີກຫຼາຍເຫຼັ້ມທີ່ຈະຕ້ອງອ່ານ. ອ້າຍຍັງຈັບເອົາພົດຈະນະນຸກົມມາເບິ່ງຄວາມໝາຍຂອງສັບແປກໆທີ່ບໍ່ຮູ້ຈັກດ້ວຍ.... ເຊິ່ງນີ້ເປັນສິ່ງທີ່ບໍ່ເຄີຍຕັ້ງໃຈເຮັດເອງມາກ່ອນ....*

*ເຖິງແມ່ນວ່າອ້າຍຂອງຂ້ອຍເບິ່ງຄືວ່າຈະປອດໄພ, ແຕ່ຂ້ອຍກໍ່ຍັງກັງວົນ. ຖ້າຂ້ອຍສາມາດລົມກັບຄົນທີ່ຈັບຕົວອ້າຍຂ້ອຍໄປໄດ້ ຂ້ອຍຈະຂໍໃຫ້ພວກເຂົາສົງສານ ແລະ ເຂົ້າໃຈໃນຄວາມທຸກທໍລະມານທີ່ພວກເຂົາໄດ້ກໍ່ຂຶ້ນ.*

*ຂ້ອຍຄິດວ່າການໃຫ້ອະໄພ ເປັນຮາກຖານສຳຄັນຖ້າເຮົາຕ້ອງການມີສັນຕິພາບ. ສົງຄາມບໍ່ອາດຢຸດຕິລົງໄດ້ຖ້າບໍ່ມີການໃຫ້ອະໄພ. ເປັນສິ່ງສຳຄັນທີ່ຄົນຢ່າງພວກເຮົາທີ່ທົນທຸກທໍລະມານຈະໃຫ້ອະໄພ.*

*ຂ້ອຍຄິດວ່ານີ້ຄືວຽກທີ່ຂ້ອຍກຳລັງເຮັດ - ຂ້ອຍເຮັດວຽກເພື່ອການໃຫ້ອະໄພ.*

ປຶກສາຫາລືໃນກຸ່ມຂອງເຈົ້າ ເຖິງຄຸນລັກສະນະບາງປະການຂອງຊາວໜຸ່ມທີ່ກ່າວເຖິງໃນຕອນສິບເຈັດນີ້, ແລະ ໃຫ້ຂຽນຂໍ້ຄິດເຫັນສອງສາມຢ່າງຂອງພວກເຈົ້າ.

## ຕອນທີ 18

ສຸດທ້າຍນີ້, ບໍ່ມີການສຳຫຼວດເບິ່ງທັມມະຊາດຂອງໄວລຸ້ນ, ເຖິງວ່າຈະສັ້ນພຽງໃດກໍ່ຕາມ ກໍ່ບໍ່ອາດມອງຂ້າມຊີວິດຂອງ ຣູຮູລລາຫ໌ ໄປໄດ້, ວິລະຊົນຜູ້ເຍົາໄວຂອງສາສະໜາ ໃນຕອນອາຍຸພຽງ 12 ປີ, ຜູ້ເຊິ່ງໄດ້ດື່ມຈອກແຫ່ງສຸກທັນສາຂອງການສະຫຼະຊີບເພື່ອສາສະໜາ. ໃນຕອນທີ່ອາຍຸໄດ້ 7 ປີ ຣູຮູລລາຫ໌ ໄດ້ຮັບສິດທິພິເສດໃນການເດີນທາງ ເພື່ອໄປສະແຫວງບຸນທີ່ດິນແດນສັກສິດຮ່ວມກັບບິດາຂອງເຂົາ, ພຣະທັດສາສະໜາຂອງພຣະຜູ້ເປັນເຈົ້າຜູ້ມີນາມວ່າ ວາຣ໌ກ້າ ແລະ ອ້າຍຂອງເຂົາ. ຣູຮູລລາຫ໌ ມີຄວາມເບັ່ງບານທາງຈິດວິນຍານ ໃນສະພາບແວດລ້ອມອັນສັກສິດທີ່ຢູ່ອ້ອມຮອບຕົວເຂົາ ແລະ ໄດ້ຮັບການອາບແສງດ້ວຍການໄດ້ຢູ່ຮ່ວມໃນທີ່ປະທັບຂອງ ພຣະບາຮາອຸລລາຫ໌. ມື້ໜຶ່ງ ພຣະບາຮາອຸລລາຫ໌ ຊົງຖາມ ຣູຮູລລາຫ໌ ວ່າ "ມື້ນີ້ເຈົ້າໄດ້ເຮັດຫຍັງແດ່?"

ເຂົາຕອບວ່າ "ຂ້າພະເຈົ້າໄດ້ຮຽນໜັງສືກັບ (ຄູຄົນໜຶ່ງ)"

ພຣະບາຮາອຸລລາຫ໌ ຊົງຖາມວ່າ "ເຈົ້າຮຽນວິຊາຫຍັງ?"

"ຮຽນເລື່ອງການສະເດັດກັບມາຂອງ ພຣະສາສະດາ" ຣູຮູລລາຫ໌ຕອບ.

ພຣະບາຮາອຸລລາຫ໌ ຊົງຖາມວ່າ "ຈັ່ງຊັ້ນລອງອະທິບາຍຄວາມໝາຍຂອງເລື່ອງນີ້ເບິ່ງດຸ?

ເຂົາຕອບວ່າ "ການກັບມາໝາຍຄວາມວ່າ ຄືການກັບມາຂອງການດຳລົງຢູ່ທີ່ແທ້ຈິງ ແລະ ຄຸນລັກສະນະທັງຫຼາຍ."

ພຣະບາຮາອຸລລາຫຼ ຊົງໄດ້ຖາມເຂົາອີກວ່າ "ນີ້ເປັນຄຳເວົ້າຂອງຄູຂອງເຈົ້າຢ່າງແນ່ນອນ. ຄັນຊັ້ນເຈົ້າລອງບອກເຮົາພຣະອົງດ້ວຍຄຳເວົ້າຂອງເຈົ້າ ແລະ ຄວາມເຂົ້າໃຈຂອງເຈົ້າເອງໃນເລື່ອງນີ້ເບິ່ງດຸ."

ຣູຮູລລາຫ໌ ຕອບວ່າ: "ມັນເປັນຄືກັນກັບການຕັດດອກໄມ້ດອກໜຶ່ງ ຈາກຕົ້ນໄມ້ຕົ້ນໜຶ່ງໃນປີນີ້. ປີໜ້າດອກໄມ້ກໍ່ເບິ່ງແລ້ວມີລັກສະນະຄືກັນກັບດອກນີ້, ແຕ່ທີ່ຈິງແລ້ວເປັນດອກໄມ້ຄົນລະດອກກັນ."

ຄຳຕອບທີ່ສະຫຼາດຫຼັກແຫຼມຂອງ ຣູຮູລລາຫ໌ ເຮັດໃຫ້ ພຣະບາຮາອຸລລາຫ໌ ພໍພຣະໄທ, ພຣະອົງຊົງມັກເອີ້ນເຂົາວ່າ ຈີນາບີ ໂມບາລເລ Jinab-i-Muballigh (ເປັນສາຍາຂອງເຂົາເຊິ່ງໝາຍຄວາມວ່າຄູບາຮາຍ).

ມີເລື່ອງລາວອື່ນໆອີກຫຼາຍເລື່ອງ ທີ່ສະແດງໃຫ້ເຫັນເຖິງຄຸນລັກສະນະອັນປະເສີດຂອງ ຣູຣູລລາຫ໌. ເປັນຄວາມຈິງທີ່ວ່າ, ຣູຣູລລາຫ໌ ບໍ່ແມ່ນຄົນທັມມະດາ ເພື່ອທະຍານຂຶ້ນໄປສູ່ລະດັບຄວາມເສຍສະລະທີ່ ເຂົາບັນລຸໃນຕອນອາຍຸສິບສອງປີ. ແນ່ນອນວ່າການອຸທິດຕົນເພື່ອສາສະໜາ ແລະ ການເສຍສະລະໃນເສັ້ນທາງຂອງພຣະຜູ້ເປັນທີ່ຮັກ, ບໍ່ຈຳເປັນຕ້ອງລົງເອີຍ ທີ່ການສະຫຼະຊີວິດເພື່ອສາສະໜາ. ແມ່ນວ່າ ຣູຣູລລາຫ໌ ອະທິບາຍເຖິງຄວາມເລິກລັບຂອງການເສຍສະຫຼະ ດ້ວຍຄວາມປາດຖະໜາອັນຍາວນານ ແລະ ຄວາມສຸກທັນສາອັນໄຮ້ຂອບເຂດ ໃນບົດກອນ, ທີ່ຄັດມາຂ້າງລຸ່ມນີ້.

ຂໍໃຫ້ຂ້າພະອົງໄດ້ດື່ມຈາກຖ້ວຍແຫ່ງພຣະກະລຸນາທິຄຸນແຫ່ງສະຫວັນ
ແລະ ຂໍຊົງສຳລະລ້າງບາບ ແລະ ຄວາມອ່ອນແອໄປຈາກຂ້າພະອົງ;
ເພາະແມ່ນວ່າບາບຂອງຂ້າພະອົງຈະຫຼວງຫຼາຍ,
ຄວາມປານີຂອງພຣະຜູ້ເປັນນາຍຂອງຂ້າພະອົງກໍ່ຍັງຄົງຍິ່ງໃຫຍ່.

ຍິນດີຕ້ອນຮັບຜູ້ທີ່ຖືຖ້ວຍແຫ່ງງານລ້ຽງຂອງສະຫວັນ!
ຂໍຊົງເຮັດໃຫ້ຈິດໃຈຂອງຂ້າພະອົງສົດໃສ ແລະ
ຂໍຊົງເຮັດໃຫ້ຂ້າພະອົງຄູ່ຄວນກັບການສະລະຊີວິດ
ໃນເສັ້ນທາງຂອງພຣະຜູ້ເປັນທີ່ຮັກຍິ່ງທີ່ສຸດ.

ເຍົາວະຊົນໃນກຸ່ມທີ່ຈະຈັດຕັ້ງໄວໆນີ້ຈະບໍ່ໃຊ້ຊີວິດແບບ ຣູຣູລລາຫ໌. ແມ່ນວ່າຂໍ້ຄວາມໃນນີ້ ແລະຂໍ້ຄວາມໃນສອງສາມຕອນທີ່ຜ່ານມາ, ບົ່ງຊີ້ວ່າມະນຸດສາມາດສະແດງອອກເຖິງຄວາມສູງສົ່ງໄດ້ຕັ້ງແຕ່ອາຍຸຍັງນ້ອຍພຽງໃດ. ພວກເຮົານຶກເຖິງຄຳກ່າວ ທີ່ຖືກກ່າວໄວ້ໃນຕອນກ່ອນໆຂອງພາກນີ້ທີ່ວ່າ ຄວາມຮັບຮູ້ທີ່ເພີ່ມຂຶ້ນໃນຊ່ວງໄວລຸ້ນ ສາມາດຖືກນຳໄປໄດ້ໃນສອງທິດທາງ - ທາງໜຶ່ງໄປສູ່ການຍອມຈຳນົນຕໍ່ພຣະປະສົງຂອງພຣະຜູ້ເປັນເຈົ້າ ແລະ ການຮັບໃຊ້ຢ່າງເສຍສະລະຕົນເອງຕໍ່ມະນຸດຊາດ ຫຼື ອີກທາງໜຶ່ງໄປສູ່ການເປັນນັກໂທດຂອງກິເລດ ແລະ ອັດຕາ ເຊິ່ງຈະກ່າວໃນຫຼາຍຕອນຕໍ່ໄປ, ທີ່ພວກເຮົາ ສຳຫຼວດກ່ຽວກັບທັມມະຊາດຂອງໄວລຸ້ນ, ສັກກະຍະພາບຂອງເຍົາວະຊົນ, ແລະ ຜົນກະທົບຈາກສະພາບແວດລ້ອມທີ່ພວກເຂົາໃຊ້ຊີວິດຢູ່. ເປັນຊ່ວງເວລາທີ່ເຈົ້າອາດຈະຢຸດຈັກໜ້ອຍໜຶ່ງ ແລະ ຂຽນຂໍ້ຄວາມສອງສາມຫຍໍ້ໜ້າກ່ຽວກັບສິ່ງທີ່ເຈົ້າພິຈາລະນາວ່າ ເປັນຄຸນລັກສະນະທີ່ບໍ່ຕິດຕົວມາແຕ່ກຳເນີດຂອງເຍົາວະຊົນ ແລະ ແມ່ນຫຍັງທີ່ຈຳເປັນຈະຕ້ອງໄດ້ເຮັດເພື່ອເປັນການຮັບປະກັນວ່າ ພວກເຂົາຈະມີການພັດທະນາທາງດ້ານສະຕິປັນຍາແລະທາງຈິດວິນຍານ.

## ຕອນທີ 19

ຈາກການທີ່ໄດ້ໃຊ້ເວລາສ່ວນໃຫຍ່ໃນພາກນີ້ ໄປໃນການສຳຫຼວດສັກກາຍະພາບຂອງໄວລຸ້ນ, ຕອນນີ້ພວກເຮົາຈຶ່ງຄວນກ່າວເລັກໜ້ອຍ ກ່ຽວກັບການເຂົ້າມີສ່ວນຮ່ວມໃນໂຄງການທີ່ເຈົ້າຈະເຮັດເພື່ອເສີມສ້າງຄວາມສາມາດທາງຈິດວິນຍານແກ່ເຍົາວະຊົນ. ພະລັງທີ່ເປັນຄວາມປາດຖະໜາທີ່ແຮງກ້າຫຼາຍທີ່ສຸດຢ່າງໜຶ່ງໃນຊີວິດຂອງເຍົາວະຊົນ ຄືການເຂົ້າເປັນສ່ວນໜຶ່ງຂອງກຸ່ມເພື່ອນ. ພວກເຂົາພົບວ່າເປັນສິ່ງທີ່ສ້າງຄວາມໝັ້ນໃຈ ທີ່ຈະຫັນໄປຫາຄຳແນະນຳຈາກເພື່ອນທີ່ເຂົ້າໃຈ ແລະ ຄອຍປອບໂຍນພວກເຂົາ. ດັ່ງນັ້ນ ຈຶ່ງເປັນການຕອບສະໜອງຕໍ່ຄວາມຕ້ອງການທີ່ຖືກຕ້ອງຕາມທີ່ຄວນເປັນ ດ້ວຍການສ້າງຫຼັກສູດ ຫຼື ໂຄງການທີ່ສະຖາບັນຣູຮີສົ່ງເສີມຢູ່ ໂດຍມີແນວຄວາມຄິດທີ່ວ່າ ກຸ່ມເຍົາວະຊົນຈະມີສະມາຊິກທີ່ມາພົບປະກັນຢ່າງສະໝໍ່າສະເໝີ ແລະ ໄດ້ຮັບການນຳທາງຢ່າງເປັນລະບົບໃນການຄົ້ນຄວ້າ

ແລະຮຽນຮູ້. ບັນຍາກາດຂອງການພົບປະກັນນັ້ນ ໃນຂະນະທີ່ມີຄວາມເປັນມິດ ແລະ ໃກ້ຊິດກັນກໍ່ຈະບໍ່ມີຄວາມອໍ້ແອ້ບໍ່ເອົາຈິງເອົາຈັງ ແລະ ຈະເປັນການພົບປະກັນທີ່ຊ່ວຍເພີ່ມພູນຄຸນລັກສະນະ ແລະ ທັດສະນະຄະຕິທີ່ຈຳເປັນຕໍ່ຊີວິດ ທີ່ຕ້ອງການຈະຮັບໃຊ້ສາສະໜາ ແລະ ມະນຸດຊາດ. ໃນການພົບປະກັນສະມາຊິກໃນກຸ່ມຈະບໍ່ຢ້ານການຖືກຕຳໜິ ຫຼື ການລໍ້ລຽນ, ແຕ່ຈະສາມາດສະແດງຄວາມຄິດເຫັນ ແລະ ສະແຫວງຫາຄຳຕອບໃຫ້ກັບຄຳຖາມທີ່ຕົນເອງມີຢູ່. ພວກເຂົາຈະຮຽນຮູ້ທີ່ຈະຟັງ, ເວົ້າ, ທົບທວນ, ວິເຄາະ, ຕັດສິນໃຈ ແລະ ລົງມືກະທຳຕາມການຕັດສິນໃຈຂອງຕົນເອງ.

ໃນແຕ່ລະກຸ່ມ ຈຳເປັນທີ່ຈະຕ້ອງມີຄົນອາຍຸຫຼາຍກວ່າທີ່ເປັນເພື່ອນແທ້ຂອງເຍົາວະຊົນ ແລະ ສາມາດຊ່ວຍເຫຼືອພວກເຂົາ ໃນການພັດທະນາຄວາມສາມາດຕ່າງໆ. ຄົນທີ່ເຮັດໜ້າທີ່ນີ້ຮູ້ຈັກກັນໃນນາມ "ຜູ້ປະສານງານຂອງກຸ່ມເຍົາວະຊົນ (Animator)". ການຢູ່ໃນກຸ່ມຂອງຄົນເຫຼົ່ານີ້ ຊ່ວຍໃຫ້ສະມາຊິກໃນກຸ່ມມີຄວາມຫວັງ ແລະ ເຊື່ອວ່າພວກເຂົາຈະສາມາດຄຸ້ມຄອງຕົນເອງ ຈາກອິດທິພົນທາງລົບຂອງສັງຄົມທີ່ກຳລັງແຕກສະຫຼາຍລົງ. ແມ່ນວ່າການຮັບໃຊ້ໃນໜ້າທີ່ນີ້ ຈະບໍ່ເປັນສິດທິພິເສດຂອງຄົນບາງໄວ, ແຕ່ຊາວໜຸ່ມຜູ້ທີ່ມີອາຍຸຫຼາຍກວ່າກໍ່ເບິ່ງຄືວ່າ ຈະເຮັດໜ້າທີ່ເປັນຜູ້ປະສານງານທີ່ດີເລີດ, ເພາະພວກເຂົາຈະບໍ່ປະຕິບັດກັບເຍົາວະຊົນໃນລັກສະນະຄືກັນກັບເດັກນ້ອຍ ແຕ່ຈະຄືຄົນໃນໄວດຽວກັນ ແລະ ຈະກະຕຸ້ນໃຫ້ພວກເຂົາຖາມຄຳຖາມ, ສະແຫວງຫາຄວາມກະຈ່າງແຈ້ງ ແລະ ຍຸ້ງຢູ່ກັບການສອບສວນຄົ້ນຫາຄວາມຈິງ. ໃນພຣະທັມມະລິຂິດຕອນຕໍ່ໄປນີ້ ພຣະອັບດຸລບາຮາ ໄດ້ສະແດງຄວາມຫວັງວ່າ ຈິດວິນຍານຂອງຊາວໜຸ່ມຈະຕ້ອງໄດ້ຮັບການບຳລຸງລ້ຽງ:

> **"ເປັນຄວາມຫວັງຂອງ ພຣະອັບດຸລບາຮາ ວ່າຈິດວິນຍານຂອງໜຸ່ມສາວທີ່ຢູ່ໃນຫ້ອງຮຽນແຫ່ງຄວາມຮູ້ທີ່ຢູ່ໃນລະດັບເລີກ ຈະໄດ້ຮັບການດູແລຈາກຜູ້ທີ່ເຝິກຝົນໃຫ້ເຂົາມີຄວາມຮັກ. ຂໍໃຫ້ພວກເຂົາທຸກຄົນເອື້ອມເຖິງຈິດວິນຍານທຸກແຫ່ງຫົນ, ຮຽນຮູ້ໃຫ້ດີກ່ຽວກັບຄວາມເລັ້ນລັບຕ່າງໆທີ່ເຊື່ອງຊ້ອນຢູ່; ດີຈົນເຖິງຂັ້ນທີ່ເມື່ອຢູ່ໃນອານາຈັກ ຂອງພຣະຜູ້ຊົງຄວາມຮຸ່ງເຮືອງທັງປວງ, ພວກເຂົາແຕ່ລະຄົນ ເຊິ່ງເປັນດັ່ງນົກໄນຕິງເກລທີ່ສາມາດເວົ້າໄດ້ ຈະເປັ່ງສຽງຮ້ອງບອກຄວາມລັບແຫ່ງອານາຈັກສະຫວັນ, ແລະ ເປັນດັ່ງຄົນຮັກຜູ້ປາດຖະໜາທີ່ຕ້ອງການຈະເວົ້າອອກມາເຖິງຄວາມເຈັບປວດ ແລະ ຄວາມຕ້ອງການອັນແຮງກ້າຂອງຜູ້ເປັນທີ່ຮັກ."** [32]

ກຸ່ມເຍົາວະຊົນບໍ່ແມ່ນຊັ້ນຮຽນເດັກ. ກຸ່ມເຍົາວະຊົນມີລັກສະນະບາງຢ່າງທີ່ຄ້າຍກັບກຸ່ມການສຶກສາກຸ່ມນ້ອຍ, ແຕ່ໜ້າທີ່ຫຼັກຂອງກຸ່ມກໍ່ຄື ການຈັດສະພາບແວດລ້ອມຂອງການສະໜັບສະໜູນເຊິ່ງກັນແລະກັນຂອງສະມາຊິກຂອງກຸ່ມ, ເຊິ່ງເປັນສະພາວະໜຶ່ງທີ່ພວກເຂົາສາມາດພັດທະນາການຮັບຮູ້ທາງຈິດວິນຍານ ແລະ ແບບແຜນຄວາມຄິດ ແລະ ພຶດຕິກຳທີ່ຈະເຮັດໃຫ້ພວກເຂົາມີລັກສະນະສະເພາະຂອງການດຳລົງຊີວິດຂອງພວກເຂົາ. ຫຼັງຈາກໄດ້ເຂົ້າຮ່ວມຫຼັກສູດຕ່າງໆຂອງສະຖາບັນຣູຮີ, ເຈົ້າມີປະສົບການໂດຍຕົງໃນຖານະສະມາຊິກຂອງການສຶກສາກຸ່ມນ້ອຍ ແລະ ອາດເຄີຍໄດ້ຊັ້ນຮຽນເດັກບາງຊັ້ນຮຽນ ຫຼັງຈາກໄດ້ຮຽນຫຼັກສູດທີສາມ. ຂໍໃຫ້ເບິ່ງລັກສະນະຂ້າງລຸ່ມ. ແລ້ວປຶກສາກັບຜູ້ເຂົ້າຮ່ວມສຶກສາຫຼັກສູດນີ້

ຂອງເຈົ້າ ວ່າແຕ່ລະອັນມີຄວາມຄ້າຍຄື ແລະ ຄວາມແຕກຕ່າງ ທີ່ເຈົ້າພົບເຫັນລະຫວ່າງ ຊັ້ນຮຽນເດັກ, ກຸ່ມເຍົາວະຊົນ, ແລະ ການສຶກສາກຸ່ມນ້ອຍແນວໃດ.

- ລັກສະນະຂອງກິດຈະກຳ
- ຄວາມສຳພັນລະຫວ່າງຜູ້ເຂົ້າຮ່ວມສຶກສາ
- ບັນຍາກາດຂອງການພົບປະກັນ
- ບົດບາດຂອງຜູ້ທີ່ກະທຳການຮັບໃຊ້ - ເປັນຄູສອນ, ຜູ້ຊຸກຍູ້ກຸ່ມເຍົາວະຊົນ, ຫຼື ຜູ້ອຳນວຍຄວາມສະດວກ

## ຕອນທີ 20

ໃນຂະນະທີ່ເຈົ້າອຸທິດຕົນເອງເພື່ອຮັບໃຊ້ໃນວຽກງານນີ້, ເຈົ້າຈະພົບໃນບໍ່ຊ້າວ່າສິ່ງສຳຄັນຕໍ່ຄວາມສຳເລັດຂອງຄວາມພະຍາຍາມຂອງເຈົ້າຂຶ້ນກັບ, ຄຸນນະພາບຂອງຄວາມສຳພັນໃນລະດັບທີ່ດີ ທີ່ເຈົ້າຊ່ວຍສ້າງຂຶ້ນກັບສະມາຊິກຂອງກຸ່ມເຍົາວະຊົນ. ແນ່ນອນວ່າ ເຈົ້າຈະຕຽມຕົວທີ່ຈະຟັງພວກເຂົາ, ໃຫ້ຄຳແນະນຳແກ່ພວກເຂົາ, ແລະ ປອບໂຍນພວກເຂົາເມື່ອຈຳເປັນ. ຄວາມເຊື່ອຢ່າງແຮງກ້າຂອງເຈົ້າໃນຄວາມໜັກແໜ້ນຂອງພວກເຂົາ, ຄວາມເຄົາລົບ ແລະ ຄວາມຮັກທີ່ແທ້ຈິງທີ່ເຈົ້າມີໃຫ້ພວກເຂົາ, ຈະກະຕຸ້ນໃຫ້ພວກເຂົາບຸກບືນສູ່ຄວາມດີເລີດ. ເຈົ້າຈຳເປັນຕ້ອງສະແດງໃຫ້ພວກເຂົາເຫັນ ເຖິງຄວາມຜູກມັດຕົນຂອງເຈົ້າຕໍ່ຄວາມຜາສຸກ ແລະ ຄວາມກ້າວໜ້າຂອງພວກເຂົາ, ໂດຍບໍ່ມີຮ່ອງຮອຍ ຂອງການເປັນຜູ້ປົກຄອງ, ຄວາມຄິດວ່າຕົນເອງເປັນຝ່າຍຖືກ, ຫຼື ການຄວບຄຸມແບບສະແດງອຳນາດ - ເຊິ່ງເປັນທັດສະນະຄະຕິ ທີ່ບໍ່ເຫຼືອຊ່ອງຫວ່າງໄວ້ໃຫ້ເຍົາວະຊົນໄດ້ພັດທະນາ. ແລະ ເຈົ້າຈະຕ້ອງໃຊ້ທຸກ ໂອກາດທີ່ຈະເສີມຄວາມແຂງແຮງ ໃຫ້ກັບຮາກຖານຂອງຄວາມສັດທາຢ່າງແທ້ຈິງຂຶ້ນໃນຫົວໃຈ ແລະ ຄວາມຄິດຂອງພວກເຂົາ, ແລະ ເພາະປູກຄວາມຫວັງກ່ຽວກັບອານາຄົດທີ່ສົດໃສຂຶ້ນ ພາຍໃນຕົວຂອງພວກເຂົາ.

> **"ກ່ອນອື່ນໝົດ ຈົ່ງພ້ອມທີ່ຈະສະລະຊີວິດຂອງເຈົ້າໃຫ້ກັນແລະກັນ, ເລືອກຄວາມຜາສຸກຂອງຄົນທົ່ວໄປ ແທນທີ່ຈະເປັນຄວາມຜາສຸກຂອງຕົນເອງ. ຈົ່ງສ້າງຄວາມສຳພັນທີ່ບໍ່ມີສິ່ງໃດສັ່ນຄອນໄດ້; ຈົ່ງກໍ່ຕັ້ງສະມາຄົມທີ່ບໍ່ມີສິ່ງໃດມາເຮັດໃຫ້ແຕກແຍກໄດ້; ຈົ່ງມີຄວາມຄິດທີ່ບໍ່ເຄີຍຢຸດສະແຫວງຫາສົມບັດທີ່ບໍ່ມີສິ່ງໃດມາທຳລາຍໄດ້. ຫາກບໍ່ມີຄວາມຮັກຄົງຢູ່, ຈະມີຄວາມເປັນຈິງໃດທີ່ຄົງຢູ່ໄດ້? ເພິ່ງແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ເປັນສິ່ງທີ່ເຮັດໃຫ້ມະນຸດເໜືອກວ່າສັດ. ຈົ່ງເສີມຄວາມເຂັ້ມແຂງໃຫ້ແກ່ພະລັງທີ່ສູງສົ່ງກວ່ານີ້ ເຊິ່ງເປັນຫົນທາງໄປສູ່ການບັນລຸຄວາມຈະເລີນກ້າວໜ້າທັງໝົດໃນໂລກ."** [33]

ຈົ່ງປຶກສາຫາລືວ່າທັດສະນະຄະຕິຕໍ່ໄປນີ້ ຈະບັ່ນທອນສິດທິຂອງສະມາຊິກໃນກຸ່ມເຍົາວະຊົນແນວໃດ ແລະ ມີຄວາມຄິດ, ຄວາມຮູ້ສຶກ ແລະ ຄວາມປະພຶດໃດ ທີ່ຈະຊ່ວຍໃຫ້ຜູ້ຊຸກຍູ້ກຸ່ມເຍົາວະຊົນຕໍ່ຕ້ານແນວໂນ້ມດັ່ງກ່າວໄດ້.

ການທຳຕົວເປັນຄືຜູ້ປົກຄອງ: ______________________________

______________________________

______________________________

______________________________

______________________________

______________________________

______________________________

ການຄິດວ່າຕົນເອງເປັນຝ່າຍຖືກ: ______________________________

______________________________

______________________________

______________________________

______________________________

______________________________

______________________________

ການຄວບຄຸມແບບສະແດງອຳນາດ: ______________________________

______________________________

______________________________

______________________________

______________________________

______________________________

______________________________

______________________________

## ຕອນທີ 21

ຄວາມສຳພັນຂອງເຈົ້າ ກັບສະມາຊິກເຍົາວະຊົນຂອງກຸ່ມໃດກໍຕາມ ຈະໄດ້ຮັບຜົນກະທົບຢ່າງຫຼວງຫຼາຍຈາກຕົວຢ່າງທີ່ເຈົ້າຕັ້ງໄວ້. ອິດທິພົນຂອງຕົວຢ່າງໃນຊີວິດຂອງຄົນໜຸ່ມ ບໍ່ສາມາດປະເມີນສູງ

ຈົນເກີນໄປ. ດັ່ງນັ້ນ ຄວາມພະຍາຍາມຂອງເຮົາເອງໃນການຊໍາລະຈິດໃຈໃຫ້ບໍລິສຸດ ຈຶ່ງມີຄວາມສໍາຄັນເພີ່ມຂຶ້ນໃນເລື່ອງນີ້. "ລັດທິວັດຖຸນິຍົມ", "ການຍຶດຕິດຢູ່ກັບສິ່ງຕ່າງໆທາງໂລກທີ່ ປິດບັງຈິດວິນຍານຂອງມະນຸດ", "ຄວາມຢ້ານກົວ ແລະ ຄວາມກັງວົນທີ່ເຮັດໃຫ້ຄວາມຄິດຂອງມະນຸດວອກແວກ", "ຄວາມເພິ່ງພໍໃຈ ແລະ ຄວາມສໍາມະເລເທເມົາບັນຈຸໃສ່ເວລາຂອງພວກເຂົາ; ຄວາມອັກຄະຕິ ແລະ ຄວາມເປັນປໍລະປັກ ທີ່ເຮັດໃຫ້ທັດສະນະຄະຕິຂອງພວກເຂົາມືດມົນ, ຄວາມບໍ່ແຍແສ ແລະ ຄວາມກຽດຄ້ານທີ່ເຮັດໃຫ້ຄວາມສາມາດທາງຈິດວິນຍານຂອງເຂົາເປັນອໍາມະພາດ." "ສິ່ງເລົ່ານີ້ເປັນອຸປະສັກອັນໜ້າເກງຂາມເຊິ່ງທ່ານສາສະນະພິບານກ່າວວ່າ ເປັນອຸປະສັກທີ່ຂັດຂວາງຢູ່ໃນວິຖີ ຂອງຜູ້ທີ່ປະສົງຈະເປັນນັກຮົບໃນການຮັບໃຊ້ຕໍ່ ພຣະບາຮາອຸລລາຫ໌. ຍິ່ງໄປກວ່ານັ້ນ ພຣະອົງຍັງເຕືອນເຮົາອີກວ່າ ຄວາມສາມາດຂອງເຮົາ ໃນການກໍາຈັດອຸປະສັກເລົ່ານີ້ ຈະຂຶ້ນຢູ່ກັບລະດັບທີ່ເຮົາເອງໄດ້ຮັບການສໍາລະລ້າງຈາກ "ມົນທິນເລົ່ານີ້," ແລະ ໄດ້ຮັບການປົດປ່ອຍຈາກ "ສິ່ງຄອບງໍາເລັກໆນ້ອຍໆ ແລະ ຄວາມກັງວົນທີ່ຄອຍກັດກິນ", ເປັນອິດສະລະຈາກ "ອັກຄະຕິ ແລະ ຄວາມເປັນສັດຕູກັນ", "ວ່າງເປົ່າໄຮ້ອັດຕາ", ແລະ "ເຕັມໄປດ້ວຍພະລັງອໍານາດທີ່ໃຫ້ການຮັກສາ ແລະ ການຄໍ້າຈຸນຂອງພຣະຜູ້ເປັນເຈົ້າ".

ແມ່ນຫຍັງແດ່ທີ່ເປັນຄວາມໝາຍເຊື່ອງຊ້ອນ ຂອງຄໍາແນະນໍາເບື້ອງຕົ້ນຂອງທ່ານ ສາສະນະພິບານ ສໍາລັບການຮັບໃຊ້ທີ່ເຈົ້າຈະມອບໃຫ້ ໃນການມີສ່ວນສະໜັບສະໜູນຕໍ່ການເພີ່ມຄວາມສາມາດທາງຈິດວິນຍານແກ່ເຍົາວະຊົນ?

## ຕອນທີ 22

ໃນຖານະທີ່ເປັນເພື່ອນແທ້ຂອງເຍົາວະຊົນ ແລະ ເປັນຜູ້ທີ່ໃຫ້ຄໍາປຶກສາທີ່ຮອບຮູ້ແກ່ພວກເຂົາ, ມັນຈະເປັນສິ່ງສໍາຄັນສໍາລັບເຈົ້າ ທີ່ຈະຮ່ວມເດີນຍ່າງຄຽງບ່າຄຽງໄລ່ໄປກັບພວກເຂົາ ທັງໃນເວລາແຫ່ງຄວາມສຸກ ແລະ ໃນເວລາທີ່ປະສົບບັນຫາ. ພວກເຂົາຈະຍິ່ງຕ້ອງການໆໃຫ້ກໍາລັງໃຈ ເພື່ອໄຕ່ຂຶ້ນໄປສູ່ລະດັບສູງແລະສູງຂຶ້ນເລື້ອຍໆຂອງຄວາມດີເລີດ. ໃນຂອບເຂດທີ່ເຈົ້າຕ້ອງເນັ້ນໄປທີ່ຄວາມສໍາເລັດຂອງພວກເຂົາ, ຫຼາຍກວ່າຂໍ້ບົກຜ່ອງແລະຄວາມຜິດພາດ, ເຈົ້າຈຶ່ງຈະສາມາດຊ່ວຍພວກເຂົາໄດ້. ແນ່ນອນວ່າ ເຈົ້າຈະໃຫ້ກໍາລັງໃຈແຕ່ບໍ່ແມ່ນໃນລັກສະນະທີ່ສົ່ງເສີມອັດຕາ. ເຈົ້າຈະເນັ້ນໄປທີ່ຄວາມສໍາເລັດ,

ແຕ່ກໍບໍ່ໃຫ້ຢ້ານກົວທີ່ຈະໃຫ້ຄຳແນະນຳ ຫາກເຈົ້າພົບວ່າພວກເຂົາຢູ່ໃນສະຖານະການ ທີ່ອາດຈະກະທົບຕໍ່ຄວາມຊື່ສັດສຸດຈະລິດຂອງພວກເຂົາ.

ໃຫ້ຄິດກ່ຽວກັບລັກສະນະຂອງມິດຕະພາບຂອງເຈົ້າກັບກຸ່ມ, ຂໍໃຫ້ອ່ານຂໍ້ຄວາມທີ່ຄັດມາຈາກຈົດໝາຍທີ່ຂຽນໃນນາມຂອງ ທ່ານສາສະນະພິບານ. ແມ່ນວ່າຈະອະທິບາຍຄວາມສຳພັນຂອງສະຖາບັນຂອງຄວາມສັດທາກັບບຸກຄົນ, ມັນກ່ຽວຂ້ອງກັບຄວາມພະຍາຍາມຂອງເຈົ້າ ໃນຖານະຜູ້ຊຸກຍູ້ກຸ່ມເຍົາວະຊົນ:

**"ໃນສ່ວນຫຼາຍທີ່ສຸດຂອງບັນດາສາສະນິກະຊົນ, ຍັງເປັນຄົນໜຸ່ມໃນສາສະໜາ, ແລະ ຖ້າຫາກວ່າພວກເຂົາກະທຳຄວາມຜິດພາດຕ່າງໆ ທີ່ບໍ່ໄດ້ເຄິ່ງໜຶ່ງທີ່ສຳຄັນຈົນຈິດວິນຍານຂອງພວກເຂົາຖືກທຳລາຍ ໂດຍການໄດ້ຟັງຕະຫຼອດເວລາວ່າ - ໃຫ້ກະທຳສິ່ງນີ້ ແລະ ບໍ່ໃຫ້ກະທຳສິ່ງນັ້ນ!"** [34]

ໃຫ້ປຶກສາຫາລືວ່າເພາະເຫດໃດ ຈິດວິນຍານຂອງຄົນລຸ້ນເຍົາຈຶ່ງສາມາດຖືກທຳລາຍລົງ ເພາະຖືກເຕືອນຊ້ຳແລ້ວຊ້ຳອີກ ເຖິງຄວາມຜິດພາດຂອງຕົນເອງ ແລະ ຖືກບອກຢູ່ຕະຫຼອດເວລາ ວ່າສິ່ງນີ້ຄວນກະທຳ ແລະ ບໍ່ຄວນກະທຳ. ຂໍໃຫ້ຂຽນຄວາມຄິດເຫັນບາງຢ່າງຂອງເຈົ້າລົງໃສ່ບ່ອນນີ້.

________________________________________
________________________________________
________________________________________
________________________________________
________________________________________
________________________________________
________________________________________

ການໃຫ້ກຳລັງໃຈບໍ່ຄືກັບການຊົມເຊີຍໂດຍບໍ່ແຍກແຍະ, ການໃຫ້ກຳລັງໃຈຕ້ອງມີຄວາມຈິງໃຈ ແລະ ບໍ່ເປັນການໜ້າຫວ້າຍຫຼັງຫຼອກ, ບໍ່ດັ່ງນັ້ນ ມັນຈະນຳໄປສູ່ຄວາມຂຸ່ນເຄືອງໃຈ ແລະ ການຂາດຄວາມໄວ້ວາງໃຈ. ຂ້າງລຸ່ມນີ້ເປັນຕົວຢ່າງບາງວິທີຂອງ ພຣະອັບດຸລບາຮາ ທີ່ໃຫ້ກຳລັງໃຈແກ່ສາສະນິກະຊົນ.

**"ແທ້ຈິງແລ້ວ ຂ້າພະອົງຂອບພຣະໄທພຣະຜູ້ເປັນເຈົ້າ ທີ່ຊົງຊ່ວຍເຫຼືອເຈົ້າໃຫ້ຮັບໃຊ້ຈຸດປະສົງອັນສັກສິດຂອງພຣະອົງ ໃນສວນອາງຸ່ນອັນຍິ່ງໃຫຍ່ຂອງພຣະອົງ."** [35]

"ແທ້ຈິງແລ້ວ ຂ້າພະອົງສັນລະເສີນພຣະຜູ້ເປັນນາຍສູງສຸດຂອງຂ້າພະອົງ ທີ່ຊົງເລືອກເຈົ້າໃຫ້ເປັ່ງສຽງຮ້ອງຮຽກ ໃນພຣະນາມຂອງພຣະອົງໃນທ່າມກາງໝູ່ປະຊາຊົນ, ທີ່ຊົງດຶງດູດເຈົ້າມາສູ່ຄວາມງາມຂອງຄວາມຮຸ່ງເຮືອງທັງປວງ ແລະ ສົ່ງເສີມຄວາມແຂງແຮງແກ່ເຈົ້າໃນການເຮັດໃຫ້ຈຸດປະສົງອັນສັກສິດຂອງພຣະອົງປະສົບຄວາມສຳເລັດ." [36]

"ແທ້ຈິງແລ້ວ ພຣະຜູ້ເປັນເຈົ້າຊົງສຳລະບາບຂອງເຈົ້າ ເມື່ອພຣະອົງຊົງເຮັດໃຫ້ເຈົ້າຈົມລົງໄປໃນທະເລແຫ່ງຄວາມປານີຂອງພຣະອົງ ແລະ ເຮັດໃຫ້ເຈົ້າດື່ມຈາກຖ້ວຍແຫ່ງຄວາມ ສັດທາ ແລະ ດື່ມນ້ຳອາງຸ່ນແຫ່ງຄວາມຮັບຮູ້. ດີຫຼາຍ! ດີຫຼາຍ! ເຈົ້າປາດຖະໜາທີ່ຈະຍອມຈຳນົນຄວາມປາດຖະໜາຂອງເຈົ້າຕໍ່ພຣະປະສົງຂອງພຣະຜູ້ເປັນເຈົ້າ ແລະ ປາດຖະໜາທີ່ຈະເພີ່ມພູນຄວາມຮັກທີ່ມີຕໍ່ພຣະຜູ້ເປັນເຈົ້າ, ຂະຫຍາຍຄວາມຮູ້ກ່ຽວກັບພຣະອົງໃຫ້ກວ້າງອອກ, ແລະ ຍັງຄົງແນ່ວແນ່ໃນວິຖີທາງຂອງພຣະອົງ." [37]

"ໂອ ຜູ້ເປັນທີ່ຮັກຍິ່ງທາງຈິດວິນຍານຂອງຂ້າພະອົງ! ຂໍຄວາມສັນລະເສີນຈົ່ງມີແດ່ພຣະຜູ້ເປັນເຈົ້າ, ເຈົ້າໄດ້ຈີກຜ້າມ້ານກັ້ງທັງຫຼາຍອອກໄປ ແລະ ໄດ້ຍອມຮັບພຣະຜູ້ເປັນທີ່ຮັກຜູ້ຊົງກະລຸນາ ແລະ ໄດ້ຮີບຮ້ອນໄປຈາກທີ່ອາໄສນີ້ ເພື່ອໄປສູ່ອານາຈັກອັນໄຮ້ສະຖານ. ເຈົ້າໄດ້ປັກເຕັ້ນໃນພົບຂອງພຣະຜູ້ເປັນເຈົ້າ ແລະ ສັນລະເສີນພຣະອົງ, ພຣະຜູ້ຊົງດຳລົງຢູ່ດ້ວຍພຣະອົງເອງ, ເຈົ້າໄດ້ເປັ່ງສຽງອັນມ່ວນ ແລະ ຮ້ອງເພັງທີ່ທະລຸທະລ່ວງຫົວໃຈ. ດີຫຼາຍ! ດີເປັນພັນໆເທົ່າ! ເພາະເຈົ້າໄດ້ເຫັນພຣະຜູ້ເປັນແສງສະຫວ່າງທີ່ປາກົດຂຶ້ນ, ແລະ ໃນຮ່າງທີ່ເກີດໃໝ່ຂອງເຈົ້ານັ້ນເຈົ້າໄດ້ເປັ່ງສຽງຮ້ອງຂຶ້ນວ່າ 'ຂໍພຣະພອນຈົ່ງມີແດ່ພຣະຜູ້ເປັນນາຍ, ພຣະຜູ້ຊົງສ້າງສັນທີ່ດີທີ່ສຸດ!'" [38]

"ໂອ ເຈົ້າຜູ້ມີຄວາມຈິງໃຈ, ເຈົ້າຜູ້ມີຄວາມປາດຖະໜາ, ເຈົ້າຜູ້ເຂົ້າມາດັ່ງຖືກແມ່ເຫຼັກດຶງດູດ, ເຈົ້າຜູ້ໄດ້ລຸກຂຶ້ນຮັບໃຊ້ສາສະໜາຂອງພຣະຜູ້ເປັນເຈົ້າ ເພື່ອເຊີດຊູພຣະວັດຈະນະຂອງພຣະອົງ ແລະ ແຜ່ກະຈາຍສຸຄົນທະລົດໄປກວ້າງໄກ! ຂ້າພະອົງໄດ້ອ່ານຈົດໝາຍອັນດີເລີດຂອງເຈົ້າ, ທີ່ລຽບລຽງຢ່າງສວຍງາມ, ມີຂໍ້ຄວາມຈັບໃຈມີຄວາມໝາຍເລິກເຊິ່ງ ແລະ ຂ້າພະອົງສັນລະເສີນພຣະຜູ້ເປັນເຈົ້າ ແລະ ຂອບໃຈພຣະອົງທີ່ຊົງໃຫ້ການຊ່ວຍເຫຼືອເຈົ້າ ແລະ ຊ່ວຍໃຫ້ເຈົ້າສາມາດຮັບໃຊ້ພຣະອົງໃນໄຮ່ອາງຸ່ນອັນກວ້າງຂວາງຂອງພຣະອົງ." [39]

"ຈົດໝາຍຂອງເຈົ້າເປັນເໝືອນຊໍ່ດອກໄມ້ ທີ່ສົ່ງກິ່ນຫອມແຫ່ງຄວາມສັດທາ ແລະ ຄວາມໝັ້ນໃຈໄປໄກ. ດີຫຼາຍ! ດີຫຼາຍ! ເຈົ້າໄດ້ຫັນໜ້າຂອງເຈົ້າໄປຍັງອານາຈັກທີ່ເບິ່ງບໍ່ເຫັນ. ດີເລີດ! ດີເລີດ! ເຈົ້າໄດ້ຖືກດຶງດູດດ້ວຍຄວາມງາມຂອງພຣະຜູ້ຊົງອານຸພາບ! ມະຫັດສະຈັນ! ມະຫັດສະຈັນ! ໂຊກດີເຫຼືອເກີນທີ່ໄດ້ບັນລຸສູ່ຄວາມໂປດປານອັນສູງສຸດນີ້!" [40]

ໂດຍໄດ້ຮັບແຮງບັນດານໃຈຈາກລັກສະນະທີ່ ພຣະອັບດຸລບາຮາ ສັນລະເສີນເພື່ອນສາສະນິກະຊົນ, ຂໍໃຫ້ອະທິບາຍສອງສາມປະໂຫຍກ ເຖິງວິທີການທີ່ເຈົ້າຈະໃຫ້ກຳລັງໃຈແກ່ສະມາຊິກໃນກຸ່ມເຍົາວະຊົນ ທີ່ເຈົ້າກຳລັງຈະຊ່ວຍເຫຼືອໃນມໍ່ໆນີ້.

## ຕອນທີ 23

ສຸດທ້າຍນີ້, ເຈົ້າຈຳເປັນຕ້ອງຈື່ຈຳໄວ້ວ່າ ຄວາມສຳເລັດຂອງເຈົ້າໃນການສ້າງສຳພັນອັນແນ້ນແຟ້ນຂອງມິດຕະພາບ ທີ່ເຕັມໄປດ້ວຍຄວາມຮັກກັບກຸ່ມເຍົາວະຊົນ ແລະ ສະໜັບສະໜູນໃຫ້ພວກເຂົາບຸກບືນສູ່ຄວາມເປັນເລີດ ຈະເກີດຜົນເທົ່າທີ່ເຈົ້າສ້າງສະພາບແວດລ້ອມແຫ່ງຄວາມສຸກຫັນສາ.

> **"ຄວາມສຸກຫັນສາມອບປີກໃຫ້ແກ່ເຮົາ! ໃນຊ່ວງເວລາແຫ່ງຄວາມສຸກຫັນສາ ຄວາມເຂັ້ມແຂງຂອງພວກເຮົາກໍ່ສຳຄັນຍິ່ງຂຶ້ນ, ຄວາມສະຫຼາດຂອງເຮົາກໍ່ຫຼັກແຫຼມຂຶ້ນ, ແລະ ຄວາມເຂົ້າໃຈຂອງເຮົາກໍ່ກະຈ່າງແຈ້ງ. ພວກເຮົາເບິ່ງຄືວ່າຈະສາມາດຈັດການກັບໂລກ ແລະ ສາມາດຄົ້ນພົບຄວາມສາມາດທີ່ເປັນປະໂຫຍດຂອງພວກເຮົາ."** [41]

ສ້າງສະພາບແວດລ້ອມແຫ່ງຄວາມສຸກຫັນສາໃຫ້ແກ່ກຸ່ມ, ເຈົ້າຈຳເປັນຕ້ອງຮູ້ສຶກສຸກຫັນສາ. ຂໍໃຫ້ນຶກເຖິງເຍົາວະຊົນບາງຄົນທີ່ເຈົ້າຮູ້ຈັກ ເຊິ່ງເປັນເຍົາວະຊົນຈະຢູ່ໃນກຸ່ມທີ່ເຈົ້າຕັ້ງຂຶ້ນເພື່ອເຮັດກິດຈະກຳນຳໃນມໍ່ໆນີ້. ຄວາມຄິດອັນໃດແດ່ກ່ຽວກັບພວກເຂົາ ທີ່ເຂົ້າມາໃນໃຈຂອງເຈົ້າແລ້ວເຮັດໃຫ້ເຈົ້າມີຄວາມສຸກຫັນສາ?

ມີມາດຕະການໃດແດ່ທີ່ເຈົ້າຈະເຮັດໄດ້ໃນທາງປະຕິບັດ ເພື່ອສ້າງບັນຍາກາດການພົບປະກັນຂອງກຸ່ມໃຫ້ມີຄວາມສຸກຫັນສາ, ໂດຍບໍ່ເຮັດໃຫ້ພວກເຂົາອໍ້ແອ້ບໍ່ເອົາຈິງເອົາຈັງ?

ດ້ວຍຄວາມຄິດເລົ່ານີ້ຢູ່ໃນໃຈ, ຂໍໃຫ້ອ່ານຂໍ້ຄວາມຂ້າງລຸ່ມນີ້ ຈາກຈົດໝາຍທີ່ຂຽນໃນນາມຂອງສະພາຍຸຕິທັມແຫ່ງສາກົນ:

**"ຄວາມສຸກຫັນສາພາຍໃນທີ່ທຸກຄົນສະແຫວງຫາ, ບໍ່ຄືກັນກັບອາລົມທີ່ຜ່ານໄປ, ບໍ່ຂຶ້ນກັບອິດທິພົນພາຍນອກ; ມັນເປັນສະພາວະອັນເກີດຈາກຄວາມແນ່ນອນ ແລະ ຄວາມຮູ້ຢ່າງມີສະຕິ, ລໍ່ລ້ຽງດ້ວຍຫົວໃຈທີ່ບໍລິສຸດ, ເຊິ່ງສາມາດແຍກຄວາມແຕກຕ່າງລະຫວ່າງສິ່ງທີ່ຖາວອນ ກັບສິ່ງທີ່ຜິວເຜີນໄດ້."** [42]

ຂໍໃຫ້ພວກເຮົາຍຸດຕິການສຶກສາຂອງພາກນີ້ ດ້ວຍການທົບທວນຖ້ອຍຄຳຂອງ ພຣະອັບດຸລບາຮາຕໍ່ໄປນີ້:

**"ຂອງຂວັນທີ່ຍິ່ງໃຫຍ່ທີ່ສຸດຂອງມະນຸດ ຄືຄວາມຮັກອັນເປັນສາກົນ - ຄືແມ່ເຫຼັກທີ່ເຮັດໃຫ້ການດຳລົງຢູ່ເປັນນິລັນດອນ. ມັນດຶງດູດຄວາມເປັນຈິງ ແລະ ກະຈາຍຊີວິດດ້ວຍຄວາມຍິນດີອັນບໍ່ຮູ້ສິ້ນ. ຫາກຄວາມຮັກນີ້ແຊກຊຶມເຂົ້າໄປໃນຫົວໃຈຂອງມະນຸດ, ພະລັງທັງໝົດຂອງຈັກກະວານກໍ່ຈະເປັນຈິງໃນຕົວເຂົາ, ດ້ວຍເຫດທີ່ວ່າມັນເປັນພະລັງອັນສັກສິດ ທີ່ນຳພາພວກເຂົາໄປສູ່ສະຖານະອັນສັກສິດ ແລະ ເຂົາຈະບໍ່ກ້າວໜ້າຈົນກວ່າເຂົາຈະສ່ອງສະຫວ່າງ. ບຸກບືນທີ່ຈະເພີ່ມພະລັງຄວາມຮັກໃນຄວາມເປັນຈິງ, ເພື່ອເຮັດໃຫ້ຫົວໃຈຂອງເຈົ້າເປັນສູນກາງຂອງແຮງດຶງດູດຫຼາຍຂຶ້ນ ແລະ ເພື່ອສ້າງອຸດົມຄະຕິແລະຄວາມສຳພັນໃໝ່ໆ."** [43]

# ເອກະສານອ້າງອີງ


1. From the Riḍván 2010 message written to the Bahá'ís of the world, published in *Framework for Action: Selected Messages of the Universal House of Justice and Supplementary Material, 2006–2016* (West Palm Beach: Palabra Publications, 2017), no. 14.16, p. 82.
2. From a talk given on 17 November 1912, published in *The Promulgation of Universal Peace: Talks Delivered by 'Abdu'l-Bahá during His Visit to the United States and Canada in 1912* (Wilmette: Bahá'í Publishing, 2012), par. 3, p. 617.
3. *Selections from the Writings of 'Abdu'l-Bahá* (Wilmette: Bahá'í Publishing, 2010, 2015 printing), no. 111.7, p. 192.
4. *Abdul Baha on Divine Philosophy* (Boston: The Tudor Press, 1918), pp. 131–32.
5. *Gleanings from the Writings of Bahá'u'lláh* (Wilmette: Bahá'í Publishing Trust, 1983, 2017 printing), CLIII, par. 6, p. 370.
6. Ibid., I, par. 5, p. 3.
7. *Tablets of Bahá'u'lláh Revealed after the Kitáb-i-Aqdas* (Wilmette: Bahá'í Publishing Trust, 1988, 2005 printing), no. 4.7, pp. 34–35.
8. Bahá'u'lláh, *The Hidden Words* (Wilmette: Bahá'í Publishing Trust, 2003, 2012 printing), Arabic no. 13, pp. 6–7.
9. *Selections from the Writings of 'Abdu'l-Bahá*, no. 34.2, p. 100.
10. Ibid., no. 35.7, p. 104.
11. *Tablets of Abdul-Baha Abbas* (New York: Bahá'í Publishing Committee, 1909, 1930 printing), vol. 1, p. 136. (authorized translation)
12. 'Abdu'l-Bahá, *The Secret of Divine Civilization* (Wilmette: Bahá'í Publishing, 2007, 2017 printing), par. 186, p. 136.
13. *Selections from the Writings of 'Abdu'l-Bahá*, no. 68.3, pp. 147–48.
14. Ibid., no. 155.4, p. 253.
15. From a talk given by 'Abdu'l-Bahá on 26 May 1912, published in *The Promulgation of Universal Peace*, par. 3, p. 205.
16. From a talk given by 'Abdu'l-Bahá on 11 June 1912, ibid., par. 4, p. 258.
17. 'Abdu'l-Bahá, in *Bahai Scriptures: Selections from the Utterances of Baha'u'llah and Abdul Baha* (New York: Bahá'í Publishing Committee, 1928), no. 992, p. 548.
18. From a talk given by 'Abdu'l-Bahá on 11 June 1912, published in *The Promulgation of Universal Peace*, par. 6, p. 261.
19. *The Call of the Divine Beloved: Selected Mystical Works of Bahá'u'lláh* (Haifa: Bahá'í World Centre, 2018), no. 2.22, p. 21.
20. From a talk given on 28 October 1911, published in *Paris Talks: Addresses Given by 'Abdu'l-Bahá in 1911* (Wilmette: Bahá'í Publishing, 2006, 2016 printing), no. 15.12, p. 53.
21. *Selections from the Writings of 'Abdu'l-Bahá*, no. 36.5, p. 111.
22. *The Call of the Divine Beloved*, no. 2.19, p. 19.
23. *Selections from the Writings of 'Abdu'l-Bahá*, no. 195.5, p. 327.
24. Bahá'u'lláh, in *The Kitáb-i-Aqdas: The Most Holy Book* (Wilmette: Bahá'í Publishing Trust, 1993, 2013 printing), par. 64, pp. 42–43.
25. *Selections from the Writings of 'Abdu'l-Bahá*, no. 223.1, pp. 388–89.
26. Ibid., no. 35.4, p. 102.
27. Ibid., no. 206.9, p. 354.
28. *Prayers and Meditations by Bahá'u'lláh* (Wilmette: Bahá'í Publishing Trust, 1987, 2008 printing), XXXVI, par. 4, p. 47.
29. Ibid., CLXXXIV, par. 2, p. 324.
30. From a letter dated 23 November 1983 written on behalf of the Universal House of Justice to an individual, published in *Lights of Guidance: A Bahá'í Reference File* (New Delhi: Bahá'í Publishing Trust, 1988, 2010 printing), no. 1206, pp. 359–60.

31. From a letter dated 8 December 1935 written on behalf of Shoghi Effendi to an individual, published in *Prayer and Devotional Life: A Compilation of Extracts from the Writings of Bahá'u'lláh, the Báb, and 'Abdu'l-Bahá and the Letters of Shoghi Effendi and the Universal House of Justice*, compiled by the Research Department of the Universal House of Justice (Wilmette: Bahá'í Publishing, 2019), no. 71, p. 30.
32. *Selections from the Writings of 'Abdu'l-Bahá*, no. 107.1, p. 188.
33. *Abdul Baha on Divine Philosophy*, p. 112.
34. From a letter dated 30 June 1957 written on behalf of Shoghi Effendi to a National Spiritual Assembly, in "The National Spiritual Assembly", published in *The Compilation of Compilations* (Maryborough: Bahá'í Publications Australia, 1991), vol. 2, no. 1502, p. 128.
35. *Tablets of Abdul-Baha Abbas*, vol. 1, p. 11. (authorized translation)
36. Ibid., p. 18. (authorized translation)
37. *Tablets of Abdul-Baha Abbas* (New York: Bahá'í Publishing Committee, 1915, 1940 printing), vol. 2, pp. 266–67. (authorized translation)
38. *Selections from the Writings of 'Abdu'l-Bahá*, no. 236.4, p. 439.
39. Ibid., no. 199.1, pp. 332–33.
40. *Tablets of Abdul-Baha Abbas* (New York: Bahá'í Publishing Committee, 1916, 1930 printing), vol. 3, p. 530. (authorized translation)
41. From a talk given by 'Abdu'l-Bahá on 22 November 1911, published in *Paris Talks*, no. 35.2, p. 135.
42. From a letter dated 19 April 2013 written on behalf of the Universal House of Justice to a small group of individuals, published in *Framework for Action*, no. 51.7, p. 292.
43. *Abdul Baha on Divine Philosophy*, pp. 111–12.



# ການຮັບໃຊ້ເປັນຜູ້ຊຸກຍູ້ເຍົາວະຊົນ

## ຈຸດປະສົງ

ເພື່ອທົບທວນແນວຄວາມຄິດທີ່ເປັນຮູບຮ່າງ
ໂດຍການເສີມສ້າງພະລັງທາງຈິດວິນຍານຂອງເຍົາວະຊົນ

## ຕອນທີ 1

ໃນພາກທີສອງຂອງປື້ມຫົວນີ້ ພວກເຮົາໄດ້ປຶກສາຫາລືເຖິງຄວາມສຳຄັນຂອງສະພາບແວດລ້ອມທາງສັງຄົມ ຕໍ່ຊີວິດຂອງຄົນລຸ້ນເຍົາໃນໄວລຸ້ນຕອນຕົ້ນ. ດ້ວຍເຫດນີ້, ໂຄງການເສີມສ້າງພະລັງທາງຈິດວິນຍານຂອງເຍົາວະຊົນ ຈຶ່ງຖືກຈັດຂຶ້ນພາຍໃຕ້ແນວຄິດຂອງ "ກຸ່ມເຍົາວະຊົນ". ພວກເຮົາໄດ້ກ່າວໄປແລ້ວວ່າ ກຸ່ມເຍົາວະຊົນນັ້ນບໍ່ແມ່ນຊັ້ນຮຽນເດັກ. ກຸ່ມນີ້ມີລັກສະນະບາງຢ່າງທີ່ຄ້າຍກັບການຮຽນກຸ່ມນ້ອຍ, ແຕ່ໜ້າທີ່ຫຼັກຂອງກຸ່ມຄື ເຮັດໜ້າທີ່ຫຼັກທີ່ເປັນສະພາບແວດລ້ອມຂອງການສະໜັບສະໜູນເຊິ່ງກັນແລະກັນຂອງສະມາຊິກຂອງກຸ່ມ, ເຊິ່ງພວກເຂົາສາມາດພັດທະນາການຮັບຮູ້ທາງຈິດວິນຍານ ແລະພຶດຕິກຳທີ່ຈະເຮັດໃຫ້ພວກເຂົາມີລັກສະນະສະເພາະ ໄປຕະຫຼອດຊີວິດຂອງພວກເຂົາ.

ຕາມປົກກະຕິກຸ່ມເຍົາວະຊົນຈະພົບປະກັນຢ່າງໜ້ອຍອາທິດລະຄັ້ງ, ແລະ ເຂົ້າຮ່ວມຄ້າຍຫຼາຍຄັ້ງທີ່ຈັດຂຶ້ນເປັນປະຈຳທຸກປີ ຕະຫຼອດຊ່ວງໄລຍະອາຍຸສາມປີ. ຊ່ວງເວລາທີ່ສະມາຊິກໃຊ້ຮ່ວມກັນເປັນກຸ່ມຈະເນັ້ນໄປທີ່ການສຶກສາເອກະສານ ທີ່ພັດທະນາຂຶ້ນມາໂດຍສະເພາະສຳລັບຄົນທີ່ມີອາຍຸລະຫວ່າງສິບສອງຫາສິບຫ້າປີ. ນອກຈາກນີ້ຄົນລຸ້ນເຍົາຈະປຶກສາຫາລື, ວາງແຜນ, ແລະ ດຳເນີນໂຄງການຮັບໃຊ້ໃນຊຸມຊົນ, ຫຼິ້ນກິລາ, ແລະ ກິດຈະກຳຕ່າງໆທາງວັດທະນະທຳ, ເຊັ່ນ ການສະແດງລະຄອນ ແລະຫັດຖະກຳ, ທີ່ເໝາະສົມກັບສະພາບແວດລ້ອມຂອງພວກເຂົາ. ຢູ່ໃນຄ້າຍ, ເຊິ່ງໃຊ້ເວລາຫຼາຍມື້ໃນແຕ່ລະຄັ້ງ, ພວກເຂົາມີສ່ວນຮ່ວມໃນການສຶກສາແບບເຂັ້ມຂົ້ນເປັນກຸ່ມ ແລະ ມີສ່ວນຮ່ວມໃນການຫຼິ້ນລວມໝູ່ ແລະ ກິດຈະກຳຕ່າງໆຮ່ວມກັບຄົນອື່ນໆໃນກຸ່ມ ທີ່ມາຈາກລະແວກບ້ານຫຼືໝູ່ບ້ານທີ່ເຂົ້າຮ່ວມໂຄງການ. ໃນພາກນີ້ ພວກເຮົາຈະກວດສອບຫຼາກຫຼາຍແງ່ມູມຂອງ ໂຄງການເສີມສ້າງພະລັງທາງຈິດວິນຍານ ເຊິ່ງເຈົ້າຄວນທຳຄວາມຄຸ້ນເຄີຍເປັນຢ່າງດີ.

## ຕອນທີ 2

ທຳອິດຂໍໃຫ້ພວກເຮົາພິຈາລະນາການເປັນສະມາຊິກຂອງກຸ່ມ. ເມື່ອເວລາທີ່ເຍົາວະຊົນໃນຊຸມຊົນສະແດງຄວາມສົນໃຈໃນໂຄງການນີ້ແລ້ວ, ຕາມປົກກະຕິສາມາດຕັ້ງເປັນກຸ່ມໜຶ່ງ ທີ່ມີສະມາຊິກສິບຫາສິບຫ້າຄົນ. ຕາມຊ່ວງອາຍຸສ່ວນໃຫຍ່ຈະຢູ່ໃນລະຫວ່າງສິບສອງຫາສິບສາມ, ບາງຄົນອາດຈະນ້ອງກວ່າສິບສອງ ແລະ ບາງຄົນກໍອາຍຸສິບສີ່ປີ. ປະສົບການສະແດງໃຫ້ເຫັນວ່າ ໂຄງການພິສູດໄດ້ວ່າມີປະສິດທິຜົນຫຼາຍທີ່ສຸດເມື່ອສະມາຊິກ ບໍ່ວ່າຈະອາຍຸເທົ່າໃດກໍຕາມ, ຢູ່ດ້ວຍກັນຕະຫຼອດໄລຍະເວລາສາມປີ ແລະຮຽນຈົບພ້ອມກັນເປັນກຸ່ມ. ເມື່ອເຖິງຈຸດນັ້ນ ຜູ້ທີ່ປາດຖະໜາຈະຮຽນຕໍ່ກໍສາມາດກ້າວໄປສູ່ລະດັບຕໍ່ໄປຂອງຂະບວນການສຶກສາ, ໂດຍການສຶກສາລຳດັບຂອງຫຼັກສູດສະຖາບັນ ແລະ ປະຕິບັດຕາມຫົນທາງແຫ່ງການຮັບໃຊ້ທີ່ເປີດກວ້າງໃຫ້ແກ່ພວກເຂົາ.

ໃນບາງສະຖານທີທີ່ຊາວໜຸ່ມຜູ້ທີ່ເຂົ້າຮ່ວມກຸ່ມ ອາດເຄີຍໄດ້ເຂົ້າຮ່ວມຊັ້ນຮຽນເດັກນ້ອຍບາຮາຍ, ແຕ່ວ່າຄວນຈຳໄວ້ວ່າ ໃນຫຼາຍໆສະຖານະການ ຄົນລຸ້ນເຍົາທີ່ພົບກັບໂຄງການນີ້ ຈະບໍ່ເຄີຍຮູ້ຈັກຄວາມສັດທານີ້ມາກ່ອນ. ນອກຈາກຄວາມແຕກຕ່າງຂອງອາຍຸ, ກໍມັກຈະມີຄວາມແຕກຕ່າງກັນໃນດ້ານພູມຫຼັງ ແລະ ປະສົບການ. ບໍ່ມີກຸ່ມໃດທີ່ເປັນຄືກັນໝົດ, ແລະ ຜູ້ຊຸກຍູ້ເຍົາວະຊົນຕ້ອງປະເຊີນໜ້າກັບຄວາມທ້າທາຍໃນການຕອບສະໜອງ ຕໍ່ຄວາມສົນໃຈອັນຫຼາກຫຼາຍຂອງຊາວໜຸ່ມຢູ່ຕະຫຼອດເວລາ. ການແກ້ໄຂທີ່ດີແມ່ນຈຳເປັນຕ້ອງມີຄວາມໂຍະຍານ ແລະ ຄວາມຄິດສ້າງສັນ, ເພື່ອທີ່ຈະຕອບຮັບຄວາມທ້າທາຍນີ້ ແລະ ເຈົ້າຈະຕ້ອງກຽມພ້ອມໃນທຸກຄັ້ງທີ່ມີການພົບປະກັນຂອງກຸ່ມ. ຕົວຢ່າງ ເຈົ້າຈະເຮັດແນວໃດໃນສະຖານະການຕໍ່ໄປນີ້?

- ສະມາຊິກບາງຄົນຂອງກຸ່ມເຍົາວະຊົນທີ່ເຈົ້າກຳລັງໃຫ້ການຊ່ວຍເຫຼືອ ເກີດມີບັນຫາກ່ຽວກັບຄວາມເຂົ້າໃຈໃນເນື້ອຫາທີ່ພວກເຂົາອ່ານ.
- ສະມາຊິກທີ່ມີອາຍຸໜ້ອຍກວ່າໝູ່ຂອງກຸ່ມຮູ້ສຶກອັບອາຍ ໃນເວລາທີ່ເຈົ້າພະຍາຍາມເຮັດວຽກກັບເຂົາແຍກຕ່າງຫາກ.
- ສະມາຊິກທີ່ມີອາຍຸຫຼາຍກວ່າຄົນໜຶ່ງຫຼືສອງຄົນ ບໍ່ຮູ້ສຶກວ່າກິດຈະກຳສະເພາະຕ່າງໆຂອງກຸ່ມມີຄວາມທ້າທາຍພຽງພໍ.
- ສະມາຊິກບາງຄົນບໍ່ຍອມເຂົ້າຮ່ວມກິດຈະກຳບາງຢ່າງ.
- ສະມາຊິກສອງສາມຄົນຂອງກຸ່ມ ສະແດງຄວາມສາມາດທີ່ຈະຮຽນຮູ້ຕາມເອກະສານໄດ້ໄວກວ່າຄົນອື່ນໆ.
- ເດັກຍິງ ແລະ ເດັກຊາຍລັງເລໃຈທີ່ຈະເຂົ້າຮ່ວມກິດຈະກຳບາງຢ່າງນຳກັນ.
- ສະມາຊິກຫຼາຍຄົນບໍ່ມີເງິນພຽງພໍທີ່ຈະບໍລິຈາກ, ເພື່ອອອກໄປທັດສະນະສຶກສານຳກັນເປັນກຸ່ມ.
- ສະມາຊິກໜຶ່ງຫຼືສອງຄົນບໍ່ໄດ້ມາເຂົ້າຮ່ວມຮຽນຢ່າງສະໝ່ຳສະເໝີ.
- ສະມາຊິກຄົນໜຶ່ງເລົ່າເລື່ອງຕະຫຼົກແບບບໍ່ເໝາະສົມໃນລະຫວ່າງການພົບປະກັນ.
- ສະມາຊິກສອງສາມຄົນຂອງກຸ່ມ ພານ້ອງທີ່ມີອາຍຸໜ້ອຍກວ່າມາຮ່ວມໃນການພົບປະ.
- ສະມາຊິກໜຶ່ງຫຼືສອງຄົນບໍ່ເຂົ້າຮ່ວມໃນການປຶກສາຫາລືຂອງກຸ່ມ.

ຂໍໃຫ້ສົນທະນາໃນກຸ່ມຂອງເຈົ້າກ່ຽວກັບສະຖານະການເລົ່ານີ້ ແລະ ສະຖານະການທີ່ຄ້າຍຄືກັນ. ແນ່ນອນວ່າ ເມື່ອເຈົ້າໄດ້ຮັບປະສົບການໃນດ້ານການຮັບໃຊ້ນີ້, ເຈົ້າຈະໄດ້ສະຫຼວດຄວາມທ້າທາຍດັ່ງກ່າວຄັ້ງແລ້ວຄັ້ງເລົ່າໃນການປະຊຸມປະຈຳວົງຮອບ ຮ່ວມກັບຜູ້ຊຸກຍູ້ເຍົາວະຊົນຄົນອື່ນໆ ແລະ ຈະໄດ້ຮັບຄວາມຢັ່ງຮູ້ໃໝ່ໆ.

## ຕອນທີ 3

ປື້ມຕ່າງໆທີ່ຈະສຶກສາເປັນຫົວໃຈຫຼັກຂອງໂຄງການ - ປື້ມບາງຫົວເຈົ້າອາດຈະເຄີຍອ່ານແລ້ວ, ຕາມຄຳແນະນຳໃນເຫຼັ້ມ 2 - ເຊິ່ງໄດ້ຈັດລຽງຕາມລຳດັບຂອງຄວາມຍາກ, ລວມທັງໃນດ້ານຂອງພາສາ ແລະ ດ້ານແນວຄວາມຄິດທີ່ໄດ້ສຳຫຼວດ. ປື້ມເລົ່ານັ້ນໄດ້ຖືກແບ່ງອອກເປັນສອງປະເພດ. ປະເພດທຳອິດກ່າວເຖິງຫົວຂໍ້ຈາກມຸມມອງຂອງບາຮາຍ, ແຕ່ວ່າບໍ່ແມ່ນຮູບແບບການສອນສາສະໜາ. ເຊິ່ງເອີ້ນປະເພດປື້ມນີ້ວ່າ “ໄດ້ຮັບແຮງບັນດານໃຈຈາກບາຮາຍ”. ເຊິ່ງເປັນອົງປະກອບສຳຄັນຂອງໂຄງການ. ສ່ວນອີກປະເພດໜຶ່ງແມ່ນມີປື້ມຈຳນວນໜ້ອຍ ທີ່ໃຫ້ເນື້ອຫາອົງປະກອບຂອງບາຮາຍຢ່າງຊັດເຈນ. ພວກເຮົາຈະກວດສອບອົງປະກອບເລົ່ານັ້ນໃນຕອນຕໍ່ໄປ ແລະ ຕອນນີ້ຈະເອົາໃຈໃສ່ລັກສະນະຂອງປື້ມທີ່ໄດ້ຮັບແຮງບັນດານໃຈຈາກບາຮາຍ.

ໂດຍທົ່ວໄປ ເອກະສານການສຶກສາປະເພດນີ້ຖືກສ້າງຂຶ້ນດ້ວຍຄວາມເຊື່ອໝັ້ນວ່າ, ໃນມະຫາສະໝຸດແຫ່ງການເປີດເຜີຍຂອງ ພຣະບາຮາອຸລລາຫ໌, ມີໄຂ່ມຸກແຫ່ງຄວາມຮອບຮູ້ນັບບໍ່ຖ້ວຍ ທີ່ຄວນມອບໃຫ້ບຸກຄົນຜູ້ທີ່ສົນໃຈ, ແມ່ນວ່າພວກເຂົາຈະຍັງບໍ່ຕະໜັກເຖິງສະຖານະຂອງພຣະອົງກໍ່ຕາມ. ເຈົ້າຄຸ້ນເຄີຍກັບແນວຄິດນີ້ຢູ່ແລ້ວ, ເນື່ອງຈາກວ່າໃນພາກທີສອງຂອງປື້ມເຫຼັ້ມ 2 “ການຍົກລະດັບການສົນທະນາ”, ເຈົ້າໄດ້ຮຽນຂໍ້ຄວາມທີ່ມີພື້ນຖານຈາກຄຳກ່າວ ແລະ ທັມມະຈາລຶກຂອງ ພຣະອັບດຸລບາຮາ ເພື່ອພັດທະນາຄວາມສາມາດ ໃນການລວບລວມຄວາມຮູ້ທາງຈິດວິນຍານ ແລະ ຄວາມຢັ່ງຮູ້ທີ່ໄດ້ຮັບເຂົ້າໃສ່ໃນການສົນທະນາປະຈຳວັນຂອງເຈົ້າ.

ດັ່ງທີ່ເຈົ້າຮູ້ຈາກປະສົບການຂອງເຈົ້າເອງ, ໃນການປຶກສາກັບຜູ້ອື່ນກ່ຽວກັບຫົວຂໍ້ທີ່ໄດ້ສຳຫຼວດໃນພາກນີ້, ໃນບາງຄັ້ງເຈົ້າອາດເວົ້າເຖິງ ແຫຼ່ງທີ່ມາຂອງແຮງບັນດານໃຈຂອງເຈົ້າຢ່າງເປັນທັມມະຊາດ, ແຕ່ໃນບາງຄັ້ງເຈົ້າອາດຄິດວ່າເປັນການດີທີ່ສຸດທີ່ຈະບໍ່ເວົ້າເຖິງ - ແມ່ນຂຶ້ນກັບຄວາມຕ້ອງການຂອງແຕ່ລະສະຖານະການ. ຫຼັກການດຽວກັນນີ້ປະຍຸກໃຊ້ໃນກໍລະນີຂອງ ເອກະສານທີ່ໄດ້ຮັບແຮງບັນດານໃຈຈາກບາຮາຍ. ຈົດໝາຍທີ່ຂຽນໃນນາມສະພາຍຸຕິທັມແຫ່ງສາກົນ ກ່ຽວກັບເລື່ອງນີ້ບັນທຶກໄວ້ວ່າ:

**"ຫຼັກການພື້ນຖານປະການໜຶ່ງທີ່ຄວບຄຸມການພັດທະນາສັງຄົມ ແລະ ເສດຖະກິດຂອງບາຮາຍຄື ມິດສະຫາຍຄວນມອບຄຳສອນຂອງ ພຣະບາຮາອຸລລາຫ໌ຢ່າງເປັນອິດສະຫຼະ ແລະ ໄຮ້ເງື່ອນໄຂແກ່ມະນຸດຊາດ ເພື່ອໃຫ້ຜູ້ຄົນທຸກແຫ່ງຫົນສາມາດນຳຄຳສອນສິ່ງເລົ່ານີ້ໄປໃຊ້ກັບບັນຫາທາງສັງຄົມທີ່ຮີບດ່ວນ ແລະ ປັບປຸງຊີວິດສ່ວນບຸກຄົນ ແລະ ຊີວິດສ່ວນລວມຂອງພວກເຂົາ, ທັງໃນອົງປະກອບດ້ານວັດຖຸ ແລະ ຈິດວິນຍານ. ການເຂົ້າສູ່ພຣະວັດຈະນະຂອງພຣະຜູ້ເປັນເຈົ້າ ບໍ່ຄວນມີເງື່ອນໄຂເມື່ອຍອມຮັບວ່າ ພຣະບາຮາອຸລລາຫ໌ ເປັນພຣະສາສະດາຂອງພຣະຜູ້ເປັນເຈົ້າໃນປັດຈຸບັນ. ຍິ່ງໄປກວ່ານັ້ນ, ຄົງບໍ່ເໝາະສົມທີ່ຈະບໍ່ເອີຍເຖິງແຫ່ງທີ່ມາຂອງແຮງບັນດານໃຈ ອັນເປັນຮາກຖານຂອງໂຄງການສຶກສາ ທີ່ພັດທະນາບົນພື້ນຖານຄຳສອນຂອງພຣະອົງ, ເມື່ອສະຖານະການມີຄວາມຕ້ອງການ. ໃນແງ່ມຸມນີ້, ມີຕົວເລືອກຫຼວງຫຼາຍທີ່ເພື່ອນໆສາມາດພິຈາລະນາໄດ້ ເມື່ອມີການສ້າງເອກະສານການສຶກສາ ເຊິ່ງນຳໃຊ້ຄຳສອນ ແລະ ລະບຽບຫຼັກການຂອງຄວາມສັດທາ."** [1]

ແລະ ຈົດໝາຍສະບັບອື່ນທີ່ຂຽນຕາງໜ້າໂດຍ ສະພາຍຸຕິທັມແຫ່ງສາກົນ ກ່າວວ່າ:

**"ພວກເຮົາໄດ້ຖືກຮ້ອງຂໍໃຫ້ແຈ້ງເຈົ້າວ່າ ບໍ່ມີຂໍ້ກຳໜົດທີ່ຈະຕ້ອງອ້າງອີງເຖິງນັກຂຽນ ເມື່ອໃຊ້ພຣະວັດຈະນະຈາກທັມມະລິຂິດບາຮາຍ ໃນເນື້ອຫາເອກະສານທີ່ໄດ້ຮັບແຮງບັນດານໃຈຈາກບາຮາຍ ຖ້າຫາກປາກົດວ່າຈະມີຄວາມຮອບຮູ້ເມື່ອບໍ່ອ້າງອີງເຖິງນັກຂຽນ."**

ດັ່ງນັ້ນ ນະທີ່ເອກະສານທັງໝົດທີ່ໄດ້ຮັບແຮງບັນດານໃຈຈາກບາຮາຍ ໄດ້ຮັບການພັດທະນາພາຍໃຕ້ອິດທິພົນໂດຍກົງ ຂອງການເປີດເຜີຍຂອງພຣະບາຮາອຸລລາຫ໌, ລັກສະນະຂອງແຕ່ລະຊຸດເອກະສານ ແລະ ຈຸດປະສົງໃນການໃຊ້ງານ ຈະກຳໜົດຂອບເຂດທີ່ຈະກ່າວເຖິງຄວາມສັດທາຢ່າງຊັດເຈນ. ບາງຄັ້ງເປັນການເໝາະສົມ ທີ່ຈະຮອບຮອມຂໍ້ຄວາມເຂົ້ານຳກັນຈາກຕຳລາສັກສິດ. ບາງກໍລະນີຄຳສອນບາຮາຍອາດອະທິບາຍໄດ້ ໂດຍບໍ່ຕ້ອງຍົກເອົາພຣະວັດຈະນະໃດໆ. ບໍ່ວ່າກໍລະນີໃດກໍຕາມ, ອາດຈະລວມເອົາ ຫຼື ບໍ່ລວມເອົາການອ້າງອີງເຖິງຕົ້ນກຳເນີດຂອງແຫຼ່ງທີ່ມາ. ຢ່າງໃດກໍຕາມ ສິ່ງສຳຄັນຄືຕ້ອງຕະໜັກ, ແມ່ນວ່າໃນກໍລະນີທີ່ບໍ່ມີການກ່າວຢ່າງສັດເຈນເຖິງຄວາມສັດທາ, ບໍລິບົດຂອງປະສົບການໆສອນ-ການຮຽນຮູ້ ເຮັດໃຫ້ຊັດເຈນວ່າເອກະສານດັ່ງກ່າວ ໄດ້ຮັບແຮງບັນດານໃຈມາຈາກການເປີດເຜີຍຂອງ ພຣະບາຮາອຸລລາຫ໌.

ເອກະສານທີ່ໄດ້ຮັບແຮງບັນດານໃຈຈາກບາຮາຍ ທີ່ພວກເຮົາກຳລັງພິຈາລະນາຕອນນີ້ ດຶງເອົາພະລັງແຫ່ງຖ້ອຍຄຳຂອງພຣະຜູ້ເປັນເຈົ້າ, ທັງຈາກການອ້າງອີງໂດຍກົງຈາກພຣະທັມມະລິຂິດ ແລະ ຈາກການທັກທໍຄຳສອນຂອງຄວາມສັດທາ ມາເປັນການນຳສະເໜີຫົວຂໍ້ດ້ານສະຕິປັນຍາ, ສິນລະທັມ, ແລະ ຈິດວິນຍານ. ປຶ້ມເລົ່ານີ້ບໍ່ໄດ້ໃຫ້ການອ້າງອີງ, ແລະ ໂດຍທົ່ວໄປແລ້ວແມ່ນຂຶ້ນກັບການຕັດສິນໃຈ

ຂອງຜູ້ຊຸກຍູ້ເຍົາວະຊົນ, ໂດຍພິຈາລະນາຈາກສະຖານະການຂອງກຸ່ມ ແລະ ຄວາມໂນ້ມອຽງ ແລະ ຄວາມສົນໃຈຂອງກຸ່ມ, ແລະ ບໍ່ວ່າຈະກ່າວເຖິງແຫຼ່ງທີ່ມາຂອງພຣະວັດຈະນະຫຼືບໍ່ ຖ້າຫາກເປັນການເໝາະສົມແລ້ວຈະຕ້ອງກ່າວເຖິງນະຈຸດໃດ. ຂ້າງລຸ່ມນີ້ເປັນຂໍ້ຄວາມທີ່ຂັດມາຈາກບົດຮຽນບົດໜຶ່ງຂອງ ປື້ມສາຍລົມແຫ່ງການຮັບຮອງ, ເຊິ່ງໂດຍປົກກະຕິຈະເປັນປື້ມເຫຼັ້ມທຳອິດທີ່ສຶກສາໂດຍກຸ່ມເຍົາວະຊົນ. ຂໍໃຫ້ອ່ານ ແລະ ປຶກສາຄຳຖາມຕໍ່ໄປນີ້.

ກ໊ອດວິນມີເພື່ອນຮ່ວມຊັ້ນຮຽນທີ່ຮັກກັນຫຼາຍຊື່ວ່າ ຊິຊິມບ້າ. ຊິຊິມບ້າມັກຈະມາຢ້ຽມຢາມຄອບຄົວມູເລັງກ້າ ແລະ ໃນຄືນນີ້ເຂົາໄດ້ຢູ່ຮ່ວມກິນອາຫານແລງນຳກັນ. ໃນຂະນະທີ່ກຳລັງກິນເຂົ້າແລງຢູ່ນັ້ນ ບົດສົນທະນາທີ່ເກີດຂຶ້ນໃນພາ ເຂົ້າກໍ່ໄດ້ປ່ຽນຫົວຂໍ້ໄປເລື້ອຍໆ. ມູຊອນດ້າຕ້ອງ ການຍົກເອົາຫົວຂໍ້ເລື່ອງການຮັບຮອງຂຶ້ນມາເວົ້າ ແລະ ລາວຮູ້ສຶກໝົດຄວາມອົດທົນທີ່ຈະລໍຖ້າໂອກາດທີ່ຈະໄດ້ເວົ້າເຖິງຫົວຂໍ້ດັ່ງກ່າວ. ໃນທີ່ສຸດ ທຸກຄົນກໍ່ງຽບໄປໄລຍະໜຶ່ງ, ມູຊອນດ້າ ເວົ້າວ່າ: “ເອື້ອຍໂຣດສ໌ ແລະ ຂ້ອຍໄດ້ພາກັນລົມກັນກ່ຽວກັບການຮັບຮອງ.”

“ເອົາອີກແລ້ວນ້ອງສາວຂອງຂ້ອຍ” ກ໊ອດວິນເວົ້າຂຶ້ນພ້ອມເຮັດສຽງທີ່ສະແດງເຖິງການເວົ້າ ເຍີຍນ້ອງຂອງຕົນເອງ. ແຕ່ເຂົາກໍ່ປະຫຼາດໃຈເມື່ອສັງເກດເຫັນຊິຊິມບ້າ ສະແດງຄວາມສົນໃຈ ເປັນພິເສດ.

ຊິຊິມບ້າຖາມມູຊອນດ້າວ່າ: “ຄຳນີ້ມີຄວາມໝາຍແນວໃດສຳລັບເຈົ້າ?”

ມູຊອນດ້າ ຮູ້ສຶກປະຫຼາດໃຈຄືກັນ ແລະ ລາວກໍ່ຫຼຽວໄປຫາໂຣດສ໌ດ້ວຍຄວາມຫວັງວ່າ: ໂຣດສ໌ຈະຊ່ວຍຕອບ.

ໂຣດສ໌ ຈຶ່ງເວົ້າຂຶ້ນວ່າ: “ການຮັບຮອງ... ພຣະຜູ້ເປັນເຈົ້າຈະຊົງໃຫ້ການຮັບຮອງແກ່ເຮົາ ແລະ ພຣະອົງຈະຊົງຊ່ວຍເຫຼືອເຮົາໃນສິ່ງຕ່າງໆທີ່ເຮົາກະທຳ.”

ຊິຊິມບ້າບໍ່ເວົ້າຫຍັງເລີຍໄລຍະໜຶ່ງ. ສາຍຕາຂອງເຂົາບົ່ງບອກເຖິງຄວາມເສົ້າໃຈ, ແລ້ວເຂົາຈຶ່ງເລີ່ມເວົ້າຂຶ້ນຊ້າໆວ່າ: “ບໍ່ເທົ່າໃດເດືອນທີ່ຜ່ານມາພໍ່ຂອງຂ້ອຍ ຖືກບັງຄັບໃຫ້ອອກຈາກວຽກ. ທຸກຄົນຮູ້ວ່າພໍ່ຂອງຂ້ອຍເປັນຄົນທີ່ມີຄວາມຊື່ສັດ ແລະ ຄວາມຮັບຜິດຊອບ, ພໍ່ເປັນພະນັກງານຮັກສາຄວາມປອດໄພຂອງບໍລິສັດມາດົນນານເຖິງສິບແປດປີແລ້ວ, ແຕ່ເຂົາກໍ່ໄລ່ພໍ່ອອກຢ່າງທີ່ເຮົາຄິດບໍ່ເຖິງ. ເຮົາທຸກຄົນຮູ້ສາເຫດດີ ຫາກບໍລິສັດຈ້າງພໍ່ຂອງຂ້ອຍເຮັດວຽກອີກສອງປີ ເຈົ້າກໍ່ຈະຄົບອາຍຸກະສຽນ, ແລ້ວບໍລິສັດຈະຕ້ອງຈ່າຍເງິນຄ່າບຳນານໃຫ້ເພິ່ນ. ຄອບຄົວຂອງເຮົາມີເງິນສະສົມຢູ່ບໍ່ຫຼາຍ. ເຖິງແມ່ນວ່າອ້າຍຂອງຂ້ອຍຈະຊ່ວຍເຫຼືອເຮົາຢູ່, ແຕ່ເບິ່ງຄືວ່າຂ້ອຍຈະບໍ່ໄດ້ຮຽນໜັງສືຕໍ່ໃນສົກຮຽນຕໍ່ໄປນີ້ແລ້ວ, ເພາະຂ້ອຍບໍ່ສາມາດຈ່າຍຄ່າເຊົ່າຫໍພັກ ແລະ ຄ່າອາຫານ. ຂ້ອຍມັກຮຽນໜັງສືຫຼາຍ. ຂ້ອຍສົງໄສຫຼາຍວ່າເປັນຫຍັງພຣະຜູ້ເປັນເຈົ້າຈຶ່ງບໍ່ຊົງຊ່ວຍເຫຼືອຂ້ອຍເລີຍ.”

ທຸກຄົນຫັນໄປເບິ່ງທ່ານມູເລັງກ້າ ແລະ ຄາດຫວັງວ່າເຂົາຈະເປັນຜູ້ຕອບຄຳຖາມນີ້. ທ່ານມູເລັງກ້າຍິ້ມແລ້ວຕອບວ່າ: “ການທີ່ພຣະຜູ້ເປັນເຈົ້າຊົງໃຫ້ການຮັບຮອງແກ່ເຮົາ ເມື່ອເຮົາມີຄວາມພາກພຽນ ແລະ ດຸໝັ່ນ ນັ້ນບໍ່ໄດ້ໝາຍຄວາມວ່າຊີວິດຂອງເຮົາຈະມີແຕ່ຄວາມສະດວກສະບາຍ ຊີວິດຂອງພວກເຮົາຈະເຕັມໄປດ້ວຍຄວາມຍາກລຳບາກ ແລະ ໂຊກບໍ່ດີຕ່າງໆ. ມີຄວາມຍາກລຳບາກຫຼາຍຢ່າງມັກເກີດຈາກຄວາມບໍ່ຍຸຕິທັມ. ແຕ່ພວກເຮົາຕ້ອງພະຍາຍາມຢ່າງຫຼາຍ ແລະ ເຖິງແມ່ນວ່າສິ່ງຕ່າງໆຈະບໍ່ເປັນໄປຕາມທີ່ເຮົາຕ້ອງການໃນຊ່ວງທຳອິດ, ເຮົາກໍ່ຄວນຈະໝັ້ນໃຈໃນການຮັບຮອງຈາກພຣະຜູ້ເປັນເຈົ້າ. ພຣະອົງຈະຊົງ

ໃຫ້ການຮັບຮອງແກ່ເຮົາເປັນພິເສດ ເມື່ອເຮົາພະຍາຍາມທີ່ຈະກຳຈັດຄວາມບໍ່ຍຸຕິທຳໃຫ້ໝົດສິ້ນໄປ" ແລ້ວທ່ານຈຶ່ງຫັນໄປທາງຊີຊິມບ້າ ແລະເວົ້າວ່າ: "ຄອບຄົວຂອງເຈົ້າມີຄວາມສາມັກຄີ ແລະ ເຮັດວຽກດຸໝັ່ນ, ມີສິ່ງໜຶ່ງໃນໃຈຂອງຂ້ອຍທີ່ບອກວ່າສິ່ງຕ່າງໆຈະປ່ຽນໄປສຳລັບເຈົ້າ. ເຈົ້າຈະໄດ້ສຳເລັດການສຶກສາຕາມທີ່ຕັ້ງໃຈໄວ້ ເອົາຄຳເວົ້າຂອງຂ້ອຍເປັນປະກັນໄດ້ເລີຍ."

ໃນຕອນທີ 20 ແລະ 21 ພວກເຮົາຈະເບິ່ງບາງລາຍລະອຽດຂອງ *ປຶ້ມສາຍລົມແຫ່ງການຮັບຮອງ*, ແຕ່ວ່າຕອນນີ້ເຈົ້າອາດປາດຖະໜາຈະປຶກສາຫາລືຄຳຖາມເລົ່ານີ້ ກັບກຸ່ມຂອງເຈົ້າ:

1. ແມ່ນຫຍັງທີ່ເປັນແນວຄວາມຄິດຫຼັກ ທີ່ໄດ້ກ່າວໃນການສົນທະນາຂ້າງເທິງ?

2. ແນວຄວາມຄິດໄດ້ຖືກນຳສະເໜີໃຫ້ເຍົາວະຊົນສາມາດເຂົ້າໃຈໄດ້ບໍ?

3. ໃນພາກທີສອງຂອງປຶ້ມເຫຼັ້ມນີ້ ພວກເຮົານຶກເຖິງອັນຕະລາຍຂອງການໃຫ້ຄວາມສຳຄັນກັບ "ຕົນເອງ" ຫຼາຍຈົນເກີນໄປ. ຂະບວນການສຶກສາທີ່ເນັ້ນຄວາມສຳຄັນຂອງຄວາມພະຍາຍາມ ແລະ ການດຶງດູດການຮັບຮອງຈາກພຣະຜູ້ເປັນເຈົ້າ ແຕກຕ່າງຈາກຂະບວນການທີ່ຈັດລະບຽບກ່ຽວກັບແນວຄິດເລື່ອງການຕະໜັກໃນຕົນເອງ, ການຄົ້ນພົບຕົນເອງ ແລະ ຄວາມພູມໃຈໃນຕົນເອງ ຕາມທີ່ບັນລະຍາຍໄວ້ໃນພາກນັ້ນແນວໃດ?

4. ເຍົາວະຊົນທຸກຄົນ ໂດຍບໍ່ຄຳນຶງເຖິງພູມຫຼັງຂອງພວກເຂົາ, ລວມເຖິງຜູ້ທີ່ມາຈາກຄອບຄົວບາຮາຍ, ໄດ້ຮັບປະໂຫຍດຈາກການສຶກສາເນື້ອຫາທີ່ໄດ້ຮັບແຮງບັນດານໃຈຈາກບາຮາຍ ທີ່ກຳລັງພິຈາລະນາຢູ່ດຽວນີ້ແມ່ນບໍ? ຍ້ອນຫຍັງ?

## ຕອນທີ 4

ປຶ້ມປະເພດທີສອງ ເປັນເນື້ອຫາທີ່ມີຄວາມຕໍ່ເນື່ອງຈາກການສຶກສາທາງຈິດວິນຍານ ທີ່ໄດ້ຮັບຈາກຊັ້ນຮຽນເດັກ. ເປັນເອກະສານຮຽນທີ່ມີຄວາມຊັດເຈນ ໃນການປະຕິບັດຕໍ່ຄວາມເຊື່ອພື້ນຖານຂອງບາຮາຍ ແລະ ອະທິບາຍເຖິງວິທີການແປຄວາມເຊື່ອເລົ່ານີ້ໄປສູ່ການປະຕິບັດ ໃນບໍລິບົດຂອງຊີວິດຊຸມຊົນ. ສະຖານະທີ່ ພຣະບາຮາອຸລລາຫ໌ ຊົງຄອບຄອງຄື ເປັນພຣະສາສະດາຂອງພຣະຜູ້ເປັນເຈົ້າໃນຍຸກນີ້, ຄວາມໝັ້ນໃຈຢ່າງເຕັມທີ່ໃນການບັນລຸເຖິງ ພຣະປະສົງອັນສູງສົ່ງຂອງພຣະອົງຕໍ່ມະນຸດຊາດ, ຄວາມໝັ້ນໃຈໃນອິດສະຫຼະພາບ ແລະ ຄວາມສຸກທັນທາອັນໄຮ້ຂອບເຂດທີ່ພວກເຮົາໄດ້ຮັບ ຜ່ານການ

ເຊື່ອຟັງກົດຂອງພຣະອົງ, ແລະ ຄວາມແນ່ນອນໃນພະລັງແຫ່ງພັນທະສັນຍາຂອງພຣະອົງ - ສິ່ງເລົ່ານີ້ເປັນໜຶ່ງໃນຄວາມເຊື່ອໝັ້ນ ທີ່ບອກວິທີທີ່ຫົວຂໍ້ໄດ້ຮັບການປະຕິບັດໃນປຶ້ມ.

ໃນການຄິດກ່ຽວກັບເອກະສານປະເພດນີ້, ເຈົ້າຈະພົບວ່າຂໍ້ຄວາມຕໍ່ໄປນີ້ທີ່ຂຽນຕາງໜ້າໂດຍທ່ານສາສະນະພິບານ ມີປະໂຫຍດ:

> **"...ຄວາມອັນຕະລາຍຕ່າງໆທີ່ຊາວໜຸ່ມສະໄໝໃໝ່ປະເຊີນຢູ່ນັ້ນ ກຳລັງໜັກໜ່ວງຂຶ້ນເລື້ອຍໆ, ແລະ ຈຳເປັນຕ້ອງຫາທາງແກ້ໄຂຢ່າງຮີບດ່ວນ. ແຕ່ປະສົບການໄດ້ສະແດງໃຫ້ເຫັນແຈ້ງວ່າຢາປົວສຳລັບສະຖານະການທີ່ໜ້າເສົ້າ ແລະ ໜ້າປະຫຼາດໃຈນີ້ບໍ່ສາມາດພົບໄດ້ໃນສາສະໜາທີ່ມີມາແຕ່ດັ້ງເດີມທີ່ມີຮູບແບບຂອງການມີນັກບວດ. ຄວາມຫົວດື້ຂອງລະບົບນັກບວດໄດ້ຖືກປະຖິ້ມໄປແລ້ວ, ສິ່ງທີ່ສາມາດຄວບຄຸມຊາວໜຸ່ມໄດ້ ແລະ ສາມາດຊ່ວຍພວກເຂົາໃຫ້ລອດພົ້ນຈາກກັບດັກຂອງວັດຖຸນິຍົມທີ່ຊົ່ວຮ້າຍຂອງຍຸກ ນີ້ກໍ່ຄືພະລັງຂອງສາສະໜາທີ່ແທ້ຈິງ, ມີປະໂຫຍດແລະມີຊີວິດຊີວາ ຢ່າງເຊັ່ນສາສະໜາທີ່ ພຣະບາຮາອຸລລາຫ໌ ໄດ້ເປີດເຜີຍຕໍ່ໂລກດັ່ງທີ່ເຄີຍເປັນມາໃນອະດີດ. ສາສະໜາເປັນຄວາມຫວັງດຽວ, ແຕ່ບໍ່ແມ່ນຮູບແບບຂອງສາສະໜາທີ່ມີຜູ້ນຳເປັນນັກບວດ ທີ່ພະຍາຍາມຢ່າງໄຮ້ຜົນທີ່ຈະເທດສະໜາສັ່ງສອນ. ການແຍກຕົວອອກຈາກສາສະໜາທີ່ແທ້ຈິງ, ຫຼັກສິນລະທັມທັງຫຼາຍຈຶ່ງບໍ່ມີປະສິດທິຜົນ ແລະ ບໍ່ສາມາດນຳທາງ ແລະ ຄວບຄຸມວິຖີຊີວິດຂອງມະນຸດທັງໃນລະດັບບຸກຄົນ ແລະ ໃນລະດັບສັງຄົມໂດຍລວມໄດ້. ແຕ່ເມື່ອສາສະໜາທີ່ແທ້ຈິງເຊື່ອມໂຍງເຂົ້າກັບຫຼັກຈະລິຍະທັມທີ່ແທ້ຈິງ, ຄວາມກ້າວໜ້າທາງສິນລະທັມກໍ່ເປັນສິ່ງທີ່ເປັນໄປໄດ້ ແລະ ບໍ່ແມ່ນເປັນພຽງສິ່ງທີ່ເປັນອຸດົມຄະຕິ."** [3]

ຂໍ້ຄວາມຂ້າງເທິງສະແດງໃຫ້ເຫັນຢ່າງຊັດເຈນວ່າ ກົງກັນຂ້າມກັບອິດທິພົນທີ່ຫຼຸດໜ້ອຍລົງຂອງສາສະໜາດັ້ງເດີມ, ພະລັງແຫ່ງຄວາມສັດທາທີ່ມີຊີວິດ ສາມາດປົກປ້ອງເຍົາວະຊົນຈາກ "ຫຼຸມພາງຂອງລັດທິວັດຖຸນິຍົມອັນໂຫດຮ້າຍ" ທີ່ແຜ່ຫຼາຍໃນສັງຄົມທຸກມື້ນີ້. ພະລັງອຳນາດນີ້ຄວນສະທ້ອນໃຫ້ເຫັນທັງໃນເນື້ອຫາຂອງສິ່ງທີ່ຄົນລຸ້ນເຍົາສຶກສາ ແລະ ໃນວິທີທີ່ພວກເຂົາໄດ້ຮັບການຊ່ວຍເຫຼືອ ໃນການພັດທະນາຄວາມສາມາດທາງຈິດວິນຍານຂອງພວກເຂົາ. ເພື່ອພິຈາລະນາແນວຄິດເລົ່ານີ້ເພີ່ມເຕີມ ຂໍໃຫ້ເຮົາເບິ່ງຂໍ້ຄວາມທີ່ຂັດມາຈາກ *ປຶ້ມດວງຈິດແຫ່ງຄວາມສັດທາ* - ເປັນໜຶ່ງໃນປຶ້ມທີ່ຢູ່ໃນປະເພດທີ່ກຳລັງພິຈາລະນາຢູ່ຕອນນີ້.

*ດວງຈິດແຫ່ງ ຄວາມສັດທາ* ປຶ້ມນີ້ກ່ຽວຂ້ອງກັບຫົວຂໍ້ບາງປະການ ທີ່ມີລັກສະນະດ້ານປັດຊະຍາ, ເພາະເປັນທີ່ຊາບກັນດີຢູ່ແລ້ວວ່າ ຄົນລຸ້ນເຍົາທີ່ມີອາຍຸໃນຊ່ວງໄວນີ້ມັກຈະຕໍ່ສູ້ກັບຄຳຖາມພື້ນຖານ ກ່ຽວກັບການດຳລົງຢູ່, ຄຳຖາມທີ່ຕ້ອງຕອບຢ່າງເໝາະສົມ ຫາກຕ້ອງຫຼີກລ້ຽງຄວາມສັບສົນ ແລະ ແມ່ນກະທັ້ງສູນເສຍຄວາມສັດທາໃນຊີວິດພາຍຫຼັງ. ຄຳຕອບສຳລັບຄຳຖາມທີ່ເລິກລັບຢ່າງຫຼວງຫຼາຍ ເຮັດໃຫ້ຈິດໃຈຂອງມະນຸດສັບສົນນັ້ນ ຈະພົບໄດ້ໃນຄຳສອນຂອງບາຮາຍເຊັ່ນ: ລັກສະນະທີ່ແທ້ຈິງຂອງມະນຸດ,

ຄວາມດີງາມ ແລະ ຄວາມຊົ່ວຮ້າຍ, ຄວາມສະໝັກໃຈ ແລະ ໂຊກຊະຕາ, ວິວັດທະນາການ ແລະ ການປາກົດຂອງຈິດວິນຍານຂອງມະນຸດ, ສະຕິປັນຍາຂອງມະນຸດ, ແລະ ດວງຈິດແຫ່ງຄວາມສັດທາ. ປຶ້ມເຫຼັ້ມນີ້ດຶງເອົາຄວາມເຂົ້າໃຈ ທີ່ຮວບຮວມໄດ້ມາຈາກທັມມະລິຂິດສັກສິດ, ໂດຍສະເພາະຈາກຄຳອະທິບາຍທີ່ແຫຼມຄົມຂອງພຣະອັບດຸລບາຮາໃນປຶ້ມ "ໄຂບັນຫາທັມມະບາງຂໍ້", ເພື່ອໃຫ້ຄວາມຈະແຈ້ງກ່ຽວກັບຫົວຂໍ້ເລົ່ານີ້. ມັນພັດທະນາແຕ່ລະຫົວຂໍ້ຜ່ານການສົນທະນາຂອງກຸ່ມເຍົາວະຊົນ, ເຊິ່ງຈັດຂື້ນລະຫວ່າງການພົບປະເປັນປະຈຳທຸກອາທິດ ແລະ ຕໍ່ມາເມື່ອພວກເຂົາໃຊ້ເວລາຊ່ວງວັນເສົາວັນອາທິດຮ່ວມກັນເຮັດແຄມ. ຕອນຕໍ່ໄປນີ້ແມ່ນຄັດມາຈາກບົດຮຽນບົດໜຶ່ງ ເຊິ່ງຊາວໜຸ່ມກຳລັງປຶກສາຫາລືຄຳຖາມກ່ຽວກັບເລື່ອງຂອງໂຊກຊະຕາ ກັບຜູ້ປະສານງານຂອງກຸ່ມຂອງພວກເຂົາທີ່ມີຊື່ວ່າ ນາຕາເລຍ ເພໂທຣນ່າ:

<table>
<tr><td>
"ລອງທົບທວນເບິ່ງດູວ່າ ມາຮອດຕອນນີ້ພວກເຮົາໄດ້ເຂົ້າໃຈຫຍັງແດ່ແລ້ວ," ນາຕາເລຍ ເພໂທຣນ່າ ເວົ້າ. "ພວກເຮົາມີຄວາມສະໝັກໃຈຂອງຕົນເອງທີ່ຈະເຮັດໃນສິ່ງທີ່ດີຫຼືບໍ່ດີ ແລະ ພວກເຮົາຕ້ອງໃຊ້ຄວາມສະໝັກໃຈຂອງພວກເຮົາ ເພື່ອນຳໄປສູ່ໃຊ້ຊີວິດທີ່ປະເສີດ. ແຕ່ການມີຄວາມສະໝັກໃຈບໍ່ໄດ້ໝາຍຄວາມວ່າພວກເຮົາຈະສາມາດຄວບຄຸມທຸກຢ່າງໄດ້. ມີບາງສິ່ງທີ່ຖືກກຳນົດໃຫ້ເກີດຂື້ນກັບພວກເຮົາ ໂດຍທີ່ພວກເຮົາຄວບຄຸມໄດ້ໜ້ອຍຫຼາຍ. ຕອນນີ້ເອື້ອຍຢາກຈະຖາມພວກນ້ອງກ່ຽວກັບອີກປະເດັນໜຶ່ງ. ພວກນ້ອງເຂົ້າໃຈແນວໃດແດ່ ກັບຄຳວ່າ "ໂຊກຊະຕາ"?<br>
"ນ້ອງຄິດວ່າ ໂຊກຊະຕາເປັນສິ່ງທີ່ພວກເຮົາບໍ່ສາມາດປ່ຽນແປງໄດ້, ບໍ່ວ່າຈະເຫດໃດກໍ່ຕາມ" ອີກໍຣ໌ ເວົ້າຕອບ.<br>
"ຟັງເບິ່ງຄືເຂົ້າທ່າດີ. ມີໃຜຈະໃຫ້ຕົວຢ່າງອີກສອງສາມຕົວຢ່າງບໍ່?" ນາຕາເລຍ ຖາມ.<br>
"ພວກເຮົາບໍ່ໄດ້ເລືອກພໍ່ແມ່ຂອງເຮົາເອງ" ນາເດຍ ເວົ້າ.<br>
"ພວກເຮົາເລືອກເກີດບໍ່ໄດ້" ແອນຕັນ ເວົ້າ.<br>
"ພໍ່ແມ່ຂອງນ້ອງເວົ້າສະເໝີວ່າ ການເປັນນັກເປຍໂນທີ່ເກັ່ງ ແມ່ນໂຊກຊະຕາຂອງຂ້ອຍ" ວາດິກ ເວົ້າ.<br>
"ແຕ່ເຈົ້າບໍ່ຕ້ອງເປັນກໍ່ໄດ້ແມ່ນບໍ່, ເຈົ້າສາມາດເລືອກທີ່ຈະເປັນຢ່າງອື່ນກໍ່ໄດ້" ມາຣີນ່າ ເວົ້າ.<br>
"ຖືກຕ້ອງແລ້ວ, ໂຊກຊະຕາບໍ່ແມ່ນເລື່ອງງ່າຍຂະໜາດນັ້ນ" ນາຕາເລຍ ເວົ້າ "ມີຕົວຢ່າງປຽບທຽບທີ່ດີທີ່ອະທິບາຍວ່າ ໂຊກຊະຕາເຮັດວຽກແນວໃດ. ມີຜູ້ໃດເຄີຍເຫັນວິທີທີ່ເຂົາເຈົ້າຖັກທໍພົມບໍ່?"
</td></tr>
<tr><td>
ໃບໜ້າຂອງທຸກຄົນມີສີໜ້າຫວ່າງເປົ່າ. ດັ່ງນັ້ນ, ນາຕາເລຍ ຈຶ່ງເວົ້າຕໍ່ວ່າ: "ເອົາລະ, ກໍ່ຄືມັນຈະມີໂຄງຢູ່ອັນໜຶ່ງ. ເທິງໂຄງນີ້ມີເຊືອກທີ່ຂະໜານກັນຢູ່, ເຊືອກທີ່ຂະໜານກັນນີ້ ຖືກດຶງໄວ້ຈົນເຄັ່ງຈາກດ້ານໜຶ່ງໄປຍັງອີກດ້ານໜຶ່ງ. ຊ່າງທໍຈະເອົາດ້າຍທີ່ມີສີຕ່າງໆກັນມາຖັກທໍ ຜ່ານເສັ້ນເຊືອທີ່ເຄັ່ງຂະໜານກັນສອງຂ້າງນີ້ ເພື່ອສ້າງລວດລາຍແບບຕ່າງໆ. ໜຶ່ງໃນສາສະນິກະຊົນໃນຍຸກຕົ້ນໆ ເຄີຍໄດ້ຍິນພຣະອັບດຸລບາຮາກ່າວວ່າ "ພວກເຮົາກໍ່ຄືກັບຊ່າງທໍ. ພວກເຮົາໄດ້ຮັບໂຄງ ແລະ ເສັ້ນເຊືອກ. ເຮົາຍັງໄດ້ຮັບເສັ້ນດ້າຍສີຕ່າງໆ ເພື່ອໃຊ້ຖັກທໍດ້ວຍ, ເຊິ່ງພວກເຮົາອາດຈະບອກໄດ້ວ່າ ນີ້ແມ່ນພອນສະຫວັນ ຫຼື ຄວາມສາມາດພິເສດ ແລະ ພະລັງທີ່ພວກເຮົາມີມາແຕ່ກຳເນີດນັ້ນເອງ. ນີ້ຄືໂຊກຊະຕາຂອງພວກເຮົາ. ແຕ່ພວກເຮົາເປັນຄົນເລືອກແບບລວດລາຍທີ່ຈະທໍດ້ວຍຕົນເອງ. ພວກເຮົາມີອິດສະລະໃນການຄວບຄຸມການກະທຳ
</td></tr>
</table>

ຂອງຕົນເອງ. ແຕ່ລະການກະທຳແມ່ນລອດລາຍສ່ວນໜຶ່ງທີ່ສ້າງແບບລອດລາຍ. ງານທໍທີ່ເຮົາເຮັດສຳເລັດສົມບູນກໍ່ຄື ສິ່ງພວກເຮົາຈະເຕີບໂຕຂຶ້ນກາຍເປັນສິ່ງນັ້ນ. ພວກເຮົາສາມາດພັດທະນາພະລັງ ແລະ ພອນສະຫວັນ ທີ່ພຣະຜູ້ເປັນເຈົ້າປະທານໃຫ້ແກ່ພວກເຮົາ ໂດຍອາໃສຄວາມສະໝັກໃຈ ແລະ ເຈດຕະນາຂອງພວກເຮົາ".

---

**ການໄຕ່ຕອງ:**

ພຣະຜູ້ເປັນເຈົ້າຊົງປະທານຄວາມສາມາດຕ່າງໆໃຫ້ແກ່ພວກເຮົາ. ບາງຄົນອາດຈະເກັ່ງທາງຊີວະສາດ, ໃນຂະນະທີ່ບາງຄົນມີພອນສະຫວັນທາງດ້ານດົນຕີ. ແຕ່ພວກເຮົາທຸກຄົນຕ່າງໄດ້ຮັບສິ່ງທີ່ຈຳເປັນທີ່ພວກເຮົາ ຈະພັດທະນາໄປເປັນສິ່ງມີຊີວິດທີ່ປະເສີດ. ດັ່ງນັ້ນ, ຈຶ່ງເປັນສິ່ງທີ່ບໍ່ຖືກຕ້ອງທີ່ພວກເຮົາຈະຕຳໜິໂຊກຊະຕາ ໃນເມື່ອພວກເຮົາມີຂໍ້ບົກຜ່ອງ. ເມື່ອພວກເຮົາເຮັດແນວນັ້ນ, ພວກເຮົາກຳລັງຢຸດປັບປຸງຕົນເອງ. ໃນແຕ່ລະ ກໍລະນີທາງລຸ່ມນີ້ ຂໍໃຫ້ເຈົ້າເລືອກຄວາມຄິດທີ່ຈະຊ່ວຍໃຫ້ຄົນໆໜຶ່ງປ່ຽນແປງສະຖານະການຂອງຕົນເອງໄດ້:

a. ບາງຄົນບໍ່ສະບາຍຕະຫຼອດເວລາ ເພາະເຂົາກິນອາຫານທີ່ບໍ່ດີຕໍ່ສຸຂະພາບຢູ່ເລື້ອຍໆ. ເຂົາຄິດວ່າ:

_____ ມັນເປັນໂຊກຊະຕາຂອງຂ້ອຍເອງທີ່ຮ່າງກາຍອ່ອນແອ ແລະ ເຈັບປ່ວຍງ່າຍ.

_____ ຂ້ອຍຄວນຈະຢຸດຫາຂໍ້ແກ້ຕົວ ແລະ ປ່ຽນນິໄສການກິນຂອງຕົນເອງ.

b. ບາງຄົນໜຶ່ງບໍ່ຮຽນໜັງສື ສະນັ້ນເຂົາຈຶ່ງເສັງໄດ້ຄະແນນຕ່ຳ. ເຂົາຄິດວ່າ:

_____ ຂ້ອຍອາດຈະບໍ່ແມ່ນຄົນທີ່ເສັງໄດ້ທີໜຶ່ງ, ແຕ່ຖ້າຂ້ອຍດຸໝັ່ນຄະແນນກໍ່ຈະດີຂຶ້ນ.

_____ ການປະສົບຄວາມສຳເລັດໃນການຮຽນ ມັນບໍ່ແມ່ນໂຊກຊະຕາຂອງຂ້ອຍ.

c. ບາງຄົນກິນເຫລົ້າຈົນເມົາທຸກຄັ້ງ ທີ່ເຂົາປະສົບບັນຫາ. ພໍຊວ່າງເມົາແລ້ວເຂົາຄິດວ່າ:

_____ ຊີວິດບີບບັງຄັບໃຫ້ຂ້ອຍຕ້ອງເມົາ.

_____ ຂ້ອຍສາມາດຮຽນຮູ້ຈັດການກັບບັນຫາໃນຊີວິດຂອງຕົນໄດ້, ຂ້ອຍບໍ່ຕ້ອງການແອລກໍຮໍ.

d. ບາງຄົນມີນິໄສມັກວິພາກວິຈານໝູ່ຂອງຕົນເອງ. ສະນັ້ນ ໝູ່ຈຶ່ງພະຍາຍາມຫລີກລ້ຽງເຂົາ, ເຂົາຄິດວ່າ:

_____ ບໍ່ມີຜູ້ໃດມັກຂ້ອຍເລີຍ.

_____ ຂ້ອຍຄວນຢຸດວິພາກວິຈານຄົນອື່ນ ແລະ ຄວນຊອກຫາຂໍ້ດີໃນຕົວຜູ້ຄົນ.

e. ບາງຄົນທຸຈະລິດໃນການສອບເສັງ ແລະ ຖືກຈັບໄດ້. ເຂົາຄິດວ່າ:

_____ ນີ້ແມ່ນໂຊກຮ້າຍແທ້! ຄົນອື່ນກໍ່ທຸຈະລິດໃນການສອບເສັງ ແລະ ບໍ່ເຄີຍຖືກຈັບໄດ້ເລີຍ.

_____ ຂ້ອຍເຮັດແບບນັ້ນໄດ້ແນວໃດ? ຂ້ອຍຄວນແຕ່ງກາຍດ້ວຍເສື້ອຄຸມແຫ່ງຄວາມສັດຊື່.

“ພວກເຮົາຈະເວົ້າໄດ້ບໍ່ວ່າ ບໍ່ແມ່ນໂຊກຊະຕາຂອງຜູ້ໃດ ທີ່ຈະຕ້ອງກາຍເປັນອາດຊະຍາກອນ?” ໄອແວນຖາມ.
“ແມ່ນອນ, ບໍ່ແມ່ນແນວນັ້ນ” ນາຕາເລຍ ເພໂທຣນ່າຕອບ “ໃນການປຽບທຽບທີ່ເອື້ອຍຫາກໍ່ໃຊ້ນີ້, ທຸກຄົນສາມາດຖັກຫໍລວດລາຍທີ່ສວຍງາມໄດ້ດ້ວຍໂຄງ ແລະ ເສັ້ນເຊືອກທີ່ໄດ້ຮັບ. ແມ່ນວ່າພວກເຮົາຈະແຕກຕ່າງກັນ ແຕ່ພວກເຮົາທຸກຄົນກໍ່ມີຄວາມສາມາດທີ່ຈະເຕີບໂຕເປັນຄົນດີໄດ້.”

ໄອແວນເຫັນດີກັບທຸກຄຳເວົ້າ. ແຕ່ກໍ່ຍັງມີບາງຢ່າງລົບກວນລາວຢູ່ ແລະ ລາວກໍ່ບໍ່ຮູ້ວ່າສິ່ງນັ້ນແມ່ນຫຍັງແທ້. ແລ້ວລາວກໍ່ໄດ້ຍິນຕົນເອງເວົ້າວ່າ “ແຕ່ທັງໝົດນີ້ແມ່ນເປັນເລື່ອງທີ່ຍາກຫຼາຍ.”
ບໍ່ມີຜູ້ໃດເຂົ້າໃຈວ່າໄອແວນໝາຍເຖິງຫຍັງ.
“ແມ່ນຫຍັງເດທີ່ວ່າຍາກ?” ນາຕາເລຍຖາມ.
“ກໍ່ການໃຊ້ຄວາມພະຍາຍາມຫຼາຍໂພດທີ່ຈະເຮັດໃຫ້ຕົນເຂັ້ມແຂງຕະຫຼອດເວລາ ເພື່ອທີ່ຈະເປັນຄົນດີນັ້ນແລ້ວ” ໄອແວນຕອບ.
“ນ້ອງເວົ້າຖືກແລ້ວໄອແວນ” ນາຕາເລຍເວົ້າພ້ອມດ້ວຍຮອຍຍິ້ມ “ແຕ່ຈົ່ງຈື່ຈຳໄວ້ວ່າ ພຣະຜູ້ເປັນເຈົ້າຊ່ວຍເຫຼືອພວກເຮົາຢູ່ຕະຫຼອດເວລາ, ພຣະອົງບໍ່ເຄີຍປະຖິ້ມພວກເຮົາຈັກເທື່ອ. ກໍ່ຄືກັບການແລ່ນເຮືອໃບ; ແຮງທີ່ເຄື່ອນເຮືອມາຈາກລົມ ບໍ່ແມ່ນຈາກເຮືອເອງ. ແຕ່ກັບຕັນເປັນຜູ້ໃຊ້ແຮງລົມເຮັດໃຫ້ເຮືອເຄື່ອນໄປຍັງຈຸດໝາຍປາຍທາງ. ທຸກພະລັງມາຈາກພຣະຜູ້ເປັນເຈົ້າ, ຫາກປາສະຈາກຄວາມຊ່ວຍເຫຼືອຂອງພຣະອົງ ພວກເຮົາກໍ່ບໍ່ມີພະລັງອຳນາດ. ເມື່ອພວກເຮົາເບິ່ງແຕ່ພຽງຕົວເຮົາເອງ ເຮົາກໍ່ຈະເຫັນແຕ່ຄວາມອ່ອນແອ, ແຕ່ຫາກວ່າພວກເຮົາຫຼຽວໄປຫາພຣະຜູ້ເປັນເຈົ້າ ແລະ ອ້ອນວອນຂໍຄວາມຊ່ວຍເຫຼືອຈາກພຣະອົງ, ພວກເຮົາຈະພົບຄວາມເຂັ້ມແຂງທີ່ຈະເຮັດໃນສິ່ງທີ່ພຣະອົງເພິ່ງພໍພຣະໄທ.”

ຈາກນັ້ນ, ກຸ່ມກໍ່ຖືກແບ່ງອອກເປັນຄູ່ ເພື່ອທ່ອງພຣະທຳມະລິຂິດຕໍ່ໄປນີ້:

**“ພຣະຜູ້ຊົງສ້າງສັນທີ່ຫາທີ່ປຽບປານບໍ່ໄດ້ ໄດ້ຊົງສ້າງມະນຸດທຸກຄົນມາຈາກສາລະດຽວກັນ ແລະ ໄດ້ຊົງເຮັດໃຫ້ການດຳລົງຢູ່ອັນແທ້ຈິງຂອງມະນຸດສູງສົ່ງ ເໜືອສັບພະສິ່ງສ້າງສັນທັງໝົດຂອງພຣະອົງ. ດັ່ງນັ້ນ, ຄວາມສຳເລັດ ຫຼື ຄວາມລົ້ມເຫລວ, ການໄດ້ມາ ຫຼື ການສູນເສຍ, ຈຶ່ງຂຶ້ນຢູ່ກັບຄວາມພະຍາຍາມຂອງມະນຸດເອງ. ຍິ່ງມະນຸດພະຍາຍາມຫຼາຍເທົ່າໃດ, ຄວາມຈະເລີນກ້າວໜ້າຂອງເຂົາກໍ່ຍິ່ງຫຼາຍຂຶ້ນເທົ່ານັ້ນ.”**

**“ໂອ ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ! ໂອ ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ! ພຣະອົງຊົງເຫັນຂ້າພະເຈົ້າໃນຍາມທີ່ມີຄວາມຕ່ຳຕ້ອຍ ແລະ ອ່ອນແອ, ໄດ້ໃຊ້ເວລາຢູ່ກັບພາລະກິດອັນຍິ່ງໃຫຍ່ດ້ວຍຄວາມຕັ້ງໃຈທີ່ຈະເຊີດຊູພຣະວັດຈະນະໃນທ່າມກາງມວນຊົນ ແລະ ແຜ່ກະຈາຍພຣະທົມຄຳສອນຂອງພຣະອົງໄປໃນໝູ່ປະຊາຊົນຂອງພຣະອົງ. ຂ້າພະເຈົ້າຈະປະສົບຄວາມສຳເລັດໄດ້ຢ່າງໃດ**

**ຫາກພຣະອົງບໍ່ຊົງຊ່ວຍເຫຼືອຂ້າພະເຈົ້າ ດ້ວຍລົມຫາຍໃຈແຫ່ງພຣະວິນຍານບໍລິສຸດ, ໂປດຊົງຊ່ວຍໃຫ້ຂ້າພະເຈົ້າມີໄຊຊະນະດ້ວຍເທວັນແຫ່ງອານາຈັກອັນຮຸ່ງເຮືອງຂອງພຣະອົງ, ແລະ ຂໍຊົງໂປຍປາຍການຮັບຮອງຂອງພຣະອົງໃຫ້ແກ່ຂ້າພະເຈົ້າ ເຊິ່ງເປັນສິ່ງດຽວທີ່ສາມາດປັ້ນໃຫ້ລິ່ນກາຍເປັນນິກອິນຊີ, ນ້ຳຍົດໜຶ່ງກາຍເປັນແມ່ນ້ຳ ແລະ ທະເລ, ແລະ ເຮັດໃຫ້ອາຕອມກາຍເປັນແສງສະຫວ່າງ ແລະ ດວງອາທິດ? ໂອ ພຣະຜູ້ເປັນນາຍ! ຂໍຊົງຊ່ວຍເຫຼືອຂ້າພະເຈົ້າດ້ວຍໄຊຊະນະ ແລະ ມະຫິທານຸພາບອັນຊົງປະສິດທິພາບຂອງພຣະອົງ ເພື່ອວ່າລີ້ນຂອງຂ້າພະເຈົ້າຈະເປັ່ງຄຳສັນລະເສີນ ແລະ ຄຸນລັກສະນະຂອງພຣະອົງໃນທ່າມກາງປະຊາຊົນທັງປວງ ແລະ ເພື່ອວ່າຈິດວິນຍານຂອງຂ້າພະເຈົ້າຈະຖ້ວຍທົ້ນໄປດ້ວຍນ້ຳອາງຸ່ນແຫ່ງຄວາມຮັກ ແລະ ຄວາມຮູ້ຂອງພຣະອົງ.**

**"ພຣະອົງຄື ພຣະຜູ້ຊົງມະຫິທານຸພາບ ພຣະຜູ້ຊົງກະທຳໃນສິ່ງທີ່ພຣະອົງຊົງປະສົງ."**

ເຖິງແມ່ນວ່າ ເຈົ້າຈະມີໂອກາດສຶກສາເນື້ອຫາທັງໝົດຂອງປື້ມ "ດວງຈິດຂອງຄວາມສັດທາ" ໃນຕອນທີ 22, ມັນກໍ່ອາດຈະເປັນປະໂຫຍດທີ່ຈະຢຸດໜ້ອຍໜຶ່ງ ແລະ ກວດສອບເນື້ອຫາຂອງຂໍ້ຄວາມທີ່ຂັດມາຈາກຂ້າງເທິງ ໂດຍການປຶກສາຫາລືໃນປະເດັນດັ່ງຕໍ່ໄປນີ້:

1. ເນື້ອຫາຕອນນີ້ນຳສະເໜີແນວຄວາມຄິດກ່ຽວກັບໂຊກຊະຕາແນວໃດ? ເປັນແນວຄວາມຄິດທີ່ມີລັກສະນະດັນທຸລັງຫຼືບໍ່?

2. ການນຳສະເໜີແນວຄິດທີ່ມີລັກສະນະດັນທຸລັງເປັນແນວໃດ?

3. ເນື້ອຫາເອກສານນີ້ໃຫ້ຄວາມສຳຄັນຢ່າງເໝາະສົມໃນການຊ່ວຍເຍົາວະຊົນ ສຳຫຼວດແນວຄວາມຄິດທາງຈິດວິນຍານ, ຫຼື ນຳສະເໜີແນວຄວາມຄິດຢ່າງເຄັ່ງຄັດຫຼືບໍ່?

4. ເນື້ອຫາຫຼັກສູດນີ້ຊ່ວຍໃຫ້ພວກເຂົາມອງເຫັນ ຄວາມໝາຍທີ່ເຊື່ອງຊ້ອນຂອງພຣະທຳມະລິຂິດທີ່ກ່ຽວຂ້ອງກັບໂຊກຊະຕາ ແລະ ຕາມຄວາມສະໝັກໃຈ ໃນຊີວິດຂອງພວກເຂົາເອງບໍ່?

5. ເລື່ອງລາວສະແດງໃຫ້ເຫັນເຖິງຄວາມໃຈກວ້າງ ແລະ ຄວາມຮູ້ສຶກທີ່ແຕກຕ່າງກັນອອກໄປເຊິ່ງສະແດງອອກລັກສະນະຂອງຄົນລຸ້ນເຍົາ ຜູ້ທີ່ກຳລັງພະຍາຍາມຈະເຂົ້າໃຈ ແນວຄວາມຄິດເລົ່າ ນີ້ແມ່ນບໍ? ຖ້າແມ່ນ, ຄວາມໃຈກວ້າງນີ້ສະແດງອອກມາຄືແນວໃດ?

6. ຈະເກີດຫຍັງຂຶ້ນຖ້າສະມາຊິກໃນກຸ່ມເຍົາວະຊົນ ບໍ່ໄດ້ຮັບອະນຸຍາດໃຫ້ສະແດງຄວາມຄິດເຫັນຂອງຕົນຢ່າງອິດສະລະ?

7. ນາຕາເລຍ ເພໂທຣນ່າ ຊ່ວຍເຫຼືອເພື່ອນລຸ້ນເຍົາຂອງລາວ ໃຫ້ສາມາດພັດທະນາຄວາມຄິດທີ່ຊັດເຈນຂຶ້ນໄດ້ແນວໃດ?

8. ຄຳຖາມທີ່ປຶກສາກັນລະຫວ່າງຄົນລຸ້ນເຍົາໃນເລື່ອງລາວນີ້ ກ່ຽວຂ້ອງກັບເຍົາວະຊົນທຸກຄົນແມ່ນບໍ່ , ໂດຍບໍ່ຄຳນຶງເຖິງພູມຫຼັງຂອງພວກເຂົາ?

## ຕອນທີ 5

ໄວໜຸ່ມຕອນຕົ້ນແມ່ນເປັນຊ່ວງເວລາໜຶ່ງໃນຊີວິດ ທີ່ພວກເຮົາເພີ່ມພູນຄວາມສາມາດຂອງຕົນໄດ້ຫຼາຍກວ່າລັກສະນະທີ່ປະກົດຢູ່ພາຍນອກ; ພວກເຮົາສະແຫວງຫາຄວາມເຂົ້າໃຈໃຫ້ ທີ່ເລິກເຊິ່ງຍິ່ງຂຶ້ນໃນສິ່ງທີ່ພວກເຮົາພົບເຫັນ ແລະ ສິ່ງທີ່ເຂົາເຄີຍປະສົບ. ສິ່ງນີ້ບົ່ງຊີ້ໃຫ້ເຫັນວ່າ ເຍົາວະຊົນນັ້ນຕ້ອງການໆຮັບຮູ້ທາງຈິດວິນຍານ; ພວກເຂົາຄວນໄດ້ຮັບການຊ່ວຍເຫຼືອເພື່ອໃຫ້ໄດ້ຮັບຮູ້ ເຖິງພະລັງທັງຫຼາຍທາງຈິດວິນຍານ, ໃນການເຫັນຄວາມເປັນຈິງທາງຈິດວິນຍານຂອງທຸກສະຖານະການ, ແລະ ໃນການລະບຸຫຼັກຄຳສອນທາງທັມທີ່ກ່ຽວຂ້ອງ. ໃນທັມມະລິຂິດສັກສິດຂອງຄວາມສັດທາ ອ້າງອີງເຖິງຄວາມສາມາດຕ່າງໆເຊັ່ນ "ການມອງເຫັນພາຍໃນ", "ສາຍຕາພາຍໃນ" ແລະ "ດວງຕາແຫ່ງວິນຍານ". ຕົວຢ່າງເຊັ່ນ: ໃນຂໍ້ຄວາມຂ້າງລຸ່ມນີ້ຂອງ ພຣະອັບດຸລບາຮາ ໄດ້ໃຫ້ຄຳແນະນຳແກ່ໂຮງຮຽນທາຣ໌ເບຍັດ ຢູ່ເຕຮາຣານ ໄວ້ວ່າ:

**"ຂໍໃຫ້ພວກເຂົາເຈົ້າສ້າງຄວາມຈະເລີນກ້າວໜ້າ ໃຫ້ໄດ້ຫຼາຍທີ່ສຸດໃນຊ່ວງເວລາທີ່ສັ້ນທີ່ສຸດ, ຂໍໃຫ້ພວກເຂົາມືນຕາກວ້າງໆ ແລະ ເປີດເຜີຍການດຳລົງຢູ່ທີ່ແທ້ຈິງພາຍໃນຂອງທຸກສິ່ງ, ເປັນຜູ້ຊ່ຽວຊານໃນທັກສະ ແລະ ສິລະປະທຸກຂະແໜງ, ແລະ ຮຽນຮູ້ທີ່ຈະເຂົ້າໃຈຄວາມເລິກລັບຂອງທຸກສິ່ງຄືກັບວ່າ ພວກເຂົາເປັນສິ່ງເລົ່ານັ້ນ - ຄວາມສາມາດນີ້ແມ່ນເປັນໜຶ່ງໃນຜົນກະທົບທີ່ພົ້ນເດັ່ນຂອງການຮັບໃຊ້ ຢູ່ຕໍ່ໜ້າທໍລະນີປະຕູອັນສັກສິດ."** [4]

ພຣະອັບດຸລບາຮາເອີ້ນການຮັບຮູ້ທາງຈິດວິນຍານວ່າ ເປັນພະລັງໜຶ່ງທີ່ເຮັດໃຫ້ມະນຸດແຕກຕ່າງຈາກສັດ:

**"ເປັນທີ່ປະກົດຊັດເຈນວ່າ ໃນຂະນະທີ່ມະນຸດມີພະລັງທີ່ຄືກັນກັບສັດ, ມະນຸດກໍ່ແຕກຕ່າງຈາກສັດ ເພາະຄວາມສຳເລັດທາງດ້ານສະຕິປັນຍາ, ການຮັບຮູ້ທາງຈິດວິນຍານ, ການໄດ້ມາເຊິ່ງຄຸນລັກສະນະທາງທັມ, ຄວາມສາມາດໃນການຮັບກະລຸນາທິຄຸນຈາກສະຫວັນ, ພຣະພອນຂອງພຣະຜູ້ເປັນນາຍ ແລະ ລັດສະໝີຂອງຄວາມປານີແຫ່ງສະຫວັນ. ສິ່ງເລົ່ານີ້ເປັນເຄື່ອງປະດັບຂອງມະນຸດ, ເປັນກຽດ ແລະ ຄວາມປະເສີດຂອງມະນຸດ. ມະນຸດຊາດຕ້ອງພະຍາຍາມຢ່າງຍິ່ງທີ່ຈະໄປສູ່ສະຖານະອັນສູງສຸດນີ້."** [5]

ແລະ ພຣະອັບດຸລບາຮາກ່າວເຖິງການມອງເຫັນພາຍໃນ ແລະ ການໄດ້ຍິນພາຍໃນວ່າ ເປັນກະລຸນາທິຄຸນສຳລັບຈິດວິນຍານ:

**"ພຣະອົງໄດ້ປະທານຂອງຂວັນທີ່ເປັນວັດຖຸ ແລະ ກະລຸນາທິຄຸນສຳລັບຈິດວິນຍານແກ່ພວກເຮົາ, ໃຫ້ສາຍຕາພາຍນອກ ເພື່ອເບິ່ງເຫັນແສງຕາເວັນ ແລະ ການມອງເຫັນພາຍໃນ ເພື່ອໃຫ້ພວກເຮົາເຫັນ ຄວາມຮຸ່ງເຮືອງຂອງພຣະຜູ້ເປັນເຈົ້າ. ພຣະອົງອອກແບບຫູ ເພື່ອໃຫ້ພວກເຮົາອອນຊອນກັບທຳນອງຂອງສຽງ ແລະ ການໄດ້ຍິນພາຍໃນເພື່ອໃຫ້ພວກເຮົາໄດ້ຍິນສຽງຂອງພຣະຜູ້ສ້າງຂອງພວກເຮົາ."** [6]

ຄຳກ່າວຕໍ່ໄປນີ້ຂອງພຣະອັບດຸລບາຮາ ເຕືອນພວກເຮົາເຖິງຄວາມສຳຄັນທີ່ພວກເຮົາຈະເປີດສາຍຕາພາຍໃນຂອງພວກເຮົາ:

**"ການຮັບຮູ້ທາງຈິດວິນຍານ, ສາຍຕາພາຍໃນຂອງພວກເຮົາຕ້ອງເປີດອອກ ເພື່ອວ່າພວກເຮົາຈະສາມາດເຫັນສັນຍະລັກ ແລະ ຮ່ອງຮອຍຂອງຈິດວິນຍານຂອງພຣະຜູ້ເປັນເຈົ້າໃນທຸກສິ່ງ, ທຸກສິ່ງສາມາດສະທ້ອນໃຫ້ພວກເຮົາເຫັນແສງ ຂອງພຣະວິນຍານຂອງພຣະຜູ້ເປັນເຈົ້າ."** [7]

ແລະ ເຈົ້າອາດພົບວ່າເປັນສິ່ງທີ່ເປັນປະໂຫຍດທີ່ຈະໄຕ່ຕອງ ກ່ຽວກັບທັມມະລິຂິດຕໍ່ໄປນີ້ ຂອງພຣະອັບດຸລບາຮາ ທີ່ອະທິບາຍເຖິງຕົວຢ່າງໜຶ່ງຂອງການຮັບຮູ້ທາງຈິດວິນຍານ:

**"ແນວຄວາມຄິດເລື່ອງການທຳລາຍລ້າງ ແມ່ນເປັນປັດໄຈໜຶ່ງຂອງຄວາມເສື່ອມຂອງມະນຸດ, ເປັນ ສາເຫດຂອງການຫຼຸດຄ່າ ແລະຄວາມຕົກຕ່ຳຂອງມະນຸດ, ເປັນທີ່ມາຂອງຄວາມຢ້ານກົວ ແລະ ຄວາມເວທະນາ. ເປັນສິ່ງທີ່ນຳມາເຊິ່ງຄວາມກະແຈກກະຈາຍ ແລະ ຄວາມອ່ອນແອຂອງຄວາມຄິດຂອງມະນຸດ, ໃນຂະນະທີ່ການຮັບຮູ້ເຖິງການດຳລົງຢູ່ ແລະ ຄວາມຕໍ່ເນື່ອງໄດ້ຍົກລະດັບມະນຸດຂຶ້ນສູ່ ຄວາມປະເສີດຂອງອຸດົມການ, ກໍ່ຕັ້ງຮາກຖານຂອງຄວາມຈະເລີນກ້າວໜ້າຂອງມະນຸດ ແລະ ກະຕຸ້ນການພັດທະນາການຂອງຄຸນນະທັມແຫ່ງສະຫວັນ. ດັ່ງນັ້ນ, ເປັນໜ້າທີ່ຂອງມະນຸດທີ່ຈະປະຖິ້ມຄວາມຄິດ ກ່ຽວກັບຄວາມບໍ່ມີຕົວຕົນຢູ່ ແລະ ຄວາມຕາຍ, ເຊິ່ງເປັນພາບຈິນຕະນາການແທ້ຈິງ ແລະ ມອງເຫັນຕົນເອງມີຊີວິດຢູ່ຕະຫຼອດໄປ ແລະ ຄົງຢູ່ຊົ່ວນິລັນດອນ ໃນຈຸດປະສົງແຫ່ງສະຫວັນທີ່ສ້າງມະນຸດຂຶ້ນມາ. ມະນຸດຈະຕ້ອງຫັນໄປຈາກຄວາມຄິດທີ່ບັ່ນທອນຈິດວິນຍານ ເພື່ອວ່າວັນເວລານາທີທີ່ຜ່ານ ໄປມະນຸດຈະກ້າວໜ້າສູງຂຶ້ນ ແລະ ສູງຂຶ້ນໄປສູ່ການຮັບຮູ້ທາງຈິດວິນຍານ ແຫ່ງຄວາມຕໍ່ເນື່ອງຂອງການດຳລົງຢູ່ຢ່າງແທ້ຈິງຂອງມະນຸດ."** [8]

ຂໍໃຫ້ເຈົ້າລະບຸໃນຊ່ອງຫວ່າງຂ້າງລຸ່ມນີ້ໄດ້ບໍ່ວ່າ ການຮັບຮູ້ທາງຈິດວິນຍານຈະນຳມາເຊິ່ງມິຕິໃໝ່ຂອງຄວາມເຂົ້າໃຈຂອງມະນຸດທີ່ບໍ່ສາມາດເຂົ້າເຖິງໄດ້ ດ້ວຍການໃຊ້ພະລັງທຳມະດາຂອງຄວາມຄິດ ແລະ ຈິດໃຈໄດ້ແນວໃດແດ່?

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

## ຕອນທີ 6

ຫຼັງຈາກໄດ້ສຳຫຼວດເບິ່ງກ່ຽວກັບຄວາມຈຳເປັນໃນການຮັບຮູ້ທາງຈິດວິນຍານແລ້ວ, ຕອນນີ້ພວກເຮົາຈະຕ້ອງຖາມຕົນເອງວ່າ ພວກເຮົາຈະສາມາດພັດທະນາການຮັບຮູ້ນີ້ໄດ້ແນວໃດ. ແນ່ນອນວ່າ, ຄຳຖາມນີ້ບໍ່ແມ່ນຄຳຖາມທີ່ຕອບໄດ້ໂດຍງ່າຍ, ແລະ ພວກເຮົາພຽງແຕ່ສາມາດພິຈາລະນາແນວຄວາມຄິດບາງຢ່າງທີ່ເຊື່ອມໂຍງກັນ.

ເປັນທີ່ຊັດເຈນວ່າ ການຮັບຮູ້ທາງຈິດວິນຍານເປັນຄຸນນະສົມບັດຂອງຫົວໃຈທີ່ບໍລິສຸດ. ພຣະອັບດຸລບາຮາ ບອກພວກເຮົາວ່າ:

**"ຫົວໃຈຂອງມະນຸດບໍລິສຸດ ແລະ ໄດ້ຮັບການຊຳລະມົນທິນຫຼາຍເທົ່າໃດ, ຫົວໃຈນັ້ນກໍ່ຈະເຂົ້າໃກ້ພຣະຜູ້ເປັນເຈົ້າຫຼາຍເທົ່ານັ້ນ ແລະ ແສງແຫ່ງດວງຕາເວັນຂອງການດຳລົງຢູ່ຢ່າງແທ້ຈິງກໍ່ຈະປະກົດຂຶ້ນພາຍໃນຫົວໃຈນັ້ນ. ແສງນີ້ເຮັດໃຫ້ຫົວໃຈສຸກສະຫວ່າງດ້ວຍໄຟແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ, ໄຂປະຕູແຫ່ງຄວາມຮູ້ຂຶ້ນພາຍໃນຫົວໃຈເລົ່ານັ້ນ ແລະ ໄຂຮອຍປະທັບຂອງຄວາມເລິກລັບແຫ່ງສະຫວັນອອກ ເພື່ອວ່າການຄົ້ນພົບທາງຈິດວິນຍານຈະເປັນສິ່ງທີ່ເປັນໄປໄດ້."** [9]

ຄວາມຮູ້ຂອງພຣະຜູ້ເປັນເຈົ້າເປັນສິ່ງຈຳເປັນຢ່າງຍິ່ງ ສຳລັບການພັດທະນາການຮັບຮູ້ທາງຈິດວິນຍານ.

**"ການເຂົ້າໃຈຄວາມເປັນຈິງຂອງສິ່ງຕ່າງໆ ເຮັດໃຫ້ເກີດຄວາມໄດ້ປຽບທາງວັດຖຸໃນຂອບເຂດຄວາມເປັນຢູ່ ແລະ ນຳມາເຊິ່ງຄວາມກ້າວໜ້າຂອງອາລິຍະທຳພາຍນອກ, ແຕ່ຄວາມຮູ້ຂອງ**

**ພຣະຜູ້ເປັນເຈົ້າແມ່ນຈຸດປະສົງຂອງຄວາມກ້າວໜ້າ ແລະ ການດຶງດູດທາງຈິດວິນຍານ, ວິໄສທັດ ແລະ ຄວາມເຂົ້າໃຈທີ່ແທ້ຈິງ, ຄວາມສູງສົ່ງຂອງມະນຸດຊາດ, ການປາກົດຂອງອາລິຍະທັມອັນສັກສິດ, ການແກ້ໄຂສິນລະທັມ ແລະ ການສ່ອງສະຫວ່າງແຫ່ງຄວາມຢັ່ງຮູ້.”** [10]

ແລະ ເຫັນໄດ້ຊັດເຈນວ່າ ຄວາມຮັກຂອງພຣະຜູ້ເປັນເຈົ້າຈຳເປັນຢ່າງຂາດບໍ່ໄດ້ ຫາກສາຍຕາພາຍໃນຈະເປັນສິ່ງທີ່ຕ້ອງຖືກພັດທະນາຂຶ້ນມາ:

**“ໂອ ເພື່ອນຂອງເຮົາ! ຈົ່ງຂອບໃຈພຣະຜູ້ເປັນເຈົ້າທີ່ພຣະອົງຊົງສາຍແສງແຫ່ງສັນຍາລັກແຫ່ງຄວາມສະຫວ່າງສະໄຫວ ທີ່ສ່ອງແສງມາຈາກຕາເວັນແຫ່ງສັຈະທັມຂອງພຣະອົງ, ແລະ ການຊ່ວຍໃຫ້ພວກເຂົາໄດ້ຕື່ນຂຶ້ນມາ ແລະ ເຮັດໃຫ້ພວກເຂົາບໍລິສຸດດ້ວຍນ້ຳແຫ່ງຊີວິດ ແລະ ດ້ວຍໄຟໃນຄວາມຮັກຂອງພຣະຜູ້ເປັນເຈົ້າ.”** [11]

**“ຄວາມຮັກຂອງພຣະຜູ້ເປັນເຈົ້າຖືກເວົ້າເຖິງວ່າຄືກັນກັບໄຟ ຜ້າກັ້ງທີ່ກັ້ນພວກເຮົາອອກຈາກການດຳລົງຢູ່ທີ່ແທ້ຈິງແຫ່ງສະຫວັນກໍ່ຈະຖືກຈູດຖິ້ມໄປ, ແລະ ດ້ວຍການມອງເຫັນທີ່ຊັດເຈນພວກເຮົາຈຶ່ງສາມາດທີ່ຈະພະຍາຍາມຢ່າງໜັກແໜ້ນຕໍ່ໄປ ແລະ ໃນລະດັບທີ່ສູງຂຶ້ນເລື້ອຍໆ, ຈະເລີນກ້າວໜ້າຕໍ່ໄປໃນວິຖີແຫ່ງຄຸນນະທັມ ແລະ ຄວາມສັກສິດ, ແລະ ກາຍເປັນທົ່ນທາງແຫ່ງແສງສະຫວ່າງໃຫ້ແກ່ໂລກ.”** [12]

ເຈົ້າຈະພົບວ່າບົດເຝິກຫັດທາງລຸ່ມນີ້ ມີປະໂຫຍດໃນຂະນະທີ່ເຈົ້າໄຕ່ຕອງກ່ຽວກັບຄວາມສຳຄັນຂອງຂໍ້ຄວາມຂ້າງເທິງ.

1. ຂໍໃຫ້ຂຽນສອງສາມປະໂຫຍກ ເພື່ອອະທິບາຍວ່າແຕ່ລະສິ່ງຕໍ່ໄປນີ້ ຊ່ວຍເພີ່ມພູນການຮັບຮູ້ທາງຈິດວິນຍານໄດ້ແນວໃດແດ່?
   a. ຄວາມບໍລິສຸດຂອງຫົວໃຈ: ______________________________

   ______________________________

   ______________________________

   ______________________________

   b. ຄວາມຮູ້ຂອງພຣະຜູ້ເປັນເຈົ້າ: ______________________________

   ______________________________

   ______________________________

   ______________________________

   c. ຄວາມຮັກຂອງພຣະຜູ້ເປັນເຈົ້າ: ______________________________

2. ຈົ່ງຕັດສິນໃຈວ່າຂໍ້ຄວາມຕໍ່ໄປນີ້ຖືກ:

_____ໂດຍອາໄສການໃຊ້ເຫດຜົນພຽງຢ່າງດຽວ, ບໍ່ຕ້ອງມີຄວາມຊ່ວຍເຫຼືອຈາກຄຳສອນຂອງພຣະຜູ້ເປັນເຈົ້າ, ພວກເຮົາສາມາດໄຈ້ແຍກສິ່ງທີ່ຖືກອອກຈາກສິ່ງທີ່ຜິດໄດ້.

_____ຄວາມຮູ້ຂອງພຣະຜູ້ຊົງສະແດງທັມຂອງພຣະຜູ້ເປັນເຈົ້າ ແລະ ການເຊື່ອຟັງໃນຄຳສອນຂອງພຣະອົງ ເປັນສິ່ງທີ່ເຮັດໃຫ້ພວກເຮົາສາມາດຮັບຮູ້ສັດຈະທັມໄດ້.

_____ຄວາມບໍລິສຸດຂອງຫົວໃຈເຮັດໃຫ້ມະນຸດອ່ອນແອໄຮ້ດຽງສາ.

_____ຫົວໃຈບໍລິສຸດຫຼາຍເທົ່າໃດ, ຫົວໃຈນັ້ນກໍ່ຈະສ່ອງສະທ້ອນຄຸນສົມບັດແຫ່ງສະຫວັນໄດ້ດີຫຼາຍຂຶ້ນເທົ່ານັ້ນ, ເຊິ່ງຄຸນສົມບັດເລົ່ານີ້ເປັນແສງສະຫວ່າງທີ່ຊ່ວຍຫົວໃຈນັ້ນ ໄດ້ຮັບຮູ້ການດຳລົງຢູ່ຢ່າງແທ້ຈິງພາຍໃນຂອງສິ່ງຕ່າງໆ.

_____ໄຟແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ໄດ້ເຜົາໄໝ້ມ່ານແຫ່ງຕົວຕົນອອກໄປ, ເຮັດໃຫ້ສາຍຕາພາຍໃນມອງເຫັນຄວາມຈິງໄດ້.

_____ພະລັງແຫ່ງຄວາມຮັກຂອງພຣະຜູ້ເປັນເຈົ້າ ຊ່ວຍເຫຼືອພວກເຮົາໃຫ້ພະຍາຍາມດ້ວຍການມອງເຫັນທີ່ຊັດເຈນ ເພື່ອບັນລຸພຣະປະສົງ ແລະ ຈຸດມຸ່ງໝາຍຂອງພຣະອົງ.

_____ຄວາມຢ້ານກົວການດັບສູນ ເຮັດໃຫ້ຄວາມສາມາດທາງສະຕິປັນຍາ ແລະ ຈິດວິນຍານຂອງພວກເຮົາອ່ອນແອລົງ, ດັ່ງນັ້ນ ການຮັບຮູ້ທາງຈິດວິນຍານຈະແຫຼມຄົມຂຶ້ນ ເມື່ອພວກເຮົາເຊື່ອໝັ້ນ ກ່ຽວກັບຄວາມຕໍ່ເນື່ອງຂອງການດຳລົງຢູ່ຂອງພວກເຮົາ.

_____ການຮັບໃຊ້ຢ່າງບໍ່ເຫັນແກ່ຕົວ ຕໍ່ທໍລະນີປະຕູແຫ່ງສະຫວັນ ຈະຊ່ວຍໃຫ້ພວກເຮົາເຫັນການດຳລົງຢູ່ຢ່າງແທ້ຈິງພາຍໃນຂອງສິ່ງຕ່າງໆ.

_____ດ້ວຍສາຍຕາພາຍໃນ, ພວກເຮົາສາມາດເຫັນເຖິງການຮັບຮອງຈາກສະຫວັນໄດ້.

## ຕອນທີ 7

ພຣະວັດຈະນະສຸດທ້າຍ ໃນຕອນກ່ອນໜ້ານີ້ຊີ້ໃຫ້ເຫັນເຖິງແນວຄິດພື້ນຖານກ່ຽວກັບຄວາມສຳພັນຂອງການສຳຫຼວດຂອງເຮົາຄື - ມີຜ້າກັ້ງຈຳນວນຫຼາຍປິດກັ້ນສາຍຕາພາຍໃນ ຈາກການເບິ່ງເຫັນຄວາມເປັນຈິງຂອງສິ່ງຕ່າງໆ. ການພັດທະນາຄວາມຮັບຮູ້ທາງຈິດວິນຍານ ນຳໄປສູ່ການກຳຈັດຜ້າມ້ານດັ່ງກ່າວອອກ. ພຣະອັບດຸລບາຮາ ຊົງກ່າວວ່າ:

**"ຂອງຂວັນທັງຫຼາຍຂອງພຣະຜູ້ເປັນເຈົ້າ ທີ່ສະແດງຢູ່ຢ່າງຊັດເຈນໃນຊີວິດທີ່ພິເສດທຸກຊີວິດນັ້ນບາງຄັ້ງຖືກປິດບັງໂດຍຜ້າກັ້ງແຫ່ງການເຫັນ ຂອງຄວາມຄິດທີ່ຈະຕ້ອງດັບສູນໄປ ເຊິ່ງເຮັດໃຫ້**

ມະນຸດຕາບອດ ແລະ ບໍ່ມີຄວາມສາມາດທາງຈິດວິນຍານ, ແຕ່ເມື່ອເປືອກນອກຖືກແກະອອກ ແລະຜ້າກັ້ງຖືກຈີກຂາດ, ເມື່ອນັ້ນສັນຍາລັກອັນຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ຈະປະກົດໃຫ້ເຫັນ ແລະ ມະນຸດກໍ່ຈະເຫັນແສງສະຫວ່າງອັນເປັນນິລັນດອນສາດສ່ອງທົ່ວທັງໂລກ. ຂອງຂວັນຂອງພຣະຜູ້ເປັນເຈົ້ານັ້ນຄົງຢູ່ຕະຫຼອດເວລາ. ຄຳສັນຍາແຫ່ງສະຫວັນແມ່ນດຳລົງຢູ່ຕະຫຼອດການ. ຄວາມຮັກແພງຂອງພຣະຜູ້ເປັນເຈົ້ານັ້ນຄອບຄຸມທຸກສິ່ງ, ແຕ່ຖ້າສາຍຕາແຫ່ງຄວາມຮັບຮູ້ຂອງຈິດວິນຍານຂອງມະນຸດ ຍັງຄົງຖືກປິດກັ້ນແລະມືດມົນດ້ວຍຜ້າກັ້ງຕ່າງໆ, ມະນຸດກໍ່ຈະຖືກນຳໄປສູ່ການປະຕິເສດສັນຍາລັກອັນເປັນສາກົນທັງຫຼາຍ ແລະ ຖືກສະກັດກັ້ນອອກຈາກການສະແດງໃຫ້ເຫັນເຖິງກະລຸນາທິຄຸນແຫ່ງສະຫວັນ. ດັ່ງນັ້ນ, ພວກເຮົາຈຶ່ງຕ້ອງພະຍາຍາມດ້ວຍຫົວໃຈ ແລະ ຈິດວິນຍານ ເພື່ອໃຫ້ຜ້າກັ້ງທີ່ປິດດວງຕາຂອງສາຍຕາພາຍໃນ ຈະໄດ້ຖືກກຳຈັດອອກໄປ ແລະ ພວກເຮົາກໍ່ຈະສັງເກດເຫັນການປະກົດຂອງສັນຍະລັກຂອງພຣະຜູ້ເປັນເຈົ້າ, ມອງເຫັນພຣະກະລຸນາທິຄຸນອັນເລິກລັບຂອງພຣະອົງ ແລະ ໄດ້ຮັບຮູ້ວ່າເຄື່ອງອຳນວຍຄວາມສຸກທາງວັດຖຸ ນັ້ນ ເມື່ອປຽບທຽບກັບຄວາມກະລຸນາທາງຈິດວິນຍານແລ້ວ ກໍ່ບໍ່ມີຄ່າຫຍັງເລີຍ.” [13]

“ທຸກດວງວິນຍານຕ້ອງພະຍາຍາມໃຫ້ຜ້າກັ້ງ ທີ່ປິດຕາມະນຸດຖືກຈີກຂາດອອກ ແລ້ວກໍຈະໄດ້ເຫັນດວງຕາເວັນ ດ້ວຍເຫດນີ້ດວງໃຈແລະສາຍຕາກໍ່ຈະສະຫວ່າງຂຶ້ນ.”

ການຕີຄວາມຕາມຕົວອັກສອນ, ຈິນຕະນາການອັນໄຮ້ສາລະ, ການຮຽນແບບຢ່າງມອງບໍ່ເຫັນຕົນເອງ, ການສະແຫວງຫາຕັນຫາ ແລະ ກິເລດ, ຄວາມໂລບ ແລະ ຄວາມອິດສາ, ແລະ ຄວາມອັກຄະຕິ - ສິ່ງເລົ່ານີ້ເປັນຜ້າກັ້ງໄດ້ທີ່ກ່າວໄວ້ໃນພຣະທັມມະລິຂິດ. ດັ່ງນັ້ນ, ເຊັ່ນດຽວກັນ, ສິ່ງວັດຖຸຕ່າງໆຂອງພວກເຮົາກໍສາມາດເປັນເໝືອນຜ້າກັ້ງໄດ້.

“ຄຳອະທິຖານຂອງຂ້າພະເຈົ້າສຳລັບເຈົ້າຄື ຂໍໃຫ້ຄວາມສາມາດ ແລະ ຄວາມໄຝ່ຝັນທາງຈິດວິນຍານຂອງເຈົ້າເພີ່ມພູນຂຶ້ນທຸກວັນ ແລະ ຂໍໃຫ້ເຈົ້າບໍ່ມີວັນຍອມໃຫ້ການຮັບຮູ້ທາງວັດຖຸ ມາປິດບັງຄວາມຮຸ່ງເຮືອງຂອງການສ່ອງສະຫວ່າງແຫ່ງສະຫວັນ ໄປຈາກດວງຕາຂອງເຈົ້າ.” [15]

“ໜຶ່ງໃນຜ້າກັ້ງເລົ່ານັ້ນຄື: ການຕີຄວາມໝາຍຕາມຕົວອັກສອນ, ການຮັບຮູ້ເຖິງຄວາມໝາຍສຳຄັນພາຍໃນນັ້ນ ຈຳເປັນຕ້ອງມີຄວາມພະຍາຍາມຢ່າງມະຫາສານ.” [16]

“ຂໍຄວາມສັນລະເສີນຈົ່ງມີແດ່ພຣະຜູ້ເປັນເຈົ້າ ທີ່ເຈົ້າໄດ້ພົບທົນທາງໄປສູ່ອານາຈັກແຫ່ງຄວາມສະຫງ່າງາມອັນວິເສດທັງຫຼາຍ, ແລະ ໄດ້ຈີກຜ້າກັ້ງແຫ່ງຈິນຕະນາການອັນໄຮ້ສາລະລົງ ແລະ ໄດ້ຮູ້ຈັກແກ່ນແທ້ຂອງຄວາມເລິກລັບພາຍໃນ.” [17]

"ຂ້າພະເຈົ້າຂໍອ້ອນວອນພຣະຜູ້ເປັນເຈົ້າດ້ວຍຄວາມຖ່ອມຕົນຢ່າງທີ່ສຸດ, ຂໍຊົງປົດເປື້ອງຜ້າກັ້ງອອກຈາກດວງຕາພາຍໃນຂອງເຈົ້າ; ເພື່ອເປີດເຜີຍສັນຍະລັກອັນຍິ່ງໃຫຍ່ຂອງພຣະອົງ ແລະ ຂໍຊົງເຮັດໃຫ້ພວກເຂົາເປັນທຸງແຫ່ງການນຳທາງ, ແຍກຕົວອອກຈາກທຸກສິ່ງນອກຈາກພຣະອົງ, ສ່ອງສະຫວ່າງຂຶ້ນດ້ວຍໄຟແຫ່ງຄວາມຮັກຂອງພຣະອົງ, ຫຍຸ້ງຢູ່ກັບການສັນລະເສີນພຣະອົງ, ແລະ ເຂົ້າໃຈໃນການດຳລົງຢູ່ຢ່າງແທ້ຈິງຂອງສິ່ງຕ່າງໆ, ເພື່ອວ່າພວກເຂົາຈະໄດ້ເຫັນດ້ວຍຕາຂອງພວກເຂົາ, ໄດ້ຍິນດ້ວຍຫູຂອງພວກເຂົາເອງ, ແລະ ບໍ່ຮຽນແບບບັນພະບູລຸດຄົນໃດຂອງເຈົ້າ. ເຈົ້າຈົ່ງມອງເບິ່ງສາສະໜາຂອງພຣະຜູ້ເປັນເຈົ້າດ້ວຍຄວາມເຂົ້າໃຈ, ເພາະວ່າປະຊາຊົນທັງຫຼາຍຖືກຫຸ້ມຫໍ່ດ້ວຍຜ້າກັ້ງອັນມືດມົນ." [18]

"... ເພາະວ່າບໍ່ມີຜ້າກັ້ງຜືນໃດຈະໃຫຍ່ເກີນກວ່າຄວາມຫຍິ່ງທະນົງຕົນ ແລະ ບໍ່ວ່າຜ້າກັ້ງນັ້ນຈະບາງເທົ່າໃດກໍ່ຕາມ ມັນກໍ່ຈະປົກຄຸມມະນຸດໄວ້ຈົນໝົດໃນທີ່ສຸດ, ແລະ ສະກັດກັ້ນມະນຸດຈາກການໄດ້ຮັບສ່ວນແບ່ງ ຈາກພຣະກະລຸນາທິຄຸນແຫ່ງສະຫວັນ." [19]

"ຢ່າງໃດກໍ່ຕາມການໄລ່ຄຸບຕາມກິເລດ ແລະ ຄວາມປາດຖະໜາຈະປົກຄຸມດວງຕາໄວ້ໃນຜ້າກັ້ງນັບພັນຜືນທີ່ຜຸດຂຶ້ນມາຈາກຫົວໃຈ ເຊັ່ນກັນກໍເພື່ອຈະປິດກັ້ນທັງສາຍຕາ ແລະຄວາມຮັບຮູ້." [20]

"ໂອ ບຸດແຫ່ງຄວາມເຂົ້າໃຈ! ຫາກເປືອກຕາແມ່ນວ່າຈະບອບບາງພຽງໃດ ກໍ່ສາມາດກີດກັ້ນດວງຕາພາບນອກຂອງມະນຸດຈາກການມອງເບິ່ງໂລກ ແລະ ທຸກສິ່ງທີ່ຢູ່ໃນນັ້ນໄດ້, ລອງພິຈາລະນາວ່າຈະເກີດຫຍັງຂຶ້ນ ຫາກຜ້າກັ້ງແຫ່ງຄວາມໂລບ ມາປົກຄຸມດວງຕາດ້ານໃນຂອງເຂົາ. ຈົ່ງກ່າວວ່າ: ໂອ ປະຊາຊົນ! ຄວາມມືດມົນແຫ່ງຄວາມໂລບ ແລະ ຄວາມອິດສາບົດບັງຄວາມສະຫວ່າງຂອງດວງວິນຍານ ແມ່ນວ່າໃນຂະນະທີ່ເມກບົດບັງແສງຂອງດວງຕາເວັນ." [21]

"ຂ້າພະເຈົ້າຫວັງວ່າເຈົ້າຈະຫັນໄປເບິ່ງດວງອາທິດແຫ່ງສັດຈະທັມ ດ້ວຍສາຍຕາທີ່ບໍ່ມົວໝອງ, ໂດຍບໍ່ເບິ່ງແຕ່ສິ່ງຕ່າງໆທາງໂລກ ...; ໃຫ້ດວງຕາເວັນປະທານພາລະກຳລັງຂອງພຣະອົງແກ່ເຈົ້າ, ແລ້ວເມກແຫ່ງອັກຄະຕິຈະບໍ່ບັງແສງຂອງພຣະອົງຈາກດວງຕາຂອງເຈົ້າ! ແລ້ວດວງຕາເວັນຈະບໍ່ມີເມກສຳລັບເຈົ້າ." [22]

ໃນຂໍ້ຄວາມທຳອິດຂ້າງເທິງ, ພຣະອັບດຸລບາຮາ ບອກພວກເຮົາວ່າ: "ຂອງຂວັນຂອງພຣະຜູ້ເປັນເຈົ້າທັງໝົດສະແດງໃຫ້ເຫັນສະເໝີ", "ຄຳໝັ້ນສັນຍາແຫ່ງສະຫວັນຈະມີຢູ່ຕະຫຼອດໄປ", ແລະ "ສິ່ງທີ່ພຣະອົງໂປດປານແມ່ນສິ່ງຕ່າງໆທີ່ຢູ່ອ້ອມຮອບພຣະອົງ". ພຣະອົງອະທິບາຍເພີ່ມເຕີມວ່າ, "ສາຍຕາແຫ່ງຄວາມຮັບຮູ້ຂອງຈິດວິນຍານຂອງມະນຸດ ຍັງຄົງຖືກປິດກັ້ນແລະມືດມົນດ້ວຍຜ້າກັ້ງຕ່າງໆ", ເຂົາກໍຈະຖືກຊັກນຳໃຫ້ປະຕິເສດ ສັນຍາລັກອັນຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ແລະ ຈະຖືກຕັດຮອນຈາກຄວາມກະລຸນາອັນປະຈັກແຈ້ງເລົ່ານີ້.

1. ເຈົ້າຄິດວ່າແມ່ນຫຍັງຄືຂອງຂວັນແລະພຣະກາລຸນາທິຄຸນທີ່ ພຣະອັບດຸລບາຮາໄດ້ອ້າງອີງເຖິງ?

2. ຕອນນີ້, ຂໍໃຫ້ເຈົ້າອະທິບາຍວ່າຜ້າກັ້ງທັງຫຼາຍຂ້າງລຸ່ມນີ້ ຈະກີດກັ້ນບໍ່ໃຫ້ພວກເຮົາໄດ້ຮັບຂອງຂວັນ ແລະ ພຣະກາລຸນາທິຄຸນທັງຫຼາຍເລົ່ານີ້ໄດ້ແນວໃດ?

ກ. ການຕີຄວາມຕາມຕົວອັກສອນ:

ຂ. ຈິນຕະນາການອັນໄຮ້ສາລະ:

ຄ. ການຮຽນແບບຢ່າງມອງບໍ່ເຫັນ:

ງ. ຕົນເອງ:

ຈ. ການສະແຫວງຫາຕັນຫາ ແລະ ກິເລດ:

ສ. ຄວາມໂລບ ແລະ ຄວາມອິດສາ:

ຊ. ຄວາມອັກຄະຕິ:

3. ຂໍໃຫ້ຕັດສິນໃຈວ່າຂໍ້ຄວາມຕໍ່ໄປນີ້ຖືກຕ້ອງຫຼືບໍ່:

_____ດວງຕາພາຍໃນຂອງພວກເຮົາຮັບຮູ້ໄດ້ ເຖິງຈະບໍ່ໄດ້ຮັບຄວາມຊ່ວຍເຫຼືອຈາກສາຍຕາແຫ່ງຄວາມຄິດ ທີ່ຈະຕ້ອງດັບສູນໄປຂອງພວກເຮົາ.

_____ການຮັບຮູ້ທາງກາຍະພາບ ແລະ ຄວາມສາມາດທາງຄວາມຄິດຕ່າງໆຂອງພວກເຮົາ ມັກຈະຂັດຂວາງພວກເຮົາຈາກການຮັບຮູ້ເຖິງການດຳລົງຢູ່ຢ່າງແທ້ຈິງທາງຈິດວິນຍານສະເໝີ.

_____ການຊຳລະລ້າງການຮັບຮູ້ທາງກາຍະພາບຂອງພວກເຮົາໃຫ້ບໍລິສຸດ ພົ້ນຈາກທຸກສິ່ງທີ່ບໍ່ກ່ຽວກັບພຣະຜູ້ເປັນເຈົ້າ ຊ່ວຍໃຫ້ຄວາມສາມາດພາຍໃນຂອງພວກເຮົາສາມາດຮັບຮູ້ສັດຈະທັມໄດ້.

4. ສຸດທ້າຍນີ້, ຂໍໃຫ້ໄຕ່ຕອງຂໍ້ຄວາມລຸ່ມນີ້ ຈາກພຣະທັມມະລິຂິດຂອງພຣະອັບດຸລບາຮາ ເພື່ອບັນລຸເຖິງຄວາມຮັບຮູ້ເພີ່ມເຕີມ ໃນເລື່ອງລັກສະນະຂອງຜ້າກັ້ງທັງຫຼາຍ ທີ່ສາມາດຂັດຂວາງການຮັບຮູ້ທາງຈິດວິນຍານໄດ້ ແລະ ເຈົ້າອາດປາດຖະໜາທີ່ຈະທ່ອງຈຳຂໍ້ຄວາມນີ້.

**"ແທ້ທີ່ຈິງ, ເຈົ້າຈົ່ງຮູ້ໄວ້ວ່າ ມີຜ້າກັ້ງຢູ່ຢ່າງຫຼວງຫຼາຍທີ່ປົກຄຸມສັດຈະທັມຢູ່, ເຊິ່ງເປັນຜ້າກັ້ງທີ່ມືດມົນ, ເຖິງຈະແມ່ນຜ້າກັ້ງທີ່ບາງເບົາ ແລະ ໂປ່ງໃສ, ເຖິງຈະແມ່ນສິ່ງປົກຄຸມແສງທັມສະຫວັນ, ເປັນພາບທີ່ເຮັດໃຫ້ຕາມືດມົວຄືຕາເວັນຖືກປົກຄຸມດ້ວຍແສງຂອງຕົນເອງ, ໃນຍາມທີ່ພວກເຮົາເບິ່ງດວງຕາເວັນ, ສາຍຕາຂອງພວກເຮົາກໍ່ຈະມືດບອດ ແລະ ດວງຕາກໍ່ຈະມືດມົວໄປໄລຍະໜຶ່ງ.**

**"ຂ້າພະເຈົ້າອ້ອນວອນຂໍພຣະຜູ້ເປັນເຈົ້າ ຂໍຊົງປົດຜ້າກັ້ງທັງໝົດອອກ ແລະ ເຮັດໃຫ້ດວງຕາທຸກດວງຄຸ້ນເຄີຍກັບແສງ, ເພື່ອມະນຸດຈະບໍ່ຖືກປົດກັ້ນຈາກການໄດ້ເຫັນດວງຕາເວັນແຫ່ງສັດຈະທັມ."** [23]

## ຕອນທີ 8

ຂ້າງລຸ່ມນີ້ແມ່ນບົດຮຽນບົດໜຶ່ງຈາກບັນດາບົດຮຽນຈາກປຶ້ມ *ປະກາຍແຫ່ງຄວາມຫວັງ*, ເປັນປຶ້ມທີ່ໄດ້ຮັບແຮງບັນດານໃຈຈາກບາຮາຍ ເຊິ່ງສຶກສາໂດຍເຍົາວະຊົນ. ປຶ້ມເລົ່າເລື່ອງລາວຂອງຄິໂບ່ມີ, ເດັກຊາຍອາຍຸສິບສອງປີ ທີ່ຫຼັງຈາກສູນເສຍພໍ່ແມ່ຂອງລາວ, ກໍອອກເດີນທາງຊອກຫາເອື້ອຍຂອງເຂົາ. ຄິໂບ່ມີ ຢູ່ໃນເຜົ່າອາດຸມບູ. ພໍ່ແມ່ຂອງເຂົາຖືກຂ້າທ່າມກາງຄວາມຂັດແຍ່ງ ໂດຍສະມາຊິກຂອງຊົນເຜົ່າຄຸມ

ກຸ. ບົດຮຽນກ່ອນນີ້ກ່າວເຖິງການປະເຊີນໜ້າຂອງເຂົາ ກັບພໍ່ຕູ້ຄົນໜຶ່ງທີ່ມາຈາກຊົນເຜົ່າຄຸນກຸ ເຊິ່ງປະຕິບັດກັບເຂົາດ້ວຍຄວາມເມດຕາຢ່າງຍິ່ງ. ຕອນນີ້ເຂົາພົບກັບກຸ່ມທະຫານກຸ່ມໜຶ່ງຈາກຊົນເຜົ່າຂອງເຂົາເອງ.

ເນື່ອງດ້ວຍຄິໂບ່ມິໄດ້ກິນອາຫານ ລາວຈຶ່ງມີກຳລັງທີ່ຈະເດີນທາງໄດ້ໄວຂຶ້ນ. ເມື່ອຕອນທີ່ລາວແລ່ນໜີອອກມາຈາກໝູ່ບ້ານ ລາວຮູ້ສຶກຢ້ານ ແລະ ໃຈຮ້າຍ. ແຕ່ຕອນນີ້ຄວາມຮູ້ສຶກດີໆ ທີ່ລາວເຄີຍມີໃຫ້ຜູ້ອື່ນສະເໝີເລີ່ມກັບມາອີກຄັ້ງໜຶ່ງ. ພໍ່ຕູ້ຄົນນີ້ເປັນຊາວຄຸນກຸ ແຕ່ລາວເປັນຄົນທີ່ມີຄວາມເມດຕາ ແລະ ຮອບຮູ້. ເຂົາໄດ້ແບ່ງປັນອາຫານຂອງເຂົາ. ຄຳເວົ້າທີ່ເຂົາເວົ້າມີຄວາມງົດງາມ ແລະ ເຕັມໄປດ້ວຍຄວາມຫວັງ "ເຮົາມີທາງເລືອກ ເຮົາຖືກສ້າງຂຶ້ນມາເພື່ອສະແດງຄວາມຮັກບໍ່ແມ່ນຄວາມກຽດຊັງ."

ຄິໂບ່ມິໄດ້ສືບຕໍ່ຍ່າງໄປຕາມແມ່ນ້ຳເພື່ອໄປເມືອງນານກາຕາ. ຫຼັງຈາກຍ່າງໄປໄດ້ຂະນະ ໜຶ່ງລາວໄດ້ຍິນສຽງ ແລະ ລາວຈຶ່ງຟ້າວໄປລີ້ຢູ່ຫຼັງຕົ້ນໄມ້ຕົ້ນໜຶ່ງ. ມີຊາຍໜຸ່ມກຸ່ມໜຶ່ງກຳລັງໃກ້ເຂົ້າມາ. ພວກເຂົາກຳລັງລົມກັນໃນພາສາອາດຸມບູ. ຄິໂບ່ມິດີໃຈທີ່ໄດ້ຍິນພາສາຂອງຕົນເອງ ເຂົາຈຶ່ງຄ່ອຍໆຍ່າງອອກມາຈາກຫຼັງຕົ້ນໄມ້. ຊາຍເລົ່ານີ້ໃສ່ຊຸດທະຫານຢູ່. ພວກເຂົາເປັນທະຫານໃນກອງທັບຝ່າຍກະບົດອາດຸມບູ. ບາງຄົນມີ ອາຍຸນ້ອຍພໍສົມຄວນ ແລະ ມີຄົນໜຶ່ງເບິ່ງຄືຈະມີອາຍຸເທົ່າກັນກັບຄິໂບ່ມິ ເມື່ອທະຫານກຸ່ມນັ້ນເຫັນຄິໂບ່ມິ ພວກເຂົາຈຶ່ງຢຸດ ແລະ ເລັງປືນມາທາງເຂົາ "ດຽວກ່ອນ!" ຄິໂບ່ມິເວົ້າຂຶ້ນ. "ຂ້ອຍແມ່ນຊາວອາດຸມບູຄືກັນກັບພວກເຈົ້າທັ້ນແຫຼະ."

"ເຈົ້າມາເຮັດຫຍັງຢູ່ບ່ອນນີ້ຄົນດຽວ?" ຫົວໜ້າກອງທະຫານເວົ້າຂຶ້ນຢ່າງໃຈຮ້າຍ.

ຄິໂບ່ມິຕອບ: "ພວກຄຸນກຸໂຈມຕີໝູ່ບ້ານຂອງເຮົາ ແລະ ຂ້າພໍ່ແມ່ຂອງຂ້ອຍ, ຂ້ອຍຈຶ່ງໜີໄປໃຫ້ໄກ."

"ຖ້າຢ່າງນັ້ນກໍ່ມາ, ມາຮ່ວມກັບພວກເຮົາ!" ຫົວໜ້າເວົ້າຂຶ້ນ. "ເຮົາຕ້ອງເຮັດໃຫ້ພວກຄຸນກຸໄດ້ຮັບບົດຮຽນ. ຕ້ອງເຮັດໃຫ້ພວກມັນຊົດໃຊ້ໃນສິ່ງທີ່ພວກມັນໄດ້ເຮັດໄວ້ກັບຄອບຄົວຂອງເຈົ້າ."

ຄິໂບ່ມິກຳລັງຖືກໂນ້ມນ້າວຈິດໃຈ. ລາວຄິດຢູ່ໜ້ອຍໜຶ່ງ ແລະ ກຳລັງຈະຕອບຕົກລົງ. ແຕ່ແລ້ວທະຫານທີ່ເປັນເດັກກໍ່ກ້າວອອກມາ ແລະ ຍື່ນມືມາທີ່ຄິໂບ່ມິ, ຄິໂບ່ມິເບິ່ງເຂົ້າໄປທີ່ດວງຕາຂອງເດັກຄົນນັ້ນ. ຄວາມຮູ້ສຶກສິ້ນຫວັງໃນຕາຄູ່ນັ້ນໄດ້ລົບກວນຈິດໃຈຂອງຄິໂບ່ມິຫຼາຍ. ລາວລັງເລໃຈ "ຂ້ອຍອາດເຂົ້າຮ່ວມກັບພວກເຈົ້າໃນວັນຂ້າງໜ້າ" ລາວເວົ້າຂຶ້ນດ້ວຍນ້ຳສຽງທີ່ສັ່ນ "ແຕ່ຕອນນີ້ຂ້ອຍເອງຕ້ອງໄປຕາມຫາເອື້ອຍຂອງຂ້ອຍກ່ອນ."

ຂະນະທີ່ທະຫານກຸ່ມນັ້ນຍ່າງຈາກໄປ, ທະຫານຄົນໜຶ່ງຫັນມາ ແລະ ເວົ້າຂຶ້ນວ່າ: "ຈົ່ງຈື່ໄວ້! ການຕອບໂຕ້ດ້ວຍການສູ້ຮົບຄືຫົນທາງດຽວເທົ່ານັ້ນ." ແຕ່ຄິໂບ່ມິກໍ່ບໍ່ໄດ້ເວົ້າຕອບແຕ່ຢ່າງໃດ.

**ຄຳຖາມ**

1. ຄິໂບ່ມິຮູ້ສຶກແນວໃດໃນຕອນທີ່ລາວໜີອອກຈາກໝູ່ບ້ານຂອງລາວໄປ?
2. ດ້ວຍເຫດໃດຄວາມຮູ້ສຶກຂອງລາວຈຶ່ງໄດ້ປ່ຽນໄປ ຫຼັງຈາກທີ່ໄດ້ພົບກັບພໍ່ຕູ້ຄົນນັ້ນ?
3. ດ້ວຍເຫດໃດຄິໂບ່ມິຈຶ່ງລີ້ຢູ່ຫຼັງຕົ້ນໄມ້?
4. ບັນດາຊາຍໜຸ່ມທີ່ສວມໃສ່ຊຸດເຄື່ອງແບບທີ່ຄິໂບ່ມິພົບເຫັນແມ່ນຜູ້ໃດ?
5. ຫົວໜ້າກຸ່ມທະຫານຂໍໃຫ້ຄິໂບ່ມິເຮັດຫຍັງ?
6. ຄິໂບ່ມິເຫັນຫຍັງໃນສາຍຕາຂອງທະຫານທີ່ເປັນເດັກຄົນນັ້ນ?

**ກິດຈະກຳ**

1. ຄິໂບ່ມິເຫັນຄວາມສິ້ນຫວັງໃນດວງຕາຂອງທະຫານທີ່ເປັນເດັກຄົນນັ້ນ, ຜູ້ເຊິ່ງເຕັມໄປດ້ວຍຄວາມຢ້ານ ແລະ ຄວາມຄຽດແຄ້ນເຊັ່ນດຽວກັບຕົວເອງ, ເຂົາໄດ້ເລືອກເສັ້ນທາງຂອງການຕໍ່ສູ້ ແລະ ຂ້າຟັນຜູ້ອື່ນ. ເຮົາທຸກຄົນມີຊ່ວງເວລາແຫ່ງຄວາມເສຍໃຈ ແລະ ສິ້ນຫວັງ. ໃນຊ່ວງເວລາເຊັ່ນນັ້ນ ເຮົາບໍ່ຄວນເລືອກຫົນທາງທີ່ມືດມົນ, ແຕ່ເຮົາຄວນຊອກຫາຫົນທາງທີ່ມີແສງສະຫວ່າງທີ່ໄດ້ກັກເກັບຄວາມຫວັງໄວ້. ຂໍໃຫ້ອ່ານ, ໄຕ່ຕອງ ແລະ ທຳສະມາທິໃນບົດອະທິຖານຕໍ່ໄປນີ້:

   **"ພຣະອົງຄືພຣະຜູ້ຊົງເຫັນໃຈ, ພຣະຜູ້ຊົງອາລີ! ໂອຂ້າແດ່ພຣະຜູ້ເປັນເຈົ້າ, ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ! ພຣະອົງຊົງເຫັນຂ້າພະເຈົ້າ, ພຣະອົງຊົງຮູ້ຈັກຂ້າພະເຈົ້າ, ພຣະອົງຊົງເປັນຮົ່ມໄມ້ຊາຍຄາ ແລະ ທີ່ພັກພິງຂອງຂ້າພະເຈົ້າ. ຂ້າພະເຈົ້າບໍ່ເຄີຍ ແລະ ຈະບໍ່ສະແຫວງຫາຜູ້ໃດນອກຈາກພຣະອົງ, ຂ້າພະເຈົ້າບໍ່ເຄີຍ ແລະ ຈະບໍ່ເດີນໃນວິຖີໃດນອກຈາກວິຖີແຫ່ງຄວາມຮັກຂອງພຣະອົງ. ໃນຍາມຄ່ຳຄືນທີ່ມືດມິດ ແລະ ສິ້ນຫວັງດວງຕາຂອງຂ້າພະເຈົ້າ ລໍຖ້າຮຸ່ງເຊົ້າຂອງພຣະກະລຸນາທິຄຸນອັນບໍ່ຮູ້ສິ້ນຂອງພຣະອົງ ດ້ວຍຄວາມຫວັງ ແລະ ໃນຍາມຮຸ່ງອາລຸນແຈ້ງ ວິນຍານທີ່ອ່ອນແຮງຂອງຂ້າພະເຈົ້າກໍ່ກັບມາສົດຊື່ນ ແລະ ເຂັ້ມແຂງ ດ້ວຍການລະນຶກເຖິງຄວາມງາມແລະ ຄວາມສົມບູນເລີດຂອງພຣະອົງ."**

   ເຈົ້າອາດຈະປາຖະໜາທີ່ຈະທ່ອງຈຳບົດອະທິຖານຂ້າງເທິງ.

2. ຂໍໃຫ້ພິຈາລະນາແຕ່ລະກໍລະນີຕໍ່ໄປນີ້, ແລ້ວຕັດສິນໃຈວ່າຄວາມຄິດແລະການກະທຳ ຂໍ້ໃດນຳມາເຊິ່ງຄວາມສິ້ນຫວັງ ແລະ ຂໍ້ໃດຊ່ວຍໃຫ້ເຮົາມາມີຄວາມຫວັງ:
   ກ. ເຈົ້າເຮັດຄະແນນໄດ້ໜ້ອຍໃນຂໍ້ສອບເສັງວິຊາໃດວິຊາໜຶ່ງ.

| | ຄວາມຫວັງ | ສິ້ນຫວັງ |
|---|---|---|
| - ເຈົ້າລົ້ມເລີກຄວາມຕັ້ງໃຈທີ່ຈະອ່ານໜັງສື ແລະ ໃຊ້ເວລາ | ☐ | ☐ |

ສ່ວນໃຫ່ຍກັບການຫຼິ້ນ.

- ເຈົ້າບອກຕົວເອງວ່າເຈົ້າໂງ່. ☐ ☐
- ເຈົ້າຂໍໃຫ້ນັກຮຽນຄົນອື່ນໆຊ່ວຍເຫຼືອເຈົ້າ. ☐ ☐
- ເຈົ້າມີຄວາມອົດທົນກັບຕົວເອງ ແລະ ພະຍາຍາມຫຼາຍຂຶ້ນ ເພື່ອທີ່ຈະທຳຄວາມເຂົ້າໃຈກັບວິຊານັ້ນ. ☐ ☐
- ເຈົ້າໂທດຄູທີ່ບໍ່ຊ່ວຍເຫຼືອໃຫ້ເຈົ້າເຂົ້າໃຈຕື່ມອີກ. ☐ ☐

ຂ. ເຈົ້າຮູ້ສຶກເຫງົາ ແລະ ເຈົ້າເບິ່ງຄືວ່າບໍ່ມີໝູ່ເລີຍ.

ຄວາມຫວັງ ສິ້ນຫວັງ

- ເຈົ້າເກັບຕົວຢູ່ຄົນດຽວ ແລະ ຮູ້ສຶກເສຍໃຈ. ☐ ☐
- ເຈົ້າໃຊ້ເວລາຄິດກ່ຽວກັບຕົວເອງໜ້ອຍລົງ ແລະ ເອົາໃຈໃສ່ ຜູ້ອື່ນຫຼາຍຂຶ້ນ. ☐ ☐
- ເຈົ້າຄິດກ່ຽວກັບຂໍ້ເສຍຂອງຄົນອື່ນຕະຫຼອດເວລາ. ☐ ☐
- ເຈົ້າພະຍາຍາມເບິ່ງໄປທີ່ຂໍ້ດີຂອງຄົນອື່ນ. ☐ ☐
- ເຈົ້າເປັນຜູ້ລິເລີ່ມບາດກ້າວທຳອິດຂອງການສົນທະນາ ແລະ ເປັນມິດກັບຄົນອື່ນ. ☐ ☐

ຄ. ເຈົ້າເຫັນຄວາມອິດສາລິດສະຫຍາ ແລະ ການໂຕ້ຖຽງກັນໃນໝູ່ຍາດຕິພີ່ນ້ອງຂອງເຈົ້າ.

ຄວາມຫວັງ ສິ້ນຫວັງ

- ເຈົ້າຮູ້ສຶກອິດສາ ແລະ ໂຕຖຽງກັບພວກເຂົາດ້ວຍເຊັ່ນກັນ. ☐ ☐
- ເຈົ້າພະຍາຍາມມີຄວາມເອື້ອເຟື້ອເພື່ອແຜ່ຕໍ່ພວກເຂົາຫຼາຍຂຶ້ນ. ☐ ☐
- ເຈົ້າອະທິຖານໃຫ້ສະມາຊິກໃນຄອບຄົວຂອງເຈົ້າມີ ຄວາມສາມັກຄີກັນ. ☐ ☐
- ເຈົ້າສອນລູກໆຂອງເຈົ້າໃຫ້ມີຄວາມຮັກ ແລະ ຄວາມເອື້ອເຟື້ອ. ☐ ☐
- ເຈົ້າບອກກັບຕົວເອງວ່າບໍ່ມີສິ່ງໃດທີ່ເຈົ້າສາມາດເຮັດໄດ້ເພື່ອ ປ່ຽນແປງຍາດພີ່ນ້ອງຂອງເຈົ້າ. ☐ ☐

ງ. ໝູ່ຂອງເຈົ້າໄດ້ກະທຳສິ່ງໃດສິ່ງໜຶ່ງໃຫ້ເຈົ້າເສຍໃຈ.

ຄວາມຫວັງ ສິ້ນຫວັງ

- ເຈົ້າຕັດສິນໃຈທີ່ຈະແກ້ແຄ້ນໂດຍການເຮັດໃຫ້ໝູ່ຂອງເຈົ້າ ເສຍໃຈເຊັ່ນກັນ. ☐ ☐
- ເຈົ້າໃຫ້ອະໄພໝູ່ຂອງເຈົ້າ. ☐ ☐
- ເຈົ້າຕັດສິນໃຈວ່າຈະບໍ່ເຮັດໃຫ້ໃຜເສຍໃຈແບບນັ້ນ. ☐ ☐

| | | |
|---|---|---|
| - ເຈົ້າບອກຄົນອື່ນວ່າໝູ່ຂອງເຈົ້າເປັນຄົນບໍ່ດີຂະໜາດໃດ. | ☐ | ☐ |
| - ເຈົ້າເຊົາເປັນໝູ່ກັບລາວ. | ☐ | ☐ |

ກ່າວເຖິງສັດຈະທັມທາງຈິດວິນຍານບາງປະການ ທີ່ເຢົາວະຊົນອາດຄົ້ນພົບໃນບົດຮຽນນີ້. ຫົວຂໍ້ເລື່ອງຄວາມຫວັງ ແລະ ຄວາມສິ້ນຫວັງ, ເຊິ່ງປຽບສະເໝືອນຄວາມສະຫວ່າງ ແລະ ຄວາມມືດມົນໄດ້ຮັບການປະຕິບັດແນວໃດ? ເຈົ້າຄິດວ່າເລື່ອງລາວ ແລະ ກິດຈະກຳປະກອບ ຊ່ວຍຂັດເກົາການຮັບຮູ້ທາງຈິດວິນຍານຂອງເຢົາວະຊົນໃນດ້ານໃດ?

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

## ຕອນທີ 9

"ຄວາມຫວັງ" ແລະ "ການຮັບຮອງ" ເປັນສອງຕົວຢ່າງຂອງຫຼາຍໆຫົວຂໍ້ທີ່ຫຼັກສູດສຳລັບການເສີມສ້າງ ຄວາມສາມາດທາງຈິດວິນຍານແກ່ເຢົາວະຊົນຈຳເປັນຕ້ອງກ່າວເຖິງ. ການອະທິບາຍຢ່າງລະອຽດຖີ່ຖ້ວນ ກ່ຽວກັບຫົວຂໍ້ນີ້ຈະສ້າງການຮັບຮູ້ທາງຈິດວິນຍານ ແລະ ມີສ່ວນສະໜັບສະໜູນຕໍ່ການເພີ່ມຂຶ້ນຂອງຄວາມຮັບຮູ້. ພຣະອັບດຸລບາຮາ ກ່າວວ່າ:

**"ມີເສົາຫຼັກບາງອັນທີ່ຖືກກໍ່ຂຶ້ນແລ້ວ ໃນຖານະທີ່ເປັນເຄື່ອງຄ້ຳອັນບໍ່ມີວັນສັ່ນຄອນ ຂອງສາສະໜາຂອງພຣະຜູ້ເປັນເຈົ້າ. ເສົາຫຼັກທີ່ມີພະລັງຫຼາຍທີ່ສຸດໃນບັນດາເສົາຫຼັກເລົ່ານີ້ກໍ່ຄື ການຮຽນ**

**ຮູ້ ແລະ ການໃຊ້ສະຕິປັນຍາ, ການຂະຫຍາຍຈິດສຳນຶກ, ການຮັບຮູ້ໃນເລື່ອງຂອງການດຳລົງຢູ່ຢ່າງແທ້ຈິງຂອງຈັກກະວານ ແລະ ຄວາມເລິກລັບທີ່ຖືກເຊື່ອງຊ້ອນຂອງພຣະຜູ້ເປັນເຈົ້າ."** [24]

ລະດັບຂອງຈິດສຳນຶກໃນການດຳລົງຢູ່ຂອງມະນຸດນັ້ນມີຢູ່ຫຼາຍລະດັບ. ການຮັບຮູ້ກ່ຽວກັບພຣະປະສົງ ແລະ ຈຸດມຸ່ງໝາຍແຫ່ງສະຫວັນ, ການເຂົ້າໃຈໃນພະລັງຕ່າງໆທີ່ມີອິດທິພົນຕໍ່ພວກເຮົາ ແລະ ຊຸມຊົນຂອງພວກເຮົາ, ແລະ ບຸກປົນທີ່ຈະອຸທິດພະລັງທາງຄວາມຄິດ ແລະ ຈິດວິນຍານໃຫ້ແກ່ການສ້າງໂລກໃໝ່ - ນັ້ນບົ່ງຊີ້ໃຫ້ເຫັນເຖິງລະດັບຂອງຈິດສຳນຶກ ໃນລະດັບທີ່ສູງກວ່າຊີວິດທີ່ມຸ່ງເນັ້ນຢູ່ແຕ່ພຽງການຕອບສະໜອງທາງວັດຖຸເທົ່ານັ້ນ. ຄວາມທ້າທາຍຫຼັກຢ່າງໜຶ່ງ ຂອງຜູ້ຊຸກຍູ້ເຍົາວະຊົນກໍ່ຄືການຊ່ວຍເຫຼືອສະມາຊິກໃນກຸ່ມເຍົາວະຊົນ ຂຶ້ນໄປສູ່ລະດັບທີ່ສູງຂຶ້ນເລື້ອຍໆຂອງຈິດສຳນຶກ. ໃນການເຮັດແນວນີ້, ຊາວໜຸ່ມຈຳເປັນຕ້ອງເຂົ້າໃຈໃນແນວຄວາມຄິດ ທີ່ກ່ຽວເນື່ອງກັບຫົວຂໍ້ຫຼັກຂອງຊີວິດທາງຈິດວິນຍານ. ສະນັ້ນ, ພວກເຂົາຄວນເພີ່ມຄວາມສາມາດຂອງພວກເຂົາທີ່ຈະໄຕ່ຕອງ ແລະ ວິເຄາະແນວຄວາມຄິດເລົ່ານັ້ນ ແລະ ນຳໄປໃຊ້ໃນສະພາບຕົວຈິງຂອງພວກເຂົາ. ນອກຈາກນີ້ ຄວາມຫວັງ ແລະ ການຮັບຮອງ, ບາງຫົວຂໍ້ເລົ່ານັ້ນ ແລະ ແນວຄວາມຄິດທີ່ກ່ຽວຂ້ອງມີຫຍັງແດ່ ທີ່ເຍົາວະຊົນຄວນສ້າງຈຸດປະສົງຂອງການທົບທວນຂອງພວກເຂົາແນວໃດ?

## ຕອນທີ 10

ໃນສອງສາມຕອນທີ່ຜ່ານມາ ພວກເຮົາໄດ້ກວດສອບຄຳຖາມການຮັບຮູ້ທາງຈິດວິນຍານ ແລະ ບາງຄຸນລັກສະນະທີ່ກ່ຽວຂ້ອງກັນຄື - ຫົວໃຈບໍລິສຸດ, ຄວາມຮູ້ຂອງພຣະຜູ້ເປັນເຈົ້າ, ແລະ ຄວາມຮັບຂອງພຣະຜູ້ເປັນເຈົ້າ. ພວກເຮົາກໍໄດ້ຄິດກ່ຽວກັບ "ຜ້າກັ້ງຕ່າງໆ" ທີ່ສາມາດຄຸ້ມຄອງພວກເຮົາຈາກການມອງເຫັນດ້ວຍ "ສາຍຕາທີ່ຢູ່ພາຍໃນ" ຂອງພວກເຮົາ ແລະ ໄດ້ພິຈາລະນາວ່າການທຳຄວາມເຂົ້າໃຈແນວຄວາມຄິດສາມາດຊ່ວຍສ້າງຄວາມເຂັ້ມແຂງ ແກ່ຄວາມຮັບຮູ້ທາງຈິດວິນຍານຂອງພວກເຮົາ ແລະ ຂະຫຍາຍຄວາມສຳນຶກຂອງພວກເຮົາຄືແນວໃດ.

ໃນຊ່ວງໄວໜຸ່ມ ພະລັງທີ່ບົ່ມຊ້ອນຢູ່ໃນຈິດວິນຍານຂອງມະນຸດ ຈະສະແດງອອກມາຫຼາຍຂື້ນເລື້ອຍໆ. ໃນບັນດາພະລັງເລົ່ານີ້, ພະລັງແຫ່ງຄວາມຄິດ ແລະ ການສະແດງອອກທາງຄວາມຄິດເຫັນມີຄວາມສຳຄັນເປັນພິເສດ, ແລະ ການບຳລຸງຮັກສາພະລັງທັງສອງຢ່າງນີ້ ແມ່ນເປັນສິ່ງທີ່ຈຳເປັນຢ່າງຍິ່ງຕໍ່ການເພີ່ມຂະຫຍາຍການຮັບຮູ້. ມີຄວາມເຊື່ອມໂຍງກັນຢ່າງໃກ້ຊິດລະຫວ່າງພາສາ ແລະ ຄວາມຄິດ. ພະລັງຂອງຄວາມຄິດເປີດເຜີຍອອກມາໂດຍອາໄສຖ້ອຍຄຳ, ແລະ ການເພີ່ມພູນຂອງພະລັງແຫ່ງຖ້ອຍຄຳນັ້ນ ແມ່ນບໍ່ສາມາດຫຼີກລ້ຽງການພັດທະນາຂອງຄວາມເຂົ້າໃຈໄດ້. ການພັດທະນາພະລັງຂອງການສະແດງອອກທາງຄວາມຄິດເຫັນ ແລະ ການເພີ່ມພູນຄວາມເຂົ້າໃຈໃຫ້ເລິກເຊິ່ງ ກ່ຽວກັບການດຳລົງຢູ່ຢ່າງແທ້ຈິງ ຈຶ່ງເປັນສິ່ງທີ່ຕ້ອງເກີດຂຶ້ນໄປພ້ອມໆກັນ. ທ້າຍທີ່ສຸດແລ້ວ ຄວາມເຂົ້າໃຈກໍ່ຕ້ອງອາໃສການໄຕ່ຕອງ ແລະ ການທົບທວນ, ກິດຈະກຳຜູກພັນກັບພາສາໂດຍແຍກຈາກກັນບໍ່ອອກ. ພຣະບາຮາອຸລລາຫ໌ ກ່າວວ່າ:

**"ໂອ ປະຊາຊົນແຫ່ງບາຮາ! ແຫຼ່ງກຳເນີດຂອງຫັດຖະກຳ, ວິທະຍາສາດ ແລະ ສິລະປະທັງຫຼາຍຄື ພະລັງແຫ່ງການໄຕ່ຕອງ. ຈົ່ງພະຍາຍາມທຸກວິຖີທາງທີ່ຈະເຮັດໃຫ້ໄຂ່ມຸກແຫ່ງປັນຍາ ແລະ ຖ້ອຍຄຳເລົ່ານີ້ສ່ອງແສງອອກໄປຈາກເໝືອງອັນດີເລີດນີ້ ເພື່ອທີ່ຈະສົ່ງເສີມຄວາມສະຫງົບສຸກ ແລະ ຄວາມປອງດອງຂອງພີ່ນ້ອງຊາວໂລກ."** [25]

ແນ່ນອນວ່າຄວາມເຂົ້າໃຈຂອງມະນຸດ ແລະ ພະລັງໃນການສະແດງອອກນັ້ນ ຕ້ອງການແສງສະຫວ່າງຈາກວາທະສະຫວັນ. ພຣະບາຮາອຸລລາຫ໌ ບອກພວກເຮົາວ່າ:

**"ພຣະອົງສະເດັດມາເພື່ອຄວາມລອດພົ້ນຂອງເຈົ້າ, ແລະ ແບກຮັບເອົາຄວາມຍາກລຳບາກທັງຫຼາຍ ເພື່ອໃຫ້ເຈົ້າຂຶ້ນໄປສູ່ຈຸດສູງສຸດຂອງຄວາມເຂົ້າໃຈ ດ້ວຍຂັ້ນໄດແຫ່ງຖ້ອຍຄຳ."** [26]

ການເພີ່ມພູນພະລັງແຫ່ງການສະແດງອອກທາງຄວາມຄິດເຫັນ ບໍ່ໄດ້ໝາຍຄວາມພຽງແຕ່ການໄດ້ມາເຊິ່ງທັກສະໃນດ້ານການອ່ານ, ຂຽນ ແລະ ກ່າວສຸນທອນພົດເທົ່ານັ້ນ. ມັນຈຳເປັນຕ້ອງມີຄວາມສາມາດທີ່ຈະ: ອ່ານດ້ວຍຄວາມເຂົ້າໃຈທີ່ດີ, ສາມາດອະທິບາຍແນວຄວາມຄິດຕ່າງໆໄດ້ດ້ວຍຄວາມຊັດເຈນ ແລະ ການເວົ້າທີ່ຄ່ອງແຄ້ວ ແລະ ການເວົ້າເພື່ອສະແດງຄວາມຄິດເຫັນ ກ່ຽວກັບແນວຄວາມຄິດຕ່າງໆໄດ້ຢ່າງຖືກຕ້ອງ. ໃນການເຝິກຝົນການໃຊ້ຄວາມສາມາດເລົ່ານີ້, ເຍົາວະຊົນຮຽນຮູ້ທີ່ຈະນຳເອົາແນວຄວາມຄິດທາງວິທະຍາສາດ, ທາງສິນລະທັມ ແລະ ທາງຈິດວິນຍານທີ່ກ່ຽວຂ້ອງມາໝູນໃຊ້ກັບການ ວິເຄາະສິ່ງຕ່າງໆ ທີ່ເກີດຂຶ້ນອ້ອມຕົວພວກເຂົາ ແລະ ຮ່ວມກັບການສ້າງຄວາມເຊື່ອຢ່າງໝັ້ນຄົງຂອງສ່ວນບຸກຄົນທີ່ຈະເປັນ
ພື້ນຖານໃຫ້ແກ່ອຸດົມຄະຕິທາງສັງຄົມທີ່ພວກເຂົາ ຈະສາມາດສ້າງຂຶ້ນມາໃນ ອະນາຄົດ.

ພຣະອັບດຸລບາຮາກ່າວວ່າ: “ປະຊາຊົນສ່ວນຫຼາຍບໍ່ໄດ້ຮູ້ ໃນເລື່ອງກ່ຽວກັບໜ່ວຍງານທີ່ຈໍາເປັນຢ່າງຍິ່ງເລົ່ານີ້ ເຊິ່ງຈະເປັນອົງປະກອບຂອງການປິ່ນປົວຄວາມເຈັບປ່ວຍທີ່ຊໍາເຮື້ອຂອງສັງຄົມ.” “ໃນປັດຈຸບັນນີ້ ຍ້ອນບໍ່ໄດ້ຮັບການສຶກສາທີ່ພຽງພໍຈາກໂຮງຮຽນ, ປະຊາຊົນສ່ວນໃຫຍ່ຈຶ່ງຂາດແມ່ນແຕ່ຄໍາສັບທີ່ຈະນໍາມາໃຊ້ອະທິບາຍເຖິງສິ່ງທີ່ຕົນເອງຕ້ອງການ”. ຈະໂຊກດີຫຼາຍປານໃດ, ໃນຊ່ວງທໍາອິດຂອງການເປັນໄວລຸ່ນ ຈະເປັນຜູ້ທີ່ສາມາດພັດທະນາພະລັງ ໃນການສະແດງອອກທາງຄວາມຄິດເຫັນ, ແລະໄດ້ກາຍເປັນຜູ້ທີ່ມີຄວາມຮັບຮູ້ກ່ຽວກັບຢາປິ່ນປົວແຫ່ງສະຫວັນ ທີ່ຈະມາປິ່ນປົວຄວາມເຈັບປ່ວຍຊໍາເຮື້ອຂອງມະນຸດຊາດ, ເຕີມເຕັມຈິດໃຈດ້ວຍຄວາມຄິດແຫ່ງສະຫວັນ, ດ້ວຍວິທີນີ້ ຄວາມເຂົ້າໃຈຂອງພວກເຂົາ ແລະ ຂະຫຍາຍຈິດສໍານຶກຂອງພວກເຂົາກໍມີການເພີ່ມຂຶ້ນ.

ໃນບົດຮຽນຂ້າງລຸ່ມທີ່ຄັດມາຈາກປຶ້ມ *“ການໃຊ້ພະລັງແຫ່ງຖ້ອຍຄໍາ”*, ເຊິ່ງເປັນຫຼັກສູດທີ່ໄດ້ຮັບແຮງບັນດານໃຈຈາກບາຮາຍ ແລະ ຕາມປົກກະຕິເປັນປຶ້ມໃຊ້ຮຽນສໍາລັບເຍົາວະຊົນທີ່ກ້າວໜ້າ ໄດ້ສຶກສາຜ່ານປຶ້ມເຫຼັ້ມອື່ນໆມາຈໍານວນໜຶ່ງແລ້ວ, ກຸ່ມຂອງຄົນລຸ້ນເຍົາກໍາລັງປຶກສາຫາລືກັນ ກ່ຽວກັບແນວຄວາມຄິດເລື່ອງ *“ຖ້ອຍຄໍາ.”* ຂໍໃຫ້ເຈົ້າບົດຮຽນນີ້ ແລະ ແລ້ວພະຍາຍາມອະທິບາຍວ່າ ເນື້ອຫາດັ່ງກ່າວຊ່ວຍເພີ່ມຄວາມເຂົ້າໃຈ ແລະ ຄວາມຮັບຮູ້ໃຫ້ແກ່ຄົນໄວລຸ້ນເຍົາໄດ້ແນວໃດ.

ກິດຈະກໍາໜຶ່ງທີ່ໜ້າຕື່ນເຕັ້ນທີ່ສຸດ ໂດຍກຸ່ມຊາວໜຸ່ມໃນໝູ່ບ້ານ ອາເລເກຣຍສ໌ ໄດ້ກະທໍາໄປໃນໄລຍະເວລາສອງສາມເດືອນທໍາອິດ ທີ່ໄດ້ຕັ້ງກຸ່ມຂຶ້ນມາກໍ່ຄື ໂຄງການປູກຕົ້ນໄມ້. ເມື່ອຊາວໜຸ່ມໄດ້ພາກັນປູກຕົ້ນໝາກໄມ້ 50 ຕົ້ນອ້ອມຮອບບໍລິເວນໂຮງຮຽນຂອງພວກເຂົາແລ້ວ, ພວກເຂົາກໍ່ເຊີນພໍ່ແມ່, ໝູ່ເພື່ອນ ແລະ ເພື່ອນບ້ານມາຮ່ວມງານສະຫຼອງ ແລະ ໃນງານນັ້ນເອງ ເອໄລຊາ ໄດ້ກ່າວສູນທອນພົດສັ້ນໆເລື່ອງຄວາມສໍາຄັນຂອງການປັບປຸງສິ່ງແວດລ້ອມ. ທຸກຄົນພາຍໃນຊຸມຊົນຍ້ອງຍໍຊົມເຊີຍ ໂຄງການນີ້ ເພາະຕົ້ນໄມ້ທີ່ຊາວໜຸ່ມປູກໄວ້ນັ້ນ ຈະອອກໝາກອອກຜົນ ແລະ ໃຫ້ຄວາມສວຍງາມແກ່ໝູ່ບ້ານ.

ມື້ຕໍ່ມາຫຼັງຈາກງານສະຫຼອງ, ເອໄລຊາ ໄດ້ນັດປະຊຸມຄັ້ງພິເສດກັບຊາວໜຸ່ມ ກ່ອນທີ່ລາວຈະ ເດີນທາງໄປຈາກໝູ່ບ້ານ ອາເລເກຣຍສ໌. “ມື້ນີ້ເອື້ອຍຢາກຈະໃຫ້ພວກເຮົາລົມກັນກ່ຽວກັບຫົວຂໍ້ຫຼັກຂອງເຮົາ ທີ່ຈະເປັນຈຸດສູນກາງຂອງການປຶກສາຫາລືໃນຫຼາຍໆເດືອນຂ້າງໜ້າທີ່ຈະມາເຖິງນີ້,” ລາວໄດ້ບອກພວກເຂົາດ້ວຍຄວາມກະຕືລືລົ້ນຢ່າງທີ່ສຸດ. “ເພື່ອເປັນການແນະນໍາສິ່ງນີ້, ເອື້ອຍຈະຖາມຄໍາຖາມໜຶ່ງກັບພວກເຈົ້າ: ພວກເຈົ້າຄິດວ່າເຫດໃດພຣະຜູ້ເປັນເຈົ້າຈຶ່ງໄດ້ຊົງສ້າງພວກເຮົາຂຶ້ນມາ?”

ມາເຣຍລາຕອບໃນທັນທີວ່າ “ພຣະຜູ້ເປັນເຈົ້າຊົງສ້າງພວກເຮົາຂຶ້ນມາ ເພາະພຣະອົງຊົງຮັກພວກເຮົາ ຄືກັນກັບພຣະວັດຈະນະຕອນໜຶ່ງທີ່ວ່າ ‘ເຮົາຮັກເຈົ້າ ເຮົາຈຶ່ງສ້າງເຈົ້າຂຶ້ນມາ.’ ນ້ອງໄດ້ຮຽນພຣະວັດຈະນະຕອນນີ້ຕັ້ງແຕ່ຕອນຍັງນ້ອຍ ແລະ ບໍ່ເຄີຍລືມເລີຍ.

"ເກັ່ງຫຼາຍ" ເອໄລຊາຕອບ. "ພຣະຜູ້ເປັນເຈົ້າຊົງສ້າງພວກເຮົາຂຶ້ນມາ ເພາະພຣະອົງຊົງມີຄວາມຮັກທີ່ບໍ່ຮູ້ສິ້ນໃຫ້ແກ່ພວກເຮົາ. ແລະ ເພາະຄວາມຮັກນີ້ເອງ, ພຣະອົງຈຶ່ງຊົງປະທານຂອງຂວັນອັນພິເສດທັງຫຼາຍ ໃຫ້ແກ່ເຮົາແຕ່ລະຄົນ. ໜຶ່ງໃນບັນດາຂອງຂວັນອັນຍິ່ງໃຫຍ່ທີ່ສຸດທີ່ພຣະອົງຊົງປະທານໃຫ້ແກ່ເຮົາຄື ຄວາມສາມາດໃນການໃຊ້ "ຖ້ອຍຄຳ". ບໍ່ມີສິ່ງສ້າງສັນທີ່ມີຊີວິດໃດທີ່ໄດ້ຮັບຄວາມສາມາດໃນການເວົ້າຖ້ອຍຄຳ, ອ່ານຖ້ອຍຄຳ, ຂຽນຖ້ອຍຄຳ ແລະ ເຂົ້າໃຈຖ້ອຍຄຳທັງຫຼາຍໄດ້. ໂດຍອາໄສຖ້ອຍຄຳຕ່າງໆ, ເຮົາສາມາດຕິດຕໍ່ສື່ສານເຊິ່ງກັນແລະກັນ ແລະ ເຮັດໃຫ້ຄົນອື່ນຮູ້ໄດ້ເຖິງສິ່ງທີ່ເຮົາຄິດຫຼືຮູ້ສຶກ. ສິ່ງສຳຄັນທີ່ສຸດກໍ່ຄື ຄຳສອນຈາກສະຫວັນ ກໍ່ໄດ້ສະແດງອອກໃນຮູບແບບຂອງຖ້ອຍຄຳ. ພວກເຮົາເຂົ້າໃຈເຖິງຄຳສອນເລົ່ານີ້ໄດ້ ດ້ວຍການຟັງ ແລະ ການອ່ານພຣະທັມມະລິຂິດຂອງພຣະຜູ້ເປັນເຈົ້າ ທີ່ເປີດເຜີຍມາໂດຍຜ່ານທາງພຣະສາສະດາຂອງພຣະອົງ. ເອື້ອຍຄິດໄວ້ວ່າຫົວຂໍ້ການສົນທະນາທີ່ພວກເຮົາຈະເອົາມາປຶກສາຫາລືກັນແມ່ນ ພຣະລັງແຫ່ງຖ້ອຍຄຳ."

ຄາໂລຕາຈຶ່ງເວົ້າຂຶ້ນວ່າ "ນ້ອງໄດ້ຍິນມາວ່າ ຄຳເວົ້າມີອຳນາດຫຼາຍກວ່າດາບເສຍອີກ."

ແອນໂຕນີໂອ ຈຶ່ງເວົ້າຕື່ມອີກວ່າ "ແມ່ນແທ້ໃດ, ແຕ່ຄຳເວົ້າຈະມີພະລັງອຳນາດໄດ້ກໍ່ຕ້ອງມາພ້ອມກັບການກະທຳ. ຖ້າບໍ່ເປັນດັ່ງນີ້ແລ້ວ, ຖ້ອຍຄຳກໍ່ຈະມີແຕ່ຄວາມວ່າງເປົ່າ ແລະ ຖືກພັດທາຍໄປກັບສາຍລົມໄດ້ຢ່າງງ່າຍດາຍ. ພຣະອັດຈະນະຕອນໜຶ່ງທີ່ນ້ອງມັກ ບອກວ່າພວກເຮົາຈົ່ງລະວັງ, ຢ່າດຳເນີນຕາມວິຖີທາງຂອງຄົນທີ່ມີວາຈາຢ່າງໜຶ່ງ ແຕ່ການກະທຳອີກຢ່າງໜຶ່ງ."

"ແມ່ນແລ້ວ," ແອນນາ ມາເຣຍເວົ້າເສີມ. "ເຈົ້າສາມາດບອກໃຜຄົນໜຶ່ງວ່າ ເຂົາເປັນເພື່ອນສະນິດທີ່ສຸດຂອງເຮົາ, ແຕ່ຖ້າເຮົາບໍ່ຊ່ວຍເຫຼືອເຂົາໃນເວລາທີ່ເຂົາຕ້ອງການຄວາມຊ່ວຍເຫຼືອຈາກເຈົ້າ, ກໍ່ເທົ່າກັບວ່າເຈົ້າຍັງບໍ່ແມ່ນເພື່ອນທີ່ດີທີ່ສຸດຂອງເຂົາແທ້ໆ."

ຄວາມຄິດເຫັນຂອງແອນນາ ມາເຣຍ ຈຸດປະກາຍໃຫ້ກັບຈິນຕະນາການຂອງທຸກຄົນ, ແລ້ວພວກເຂົາທຸກຄົນກໍ່ເລີ່ມຍົກຕົວຢ່າງຂອງຖ້ອຍຄຳທີ່ວາງເປົ່າ ກັບຖ້ອຍຄຳທີ່ມາພ້ອມກັນກັບການກະທຳ.

ໃນທີ່ສຸດ ເອໄລຊາກໍ່ກ່າວວ່າ "ດີແລ້ວ. ຕອນນີ້ທຸກຄົນກໍ່ເຊື່ອແລ້ວວ່າ ຖ້ອຍຄຳເວົ້າທີ່ມາພ້ອມກັບການກະທຳນັ້ນມີພະລັງອຳນາດຫຼາຍທີ່ສຸດ. ຖ້ອຍເວົ້າມີພະລັງອຳນາດຢ່າງບໍ່ໜ້າເຊື່ອ - ຖ້ອຍຄຳສາມາດປ່ຽນແປງໂລກໄດ້. ດ້ວຍເຫດນີ້ພວກເຈົ້າຜູ້ທີ່ຢາກຈະສ້າງໂລກໃໝ່ທີ່ດີກວ່າ, ຄວນຮຽນຮູ້ທີ່ຈະໃຊ້ຖ້ອຍຄຳຕ່າງໆໄດ້ເປັນຢ່າງດີ. ເຊິ່ງນີ້ກໍ່ໝາຍຄວາມເຖິງການຄິດກ່ຽວກັບຖ້ອຍຄຳຕ່າງໆ, ການເຂົ້າໃຈໃນຖ້ອຍຄຳ, ການເວົ້າຖ້ອຍຄຳອອກມາ, ການແຜ່ກະຈາຍຖ້ອຍຄຳ ແລະ ການນຳເອົາຖ້ອຍຄຳໄປປະຕິບັດ."

ຊາວໜຸ່ມມິດກັນໄປໄລຍະໜຶ່ງ, ເພື່ອໄຕ່ຕອງກ່ຽວກັບສິ່ງທີ່ເອໄລຊາເວົ້າ. ແຕ່ໃນທັນໃດນັ້ນ ດີເອໂກ້ ກໍ່ເກີດຄວາມຄິດຂຶ້ນ. ດ້ວຍຄວາມຕື່ນເຕັ້ນ ລາວຈຶ່ງກະໂດດຂຶ້ນໄປຢູ່ທາງໜ້າຂອງກຸ່ມ ແລະ ເວົ້າວ່າ "ຕອນນີ້ຂ້ອຍຮູ້ແລ້ວວ່າ ພວກເຮົາຈະບັນລຸຄວາມຈະເລີນກ້າວໜ້າທາງວັດຖຸ ແລະ ຈິດວິນຍານໄດ້ແນວໃດ: ໂດຍອາໄສພະລັງແຫ່ງຖ້ອຍຄຳທີ່ມາພ້ອມກັບການກະທຳທີ່ບໍລິສຸດນັ້ນເອງ."

ມິດ. ບໍ່ມີໃຜເວົ້າຫຍັງເລີຍ. ດີເອໂກ້ ເວົ້າຈົບແລ້ວກໍຍັງຢືນຢູ່ ດ້ວຍຄວາມອຶດອັດ. ລາວບໍ່ຮູ້ວ່າຈະນັ່ງລົງ ຫຼືຢືນຕໍ່ດີ. ລາວຈຶ່ງຫັນໄປເບິ່ງເອໄລຊາ ເພື່ອຂໍຄວາມຊ່ວຍເຫຼືອ. ເອໄລຊາຈຶ່ງຄ່ອຍຍ່າງເຂົ້າໄປຫາດີເອໂກ້ ແລະ ຈັບມືລາວ. ເອໄລຊາບອກລາວວ່າ "ນ້ອງໄດ້ຄົ້ນພົບຄວາມຈິງທີ່ເລິກເຊິ່ງຫຼາຍແທ້ໆ. ເມື່ອເວລາຜ່ານໄປນ້ອງຈະຮຽນຮູ້ວ່າ ສິ່ງນີ້ມີຄວາມສຳຄັນຫຼາຍເທົ່າໃດ."

**<u>ບົດເຝິກຫັດ:</u>**

1. ຈົ່ງເລືອກເອົາຖ້ອຍຄຳຕໍ່ໄປນີ້ຕື່ມລົງໃນຊ່ອງວ່າງໃຫ້ເປັນປະໂຫຍກທີ່ສົມບູນ:

| | | | |
|---|---|---|---|
| ພ້ອມກັນ | ຈິນຕະນາການ | ສະແດງອອກ | ການກະທຳ |
| ຕິດຕໍ່ສື່ສານ | ດີຂຶ້ນ | ປະທານ | ສ້າງ |
| ສິ່ງແວດລ້ອມ | ອ້ອມຮອບ | ຂອງຂວັນ | ເປີດເຜີຍ |
| ເຊື່ອໝັ້ນ | ເລິກເຊິ່ງ | | |

ກ. ພວກເຮົາສາມາດ __________________ ຕົວຕົນຂອງເຮົາໄດ້ ໂດຍຜ່ານການໃຊ້ພະລັງແຫ່ງຖ້ອຍຄຳ.

ຂ. ນາງ ຈູເລຍ ບໍ່ຢາກໃຫ້ນ້ອງຊາຍຂອງລາວໄປທີ່ຮ້ານຂາຍເຄື່ອງຄົນດຽວ, ລາວຈຶ່ງຕັດສິນໃຈໄປ __________________ ກັບລາວ.

ຄ. ທ່ານໝໍ ດີໃຈທີ່ໄດ້ເຫັນວ່າສຸຂະພາບຂອງເດັກຍິງເລີ່ມ ________________ .

ງ. ໂດຍການຖາມລາວຫຼາຍໆຄັ້ງເທົ່ານັ້ນ ນາງ ລູອິສ໌ ເອັນຣິກ ຈຶ່ງສາມາດເຮັດໃຫ້ລາວ _______ ______________ ແລະ ຍອມທີ່ຈະເວົ້າຢູ່ໃນທີ່ປະຊຸມໃນທີ່ສຸດ.

ຈ. ພຣະຜູ້ເປັນເຈົ້າຊົງປະທານ _________________ ແຫ່ງຊີວິດໃຫ້ແກ່ເຮົາ, ແລະ ເຮົາບໍ່ຄວນທີ່ຈະລະຖິ້ມມັນ.

ສ. ເມື່ອໃດກໍ່ຕາມທີ່ ທ້າວ ຈອນ ຄາລອສ໌ ໃຫ້ຄຳໝັ້ນສັນຍາ, ລາວຈະພະຍາຍາມຢ່າງສຸດທີ່ຈະຮັກສາມັນ. ຄຳເວົ້າຂອງລາວຕາມມາດ້ວຍ _________________ ສະເໝີ.

ຊ. ຍ້ອນຄວາມຮັກທີ່ພຣະຜູ້ເປັນເຈົ້າມີຕໍ່ເຮົາ, ພຣະອົງຈຶ່ງມອບຂອງຂວັນທີ່ຫຼາກຫຼາຍໃຫ້ກັບພວກເຮົາ. ຄວາມສາມາດໃນການໃຊ້ຖ້ອຍຄຳ ກໍເປັນໜຶ່ງໃນຂອງຂວັນທີ່ຍິ່ງໃຫຍ່ທີ່ສຸດທີ່ພຣະອົງ ______ _________ ໃຫ້ແກ່ເຮົາ.

ຍ. ນະວະນິຍາຍເລື່ອງສັ້ນຕ່າງໆ ແມ່ນຖືກຂຽນຂຶ້ນມາຈາກ ____________________ ຂອງນັກແຕ່ງທັງໝົດ.

ດ. ເພື່ອທີ່ຈະ _________________ ກັບຄົນອື່ນ, ເຮົາຕ້ອງຮຽນຮູ້ທີ່ຈະຟັງ.

ຕ. ນາງ ຊີຊີເລຍ ມີຄວາມເປັນຫ່ວງຕໍ່ _________________ແລະ ລາວໄດ້ຕັດສິນໃຈຈັດຫຼັກສູດຮຽນກ່ຽວກັບສຸຂະອະນາໄມຂຶ້ນ ທີ່ສູນກາງດ້ານສາທາລະນະສຸກຂອງຊຸມຊົນຂອງລາວ.

ຖ. ເມື່ອໃດກໍ່ຕາມທີ່ມີໂຄງການໃດໂຄງການໜຶ່ງທີ່ຈະຕ້ອງເຮັດໃຫ້ແລ້ວ, ທ້າວ ດິເອໂກ້ ກໍຈະສາມາດເຮັດໃຫ້ທຸກຄົນມີຄວາມຕື່ນເຕັ້ນກັບມັນໄດ້. ລາວສາມາດ ____________________ ຄວາມກະຕືລືລົ້ນໄດ້.

ທ. ທ້າວ ໂຣເບີດໂຕ ຮູ້ສຶກເມື່ອຍຫຼາຍຫຼັງຈາກເຮັດວຽກໜັກມາໝົດມື້, ລາວເຂົ້ານອນ ແລະ ບໍ່ມີຜູ້ໃດທີ່ຈະສາມາດປຸກລາວໄດ້. ລາວກຳລັງຢູ່ໃນການນອນທີ່ ____________________ .

ນ. ແມ່ຕູ້ຂອງຂ້ອຍບໍ່ມັກທີ່ຈະບອກກັບໃຜວ່າລາວອາຍຸເທົ່າໃດ, ແຕ່ເມື່ອລາວອາຍຸຄົບ 100 ປີ ລາວກໍ່ ______________ ມັນໃນທີ່ສຸດ.

ບ. ນາງ ແອນນາ ປູກສວນດອກໄມ້ຢູ່ອ້ອມເຮືອນຂອງລາວ, ດັ່ງນັ້ນ ມັນຈຶ່ງມີດອກໄມ້ທີ່ສວຍງາມທີ່ປະກອບດ້ວຍຫຼາຍສີສັນ ແລະ ຫຼາຍຮູບຊົງຢູ່ ______________________ ມັນ.

2. ຈົ່ງຂຽນປະໂຫຍກໂດຍໃຊ້ວະລີທີ່ຢູ່ຂ້າງລຸ່ມນີ້.

ການກະທຳທີ່ບໍລິສຸດ: ____________________________________________

____________________________________________

ການປັບປຸງສິ່ງແວດລ້ອມໃຫ້ດີຂຶ້ນ: ____________________________________________

____________________________________________

ດ້ວຍຄວາມກະຕືລືລົ້ນຢ່າງທີ່ສຸດ: ____________________________________________

____________________________________________

ການນຳເອົາຖ້ອຍຄຳເວົ້າໄປປະຕິບັດ: ____________________________________________

____________________________________________

ໄຕ່ຕອງໃນສິ່ງທີ່ໄດ້ເວົ້າໄປ: ____________________________________________

____________________________________________

3. ຖ້ອຍຄຳມີພະລັງທີ່ຈະນຳໄປສູ່ຄວາມດີ ຫຼື ຄວາມຊົ່ວຮ້າຍ, ແລະ ຂຶ້ນກັບຖ້ອຍຄຳທີ່ເຮົາໃຊ້, ພວກເຮົາສາມາດໃຫ້ຄຳແນະນຳທີ່ດີ ຫຼື ຊົ່ວຮ້າຍກັບຄົນອື່ນ. ຈົ່ງຂຽນຕົວອັກສອນ “**ດ**” ໃສ່ຂ້າງໜ້າຂໍ້ຄວາມທີ່ສະແດງອອກເຊິ່ງຄຳແນະນຳທີ່ດີ ແລະ ຕົວອັກສອນ “**ຊ**” ໃສ່ໜ້າຂໍ້ຄວາມທີ່ເປັນຄຳແນະນຳທີ່ຊົ່ວຮ້າຍ.

______ ພວກເຮົາຄວນສາມັກຄີກັນ ແລະ ບໍ່ຄວນຕໍ່ສູ້ກັນ.

______ ຖ້າເຈົ້າຢາກໄດ້ ກໍຈັບເອົາໂລດ. ບໍ່ຕ້ອງສົນດອກວ່າເຈົ້າຂອງເຄື່ອງຈະຄິດແນວໃດ.

_______ ບໍ່ມີບັນຫາ.

_______ ພວກເຮົາທຸກຄົນຮູ້ສຶກຂີ້ຄ້ານບາງຄັ້ງຄາວ; ຖ້າມື້ໃດທີ່ພວກເຮົາມີຄວາມຮູ້ສຶກແບບນັ້ນ, ມັນຈະດີກວ່າທີ່ຈະບໍ່ຕ້ອງເຮັດຫຍັງເລີຍ.

_______ ບໍ່ຄວນລໍຖ້າຈົນເຖິງມື້ອື່ນ ໃນສິ່ງທີ່ເຮົາສາມາດເຮັດໄດ້ໃນມື້ນີ້.

_______ ມັນບໍ່ເປັນຫຍັງດອກທີ່ເຈົ້າຈະໄປຮ່ວມປະຊຸມຊ້າຈັກໜ້ອຍໜຶ່ງ.

_______ ບໍ່ວ່າໜ້າທີ່ນັ້ນຈະເລັກນ້ອຍພຽງໃດ, ຄວນເຮັດວຽກນັ້ນໃຫ້ດີທີ່ສຸດ.

_______ ມັນເປັນສິ່ງທີ່ຖືກຕ້ອງທີ່ຈະເວົ້າຕົວະດົນໆຄັ້ງໜຶ່ງ.

_______ ເຮົາບໍ່ຄວນເຮັດສິ່ງໃດເພື່ອຄົນອື່ນ; ເພາະມັນບໍ່ໄດ້ຄ່າຕອບແທນຫຍັງ.

_______ ຈຸດປະສົງພຽງຢ່າງດຽວຂອງຊີວິດກໍຄືການມີຄວາມທັນສາ.

_______ ເຮົາຄວນມີຄວນພະຍາຍາມທຸກມື້ ເພື່ອທີ່ຈະປັງປຸງຕົວເຮົາໃຫ້ດີຂຶ້ນ.

_______ ການເຮັດວຽກຄືການລົງໂທດ.

_______ ເປັນຫຍັງເຮົາຈຶ່ງຕ້ອງເຊື່ອຟັງກົດໝາຍ; ພວກເຮົາທຸກຄົນລ້ວນແລ້ວແຕ່ຮູ້ດີວ່າສິ່ງໃດດີທີ່ສຸດສໍາລັບຕົວເຮົາເອງ.

_______ ຈຸດປະສົງຂອງພວກເຮົາໃນໂລກນີ້ກໍ່ຄື ການຮູ້ຈັກ ແລະ ນະມັດສະການພຣະຜູ້ເປັນເຈົ້າ.

_______ ເມື່ອເວລາທີ່ພວກເຮົາເຮັດວຽກດ້ວຍດວງຈິດແຫ່ງການຮັບໃຊ້ ພວກເຮົາກໍາລັງນະມັດສະການພຣະຜູ້ເປັນເຈົ້າ.

_______ ພວກເຮົາຄວນສົນໃຈແຕ່ເລື່ອງຊີວິດຂອງຕົນເອງ ແລະ ບໍ່ຄວນໃຫ້ບັນຫາຂອງຄົນອື່ນມາລົບກວນເຮົາ.

_______ ພໍ່ແມ່ຂອງເຈົ້າເຖົ້າແລ້ວ; ພວກເຂົາຈະໄປຮູ້ຫຍັງກ່ຽວກັບຊີວິດໃນປັດຈຸບັນນີ້!

_______ ການດື່ມເຄື່ອງມຶນເມົາດົນໆຄັ້ງໜຶ່ງ ບໍ່ສາມາດທໍາລາຍໃຜໄດ້ດອກ.

_______ ຊີວິດນີ້ສັ້ນຫຼາຍ. ເປັນຫຍັງຕ້ອງຂ້າຕົວເອງຕາຍໂດຍການເຮັດວຽກ!

1. ບົດຮຽນເພີ່ມຄວາມຮັບຮູ້ຂອງເຍົາວະຊົນ ໂດຍການຊ່ວຍເຫຼືອພວກເຂົາກ່ຽວໃນການໄຕ່ຕອງແນວຄວາມຄິດກ່ຽວກັບ "ຖ້ອຍຄໍາ". ບົດຮຽນນີ້ປະສົບຄວາມສໍາເລັດໃນເລື່ອງນີ້ໄດ້ແນວໃດ?

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

2. ເມື່ອກວດສອບບົດຮຽນຂ້າງເທິງແລ້ວ, ມີຄວາມເຊື່ອມໂຍງຫຍັງແດ່ ລະຫວ່າງພະລັງຂອງຄວາມຄິດກັບພະລັງຂອງຖ້ອຍຄຳ ທີ່ເຈົ້າສາມາດຮັບຮູ້ໄດ້ ເມື່ອວິເຄາະບົດຮຽນທາງເທິງແລ້ວ?

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

________________________________________

## ຕອນທີ 11

ເຍົາວະຊົນຈຳເປັນຕ້ອງພັດທະນາຄວາມສາມາດ ໃນການອ່ານໄດ້ຢ່າງງ່າຍດາຍ ແລະ ເຂົ້າໃຈຄວາມໝາຍຂອງຄຳທີ່ພວກເຂົາອ່ານ. ແນ່ນອນທີ່ສຸດ ໃນຫຼາຍໆພາກສ່ວນຂອງໂລກ, ມີວັນນະກຳຫຼາກຫຼາຍສຳລັບຄົນໃນໄວນີ້, ນັບຕັ້ງແຕ່ປື້ມວິຊາການໄປຈົນເຖິງປື້ມວາລະສານຕ່າງ. ແມ່ນວ່າອົງປະກອບຫຼາຍຢ່າງຂອງວັນນະກຳຈຳນວນມະຫາສານນີ້ ຈະອຳນວຍຕໍ່ການພັດທະນາທີ່ດີຂອງເຍົາວະຊົນລຸ້ນເຍົາ, ແຕ່ຜົນຂອງອົງປະກອບເລົ່ານັ້ນບໍ່ສາມາດທຽບໄດ້ກັບອິດທິພົນຂອງສັດຈະທັມ ທີ່ພົບໃນບົດຂຽນທີ່ສະແດງອອກເຖິງຈິດວິນຍານຂອງຄົນລຸ້ນເຍົາ. ພວກເຮົາຮູ້ວ່າ ໃນການເປີດເຜີຍທັມມະຂອງພຣະບາຮາອຸລລາຫ໌ ໄດ້ຊົງປະສິດປະສາດທຸກຖ້ອຍຄຳ ດ້ວຍສັກກະຍະພາບໃໝ່. ພຣະອົງກ່າວວ່າ:

> **"ໂດຍໄດ້ຮັບອະນຸຍາດຈາກພຣະຜູ້ຊົງບັນຍັດກົດ ຜູ້ຊົງອານຸພາບເໜືອທຸກສິ່ງ, ດ້ວຍການເຄື່ອນໄຫວຂອງປາກກາແຫ່ງຄວາມຮຸ່ງເຮືອງ, ເຮົາໄດ້ໃຫ້ຊີວິດໃໝ່ແກ່ມະນຸດທຸກຄົນ ແລະ ໄດ້ມອບສັກກະຍະພາບໃໝ່ ແກ່ທຸກຖ້ອຍຄຳ. ສັບພະສິ່ງສ້າງສັນທັງຫຼາຍປະກາດຫຼັກຖານພະຍານຂອງການໃຫ້ຊີວິດໃໝ່ທົ່ວໂລກນີ້."** [27]

ບໍ່ວ່າຫົວຂໍ້ຫຼືແນວຄວາມຄິດໃດກໍຕາມ ຈະໄດ້ຮັບການປະຕິບັດໃນເອກະສານທີ່ໃຊ້ເພື່ອພັດທະນາພະລັງແຫ່ງການສະແດງອອກໃນເຍົາວະຊົນ, ຄວາມໝາຍທີ່ຖ່າຍທອດຄວນສະທ້ອນໃກ້ຄຽງ ເຖິງພຣະທັມມະລິຂິດຂອງຄວາມສັດທາ. ຄວາມເຂົ້າໃຈຂອງພວກເຮົາກ່ຽວກັບແນວຄວາມຄິດເລື່ອງຄວາມຍຸຕິທັມ, ຫາກໄດ້ຮັບແສງສະຫວ່າງຈາກຄຳສອນຂອງ ພຣະບາຮາອຸລລາຫ໌, ກໍ່ຈະເລິກເຊິ່ງໃນຄວາມໝາຍທີ່ເຂົ້າເຖິງໄດ້ຍາກ ໃນໂລກທີ່ສູນເສຍການຕິດຕໍ່ກັບຄວາມເປັນຈິງທາງຈິດວິນຍານ. ການຄົ້ນພົບອັນຍະມະນີແຫ່ງປັນຍາທີ່ມີຢູ່ໃນພຣະທັມມະລິຂິດ ດ້ວຍຄວາມຊ່ວຍເຫຼືອຈາກເອກະສານການສຶກສາ ທີ່ປະດິດ

ຂຶ້ນຢ່າງມີຈິນຕະນາການ, ຊ່ວຍໃຫ້ຈິດໃຈຂອງເຍົາວະຊົນສະຫວ່າງສະໄຫວ ແລະ ສ້າງຄວາມສຸກຫັນສາໃນຫົວໃຈຂອງພວກເຂົາ. ພຣະອັບດຸລບາຮາ ອະທິບາຍວ່າ:

> **"ຂໍໃຫ້ຈິດວິນຍານຂອງເຈົ້າສ່ອງສະຫວ່າງ ດ້ວຍແສງແຫ່ງພຣະວັດຈະນະຂອງພຣະຜູ້ເປັນເຈົ້າ, ແລະ ຂໍໃຫ້ເຈົ້າກາຍເປັນຄັງເກັບຄວາມເລິກລັບຂອງພຣະຜູ້ເປັນເຈົ້າ, ຍ້ອນບໍ່ມີຄວາມສະບາຍໃດຈະຫຼາຍກວ່າ ແລະ ບໍ່ມີຄວາມສຸກໃດຈະຫອມຫວານກວ່າ, ການມີຄວາມເຂົ້າໃຈທາງຈິດວິນຍານໃນຄຳສອນແຫ່ງສະຫວັນ. ຫາກມະນຸດເຂົ້າໃຈຄວາມໝາຍທີ່ແທ້ຈິງຂອງກາບກອນຂອງກະວີ ເຊັ່ນ ບົດກະວີຂອງແຊັກສະເປຍຣ໌, ເຂົາຍ່ອມຮູ້ສຶກເພິ່ງພໍໃຈ ແລະ ຍິນດີ. ຄວາມປີຕິຍິນດີ ແລະ ຄວາມເພິ່ງພໍໃຈ ຂອງເຂົາຈະຍິ່ງຫຼາຍກວ່າເທົ່າໃດ ເມື່ອເຂົາໄດ້ຮັບຮູ້ເຖິງການດຳລົງຢູ່ຢ່າງແທ້ຈິງຂອງທັມມະລິຂິດສັກສິດ ແລະ ກາຍເປັນຜູ້ຮູ້ແຈ້ງກ່ຽວກັບຄວາມເລິກລັບທັງຫຼາຍຂອງອານາຈັກສະຫວັນ!"** [28]

ຂໍ້ຄວາມຂ້າງລຸ່ມນີ້ນຳສະເໜີມາຈາກປຶ້ມ *ການໃຊ້ພະລັງແຫ່ງຖ້ອຍຄຳ*. ຫົວຂໍ້ໃນເລື່ອງ "ຄວາມຈະເລີນກ້າວໜ້າ" ສອດແຊກຢູ່ໃນເນື້ອຫາທັງໝົດຂອງປຶ້ມ. ເອກະສານນີ້ພະຍາຍາມຊ່ວຍເຫຼືອຈິດໃຈຄົນລຸ້ນເຍົາ ໃນການທຳຄວາມເຂົ້າໃຈແນວຄວາມຄິດເລື່ອງຄວາມຈະເລີນກ້າວໜ້າ ທີ່ສອດຄ່ອງກັບຄຳສອນຂອງຄວາມເຊື່ອບາຮາຍ. ຂໍໃຫ້ເຈົ້າພະຍາຍາມລະບຸຄວາມແຕກຕ່າງລະຫວ່າງ ຄວາມໝາຍຂອງຄວາມຈະເລີນກ້າວໜ້າດັ່ງທີ່ສື່ຕ່າງໆກຳລັງສື່ຢູ່ໃນປະຈຸບັນ ແລະ ຄວາມສຳຄັນຂອງຄວາມຈະເລີນກ້າວໜ້າທີ່ສະແດງໃຫ້ເຫັນ ໃນເລື່ອງທີ່ຄັດມານີ້:

ຄັ້ງໜຶ່ງເຄີຍມີຄູຜູ້ເປັນທີ່ເຄົາລົບນັບຖືຄົນໜຶ່ງມາຢ້ຽມຢາມປະຊາຊົນໃນໝູ່ບ້ານ ແລ້ວບອກກັບພວກເຂົາວ່າ "ອາເລເກຣຍສ໌ ສາມາດເປັນຊຸມຊົນຕົວຢ່າງ, ບ່ອນທີ່ພວກເຮົາສາມາດບັນລຸເຖິງຄວາມຈະເລີນກ້າວໜ້າທັງທາງ ດ້ານວັດຖຸ ແລະ ຈິດວິນຍານໄປພ້ອມ". ໃນຕອນທຳອິດ ດີເອໂກ້ ຍັງບໍ່ທັນເຂົ້າໃຈດີວ່າ "ຄວາມຈະເລີນກ້າວໜ້າທາງດ້ານວັດຖຸ ແລະ ຈິດວິນຍານ" ນັ້ນໝາຍຄວາມວ່າຫຍັງ, ແຕ່ລາວໄດ້ແບ່ງປັນຄວາມຮູ້ສຶກຕື່ນເຕັ້ນໄປກັບຄົນໃນຊຸມຊົນທັງໝົດ. ນັບແຕ່ນັ້ນມາ, ລາວກໍ່ໄດ້ຮຽນຮູ້ຫຼາຍກ່ຽວກັບເລື່ອງນີ້. ລາວເລີ່ມຮັບຮູ້ວ່າ ເຖິງແມ່ນວ່າຈະຕົນໂຕນ້ອຍ, ແຕ່ລາວກໍ່ບໍ່ແມ່ນເດັກນ້ອຍອີກຕໍ່ໄປ ແລະ ລາວກໍ່ສາມາດຊ່ວຍໃຫ້ບ້ານຂອງຕົນບັນລຸເປົ້າໝາຍ ໃນການເປັນບ້ານທີ່ມີຄວາມຈະເລີນກ້າວໜ້າທັງທາງວັດຖຸ ແລະ ຈິດວິນຍານໄດ້.

ໃນລະຫວ່າງການສົນທະນາຄັ້ງໜຶ່ງທີ່ ດີເອໂກ້ ໄດ້ຕັດສິນໃຈຖາມທຸກຄົນວ່າ ພວກເຂົາຄິດແນວໃດກ່ຽວກັບຄວາມຈະເລີນກ້າວໜ້າທາງດ້ານວັດຖຸ ແລະ ດ້ານຈິດວິນຍານ. ມາເຣຍລ້າ ເຊິ່ງເປັນຄົນທີ່ມັກເວົ້າສິ່ງທີ່ໜ້າສົນໃຈຢູ່ສະເໝີ, ໄດ້ຕອບໃນທັນທີວ່າ: "ຂ້ອຍຮູ້ແທ້ວ່າ ຄວາມຈະເລີນກ້າວໜ້າທາງວັດຖຸໝາຍຄວາມວ່າແນວໃດ. ມັນໝາຍຄວາມວ່າ ພວກເຮົາຍາກຈົນແລະກໍ່ຕ້ອງການເງິນຫຼາຍຂຶ້ນ ເພື່ອຈະສາມາດຊື້ເຄື່ອງຂອງຕ່າງໆທີ່ຈະຊ່ວຍໃຫ້ພວກເຮົາມີຄວາມສຸກ".

ຄຳຕອບຂອງ ມາເຣຍລ້າ ເຮັດໃຫ້ທຸກຄົນຕື່ນເຕັ້ນ, ແລະ ພວກເຂົາທຸກຄົນກໍ່ເລີ່ມແລກປ່ຽນຄວາມຄິດເຫັນກັນ. ຕໍ່ໄປນີ້ແມ່ນສິ່ງທີ່ພວກເຂົາໂອ້ລົມກັນ:

ແອນໂຕນີໂອ: ຂ້ອຍບໍ່ເຊື່ອວ່າພວກເຮົາຕ້ອງຮັ່ງມີແລ້ວຈຶ່ງມີຄວາມສຸກ. ຂ້ອຍຮູ້ຈັກຄົນທຸກຫຼາຍຄົນທີ່ມີຄວາມສຸກ."

ຄາໂລຕ້າ: "ອ້າຍຂ້ອຍກຳລັງພັກສຶກສຽນຈາກມະຫາວິທະຍາໄລ, ແລະ ອ້າຍຂ້ອຍບອກວ່າພວກຄົນຮັ່ງມີສ້າງແນວຄວາມຄິດເລື່ອງ "ຄົນທຸກທີ່ມີຄວາມສຸກ" ເພື່ອເຮັດໃຫ້ພວກເຮົາເພິ່ງພໍໃຈ ທີ່ຈະເຮັດວຽກໃຫ້ແກ່ພວກເຂົາເຈົ້າ."

ແອນນາມາເຣຍ: ນັ້ນກໍ່ອາດຈະຈິງ, ແຕ່ຂ້ອຍຮູ້ວ່າຄວາມສຸກແມ່ນເກີດມາຈາກພາຍໃນ ແລະ ກໍ່ບໍ່ໄດ້ຂຶ້ນກັບຈຳນວນສິ່ງຂອງທີ່ຄົນໆໜຶ່ງຄອບຄອງ."

ດີເອໂກ້: "ແຕ່ແນວໃດກໍ່ຕາມ, ມັນແນ່ນອນຢູ່ແລ້ວວ່າ ການເປັນຄົນທຸກແມ່ນບໍ່ມ່ວນປານໃດ. ພວກເຮົາຄວນຈະພະຍາຍາມຢ່າງເຕັມທີ່ ທີ່ຈະເຮັດໃຫ້ຊີວິດຂອງພວກເຮົາດີຂຶ້ນ."

ແອນໂຕນີໂອ: "ແຕ່ພວກເຮົາກໍ່ຄວນຈະມີຄວາມສຸກໃນຂະນະທີ່ພວກເຮົາພະຍາຍາມທີ່ຈະເຮັດໃຫ້ມີຄວາມສຸກ. ຂ້ອຍຕ້ອງການເຮັດວຽກຢ່າງໜັກເພື່ອຕົວຂອງຂ້ອຍເອງ ແລະ ເພື່ອຊຸມຊົນຂອງຂ້ອຍ, ແຕ່ຂ້ອຍກໍ່ຢາກຈະມີຄວາມຮູ້ສຶກສຸກສັນໄປພ້ອມກັບການເຮັດແນວນັ້ນ. ຂ້ອຍເຄີຍໃຊ້ເວລາກັບອ້າຍຂອງຄາຣ໌ໂລຕ້າຢ່າງມ່ວນຊື່ນ, ແຕ່ນັບຕັ້ງແຕ່ລາວເລີ່ມເວົ້າເລື່ອງກ່ຽວກັບຄົນທຸກຄົນຮັ່ງມີ ແລະ ຄົນທຸກ ຂ້ອຍກໍ່ບໍ່ຢາກຈະຟັງລາວເວົ້າອີກເລີຍ. ລາວເບິ່ງຄືຈະເຕັມໄປດ້ວຍຄວາມໂມໂຫ."

ໂຣເບີດໂຕ້: "ຂ້ອຍຮູ້ວ່າຄວາມສຸກທີ່ແທ້ຈິງມາຈາກການຢູ່ໃກ້ກັບພຣະຜູ້ເປັນເຈົ້າ ແລະ ການເຊື່ອຟັງກົດຂອງພຣະອົງ."

ດີເອໂກ້: "ແມ່ນແທ້, ແຕ່ພວກເຮົາຈະລືມໄປບໍ່ໄດ້ວ່າ ການຈະຮັກພຣະຜູ້ເປັນເຈົ້ານັ້ນ ພວກເຮົາຄວນຮັກເພື່ອນມະນຸດ ແລະ ຊ່ວຍເຫຼືອເພື່ອນມະນຸດດ້ວຍ."

ຄາໂລຕ້າ: "ແລະພວກເຮົາຄວນຈື່ຈຳໄວ້ວ່າ ການເຊື່ອຟັງກົດຂອງພຣະຜູ້ເປັນເຈົ້າ ຍັງໝາຍເຖິງການເຮັດວຽກຮ່ວມກັນເພື່ອສ້າງໂລກທີ່ດີກວ່າເດີມ ບ່ອນທີ່ທຸກຄົນຈະບໍ່ທຸກຍາກອີກຕໍ່ໄປ."

ແລ້ວໃນທັນໃດນັ້ນ, ດີເອໂກ້ ກໍ່ນຶກຂຶ້ນໄດ້ວ່າ ພວກເຂົາເຈົ້າໂອ້ລົມກັນມາແຕ່ສະເພາະເລື່ອງຂອງຄວາມຈະເລີນກ້າວໜ້າທາງ ດ້ານວັດຖຸເທົ່ານັ້ນ. ລາວຈຶ່ງຖາມຂຶ້ນວ່າ "ແລ້ວຄວາມຈະເລີນກ້າວໜ້າທາງດ້ານຈິດວິນຍານເປັນຄືແນວໃດ?" ແຕ່ຕອນນັ້ນທຸກຄົນເມື່ອຍແລ້ວ, ພວກເຂົາເຈົ້າຈຶ່ງຕັດສິນໃຈວ່າຈະສົນທະນາຕໍ່ເຖິງເລື່ອງນີ້ອີກໃນເທື່ອໜ້າ.

ຊາວໜຸ່ມໄດ້ອຸທິດເວລາໃນການຊຸມນຸມກັນຫຼາຍຄັ້ງ ເພື່ອປຶກສາຫາລືກັນກ່ຽວກັບເລື່ອງຄວາມຈະເລີນກ້າວໜ້າທາງດ້ານວັດຖຸ ແລະ ຈິດວິນຍານ. ໜຶ່ງເດືອນພາຍຫຼັງຈາກນັ້ນ, ພວກເຂົາເຈົ້າຈັດກອງປະຊຸມຄັ້ງພິເສດຂຶ້ນເພື່ອຫາຂໍ້ສະຫຼຸບນຳກັນກ່ອນທີ່ ເອໄລຊ່າ ຈະມາຢ້ຽມຢາມພວກເຂົາ. ເມື່ອຊາວໜຸ່ມນຳສະເໜີຄວາມຄິດຂອງພວກເຂົາໃຫ້ ເອໄລຊ່າຟັງ, ນາງຮູ້ສຶກຍິນດີເປັນຢ່າງຍິ່ງ. ນາງຊ່ວຍພວກເຂົາຈັດແຈງຂໍ້ສະຫຼຸບເຫຼົ່ານັ້ນຢ່າງຊັດເຈນ ແລະ ຂຽນເປັນປະກາດດັ່ງຕໍ່ໄປນີ້:

**ຄຳປະກາດຂອງຊາວໜຸ່ມ**

ພວກເຮົາບໍ່ໄດ້ເປັນເດັກນ້ອຍອີກຕໍ່ໄປ ແລະ ຄວນຄິດເຖິງອະນາຄົດຂອງພວກເຮົາຢ່າງຈິງຈັງ. ໂລກທີ່ພວກເຮົາອາໄສຢູ່ນີ້ເຕັມໄປດ້ວຍຄວາມທຸກທໍລະມານ ແລະ ເຈັບປ່ວຍຍ້ອນຂາດຄວາມສາມັກຄີ. ພວກເຮົາຕ້ອງການສ້າງໂລກໃໝ່ທີ່ຜູ້ຄົນອາໄສຢູ່ຢ່າງປອງດອງກັນ ແລະ ເປັນໂລກທີ່ບໍ່ມີສົງຄາມ ແລະ ຄວາມທຸກຍາກອີກຕໍ່ໄປ. ເພື່ອທີ່ຈະສ້າງໂລກໃໝ່ນີ້ ພວກເຮົາຄວນເລີ່ມຕົ້ນດ້ວຍການສ້າງຊຸມຊົນຂອງພວກເຮົາເອງ. ນັ້ນຄືເຫດຜົນທີ່ພວກເຮົາກ່າວເຖິງ ຄວາມຈະເລີນກ້າວໜ້າທາງດ້ານວັດຖຸ ແລະ ຈິດວິນຍານ ໃນອາເລເກຣຍສ໌ ໝູ່ບ້ານນ້ອຍໆຂອງພວກເຮົາ. ໃນການຈະເລີນກ້າວໜ້າທາງດ້ານວັດຖຸ, ພວກເຮົາຄວນປັບປຸງລະບົບກະສິກຳ, ດູແລສຸຂະພາບຂອງຕົນເອງໃຫ້ດີຂຶ້ນ, ເພີ່ມຈຳນວນໂຮງຮຽນ ແລະ ດຸໜັ້ນເຮັດທຸລະກິດແລະເຮັດອຸດສາຫະກຳ. ດ້ວຍໝາກຜົນຈາກການເຮັດວຽກໜັກຂອງພວກເຮົາ, ພວກເຮົາຄວນປ່ຽນບ້ານຂອງຕົນ, ໝູ່ບ້ານຂອງຕົນ ແລະ ສິ່ງທີ່ຢູ່ອ້ອມຮອບຂອງຕົນ ໃຫ້ເປັນບ່ອນທີ່ສວຍງາມຍິ່ງ, ເປັນສະຖານທີ່ໆພວກເຮົາທຸກຄົນສາມາດເພີດເພີນກັບສະພາບແວດລ້ອມທີ່ສະອາດ ແລະ ຖືກຫຼັກອະນາໄມ.

ຄວາມຈະເລີນກ້າວໜ້າທາງດ້ານວັດຖຸ ສຳລັບທຸກຄົນອາດຈະບໍ່ສາມາດບັນລຸໄດ້ ຫາກວ່າພວກເຮົາຍັງບໍ່ໄດ້ບັນລຸເຖິງຄວາມຈະເລີນກ້າວໜ້າທາງດ້ານຈິດວິນຍານ. ຫາກປາສະຈາກດ້ານຈິດວິນຍານແລ້ວ, ຈະມີພຽງສອງສາມຄົນກາຍເປັນຄົນທີ່ຮັ່ງມີ ໃນຂະນະທີ່ຄົນອື່ນໆຍັງມີຊີວິດຢູ່ແບບທຸກຍາກ. ໃນຖານະທີ່ເປັນຊຸມຊົນໜຶ່ງເພື່ອຈະໃຫ້ບັນລຸເປົ້າໝາຍຂອງພວກເຮົາໄດ້ ພວກເຮົາຄວນສາມັກຄີກັນ, ລົງມືປະຕິບັດດ້ວຍຄວາມຍຸຕິທັມ, ຮ່ວມມືກັນ ແລະ ເປັນມິດກັບຄົນອື່ນ, ແລະ ມີຄວາມເອື້ອເຟື້ອ, ຄວາມສັດຊື່ ແລະ

ຄວາມໄວ້ວາງໃຈໄດ້. ຄວາມຍຸຕິທັມ, ຄວາມເອື້ອຍເຟື້ອ, ຄວາມຮັກ ແລະ ຄວາມເມດຕາ, ຄວາມສັດຊື່ ແລະ ຄວາມໄວ້ວາງໃຈໄດ້ ເປັນຄຸນລັກສະນະທາງທັມທີ່ຈະຊ່ວຍໃຫ້ພວກເຮົາບັນລຸເຖິງ ຄວາມຈະເລີນກ້າວໜ້າທັງທາງດ້ານວັດຖຸ ແລະ ທາງດ້ານຈິດວິນຍານ.

ພວກເຮົາຈຳເປັນຕ້ອງມີຄຸນລັກສະນະທາງທັມທັງຫຼາຍ ບໍ່ພຽງແຕ່ເພື່ອການສ້າງໂລກໃໝ່ເທົ່ານັ້ນ, ພວກເຮົາຍັງຕ້ອງການຄຸນລັກສະນະທາງທັມເລົ່ານີ້ ເພື່ອການດຳລົງຊີວິດຂອງຈິດວິນຍານຂອງຕົນ, ເຊິ່ງບໍ່ໄດ້ສິ້ນສຸດແຕ່ພຽງໃນໂລກນີ້. ຄວາມຈະເລີນກ້າວໜ້າທາງດ້ານວັດຖຸ ແລະ ຈິດວິນຍານໝາຍຄວາມວ່າ ໃນແຕ່ລະວັນພວກເຮົາຈະຕ້ອງບຸກບືນເຮັດໃຫ້ຊີວິດຂອງຕົນເອງບັນລຸສູ່ຄວາມດີເລີດ ທັງທາງດ້ານວັດຖຸ ແລະ ທາງດ້ານຈິດວິນຍານ, ພວກເຮົາຈະເຮັດວຽກຢ່າງໜັກເພື່ອສ້າງໂລກທີ່ຍຸຕິທັມ ແລະ ສະຫງົບສຸກ , ແລະ ຍັງໝາຍຄວາມວ່າ ພວກເຮົາຈະກຽມຕົວໄວ້ໃຫ້ພ້ອມ ສຳລັບຊີວິດນິລັນດອນແຫ່ງຄວາມປີຕິຍິນດີ ແລະ ຄວາມສຸກ.

ດີເອໂກ້ ໃຊ້ເວລາຄິດກ່ຽວກັບສຸນທອນພົດຂອງຕົນເອງຢູ່ຫຼາຍຊົ່ວໂມງ. ລັກສະນະຂອງ "ຄວາມຈະເລີນກ້າວໜ້າທາງດ້ານວັດຖຸ ແລະ ຈິດວິນຍານຂອງບ້ານ ອາເລເກຣຍສ໌" ແມ່ນເປັນຫົວຂໍ້ທີ່ລາວປາດຖະໜາທີ່ຈະກ່າວປາໄສຕໍ່ທີ່ປະຊຸມ. ແນວໃດກໍ່ຕາມ, ລາວກໍ່ບໍ່ຕ້ອງການເວົ້າເລື່ອງທີ່ໜັກເກີນໄປ, ແລະ ລາວບໍ່ຕ້ອງການຈະເທດສະໜາສັ່ງສອນໝູ່ເພື່ອຂອງລາວ. ລາວຈຶ່ງສະແດງຄວາມຄິດເຫັນຂອງລາວດັ່ງນີ້:

ການເປັນສ່ວນໜຶ່ງຂອງກຸ່ມຊາວໜຸ່ມຂອງບ້ານອາເລເກຣຍສ໌ນີ້ ແມ່ນມີຄວາມໝາຍຕໍ່ຂ້ອຍຫຼາຍ. ສະມາຊິກຂອງກຸ່ມເປັນເພື່ອນທີ່ດີທີ່ສຸດເທົ່າທີ່ຂ້ອຍເຄີຍມີມາ, ແລະ ການຢູ່ຮ່ວມກັນກັບເພື່ອນກຸ່ມນີ້ ກໍ່ເປັນຊ່ວງເວລາທີ່ຂ້ອຍມີຄວາມສຸກທີ່ສຸດ. ຂ້ອຍຄິດວ່າພວກທຸກຄົນໄດ້ປ່ຽນແປງໄປ ນັບແຕ່ເລີ່ມພົບປະແລະເຮັດສິ່ງຕ່າງໆຮ່ວມກັນມາ. ໃນຕອນເລີ່ມເຂົ້າກຸ່ມ ພວກເຮົາຍັງເປັນຄືກັນກັບເດັກນ້ອຍຢູ່, ແລະ ການມາເຂົ້າຮ່ວມກຸ່ມຂອງພວກເຮົາ ໄດ້ຊ່ວຍໃຫ້ພວກເຮົາກ້າວເຂົ້າສູ່ໄລຍະຕໍ່ໄປຂອງຊີວິດ ໃນທາງທີ່ມີຄວາມໝາຍ. ເຊິ່ງເລື່ອງນີ້ກໍ່ຕ້ອງຂໍຂອບໃຈກິດຈະກຳ ແລະ ການປຶກສາຫາລືຕ່າງໆ, ພວກເຮົາຈະບໍ່ກ້າວເຂົ້າສູ່ໄວໜຸ່ມດ້ວຍຄວາມສັບສົນ ແລະ ຂາດຄວາມຫວັງ. ພວກເຮົາຮູ້ແລ້ວວ່າພວກເຮົາມີຈຸດມຸ່ງໝາຍໃນຊີວິດ, ແລະ ພວກເຮົາຈະຊ່ວຍກັນແລະກັນ ໃຫ້ບັນລຸສູ່ເປົ້າໝາຍ. ຂ້ອຍຄິດວ່າ ພວກເຮົາຈະເປັນເພື່ອນກັນຕະຫຼອດໄປ.

ຄວາມຄິດໜຶ່ງທີ່ພວກເຮົາຄິດກັນຢູ່ເລື້ອຍໆ ຕັ້ງແຕ່ເລີ່ມຕັ້ງກຸ່ມຂອງພວກເຮົາກໍ່ຄື ຄວາມຈະເລີນກ້າວໜ້າທາງຈິດວິນຍານ ແລະ ວັດຖຸຂອງບ້ານ ອາເລເກຣຍສ໌. ຂ້ອຍຄິດວ່າ

ໃນຕອນທຳອິດກໍ່ພຽງແຕ່ຢາກຮູ້ຢາກເຫັນ ວ່າສິ່ງນີ້ໝາຍຄວາມວ່າຫຍັງ. ແຕ່ຕອນນີ້, ສຳລັບພວກຂ້າພະເຈົ້າສ່ວນຫຼາຍແລ້ວ, ຄວາມຈະເລີນກ້າວໜ້າຂອງຊຸມຊົນຂອງພວກເຮົາເປັນສິ່ງທີ່ພວກເຮົາປາດຖະໜາທີ່ຈະອຸທິດເຫື່ອແຮງຂອງຕົນໃຫ້. ພວກເຮົາຫວັງວ່າຄວາມກະຕືລືລົ້ນຂອງພວກເຮົາຈະຖືກເຜີຍແຜ່ໄປ ແລະ ມີອິດທິພົນຕໍ່ທຸກໆຄົນໃນບ້ານນີ້.

ຂໍຂອບໃຈເອື້ອຍເອໄລຊາ, ທີ່ໄດ້ຊ່ອຍນຳທາງໃຫ້ພວກເຮົາດ້ວຍຄວາມຮັກ, ຈົນພວກເຮົາໄດ້ຮູ້ເຖິງບາງສິ່ງບາງຢ່າງທີ່ສຳຄັນຕໍ່ຄວາມຈະເລີນກ້າວໜ້າ. ພວກເຮົາຮູ້ວ່າພວກເຮົາຄວນສາມັກຄີກັນຢູ່ສະເໝີ, ຫາກບໍ່ເຮັດແນວນັ້ນຄວາມພະຍາຍາມທັງໝົດຂອງພວກເຮົາກໍ່ຈະສູນເປົ່າ. ພວກເຮົາຮູ້ວ່າພວກເຮົາຄວນບຸກບືນສູ່ຄວາມດີເລີດ; ໃນທຸກໆມື້ພວກເຮົາຄວນເຮັດໃຫ້ດີກວ່າມື້ວານ. ພວກເຮົາກໍ່ຮູ້ອີກວ່າຖ້ອຍຄຳທີ່ສະແດງເຖິງຄວາມຮອບຮູ້ ແລະ ການກະທຳທີ່ບໍລິສຸດ ນຳມາເຊິ່ງການປ່ຽນແປງ. ແຕ່ເພາະເຫດໃດຖ້ອຍຄຳຈຶ່ງມີພະລັງປານນັ້ນ? ເຫດຜົນໜຶ່ງໃນບັນດາເຫດຜົນທີ່ສຳຄັນທີ່ສຸດ ແມ່ນໂດຍອາໄສຖ້ອຍຄຳເລົ່ານັ້ນ ພວກເຮົາຄົ້ນພົບຄວາມຮູ້, ໄດ້ມາເຊິ່ງຄວາມຮູ້ ແລະ ສື່ສານກັນດ້ວຍຄວາມຮູ້. ແກ່ນແທ້ຂອງຄວາມຈະເລີນກ້າວໜ້າກໍ່ຄືຄວາມຮູ້.

ມື້ກ່ອນຕອນທີ່ຂ້ອຍກຳລັງເບິ່ງງົວຈຳນວນໜຶ່ງ ກິນຫຍ້າຢູ່ໃນທົ່ງໃກ້ໆເຮືອນຂອງຂ້ອຍ. ຂ້ອຍຄິດກັບຕົນເອງວ່າ "ງົວພວກນີ້ມີທຸກຢ່າງທີ່ຈຳເປັນຕໍ່ພວກມັນ. ພວກມັນປາດຖະໜາທີ່ຈະກິນຫຍ້າ ກໍ່ມີຢ່າງພຽງພໍສຳລັບພວກມັນ, ມີສາຍນ້ຳໄຫຼຜ່ານທົ່ງຫຍ້ານັ້ນ, ເຊິ່ງພວກມັນສາມາດໃຊ້ດື່ມກິນໄດ້ທຸກເມື່ອທີ່ຕ້ອງການ. ພວກມັນສາມາດນອນກາງແດດ ຫຼື ໃຕ້ຮົ່ມເງົາກໍ່ໄດ້ຕາມໃຈຕ້ອງການ. ແລ້ວພວກມັນຈະຕ້ອງການຫຍັງອີກບໍ່?" ແຕ່ແລ້ວຂ້ອຍກໍ່ຮູ້ໄດ້ວ່າ ສິ່ງເລົ່ານັ້ນແມ່ນທັງໝົດທີ່ພວກມັນມີຢູ່. ພວກມັນບໍ່ມີຄວາມຮູ້ ຫຼື ບໍ່ສາມາດເຂົ້າໃຈສິ່ງທີ່ພວກມັນກຳລັງເຮັດ. ພວກມັນເປັນທາດຂອງທຳມະຊາດ. ຂ້ອຍຕັດສິນໃຈໄດ້ວ່າ ຂ້ອຍຈະບໍ່ໃຊ້ຊີວິດຄືໂຕງົວແນ່ນອນ, ແລ້ວຂ້ອຍກໍ່ເວົ້າກັບຕົນເອງວ່າ "ແລ້ວຈະເກີດຫຍັງຂຶ້ນ ຖ້າຂ້ອຍກາຍເປັນຄົນທີ່ຮັ່ງມີທີ່ສຸດແລະມີອຳນາດ ແຕ່ຍັງຄົງເມີນເສີຍ? ສິ່ງທີ່ຂ້ອຍມີຈະມີປະໂຫຍດຫຍັງ? ຄວາມຮັ່ງມີ ແລະ ອຳນາດທັງໝົດນັ້ນຈະເຮັດໃຫ້ຂ້ອຍບໍ່ສາມາດເປັນຫຍັງໄດ້ນອກຈາກທາດ - ຂ້າທາດຂອງກິເລດຂອງຕົນເອງ ທີ່ຈະບີບບັງຄັບໃຫ້ຂ້ອຍເຮັດໃນສິ່ງທີ່ຕົນເອງກໍ່ບໍ່ເຂົ້າໃຈ, ທາດຂອງຄວາມໂລບມາກໂລພາ, ທາດຂອງຄົນອື່ນທີ່ຮັ່ງມີກວ່າຂ້ອຍ ແລະ ມີອຳນາດຫຼາຍກວ່າຂ້ອຍ". ນີ້ຄືເຫດຜົນທີ່ວ່າເປັນຫຍັງຄວາມຮູ້ຈຶ່ງເປັນແກ່ນແທ້ຂອງຄວາມຈະເລີນກ້າວໜ້າ. ຄວາມຮູ້ໃຫ້ອິດສະລະແກ່ພວກເຮົານັ້ນເອງ.

ໃນບ່ອນວ່າງຂ້າງລຸ່ມນີ້, ຂໍໃຫ້ເຈົ້າຂຽນຂໍ້ຄວາມສອງສາມວັກເພື່ອອະທິບາຍ ສິ່ງທີ່ເຈົ້າຄິດວ່າເຢົາວະຊົນຄວນຈະເຂົ້າໃຈ ກ່ຽວກັບຫົວຂໍ້ເລື່ອງຄວາມຈະເລີນກ້າວໜ້າ.

## ຕອນທີ 12

ໃນພຣະທັມມະລິຂິດຂອງຄວາມເຊື່ອ, ຄຸນລັກສະນະອັນເປັນທີ່ປາດຖະໜາຂອງ "ວາຈາ" ນັ້ນຖືກອະທິບາຍໄວ້ດ້ວຍຖ້ອຍຄຳ ເຊັ່ນ: "ເຂົ້າໃຈງ່າຍ", "ຄາລົມຄົມຄາຍ", "ສ່ອງໃສ", ແລະ "ໜ້າປະທັບໃຈ" ແລະ ຕາມດ້ວຍວະລີທີ່ຊີ້ໃຫ້ເຫັນເຖິງຄວາມຈຳເປັນສຳລັບ "ຄວາມພໍປະມານ", "ຄວາມສະຫຼຽວສະຫຼາດ" ແລະ "ຄວາມເຂົ້າໃຈ". ເປັນທີ່ຄາດໝາຍໄວ້ວ່າ ຖ້ອຍຄຳທີ່ມີຄຸນສົມບັດເລົ່າ

ນີ້ຈະມີພົນເປັນພິເສດເຊັ່ນ "ການຈູດຜ້າກັ້ງແຫ່ງຕົວຕົນແລະກິເລດຖິ້ມ" ແລະ "ການມອດໄຟແຫ່ງຄວາມເປັນສັດຕູ ແລະ ຄວາມກຽດຊັງ", ທີ່ເໜືອກວ່ານັ້ນ ຖ້ອຍຄຳຍັງມີພົນຕໍ່ເງື່ອນໄຂ ແລະ ຄຸນລັກສະນະທາງຈິດວິນຍານຂອງຜູ້ເວົ້າອີກດ້ວຍ.

**"ຂ້າພະເຈົ້າຂໍກ່າວວ່າ: ວາຈາຂອງມະນຸດຄືສາລະທີ່ໄຝ່ຝັນຈະດຶງດູດໃຈ ແລະ ຈຳເປັນຕ້ອງມີຄວາມພໍປະມານ. ກ່ຽວກັບເລື່ອງອິດທິພົນຂອງວາຈານັ້ນ ແມ່ນເປັນສິ່ງທີ່ຂຶ້ນນຳການຕົບແຕ່ງ, ເຊິ່ງໃນທາງກັບກັນກໍ່ຂຶ້ນນຳຫົວໃຈທີ່ບໍ່ຜູກພັນ ແລະ ບໍລິສຸດ."** [29]

**"ທີ່ເໜືອກວ່ານັ້ນ, ຖ້ອຍຄຳ ແລະ ການເວົ້າຄວນທັງປະທັບໃຈ ແລະ ຄົມຄາຍ. ຢ່າງໃດກໍ່ຕາມ, ບໍ່ມີຖ້ອຍຄຳໃດທີ່ມີຄົບທັງສອງຄຸນລັກສະນະ, ເວັ້ນເສຍແຕ່ວ່າ ຖ້ອຍຄຳນັ້ນຈະຖືກກ່າວອອກມາທັງໝົດ ເພື່ອພຣະຜູ້ເປັນເຈົ້າເທົ່ານັ້ນ ແລະ ດ້ວຍຄວາມຄຳນຶງເຖິງຄວາມຈຳເປັນອັນຮີບດ່ວນຂອງໂອກາດ ແລະ ຜູ້ຄົນ."** [30]

**"ຂ້າພະເຈົ້າຂໍວິງວອນພຣະຜູ້ເປັນເຈົ້າ ໃຫ້ຊົງສວມໄຂ່ມຸກແຫ່ງຄວາມກະລຸນາຂອງພຣະອົງເທິງຫົວຂອງເຈົ້າ; ເພື່ອຈຸດໄຟແຫ່ງຄວາມຮັກຂອງພຣະອົງໃນໃຈເຈົ້າ; ປົດປ່ອຍລີ້ນຂອງເຈົ້າເພື່ອເວົ້າຖ້ອຍຄຳທີ່ມ່ວນທີ່ສຸດ ແລະ ຄວາມລຶກລັບອັນໜ້າພິດສະຫວົງທີ່ສຸດ ໃນການຊຸມນຸມຂອງຜູ້ທີ່ຊອບທັມ; ເພື່ອເຮັດໃຫ້ເຈົ້າເປັນດອກໄມ້ແຫ່ງສະຫວັນອັນຮາ ແລະ ເທວະດາແຫ່ງສະຫວັນ, ເປັນໜຶ່ງດຽວກັນໃນຄວາມຄິດເຫັນຂອງເຈົ້າ ແລະ ກັບຄວາມຄິດຂອງເຈົ້າທີ່ປະສານກັນ; ແລະເພື່ອສະແດງເຄື່ອງໝາຍອັນສັກສິດແຫ່ງອານາຈັກຂອງພຣະອົງ ທ່າມກາງຜູ້ຄົນທັງໝົດຕໍ່ໜ້າເຈົ້າ."** [31]

**"ຫາກເຈົ້າປາດຖະໜາໃຫ້ວາຈາ ແລະ ຄາລົມຂອງເຈົ້າເຂົ້າເຖິງຈິດໃຈທີ່ແຂງກະດ້າງ, ຂໍໃຫ້ກຳຈັດຄວາມຜູກພັນທັງໝົດທາງໂລກ ແລະຫັນໜ້າເຂົ້າຫາອານາຈັກຂອງພຣະຜູ້ເປັນເຈົ້າ."** [32]

1. ຈາກພຣະທັມມະລິຂິດທາງເທິງນີ້ ຂໍໃຫ້ເຈົ້າລະບຸຄຸນລັກສະນະທາງທັມບາງປະການ ທີ່ປະສິດປະສາດພະລັງໃຫ້ແກ່ວາຈາຂອງມະນຸດ:

___

___

___

2. ເຈົ້າຄິດວ່າການສຳຫຼວດແນວຄິດໃນປຶ້ມທີ່ເຍົາວະຊົນສຶກສາ ໃນໂຄງການເສີມສ້າງພະລັງທາງຈິດວິນຍານ ຈະຊ່ວຍພວກເຂົາພັດທະນາຄຸນລັກສະນະທາງທັມເລົ່ານີ້ແນວໃດ?

## ຕອນທີ 13

ໃນພຣະທັມມະລິຂິດ ບອກພວກເຮົາວ່າພະລັງແຫ່ງຖ້ອຍຄຳ ຄວນມຸ້ງໄປສູ່ການບັນລຸເປົ້າໝາຍອັນສູງສົ່ງ:

"ບັດນີ້ເປັນເວລາທີ່ເຈົ້າຈະຊຳລະຕົວຂອງເຈົ້າໃຫ້ສະອາດ ດ້ວຍນ້ຳແຫ່ງຄວາມຫຼຸດພົ້ນທີ່ໄຫຼອອກມາປາກກາອັນສູງສຸດ, ແລະ ໄຕ່ຕອງສິ່ງເລົ່ານັ້ນ, ເຊິ່ງຖືກສົ່ງລົງມາ ຫຼື ສະແດງໃຫ້ເຫັນປະຈັກຄັ້ງແລ້ວຄັ້ງເລົ່າເພື່ອເຫັນແກ່ພຣະຜູ້ເປັນເຈົ້າ, ແລະ ຈາກນັ້ນກໍບຸກບືນຫຼາຍເທົ່າທີ່ມີໃນຕົວເຈົ້າ, ເພື່ອດັບໄຟດ້ວຍພະລັງແຫ່ງຄວາມຮອບຮູ້ ແລະ ພະລັງແຫ່ງຄາລົມຂອງເຈົ້າ, ໄຟແຫ່ງຄວາມເປັນສັດຕູ ແລະ ຄວາມກຽດຊັງທີ່ຄຸກຄາມໃນໃຈຂອງປະຊາຊົນໃນໂລກ." [33]

"ຜູ້ຮັບໃຊ້ຜູ້ນີ້ວິງວອນດວງວິນຍານທີ່ດຸໝັ່ນ ແລະ ກ້າຫານທຸກຄົນ ໃຫ້ໃຊ້ຄວາມພະຍາຍາມຢ່າງເຕັມທີ່ ແລະ ລຸກຂຶ້ນເພື່ອຟື້ນຟູສະພາບໃນທຸກພູມິພາກ ແລະ ປຸກຄົນຕາຍດ້ວຍນ້ຳແຫ່ງປັນຍາ ແລະ ວາຈາອັນດຳລົງຢູ່ໂດຍອາໃສຄວາມຮັກທີ່ເຂົາທະນຸທະໜອມຕໍ່ພຣະຜູ້ເປັນເຈົ້າ, ພຣະຜູ້ຊົງເປັນໜຶ່ງ, ພຣະຜູ້ຊົງບໍ່ມີຜູ້ໃດປຽບປານ, ພຣະຜູ້ຊົງອານຸພາບ, ພຣະຜູ້ຊົງກາລຸນາປານີ." [34]

"ຖ້ອຍຄຳທຸກຄຳມີຈິດວິນຍານ, ດັ່ງນັ້ນຜູ້ເວົ້າຫຼືຜູ້ອະທິບາຍ ຈຶ່ງຄວນກ່າວຖ້ອຍຄຳຂອງຕົນຢ່າງລະມັດມະວັງໃນເວລາ ແລະ ສະຖານທີ່ໆເໝາະສົມ, ເພາະຄວາມປະທັບໃຈທີ່ແຕ່ລະຄຳສ້າງຂຶ້ນນັ້ນຊັດເຈນ ແລະ ຮັບຮູ້ໄດ້ຊັດເຈນ. ພຣະຜູ້ຍິ່ງໃຫຍ່ກ່າວວ່າ: ຄຳໜຶ່ງອາດປຽບສະເໝືອນໄຟ, ອີກຄຳໜຶ່ງປຽບໄດ້ກັບຄວາມສະຫວ່າງ, ແລະ ອິດທິພົນທີ່ທັງສອງກະທຳນັ້ນປາກົດຂຶ້ນໃນໂລກ. ດັ່ງນັ້ນ ຜູ້ມີປັນຍາທີ່ຮູ້ແຈ້ງຄວນເວົ້າດ້ວຍຖ້ອຍຄຳທີ່ອ່ອນໂຍນ ເໝືອນດັ່ງນ້ຳນົມເປັນຕົ້ນ, ເພື່ອລູກຫຼານມະນຸດຈະໄດ້ຮັບການລ້ຽງດູ ແລະ ສັ່ງສອນໂດຍຄຳເວົ້ານັ້ນ ແລະ ອາດບັນລຸເປົ້າໝາຍສູງສຸດໃນການດຳລົງຢູ່ຂອງມະນຸດ ເຊິ່ງເປັນຈຸດຢືນແຫ່ງຄວາມເຂົ້າໃຈ ແລະ ຄວາມສູງສົ່ງທີ່ແທ້ຈິງ. ແລະ ພຣະອົງກ່າວວ່າ: ຄຳໜຶ່ງອາດປຽບເໝືອນລະດູໃບໄມ້ປົ່ງເຮັດໃຫ້ຕົ້ນໄມ້ອ່ອນຂອງສວນກຸຫຼາບແຫ່ງຄວາມຮູ້ຂຽວສົດງົດງາມ ແລະ ຈະເລີນຮຸ່ງເຮືອງ, ໃນຂະນະທີ່ອີກຄຳໜຶ່ງເປັນເໝືອນຢາພິດເຖິງຕາຍ. ສົມຄວນທີ່ຜູ້ມີປັນຍາທີ່ສຸຂຸມຈະເວົ້າດ້ວຍຄວາມອ່ອນໂຍນ ແລະ ຄວາມອົດກັ້ນຢ່າງທີ່ສຸດ ເພື່ອວ່າຖ້ອຍຄຳທີ່ອ່ອນຫວານຈະຊັກຈູງທຸກຄົນ ໃຫ້ບັນລຸສິ່ງທີ່ເໝາະສົມກັບສະຖານະຂອງມະນຸດ." [35]

1. ຂໍໃຫ້ຕັດສິນໃຈວ່າຂໍ້ຄວາມຕໍ່ໄປນີ້ຖືກຕ້ອງ. ພະລັງແຫ່ງການສະແດງອອກຄວນມຸ່ງໄປທີ່

 ________ ການຊະນະການໂຕ້ແຍ້ງ.
 ________ ການອະທິບາຍຄວາມຈິງໂດຍການສະເໜີຂໍ້ໂຕ້ແຍ້ງທີ່ຊັດເຈນ.
 ________ ກາບດັບໄຟແຫ່ງຄວາມເປັນສັດຕູ ແລະ ຄວາມກຽດຊັງໃນໃຈຂອງຜູ້ຄົນ.
 ________ ການຫຼອກລວງຜູ້ອື່ນ.
 ________ ການປົກປິດຄວາມຈິງ.
 ________ ການອະທິບາຍຄວາມເລິກລັບຂອງຈັກກະວານ.
 ________ ການອະທິບາຍເລື່ອງລາວທີ່ຊັບຊ້ອນ.
 ________ ການຊີ້ແຈງຄວາມເຂົ້າໃຈຜິດ ແລະ ສ້າງຄວາມສາມັກຄີໃນວິໄສທັດ.
 ________ ການສະແດງໃຫ້ເຫັນເຖິງຄວາມເໜືອກວ່າຂອງຄວາມຄິດເຫັນຂອງຕົນເອງ.
 ________ ການໄດ້ຮັບຄຳຊົມເຊີຍ ແລະ ຄວາມຍ້ອງຍໍ.
 ________ ການສືບຄົ້ນຫາຄວາມເປັນຈິງ.
 ________ ການປັບປຸງສະພາບຄວາມເປັນຢູ່ຂອງປະຊາຊົນ.
 ________ ການປົກປ້ອງສິດທິຂອງຜູ້ຖືກກົດຂີ່.

2. ຂໍໃຫ້ເວົ້າສອງສາມຖ້ອຍຄຳ ກ່ຽວກັບວິທີການທີ່ການພັດທະນາພະລັງໃນການສະແດງອອກ ຊ່ວຍເຫຼືອເຍົາວະຊົນບົນເສັ້ນທາງການປ່ຽນແປງສ່ວນບຸກຄົນ ລວມເຖິງຄວາມພະຍາຍາມທີ່ຈະມີສ່ວນສະໜັບສະໜູນການປ່ຽນແປງຂອງສັງຄົມ.

________________________________________
________________________________________
________________________________________
________________________________________
________________________________________

## ຕອນທີ 14

ໃນການຊ່ວຍເຍົາວະຊົນໃຫ້ພັດທະນາພະລັງແຫ່ງການສະແດງອອກ, ພວກເຮົາຄວນຈຳໄວ້ຢູ່ສະເໝີວ່າ ພຣະທັມມະລິຂິດຂອງພຣະຜູ້ເປັນເຈົ້າ ເປັນສິ່ງທີ່ໃຫ້ພະລັງແກ່ການເວົ້າຂອງມະນຸດ ແລະ ເປັນສິ່ງທີ່ປະສິດປະສາດຫົວໃຈ ແລະ ຄວາມຄິດຂອງມະນຸດດ້ວຍຄວາມເຂົ້າໃຈທີ່ແທ້ຈິງ. ຂໍໃຫ້ເຈົ້າຢຸດຢູ່ບ່ອນນີ້ໜ້ອຍໜຶ່ງ ແລະ ໄຕ່ຕອງກ່ຽວກັບຂໍ້ຄວາມຂ້າງລຸ່ມນີ້.

**"ດວງຕາເວັນແຫ່ງວາຈາ, ເຊິ່ງສາຍແສງຢ່າງເຈີດຈ້າຈາກອະລຸໂນໄທສະຖານ ແຫ່ງການເປີດເຜີຍພຣະທັມສະຫວັນ, ໄດ້ແຜ່ຄວາມຮຸ່ງແຈ້ງໃຫ້ແກ່ມ້ວນພຣະທັມ ແລະ ທັມມະສານທັງຫຼາຍ ເພື່ອໃຫ້ອານາຈັກແຫ່ງວາຈາ ແລະ ອານາຈັກອັນສູງສົງແຫ່ງຄວາມເຂົ້າໃຈ ເຟັ່ງຕຶງດ້ວຍຄວາມປິຕິຍິນດີ ແລະ ຄວາມປີ້ມໃຈຢ່າງເຫຼືອລົ້ນ ແລະ ຈະສ່ອງແສງອອກມາດ້ວຍຄວາມຮຸ່ງແຈ້ງແຫ່ງແສງທັມຂອງພຣະອົງ..."** [36]

**"ຈົ່ງກ່າວວ່າ: ເຮົາໄດ້ເຮັດໃຫ້ແມ່ນ້ຳແຫ່ງວາຈາສະຫວັນໄຫຼອອກມາ ຈາກບັນລັງຂອງເຮົາ ເພື່ອໃຫ້ເບ້ຍໄມ້ແຫ່ງປັນຍາ ແລະ ຄວາມເຂົ້າໃຈງອກງາມຂຶ້ນມາຈາກພື້ນດິນແຫ່ງຫົວໃຈຂອງເຈົ້າ."** [37]

**"ດ້ວຍລົມຫາຍໃຈແຫ່ງວາຈາຂອງພຣະອົງ, ສະຫວັນແຫ່ງຄວາມເຂົ້າໃຈກໍ່ໄດ້ຮັບການປະດັບປະດາ ແລະ ດ້ວຍການຫຼັ່ງໄຫຼຂອງນ້ຳມຶກຈາກປາຍປາກກາຂອງພຣະອົງ, ກະດູກທີ່ກຳລັງຜຸພ່ອຍທຸກຊີ້ນ ຈະກັບຄືນມີຊີວິດຊີວາຂຶ້ນມາ."** [38]

**"ຈຶ່ງເປັນທີ່ຊັດເຈນແລະປາກົດແຈ້ງວ່າ ຂອງຂວັນອັນທຳອິດຂອງພຣະຜູ້ເປັນເຈົ້າຄື ພຣະວັດຈະນະ, ແລະ ຜູ້ຄົ້ນພົບ ແລະ ຜູ້ຮັບຂອງຂວັນນີ້ກໍ່ຄືພະລັງແຫ່ງຄວາມເຂົ້າໃຈ. ພຣະວັດຈະນະນີ້ເປັນຜູ້ສອນຄົນສຳຄັນທີ່ສຸດ ໃນໂຮງຮຽນແຫ່ງການດຳລົງຢູ່ ແລະ ເປັນຜູ້ເປີດເຜີຍພຣະອົງ, ຜູ້ຊົງມະຫິທານຸພາບ. ທຸກສິ່ງທີ່ປະກົດອອກມາເປັນພຽງຫຼັກຖານ ຂອງຄວາມຮູ້ຂອງພຣະວັດຈະນະນີ້. ບໍ່ແມ່ນນາມໃດ ແຕ່ແມ່ນນາມແຫ່ງພຣະວັດຈະນະນີ້, ຈຸດເລີ່ມຕົ້ນ ແລະ ຈຸດສິ້ນສຸດຂອງວັດຖຸທັງໝົດຕ້ອງຂຶ້ນຢູ່ນຳພຣະວັດຈະນະນີ້."** [39]

ເຈົ້າອາດຕ້ອງການທ່ອງຈຳພຣະທັມມະລິຂິດຂ້າງເທິງນີ້ ໃຫ້ໄດ້ຫຼາຍບົດເທົ່າທີ່ເຈົ້າສາມາດຈື່ໄດ້.

## ຕອນທີ 15

ພວກເຮົາມີຊີວິດຢູ່ໃນເວລາທີ່ມະນຸດຊາດກຳລັງປະເຊີນໜ້າກັບຄວາມໝົດສິ້ນທາງດ້ານສິນລະທັມ. ມາດຕະຖານທີ່ນຳທາງມະນຸດ ມາເປັນເວລາຫຼາຍສັດຕະວັດກຳລັງສູນເສຍພະລັງດຶງດູດຈິດໃຈຢ່າງຕໍ່ ເນື່ອງ, ແລະ ກຳລັງຖືກແທນທີ່ດ້ວຍຄ່ານິຍົມຂອງລັດທິວັດຖຸນິຍົມທີ່ແຜ່ໄປທົ່ວ ແລະ ອຸດົມການທີ່ສ້າງຂຶ້ນຈາກຄວາມສຳພັນແບບສຸດໂຕ່ງ ແລະ ລັດທິສ່ວນບຸກຄົນກຳລັງເຂົ້າມາແທນທີ່ເທື່ອລະໜ້ອຍ. ຂໍໃຫ້ຄິດກ່ຽວກັບປາກົດການນີ້ກັນຕໍ່ກ່ອນທີ່ຈະພິຈາລະນາປາກົດການທີ່ມີຕໍ່ຄົນລຸ້ນເຍົາ.

ເປັນໄປໄດ້ທີ່ຈະເບິ່ງເຫັນໄດ້ວ່າ ປະຫວັດສາດຕະຫຼອດຫຼາຍສັດຕະວັດທີ່ຜ່ານມາ ມະນຸດຊາດຄ່ອຍໆຫຼຸດພົ້ນຈາກໂສ້ຕວນຫຼວງຫຼາຍທີ່ເຄີຍກົດຂີ່ຂົ່ມເຫງມາດົນນານ - ບໍ່ວ່າຈະເປັນຈາກລັດທິຄວາມເຊື່ອ, ຈາກການປົກຄອງແບບຜະເດັດການ, ຈາກຄວາມເຊື່ອໂຊກລາງ, ເລົ່ານີ້ເປັນຕົ້ນ. ແມ່ນວ່າຍັງເຫຼືອອີກຫຼາຍຢ່າງທີ່ຕ້ອງເຮັດ, ແຕ່ຄວາມລຳອຽງທີ່ຝັງຮາກເລິກກໍຖືກເອົາຊະນະແລ້ວ, ກົດໝາຍທີ່ໃຊ້ເພື່ອບັງຄັບໃຊ້ຄວາມຍຸຕິທັມກໍຖືກສ້າງຂຶ້ນ, ແລະ ສິດທິຂອງບຸກຄົນ ແລະ ກຸ່ມຕ່າງໆກໍ່ໄດ້ຮັບການຍອມຮັບ. ໜ້າເສຍດາຍ, ທີ່ການເຄື່ອນໄຫວທາງປະຫວັດສາດອັນຊົງຄຸນຄ່ານີ້ ກຳລັງຖືກກຳກວນ ແລະຍິ່ງທະວີຄວາມຮຸນແຮງຫຼາຍຂຶ້ນເລື້ອຍໆ ໂດຍລັດທິພັນທະພາບນິຍົມສຸດຂົ້ວ ແລະ ລັດທິສ່ວນບຸກຄົນທີ່ໄຮ້ຂອບເຂດກຳລັງເຂົ້າມາມີບົດບາດສຳຄັນ ແລະ ການດຳລົງຢູ່ຂອງສິ່ງທີ່ແນ່ນອນກໍກຳລັງຖືກຍູ້ອອກໄປທາງຂ້າງ. ການເປັນອິດສະຫຼະໃນການເຮັດຕາມຄວາມມັກສ່ວນຕົວ ຖືເປັນອຸດົມຄະຕິສູງສຸດ ແລະດ້ວຍເຫດນີ້ ການແຍກລະຫວ່າງສິ່ງທີ່ຖືກຕ້ອງ ແລະ ສິ່ງທີ່ຜິດຈຶ່ງເລີ່ມບໍ່ຊັດເຈນຂຶ້ນ. ຮູບແບບພຶດຕິກຳທີ່ອີງຕາມຊຸດຄ່ານິຍົມທີ່ແຕກຕ່າງກັນຢ່າງກວ້າງຂວາງ, ໄດ້ຮັບການຍົກຍ້ອງວ່າເທົ່າທຽມກັນຫຼາຍຂຶ້ນເລື້ອຍໆ ແລະ ສາຍສຳພັນທີ່ເຄີຍຍຶດໜ່ຽວສະມາຊິກຂອງຊຸມຊົນໄວ້ດ້ວຍກັນ ກໍ່ເກືອບຈະສູນເສຍຄວາມແຂງແກ່ນໄປ.

ໃນບັນຍາກາດແນວນີ້, ຊາວໜຸ່ມຖືກປ່ອຍປະລະເລີຍຫຼາຍຂຶ້ນເລື້ອຍໆ ໂດຍປາສະຈາກການນຳທາງດ້ານສິນລະທັມ ແລະ ປະສົບກັບບັນຫາໃນການຈຳແນກລະຫວ່າງສິ່ງທີ່ຖືກກັບສິ່ງທີ່ຜິດ. ບໍ່ມີສິ່ງໃດນອກຈາກພຣະວັດຈະນະຂອງພຣະຜູ້ເປັນເຈົ້າ ທີ່ຈະສາມາດໃຫ້ຊີວິດໃໝ່ແກ່ການຮັບຮູ້ທາງຈິດວິນຍານ ທີ່ເຮັດໃຫ້ມະນຸດສາມາດຈຳແນກສິ່ງເລົ່ານີ້ໄດ້. ພຣະອັບດຸລບາຮາ ບອກພວກເຮົາວ່າພຣະທັມມະລິຂິດຂອງພຣະຜູ້ເປັນເຈົ້າ ໃຫ້ຄວາມສະຫວ່າງແກ່ອານາຈັກແຫ່ງຄວາມຄິດ ແລະ ສິນລະທັມ:

> **"... ໃນອານາຈັກທາງຈິດວິນຍານຂອງປັນຍາ ແລະ ການຍຶດໝັ້ນໃນອຸດົມການນັ້ນ ຈະຕ້ອງມີສູນກາງຂອງແສງສະຫວ່າງ, ແລະສູນກາງນັ້ນກໍ່ຄືພຣະວັດຈະນະຂອງພຣະຜູ້ເປັນເຈົ້າ ເຊິ່ງເປັນດວງຕາເວັນທີ່ສ່ອງແສງຢູ່ສະເໝີ ແລະ ຄົງຢູ່ຕະຫຼອດໄປ. ແສງແຫ່ງພຣະວັດຈະນະນີ້ແມ່ນເປັນແສງຂອງການດຳລົງຢູ່ຢ່າງແທ້ຈິງ ທີ່ສາຍສ່ອງມາຍັງມະນຸດຊາດ, ໃຫ້ຄວາມສະຫວ່າງແກ່ອານາຈັກແຫ່ງຄວາມຄິດ ແລະ ຫຼັກສິນລະທັມ ແລະ ໃຫ້ກະລຸນາທິຄຸນທັງຫຼາຍແຫ່ງພົບສະຫວັນແກ່ມວນມະນຸດ."** [40]

ໃນການທີ່ຈະສາມາດເລືອກເສັ້ນທາງແຫ່ງສິນລະທັມ, ມະນຸດຈຳເປັນຕ້ອງມີສິ່ງທີ່ມີຫຼາຍກວ່າກົດຊຸດໜຶ່ງ, ໂຄງສ້າງທາງສິນລະທັມທັງໝົດຈະຕ້ອງຖືກສ້າງຂຶ້ນມາ ໃນຄວາມຄິດຂອງຄົນໃນໄວເຍົາວ໌ດ້ວຍຈຸດປະສົງທາງສັງຄົມທີ່ໝັ້ນຄົງ - ທີ່ຈະເຊື່ອມໂຍງແນວຄວາມຄິດທາງທັມມະ, ແບບແຜນຄວາມປະພຶດແລະ ຄວາມຮູ້ກ່ຽວກັບຜົນທີ່ຈະເກີດຕາມມາເຂົ້າດ້ວຍກັນ, ເຊິ່ງເປັນໂຄງສ້າງທີ່ຄົງທົນດ້ວຍພະລັງແຫ່ງກຳລັງໃຈ ແລະ ຄວາມກ້າຫານ. ເບິ່ງຄືວ່າໂຄງສ້າງທາງສິນລະທັມດັ່ງກ່າວ ຈະມີຄວາມເຊື່ອມໂຍງ

ຢ່າງໃກ້ຊິດກັບໂຄງສ້າງທາງດ້ານພາສາ ທີ່ປະຕິບັດການຢູ່ໃນຄວາມຄິດຂອງແຕ່ລະບຸກຄົນ. ພາສາ, ດັ່ງທີ່ກ່າວເຖິງໃນຫຼັກສູດສອງສາມຕອນທີ່ຜ່ານມາກ່ອນໜ້ານີ້ ຄວນຈະມີຄວາມອຸດົມສົມບູນພຽງພໍທີ່ຈະຊ່ວຍໃຫ້ຄົນລຸ້ນເຍົາສາມາດເຂົ້າໃຈໃນພະລັງທາງສັງຄົມ, ວັດທະນະທຳ ແລະ ຫຼັກຄວາມເຊື່ອຕ່າງໆ ທີ່ກຳລັງຫຼໍ່ຫຼອມຄວາມປະພຶດຂອງມະນຸດ ແລະ ເຂົ້າໃຈໃນພະລັງທາງຈິດວິນຍານທີ່ຈຳເປັນສຳລັບການປ່ຽນແປງຄ່ານິຍົມເລົ່ານີ້.

ຄວາມເຊື່ອມໂຍງທີ່ໃກ້ຊິດລະຫວ່າງໂຄງສ້າງຂອງພາສາ ທີ່ບຸກຄົນໃຊ້ໃນການສະແດງຄວາມຄິດ ແລະ ໂຄງສ້າງທາງສິນລະທັມທີ່ປົກຄອງຄວາມຄິດ ແລະ ພຶດຕິກຳຂອງເຂົາມີຄວາມໝາຍເລິກເຊິ່ງທີ່ສຳຄັນ ສຳລັບວິທີທີ່ຄວນໃຊ້ໃນການສອນພາສາແລະສິນລະທັມ. ເນື້ອຫາຂອງຫຼັກສູດທີ່ໃຊ້ໃນການສອນພາສານັ້ນ ອາດມີຄວາມຫຼາກຫຼາຍໄປຕາມຄ່ານິຍົມຂອງຜູ້ທີ່ຈັດທຳຫຼັກສູດ. ເນື້ອຫາດັ່ງກ່າວອາດສື່ເຖິງແນວ ຄວາມຄິດທາງສິນລະທັມ, ເປັນເນື້ອຫາທີ່ສື່ເຖິງຄວາມບໍ່ແນ່ໃຈກ່ຽວກັບສິນລະທັມ ຫຼື ອາດຈະກໍ່ໃຫ້ເກີດອັນຕະລາຍທາງສິນລະທັມ. ເນື້ອຫາໜຶ່ງທີ່ໃຫ້ການສຶກສາທາງດ້ານສິນລະທັມ, ສາມາດມີແນວຄວາມຄິດທີ່ມີຄວາມຫຼາກຫຼາຍທີ່ຈະນຳມາເຜີຍແຜ່. ຕົວຢ່າງເຊັ່ນ ແນວຄວາມຄິດທາງດ້ານສິນລະທັມອາດຈະຖືກນຳມາ ສະເໜີໃນລັກສະນະຂອງຊຸດຄຸນນະທັມ, ຂໍ້ບັງຄັບ, ກົດ ແລະ ຂໍ້ເທັດຈິງຕ່າງໆທີ່ມຸ່ງເໜັ້ນຈະປັບປຸງພຶດຕິກຳ, ໂດຍປາສະຈາກອົງປະກອບທາງພາສາ ແລະ ຄວາມຄິດທີ່ຈະເພີ່ມພູນການຮັບຮູ້ທາງຈິດວິນຍານ ແລະ ການບຳລຸງຮັກສາຄວາມຜູກມັດຕົນ ຕໍ່ການປ່ຽນແປງທາງສັງຄົມ. ນອກຈາກນີ້ອີກເນື້ອຫາໜຶ່ງຍັງສາມາດພົບໂຄງການສຶກສາດ້ານສິນລະທັມ ທີ່ພຽງແຕ່ຂໍໃຫ້ນັກຮຽນປຶກສາຫາລືກ່ຽວກັບຄວາມມັກ ແລະ ສິ່ງທີ່ມັກໂດຍຕັ້ງສົມມຸດຕິຖານວ່າ ເມື່ອຊີ້ແຈງສິ່ງເລົ່ານີ້ແລ້ວພວກເຂົາຈະຄົ້ນພົບວ່າພວກເຂົາແມ່ນໃຜ ແລະ ຕະໜັກເຖິງສັກກະຍະພາບຂອງຕົນເອງ. ການຫຼຸດການສຶກສາດ້ານສິນລະທັມ ໃຫ້ເຫຼືອພຽງແນວທາງໃດແນວທາງໜຶ່ງນັ້ນບໍ່ສົມຄວນ. ແນ່ນອນວ່າໂຄງການທີ່ໄດ້ອຸທິດເພື່ອການເສີມສ້າງ ພະລັງທາງຈິດວິນຍານຂອງເຍົາວະຊົນ ບໍ່ສາມາດຫຼີກໜີຈາກມາດຕະຖານທາງສິນລະທັມອັນສູງສົ່ງໄດ້, ບໍ່ສາມາດລະເລີຍສິ່ງທີ່ມາດຕະຖານດັ່ງກ່າວ ຮຽກຮ້ອງຢ່າງຊັດເຈນຈາກບຸກຄົນໄດ້. ໃນຄະນະດຽວກັນ, ໂຄງການດັ່ງກ່າວຈຳເປັນຕ້ອງເປີດໂອກາດໃຫ້ມີການປຶກສາຫາລືແນວຄິດທາງຈິດວິນຍານຢ່າງພຽງພໍ ດັ່ງທີ່ພວກເຮົາໄດ້ກ່າວໄວ້ກ່ອນໜ້ານີ້. ຢ່າງໃດກໍຕາມ ຈຳເປັນຕ້ອງດຳເນີນການຕໍ່ໄປ. ໂດຍສະເພາະຢ່າງຍິ່ງ ຈະຕ້ອງໃຫ້ຄວາມສົນໃຈກັບບົດບາດຂອງພາສາໃນການສ້າງໂຄງສ້າງທາງສິນລະທັມ, ແລະ ເຮົາຈະພິຈາລະນາບົດບາດນີ້ໃນສອງຫົວຂໍ້ຕໍ່ໄປ.

## ຕອນທີ 16

ເອກະສານທີ່ເໝາະສົມສຳລັບການເສີມສ້າງພະລັງທາງຈິດວິນຍານ ຈຳເປັນຈະຕ້ອງຂຽນດ້ວຍພາສາທີ່ເປີດກວ້າງ ແລະ ໜ້າສຳຫຼວດ ຫຼີກລ້ຽງລັກສະນະຂອງແນວຄວາມຄິດ ທີ່ເຊື່ອວ່າຄວາມເປັນ

ຈິງທາງຈະລິຍະທັມ ແມ່ນຂື້ນນຳບຸກຄົນຜູ້ຍຶດໝັ້ນປະຕິບັດເທົ່ານັ້ນ ເຊິ່ງສິ່ງນີ້ເຮັດໃຫ້ຈະລິຍະສຶກສາເປັນອຳມະພາດໃນບໍ່ເທົ່າໃດທົດສະວັດທີ່ຜ່ານມາ.

*"ການເດີນໃນທົນທາງແຫ່ງຄວາມຊື່ຕົງ"* ແມ່ນເປັນອີກປຶ້ມໜຶ່ງ ທີ່ສະຖາບັນຣູຊີແນະນຳໃຫ້ກຸ່ມເຢົາວະຊົນສຶກສາ. ຫຼັກສູດນີ້ປະກອບດ້ວຍເລື່ອງເລົ່າຊາວເລື່ອງ, ແຕ່ລະເລື່ອງແມ່ນກ່ຽວກັບແນວຄວາມຄິດຫຼັກທາງສິນລະທັມ. ໃນວັດທະນະທຳສ່ວນໃຫຍ່, ເລື່ອງເລົ່າຕ່າງໆແມ່ນຖືກໃຊ້ເປັນທົນທາງເພື່ອສົ່ງຕໍ່ຄວາມຮູ້ຈາກຄົນລຸ່ນໜຶ່ງໄປສູ່ຄົນລຸ່ນຖັດໄປ. ໃນເນື້ອຫາຂອງຫຼັກສູດນີ້, ໄດ້ມີການນຳເລື່ອງເລົ່າທີ່ຮູ້ຈັກກັນດີມາຂຽນຂຶ້ນໃໝ່ ໃນລັກສະນະທີ່ບໍ່ມີຄວາມກ່ຳກຶ່ງທີ່ເຄີຍມີຢູ່ໃນການນຳສະເໜີໃນອາດີດ. ແຕ່ລະບົດຮຽນມີບົດເຝິກຫັດກ່ຽວກັບພາສາທີ່ຈະຊ່ວຍເສີມທັກສະ ແລະ ຄວາມສາມາດທາງດ້ານພາສາທີ່ມີຄວາມສຳຄັນຢ່າງຍິ່ງ ຕໍ່ການພັດທະນາທີ່ດີຂອງໂຄງສ້າງທາງສິນລະທັມ. ບົດຮຽນທາງລຸ່ມນີ້ເລີ່ມຕົ້ນດ້ວຍນິທານຊາດົກທີ່ເຈົ້າຄຸ້ນເຄີຍກັນດີ. ເລື່ອງເລົ່າຈຳເປັນຕ້ອງຖືກຂຽນຂຶ້ນມາໃໝ່ດ້ວຍຈຸດປະສົງໃນການບຳລຸງຮັກສາຮູບແບບຄວາມຄິດ ແລະ ພຶດຕິກຳທີ່ມີຈະລິຍະທັມຢ່າງຊັດເຈນ. ຂໍໃຫ້ເຈົ້າອ່ານເລື່ອງດັ່ງກ່າວ ແລະ ອະທິບາຍວ່າ ຂ່າວສານທາງສິນລະທັມທີ່ໄດ້ສື່ເຖິງໃນເລື່ອງນີ້ປາສະຈາກ ຈາກແນວຄວາມຄິດທີ່ເຊື່ອວ່າ ຄວາມຈິງທາງຈະລິຍະທັມ ແມ່ນຂື້ນນຳບຸກຄົນທີ່ຍຶດໝັ້ນປະຕິບັດ ແລະບໍ່ມີທ່າອ່ຽງທີ່ຈະຍອມຮັບບັນທັດຖານທາງວັດທະນະທຳໃນແນວລົບໄດ້ຢ່າງໃດ.

*ຜູ້ທີ່ມີປັນຍາບໍ່ຄວນຖືກຕົວະຍົວະດ້ວຍຄຳເວົ້າຂອງການຍ້ອງຍໍສັນລະເສີນ, ແນ່ນອນທີ່ສຸດ, ມະນຸດທຸກຄົນຈະໄດ້ຮັບກຳລັງໃຈ ດ້ວຍຄຳເວົ້າຂອງການສັນລະເສີນ, ແຕ່ພວກເຮົາຄວນຈື່ຈຳເອົາໄວ້ວ່າ ຄວາມປາດຖະໜາທີ່ຈະໄດ້ຮັບການສັນລະເສີນນັ້ນເຮັດໃຫ້ການຕັດສິນຂອງພວກເຮົາອ່ອນແອລົງ.*

ມີໝາປ່າໂຕໜຶ່ງຫຼຽວເຫັນໂຕກາທີ່ກຳລັງບິນຜ່ານໄປ, ພ້ອມກັບຄາບຊີດສ໌ຕ່ອນໜຶ່ງໄວ້ໃນປາກຂອງມັນ, "ຂ້ອຍຕ້ອງຍາດເອົາຊີດສ໌ຕ່ອນນັ້ນມາໃຫ້ໄດ້", ໝາປ່າເວົ້າກັບຕົນເອງ ແລະ ກໍ່ຍ່າງຕາມເງົາຂອງໂຕກາໄປ ຈົນກະທັ້ງໂຕກາໂຕນັ້ນບິນໄປຢຸດທີ່ກິ່ງໄມ້ງ່າໜຶ່ງ.

"ສະບາຍດີ, ສ່ຽວກາເອີ່ຍ" ໝາກປ່າເວົ້າຂຶ້ນດ້ວຍທ່າທາງເປັນມິດທີ່ສຸດ. "ມື້ນີ້ເຈົ້າເບິ່ງຄືງາມແທ້, ຂົນຂອງເຈົ້າເບິ່ງຄືດຳເຫຼື້ອມເງົາງາມ ແລະ ຕາຂອງເຈົ້າກໍ່ເປັນປະກາຍຄືກັບແກ້ວມະນີ. ຂ້ອຍກໍ່ໝັ້ນໃຈຢ່າງທີ່ສຸດວ່າ ເຈົ້າຈະຕ້ອງມີສຽງທີ່ມ່ວນອອນຊອນຢ່າງແນ່ນອນ. ໂອ...! ຫາກວ່າຂ້ອຍສາມາດໄດ້ຍິນສຽງຮ້ອງອັນມ່ວນອອນຊອນຂອງເຈົ້າ."

ຄຳເວົ້າທີ່ໝາປ່າໄດ້ເວົ້າໄປນັ້ນປຽບຄືກັນກັບນ້ຳໃສສະອາດ ທີ່ສ້າງຄວາມເພິ່ງພໍໃຈແກ່ໂຕກາທີ່ກະຫາຍໃນຄຳຍ້ອງຍໍສັນລະເສີນ. ດັ່ງນັ້ນ ໂຕກາຈຶ່ງຊູຫົວຂອງມັນຂຶ້ນດ້ວຍຄວາມທະນົງຕົນ ແລະ ຕຽມຕົວທີ່ຈະນຳສະເໜີສຽງເພງ ເພື່ອເປັນກຽດໃຫ້ແກ່ເພື່ອນທີ່ໜ້າຮັກຂອງມັນ.

ແນ່ນອນທີ່ສຸດ, ໃນຂະນະທີ່ໂຕກາເປີດປາກຂອງມັນຂຶ້ນ, ຊີດສ໌ຕ່ອນນັ້ນກໍ່ຕົກລົງດິນ. ໝາປ່າແລ່ນເຂົ້າສວບຕ່ອນຊີດສ໌ຢ່າງໄວວາກ່ອນທີ່ມັນຈະຕົກເຖິງພື້ນ ແລະ ແລ່ນໜີຈາກໄປ, ໃນຂະນະທີ່ສຽງອັນບໍ່ເປັນຕາຟັງຂອງໂຕກາກຳດັງກ້ອງຄັບຟ້າ.

**ຄວາມເຂົ້າໃຈ**

ຂໍໃຫ້ຕອບຄຳຖາມລຸ່ມນີ້ດ້ວຍປະໂຫຍກທີ່ສົມບູນ.

1. ໝາປ່າຫຼຽວເຫັນຫຍັງ?______________________________

______________________________

2. ໂຕກາຄາບຫຍັງໄວ້ໃນປາກຂອງມັນ?______________________________

______________________________

3. ໝາປ່າເຮັດແນວໃດເພື່ອຈະເອົາຊີດສ໌ຕ່ອນນັ້ນມາ?______________________________

______________________________

4. ໂຕກາມີສຽງທີ່ມ່ວນອອນຊອນແທ້ບໍ່?______________________________

5. ໝາປ່າມີຄວາມຈິງໃຈໃນຄຳຍ້ອງຍໍຊົມເຊີຍຂອງມັນທີ່ມີຕໍ່ໂຕກາບໍ່?______________________________

______________________________

6. ເລື່ອງນີ້ເກີດໃນເມືອງ, ໃນໝູ່ບ້ານ ຫຼື ໃນປ່າ?______________________________

______________________________

**ຄຳສັບ**

ຈົ່ງຕື່ມປະໂຫຍກຕໍ່ໄປນີ້ໃຫ້ສົມບູນໂດຍໃຊ້ຄຳສັບທີ່ໃຫ້ມາຂ້າງລຸ່ມນີ້:

| | | | | |
|---|---|---|---|---|
| ຊຸກຍູ້ | ປາດຖະໜາ | ທີ່ໜ້າຮັກ | ເງົາ | ຍ້ອງຍໍ |
| ເພິ່ງພໍໃຈ | ຄວາມທະນົງຕົນ | ປິຕິຍິນດີ | ການຕັດສິນໃຈ | ອ່ອນແອ |

1. ຄູເຫັນວ່ານັກຮຽນຂອງລາວໄດ້ຕັ້ງໃຈສຶກສາຮ່ຳຮຽນຢ່າງດຸໝັ່ນ, ລາວຈຶ່ງ ______________ ພວກເຂົາຢູ່ສະເໝີ.

2. ທ້າວອານານໂດ ແລະ ນ້ອງຊາຍຂອງລາວໃຊ້ຊ່ວງເວລາທີ່ ___________________ໝົດມື້ນຳກັນດ້ວຍການເຮັດວຽກໃນທົ່ງນາ ແລະ ໂອ້ລົມກ່ຽວກັບແຜນການໃນອານາຄົດຂອງພວກເຂົາ.
3. ນາງຮອງເມີຍ ມັກທີ່ຈະເດີນທາງທ່ອງທ່ຽວ ແລະ ມີຄວາມ ___________________ ທີ່ຈະພົບເຫັນສະຖານທີແປກໃໝ່.
4. ລາວມີສຽງທີ່ມ່ວນອອນຊອນ, ຄູຂອງລາວຈຶ່ງ_________________ໃຫ້ລາວຮຽນດ້ານດົນຕີ.
5. ຊາວນາໄດ້ສະແດງອອກເຊິ່ງ _________________________ທີ່ດີທີ່ວ່ານເມັດພືດຂອງເຂົາທັນທີຫຼັງຈາກຝົນຕົ້ນລະດູຕົກຄັ້ງທຳອິດ.
6. ທ້າວ ຈັນດູ ບໍ່ _______________ກັບຄະແນນທີ່ລາວໄດ້ຮັບຈາກການສອບເສັງ, ດັ່ງນັ້ນລາວຈຶ່ງຕັ້ງໃຈຮ່ຳຮຽນໃຫ້ໜັກຫຼາຍກ່ອນເກົ່າ.
7. ທ້າວ ຊອງຈຽງ ຕົກຢູ່ໃນຄວາມຫຍຸ້ງຍາກລຳບາກ, ແຕ່ເພາະວ່າເຂົາມີ ________________ _________________ຫຼາຍເກີນໄປ, ລາວຈຶ່ງບໍ່ຍອມໃຫ້ຜູ້ອື່ນມາຊ່ວຍລາວ.
8. ຍາມແລງຂອງແຕ່ລະມື້ _________ທີ່ກ່າຍຍາວຂອງຕົ້ນໄມ້ໄດ້ປົກຄຸມໄປທົ່ວສວນດອກໄມ້.
9. ມັນເປັນເລື່ອງເລົ່າທີ່ _______________________ຫຼາຍ, ແລະ ເດັກໆຕ້ອງການທີ່ຈະຟັງຊ້ຳແລ້ວຊ້ຳອີກຫຼາຍໆເທື່ອ.
10. ລາວ _____________________ຫຼາຍ ເພາະຄວາມເຈັບປ່ວຍ, ແຕ່ອີກບໍ່ດົນລາວກໍຈະກັບໄປເຮັດວຽກໄດ້ອີກຄັ້ງ, ຮັບຮູ້ໄດ້ວ່າລາວຈະເຊົາ ແລະ ແຂງແຮງຂຶ້ນໄວໆນີ້.

**ການປຶກສາຫາລື**

ພວກເຮົາຈະແນ່ໃຈໄດ້ແນວໃດວ່າ ພວກເຮົາຈະບໍ່ຖືກຕົວະຍົວະດ້ວຍຄຳຍ້ອງຍໍ?

**ການທ່ອງຈຳ**

**"ຈົ່ງປົກປ້ອງຕົນເອງດ້ວຍຄວາມລະມັດລະວັງຢ່າງທີ່ສຸດ ເພື່ອເຈົ້າຈະໄດ້ບໍ່ຕິດກັບຢູ່ໃນກັບດັກຫຼຸມພາງ ຂອງການຕົວະຍົວະ ແລະ ການສໍ້ໂກງ."**

ຈົ່ງປຶກສາຫາລືຄຳຖາມຕໍ່ໄປນີ້ນຳກຸ່ມຂອງເຈົ້າ:

1. ຖ້າຄົນເລົ່າເລື່ອງບໍ່ລະມັດລະວັງ, ເລື່ອງເລົ່ານີ້ອາດຈະຖືກເລົ່າໃນລັກສະນະທີ່ອາດຈະກາຍເປັນການຊົມເຊີຍຄວາມສະຫຼາດຢ່າງເຫັນໄດ້ແຈ້ງຂອງໝາປ່າ. ເລື່ອງເລົ່າທີ່ເລົ່າມາຢ່າງທີ່ປະກົດໃນປຶ້ມນີ້ຫຼີກລ້ຽງທີ່ຈະເຮັດໃຫ້ເຂົ້າໃຈຜິດແບບນັ້ນໄດ້ແນວໃດ?

2. ແນວຄວາມຄິດຫຼັກທາງດ້ານສິນລະທັມທີ່ເລື່ອງເລົ່ານີ້ກ່າວເຖິງແມ່ນຫຍັງ?

3. ມີແນວຄວາມຄິດອື່ນໃດອີກບໍ່ ທີ່ເຊື່ອມໂຍງກັບແນວຄວາມຄິດຫຼັກນີ້?

4. ນິທານໃນລັກສະນະນີ້ເຮັດໜ້າທີ່ເປັນເຄື່ອງມືໃນການຊ່ວຍໃຫ້ເຍົາວະຊົນ ເຂົ້າໃຈໃນແນວຄວາມຄິດທາງສິນລະທັມໄດ້ຢ່າງມີປະສິດທິພາບແນວໃດແດ່?

5. ບົດເຝິກຫັດຕ່າງໆມີສ່ວນຊ່ວຍສ້າງຄວາມສາມາດໃດແດ່ໃຫ້ແກ່ເຍົາວະຊົນ?

6. ບົດເຝິກຫັດການປຶກສາຫາລື - ເມື່ອດໍາເນີນການທີ່ບໍ່ໄດ້ຢູ່ໃນຄວາມຫວ່າງເປົ່າ ແຕ່ຢູ່ໃນບໍລິບົດຂອງຂໍ້ຄວາມທາງສິນລະທັມທີ່ຖ່າຍທອດໃນເລື່ອງເລົ່າ - ມີສ່ວນສະໜັບສະໜູນຕໍ່ການພັດທະນາພະລັງແຫ່ງຄວາມຄິດ ແລະ ການໄຕ່ຕອງຄືແນວໃດ? ຈະຍົກລະດັບພະລັງແຫ່ງການສະແດງອອກຄືແນວໃດ?

7. ການທ່ອງຈຳພຣະວັດຈະນະໃນຕອນທ້າຍຂອງບົດຮຽນ ຊ່ວຍເພີ້ມຄວາມເຂັ້ມແຂງໃຫ້ແກ່ພະລັງເລົ່ານີ້ແນວໃດ? ______________________________________________

## ຕອນທີ 17

ຫາກເຍົາວະຊົນຈະໄດ້ຮັບຄວາມຊ່ວຍເຫຼືອ ໃນການຮັບຮູ້ຫຼັກການຕ່າງໆທາງສິນລະທັມ ທີ່ເປັນພື້ນຖານຂອງການຕັດສິນໃຈທີ່ພວກເຂົາຈະເລືອກ, ເປັນສິ່ງສຳຄັນທີ່ສະຖານະການທີ່ນຳສະເໜີແກ່ເຍົາວະຊົນນັ້ນ ຈະຕ້ອງໃກ້ຄຽງກັບສະພາບຄວາມເປັນຈິງຂອງພວກເຂົາ. ຢ່າງໃດກໍ່ຕາມ, ນີ້ບໍ່ໄດ້ໝາຍຄວາມວ່າ ໃນການເບິ່ງເຖິງສະພາບຄວາມເປັນຈິງ, ຈະຕ້ອງໃຫ້ຄວາມເອົາໃຈໃສ່ຫຼາຍເກີນໄປຕໍ່ການສະແດງອອກຂອງທຳມະຊາດຝ່າຍຕ່ຳຂອງມະນຸດ. ແບບນິຍົມຂອງຄວາມຄິດ ແລະ ພຶດຕິກຳ ສາມາດສ້າງຂື້ນມາໄດ້ໂດຍບໍ່ຈຳເປັນຕ້ອງສະແດງໃຫ້ເຫັນວ່າ ເຍົາວະຊົນສ່ວນຫຼາຍຄິດ ແລະ ປະພຶດຕົນແນວໃດໃນປັດຈຸບັນ, ແທນທີ່ຈະເປັນແນວນັ້ນ ກໍ່ຍັງເປັນສິ່ງທີ່ພວກເຂົາເຂົ້າເຖິງໄດ້ ແລະ ເປັນສິ່ງທີ່ສາມາດໃຫ້ແຮງບັນດານໃຈ ແກ່ພວກເຂົາໃນການພະຍາຍາມຢ່າງໜັກ ເພື່ອໄປສູ່ລະດັບທີ່ສູງກວ່າຂອງຄວາມດີເລີດ. ໃນການເຮັດແນວນີ້, ເບິ່ງຄືວ່າຈະເປັນສິ່ງສຳຄັນ ທີ່ຈະຫຼີກລ້ຽງການສະແດງຕົນເປັນຄືຜູ້ປົກຄອງ, ການເວົ້າເລື່ອງທີ່ບໍ່ມີສາລະ ແລະ ພາສາທີ່ມີລັກສະນະ ເປັນການເທດສະໜາສັ່ງສອນເລື່ອງພຶດຕິກຳທີ່ດີ. ຂໍພິຈາລະນາບົດຮຽນຕໍ່ໄປນີ້ ຈາກອີກປື້ມເຫຼັ້ມອື່ນທີ່ໄດ້ຮັບແຮງບັນດານໃຈຈາກບາຮາຍ ປື້ມທີ່ເອີ້ນວ່າ *"ການຮຽນຮູ້ກ່ຽວກັບຄວາມດີເລີດ."* ໃນບົດຮຽນນີ້, ທ່ານນາງ ເຊີນ ກຳລັງ ອະທິບາຍແນວຄວາມຄິດເລື່ອງຄວາມບໍລິສຸດໃຫ້ແກ່ລູກຫຼານຂອງລາວຢູ່ ແລະ ກຳລັງໃຫ້ການຊ່ວຍເຫຼືອພວກເຂົາໂດຍໃຊ້ສອງສາມບົດເຝິກຫັດ, ເພື່ອຊ່ວຍໃຫ້ລູກຫຼານເຂົ້າໃຈກ່ຽວກັບຄວາມສຳຄັນຂອງຄວາມບໍລິສຸດດີຂື້ນ.

ທ່ານ ນາງ ເຊີນ ກ່າວເຖິງເງື່ອນໄຂທີສອງຂອງຄວາມດີເລີດຄື ຊີວິດທີ່ບໍລິສຸດ ແລະ ສັກສິດ, ເຊິ່ງໝາຍເຖິງຄວາມຈຽມຕົວ, ຄວາມບໍລິສຸດ, ຄວາມພໍປະມານ, ຄວາມເໝາະສົມ, ແລະ ຄວາມມີຈິດໃຈທີ່ສະອາດ. ລາວເລີ້ມຕົ້ນດ້ວຍການບັນຍາຍເຖິງຄວາມບໍລິສຸດ, ເຊິ່ງເປັນຮາກຖານຂອງຊີວິດທີ່ບໍລິສຸດຈະຕ້ອງຖືກສ້າງຂື້ນ:

"ລອງນຶກພາບຂອງກະຈົກ. ຖ້າເຈົ້າທຳຄວາມສະອາດຂີ້ຝຸ່ນທັງໝົດອອກໄປ, ມັນຈະສະທ້ອນແສງ. ໃນທຳນອງດຽວກັນ ເມື່ອຫົວໃຈສະອາດຈາກຄວາມບໍ່ສົມບູນແບບ ເຊັ່ນ ຄວາມອິດສາ, ຄວາມກຽດ

ຊັງ, ແລະ ຄວາມຍິ່ງທະນົງ, ຫົວໃຈຈະບໍລິສຸດ ແລະ ສາມາດສະທ້ອນແສງຈາກສະຫວັນໄດ້. ເມັ່ງຈື່ (ນັກປາດຈີນບູຮານ) ໄດ້ກ່າວວ່າ ຄົນຜູ້ສູງສັກຈະບໍ່ສູນເສຍຫົວໃຈທີ່ໄຮ້ດຽງສາຂອງເຂົາ. ແນ່ນອນນີ້ເປັນເລື່ອງຈິງ, ແຕ່ເຮົາຕ້ອງຈຳໄວ້ວ່າ ຫົວໃຈຂອງເດັກນ້ອຍນັ້ນບໍລິສຸດ ຈາກຄວາມໄຮ້ດຽງສາ ແລະ ຄວາມອ່ອນແອ ແລະ ນັ້ນຄືຄວາມບໍລິສຸດຂອງເດັກທີ່ຍັງບໍ່ໄດ້ຖືກທົດສອບ. ຕອນນີ້ເຈົ້າຢູ່ໃນໄວທີ່ບໍ່ສາມາດຖືວ່າເປັນເດັກ ນ້ອຍໄດ້ອີກແລ້ວ. ເມື່ອເຈົ້າໃຫຍ່ຂຶ້ນມາ ເຈົ້າຈະສະຫຼາດຮອບຮູ້ ແລະ ເຂັ້ມແຂງ. ແຕ່ລະຄົນຈະຕ້ອງເຝົ້າລະວັງ ແລະ ດູແລເອົາໃຈໃສ່ຢ່າງທີ່ສຸດເພື່ອບໍ່ໃຫ້ສູນເສຍຫົວໃຈທີ່ບໍລິສຸດ. ເຈົ້າບໍ່ຄວນປ່ອຍໃຫ້ກະຈົກແຫ່ງຫົວໃຈຂອງເຈົ້າເປິເປື້ອນ ດ້ວຍສິ່ງທີ່ບໍ່ບໍລິສຸດຂອງໂລກນີ້. ແຕ່ວ່າສິ່ງນີ້ຄວນກະທຳດ້ວຍພະລັງແຫ່ງເຫດ ຜົນ ແລະ ຄວາມສັດທາ. ເຈົ້າສາມາດຮັກສາໃຫ້ບໍລິສຸດໄດ້ດ້ວຍຄວາມພະຍາຍາມ ແລະ ການເຝິກຝົນຄວາມຕັ້ງໃຈ."

ຈາກນັ້ນ ທ່ານ ນາງ ເຊີນ ອະທິບາຍວ່າ ຕາມປົກກະຕິແລ້ວແນວຄິດເລື່ອງຄວາມບໍລິສຸດ ມັກຖືກເຂົ້າໃຈຜິດ ແລະ ລາວຂໍໃຫ້ຫຼານໆຂອງລາວລະບຸວ່າ ອັນໃດໝາຍເຖິງຄຸນລັກສະນະທີ່ບົ່ງຊີ້ເຖິງຄວາມບໍລິສຸດ ແລະ ອັນໃດທີ່ກ່ຽວຂ້ອງຢ່າງບໍ່ຖືກຕ້ອງ ຈາກຄຳເວົ້າຂ້າງລຸ່ມ:

- ເປັນຂອງແທ້
- ມີຄວາມຈິງໃຈ
- ໄຮ້ດຽງສາ
- ປາດສະຈາກຄວາມເສແສ້ງ
- ມີຈິດໃຈທີ່ບໍລິສຸດ
- ມີຮ່າງກາຍທີ່ສະອາດ
- ໂງ່ຈ້າ
- ປາດສະຈາກຄວາມຍິ່ງທະນົງ
- ກະຕືລືລົ້ນຢ່າງບ້າຄັ່ງ
- ເປັນຄົນງ່າຍໆ
- ປາດສະຈາກການຫຼອກລວງ
- ເສຍສະຫຼະ
- ອ່ອນແອ
- ອ່ອນໄຫວງ່າຍ
- ມີຄວາມສະຫຼຽວສະຫຼາດ
- ມີເມດຕາ
- ບໍ່ໂອ້ອວດ

ໃຫ້ຊາວໜຸ່ມທ່ອງຈຳພຣະວັດຈະນະຂ້າງລຸ່ມນີ້ ແລ້ວປຶກສາກ່ຽວກັບຄຳຖາມຕໍ່ໄປນີ້ ນຳພໍ່ຕູ້ແມ່ຕູ້ຂອງພວກເຂົາ:

**"ຄຳແນະນຳທຳອິດຂອງເຮົາຄື: ຈົ່ງມີຫົວໃຈທີ່ບໍລິສຸດ, ເມດຕາ ແລະ ຜ່ອງໃສ, ເພື່ອວ່າເຈົ້າຈະດຳລົງຢູ່ໃນອານາຈັກ ອັນຍັ້ງຢືນ, ຖາວອນ ແລະ ບໍ່ຮູ້ສິ້ນ."**

**"ປະການທຳອິດໃນວິຖີຊີວິດຂອງມະນຸດຕ້ອງມີຄວາມບໍລິສຸດ, ຈາກນັ້ນຕ້ອງມີຄວາມສົດຊື່ນ , ຄວາມສະອາດ, ແລະ ຄວາມເປັນອິດສະຫຼະຂອງຈິດວິນຍານ. ທຳອິດຈະຕ້ອງຊຳລະຕົ້ນນ້ຳລຳທານໃຫ້ສະອາດກ່ອນ, ຈາກນັ້ນນຳເອົານ້ຳໃນແມ່ນ້ຳທີ່ຫອມຫວານ ໄຫຼເຂົ້າໄປໃນນັ້ນ."**

1. ຄົນທີ່ໜ້າໄຫວ້ຫຼັງຫຼອກ ຄືຄົນທີ່ເຮັດທຳທ່າເປັນຄົນທ່ຽງທຳໃນຂະນະທີ່ບໍ່ໄດ້ເປັນແນວນັ້ນ. ແມ່ນ ຫຍັງທີ່ເປັນສິ່ງຊົ່ວຮ້າຍທີ່ສຸດ ລະຫວ່າງການມີຂໍ້ບົກຜ່ອງຫຼາຍໆອັນກັບການເປັນຄົນໜ້າໄຫວ້ຫຼັງຫຼອກ?
2. ມີສິ່ງທີ່ບໍ່ບໍລິສຸດໃດແດ່ ທີ່ພວກເຮົາຕ້ອງຊຳລະມັນອອກໄປຈາກຄວາມຄິດຂອງເຮົາ?
3. ແທ້ຈິງແລ້ວແມ່ນໃຜຈະເປັນຜູ້ປະສົບຄວາມສຳເລັດຫຼາຍກວ່າກັນໃນໂລກນີ້, ຜູ້ມີຫົວໃຈບໍລິສຸດ ຫຼື ຜູ້ບໍ່ຈິງໃຈ?

ຈົ່ງປຶກສາຫາລືຄຳຖາມຕໍ່ໄປນີ້ນຳກຸ່ມຂອງເຈົ້າ:

1. ບົດຮຽນນີ້ຊ່ວຍກຳຈັດຄວາມເຂົ້າໃຈຜິດທີ່ພົບໄດ້ຫຼາຍ ກ່ຽວກັບແນວຄວາມຄິດເລື່ອງຄວາມບໍລິສຸດແນວໃດ?

2. ແມ່ນຫຍັງຄືລັກສະນະສະເພາະທາງພາສາທີ່ ທ່ານ ນາງ ເຊັນ ໄດ້ນຳໃຊ້?

3. ບົດຮຽນນີ້ຊ່ວຍເຍົາວະຊົນບຸກບືນໃຫ້ຈິດວິນຍານດີເລີດຄືແນວໃດ?

## ຕອນທີ 18

ໃນສອງຕອນສຸດທ້າຍທີ່ພວກເຮົາໄດ້ພິຈາລະນາ ບົດບາດຂອງພາສາໃນການສ້າງໂຄງສ້າງທາງສິນລະທັມແມ່ນພຽງໂດຍຫຍໍ້ກໍຕາມ. ການກວດສອບບົດຮຽນສອງບົດ, ບົດໜຶ່ງຈາກປຶ້ມ *"ການເດີນໃນທົ່ນທາງແຫ່ງຄວາມຊື່ຕົງ"* ແລະອີກບົດຈາກປຶ້ມ *"ການຮຽນຮູ້ກ່ຽວກັບຄວາມດີເລີດ"*, ໄດ້ຊ່ວຍໃຫ້ພວກເຮົາເຫັນວ່າ ການປຶກສາຫາລືກ່ຽວກັບຫົວຂໍ້ ແລະ ແນວຄວາມຄິດຕ່າງໆ, ຮ່ວມກັບບົດເຝິກຫັດທີ່ອອກແບບມາເພື່ອຍົກລະດັບທັກສະ ແລະ ຄວາມສາມາດ, ສາມາດສ້າງຄວາມເຂັ້ມແຂງໃຫ້ຮູບແບບຂອງຄວາມຄິດ ທີ່ອຳນວຍຕໍ່ການເລືອກທາງສິນລະທັມທີ່ຖືກຕ້ອງໄດ້ແນວໃດ. ເຖິງຢ່າງໃດກໍຕາມຄວາມສາມາດທາງພາສາໃນລັກສະນະນີ້ຈະມີຄວາມສຳຄັນ, ແຕ່ພວກເຮົາຄວນຈື່ໄວ້ວ່າໂຄງສ້າງທາງສິນລະທັມຂອງແຕ່ລະບຸກຄົນ ຂຶ້ນຢູ່ກັບປັດໃຈທີ່ມີຜົນກະທົບຫຼາຍປະການ. ໂດຍສະເພາະຢ່າງຍິ່ງ, ມັນເປັນເລື່ອງຍາກທີ່ຈະແຍກຮູບແບບການຄິດ ທີ່ກຳລັງປຶກສາຫາລືກັນຕອນນີ້ອອກຈາກການຄິດທາງດ້ານວິທະຍາສາດ. ຄົນລຸ້ນເຍົາຈຳເປັນຕ້ອງກຽມພ້ອມທີ່ຈະເຂົ້າເຖິງ ການສືບສວນຫາຄວາມຈິງໃນລັກສະນະທາງວິທະຍາສາດ. ຈຳນວນປຶ້ມບາງສ່ວນທີ່ພວກເຂົາຈະສຶກສານັ້ນ ຈະເຈາະເລິກເຂົ້າໄປໃນຂົງເຂດວິຊາຄະນິດສາດ ແລະ ວິທະຍາສາດ - ບໍ່ແມ່ນເພື່ອພະຍາຍາມສອນເປັນວິຊາ ແຕ່ເພື່ອເສີມສ້າງຄວາມມີເຫດຜົນທີ່ຂໍ້ຄວາມເລົ່ານີ້ສ້າງຂຶ້ນ. ໃນຫຼັກສູດທີ່ແຍກອອກມາຈາກປຶ້ມເຫຼັ້ມນີ້, ເຊິ່ງມຸ່ງເນັ້ນໄປທີ່ຜູ້ທີ່ຕ້ອງການອຸທິດຕົນໃຫ້ກັບການເຮັດວຽກຮ່ວມກັບເຍົາວະຊົນ ເປັນໄລຍະເວລາຫຼາຍປີ, ເຊິ່ງປຶ້ມຕ່າງໆຈະຖືກປຶກສາຫາລືກ່ຽວກັບຂໍ້ຄວາມເລົ່ານີ້. ໃນຂະນະນີ້, ເຈົ້າພຽງແຕ່ຕະໜັກເຖິງອົງປະກອບຂອງຂະບວນການສຶກສາທີ່ເຍົາວະຊົນຈະມີສ່ວນຮ່ວມກໍພຽງພໍແລ້ວ.

## ຕອນທີ 19

ການພັດທະນາການຮັບຮູ້ທາງຈິດວິນຍານ, ການເພີ່ມພູນພະລັງແຫ່ງການສະແດງອອກ, ແລະການສ້າງໂຄງສ້າງ ທາງສິນລະທັມທີ່ດີ ທັງໝົດນີ້ຖືກນຳໄປສູ່ຂະບວນການເສີມສ້າງພະລັງຄວາມສາມາດທາງຈິດວິນຍານ. ໂຊກບໍ່ດີປານໃດ, ທີ່ໃນຄວາມຄິດຂອງຄົນສ່ວນຫຼາຍນັ້ນ ການຄອບຄອງພະລັງອຳນາດມັກພົວພັນກັບຄ່ານິຍົມ ທີ່ບໍ່ສອດຄ່ອງກັບລັກສະນະທາງຈິດວິນຍານຂອງມະນຸດ. ພາບຕ່າງໆທີ່ມັກຈະປະກົດຂຶ້ນໃນຄວາມຄິດ ໃນຕອນທີ່ອະທິບາຍກັນເຖິງເລື່ອງຂອງພະລັງອຳນາດກໍ່ຄື ພາບຂອງການຄວບຄຸມ, ການເຊີດຫຸ່ນ, ການຄອບງຳ, ການປົກຄອງ, ການມີອຳນາດສູງສຸດ ແລະ ການເຮັດ

ໃຫ້ຕົກເປັນຂ້າທາດ. ເຖິງຢ່າງໃດກໍ່ຕາມ, ເປົ້າໝາຍຂອງເຈົ້າຄືການຊ່ວຍໃຫ້ເຍົາວະຊົນພັດທະນາພະລັງທີ່ມີຄວາມຫຼາກຫຼາຍ. ພະລັງທາງສິນລະທັມ ແມ່ນກຳເນີດມາຈາກຄວາມຮັກ, ຄວາມຍຸດຕິທັມ, ຄວາມຮູ້, ຄວາມເຂົ້າໃຈ, ການຮັບຮູ້, ການຮັບໃຊ້, ແລະ ເໜືອສິ່ງອື່ນໃດທັງໝົດຄືຄວາມອ່ອນນ້ອມຖ່ອມຕົນ. ຂະບວນການຂອງການເສີມສ້າງຄວາມສາມາດທີ່ພວກເຮົາກຳລັງສຳຫຼວດຢູ່ນີ້, ເພາະມີພຽງຄວາມຊ່ວຍເຫຼືອຈາກຄວາມສູງສົ່ງເທົ່ານັ້ນ ທີ່ເຮັດໃຫ້ແມງໝີ່ກາຍເປັນນົກອິນຊີ, ນ້ຳຢອດດຽວກາຍເປັນແມ່ນ້ຳ ແລະ ທະເລ, ແລະ ອະນຸພາກນ້ອຍໆ (ອາຕອມ) ກາຍເປັນແສງສະຫວ່າງ ແລະ ດວງຕາເວັນ. ການໄຕ່ຕອງຂໍ້ຄວາມ ທີ່ຄັດມາຈາກບົດອະທິຖານບາງບົດຂອງ ພຣະບາຣາອຸລລາຫ໌ ແລະ ພຣະອັບດຸລບາຮາ, ທີ່ພວກເຮົາໃຊ້ສວດອ້ອນວອນຂໍໃຫ້ ພຣະຜູ້ເປັນເຈົ້າຊົງປະທານຄຸນລັກສະນະ ແລະ ຄຸນນະສົມບັດບາງຢ່າງໃຫ້ແກ່ພວກເຮົາ, ຊ່ວຍໃຫ້ພວກເຮົາມີຄວາມຮັບຮູ້ທີ່ ສຳຄັນກ່ຽວກັບລັກສະນະຂອງການເສີມສ້າງຄວາມສາມາດທາງຈິດວິນຍານ ແລະ ສິນລະທັມ:

> **"ຂ້າພະເຈົ້າຂໍອະທິຖານຕໍ່ພຣະອົງ, ໂອ ພຣະຜູ້ຊົງເປັນນາຍແຫ່ງນາມທັງປວງ ແລະ ພຣະຜູ້ຊົງປົກຄອງທັງໂລກແລະສະຫວັນ, ຂໍຊົງເຮັດໃຫ້ຜູ້ເປັນທີ່ຮັກທຸກຄົນຂອງພຣະອົງ ກາຍເປັນຖ້ວຍແຫ່ງຄວາມເມດຕາປານີໃນຍຸກສະໄໝຂອງພຣະອົງ, ເພື່ອວ່າພວກເຂົາເຈົ້າຈະຟື້ນຊີວິດແກ່ຫົວໃຈຂອງຄົນຮັບໃຊ້ຂອງພຣະອົງ. ໂອ ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ! ຂໍຊົງເສີມຄວາມສາມາດແກ່ພວກເຂົາ, ໃຫ້ເປັນຄືກັບສາຍຝົນ ທີ່ຫຼັ່ງໄຫຼລົງມາຈາກກ້ອນເມກແຫ່ງຄວາມກະລຸນາຂອງພຣະອົງ ແລະ ກາຍເປັນສາຍລົມທີ່ພັດພາກິ່ນ ຫອມແຫ່ງລະດູໃບໄມ້ປົ່ງແຫ່ງຄວາມເມດຕາຮັກແພງຂອງພຣະອົງ, ເພື່ອວ່າໂດຍສິ່ງເລົ່ານີ້ ພື້ນແຜ່ນດິນແຫ່ງຫົວໃຈຂອງສິ່ງສ້າງສັນຂອງພຣະອົງ ຈະປົກຄຸມໄປດ້ວຍຄວາມຂຽວສະອຸ່ມ ແລະ ຈະກໍ່ໃຫ້ເກີດສິ່ງຕ່າງໆທີ່ຈະສົ່ງກິ່ນອັນຫອມຫວນໄປທົ່ວອານາຈັກຂອງພຣະອົງ, ເພື່ອວ່າທຸກຄົນຈະສາມາດຮັບຮູ້ເຖິງຄວາມຫອມຫວານແຫ່ງເສື້ອຄຸມ ຂອງການເປີດເຜີຍພຣະທັມຂອງພຣະອົງ, ພຣະອົງຊົງມີອຳນາດໃນການກະທຳສິ່ງທີ່ພຣະອົງປະສົງ."** [41]

> **"ໂອ ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ! ຂໍຊົງເສີມຄວາມສາມາດແກ່ພວກຂ້າພະເຈົ້າ ໃນການແຜ່ກະຈາຍສັນຍະລັກຂອງພຣະອົງອອກໄປໃຫ້ກວ້າງໄກ ໃນທ່າມກາງສິ່ງສ້າງສັນຂອງພຣະອົງ ແລະ ໃນການອາລັກຂາສາສະໜາຂອງພຣະອົງໃນອານາຈັກຂອງພຣະອົງ."** [42]

> **"ໂອ ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ! ຂໍຊົງເສີມຄວາມສາມາດໃຫ້ແກ່ຂ້າພະເຈົ້າ, ໃຫ້ຂ້າພະເຈົ້າຖືກນັບເປັນໜຶ່ງໃນບັນດາຜູ້ຍຶດໝັ້ນກົດ ແລະ ພຣະບັນຍັດຂອງພຣະອົງພຽງເພື່ອເຫັນແກ່ພຣະອົງເທົ່ານັ້ນ ແລະ ສາຍຕາຂອງພວກເຂົາເຈົ້າຈ້ອງມອງທີ່ພຣະພັກຂອງພຣະອົງ."** [43]

“ໂອ ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ! ຂໍຊົງເສີມຄວາມສາມາດແກ່ພວກຂ້າພະເຈົ້າ ເພື່ອທີ່ພວກຂ້າພະເຈົ້າຈະຫຼະຖີ້ມຕົນເອງ ແລະ ຍຶດຕິດຢ່າງໝັ້ນຄົງກັບພຣະຜູ້ຊົງເປັນຜູ້ສະແດງປະກົດຕົວຕົນຂອງພຣະອົງ, ພຣະຜູ້ຊົງຄວາມສູງສຸດ, ພຣະຜູ້ຊົງສູງສົ່ງທີ່ສຸດ.” [44]

“ຂ້າພະເຈົ້າຂໍອ້ອນວອນຕໍ່ພຣະອົງ ພຣະຜູ້ຊົງເປັນອະລຸໂນໄທສະຖານແຫ່ງພຣະນາມຂອງພຣະອົງ ແລະ ພຣະຜູ້ຊົງເປີດອະລຸນແຫ່ງຄຸນລັກສະນະຂອງພຣະອົງ, ຂໍຊົງປະທານສິ່ງທີ່ຈະເຮັດໃຫ້ຂ້າພະເຈົ້າສາມາດລຸກຂຶ້ນຮັບໃຊ້ພຣະອົງ ແລະ ກ່າວສັນລະເສີນຄຸນນະທັມທັງຫຼາຍຂອງພຣະອົງ.” [45]

“ຂໍຊົງຊ່ວຍໃຫ້ຂ້າພະເຈົ້າສາມາດເປັນໜຶ່ງໃນຄົນຮັບໃຊ້ ທີ່ໄດ້ບັນລຸເຖິງຄວາມເພິ່ງພໍພຣະໄທຂອງພຣະອົງ.” [46]

“ຂໍຊົງຄຸ້ມຄອງເດັກເລົ່ານີ້, ຂໍຊົງກະລຸນາຊ່ວຍເຫຼືອພວກເຂົາເຈົ້າໃຫ້ໄດ້ຮັບການສຶກສາ ແລະ ຂໍຊົງຊ່ວຍໃຫ້ພວກເຂົາສາມາດຮັບໃຊ້ໂລກແຫ່ງມະນຸດຊາດ.” [47]

“ໂອ ພຣະຜູ້ເປັນທີ່ຮັກຂອງຂ້າພະເຈົ້າ! ຂໍຊົງປະທານສິ່ງຕ່າງໆແກ່ຂ້າພະເຈົ້າ ທີ່ຈະຊ່ວຍໃຫ້ຂ້າພະເຈົ້າໝັ້ນຄົງໃນສາສະໜາຂອງພຣະອົງ, ເພື່ອວ່າຄວາມສົງໄສຂອງຜູ້ທີ່ບໍ່ເຊື່ອ ຈະບໍ່ຂັດຂວາງຂ້າພະເຈົ້າໄປຈາກການຫັນໄປຫາພຣະອົງ.” [48]

“ຂໍຊົງຊ່ວຍໃຫ້ຂ້າພະເຈົ້າ, ໄດ້ບັນລຸເຖິງທີ່ນັ່ງແຫ່ງສັດຈະທັມຢູ່ທີ່ປະທັບຂອງພຣະອົງ, ຂໍຊົງປະທານເຄື່ອງໝາຍແຫ່ງຄວາມປານີຂອງພຣະອົງ ແລະ ຂໍຊົງເຮັດໃຫ້ຂ້າພະເຈົ້າໄດ້ຢູ່ຮ່ວມກັບຄົນຮັບໃຊ້ຂອງພຣະອົງ ຢ່າງບໍ່ມີຄວາມຢ້ານກົວໃດໆ ແລະ ບໍ່ມີຄວາມເສຍໃຈໃດໆ.” [49]

“ໂອ ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ, ຂໍຊົງຊ່ວຍເຫຼືອຄົນຮັບໃຊ້ຂອງພຣະອົງໃຫ້ເຊີດຊູພຣະວັດຈະນະ ພິສູດສິ່ງໄຮ້ສາລະ ແລະ ບໍ່ຈິງໃຫ້ປະກົດ, ສະຖາປະນາສັດຈະທັມ, ແຜ່ກະຈາຍບົດກອນອັນສັກສິດອອກໄປກວ້າງໄກ, ເປີດເຜີຍຄວາມຮຸ່ງເຮືອງ ແລະ ເຮັດໃຫ້ແສງອາລຸນປະກົດຂຶ້ນໃນຫົວໃຈຂອງຜູ້ທີ່ທ່ຽງທັມ.” [50]

“ຂໍຊົງເຮັດໃຫ້ພວກເຂົາເຈົ້າພົ້ນເດັ່ນຢູ່ທ່າມກາງປະຊາຊົນຂອງພຣະອົງ, ເພື່ອວ່າພວກເຂົາເຈົ້າຈະສັນລະເສີນພຣະວັດຈະນະຂອງພຣະອົງ ແລະ ສົ່ງເສີມສາສະໜາຂອງພຣະອົງ. ໂອ ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ! ຂໍຊົງຊ່ວຍໃຫ້ພວກເຂົາເຈົ້າ ປະຕິບັດຕາມພຣະປະສົງ ແລະ ຄວາມເພິ່ງພໍພຣະໄທຂອງພຣະອົງ.” [51]

## ຕອນທີ 20

ໂດຍຄຳນຶງເຖິງການປຶກສາຫາລືໃນຫຼາຍຕອນທີ່ຜ່ານມາ - ການກວດສອບຂອງພວກເຮົາກ່ຽວກັບລັກສະນະຂອງການຮັບຮູ້ທາງຈິດວິນຍານ, ເຊິ່ງຈຳເປັນຢ່າງຍິ່ງຕໍ່ການທຳຄວາມເຂົ້າໃຈກັບຄວາມເປັນຈິງ; ການສຳຫຼວດຂອງພວກເຮົາກ່ຽວກັບພະລັງແຫ່ງການສະແດງອອກ, ເຊິ່ງມີຄວາມສຳຄັນຢ່າງຍິ່ງຕໍ່ການບັນລຸເປົ້າໝາຍອັນສູງສົ່ງ; ການວິເຄາະຂອງພວກເຮົາເຖິງຄວາມສຳພັນລະຫວ່າງພາສາ ແລະໂຄງສ້າງທາງສິນລະທັມ, ເຊິ່ງມີຄວາມສຳຄັນຢ່າງຍິ່ງຕໍ່ການຕັດສິນໃຈ ແລະ ການໄຕ່ຕອງຂອງພວກເຮົາກ່ຽວກັບຂະບວນການເສີມສ້າງພະລັງທາງສິນລະທັມ - ຕອນນີ້ຂໍໃຫ້ພວກເຮົາມາພິຈາລະນາລາຍລະອຽດຂອງປຶ້ມສອງເຫຼັ້ມທີ່ເຍົາວະຊົນຈະໄດ້ຮຽນ. ໃນຫົວຂໍ້ນີ້ ແລະ ຕອນຕໍ່ໄປພວກເຮົາຈະເບິ່ງປຶ້ມ *“ສາຍລົມແຫ່ງການຮັບຮອງ”*, ແລະ ຕອນທີ 22 ແລະ 23 ພວກເຮົາຈະສຶກສາກ່ຽວກັບປຶ້ມ *“ດວງຈິດແຫ່ງຄວາມສັດທາ”*. ໂດຍທົ່ວໄປແລ້ວ ໃນຈຳນວນປຶ້ມເຫຼັ້ມຕ່າງໆທັງສອງປຶ້ມນີ້ຖືກເລືອກມາສຶກສາໃນຊ່ວງປີທຳອິດ ຂອງໂຄງການເສີມສ້າງພະລັງທາງຈິດວິນຍານ.

ປຶ້ມທີ່ໄດ້ຮັບແຮງບັນດານໃຈຈາກບາຮາຍ *“ສາຍລົມແຫ່ງການຮັບຮອງ”* ບອກເລື່ອງລາວຂອງນາງ ມູຊອນດ້າ, ເດັກຍິງທີ່ມີອາຍຸຄົບ 13 ປີ, ແລະ ພີ່ນ້ອງຂອງລາວ ນາງ ໂຣດສ໌ ຜູ້ເຊິ່ງມີອາຍຸຫຼາຍກວ່າລາວ, ເຊິ່ງມາຢ້ຽມຢາມລາວໃນຊ່ວງປິດສົກຮຽນ. ພ້ອມກັບອ້າຍຂອງ ນາງ ມູຊອນດ້າ ຊື່ ກ໊ອດວິນ ແລະ ໝູ່ຂອງອ້າຍຊື່ວ່າ ຊິຊິມບ້າ, ເດັກຍິງທັງສອງຄິດກ່ຽວກັບອະນາຄົດຂອງພວກເຂົາ ແລະໂອ້ລົມກັນກ່ຽວກັບຄວາມຫວັງ ແລະ ຄວາມເປັນໄປໄດ້ຕ່າງໆຂອງພວກເຂົາ. ມີຢູ່ຫຼາຍແນວຄວາມຄິດທີ່ເຈົ້າຈຳເປັນຕ້ອງປຶກສາຫາລືກັນກ່ຽວກັບປຶ້ມນີ້. ແຕ່ກ່ອນທີ່ຈະເຮັດແນວນັ້ນ, ເຈົ້າຄວນອ່ານປຶ້ມເຫຼັ້ມນີ້ໃຫ້ຈົບ ແລະ ອ່ານຊ້ຳອີກຄັ້ງໜຶ່ງຢ່າງຖີ່ຖ້ວນ ແລະ ເຮັດບົດເຝິກຫັດຕ່າງໆທີ່ມີຢູ່ໃນປຶ້ມ. ເມື່ອເຈົ້າຄຸ້ນເຄີຍກັບປຶ້ມນີ້ເປັນຢ່າງດີແລ້ວ, ກໍ່ຂໍໃຫ້ເຈົ້າພິຈາລະນາປະເດັນຕ່າງໆດັ່ງຕໍ່ໄປນີ້.

ດັ່ງທີ່ເຈົ້າໄດ້ສັງເກດເຫັນແລ້ວຢ່າງບໍ່ຕ້ອງສົງໄສວ່າ ຫົວຂໍ້ຫຼັກທີ່ມີຢູ່ໃນເນື້ອຫາຕະຫຼອດຂອງປຶ້ມເຫຼັ້ມນີ້ຄື “ການຮັບຮອງ”. ຂ້າງລຸ່ມນີ້ແມ່ນເປັນຂໍ້ຄວາມທີ່ຄັດມາຈາກປຶ້ມເຫຼັ້ມດັ່ງກ່າວ ເຊິ່ງກ່າວກ່ຽວກັບຫົວຂໍ້ນີ້ ໂດຍຜ່ານການປຶກສາຫາລືກັນຂອງຕົວລະຄອນ ຫຼື ຜ່ານເຫດການທີ່ສະແດງໃຫ້ເຫັນເຖິງການຮັບຮອງຈາກສະຫວັນທີ່ກຳລັງເຮັດວຽກຢູ່. ແຕ່ລະຕອນທີ່ຄັດມາເປັນເນື້ອຫາຕາມລຳດັບທີ່ປາກົດຢູ່ໃນປຶ້ມ. ຂໍໃຫ້ເຈົ້າອະທິບາຍລົງໃນຊ່ອງຫວ່າງທີ່ຈັດໄວ້ໃຫ້ວ່າ ແນວຄວາມຄິດກ່ຽວກັບ ເລື່ອງການຮັບຮອງຖືກນຳສະເໜີແນວໃດໃນເນື້ອຫາຂອງແຕ່ລະຕອນ ແລະ ຜູ້ທີ່ສຶກສາຫຼັກສູດເຫຼັ້ມນີ້ຈະເກີດຄວາມເຂົ້າໃຈໃນເລື່ອງນີ້ໄດ້ແນວໃດ ໃນຂະນະທີ່ພວກເຂົາເຈົ້າກຳລັງສຶກສາເນື້ອຫາໃນຫຼັກສູດນີ້.

“ນ້ອງຄິດກ່ຽວກັບການຮັບໃຊ້. ນ້ອງຢາກເຮັດວຽກທີ່ສາມາດຊ່ວຍເຫຼືອຜູ້ອື່ນໄດ້, ນ້ອງຢາກເປັນພະຍາບານ ແຕ່ນ້ອງຕ້ອງສຶກສາຮໍ່າຮຽນຢ່າງໜັກ ແລ້ວອີກຢ່າງຄ່າຮຽນກໍ່ແພງຫຼາຍ. ນ້ອງຄິດວ່າພໍ່ແມ່ຂອງນ້ອງກໍ່ຄົງບໍ່ມີເງິນພຽງພໍດອກ” ມູຊອນດ້າ ອະທິບາຍຕື່ມ.

“ແມ່ນຢູ່ ມູຊອນດ້າ, ແຕ່ນ້ອງກໍ່ມີຄວາມພະຍາຍາມທີ່ຈະເຮັດໃຫ້ໄດ້ແມ່ນບໍ່” ໂຣດສ໌ເວົ້າ. “ມີຄໍາເວົ້າຄໍາໜຶ່ງທີ່ວ່າ “ການຮັບຮອງ” ເອື້ອຍໄດ້ຮຽນຄໍາເວົ້ານີ້ໃນຊັ້ນຮຽນປະມານສອງສາມອາທິດທີ່ຜ່ານມາ ນາຍຄູຂອງເອື້ອຍໄດ້ບອກວ່າ ພຣະຜູ້ເປັນເຈົ້າຈະຊົງໃຫ້ການຮັບຮອງແກ່ເຮົາ ແລະ ຈະຊົງຊ່ວຍເຫຼືອເຮົາຢູ່ສະເໝີໃນສິ່ງຕ່າງໆທີ່ເຮົາເຮັດ. ຕອນນີ້ເອື້ອຍໝັ້ນໃຈວ່າເຈົ້າຈະໄດ້ການຮັບຮອງ ຈາກພຣະຜູ້ເປັນເຈົ້າຢ່າງແນ່ນອນ ຫາກເຈົ້າຕັ້ງໃຈຢ່າງແນ່ວແນ່ທີ່ຈະເປັນພະຍາບານ.”

________________________________________

ຕໍ່ມາໃນຄືນນັ້ນເມື່ອເດັກຍິງທັງສອງກໍາລັງຈະນອນ, ມູຊອນດ້າໄດ້ກະຊິບຖາມໂຣດສ໌ວ່າ: “ທີ່ເອື້ອຍເວົ້າຄໍາວ່າ: “ການຮັບຮອງ” ນັ້ນໝາຍຄວາມວ່າຫາກນ້ອງຕັ້ງໃຈຮຽນຢ່າງສຸດຄວາມສາມາດ, ພຣະຜູ້ເປັນເຈົ້າຈະສົ່ງເງິນມາໃຫ້ເຮົາ ແລ້ວນ້ອງຈະໄດ້ຮຽນພະຍາບານແມ່ນບໍ່?”

ໂຣດສ໌ ປິ່ນຄີງມາຫາມູຊອນດ້າ ແລະ ຕອບວ່າ: “ກໍ່ບໍ່ໄດ້ເປັນແນວນັ້ນດອກ. ເອື້ອຍກໍ່ບໍ່ຮູ້. ພວກເຮົາຕ້ອງລອງເບິ່ງຫຼາຍຢ່າງ ແລະ ຄອຍສັງເກດເບິ່ງວ່າມີຊ່ອງທາງໃດແດ່ທີ່ເປີດໃຫ້ກັບເຮົາ, ແຕ່ເອື້ອຍຮູ້ວ່າພຣະຜູ້ເປັນເຈົ້າໄດ້ປະທານພອນສະຫວັນໃຫ້ແກ່ເຮົາທຸກໆຄົນ. ພວກເຮົາຕ້ອງຄົ້ນຫາພອນສະຫວັນນັ້ນໃຫ້ພົບ ແລະ ຮຽນຮູ້ທີ່ຈະໃຊ້ພອນສະຫວັນເລົ່ານັ້ນ” ໂຣດສ໌ຕອບ.

________________________________________

ກ໊ອດວິນມີເພື່ອນຮ່ວມຊັ້ນຮຽນທີ່ຮັກກັນຫຼາຍຊື່ວ່າ: ຊີຊີມບ້າ. ຊີຊີມບ້າມັກຈະມາຢ້ຽມຢາມຄອບຄົວມູເລັງກ້າ ແລະ ໃນຄືນນີ້ເຂົາໄດ້ຢູ່ຮ່ວມກິນອາຫານແລງນໍາກັນ. ໃນຂະນະທີ່ກໍາລັງກິນເຂົ້າແລງຢູ່ນັ້ນ ບົດສົນທະນາທີ່ເກີດຂຶ້ນໃນພາ ເຂົາກໍ່ໄດ້ປຸ່ນຫົວຂໍ້ໄປເລື້ອຍໆ. ມູຊອນດ້າ ຕ້ອງ ການຍົກເອົາຫົວຂໍ້

ເລື່ອງການຮັບຮອງຂຶ້ນມາເວົ້າ ແລະ ລາວຮູ້ສຶກໝົດຄວາມອົດທົນທີ່ຈະລໍຖ້າໂອກາດທີ່ຈະໄດ້ເວົ້າເຖິງຫົວຂໍ້ດັ່ງກ່າວ. ໃນທີ່ສຸດ ທຸກຄົນກໍ່ງຽບໄປໄລຍະໜຶ່ງ, ມູຊອນດ້າ ເວົ້າວ່າ: "ເອື້ອຍໂຣດສ໌ ແລະ ຂ້ອຍໄດ້ພາກັນລືມກັນກ່ຽວກັບການຮັບຮອງ."

"ເອົາອີກແລ້ວນ້ອງສາວຂອງຂ້ອຍ" ກ໊ອດວິນເວົ້າຂຶ້ນພ້ອມເຮັດສຽງທີ່ສະແດງເຖິງການເວົ້າ ເຍີ້ຍນ້ອງຂອງຕົນເອງ. ແຕ່ເຂົາກໍ່ປະຫຼາດໃຈເມື່ອສັງເກດເຫັນຊີຊິມບ້າ ສະແດງຄວາມສົນໃຈເປັນພິເສດ.

ຊີຊິມບ້າຖາມມູຊອນດ້າວ່າ: "ຄຳນີ້ມີຄວາມໝາຍແນວໃດສຳລັບເຈົ້າ?"

ມູຊອນດ້າ ຮູ້ສຶກປະຫຼາດໃຈຄືກັນ ແລະ ລາວກໍ່ຫຼຽວໄປຫາໂຣດສ໌ດ້ວຍຄວາມຫວັງວ່າ: ໂຣດສ໌ຈະຊ່ວຍຕອບ.

ໂຣດສ໌ ຈຶ່ງເວົ້າຂຶ້ນວ່າ: "ການຮັບຮອງ... ພຣະຜູ້ເປັນເຈົ້າຈະຊົງໃຫ້ການຮັບຮອງແກ່ເຮົາ ແລະ ພຣະອົງຈະຊົງຊ່ວຍເຫຼືອເຮົາໃນສິ່ງຕ່າງໆທີ່ເຮົາກະທຳ."

ຊີຊິມບ້າບໍ່ເວົ້າຫຍັງເລີຍໄລຍະໜຶ່ງ. ສາຍຕາຂອງເຂົາບົ່ງບອກເຖິງຄວາມເສົ້າໃຈ, ແລ້ວເຂົາຈຶ່ງເລີ່ມເວົ້າຂຶ້ນຊ້າໆວ່າ: "ບໍ່ເທົ່າໃດເດືອນທີ່ຜ່ານມາພໍ່ຂອງຂ້ອຍ ຖືກບັງຄັບໃຫ້ອອກຈາກວຽກ. ທຸກຄົນຮູ້ວ່າພໍ່ຂອງຂ້ອຍເປັນຄົນທີ່ມີຄວາມຊື່ສັດ ແລະ ຄວາມຮັບຜິດຊອບ, ພໍ່ເປັນພະນັກງານຮັກສາຄວາມປອດໄພຂອງບໍລິສັດມາດົນນານເຖິງສິບແປດປີແລ້ວ, ແຕ່ເຂົາກໍ່ໄລ່ພໍ່ອອກຢ່າງທີ່ເຮົາຄິດບໍ່ເຖິງ. ເຮົາທຸກຄົນຮູ້ສາເຫດດີ ຫາກບໍລິສັດຈ້າງພໍ່ຂອງຂ້ອຍເຮັດວຽກອີກສອງປີ ທ່ານກໍ່ຈະຄົບອາຍຸກະສຽນ, ແລ້ວບໍລິສັດຈະຕ້ອງຈ່າຍເງິນຄ່າບຳນານໃຫ້ເພິ່ນ. ຄອບຄົວຂອງເຮົາມີເງິນສະສົມຢູ່ບໍ່ຫຼາຍ. ເຖິງແມ່ນວ່າອ້າຍຂອງຂ້ອຍຈະຊ່ວຍເຫຼືອເຮົາຢູ່, ແຕ່ເບິ່ງຄືວ່າຂ້ອຍຈະບໍ່ໄດ້ຮຽນໜັງສືຕໍ່ໃນສົກຮຽນຕໍ່ໄປນີ້ແລ້ວ, ເພາະຂ້ອຍບໍ່ສາມາດຈ່າຍຄ່າເຊົ່າຫໍພັກ ແລະ ຄ່າອາຫານ. ຂ້ອຍມັກຮຽນໜັງສືຫຼາຍ. ຂ້ອຍສົງໄສຫຼາຍວ່າເປັນຫຍັງພຣະຜູ້ເປັນເຈົ້າຈຶ່ງບໍ່ຊົງຊ່ວຍເຫຼືອຂ້ອຍເລີຍ."

ທຸກຄົນຫັນໄປເບິ່ງທ່ານມູເລັງກ້າ ແລະ ຄາດຫວັງວ່າເຂົາຈະເປັນຜູ້ຕອບຄຳຖາມນີ້. z

ທ່ານ ມູເລັງກ້າຍິ້ມແລ້ວຕອບວ່າ: "ການທີ່ພຣະຜູ້ເປັນເຈົ້າຊົງໃຫ້ການຮັບຮອງແກ່ເຮົາ ເມື່ອເຮົາມີຄວາມພາກພຽນ ແລະ ດຸໝັ່ນ ນັ້ນບໍ່ໄດ້ໝາຍຄວາມວ່າຊີວິດຂອງເຮົາຈະມີແຕ່ຄວາມສະດວກສະບາຍ ຊີວິດຂອງພວກເຮົາຈະເຕັມໄປດ້ວຍຄວາມຍາກລຳບາກ ແລະ ໂຊກບໍ່ດີຕ່າງໆ. ມີຄວາມຍາກລຳບາກຫຼາຍຢ່າງມັກເກີດຈາກຄວາມບໍ່ຍຸຕິທັມ. ແຕ່ພວກເຮົາຕ້ອງພະຍາຍາມຢ່າງຫຼາຍ ແລະ ເຖິງແມ່ນວ່າສິ່ງຕ່າງໆຈະບໍ່ເປັນໄປຕາມທີ່ເຮົາຕ້ອງການໃນຊ່ວງທຳອິດ, ເຮົາກໍ່ຄວນຈະໝັ້ນໃຈໃນການຮັບຮອງຈາກພຣະຜູ້ເປັນເຈົ້າ. ພຣະອົງຈະຊົງໃຫ້ການຮັບຮອງແກ່ເຮົາເປັນພິເສດ ເມື່ອເຮົາ

ພະຍາຍາມທີ່ຈະກຳຈັດຄວາມບໍ່ຍຸຕິທັມໃຫ້ໝົດສິ້ນໄປ" ແລ້ວທ່ານຈຶ່ງຫັນໄປທາງຊີຊີມບ້າ ແລະເວົ້າວ່າ: "ຄອບຄົວຂອງເຈົ້າມີຄວາມສາມັກຄີ ແລະ ເຮັດວຽກດຸໝັ່ນ, ມີສິ່ງໜຶ່ງໃນໃຈຂອງຂ້ອຍທີ່ບອກວ່າສິ່ງຕ່າງໆຈະປ່ຽນໄປສຳລັບເຈົ້າ. ເຈົ້າຈະໄດ້ສຳເລັດການສຶກສາຕາມທີ່ຕັ້ງໃຈໄວ້ ເອົາຄຳເວົ້າຂອງຂ້ອຍເປັນປະກັນໄດ້ເລີຍ."

ໃນມື້ວັນຈັນຕໍ່ມາເດັກຍິງທັງສອງຄົນ ໄດ້ໄປທີ່ຫ້ອງກວດສຸຂະພາບພ້ອມກັບ ນາງ ພີຣີ.ເມື່ອເຖິງເວລາເລີ່ມຊັ້ນຮຽນຂອງບັນດາແມ່ທັງຫຼາຍ, ມູຊອນດ້າ ແລະ ໂຣດສ໌ ກໍ່ໄດ້ນຳພວກເດັກນ້ອຍອອກໄປນັ່ງຫຼິ້ນຢູ່ກ້ອງຕົ້ນໄມ້ຕົ້ນໜຶ່ງ. ພວກເຂົາຮ້ອງເພງ ແລະ ຫຼິ້ນເກມນຳກັນ, ແລະ ໂຣດສ໌ກໍ່ໄດ້ເລົ່າເລື່ອງໜຶ່ງໃຫ້ເດັກນ້ອຍຟັງ. ເມື່ອລາວກຳລັງເລົ່າເລື່ອງຈົບພໍດີ ແມ່ຂອງເດັກນ້ອຍທັງຫຼາຍກໍ່ມາຮັບລູກໆຂອງຕົນໄປ. ທຸກຄົນມີຄວາມສຸກ ນາງ ພີຣີ ແລະ ເຈົ້າໜ້າທີ່ຂອງຫ້ອງການສາທາລະນະສຸກຄົນອື່ນໆຮູ້ສຶກປະທັບໃຈ ແລະ ໄດ້ເຊີນທັງສອງໃຫ້ມາຊ່ວຍອີກໃນອາທິດຕໍ່ໄປ.

ມູຊອນດ້າມິດຢູ່ໃນຂະນະທີ່ເດີນທາງກັບບ້ານ. ໃນທີ່ສຸດລາວກໍ່ໄດ້ທຳລາຍຄວາມງຽບລົງດ້ວຍການເວົ້າກັບໂຣດສ໌ວ່າ: "ເອື້ອຍຄິດວ່າສິ່ງທີ່ເກີດຂຶ້ນໃນມື້ນີ້ກ່ຽວຂ້ອງກັບ "ການຮັບຮອງ" ຫຼືບໍ່? ເອື້ອຍຢາກເປັນນາຍຄູ ແລ້ວຂ້ອຍກໍ່ຢາກເປັນພະຍາບານ ແລ້ວມື້ນີ້ເຮົາສອງຄົນກໍ່ໄດ້ມີໂອກາດສອນ ແລະ ເບິ່ງແຍງເດັກນ້ອຍທີ່ຫ້ອງກວດສຸຂະພາບປະຈຳໝູ່ບ້ານ."

ໃນຫຼາຍອາທິດທີ່ໂຣດສ໌ມາຢູ່ກັບລາວ, ເດັກຍິງທັງສອງໄດ້ລົມກັນ ກ່ຽວກັບເລື່ອງຕ່າງໆ ຫຼາຍເລື່ອງ ແລະ ສະໝອງຂອງມູຊອນດ້າກໍ່ເຕັມໄປດ້ວຍຄວາມຄິດອັນຫຼາກຫຼາຍ. ໃນເຊົ້ານີ້ ໜຶ່ງລາວຈຶ່ງຕັດສິນໃຈ ໄປທີ່ສະຖານທີ່ໂປດປານຂອງລາວ. ໃນຊ່ວງເວລາທີ່ລາວນອນລົງໄປເທິງກ້ອນຫີນນັ້ນ, ລາວນຶກເຖິງມື້ທີ່ລາວໄປທີ່ຫ້ອງກວດສຸຂະພາບ. ລາວຄິດກັບຕົວເອງວ່າ: "ດີຫຼາຍແທ້ທີ່ເຮົາໄດ້ເຮັດສິ່ງທີ່ມີປະໂຫຍດ" ລາວຈື່ໄດ້ດີໃນສິ່ງທີ່ພໍ່ຂອງລາວເວົ້າຢູ່ເລື້ອຍໆວ່າ ຕົ້ນໄມ້ຄວນອອກດອກອອກຜົນ. ແລ້ວລາວກໍ່ນຶກສົງໃສວ່າ: "ແລ້ວຂ້ອຍຈະແນ່ໃຈໄດ້ແນວໃດ ວ່າຊີວິດຂອງຂ້ອຍຈະໃຫ້ຜົນທີ່ດີງາມ" ແລ້ວລາວກໍ່ຄິດເຖິງຄຳວ່າ: "ການຮັບຮອງ" ຂຶ້ນມາໃນທັນທີ.

ທັນໃດນັ້ນເອງກໍ່ມີສາຍລົມແຮງພັດຂຶ້ນຢ່າງກະທັນຫັນ. ສາຍລົມນັ້ນໄດ້ພັດພາໃບໄມ້ຈຳນວນໜຶ່ງຂຶ້ນໄປໃນອາກາດ. ໃນທ່າມກາງໃບໄມ້ເຫຼົ່ານັ້ນລາວເບິ່ງເຫັນນົກສີເຫຼືອງຕົວນ້ອຍໆຕົວໜຶ່ງ. ເມື່ອສາຍລົມສະຫງົບລົງ, ໃບໄມ້ທັງຫຼາຍກໍ່ຫຼົ່ນລົງໄປໃນສາຍນ້ຳ ແຕ່ນົກນ້ອຍກໍ່ຍັງຄົງບິນຕໍ່ໄປ. ໃນຊ່ວງເວລາທີ່ລາວເບິ່ງນົກນັ້ນຢູ່ ຄວາມຄິດໜຶ່ງກໍ່ຜ່ານເຂົ້າມາໃນສະໝອງຂອງລາວ. ສາຍລົມນັ້ນໄດ້ຊ່ວຍເປັນແຮງພັກດັນແກ່ນົກນ້ອຍໂຕນັ້ນ ແລະ ໃນຕອນນີ້ມັນກໍ່ກຳລັງບິນສູງຂຶ້ນໄປເລື້ອຍໆ. ສິ່ງນີ້ອາດໝາຍເຖິງການຮັບຮອງກໍ່ໄດ້. ນົກນ້ອຍໄດ້ໃຊ້ຄວາມພະຍາ ຍາມທີ່ຈະບິນ ແລ້ວສາຍລົມກໍ່ໄດ້ຊ່ວຍໃຫ້ມັນບິນໄດ້ສູງຍິ່ງຂຶ້ນ.

"ອ້າຍກ໊ອດວິນ, ອ້າຍກະໄດ້ຄິດກ່ຽວກັບອະນາຄົດຂອງຕົວເອງຢູ່ບໍ່?" ມູຊອນດ້າຖາມ "ອ້າຍຢາກຈະເປັນຫຍັງ?"

ກ໊ອດວິນສ້ອມແປງລົດຖີບຕໍ່ໄປ "ອ້າຍກະບໍ່ຮູ້ຄືກັນ, ອ້າຍຢາກເຮັດວຽກ ແລະ ຫາເງິນໄດ້ ຫຼາຍໆ, ອ້າຍຢາກຊ່ວຍພໍ່ແມ່ຂອງເຮົາໃຫ້ສະບາຍ ແລະ ອ້າຍຢາກມີຄອບຄົວຂອງອ້າຍເອງໃນວັນຂ້າງໜ້າ."

ມູຊອນດ້າ ຖາມອ້າຍຕໍ່ໄປວ່າ: "ແຕ່ອ້າຍເຄີຍຄິດກ່ຽວກັບພອນສະຫວັນຂອງຕົວເອງບໍ່ ແລະ ເຄີຍຄິດຫຼືບໍ່ວ່າຈະນຳພອນສະຫວັນຂອງຕົວເອງໄປໃຊ້ໄດ້ຢ່າງໃດ? ຂ້ອຍກັບເອື້ອຍໂຣດສ໌ ລົມກັນເຖິງເລື່ອງນີ້ຫຼາຍເທື່ອເລີຍ."

“ຂ້ອຍຮູ້ ... ຂ້ອຍຮູ້” ເຂົາເວົ້າພ້ອມກັບຈັບເອົາກະແຈສຳລັບໄຂບ໊ອດຂຶ້ນມາ “ແລະເຈົ້າກໍ່ເວົ້າກ່ຽວກັບການຮັບຮອງຕະຫຼອດເວລາເລີຍ ແລະ ເລື່ອງທີ່ວ່າພຣະຜູ້ເປັນເຈົ້າຈະຊ່ວຍເຮົາເມື່ອເຮົາມີຄວາມພາກພຽນ ແລະ ດຸໝັ່ນ.”

“ແຕ່ມັນກໍ່ເປັນເລື່ອງແທ້ໄດ໋ອ້າຍກ໊ອດວິນ” ແລ້ວລາວກໍ່ໄດ້ເລົ່າໃຫ້ກ໊ອດວິນຟັງເລື່ອງນົກສີເຫຼືອງ ແລະ ສາຍລົມ. ລາວກໍ່ຍັງເລົ່າເລື່ອງວຽກທີ່ລາວ ແລະ ໂຣດສ໌ເຮັດວຽກກັບເດັກນ້ອຍທີ່ຫ້ອງກວດສຸຂະພາບປະຈຳໝູ່ບ້ານຕື່ມອີກ.

ໃນຕອນນັ້ນຊິຊິມບ້າກໍ່ຍ່າງເຂົ້າມາພໍດີ “ສະບາຍດີ! ລົດຖີບເປັນແນວໃດແລ້ວ? ຮູ້ບັນຫາແລ້ວຫຼືຍັງ?” ຊິຊິມບ້າເວົ້າຂຶ້ນ.

ກ໊ອດວິນເວົ້າຂຶ້ນໃນຂະນະທັນນ໋ອດໃຫ້ແໜ້ນ “ບັນຫາມັນຢູ່ທີ່ເກຍລົດຖີບຂ້ອຍກຳລັງແປງ ມັນຢູ່.”

“ຂ້ອຍຮູ້ແລ້ວເຈົ້າຕ້ອງແປງໄດ້ແນ່ນອນ” ຊິຊິມບ້າເວົ້າ, ແລະ ລາວກໍ່ຫຼຽວໄປທາງມູຊອນດ້າ. “ເຈົ້າຮູ້ບໍ່ວ່າອ້າຍຂອງເຈົ້າເປັນຊ່າງແປງລົດໄດ໋?”

ໂຣດສ໌ຍ່າງອອກມາຈາກເຮືອນ ແລະ ໄດ້ຍິນການໂອ້ລົມພໍດີ ລາວຈຶ່ງເວົ້າຂຶ້ນວ່າ: “ກ໊ອດວິນ ນີ້ເດຄືພອນສະຫວັນປະການໜຶ່ງຂອງເຈົ້າ. ເຈົ້າເກັ່ງໃນເລື່ອງສ້ອມແປງເຄື່ອງຂອງຕ່າງໆ. ເຈົ້າສາມາດເປັນຊ່າງທີ່ເກັ່ງຄົນໜຶ່ງໄດ້!”

“ພຽງເພາະຂ້ອຍສາມາດສ້ອມແປງລົດຖີບໄດ້ ບໍ່ໄດ້ໝາຍຄວາມວ່າຂ້ອຍຈະເປັນຊ່າງໄດ້.”ກ໊ອດວິນເວົ້າ “ຂ້ອຍຕ້ອງໄດ້ຮັບການເຝິກແອບກ່ອນ.”

ທັງສາມຄົນຍິ້ມ ແລະ ເວົ້າຂຶ້ນພ້ອມກັນວ່າ: “ກໍ່ລອງພະຍາຍາມຮຽນຮູ້ເບິ່ງ!” ແລ້ວທຸກຄົນ ລວມທັງກ໊ອດວິນກໍ່ຫົວຂຶ້ນ.

“ກ໊ອດວິນເປັນຫຍັງເຈົ້າບໍ່ລົມກັບ ພໍ່ລຸງຊິເຢສຸ ລອງເບິ່ງ, ຜູ້ທີ່ເປັນຊ່າງມີຮ້ານແປງລົດຢູ່ໃກ້ໆກັບຕະຫຼາດທັ້ນເດ, ເຂົາອາດຈະສອນເຈົ້າໄດ້ໄດ໋.” ນ້ຳສຽງຂອງຊິຊິມບ້າເຕັມໄປດ້ວຍຄວາມຕື່ນເຕັ້ນ.

“ແມ່ນ, ນີ້ອາດຈະເປັນວິທີເລີ່ມຕົ້ນທີ່ດີ” ໂຣດສ໌ເວົ້າຕື່ມ.

“ແມ່ນຫຍັງເກາະ?” ກ໊ອດວິນຖາມ “ຢູ່ດີໆຈະໃຫ້ໄປຖາມລາວເລີຍບໍ. ຂ້ອຍບໍ່ຮູ້ຈັກລາວຈັກໜ້ອຍ.”

ຊິຊິມບ້າຈຶ່ງເວົ້າຂຶ້ນວ່າ: "ຂ້ອຍຮູ້ຈັກລາວ ຂ້ອຍສາມາດແນະນຳໃຫ້ເຈົ້າຮູ້ຈັກລາວໄດ້ ມື້ ອື່ນເຮົາໄປນຳກັນເນາະ."

ຫຼັງຈາກນັ້ນ, ເມື່ອພວກເຂົາທັງສອງຢູ່ກັບຕາມລຳພັງ, ໂຣດສ໌ໄດ້ເວົ້າກັບມູຊອນດ້າວ່າ: "ມື້ອື່ນກ໊ອດວິນຈະເຂົ້າໃຈຄວາມໝາຍຂອງການຮັບຮອງ." ທັງສອງຫົວຂຶ້ນພ້ອມກັບຕັດສິນໃຈວ່າຈະບໍ່ເວົ້າເລື່ອງນີ້ກັບເດັກຊາຍທັງສອງ.

ທ່ານຊິເຢສຸ ເປັນຊາຍຜູ້ສູງອາຍຸ ແລະມີຮູບຮ່າງຕ່ຳ, ກຳລັງນັ່ງຢູ່ໜ້າຮ້ານຂອງເຂົາ, ເຂົາກຳລັງທຳຄວາມສະອາດສິ້ນສ່ວນຂອງເຄື່ອງຈັກນ້ອຍໆເຄື່ອງໜຶ່ງຢູ່ພ້ອມກັບຮຳທຳນອງເພງໄປນຳ, ໃບໜ້າຂອງເຂົາສະຫວ່າງສະໄຫວຂຶ້ນມາເມື່ອເຫັນຊິຊິມບ້າ, ເຂົາລຸກຂຶ້ນເພື່ອຈັບມືກັບຊິຊິມບ້າ.

ຊິຊິມບ້າແນະນຳກ໊ອດວິນ ແລະ ອະທິບາຍຕໍ່ໄປວ່າເຂົາເກັ່ງໃນການສ້ອມແປງສິ່ງຂອງຕ່າງໆ. ກ໊ອດວິນຮູ້ສຶກຢ້ານແຕ່ເຂົາກໍ່ລວບລວມຄວາມກ້າທີ່ຈະເວົ້າອອກມາ, ເຂົາໄອກະແອ້ມ ແລະ ເວົ້າຂຶ້ນວ່າ: "ທ່ານລຸງຊິເຢສຸ ຂ້ອຍສົນໃຈຈະເປັນຊ່າງແປງລົດ ຂ້ອຍກໍ່ເລີຍຄິດວ່າຢາກຈະຊ່ວຍວຽກງານໃນຮ້ານ ແລະ ຮຽນຮູ້ຈາກພໍ່ລຸງ."

ທ່ານ ຊິເຢສຸ ຕອບວ່າ: "ດີແທ້, ຂ້ອຍກໍ່ພໍ່ຈະມີວຽກງານໃຫ້ເຈົ້າຊ່ວຍຢູ່ດອກ ແຕ່ຂ້ອຍບໍ່ມີເງິນຈະຈ່າຍເປັນຄ່າຕອບແທນໃຫ້ເຈົ້າເດ໋."

"ບໍ່ເປັນຫຍັງຂ້ອຍຕ້ອງການທີ່ຈະຮຽນຮູ້ນຳພໍ່ລຸງເທົ່ານັ້ນ" ກ໊ອດວິນອະທິບາຍ "ຈະໃຫ້ຂ້ອຍເລີ່ມມື້ໃດດີພໍ່ລຸງ?"

"ບໍ່ມີມື້ໃດດີກວ່າຕອນນີ້ແລ້ວ" ທ່ານຊິເຢສຸຕອບ "ຢູ່ເຮັດວຽກເຊົ້ານີ້ເລີຍໄດ້ບໍ່ ເຈົ້າສາມາດທານ້ຳມັນໃສ່ສິ້ນສ່ວນອາໄຫຼ່ພວກນີ້, ຫຼັງຈາກນັ້ນ ເຮົາກໍ່ຈະນຳສິ້ນສ່ວນມາປະກອບເຂົ້າເປັນເຄື່ອງຈັກອີກຄັ້ງ."

“ຕອນນີ້ເລີຍບໍ ຂ້ອຍສາມາດເລີ່ມເຮັດວຽກໄດ້ຕອນນີ້ເລີຍແທ້ໆບໍ່?” ກ໊ອດວິນຖາມຂຶ້ນຢ່າງປະຫຼາດໃຈ.

“ແນ່ນອນ...” ທ່ານຊີເຢສຸຫົວ “ພັບແຂນເສື້ອຂຶ້ນແລ້ວເລີ່ມລົງມືໄດ້ເລີຍ.”

ກ໊ອດວິນເລີ່ມເຮັດວຽກໃໝ່ຂອງເຂົາຢ່າງກະຕືລືລົ້ນ. ຫຼັງຈາກນັ້ນອີກບໍ່ດົນຊີຊິມບ້າກໍ່ລຸກຂຶ້ນເພື່ອທີ່ຈະເມືອເຮືອນ. ເຂົາຄອບທ່ານຊີເຢສຸແລ້ວກົ້ມຕົວລົງກະຊິບຄຳວ່າ: “ການຮັບຮອງ” ໃສ່ຫູຂອງກ໊ອດວິນ.

ໃນຊ່ວງເວລາຍ່າງເມືອເຮືອນຊີຊິມບ້າຜ່ານຫ້ອງກວດສຸຂະພາບປະຈຳໝູ່ບ້ານ ແລະ ຫຼຽວເຫັນໂຣດສ໌ ແລະ ມູຊອນດ້າ ກຳລັງຊ່ວຍເບິ່ງແຍງເດັກນ້ອຍຢູ່. ເດັກຍິງທັງສອງມີຄວາມຢາກຮູ້ຢາກເຫັນຫຼາຍວ່າເກີດຫຍັງຂຶ້ນ. ພວກເຂົາຈຶ່ງຖາມຊີຊິມບ້າວ່າ: “ເປັນແນວໃດແດ່ມື້ນີ້ກ໊ອດວິນເປັນແນວໃດ?”

“ກ໊ອດວິນໄດ້ລອງພະຍາຍາມເບິ່ງແລ້ວ ແລະ ເຂົາກໍ່ເຮັດໄດ້ສຳເລັດແທ້ ຕອນນີ້ເຂົາກໍ່ຍັງຢູ່ທີ່ນັ້ນ. ຂ້ອຍຄິດວ່າພໍ່ລຸງຊີເຢສຸ ຕ້ອງການຈະທົດສອບກ໊ອດວິນ” ຊີຊິມບ້າຕອບ.

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

ເຊົ້າມື້ໜຶ່ງຊີຊິມບ້າຍ່າງໄປທີ່ຕະຫຼາດ ເພື່ອຊື້ປາໃຫ້ແມ່ຂອງລາວ. ໃນຊ່ວງຫຼາຍວັນທີ່ຜ່ານມາ ລາວໄດ້ໃຊ້ຄວາມຄິດກ່ຽວກັບເລື່ອງການຫາເງິນ ເພື່ອເປັນທຶນການສຶກສາ. ລາວຄິດວ່າຈະປູກຜັກຂາຍ ແຕ່ຕອນນີ້ກໍ່ໝົດລະດູການເພາະປູກແລ້ວ, ລາວຄິດວ່າຈະຂາຍຖ່ານຢູ່ຂ້າງຖະໜົນ ແຕ່ກໍ່ມີຫຼາຍຄົນທີ່ຂາຍຢູ່ແລ້ວ. ລາວນຶກເຖິງສິ່ງທີ່ໂຣດສ໌ບອກ “ພະຍາຍາມເຮັດໃນສິ່ງທີ່ຍັງບໍ່ມີໃຜເຮັດ.”

ເມື່ອເຂົາໄປເຖິງຮ້ານຂອງນາງ ມູໂຊເລ່ເພື່ອຊື້ປາ, ລາວກໍ່ພົບວ່ານາງບໍ່ຢູ່. ແມ່ຍິງທີ່ຢູ່ໂຕະຂ້າງໆຂອງນາງໄດ້ບອກວ່າ: “ນາງ ມູໂຊເລ່ໄປຮັບປາຈາກໃນເມືອງ, ນາງຈະໄປອາທິດລະສອງເທື່ອ.” ຊີຊິມບ້າຮູ້ດີວ່າພໍ່ລຸງຊີເຢສຸ ກໍ່ມັກເຂົ້າເມືອງເພື່ອໄປຊື້ອາໄຫຼ່ຕ່າງໆຂອງລົດ.

ສິ່ງນີ້ໄດ້ຈຸດປະກາຍຄວາມຄິດຂອງລາວ. "ບາງທີຂ້ອຍອາດຈະອາສາເຂົ້າໄປໃນເມືອງເພື່ອຫາຊື້ສິ່ງຂອງທີ່ພວກເຂົາຕ້ອງການ." ເຂົາໃຊ້ຄວາມຄິດ "ຖ້າພວກເຂົາບໍ່ຕ້ອງເດີນທາງເຂົ້າໄປໃນເມືອງ ພວກເຂົາກໍ່ຈະສາມາດຢູ່ຄ້າຂາຍໄດ້ ແລະ ບໍ່ຕ້ອງເສຍໂອກາດໃນການຄ້າຂາຍ."

ຄືນນັ້ນຊິຊິມບ້າປຶກສາກັບພໍ່ແມ່ຂອງເຂົາ, ເຊິ່ງທັງສອງກໍ່ເຫັນດີກັບຄວາມຄິດນີ້. ໃນມື້ຕໍ່ມາ, ເຂົາຈຶ່ງກັບໄປທີ່ຕະຫຼາດອີກຄັ້ງເພື່ອໂອ້ລົມກັບນາງ ມູໂຊເລ່ ແລະ ພໍ່ລຸງຊິເຢສຸ "ຖ້າພໍ່ລຸງ ແລະ ແມ່ປ້າເອົາເງິນທີ່ຕ້ອງໃຊ້ສຳລັບຈ່າຍຄ່າລົດໂດຍສານຕາມປົກກະຕິໃຫ້ກັບຂ້ອຍ, ຂ້ອຍຈະໃຊ້ເງິນເຄິ່ງໜຶ່ງໃນການເຂົ້າເມືອງແລ້ວນຳສິ່ງຂອງທີ່ພໍ່ລຸງ ແລະ ແມ່ປ້າຕ້ອງການມາໃຫ້. ສ່ວນອີກເຄິ່ງໜຶ່ງຂ້ອຍຈະສະສົມໄວ້ເປັນທຶນການສຶກສາຂອງຂ້ອຍ." ພວກເຂົາທັງສອງຕອບຕົກລົງ ແລະ ຄິດວ່າເປັນສິ່ງຄຸ້ມຄ່າທີ່ຈະລອງເຮັດ. ພວກເຂົາຈຶ່ງຂໍໃຫ້ຊິຊິມບ້າມາທີ່ຕະຫຼາດອີກເທື່ອໜຶ່ງໃນອີກສອງມື້ຂ້າງໜ້າ, "ຖ້າຄວາມຄິດນີ້ໄດ້ຜົນເຈົ້າກໍ່ຫາວຽກໃຫ້ຕົວເອງໄດ້ສຳເລັດແລ້ວລະ" ພໍ່ລຸງຊິເຢສຸກ່າວຂຶ້ນ.

ໃນລະຫວ່າງທາງກັບເມືອເຮືອນ ເພື່ອບອກຂ່າວດີໃຫ້ກັບພໍ່ແມ່ຂອງຕົນ, ຊິຊິມບ້າໄດ້ຢຸດທີ່ບ້ານຂອງຄອບຄົວມູເລັງກ້າເພື່ອພົບກ໊ອດວິນ ແລະ ຄອບຄົວຂອງເຂົາ. ເຂົາຕັ້ງໃຈທີ່ຈະເລົ່າກ່ຽວກັບແຜນການຂອງເຂົາໃຫ້ຄອບຄົວນີ້ຟັງ, ຫຼັງຈາກທີ່ທ່ານນາງ ມູເລັງກ້າ ຟັງເລື່ອງເລົ່າຂອງຊິຊິມບ້າ, ລາວກໍ່ໄດ້ບອກຂ່າວດີອັນໜຶ່ງໃຫ້ຊິຊິມບ້າຮູ້, ລາວເລົ່າວ່າ ໃນມື້ກ່ອນທ່ານ ມູເລັງກ້າມີຄວາມຈຳເປັນຕ້ອງໄປທີ່ເມືອງກາບເວ, ເຂົາຈຶ່ງໄດ້ມີໂອກາດເວົ້າກັບພີ່ນ້ອງຂອງລາວ, ພີ່ນ້ອງຂອງລາວຄືນນັ້ນບອກວ່າ ເຂົາຍິນດີທີ່ຈະໃຫ້ຊິຊິມບ້າໄປພັກອາໄສທີ່ບ້ານຂອງເຂົາ. ເຊິ່ງຢູ່ຫ່າງຈາກໂຮງຮຽນປະມານໜຶ່ງຫຼັກ. "ເຈົ້າສາມາດຊ່ວຍວຽກງານພວກເຂົາໃນທົ່ງນາເພື່ອເປັນການແລກປ່ຽນກັບຄ່າອາຫານ ແລະ ທີ່ພັກ."

"ແມ່ນແທ້ບໍ!" ຊິຊິມບ້າເວົ້າຂຶ້ນ "ລູກຂໍຂອບໃຈແມ່ປ້າຫຼາຍໆເດີ້."

"ຊິຊິມບ້າ" ທ່ານ ມູເລັງກ້າເວົ້າຂຶ້ນ "ເບິ່ງຄືວ່າອີກບໍ່ດົນເຈົ້າກໍ່ຈະສາມາດຫາເງິນໄດ້ຈຳນວນໜຶ່ງ, ເຈົ້າຕ້ອງເຮັດໃຫ້ໝັ້ນໃຈວ່າຈະປະຢັດເງິນນັ້ນ ເພື່ອເປັນທຶນການສຶກສາເດີ້, ເຖິງແມ່ນວ່າບາງຄັ້ງອາດເບິ່ງຄືວ່າເປັນສິ່ງທີ່ຍາກກໍ່ຕາມ. ຢ່າຖືກຍົ້ວະເຍົ້າໃຫ້ໃຊ້ຈ່າຍໄປກັບສິ່ງທີ່ໄຮ້ສາລະເດີ້."

"ຢ່າເປັນກັງວົນເລີຍພໍ່ລຸງ" ຊິຊິມບ້າຕອບດ້ວຍໃບໜ້າທີ່ມີຮອຍຍິ້ມອັນສົດໃສ. "ຂ້ອຍສັນຍາວ່າຈະບໍ່ໃຫ້ສິ່ງນັ້ນເກີດຂຶ້ນຢ່າງແນ່ນອນ." ຂະນະໂບກມືລາ ແລະ ຫັນຫຼັງເພື່ອຈາກໄປ, ເຂົາຫຼຽວເບິ່ງໄປທາງໂຮດສ໌ ແລະ ມູຊອນດ້າ ແລະ ເວົ້າຂຶ້ນວ່າ: "ປະຕູກຳລັງເປີດອອກໃຫ້ຂ້ອຍແລ້ວ!"

ຊ່ວງເວລາພັກພາກຮຽນໃກ້ຈະສິ້ນສຸດລົງແລ້ວ, ເຖິງເວລາທີ່ໂຣດສ໌ຈຳເປັນຕ້ອງເມືອບ້ານ ແລະ ເລີ່ມຮຽນໜັງສືອີກຄັ້ງ. ຂະນະທີ່ລາວກຽມຕົວຈາກໄປນັ້ນ, ລາວ ແລະ ມູຊອນດ້າໂອ້ລົມກັນ.

"ຂ້ອຍບໍ່ຢາກໃຫ້ເອື້ອຍໄປເລີຍ" ມູຊອນດ້າເວົ້າ.

"ເອື້ອຍເອງກໍ່ຄືກັນ" ໂຣດສ໌ຕອບ. "ເປັນຊ່ວງພັກພາກຮຽນທີ່ວິເສດຫຼາຍເອື້ອຍບໍ່ຢາກຈະເຊື່ອໃນສິ່ງຕ່າງໆທີ່ເກີດຂຶ້ນເລີຍ."

"ແມ່ນ, ນ້ອງກໍ່ຄືກັນ" ມູຊອນດ້າເວົ້າຕໍ່ "ເບິ່ງອ້າຍກ໊ອດວິນແມ້! ເຂົາມັກວຽກທີ່ເຮັດຫຼາຍຈົນນ້ອງໄດ້ຍິນອ້າຍເຂົາເວົ້າວ່າຢາກຈະໄປຮຽນຕໍ່ມະຫາວິທະຍາໄລເຕັກນິກ ຫຼັງຈາກທີ່ຮຽນຈົບທີ່ໂຮງຮຽນແລ້ວ. ສ່ວນຄວາມຄິດຂອງຊີຊີມບ້າກໍ່ໄດ້ຜົນແທ້. ທ້າຍສຸດເຂົາກໍ່ໄດ້ລູກຄ້າຈຳນວນຫຼາຍຈົນເຂົາໄປຊື້ເຄື່ອງໃນເມືອງເກືອບທຸກມື້."

"ເບິ່ງພວກເຮົາກໍ່ຄືກັນ" ໂຣດສ໌ເວົ້າ "ການໄດ້ເຮັດວຽກທີ່ສາທາລະນະສຸກ ກໍ່ເປັນປະສົບການທີ່ດີຫຼາຍ ເຮັດໃຫ້ເອື້ອຍມີຄວາມໝັ້ນໃຈຫຼາຍຂຶ້ນວ່າເອື້ອຍຢາກເຮັດວຽກເປັນນາຍຄູ, ຫ້ອງ ການບ້ານທີ່ໝູ່ບ້ານຂອງເອື້ອຍ ມີການຈັດໃຫ້ມີຊັ້ນຮຽນສຳລັບເດັກນ້ອຍໃນລະດັບອາຍຸຕ່າງໆ, ເດັກໆເກືອບທຸກຄົນໃນໝູ່ບ້ານເຂົ້າຮຽນໃນຊັ້ນເລົ່ານັ້ນ. ປີນີ້ເອື້ອຍວາງແຜນວ່າ ຈະອາສາສະ ໝັກໄປສອນຊັ້ນໃດຊັ້ນຮຽນໜຶ່ງ."

"ນ້ອງກໍ່ຈະພະຍາຍາມເຮັດວຽກທີ່ສາທາລະນະສຸກຕໍ່ໄປ" ມູຊອນດ້າເວົ້າ "ນ້ອງຄົງຈະໄປທຸກວັນຈັນບໍ່ໄດ້ແລ້ວ, ເພາະນ້ອງຕ້ອງໄປໂຮງຮຽນ. ແຕ່ນ້ອງອາດຈະຊ່ວຍໄດ້ໃນຊ່ວງບ່າຍຂອງບາງມື້, ເອື້ອຍໂຣດສ໌ຮູ້ບໍ່ໃນມື້ທຳອິດທີ່ເຮົາເວົ້າກັນເລື່ອງ "ການຮັບຮອງ" ນ້ອງບໍ່ສາມາດ ຈິນຕະນາການໄດ້ເລີຍວ່າ ຄຳນີ້ຈະມີຄວາມສຳຄັນອັນຫຼວງຫຼາຍພຽງໃດ ແລະ ການທີ່ເຮົາເຂົ້າໃຈໃນຄຳນີ້ຈະປ່ຽນແປງຊີວິດຂອງເຮົາໄດ້ແນວໃດແດ່."

"ແມ່ນແທ້" ໂຣດສ໌ເຫັນດີນຳ "ເບິ່ງພວກເຮົາແມ້ປ່ຽນໄປຫຼາຍປານໃດເພາະພວກເຮົາໄດ້ ຮຽນຮູ້ກ່ຽວກັບການມີຄວາມພະຍາຍາມ ແລະ ການຄາດຫວັງໃນການຮັບຮອງ."

ໃນລະຫວ່າງທາງເມືອບ້ານ, ມູຊອນດ້າຂໍອະນຸຍາດໄປທີແຄມແມ່ນ້ຳ. ລາວແລ່ນໄປຍັງສະ ຖານທີທີ່ພິເສດຂອງລາວ, ລາວປີນຂຶ້ນໄປເທິງກ້ອນຫີນແລ້ວນອນຫງາຍຫຼັງ, ເບິ່ງຂຶ້ນໄປເທິງ ທ້ອງຟ້າ. ມີຄວາມຄິດຫຼາຍຢ່າງເຂົ້າມາໃນຈິດໃຈຂອງລາວ. ລາວຄິດເຖິງຊ່ວງເວລາພັກພາກ ຮຽນ ແລະ ສົງໄສວ່າປີຕໍ່ໄປຈະມີຫຍັງເກີດຂຶ້ນແດ່. ມື້ນັ້ນເປັນມື້ທີ່ລົມພັດແຮງ ແລະ ລາວກໍ່ນຶກເຖິງນົກນ້ອຍສີເຫຼືອງຕົວນັ້ນ "ບໍ່ວ່າເຮົາຈະພະຍາຍາມເຮັດສິ່ງໃດ," ລາວກະຊິບບອກຕົວເອງວ່າ "ພຣະຜູ້ເປັນເຈົ້າຈະຊົງຊ່ວຍຂ້ອຍ." ໃນຂະນະທີ່ລາວລຸກຂຶ້ນເພື່ອຈະເມືອເຮືອນ, ສາຍລົມໄດ້ພັດມາກະທົບແຜ່ນຫຼັງຂອງລາວ ແລະ ໃຫ້ກຳລັງແກ່ລາວ.

## ຕອນທີ 21

ເມື່ອຄຸ້ນເຄີຍເປັນຢ່າງດີກັບເນື້ອຫາໃນປຶ້ມ *"ສາຍລົມແຫ່ງການຮັບຮອງ"* ແລ້ວ - ແລະ ມີຄວາມເຂົ້າໃຈ ເປັນຢ່າງດີກ່ຽວກັບວິທີການທີ່ປຶ້ມຫົວນີ້ ພະຍາຍາມທີ່ຈະບັນລຸເປົ້າໝາຍທີ່ຕັ້ງໄວ້ ຄົງຈະຊ່ວຍເຈົ້າໃຫ້ເຮັດໜ້າທີ່ເປັນ ຜູ້ຊຸກຍູ້ຂອງກຸ່ມເຍົາວະຊົນໄດ້ຢ່າງໝັ້ນໃຈ. ນອກຈາກນີ້ ເຈົ້າຍັງຈຳເປັນຕ້ອງໄຕ່ຕອງເຖິງວິທີທີ່ເຈົ້າຈະໃຊ້ໃນການຊ່ວຍ ກຸ່ມເຍົາວະຊົນໃນການສຶກສາປຶ້ມເລັ່ມນີ້ ແລະ ເຂົ້າໃຈແນວຄວາມຄິດຫຼັກທີ່ກ່າວໄວ້ໃນປຶ້ມເລັ່ມນີ້. ແນ່ນອນວ່າ ຄວາມຊຳນານ ແລະ ຄວາມສາມາດ ທີ່ເຈົ້າຈຳເປັນຕ້ອງມີເພື່ອຈຸດປະສົງນີ້, ຈະພັດທະນາຂຶ້ນມາຢ່າງຊ້າໆໃນຂະນະທີ່ເຈົ້າເປັນໄດ້ຮັບປະສົບການ, ແຕ່ບົດເຝິກຫັດຕໍ່ໄປນີ້ເຊິ່ງກ່ຽວຂ້ອງໂດຍສະເພາະກັບປຶ້ມ *"ສາຍລົມແຫ່ງການຮັບຮອງ"* ຈະໃຫ້ຄວາມຢັ່ງຮູ້ຢ່າງຫຼວງຫຼາຍໃນເລື່ອງນີ້:

1. ເນື້ອຫາທີ່ອ່ານໃນປື້ມຫົວນີ້ ພະຍາຍາມທີ່ຈະຮັກສາລະດັບຄວາມງ່າຍ ຂອງໂຄງສ້າງປະໂຫຍກ ແລະ ລຳດັບການນຳສະເໜີເລື່ອງເອົາໄວ້. ຢ່າງໃດກໍ່ຕາມ ເມື່ອມີຄວາມຈຳເປັນກໍ່ຈະມີການໃຊ້ຄຳສັບ ຫຼື ວະລີທີ່ຍາກ. ບົດຮຽນນຳເອົາຄວາມໝາຍຂອງຄຳທີ່ຍາກເລົ່ານັ້ນອອກມາສະແດງ ໂດຍການຈັດວາງຄຳເລົ່ານັ້ນໃນເນື້ອຫາທີ່ແຕກຕ່າງກັນ ຫຼື ຈັດໄວ້ໃນບົດເຝິກຫັດຕ່າງໆ. ໂດຍການໃຊ້ຄຳສັບດ້ວຍວິທີການແບບນີ້ ເນື້ອຫາຂອງເລື່ອງລາວໃນປື້ມຈຶ່ງຫຼີກລ້ຽງການເປັນເລື່ອງລາວແບບເດັກໆ ຫຼື ເລື່ອງລາວທີ່ແປະບາງ. ຕົວຢ່າງເຊັ່ນ ຄວາມອະຍຸຕິທັມບໍ່ແມ່ນແນວຄວາມຄິດງ່າຍໆ ແມ່ນວ່າຈະເປັນຄຳທີ່ໃຊ້ກັນ ເລື້ອຍໆໃນບົດສົນທະນາທົ່ວໆໄປ. ເນື້ອຫາແລະບົດເຝິກຫັດໃນບົດທີ 6 ຊ່ວຍໃຫ້ເຢົາວະຊົນມີຄວາມ ເຂົ້າໃຈພໍສົມຄວນກ່ຽວກັບເລື່ອງນີ້. ເຈົ້າຄິດວ່າການນຳສະເໜີແນວຄວາມຄິດໃນປື້ມຫົວນີ້ມີປະສິດທິ ຜົນສຳລັບຄົນໜຸ່ມໃນຊ່ວງໄວນີ້ບໍ່ ຫຼື ເຈົ້າຄິດວ່າຈຳເປັນຕ້ອງໃຫ້ຄຳຈຳກັດຄວາມສຳລັບ "ຄຳສັບທີ່ຍາກ" ແກ່ເຢົາວະຊົນ?

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

2. ບົດຮຽນໃນປື້ມຫົວນີ້ຂຽນຂຶ້ນເພື່ອໃຫ້ສຶກສາກັນຢ່າງມ່ວນຊື່ນ, ໃນບັນຍາກາດແຫ່ງຄວາມສຸກຫັນສາ ແລະ ດ້ວຍການໄຕ່ຕອງຢ່າງຮອບຄອບ. ຄາດວ່າເຢົາວະຊົນຈະອ່ານເລື່ອງລາວ ແລະ ເຮັດບົດເຝິກຫັດທີ່ອອກແບບມາເພື່ອພັດທະນາທັກສະພາສາ ແລະ ເສີມສ້າງຄວາມເຂົ້າໃຈຄຳສັບ ແລະ ແນວຄິດ, ດ້ວຍຈັງຫວະໄວແຕ່ດ້ວຍຄວາມເອົາໃຈໃສ່ຕາມທີ່ຈຳເປັນ. ຈະເກີດຫຍັງຂຶ້ນຖ້າຫາກເຈົ້າພະຍາຍາມທີ່ຈະບັນລຸຄວາມສຳເລັດ ໃຫ້ຫຼາຍກວ່າເປົ້າໝາຍທີ່ຕັ້ງໄວ້ຂອງແຕ່ລະບົດຮຽນ ແລະ ພະຍາຍາມຕີປະເດັນໃນທຸກຈຸດຂອງເນື້ອຫາ?

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

3. ຊ່ວງເວລາຄວາມສົນໃຈຂອງເຢົາວະຊົນນັ້ນບໍ່ສັ້ນຄືກັບທີ່ຄາດການກັນໄວ້. ໃນຂະນະທີ່ພວກເຂົາເຈົ້າຮັກສາຄວາມສາມາດມ່ວນຊື່ນກັບເລື່ອງງ່າຍໆໃນຊີວິດ, ພວກເຂົາເຈົ້າກໍ່ສາມາດທີ່ຈະຄິດຢ່າງ

ເລິກເຊິ່ງ ກ່ຽວກັບແນວຄວາມຄິດທີ່ທ້າທາຍຂອງພວກເຂົາເຈົ້າດ້ວຍເຊັ່ນກັນ. ຖ້າຫາກສະພາບແວດລ້ອມຂອງກຸ່ມແມ່ນເປັນແບບໄວ້ວາໃຈ ແລະ ສະໜັບສະໜູນກັນ - ປາດສະຈາກຄວາມເຄັ່ງຕຶງທີ່ເກີດຈາກການແຂ່ງຂັນ ແລະ ແຮງກົດດັນໃນການບັນລຸຜົນຕາມມາທີ່ກຳໜົດໄວ້ - ການສຶກສາບົດຮຽນໃນປື້ມ *"ສາຍລົມແຫ່ງການຮັບຮອງ"* ຈະກໍໃຫ້ເກີດການສົນທະນາ ແລະ ການໂຕ່ຕອງໃນລະດັບທີ່ເໝາະສົມກັບຄວາມຕ້ອງການ ແລະ ຄວາມສາມາດຂອງເຍົາວະຊົນ. ມີຂັ້ນຕອນໃດແດ່ທີ່ເຈົ້າສາມາດຈະເຮັດໄດ້ ເພື່ອສ້າງບັນຍາກາດທີ່ຕ້ອງການຂຶ້ນມາ?

4. ການສຶກສາປື້ມຫົວນີ້ບໍ່ໄດ້ຄາດຫວັງວ່າຈະໃຫ້ມີ "ວຽກບ້ານ." ການເຮັດບົດເຝິກຫັດຄວນເຮັດໃນລະຫວ່າງທີ່ກຸ່ມພົບປະກັນຂອງກຸ່ມ ແລະ ປຶກສາຫາລືໂດຍມີຜູ້ຊຸກຍູ້ເຍົາວະຊົນໃຫ້ການຊ່ວຍເຫຼືອ. ແທນທີ່ຈະປ່ອຍໃຫ້ເຍົາວະຊົນເຮັດບົດເຝິກຫັດຢູ່ບ້ານ ການໃຊ້ແນວທາງນີ້ແມ່ນມີປະໂຫຍດແນວໃດ?

5. ບົດຮຽນສ່ວນໃຫຍ່ໃນປື້ມຫົວນີ້ປະກອບດ້ວຍ ກິດຈະກຳທີ່ເຍົາວະຊົນຈະຕ້ອງຂຽນສອງສາມປະໂຫຍກ, ບໍ່ວ່າຈະກ່ຽວກັບເນື້ອຫາຂອງເລື່ອງລາວທີ່ໄດ້ສຶກສາໄປແລ້ວ ຫຼື ກ່ຽວກັບແນວຄວາມຄິດສະເພາະ ແລະ ການປະຍຸກໃຊ້ເນື້ອຫາເຂົ້າໃນຊີວິດຂອງພວກເຂົາເຈົ້າ. ເຈົ້າຈະຊ່ວຍເຍົາວະຊົນໃນການປະຕິບັດກິດຈະກຳແບບນີ້ໄດ້ແນວໃດ, ເພື່ອຊ່ວຍໃຫ້ພວກເຂົາຮຽນຮູ້ທີ່ຈະສະແດງອອກຕົວຕົນຂອງພວກເຂົາຢ່າງຊັດເຈນ?

6. ບົດທີ 2, 5, 9, 10, 13 ແລະ 14 ຂອງປື້ມຈົບລົງດ້ວຍພຣະວັດຈະນະ ຈາກພຣະທັມມະລິຂິດທີ່ເຍົາວະຊົນຖືກຊຸກຍູ້ໃຫ້ທ່ອງຈຳ. ເຈົ້າອາພົບວ່າມັນເປັນປະໂຫຍດເມື່ອອ້າງອີງໃສ່ໜຶ່ງຫຼືສອງຂອງພຣະທັມມະລິຂິດເລົ່ານີ້ ເພື່ອສຳຫຼວດເບິ່ງວ່າກົດຈະກຳສຸດທ້າຍໃນບົດຮຽນ ຊ່ວຍສົ່ງເສີມໃຫ້ກັບແນວຄວາມຄິດທີ່ບົດຮຽນນຳສະເໜີໄດ້ແນວໃດ.

7. ນອກເໜືອຈາກຫົວຂໍ້ຫຼັກແລ້ວ, ປື້ມຫົວນີ້ຍັງກ່າວເຖິງ ແນວຄວາມຄິດທາງສິນລະທັມຫຼາຍຢ່າງ ແລະ ພະຍາຍາມທີ່ຈະເສີມກ່ຽວກັບຄຸນລັກສະນະ ແລະ ທັດສະນະຄະຕິອັນໜ້າສັນລະເສີນ. ຕົວຢ່າງ ເຊັ່ນ ໂຣດສ໌ ປັນອາຫານຂອງລາວໃຫ້ກັບເດັກນ້ອຍເທິງລົດເມ. ກ໊ອດວິນ ແລະ ຊິຊິມບ້າ ຊ່ວຍຜູ້ຍິງຄົນໜຶ່ງແບກຟື້ນ. ໂຣດສ໌ ກັບ ມູຊອນດ້າ ຊ່ວຍສອນເດັກນ້ອຍໃນຂະນະທີ່ແມ່ຂອງພວກເຂົາເຂົ້າຮຽນກ່ຽວກັບໂພສະນາການທີ່ຫ້ອງກວດສຸຂະພາບ. ການແຂ່ງຂັນເຕະບານເປັນການແຂ່ງຂັນຢ່າງມີມິດຕະພາບໂດຍທີ່ “ການຊະນະ” ບໍ່ແມ່ນຈຸດປະສົງທີ່ຄອບງຳການແຂ່ງຂັນນັ້ນ. ຄວນໃຫ້ຄວາມເອົາໃຈໃສ່ປະເດັນເລົ່ານີ້ຫຼາຍໜ້ອຍພຽງໃດ? ເຮົາຄວນຊີ້ໃຫ້ເຫັນທຸກປະເດັນ ແລະ ອະທິບາຍຢ່າງລະອຽດຖີ່ຖ້ວນບໍ? ຫຼືວ່າຄວນຈະປ່ອຍໃຫ້ປະເດັນເລົ່ານີ້ປະກົດຂຶ້ນມາເອງຢ່າງເປັນທຳມະຊາດ ໃນລະຫວ່າງການປຶກສາຫາລືກໍພຽງພໍແລ້ວບໍ?

8. ເລື່ອງລາວນີ້ເກີດຂຶ້ນໃນໝູ່ບ້ານຂອງຊາວອາຟຣິກາ. ໜັງສືເລົ່ານີ້ເປັນໜັງສືທີ່ແນະນຳໃຫ້ໃຊ້ໃນໂຄງການເສີມສ້າງຄວາມສາມາດທາງຈິດວິນຍານແກ່ເຍົາວະຊົນ ເພື່ອພັດທະນາຄວາມເປັນຢູ່ທີ່ແທ້ຈິງທີ່ມີຢູ່ໃນຫຼາຍວັດທະນະທັມ ແລະ ວົງສັງຄົມໃນທະວີບຕ່າງໆ. ນີ້ເປັນສິ່ງທີ່ເພີ່ມຄວາມ

ເຂັ້ມຂົ້ນໃຫ້ແກ່ໂຄງການ. ບາງຄົນອາດສະເໜີວ່າມີຄວາມຈຳເປັນທີ່ຈະຕ້ອງ "ປັບແຕ່ງໜັງສືເລົ່ານີ້ໃຫ້ເຂົ້າກັບສະພາບຄວາມເປັນຢູ່ທີ່ແທ້ຈິງ ຂອງຊາວໜຸ່ມໃນແຕ່ລະປະເທດຫຼືບໍ່" ຍົກຕົວຢ່າງເຊັ່ນ, ການປ່ຽນຊື່ຕົວລະຄອນໃນເລື່ອງລາວ. ຢ່າງໃດກໍຕາມ ຜູ້ຄົນທັງຫຼາຍເຄີຍອ່ານເລື່ອງລາວຈາກວັດທະນະທັມອື່ນໆ ທີ່ບໍ່ແມ່ນຂອງຕົນເອງມານານຫຼາຍສັດຕະວັດແລ້ວ, ໄດ້ຮັບຄວາມເພີດເພີນ ແລະ ການຮຽນຮູ້ຈາກເລື່ອງລາວເລົ່ານັ້ນ. ແນ່ນອນວ່າ ພວກເຂົາສຶກສາເລື່ອງລາວເລົ່ານັ້ນຢ່າງມີສະຕິ. ເຈົ້າຈະຊ່ວຍໃຫ້ເຍົາວະຊົນມີຄວາມສຳນຶກ ໃນມຸມມອງດ້ານນີ້ຂອງຫຼັກສູດໄດ້ແນວໃດ? ເຈົ້າຄິດແນວໃດກ່ຽວກັບຄວາມເຊື່ອຂອງບາງຄົນທີ່ເຊື່ອວ່າ ເດັກນ້ອຍ ແລະ ເຍົາວະຊົນຈະຮຽນຮູ້ໄດ້ຈາກໜັງສື ຫຼື ເລື່ອງລາວທີ່ຂຽນຂຶ້ນໃນບໍລິບົດ ຫຼື ເນື້ອຫາທີ່ເປັນຂອງວັດທະນະທຳຂອງຕົນເອງເທົ່ານັ້ນ?

________________________________________________

________________________________________________

________________________________________________

________________________________________________

________________________________________________

________________________________________________

## ຕອນທີ 22

*"ດວງຈິດແຫ່ງຄວາມສັດທາ,"* ດັ່ງທີ່ເຮົາໄດ້ສັງເກດເຫັນໃນມໍ່ໆມານີ້, ປຶ້ມນີ້ເປັນໜຶ່ງໃນຫຼາຍປຶ້ມທີ່ມີເນື້ອຫາຄວາມຕໍ່ເນື່ອງກັບຊັ້ນຮຽນເດັກນ້ອຍບາຮາຍ ແລະ ມີການອ້າງອີງເຖິງບຸກຄົນສຳຄັນຂອງສາສະໜາຢ່າງຊັດເຈນ. ພວກເຮົາໄດ້ກ່າວໄປກ່ອນໜ້ານີ້ແລ້ວວ່າ ຄົນລຸ້ນເຍົາເປັນຊ່ວງໄລຍະໜຶ່ງຂອງຊີວິດທີ່ບຸກຄົນຈະສົນໃຈຫຼາຍເປັນພິເສດ ທີ່ຈະພະຍາຍາມຫາຄຳຕອບໃຫ້ກັບບັນຫາດ້ານປັດສະຍາ, ໂດຍສະເພາະເລື່ອງທີ່ກ່ຽວກັບຈຸດປະສົງ ແລະ ທຳມະຊາດຂອງການດຳລົງຢູ່ຂອງມະນຸດ. ປຶ້ມ *"ດວງຈິດຂອງຄວາມສັດທາ"* ເລີ່ມຕົ້ນດ້ວຍການຖາມຄຳຖາມວ່າ "ການເປັນມະນຸດແມ່ນຫຍັງ" ໃນການພະຍາຍາມຕອບຄຳຖາມນີ້, ເນື້ອຫາຫຼາຍຕອນຂອງໜັງສືໄດ້ສຳຫຼວດແນວຄວາມຄິດ ທີ່ກ່ຽວຂ້ອງຫຼາຍເລື່ອງເຊັ່ນ: ຄວາມປະເສີດຂອງມະນຸດ; ທຳມະຊາດຝ່າຍທີ່ສູງກວ່າ ແລະ ຕໍ່າກວ່າ ຂອງມະນຸດ, ຄວາມບໍ່ມີຕົວຕົນຂອງຄວາມຊົ່ວຮ້າຍ, ຄວາມສະໝັກໃຈ, ເຈດຈຳນົງ, ໂຊກຊະຕາ; ພະລັງແຫ່ງສະຕິປັນຍາ; ການຄົ້ນຫາຄວາມຈິງທາງວິທະຍາສາດ; ວິວັດທະນາການທາງກາຍະພາບ; ຈິດໃຈຂອງມະນຸດ; ແລະສຸດທ້າຍຄື ດວງຈິດແຫ່ງຄວາມສັດທາ.

ເຊັ່ນດຽວກັນກັບກໍລະນີຂອງປຶ້ມ *"ສາຍລົມແຫ່ງການຮັບຮອງ"*, ເຈົ້າຈຳເປັນຕ້ອງອ່ານປຶ້ມເຫຼັ້ມນີ້ຈົນຈົບຮອບໜຶ່ງກ່ອນ ແລະ ອ່ານຊ້ຳອີກຄັ້ງໜຶ່ງຢ່າງລະມັດລະວັງ, ດ້ວຍຄວາມເອົາໃຈໃສ່ສະເພາະເປັນ

ພິເສດກັບຕອນຕ່າງດ້ວຍ "ການໄຕ່ຕອງ". ຈາກນັ້ນເຈົ້າຈຶ່ງຄວນວິເຄາະວ່າ ປຶ້ມຕ່າງໆຕັ້ງເປົ້າໃຫ້ບັນລຸວັດຖຸປະສົງຂອງເນື້ອຫາໄດ້ແນວໃດ ໂດຍການຕອບຄຳຖາມທີ່ຢູ່ຂ້າງລຸ່ມນີ້:

1. ໃນບົດທີ 1 ມີການຍົກບາງຂໍ້ຄວາມຈາກພຣະທັມມະລິຂິດຂອງ ພຣະບາຣາອຸລລາຫ໌ ມາອ້າງອີງ ເຊິ່ງປະກອບມີຮູບພາບທີ່ຊ່ວຍໃຫ້ເຍົາວະຊົນໄດ້ຄິດ ກ່ຽວກັບຕົວຕົນທີ່ແທ້ຈິງຂອງຕົນເອງ. ຮູບພາບແຕ່ລະຮູບໃຫ້ຂໍ້ຄິດເຫັນຫຍັງໃນເລື່ອງນີ້? ການໄຕ່ຕອງຄວາມຄິດໃນບົດຮຽນແຕ່ລະບົດຊ່ວຍເສີມສ້າງຄວາມເຂົ້າໃຈໃນເລື່ອງນີ້ແນວໃດ?

______________________________________________________

______________________________________________________

______________________________________________________

______________________________________________________

______________________________________________________

2. ເຍົາວະຊົນໄດ້ມາເຊິ່ງຄວາມຮູ້ສຶກຊື່ນຊົມ ໃນຄຸນຄ່າຂອງການສ້າງສັນຂອງພຣະຜູ້ເປັນເຈົ້າ ແລະຄວາມປະເສີດຂອງມະນຸດໃນຊ່ວງທຳອິດຂອງບົດທີ 2 ຄືແນວໃດ?

______________________________________________________

______________________________________________________

______________________________________________________

3. ການໄຕ່ຕອງຄັ້ງທຳອິດຂອງບົດຮຽນນີ້ ຊ່ວຍໃຫ້ພວກເຂົາມອງເຫັນການນຳເອົາແນວຄວາມຄິດເລື່ອງຄວາມປະເສີດໄປໃຊ້ໃນຊີວິດຂອງຕົນເອງແນວໃດ?

______________________________________________________

______________________________________________________

______________________________________________________

4. ໃນຊ່ວງຕໍ່ໄປຂອງບົດຮຽນນີ້ພວກເຂົາຄົ້ນພົບສາເຫດ ທີ່ເຮັດໃຫ້ມະນຸດຕົກຕ່ຳລົງໄດ້ດ້ວຍຕົນເອງ. ສິ່ງນັ້ນແມ່ນຫຍັງ?

______________________________________________________

______________________________________________________

______________________________________________________

5. ເຈົ້າຄາດຫວັງວ່າເຍົາວະຊົນຈະມີຄວາມເຂົ້າໃຈຫຍັງແດ່ ຈາກການສຶກສາພຽງສັ້ນໆກ່ຽວກັບທຳມະຊາດຝ່າຍທີ່ສູງກວ່າ ແລະ ຕ່ຳກວ່າຂອງມະນຸດ?

6. ເຢົາວະຊົນຮຽນຮູ້ຫຍັງແດ່ ກ່ຽວກັບການພັດທະນາທຳມະຊາດຝ່າຍທີ່ສູງກວ່າຂອງພວກເຂົາຈາກການໄຕ່ຕອງຄັ້ງທີ່ສອງຂອງບົດຮຽນນີ້?

7. ການສຳນຶກວ່າທຳມະຊາດຝ່າຍທີ່ຕ່ຳກວ່າຂອງມະນຸດນັ້ນ ບໍ່ແມ່ນຄວາມຊົ່ວຮ້າຍ ຊ່ວຍເຢົາວະຊົນແນວໃດໃນການຫຼີກລ້ຽງຈາກຄວາມຮູ້ສຶກຜິດ ໃນແຕ່ລະຄັ້ງທີ່ພວກເຂົາເຮັດຜິດພາດ? ຕົວຢ່າງແນວໃດທີ່ຖືກນຳໃຊ້ເຂົ້າໃນການຊ່ວຍ ໃຫ້ຄວາມເຂົ້າໃຈຂອງພວກເຂົາເລິກເຊິ່ງຍິ່ງຂຶ້ນໃນຫົວຂໍ້ດັ່ງກ່າວ.

8. ສ່ວນທ້າຍຂອງບົດທີ 2 ແລະ ການໄຕ່ຕອງສອງຄັ້ງສຸດທ້າຍ, ໃຫ້ຄວາມຢັ່ງຮູ້ອັນໃດແດ່ ກ່ຽວກັບວິທີການຄວບຄຸມການບົງການຂອງທຳມະຊາດຝ່າຍຕ່ຳ?

9. ແນວຄວາມຄິດເລື່ອງເຈດຈຳນົງທີ່ອະທິບາຍໄວ້ໃນບົດທີ 3 ເປັນແນວໃດ? ເຈົ້າພົບວ່າສະຖານະການທີ່ອະທິບາຍຢູ່ໃນບົດນີ້ໃຊ້ໄດ້ກ່ຽວຂ້ອງກັບຊີວິດຂອງຄົນລຸ້ນເຢົາບໍ?

10. ເຍົາວະຊົນຮຽນຮູ້ຫຍັງແດ່ໃນບົດທີ 3 ໃນເລື່ອງທີ່ກ່ຽວຂ້ອງກັບບົດບາດຂອງຄວາມສະໝັກໃຈໃນການພັດທະນາຂອງທຳມະຊາດຝ່າຍທີ່ສູງກວ່າຂອງພວກເຂົາ?

11. ໃນສະໜາມຂອງຊີວິດຈິງໃດແດ່ ທີ່ເຍົາວະຊົນຈະຄົ້ນພົບວ່າ ພວກເຂົາສາມາດເຝິກແອບທີ່ຈະໃຊ້ຄວາມສະໝັກໃຈໄດ້? ເປັນຫຍັງຈຶ່ງເປັນສິ່ງທີ່ສຳຄັນສຳລັບພວກເຂົາ ທີ່ຕ້ອງຮູ້ເຖິງຂໍ້ຈຳກັດຂອງຄວາມສະໝັກໃຈຂອງພວກເຂົາ?

12. ຄວາມຢັ່ງຮູ້ເພີ່ມເຕີມອັນໃດແດ່ ທີ່ພວກເຍົາວະຊົນໄດ້ຮັບຈາກການໄຕ່ຕອງຄັ້ງທີ່ສອງຂອງບົດຮຽນນີ້ ເພື່ອທີ່ຈະເປັນປະໂຫຍດຕໍ່ການໃຊ້ຄວາມສະໝັກໃຈຂອງພວກເຂົາ?

13. ເປັນຫຍັງຈຶ່ງເປັນສິ່ງສຳຄັນສຳລັບເຍົາວະຊົນ ທີ່ຈະເບິ່ງເຫັນຄວາມແຕກຕ່າງລະຫວ່າງ ການຄວບຄຸມຜູ້ອື່ນ ແລະ ການມີອິດທິພົນໃນທາງບວກຕໍ່ພວກເຂົາ? ເຈົ້າຄິດວ່າການປຶກສາຫາລືທີ່ມີຢູ່ໃນການໄຕ່ຕອງຄັ້ງທີ່ສາມ ຊ່ວຍພວກເຂົາໃນຄວາມພະຍາຍາມທີ່ຈະມີອິດທິພົນທາງບວກຕໍ່ສະພາບແວດລ້ອມຂອງຕົນເອງແນວໃດ?

14. ບົດທີ 3 ສອນເຍົາວະຊົນກ່ຽວກັບເລື່ອງ “ໂຊກຊະຕາ” ແນວໃດ?

15. ຄວາມເຂົ້າໃຈຜິດທີ່ກ່ຽວໂຍງກັບແນວຄວາມຄິດເລື່ອງໂຊກຊະຕາແບບໃດ ທີ່ບົດຮຽນນີ້ພະຍາຍາມທີ່ຈະກຳຈັດ?

16. ການປຽບທຽບໂດຍໃຊ້ເຮືອທີ່ກຳລັງແລ່ນຢູ່ ມີປະສິດຕິພາບແນວໃດໃນການຊ່ວຍໃຫ້ເຍົາວະຊົນມີມຸມມອງທີ່ເໝາະສົມ ກ່ຽວກັບຄຸນຄ່າຂອງຄວາມພະຍາຍາມຂອງຕົນເອງ ແລະ ພະລັງຂອງການຊ່ວຍເຫຼືອຈາກສະຫວັນໃນຊີວິດຂອງພວກເຂົາ?

17. ໃນຊ່ວງທຳອິດຂອງບົດທີ 4 ຊ່ວຍໃຫ້ເຍົາວະຊົນຄົ້ນພົບຂໍ້ຈຳກັດຂອງທຳມະຊາດໄດ້ດ້ວຍວິທີໃດ?

18. ບົດຮຽນນີ້ກ່າວເຖິງວິຖີທີ່ມະນຸດກ້າວພົ້ນໄປ ຈາກຂໍ້ຈຳກັດເລົ່ານີ້ໄດ້ແນວໃດ?

19. ການໂຕ້ແຍ້ງຖືກຍົກຂຶ້ນມາໃນບົດຮຽນວ່າ ວິທະຍາສາດທັງໝົດເປັນຂອງມະນຸດຊາດ. ການໂຕ້ແຍ້ງນີ້ແມ່ນຫຍັງ?

20. ໃນຂໍ້ຄວາມທີ່ກ່ຽວຂ້ອງກັບວິທະຍາສາດທີ່ອ້າງອີງໃນບົດທີ 4, ມີການກ່າວວ່າ "ພຣະຜູ້ເປັນເຈົ້າຊົງສ້າງຫຼືຊົງຝາກຄວາມຮັກແຫ່ງຄວາມສັດຈະທັມໄວ້ໃນຕົວມະນຸດ." ການປູກຝັງຄວາມຮັບແຫ່ງຄວາມສັດຈະທັມນີ້ໄວ້ໃນເຍົາວະຊົນ ມີຄວາມສຳຄັນແນວໃດ?

21. ພະລັງຂອງການສັງເກດທີ່ອະທິບາຍໄວ້ສຳລັບເຍົາວະຊົນເປັນຄືແນວໃດ?

22. ຕົວຢ່າງທີ່ໃຫ້ໄວ້ໃນບົດທີ 4 ຊ່ວຍເຍົາວະຊົນໃນການຮູ້ສຶກຊື່ນຊົມຕໍ່ບົດບາດຂອງການສັງເກດ ແລະ ການທົດລອງທີ່ມີຕໍ່ຄວາມກ້າວໜ້າທາງວິທະຍາສາດແນວໃດ?

23. ບົດຮຽນໄດ້ບອກເປັນໄນບໍ່ວ່າ ເຍົາວະຊົນສາມາດໃຊ້ພະລັງຂອງການສັງເກດໃນທຸກແງ່ມຸມຂອງຊີວິດ? ເປັນຫຍັງເຈົ້າຈຶ່ງຄິດວ່າຕົວຢ່າງທີ່ຖາມໃນການໄຕ່ຕອງຄັ້ງທີ່ສາມ, ທີ່ຊຸກຍູ້ໃຫ້ພວກເຂົາເຝິກພະລັງນີ້, ເນັ້ນໜັກທັງໝົດສະເພາະທຳມະຊາດຝ່າຍທີ່ສູງກວ່າຂອງມະນຸດ?

24. ຕົວຢ່າງທີ່ໃຫ້ໄວ້ໃນການໄຕ່ຕອງຄັ້ງທີ່ສີ່ບອກເປັນໄນວ່າ ການທົດລອງບໍ່ສາມາດໃຊ້ໄດ້ໃນທຸກແງ່ມຸມຂອງຊີວິດ. ຕົວຢ່າງເລົ່ານີ້ ຊ່ວຍໃຫ້ເຍົາວະຊົນຊື່ນຊົມຄວາມສຳຄັນຂອງຫຼັກການນີ້ໄດ້ແນວໃດ?

25. ຕົວຢ່າງທີ່ຫຼາກຫຼາຍໃນບົດທີ 5 ແລະ 6 ຊ່ວຍໃຫ້ເຍົາວະຊົນໄດ້ມາເຊິ່ງຄວາມຢັ່ງຮູ້ ກ່ຽວກັບທິດສະດີທີ່ຊັບຊ້ອນເລື່ອງວິວັດທະນາການຂອງສາຍພັນໄດ້ແນວໃດ?

26. ການປະກົດຂຶ້ນຂອງດວງຈິດຂອງມະນຸດ ທີ່ອະທິບາຍໄວ້ໃນຂະບວນການຂອງວິວັດທະນາການນີ້ເປັນຄືແນວໃດ?

27. ໃນບົດທີ 6 ນາຕາເລຍ ເພໂທຣນ່າ ຜູ້ຊຸກຍູ້ເຍົາວະຊົນ ອ່ານພຣະວັດຈະນະສອງຕອນຈາກທັມມະລິຂິດຂອງ ພຣະອັບດຸລບາຮາ ໃຫ້ແກ່ກຸ່ມເຍົາວະຊົນໃນເລື່ອງລາວ ແລະ ຈາກນັ້ນກໍຊ່ວຍພວກເຂົາຮຽນ ແລະ ທຳຄວາມເຂົ້າໃຈກ່ຽວກັບພຣະວັດຈະນະ. ບໍ່ມີຂໍ້ບົ່ງຊີ້ວ່າ ນາຕາເລຍ ເຮັດແນວນັ້ນໄດ້ແນວໃດ. ເຈົ້າຈະອະທິບາຍພຣະວັດຈະນະເລົ່ານັ້ນແນວໃດ?

28. ແມ່ນຫຍັງຄືລັກສະນະທີ່ໂດດເດັ່ນຂອງດວງຈິດຂອງມະນຸດ ຕາມທີ່ອະທິບາຍໄວ້ໃນຕອນທຳອິດຂອງບົດທີ 7?

29. ການຮັບຮູ້ທີ່ໄດ້ນຳສະເໜີຢູ່ໃນການໄຕ່ຕອງຄັ້ງທຳອິດຂອງບົດນີ້ເປັນແນວໃດ? ບົດເຝິກຫັດທັງສອງໃນການໄຕ່ຕອງ ມີກ່ຽວຂ້ອງກັບຊີວິດຂອງເຍົາວະຊົນແນວໃດ?

30. ພະລັງຂອງສະຕິປັນຍາຂອງມະນຸດກາຍ ເປັນເຄື່ອງມືຂອງທຳມະຊາດຝ່າຍສູງໄດ້ແນວໃດ? ການນຳສະເໜີຄວາມແຕກຕ່າງກັນ, ດັ່ງທີ່ມີຢູ່ໃນການໄຕ່ຕອງຄັ້ງທີ່ສອງ ເປັນວິທີທີ່ມີປະໂຫຍດບໍໃນການສະແດງໃຫ້ເຫັນວ່າ ສະຕິປັນຍາຂອງມະນຸດຈຳເປັນຕ້ອງໄດ້ຮັບການນຳທາງ?

31. ດວງຈິດແຫ່ງຄວາມສັດທາແມ່ນຫຍັງ?

32. ການໄຕ່ຕອງສອງຄັ້ງສຸດທ້າຍຂອງບົດທີ 7 ຊ່ວຍໃຫ້ເຍົາວະຊົນເບິ່ງເຫັນ ປະຕິບັດການຂອງ ດວງຈິດແຫ່ງຄວາມສັດທາ ທີ່ດຳເນີນຢູ່ໃນຊີວິດຂອງພວກເຂົາຄືແນວໃດ?

## ຕອນທີ 23

ຫົວໃຈສຳຄັນຂອງປຶ້ມ *"ດວງຈິດແຫ່ງຄວາມສັດທາ"* ຄືຫຼັກການແຫ່ງຄວາມກົມກືນກັນລະຫວ່າງ ວິທະຍາສາດ ແລະ ສາສະໜາ. ບັນດາຄວາມໝາຍທີ່ເຊື່ອງຊ້ອນຂອງຫຼັກການນີ້ ຕໍ່ຊີວິດຂອງມະນຸດມີ ຄວາມເລິກເຊິ່ງ, ແລະ ພວກເຮົາແຕ່ລະຄົນຄວນພະຍາຍາມທຳຄວາມເຂົ້າໃຈ ການເຮັດວຽກຂອງ ຫຼັກການນີ້. ແນ່ນອນວ່າ, ມີມຸມມອງບາງຢ່າງກ່ຽວກັບວິທະຍາສາດ ແລະ ສາສະໜາທີ່ແມ່ນວ່າຈະບໍ່ຂັດ ແຍ້ງກັນໂດຍກົງ ແຕ່ກໍ່ບໍ່ເປັນໄປຕາມຂໍ້ກຳໜົດຂອງຄວາມສຳພັນ ທີ່ກົມກືນກັນລະຫວ່າງທັງສອງຢ່າງ ຊັດເຈນ - ຕົວຢ່າງເຊັ່ນ ການອ້າງວ່າຄວາມເລິກລັບໃດໆທີ່ສາສະໜາກ່າວເຖິງໃນປັດຈຸບັນ ໃນທີ່ສຸດ ແລ້ວຈະໄດ້ຮັບການອະທິບາຍໂດຍວິທະຍາສາດເມື່ອຄວາມກ້າວໜ້າໃກ້ເຂົ້າມາ, ຫຼືໃນທາງກົງກັນຂ້າມ ຄວາມເຊື່ອທີ່ວ່າຄວາມຈິງທາງວິທະຍາສາດທັງໝົດ ສາມາດຄົ້ນພົບໄດ້ໃນທີ່ສຸດໂດຍການອ່ານພຣະຄຳ ພີທາງສາສະໜາ ເນື່ອງຈາກວ່າມາຈາກພຣະຜູ້ເປັນເຈົ້າຜູ້ຊົງຮອບຮູ້. ໂດຍປາດສະຈາກການລົງເລິກ ເຖິງຄວາມເຂົ້າໃຈຜິດທີ່ຢູ່ເບື້ອງຫຼັງມຸມມອງແຕ່ລະມຸດ ພວກເຮົາກໍ່ຈະເຫັນໄດ້ຢ່າງຊັດເຈນວ່າ ໃນທັງ ສອງມຸມມອງ, ແຫຼ່ງຄວາມຮູ້ໜຶ່ງຖືກເຮັດໃຫ້ດ້ອຍກວ່າອີກແຫຼ່ງໜຶ່ງ ເຊິ່ງເກືອບຈະພິຈາລະນາບໍ່ໄດ້ເລີຍ ວ່າເປັນຄວາມກົມກືນທີ່ແທ້ຈິງ. ແຕ່ເຖິງແມ່ນວ່າຈະປະຕິເສດມຸມມອງດັ່ງກ່າວ ພວກເຮົາກໍ່ຕ້ອງຖາມຕົວ ເອງວ່າ ພວກເຮົາຈິນຕະນາການເຖິງວິທະຍາສາດ ແລະ ສາສະໜາທີ່ສົ່ງເສີມເຊິ່ງກັນແລະກັນໄດ້ ແນວໃດ. ດ້ວຍເຫດນີ້, ຂໍ້ຄວາມຂ້າງລຸ່ມນີ້ຈຶ່ງຖືກຈັດກຽມໄວ້ເພື່ອໃຫ້ເຈົ້າພິຈາລະນາ. ຂໍໃຫ້ອ່ານຂໍ້ຄວາມ ດັ່ງກ່າວແລ້ວເຮັດບົດເຝິກຫັດຕໍ່ໄປນີ້.

ຄວາມເປັນໄປໄດ້ອີກແນວໜຶ່ງກໍ່ຄື ຄວາມຈິງທີ່ບັນຈຸຢູ່ໃນວິທະຍາສາດ ແລະ ສາສະໜາ ຄອບຄຸມປະສົບການສອງມຸມມອງທີ່ແຍກຈາກກັນ ແລະ ມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ ຈົນເປັນໄປບໍ່ໄດ້ທີ່ຈະມີຄວາມຂັດແຍ້ງຂອງຄວາມສຳພັນລະຫວ່າງກັນແລະກັນ. ວິທະຍາສາດສຶກສາຈັກກະວານທີ່ເປັນວັດຖຸ, ບໍ່ພຽງແຕ່ການເຮັດວຽກຂອງທຳມະຊາດເທົ່ານັ້ນ ແຕ່ຍັງລວມເຖິງປາກົດການບ່າງຢ່າງທີ່ກ່ຽວຂ້ອງກັບຊຸມຊົນ, ສະຖາບັນ, ແລະ ການປະຕິສຳພັນຕ່າງໆຂອງມະນຸດອີກດ້ວຍ. ຄວາມຮູ້ທີ່ເກີດຂຶ້ນເປັນພື້ນຖານຂອງຄວາມກ້າວໜ້າທາງດ້ານເທັກໂນໂລຢີ ແລະ ເທັກໂນໂລຢີສາມາດຖືກນຳມາໃຊ້ບໍ່ວ່າຈະເພື່ອຄວາມຜາສຸກຂອງມະນຸດຊາດ ຫຼື ເພື່ອຄວາມຊຸດໂຊມຂອງມະນຸດຊາດກໍ່ໄດ້. ບໍ່ວ່າສັງຄົມສາດຈະກ້າວໜ້າໄປໄກຊໍ່າໃດ ວິທະຍາສາດໃນຕົວຂອງມັນເອງ ແມ່ນມີຄວາມສາມາດຈຳກັດໃນການກຳນົດວ່າຄວນໃຊ້ຜະລິດຕະພັນໃດ. ໃນທາງກົງກັນຂ້າມ, ສາສະໜາກ່ຽວຂ້ອງຢ່າງແນ່ນອນ ກັບມິຕິທາງຈິດວິນຍານຂອງການດຳລົງຢູ່ຂອງມະນຸດ. ຈຸດປະສົງຂອງສາສະໜາຄືການສ່ອງແສງໃຫ້ກັບຊີວິດພາຍໃນຂອງບຸກຄົນ, ເພື່ອສຳພັດກັບຮາກຫຍ້າຂອງແຮງຈູງໃຈ ແລະ ເພື່ອສ້າງຫຼັກປະຕິບັດທາງຈະລິຍະທັມ ແລະ ສິນລະທັມທີ່ຈະສາມາດນຳທາງຢ່າງເໝາະສົມແກ່ພຶດຕິກຳຂອງມະນຸດ. ຂະບວນການສ້າງອາລິຍະທັມນັ້ນຂຶ້ນຢູ່ກັບລະບົບຄວາມຮູ້ທັງສອງມຸມມອງ ຕາບໃດທີ່ແຕ່ລະໆບົບຍັງຄົງຢູ່ໃນຂອບເຂດຂອງອັດສະລິຍະພາບຂອງມັນເອງ, ກໍ່ບໍ່ມີເຫດຜົນໃດທີ່ທັງສອງມຸມມອງຈະຂັດແຍ້ງກັນ.

ແນວຄວາມຄິດກ່ຽວກັບຄວາມສອດຄ່ອງຂອງວິທະຍາສາດ ແລະ ສາສະໜານີ້ແມ່ນຖືກຕ້ອງ, ແຕ່ເປັນພຽງລະດັບຂອງການປະຍຸກໃຊ້ເທົ່ານັ້ນ. ໃນທີ່ສຸດແລ້ວ ດ້ວຍແນວຄວາມຄິດແບບນີ້, ວິທະຍາສາດ ແລະ ສາສະໜາຍັງຄົງແຍກກັນຢູ່, ແລະ ຖືກປ່ອຍໃຫ້ເດີນໄປຕາມທາງຂອງຕົນເອງ, ແລະ ສິ່ງທີ່ຈະເຂົ້າມາມີຄວາມສຳຄັນຄື ການມີປະຕິສຳພັນລະຫວ່າງເທັກໂນໂລຢີ ແລະ ສິນລະທັມ. ແຕ່ການວິເຄາະກ່ຽວກັບຄວາມສຳພັນລະຫວ່າງວິທະຍາສາດ ແລະ ສາສະໜາໃນລັກສະນະນີ້ ກໍ່ໄປເຖິງຂີດຈຳກັດ. ໃນອີກບໍ່ດົນ, ເພາະໃນຄວາມເປັນຈິງແລ້ວ ມີຢູ່ຫຼາຍປະກົດການທີ່ທັງວິທະຍາສາດ ແລະ ສາສະໜາ ຕ່າງພະຍາຍາມທຳຄວາມເຂົ້າໃຈ ແລະ ອະທິບາຍກັນແລະກັນ. ໃນຂະນະທີ່ສິ່ງນີ້ເປັນສິ່ງທີ່ມອງບໍ່ຄ່ອຍເຫັນໃນໂລກວັດຖຸ, ແຕ່ຜັດເປັນທີ່ຊັດເຈນໃນການສຶກສາກ່ຽວກັບມະນຸດ ແລະ ສັງຄົມ. ຍິ່ງໄປກວ່ານັ້ນ, ຍັງມີຄວາມຄືກັນຢູ່ຫຼວງຫຼາຍລະຫວ່າງວິທະຍາສາດ ແລະ ສາສະໜາ ກ່ຽວກັບວິທີການທີ່ທັງ ສອງກ່າວກ່ຽວກັບການດຳລົງຢູ່ຢ່າງແທ້ຈິງ. ຍົກຕົວຢ່າງເຊັ່ນ: ທັງສອງເຊື່ອໃນເລື່ອງການມີຢູ່ຂອງລຳດັບໃນການສ້າງສັນແລະເຊື່ອບໍ່ຫຼາຍກໍ່ໜ້ອຍວ່າ, ສະຕິປັນຍາຂອງມະນຸດສາມາດເຂົ້າໃຈໃນລຳດັບການສ້າງສັນນີ້ໄດ້. ວິທີການທາງວິທະຍາສາດໄດ້ພິສູດຢ່າງມີປະສິດຕິຜົນຫຼວງຫຼາຍ ໃນການຄົ້ນພົບເລື່ອງການເຮັດວຽກຂອງຈັກກະວານ. ແຕ່ສາສະໜາເອງກໍ່ເຊັ່ນກັນ, ຕ້ອງໃຊ້ວິທີການເລົ່ານີ້ ໃນຄວາມພະຍາຍາມທີ່ຈະນຳທາງມະນຸດທັງຫຼາຍໃຫ້ມີສ່ວນສະໜັບສະໜູນ ຕໍ່ອະລິຍະທັມທີ່ກ້າວໄປຂ້າງໜ້າຢ່າງບໍ່ຢຸດຢັ້ງ. ວິທະຍາສາດແລະສາສະໜາແມ່ນບໍ່ຄືກັນ, ແຕ່ທັງສອງກໍ່ມີຢູ່ຫຼາຍສິ່ງຫຼາຍຢ່າງທີ່ຄືກັນ ພໍຈະສາມາດເວົ້າຈາກັນໄດ້, ທີ່ຈະສາມາດສອດຄ້ອງກັນ, ມີອິດທິພົນແກ່ກັນແລະກັນ ແລະ ສົ່ງເສີມ

*ເຊິ່ງກັນແລະກັນ. ດັ່ງນັ້ນ ຈຶ່ງເປັນເລື່ອງສົມເຫດສົມຜົນທີ່ເບິ່ງວ່າວິທະຍາສາດແລະສາສະໜາເປັນສອງລະບົບຄວາມຮູ້ ແລະ ການປະຕິບັດທີ່ເສີມເຊິ່ງກັນແລະກັນ ໂດຍມີຄວາມທັບຊ້ອນກັນໃນຄຳຖາມທີ່ກ່າວເຖິງ ແລະ ວິທີການທີ່ໃຊ້.*

1. ຄວາມສຳພັນລະຫວ່າງວິທະຍາສາດແລະສາສະໜາ ທີ່ອະທິບາຍໄວ້ໃນຂໍ້ຄວາມຂ້າງຕົ້ນ ຄາດການເຖິງແວດວົງຂອງຄວາມຮູ້ທີ່ວິທະຍາສາດແລະສາສະໜາກ່າວເຖິງ. ໃນບັນດາແວດວົງເລົ່ານີ້ກໍ່ມີປະເດັນ ທີ່ກ່ຽວກັບພະລັງຂອງສະຕິປັນຍາຂອງມະນຸດ, ວິວັດທະນາການຂອງເຜົ່າພັນມະນຸດ ແລະ ການພັດທະນາທາງສະຕິປັນຍາແລະສິນລະທັມ. ຂໍໃຫ້ເຈົ້າອະທິບາຍວ່າ ຫຼັກສູດນີ້ນຳສະເໜີປະເດັນເລົ່ານີ້ ໃນລັກສະນະທີ່ໃຫ້ຄວາມນັບຖືຕໍ່ຄວາມໜ້າເຊື່ອຖືຂອງວິທະຍາສາດ ແລະ ໃນຂະນະດຽວກັນກໍ່ເພີ່ມຄວາມກະຈ່າງແຈ້ງແກ່ຄວາມເຂົ້າໃຈ ດ້ວຍແສງສະຫວ່າງຂອງສາສະໜາແນວໃດ?

2. ຫຼັກການເລື່ອງຄວາມສອດຄ້ອງກັນຂອງວິທະຍາສາດ ແລະ ສາສະໜານັ້ນບົ່ງຊີ້ວ່າ ເວລາໃດທີ່ເໝາະສົມ, ຫຼັກສູດຫຼືເອກກະສານທາງການສຶກສາອາດບູລະນາການ ແນວຄວາມຄິດທາງວິທະຍາສາດ ແລະ ທາງຈິດວິນຍານເຂົ້າໄວ້ດ້ວຍກັນ. ແນ່ນອນວ່າການບູລະນາການນັ້ນ ຈະຫຼີກລ້ຽງຄວາມຜິວເຜີນ ແລະ ບໍ່ແມ່ນການເຮັດຢ່າງບໍ່ມີການວາງແຜນ. ການບູລະນາການດັ່ງກ່າວ, ຊ່ວຍເພີ່ມພູນຄວາມເຂົ້າໃຈຂອງ ຜູ້ເຂົ້າຮ່ວມສຶກສາແລະ ກຳຈັດຄວາມຄິດທີ່ແຍກສ່ວນແບບຜິດໆອອກໄປ. ຂໍໃຫ້ເຈົ້າສຳຫຼວດເບິ່ງວ່າ ປຶ້ມ “ດວງຈິດແຫ່ງຄວາມສັດທາ” ບັນລຸເຖິງລະດັບຂອງການບູລະນາການຫຼືບໍ່? ເຈົ້າອາດຈະພິຈາລະນາການໄຕ່ຕອງທີ່ຢູ່ໃນບົດທີ 5 ແລະ 6 ເປັນພິເສດເພື່ອສິ່ງນີ້.

3. ເຈົ້າອາດຈະປາຖະໜາທີ່ຈະສຳຫຼວດປຶ້ມ *“ດວງຈິດແຫ່ງຄວາມສັດທາ”* ອີກເທື່ອໜຶ່ງ ແລະ ພິຈາລະນາວ່າ ຫຼັກສູດນີ້ໄດ້ກໍ່ໃຫ້ເກີດທັດສະນະຄະຕິໃດແດ່ ທີ່ຈຳເປັນຕໍ່ບຸກຄົນທີ່ຈະຕ້ອງເປັນຜູ້ສະແຫວງ

ຫາສັດຈະທັມ ແລະ ຜູ້ທຳການສອບສວນກ່ຽວກັບການດຳລົງຢູ່ຢ່າງແທ້ຈິງ. ທັດສະນະຄະຕິເລົ່ານີ້ມີຫຍັງແດ່, ແລະ ເນື້ອຫາຂອງຫຼັກສູດນີ້ ໄດ້ທຳການສຳຫຼວດກ່ຽວກັບທັດສະນະຄະຕິເລົ່ນີ້ໄດ້ຢ່າງມີປະສິດຕິພາບຫຼາຍໜ້ອຍພຽງໃດ?

______________________________________________

______________________________________________

______________________________________________

______________________________________________

______________________________________________

## ຕອນທີ 24

ພວກເຮົາຈະຈົບການປຶກສາຫາລືໃນຕອນທີ 3 ກ່ຽວກັບປຶ້ມທີ່ໃຊ້ໃນໂຄງການສົ່ງເສີມພະລັງທາງຈິດວິນຍານສຳລັບເຍົາວະຊົນ. ການວິເຄາະໂດຍລະອຽດທີ່ພວກເຮົາໄດ້ຈາກປຶ້ມ *"ສາຍລົມແຫ່ງການຮັບຮອງ"* ແລະ *"ດວງຈິດແຫ່ງຄວາມສັດທາ"* ສະແດງໃຫ້ເຫັນເຖິງລະດັບຄວາມຄຸ້ນເຄີຍ ທີ່ເຈົ້າຈຳເປັນຕ້ອງໄດ້ຮັບຈາກປຶ້ມທຸກເຫຼັ້ມຂອງໂຄງການ. ໃນຫຼັກສູດເຊື່ອມໂຍງຈາກປຶ້ມເຫຼັ້ມ 5, ພວກເຮົາຈະເຂົ້າສູ່ການປຶກສາຫາລືທີ່ຄ້າຍຄືກັນຂອງປຶ້ມອື່ນໆ ເຊິ່ງຈະຊ່ວຍເຈົ້າໃນເລື່ອງນີ້; ຢ່າງໃດກໍຕາມ ໂດຍບໍ່ຄຳນຶງເຖິງການສຶກສາດັ່ງກ່າວ ເຈົ້າຄວນອຸທິດເວລາທີ່ຈຳເປັນໃນການອ່ານປຶ້ມເລົ່ານັ້ນ ແລະ ກວດສອບວ່າປຶ້ມເລົ່ານັ້ນພະຍາຍາມຈະບັນລຸເປົ້າໝາຍຫຍັງ. ການປະຊຸມທົບທວນຄວາມຄິດເປັນໄລຍະ ກັບຜູ້ທີ່ຮັບໃຊ້ໃນຖານາຜູ້ຊຸກຍູ້ເຍົາວະຊົນ ຈະເປັນໂອກາດອັນມີປະໂຫຍດຢ່າງຍິ່ງທີ່ເຈົ້າຈະໄດ້ເຂົ້າໃຈເລິກເຊິ່ງໃນເນື້ອຫາຂອງເອກະສານ. ເຈົ້າແລະເພື່ອນຜູ້ຊຸກຍູ້ເຍົາວະຊົນຈະພົບວ່າ ໃນໂອກາດດັ່ງກ່າວນັ້ນມີປະສົບການຮ່ວມກັນຫຼວງຫຼາຍ ທີ່ສາມາດນຳມາເປັນຂໍ້ມູນອ້າງອີງໄດ້. ເພາະໃນການວິເຄາະຂັ້ນສຸດທ້າຍນັ້ນ, ຈະສາມາດສຳຫຼວດສັກກະຍະພາບຂອງຂໍ້ຄວາມໄດ້ຢ່າງເຕັມທີ່ ແລະ ບັນລຸຜົນໄດ້ໃນທີ່ສຸດໂດຍການເສີມສ້າງບັນຍາກາດຂອງການສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ, ເຊິ່ງຄວາມມຸ່ງໝັ້ນໃນການຮຽນຮູ້ຈະສະແດງອອກດ້ວຍຄວາມເຕັມໃຈ ທີ່ຈະຮ່ວມມືຢ່າງເຕັມໃຈກັບຜູ້ອື່ນໃນການດຳເນີນການຂອງພວກເຂົາ.

## ຕອນທີ 25

ພາກນີ້ໄດ້ກ່າວໄວ້ກ່ອນໜ້ານີ້ວ່າ ນອກເໜືອຈາກການສຶກສາເນື້ອຫາແລ້ວ, ເຍົາວະຊົນຍັງມີສ່ວນຮ່ວມໃນກິດຈະກຳການຮັບໃຊ້, ກິລາ, ແລະ ກິດຈະກຳທີ່ແຕກຕ່າງຂອງສິນລະປະແລະຫັດຖະກຳ, ໂດຍສະເພາະແມ່ນກິດຈະກຳທີ່ກ່ຽວນ້ອງກັບວັດທະນະທຳທ້ອງຖິ່ນຂອງຕົນ. ໃນພາກທີສອງຂອງປຶ້ມເຫຼັ້ມນີ້, ເຈົ້າໄດ້ມີໂອກາດພິຈາລະນາເຖິງອິດທິພົນ ຂອງສະພາບແວດລ້ອມທາງສັງຄົມທີ່ມີຕໍ່ຄົນລຸ້ນເຍົາ, ແລະ

ເຈົ້າຈະຖືກເນັ້ນຢ້ຳເປັນພິເສດແມ່ນຖືກແນ່ໃສ່ບາງອົງປະກອບ ຂອງສັງຄົມມີຜົນກະທົບທາງດ້ານລົບ. ຢ່າງໃດກໍຕາມ ບໍ່ຄວນມີການເນັ້ນຢ້ຳສະພາບສັງຄົມດ້ານລົບໃນປັດຈຸບັນ, ຈົນບົດບັງຄວາມຈິງທີ່ວ່າ ໃນທຸກສະພາບແວດລ້ອມມີອົງປະກອບຫຼາຍຢ່າງ, ຫາກຖືກນຳມາໃຊ້ຢ່າງເໝາະສົມ ສາມາດເພີ້ມພະລັງການສະແດງອອກ, ຄວາມສາມາດໃນການວິເຄາະຂະບວນການທາງສັງຄົມ, ແລະ ຄວາມປາດຖະໜາທີ່ຈະຮັບໃຊ້ມະນຸດຊາດ. ບົດຄວາມຕໍ່ໄປນີ້ຈາກໜັງສືພິມ ຈະເລົ່າເລື່ອງລາວທີ່ສະແດງໃຫ້ເຫັນຢ່າງຊັດເຈນວ່າ ສື່ ສາມາດນຳມາໃຊ້ເພື່ອສົ່ງເສີມສະຫວັດດີການສັງຄົມໄດ້ແນວໃດ:

## ສຽງຂອງຜູ້ໄຮ້ສຽງ

ໃນອາຟຣິກາຕາເວັນຕົກ ວິທະຍຸລະບົບທຣານຊິສເຕີ ຍັງຄົງເປັນປາກສຽງໃຫ້ກັບຊຸມຊົນ.

ໂດຍບຽດສຽດກັນຢູ່ຮອບໆໄມໂຄຼໂຟນ ໃນຫ້ອງອັດສຽງນ້ອຍໆຂອງສະຖານີວິທະຍຸທ້ອງຖິ່ນເອັນເຊເຣໂກເຣໃນເຂດປ່າຂອງກິນີ, ຄົນລຸ້ນເຍົາສາມຄົນກຳລັງອະທິບາຍກັນເລື່ອງການສຶກສາຂອງເດັກຍິງ.

"ເດັກຜູ້ຍິງຄວນໄປໂຮງຮຽນ, ເພາະພວກເຂົາຈະເປັນແມ່ຄົນໃນວັນຂ້າງໜ້າ ແລະ ຖ້າພວກເຂົາໄດ້ຮັບການສຶກສາ, ພວກເຂົາກໍ່ຈະໃຫ້ການສຶກສາແກ່ລູກໆຂອງຕົນເອງ ແລະ ຈະດູແລລູກໄດ້ດີຂຶ້ນ," ມໍຣິໂຄ ຄາເຄ ເວົ້າ. "ເມື່ອເຈົ້າໃຫ້ການສຶກສາແກ່ເດັກຍິງ ເທົ່າກັບເຈົ້າໃຫ້ການສຶກສາຄົນທັງຊາດ," ເຂົາເສີມດ້ວຍສຽງໜັກແໜ້ນ. ແລນເຊ ທູຣ໌, ເຈົ້າຂອງລາຍການຜູ້ມີອາຍຸສິບຫົກປີ, ງຶກຫົວເຫັນດີນຳ, ແມ່ນວ່າພໍ່ແມ່ຂອງເຂົາຈະຢາກໃຫ້ເຂົາອອກໂຮງຮຽນ ເພື່ອໄປຊ່ວຍງານໃນໄຮ່ນາກໍ່ຕາມ.

ການໂຕ້ແຍ້ງທີ່ຊັດເຈນແຈ່ມແຈ້ງຂອງເຍົາວະຊົນ ທີ່ຖືກກະຈາຍສຽງອອກໄປຈົນເຖິງໝູ່ບ້ານໃກ້ຄຽງ ທີ່ຢູ່ຕິດກັບຊາຍແດນປະເທດໄລບີເຣຍ ແລະ ໄອວໍຣີໂຄສທ໌. ຕອນນັ້ນເປັນເວລາຄ້ອຍຄ່ຳ ແລະ ແສງຈາກຕະກຽງນ້ຳມັນກ໊າດສ່ອງລົບລີ່ຢູ່ໃນຕູບດິນ. ພວກຊາວບ້ານກຳລັງກັບຈາກທົ່ງນາ ຫຼື ຈາກຕະຫຼາດ. ພວກເຂົາທັງໝົດຟັງວິທະຍຸຂະນະແຕ່ງກິນ ແລະ ຕຽມຕົວເຂົ້ານອນ...

ໃນປະເທດຢ່າງເຊັ່ນ ກິນີ - ເຊິ່ງປະຊາກອນທີ່ເປັນຜູ້ໃຫຍ່ສ່ວນຫຼາຍບໍ່ຮູ້ໜັງສື, ເດັກໆບໍ່ມີໂອກາດທີ່ຈະໄດ້ໄປໂຮງຮຽນ ແລະ ໄຟຟ້າເປັນສິ່ງທີ່ຫາໄດ້ຍາກ - ສະຖານີວິທະຍຸທ້ອງຖິ່ນ ແລະ ວິທະຍຸຊຸມຊົນທີ່ໃຊ້ພະລັງງານຈາກເຄື່ອງປັ່ນໄຟນັ້ນ ເປັນສາຍຊູຊີບທີ່ສຳຄັນຫຼາຍທີ່ຄົນຕ້ອງເພິ່ງພາ.

“ວິທະຍຸເປັນທຸກຢ່າງຂອງບ່ອນນີ້” ນູມາ ຄາມາຣ່າ ເວົ້າ, ເຂົາເປັນຜູ້ອຳນວຍການສະຖານີວິທະຍຸທ້ອງຖິ່ນ ເອັນ ເຊເຣໂຄເຣ, ເຊິ່ງກະຈາຍສຽງເປັນເວລາຫົກມື້ຕໍ່ອາທິດ ໃນພາສາທ້ອງຖິ່ນຫ້າພາສາ, ແລະ ໃນພາສາຝັ່ຣງ ດ້ວຍລັດສະໝີການກະຈາຍສຽງ 100 ກິໂລແມັດ. ສອງໃນສາມຄອບຄົວໃນພູມີພາກນັ້ນຈະມີວິທະຍຸທຣານ ຊິສເຕີ ແລະ ຄົນທັງໝົດຂອງໝູ່ບ້ານຈະຟັງວິທະຍຸໃນຕອນທີ່ສະຖານີອອກອາກາດໃນຕອນຮຸ່ງເຊົ້າ ແລະ ໃນຕອນແລງ.

“ພວກເຮົາເວົ້າພາສາຂອງພວກເຂົາ, ພວກເຮົາຮູ້ວັດທະນະທຳ ແລະ ປະເພນີຂອງພວກເຂົາ, ພວກເຮົາສົ່ງຕໍ່ຂ່າວສານຂອງພວກເຂົາ, ປະກາດຂ່າວການເກີດ ແລະ ການຕາຍ, ອະທິບາຍເລື່ອງບັນຫາການເຮັດໄຮ່ເຮັດສວນ ແລະ ບັນຫາກະສິກຳ, ລວມທັງບັນຫາຂອງຊຸມຊົນ” ຄາມາຣ່າ ເວົ້າເສີມ. “ພວກເຮົາເປັນປາກສຽງຂອງຊຸມຊົນສຽງຂອງຜູ້ໄຮ້ສຽງ.” . . .

“ຂ້ອຍຟັງລາຍການເພາະຄົນທີ່ຈັດລາຍການເປັນເດັກນຳສະເໜີເລື່ອງລາວ ແລະ ຍ້ອນພວກເຂົາກໍ່ເວົ້າພາສາຂອງຂ້ອຍອີກດ້ວຍ” ມາມາດູ ມາລິຄ, ເຍົາວະຊົນອາຍຸສິບຫ້າປີ ໃນພູລ່າຣ໌, ເວົ້າດ້ວຍພາສາທ້ອງຖິ່ນ... “ຕອນທີ່ລາຍການເລີ່ມ, ຂ້ອຍຈະເອີ້ນນ້ອງຊາຍແລະນ້ອງສາວມາ ແລ້ວພວກເຮົາກໍ່ຈະຟັງນຳກັນ. ຂ້ອຍຮຽນຮູ້ຫຼາຍສິ່ງຫຼາຍຢ່າງດ້ວຍວິທີນີ້.”

“ພວກພໍ່ແມ່ ແລະ ຜູ້ນຳຊຸມຊົນກໍ່ຟັງຄືກັນ” ຄາມາຣ່າ ເວົ້າ. “ໃນປະເພນີຂອງພວກເຮົາມັກບໍ່ມີໃຜຟັງສຽງເດັກນ້ອຍ, ແຕ່ຕອນນີ້ພວກຜູ້ໃຫຍ່ເລີ່ມຟັງພວກເຂົາ. ຍົກຕົວຢ່າງເຊັ່ນ: ເດັກນ້ອຍໃຫ້ຄຳແນະນຳພໍ່ແມ່ຂອງພວກເຂົາ ເລື່ອງສຸຂະອະນາໄມພື້ນຖານ... ຖ້າຫາກພໍ່ຕີລູກຂອງຕົນເອງ, ເພື່ອນບ້ານກໍ່ຈະເວົ້າກັບເຂົາວ່າ: ‘ບໍ່ໄດ້ຟັງວິທະຍຸບໍ່?’”

ເລື່ອງລາວນີ້ສະແດງໃຫ້ເຫັນພຽງໜຶ່ງໃນຫຼາຍໆທາງ ທີ່ອົງປະກອບຕ່າງໆຂອງສະພາບແວດລ້ອມໃນສັງຄົມ ສາມາດນຳມາໃຊ້ເພື່ອນຳທາງໃຫ້ພອນສະຫວັນ ແລະ ຄວາມສາມາດຂອງເຍົາວະຊົນໄປສູ່ການຮັບໃຊ້ຊຸມຊົນຂອງຕົນເອງ. ດົນຕີ, ສື່ ແລະ ເທັກໂນໂລຢີ ກຳລັງມີອິດທິພົນຫຼາຍຂຶ້ນເລື້ອຍໆຕໍ່ຊີວິດຂອງຄົນລຸ້ນເຍົາໃນທຸກສ່ວນຂອງໂລກ. ໃນຖານະຜູ້ຊຸກຍູ້ເຍົາວະຊົນ, ເຈົ້າຈຳເປັນຕ້ອງຕະໜັກເຖິງອົງປະກອບທີ່ມີພະລັງເລົ່ານີ້ ແລະ ຮຽນຮູ້ທີ່ຈະຊ່ວຍໃຫ້ເຍົາວະຊົນໃຊ້ອົງປະກອບເລົ່ານີ້ ເພື່ອສ້າງກິດຈະກຳທີ່ເໝາະສົມ. ລອງນຶກເຖິງສະພາບແວດລ້ອມຂອງເຈົ້າເອງ. ເຍົາວະຊົນມີໂອກາດໄດ້ເຮັດວຽກກ່ຽວກັບສິ່ງຕໍ່ໄປນີ້ຢ່າງໃດ? ຂໍໃຫ້ເຈົ້າປຶກສາກ່ຽວກັບແນວຄິດຕ່າງໆໃນກຸ່ມຂອງເຈົ້າ, ແລະ ຂຽນຄວາມຄິດບາງສ່ວນຂອງເຈົ້າລົງໃນຊ່ອງວ່າງຂ້າງລຸ່ມ.

ດົນຕີ:

ສື່ສານຕ່າງໆ:

ເທັກໂນໂລຢີ:

**ຕອນທີ 26**

ຖ້າຫາກເຍົາວະຊົນຈຳຕ້ອງໄດ້ຮັບການເສີມຄວາມສາມາດ ເພື່ອທີ່ຈະເຂົ້າຄວບຄຸມພັດທະນາການຂອງຕົນເອງ ແລະ ມີສ່ວນສະໜັບສະໜູນຕໍ່ຄວາມຈະເລີນກ້າວໜ້າ ຂອງຊຸມຊົນຂອງພວກເຂົາເອງ, ພວກເຂົາຈຳເປັນຕ້ອງເຂົ້າຮ່ວມຢ່າງຂະຫຍັນຂັນແຂງ ໃນການກຳນົດກິດຈະກຳທີ່ມີຄວາມໝາຍເປັນກຸ່ມ ແຕ່ຍັງລວມເຖິງຮູບແບບຂອງພວກເຂົານຳ. ນອກຈາກໂຄງການຮັບໃຊ້ຕ່າງໆ ແລະ ສິນລະປະ ແລະ ຫັດຖະກຳຕ່າງໆ, ຕົວຢ່າງກິດຈະກຳດັ່ງກ່າວອາດລວມເຖິງ ການພົບປະເປັນພິເສດເພື່ອສະຫຼອງການຮຽນຈົບປຶ້ມໜຶ່ງເຫຼັ້ມຫຼືປຶ້ມອື່ນ, ເຊິ່ງເຍົາວະຊົນຈະສະແດງລະຄອນ, ຮ້ອງເພງ, ທ່ອງບົດກາບກອນ, ແລະ ການບັນຍາຍ. ເຈົ້າຈະສົນໃຈທີ່ປຶກສາແລກປ່ຽນກັບຜູ້ຊຸກຍູ້ເຍົາວະຊົນກຸ່ມອື່ນໆຢູ່ສະເໝີ ເຖິງວິທີການທີ່ເຈົ້າສາມາດຈູງໃຈເພື່ອນລຸ້ນເຍົາຂອງເຈົ້າ ໃຫ້ເຂົ້າມີສ່ວນຮ່ວມຮູບແບບ ແລະ ການດຳເນີນກິດຈະກຳເລົ່ານີ້ ເຊິ່ງຈະຊ່ວຍເຝິກຝົນສັກກະຍະພາບທາງຕ່າງໆທາງສະຕິປັນຍາ ແລະ ຈິດວິນຍານ

ຂອງພວກເຂົາ, ຊ່ວຍໃຫ້ພວກເຂົາສະແດງອອກເຖິງອຸດົມຄະຕິບາງຢ່າງຂອງພວກເຂົາ ອອກມາໃນທາງປະຕິບັດໂດຍຜ່ານການຮັບໃຊ້, ແລະ ເສີມສ້າງຄວາມພະຍາຍາມຂອງພວກເຂົາ ໃນການບຸກບືນໄປສູ່ຄວາມດີເລີດ. ຄຳຖາມປະເພດຕ່າງໆທີ່ເຈົ້າຈະຕ້ອງພິຈາລະນາ ຮ່ວມກັບຜູ້ຊຸກຍູ້ເຍົາວະຊົນໄດ້ແກ່: ເຈົ້າຊ່ວຍເຍົາວະຊົນຄິດ ແລະ ດຳເນີນໂຄງການຮັບໃຊ້ ແລະ ທົບທວນເຖິງວິທີການດຳເນີນໂຄງການໄດ້ແນວໃດ? ເຈົ້າຊ່ວຍເຍົາວະຊົນຂຽນບົດເລື່ອງ ແລະ ສະແດງລະຄອນແບບງ່າຍໆແນວໃດ? ເຈົ້າຈະໝັ້ນໃຈໄດ້ແນວໃດວ່າເກມຕ່າງໆສຳລັບເດັກ ຈະບໍ່ຖືກນຳສະເໜີໃຫ້ມາແທນທີ່ສິນລະປະ ແລະ ຫັດຖະກຳ ແລະ ຊ່ວຍໃຫ້ເຍົາວະຊົນໄດ້ຕະໜັກຮູ້ເຖິງຄຸນຄ່າທີ່ແທ້ຈິງຂອງ "ສິນລະປະ, ຫັດຖະກຳ ແລະ ວິທະຍາສາດ" ທີ່ "ຍົກລະດັບໂລກແຫ່ງການດຳລົງຢູ່ ແລະ ເອື້ອອຳນວຍຕໍ່ການຍົກລະດັບ"?

ເຖິງແມ່ນວ່ານີ້ຈະບໍ່ແມ່ນໂອກາດທີ່ຈະເວົ້າເຖິງກິດຈະກຳທາງສິນລະປະ ແຕ່ເຈົ້າຄວນຕະໜັກວ່າກິດຈະກຳດັ່ງກ່າວ ໃນຖານະການສະແດງອອກທາງວັດທະນະທຳນັ້ນມີຄຸນຄ່າໃນຕົວ. ໂດຍທຳມະຊາດແລ້ວ, ກິດຈະກຳດັ່ງກ່າວສາມາດສົ່ງຜົນຕໍ່ຂະບວນການສຶກສາໄດ້ຢ່າງຫຼວງຫຼາຍ. ໃນຖານະຜູ້ຊຸກຍູ້ເຍົາວະຊົນ, ເຈົ້າຈະຕ້ອງເອົາໃຈໃສ່ໃນການຊ່ວຍເຫຼືອເພື່ອນລຸ່ນເຍົາຂອງເຈົ້າ ລະບຸກິດຈະກຳທາງສິນລະປະທີ່ເໝາະສົມ, ເຊິ່ງຈະບໍ່ເຮັດໃຫ້ເກີດການກຳໜົດຄຸນຄ່າໂດຍບໍ່ໄດ້ຕັ້ງໃຈ ເຊິ່ງຂັດແຍ່ງກັບຂະບວນການສຶກສາ ທີ່ກິດຈະກຳເລົ່ານັ້ນກຳລັງດຳເນີນການຢູ່ໃນຮູບແບບທີ່ລະອຽດອ່ອນ.

## ຕອນທີ 27

ປະສົບການສະແດງໃຫ້ເຫັນວ່າ ກຸ່ມເຍົາວະຊົນທີ່ມີສະມາຊິກເຖິງສິບຫາສິບຫ້າຄົນ ຕາມປົກກະຕິຈະເລີ່ມຕົ້ນດ້ວຍບຸກຄົນສອງສາມຄົນ ຜູ້ທີ່ໄດ້ສະແດງໃຫ້ເຫັນເຖິງຄວາມສາມາດ ໃນການຮອບຮວມເພື່ອນໆຂອງພວກເຂົາ ເພື່ອຈຸດປະສົງທີ່ມີຄຸນຄ່າ. ຂະນະທີ່ຄົນລຸ້ນເຍົາເລົ່ານີ້ກຳລັງສະໜັບສະໜູນຄົນອື່ນໆໃຫ້ເຂົ້າຮ່ວມ, ພວກເຂົາຈະເລີ່ມພົບປະຢ່າງເປັນປະຈຳກັບຜູ້ຊຸກຍູ້ເຍົາວະຊົນ. ສະມາຊິກຂອງກຸ່ມອາດໄດ້ຮັບການເສີມຄວາມເຂັ້ມແຂງດ້ວຍການຊ່ວຍເຫຼືອຈາກເພື່ອນກຸ່ມເກນກາງ ທີ່ເຮັດວຽກໃນລະແວກບ້ານຫຼືໝູ່ບ້ານ, ໂດຍສະເພາະຊາວໜຸ່ມໃນໄວກາງໆ (14-17 ປີ) ເຖິງໄວຕອນປາຍ (18-21 ປີ) ທີ່ກຳລັງກ້າວໜ້າໃນການຮຽນສອງສາມຫຼັກສູດທຳອິດຂອງສະຖາບັນ. ໃນບາງສ່ວນຂອງໂລກ, ການເຊີນເອົາສະມາຊິກຊາວໜຸ່ມຂອງໝູ່ບ້ານຫຼືລະແວກບ້ານເຂົ້າຮ່ວມກິດຈະກຳເປັນຊຸດຕໍ່ເນື່ອງ ກ່ອນການຈັດຕັ້ງກຸ່ມຢ່າງເປັນທາງການ ກໍ່ພິສູດແລ້ວວ່າເປັນວິທີທີ່ມີປະສິດທິຜົນເຊັ່ນກັນ. ອີກວິທີໜຶ່ງຄືການແນະນຳໂຄງການນີ້ໃຫ້ແກ່ໂຮງຮຽນ. ເມື່ອໂຮງຮຽນສະແດງການຍອມຮັບຕໍ່ແນວຄິດ, ຕາມປົກກະຕິແລ້ວ ການນຳສະເໜີໜຶ່ງຫຼືຫຼາຍຄັ້ງແກ່ນັກຮຽນ ແລະ ຄູທີ່ລະດັບຊັ້ນທີ່ກ່ຽວຂ້ອງ ມັກຈະສົ່ງຜົນໃຫ້ເກີດການຈັດຕັ້ງກຸ່ມເຍົາວະຊົນຫຼາຍກຸ່ມຂຶ້ນ. ຈາກນັ້ນນັກຮຽນອາດເຂົ້າຮ່ວມໂຄງການເປັນກິດຈະກຳນອກຫຼັກສູດໄດ້ ບໍ່ວ່າຈະພົບກັນທີ່ໂຮງຮຽນຫຼືບໍ່ກໍຕາມ. ບໍ່ວ່າໃນກໍລະນີໃດ, ໂຮງຮຽນກໍ່ຕະໜັກເຖິງການມີສ່ວນຮ່ວມອັນມີຄ່າຂອງໂຄງການ ໃນການພັດທະນາຄວາມສາມາດທາງສິນລະທັມ ແລະ ທາງສະຕິປັນຍາຂອງນັກຮຽນ.

ຂໍໃຫ້ເຈົ້າຄິດເຖິງສະຖານະການຂອງເຈົ້າເອງ ແລະ ອະທິບາຍບາງວິທີທີ່ເຈົ້າສາມາດປັບໃຊ້, ເພື່ອຊ່ວຍຕັ້ງກຸ່ມເຍົາວະຊົນ ຕາມຄວາມຕ້ອງການຂອງຜູ້ຊຸກຍູ້ເຍົາວະຊົນ.

## ຕອນທີ 28

ເງື່ອນໄຂຈຳເປັນສຳລັບການຮັກສາຄວາມໝັ້ນຄົງ ໃຫ້ກັບຄວາມຕໍ່ເນື່ອງຂອງກຸ່ມເຍົາວະຊົນຄື ການສ້າງສາຍສຳພັນຂອງຄວາມໄວ້ວາງໃຈ ແລະ ມິດຕະພາບກັບພໍ່ແມ່ຜູ້ປົກຄອງ. ຜູ້ຊຸກຍູ້ເຍົາວະຊົນ ຈຳເປັນຕ້ອງໄປຢ້ຽມຢາມພໍ່ແມ່ຂອງເຍົາວະຊົນບໍ່ວ່າຈະເປັນກ່ອນໜ້າ ຫຼື ໃນມໍ່ໆຫຼັງຈາກມີການຕັ້ງກຸ່ມ ແລ້ວອະທິບາຍໃຫ້ພໍ່ແມ່ຮູ້ເຖິງຈຸດປະສົງຂອງໂຄງການ. ຈາກນັ້ນຜູ້ຊຸກຍູ້ເຍົາວະຊົນຄວນໄປຢ້ຽມຢາມ ພໍ່ແມ່ຂອງເຍົາວະຊົນຢ່າງສະໝໍ່າສະເໝີ ແລະ ປຶກສາກັບສະມາຊິກກ່ຽວກັບຄວາມປາດຖະໜາ ແລະ ສັກກະຍະພາບຂອງເຍົາວະຊົນ ແລະຕະຫຼອດເຖິງແນວຄວາມຄິດ ແລະ ວິທີການຕ່າງໆທີ່ຈະຊ່ວຍກຳ ໜົດຮູບແບບໂຄງການ ສຳລັການເສີມສ້າງພະລັງທາງຈິດວິນຍານຂອງພວກເຂົາ - ຫົວຂໍ້ທີ່ໄດ້ສະຫຼຸບ ໄວ້ໃນພາກທີສາມຂອງເຫຼັ້ມ 2 ແຕ່ໄດ້ອະທິບາຍຢ່າງລະອຽດຫຼາຍຂຶ້ນໃນທີ່ນີ້. ການຢ້ຽມຢາມແບບ ດັ່ງກ່າວສາມາດເປັນໂອກາດໃນການປຶກສາຫາລືກັບພໍ່ແມ່ ກ່ຽວກັບຄວາມເປັນຢູ່ ແລະ ຄວາມກ້າວໜ້າ ຂອງລູກຊາຍແລະລູກສາວຂອງພວກເຂົາອີກດ້ວຍ. ຕາມປົກກະຕິ ດັ່ງທີ່ໄດ້ສະເໜີໃນປຶ້ມເຫຼັ້ມ 2, ຜູ້ ຊຸກຍູ້ເຍົາວະຊົນຈະເອົາປຶ້ມໃຫ້ພໍ່ແມ່ເບິ່ງ ໜຶ່ງຫຼືສອງຫົວຂອງປຶ້ມທີ່ໄດ້ສອນໃນໂຄງການ ສະນັ້ນພວກ ເຂົາຈຶ່ງສາມາດເຫັນສິ່ງທີ່ຄົນລຸ່ນເຍົາກຳລັງຮຽນຮູ້. ແມ່ນວາຜູ້ຊຸກຍູ້ເຍົາວະຊົນທຸກຄົນຈະຕ້ອງປູກຝັງ ມິດຕະພາບອັນແໜ້ນແຟ້ນກັບພໍ່ແມ່ເປັນເວລາຫຼາຍເດືອນ, ແຕ່ພວກເຂົາອາດໄດ້ຮັບການຊຸກຍູ້ຈາກ ບຸກຄົນຜູ້ມີປະສົບການຫຼາຍກວ່າ ເພື່ອພາໄປຢ້ຽມຢາມໃນສອງສາມຄັ້ງທຳອິດ.

ເຈົ້າຖືກຊຸກຍູ້ໃຫ້ກັບໄປເບິ່ງຕອນທີ 14 ພາກທີສາມຂອງປຶ້ມເຫຼັ້ມ 2 ເພື່ອເຕືອນຕົວເອງເຖິງແນວ ຄວາມຄິດຕ່າງໆທີ່ສ້າງພື້ນຖານ ສຳລັບການສົນທະນາຢ່າງຕໍ່ເນື່ອງກັບພໍ່ແມ່ຂອງຄົນລຸ້ນເຍົາ ໃນ ໂຄງການເສີມສ້າງພະລັງທາງຈິດວິນຍານ. ຈາກນັ້ນ ໃຫ້ປຶກສາກັບຜູ້ເຂົ້າຮ່ວມສຶກສາຄົນອື່ນໆທີ່ເຂົ້າ ຮ່ວມເຫຼັກສູດ ກ່ຽວກັບປະສົບການທີ່ໄດ້ຮັບຈາກການຢ້ຽມຢາມຄອບຄົວຂອງເຍົາວະຊົນ ໃນໝູ່ບ້ານຫຼື ລະແວກບ້ານຂອງຕົນ. ມີແນວຄວາມຄິດເພີ້ມເຕີມໃດແດ່ ຈາກການສຶກສາປຶ້ມເຫຼັ້ມນີ້ ທີ່ສາມາດເພີ່ມພູນ ການສົນທະນາໃນລະຫວ່າງການຢ້ຽມຢາມດັ່ງກ່າວ?

## ຕອນທີ 29

ການສົນທະນາທີ່ຜູ້ຊຸກຍູ້ເຍົາວະຊົນເລີ້ມຕົ້ນກັບຈຳນວນຄົນໃນກຸ່ມເຍົາວະຊົນ ໃນຊ່ວງເລີ້ມຕົ້ນນັ້ນມີຄວາມສຳຄັນເປັນພິເສດ. ສິ່ງສຳຄັນຄື ໃນການປະຊຸມສາມຫຼືສີ່ຄັ້ງທຳອິດ ສະມາຊິກຈະຕ້ອງປຶກສາກັນກ່ຽວກັບວັດຖຸປະສົງຂອງກຸ່ມຢ່າງຄົບຖ້ວນ ແລະ ລະບຸເປົ້າໝາຍບາງປະການທີ່ພວກເຂົາຕ້ອງການຈະບັນລຸຮ່ວມກັນ. ນອກຈາກນີ້ ພວກເຂົາຄວນສະຫຼຸບບາງຢ່າງກ່ຽວກັບລັກສະນະຂອງກິດຈະກຳຕ່າງໆ ທີ່ພວກເຂົາຕ້ອງການປະຕິບັດ. ເລື່ອງຕ່າງໆທີ່ໄດ້ກ່າວໃນການປະຊຸມເລົ່ານີ້ ອາດຈະແຕກຕ່າງກັນໄປໃນແຕ່ລະກຸ່ມ. ຢ່າງໃດກໍຕາມ ມີແນວຄິດບາງປະການເຊັ່ນ "ຄວາມດີເລີດ" ແລະ "ການຮັບໃຊ້", ທີ່ຄວນເນັ້ນຢໍ້າໃນທຸກໆການປະຊຸມດັ່ງກ່າວ. ປະເດັນຕໍ່ໄປນີ້ອາດຈະຊ່ວຍເຈົ້າໃນການຈັດລະບຽບການສົນທະນາສອງສາມຄັ້ງທຳອິດ ທີ່ເຈົ້າຈະປະຊຸມກັບສະມາຊິກຂອງກຸ່ມທີ່ເຈົ້າຊ່ວຍຈັດກຸ່ມ. ເຈົ້າຄວນສຳຫຼວດປະເດັນຢ່າງລະອຽດຖີ່ຖ້ວນກັບຜູ້ເຂົ້າຮ່ວມສຶກສາຫຼັກສູດນີ້ ແລະ ຂຽນຄວາມຄິດເຫັນເລີ້ມຕົ້ນບາງຢ່າງຂອງເຈົ້າ ກ່ຽວກັບວິທີການແນວໃດທີ່ເຈົ້າຈະສົນທະນາກັບກຸ່ມເຍົາວະຊົນ ທີ່ຄາດຫວັງວ່າຈະເຂົ້າຮ່ວມໃນໄວໆນີ້.

- ຜູ້ຊຸກຍູ້ເຍົາວະຊົນຫຼາຍຄົນພົບວ່າ ເປັນສິ່ງທີ່ເປັນປະໂຫຍດທີ່ຈະເວົ້າເຖິງເປົ້າໝາຍທີ່ກຸ່ມໄດ້ກຳນົດໄວ້ໃນລັກສະນະຂອງຄວາມດີເລີດທາງສະຕິປັນຍາ ແລະ ທາງຈິດວິນຍານ. ພວກເຂົາໄດ້ອະທິບາຍໄວ້ວ່າໃນການບຸກບືນ ເພື່ອພັດທະນາຄວາມດີເລີດທາງຈິດວິນຍານນັ້ນ ເຮົາຈຳເປັນຕ້ອງພັດທະນາຄຸນລັກສະນະທາງທັມ ທີ່ເປັນຂອງທຳມະຊາດຝ່າຍທີ່ສູງກວ່າຂອງເຮົາ, ຕົວຢ່າງເຊັ່ນ: ຄວາມຮັກ, ຄວາມເອື້ອເຟື້ອ, ຄວາມຊື່ສັດ ແລະ ຄວາມອ່ອນນ້ອມ. ສ່ວນການບຸກບືນທີ່

ຈະພັດທະນາຄວາມດີເລີດທາງສະຕິປັນຍາ ໝາຍເຖິງການໄດ້ມາເຊິ່ງຄວາມຮູ້ ແລະ ທັກສະໃນທາງປະຕິບັດທີ່ຊ່ວຍເຮົາໃນການປັບປຸງຊີວິດຂອງເຮົາ ແລະ ຊີວິດຂອງຜູ້ອື່ນ. ການທົບທວນພຣະວັດຈະນະ ທີ່ກ່າວວ່າ **"ຂໍໃຫ້ທຸກຮຸ່ງເຊົ້າດີກວ່າແລງວານ ແລະ ທຸກວັນໃໝ່ອຸດົມຄ່າຍິ່ງກວ່າວັນກ່ອນ"** ແລະ ການຈົດຈຳໄວ້ເລົ່ານີ້ໄວ້ ຍ່ອມຈະມີປະສິດທິພາບໃນການຊ່ວຍເພີ່ມພູນຄວາມເຂົ້າໃຈ ໃນເລື່ອງແນວຄວາມຄິດຂອງຄວາມດີເລີດ.

____________________________________________________________________________________________________________________

- ຫຼັງຈາກໄດ້ເຂົ້າໃຈຊັດເຈນກ່ຽວກັບວັດຖຸປະສົງຂອງກຸ່ມແລ້ວ, ສະມາຊິກຂອງກຸ່ມຈະໄດ້ຮັບຄວາມຊ່ວຍເຫຼືອຈາກຜູ້ຊຸກຍູ້ເຍົາວະຊົນ ໃນການຕັດສິນໃຈວ່າ ພວກເຂົາຕ້ອງການເຮັດກິດຈະກຳໃດໂດຍສະເພາະ - ດ້ານສະຕິປັນຍາ, ດ້ານກິລາ, ແລະ ວັດທະນະທຳ - ທີ່ພວກເຂົາຕ້ອງການເລືອກເພື່ອສະແຫວງຫາຄວາມເປັນເລີດ.

____________________________________________________________________________________________________________________

- ຄຳຖາມກ່ຽວກັບພາສາ, ໃນຄວາມສຳພັນຂອງຄວາມເປັນເລີດທາງສະຕິປັນຍາ ແລະ ຈິດວິນຍານ, ເຊິ່ງເຊື່ອມໂຍງກັບຮູບແບບຄວາມຄິດນັ້ນຈຳເປັນຕ້ອງປຶກສາກັນດົນແດ່. ໃນການສົນທະນາກ່ຽວກັບເລື່ອງນີ້ກັບເຍົາວະຊົນ, ໂດຍປົກກະຕິແລ້ວຈະອະທິບາຍວ່າ ເຮົາຕ້ອງພັດທະນາທັກສະການສະແດງອອກ ເພື່ອໃຫ້ບັນລຸເຖິງລະດັບຄວາມດີເລີດທີ່ສູງຂຶ້ນເລື້ອຍໆ ກໍ່ພຽງພໍແລ້ວ. ພວກເຮົາຄວນສາມາດອ່ານ ແລະ ເຂົ້າໃຈຄວາມໝາຍຂອງສິ່ງທີ່ເຮົາອ່ານໄດ້; ພວກເຮົາຄວນຮຽນຮູ້ທີ່ຈະສະແດງຄວາມຄິດຂອງພວກເຮົາຢ່າງຊັດເຈນ. ໃນບໍລິບົດນີ້ຜູ້ຊຸກຍູ້ເຍົາວະຊົນມັກພົບວ່າ ການແນະນຳຂໍ້ຄວາມທີ່ເຍົາວະຊົນຈະໄດ້ສຶກສານັ້ນມີປະສິດທິພາບ, ໂດຍຂໍ້ຄວາມບາງສ່ວນເຈົ້າໄດ້ກວດສອບແລ້ວທັງໝົດຫຼືບາງສ່ວນ ໃນຕອນຕົ້ນຂອງພາກນີ້.

- ການທ່ອງຈຳຂໍ້ຄວາມທີ່ຄັດມາຈາກພຣະທັມມະລິຂິດນັ້ນ ເປັນສິ່ງທີ່ຕ້ອງໃຫ້ຄວາມສຳຄັນໃນໂຄງການເສີມຄວາມສາມາດທາງຈິດວິນຍານແກ່ເຍົາວະຊົນ. ຈາກນັ້ນ, ຄວາມສຳຄັນຂອງການທ່ອງຈຳເປັນສິ່ງທີ່ຈະຕ້ອງກ່າວເຖິງ ໃນການພົບກັນຄັ້ງທຳອິດຂອງກຸ່ມເຍົາວະຊົນ. ຜູ້ຊຸກຍູ້ເຍົາວະຊົນຄວນຊ່ວຍເພື່ອນລຸ້ນເຍົາຂອງພວກເຂົາ ຮັບຮູ້ເຖິງພະລັງຂອງຖ້ອຍຄຳຂອງພຣະຜູ້ເປັນເຈົ້າ, ແລະ ຜົນກະທົບທີ່ເກີດຂຶ້ນກັບຊີວິດຂອງພວກເຂົາ ຂະນະທີ່ພວກເຂົາບຸກບືນສູ່ຄວາມດີເລີດ. ຈາກການສົນທະນາເຊັ່ນນີ້ ພວກເຂົາຈະຕະໜັກເຖິງປະໂຫຍດຂອງການທ່ອງຈຳຂໍ້ຄວາມຕ່າງໆຈາກພຣະທັມມະລິຂິດ.

- ເຈົ້າຈຳເປັນຕ້ອງເນັ້ນຍ້ຳຕັ້ງແຕ່ໃນການພົບກັນສອງສາມຄັ້ງທຳອິດວ່າ ໃນການທີ່ກຸ່ມເຍົາວະຊົນຈະບຸກບືນເພື່ອໃຫ້ມີຄວາມດີເລີດທາງຈິດວິນຍານນັ້ນ, ສະມາຊິກຂອງກຸ່ມຈຳເປັນຕ້ອງພັດທະນາມິດຕະພາບໃຫ້ແໜ້ນແຟ້ນ ແລະ ມີຄວາມສາມັກຄີກັນຫຼາຍຂຶ້ນເລື້ອຍໆ. ປົກກະຕິແລ້ວ ຜູ້ຊຸກຍູ້ເຍົາວະຊົນຈະພົບວ່າມັນເປັນປະໂຫຍດ ທີ່ຈະຊ່ວຍໃຫ້ເຍົາວະຊົນສຳຫຼວດຫົວຂໍ້ກ່ຽວກັບມິດຕະພາບ, ຄວາມສາມັກຄີ ແລະ ຄວາມອ່ອນນ້ອມ ໂດຍຄຳນຶງເຖິງພຣະວັດຈະນະຈາກພຣະທັມມະລິຂິດ, ທີ່ພວກເຂົາສາມາດຖືກຊຸກຍູ້ໃຫ້ຈົດຈຳ.

- ການປຶກສາຫາລືຫົວຂໍ້ກ່ຽວກັບມິດຕະພາບ ແລະ ຄວາມສາມັກຄີ ສາມາດເປັນຈຸດເລີ້ມຕົ້ນການສົນທະນາຢ່າງເປັນທຳມະຊາດ ກ່ຽວກັບປະຕິສຳພັນລະຫວ່າງສະມາຊິກຄົນອື່ນໃນກຸ່ມ. ພວກເຂົາຈະເອົາໃຈໃສ່ຟັງກັນແລະກັນ; ພວກເຂົາຈະພະຍາຍາມເຂົ້າໃຈກັນສະເໝີ, ແມ່ນວ່າຄົນໃດຄົນ. ໜຶ່ງຈະມີປັນຫາໃນການສະແດງຄວາມຄິດກໍຕາມ ພວກເຈົາຈະບໍ່ດູຖູກສິ່ງທີ່ຄົນໃດຄົນໜຶ່ງມີໃຫ້ແບ່ງປັນ - ນີ້ຄືຕົວຢ່າງຂໍ້ສະຫຼຸບບາງສ່ວນ ທີ່ພວກເຂົາສາມາດສະຫຼຸບຮ່ວມກັນເປັນກຸ່ມຜ່ານການສົນທະນາດັ່ງກ່າວ.

- ການຮັບໃຊ້ເປັນຫົວຂໍ້ສຳຄັນ ທີ່ຕ້ອງຍົກຂຶ້ນມາເວົ້າໃນການປະຊຸມຂອງກຸ່ມໃນຊ່ວງທຳອິດ. ສາມາດເຕືອນເຍົາວະຊົນໄວວ່າ ໃນຖານະມະນຸດພວກເຮົາທຸກຄົນຕ້ອງເພິ່ງພາເຊິ່ງກັນແລະກັນ. ພວກເຮົາທຸກຄົນລ້ວນເປັນສະມາຊິກຂອງຄອບຄົວມະນຸດດຽວກັນ ແລະ ຕ້ອງພະຍາຍາມຢ່າງເຕັມທີ່ ເພື່ອປັບປຸງສະພາບຄວາມເປັນຢູ່ຂອງຊຸມຊົນຂອງພວກເຮົາ. ການນຶກພາບວ່າຈະເປັນແນວໃດຫາກພວກເຮົາບໍ່ໄດ້ຮັບຄວາມຊ່ວຍເຫຼືອຈາກຜູ້ຄົນອ້ອມຂ້າງ ອາດຊ່ວຍໃຫ້ເຍົາວະຊົນຕະໜັກເຖິງຄວາມສຳຄັນຂອງການຮັບໃຊ້.

- ການປຶກສາຫາລືເລື່ອງການຮັບໃຊ້ ຕ້ອງເໜືອກວ່າຄຳຖາມກ່ຽວກັບຄວາມພະຍາຍາມຂອງແຕ່ລະບຸກຄົນ ໃນການຮັບໃຊ້ຜູ້ອື່ນ ແລະ ພິຈາລະນາວ່າເຍົາວະຊົນສາມາດເຮັດຫຍັງໄດ້ແດ່ໃນຖານະກຸ່ມ. ແນ່ນອນວ່າ ສິ່ງສຳຄັນຄືຄວາມພະຍາຍາມເລີ້ມຕົ້ນຂອງພວກເຂົາ ຈະຕ້ອງມີໄລຍະເວລາສັ້ນ ແລະ ມີເປົ້າໝາຍທີ່ບັນລຸໄດ້ງ່າຍ. ດ້ວຍວິທີນີ້, ພວກເຂົາຈະໄດ້ຮັບຄວາມເຊື່ອໝັ້ນໃນສັກກະຍະພາບຮ່ວມກັນ ແລະ ຈະໄດ້ຮຽນຮູ້ທີ່ຈະເຮັດວຽກຮ່ວມກັນ, ເຊິ່ງຈະເປີດໂອກາດໃຫ້ພວກເຂົາດຳເນີນໂຄງການຮັບໃຊ້ຕ່າງໆທີ່ຍັ້ງຍືນຫຼາຍຂຶ້ນ. ຕັ້ງແຕ່ເລີ້ມຕົ້ນ, ຜູ້ຊຸກຍູ້ເຍົາວະຊົນຄວນຊີ້ນຳເຍົາວະຊົນໃນການເລີ້ມຕົ້ນຂະບວນການ ທີ່ພວກເຂົາຄິດກ່ຽວກັບຊີວິດຂອງຊຸມຊົນ ແລະ ວິທີທີ່ພວກເຂົາສາມາດມີສ່ວນສະໜັບສະໜູນ ເພື່ອປັບປຸງໃຫ້ດີຂຶ້ນໄດ້. ການຖາມຄຳຖາມທີ່ຕ້ອງໃຊ້ການສັງເກດກ່ຽວກັບຊຸມຊົນຈະຊ່ວຍໃຫ້ພວກເຂົາເຮັດສິ່ງນີ້ໄດ້. ດັ່ງນັ້ນ, ພວກເຂົາອາດເລີ້ມຕົ້ນດ້ວຍການຮັບໃຊ້ແບບງ່າຍໆ ເຊັ່ນການໄປຢ້ຽມຢາມຜູ້ປ່ວຍໃດຄົນໜຶ່ງໃນຊຸມຊົນ ແລ້ວຄ່ອຍໆດຳເນີນໂຄງການ - ຕົວຢ່າງເຊັ່ນ ການປູກຕົ້ນໄມ້ - ເຊິ່ງພວກເຂົາຈະຕ້ອງປຶກສາຫາລືກັບສະຖາບັນໃນທ້ອງຖິ່ນທີ່ກ່ຽວຂ້ອງ, ຂໍຄວາມຊ່ວຍເຫຼືອຈາກເພື່ອນ ແລະ ພໍ່ແມ່, ແລະ ການຈັດກຽມສຳລັບໄລຍະຍາວ. ໂດຍທຳມະດາແລ້ວ, ໃນລະຫວ່າງການປະຊຸມສອງສາມຄັ້ງທຳອິດຂອງກຸ່ມ, ຈະມີການປຶກສາກ່ຽວກັບທັກສະ ແລະ ຄວາມສາມາດບາງຢ່າງ ເຊັ່ນດຽວກັບທັດສະນະຄະຕິ ແລະ ຄຸນສົມບັດທີ່ຈຳເປັນ ສຳລັບການປະສານງານທີ່ມີປະສິດທິພາບ.

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

______________________________________________

- ການພັກຜ່ອນເພື່ອສຸຂະພາບ ໂດຍສະເພາະກິລາ, ເປັນອີກຫົວຂໍ້ໜຶ່ງທີ່ຕ້ອງເວົ້າເຖິງໃນການປະຊຸມຄັ້ງທຳອິດຂອງກຸ່ມເຍົາວະຊົນ. ນອກເໜືອຈາກການກວດສອບແນວຄວາມຄິດ ແລະ ບັນຫາຕ່າງໆທີ່ກ່ຽວຂ້ອງ, ຜູ້ຊຸກຍູ້ເຍົາວະຊົນຕ້ອງການຊ່ວຍໃຫ້ກຸ່ມ ລະບຸປະເພດຂອງກິດຈະກຳການພັກຜ່ອນ ທີ່ສາມາດປະຕິບັດທັງໃນລະຫວ່າງການປະຊຸມ ຫຼື ໃນໂອກາດພິເສດ. ຄຳເຕືອນນີ້ຈຳເປັນ: ການອອກກຳລັງກາຍຢ່າງໜັກ ເປັນການສະແດງອອກຕາມທຳມະຊາດຂອງພະລັງທີ່ເຍົາວະຊົນມີ. ປະສົບການທົ່ວໂລກຊີ້ໃຫ້ເຫັນຊັດເຈນວ່າ ການເລືອກກິດຈະກຳທາງສິນລະປະຫຼາຍກວ່າກິລາໃນກຸ່ມ ເລີ້ມຕົ້ນດ້ວຍຂະບວນການຄັດເລືອກ, ເຊິ່ງໃນທີ່ສຸດຊາວໜຸ່ມບາງຄົນກໍ່ຮູ້ສຶກລັງເລທີ່ຈະເຂົ້າຮ່ວມກິດຈະກຳຕໍ່ໄປ.

______________________________________________

______________________________________________

ເມື່ອພິຈາລະນາຈາກປະເດັນທັງໝົດທີ່ນຳສະເໜີຂ້າງຕົ້ນ, ເປັນສິ່ງສຳຄັນທີ່ຈະຕະໜັກວ່າ ເມື່ອຜູ້ຊຸກຍູ້ເຍົາວະຊົນມີປະສົບການຫຼາຍຂຶ້ນ, ພວກເຂົາກໍ່ຈະສາມາດຊ່ວຍໃຫ້ເຍົາວະຊົນຄິດຄົ້ນ ແລະ ດຳເນີນການກິດຈະກຳຕ່າງໆທີ່ເສີມເຊິ່ງກັນແລະກັນໄດ້ດີຂຶ້ນ - ກິດຈະກຳທີ່ເປັນການສະແດງອອກໃນທາງປະຕິບັດຂອງຄວາມຮັບຮູ້ທີ່ໄດ້ຮັບ ຜ່ານການສຶກສາປຶ້ມຕ່າງໆ ແລະ ອຸດົມຄະຕິອັນສູງສົ່ງທີ່ພວກເຂົາບຸກບືນທີ່ຈະຮັກສາໄວ້.

## ຕອນທີ 30

ຈາກການປຶກສາຫາລືຂອງພວກເຮົາໃນສອງພາກທຳອິດຂອງປຶ້ມເຫຼັ້ມນີ້, ເຊິ່ງເປັນແນວຄວາມຄິດຫຼັກ, ການກະກຽມຂອງເຈົ້າເພື່ອຮັບໃຊ້ໃນຖານະຜູ້ຊຸກຍູ້ເຍົາວະຊົນໃນພາກນີ້, ຍັງໄດ້ກ້າວໄປສູ່ຂະໜາດການປະຕິບັດອີກດ້ວຍ. ເມື່ອເຈົ້າມີປະສົບການໃນດ້ານການຮັບໃຊ້ຫຼາຍຂຶ້ນ, ໜ້າປຶ້ມນີ້ຈະສືບຕໍ່ສະເໜີແນວຄິດສຳລັບການທົບທວນແນວຄິດຂອງເຈົ້າຕໍ່ໄປ. ຜູ້ຊຸກຍູ້ເຍົາວະຊົນຫຼາຍຄົນພົບວ່າປະເດັນຕ່າງໆໃນຫົວຂໍ້ກ່ອນໜ້ານີ້ມີປະໂຫຍດຢ່າງຍິ່ງ ແລະ ອ້າງອີງເຖິງປະເດັນເລົ່ານີ້ຊ້ຳແລ້ວຊ້ຳອີກ, ການຮັກສາປຶ້ມບັນທຶກປະສົບການຂອງພວກເຂົາ ແລະ ການປຶກສາຫາລືຂອງບັນດາຜູ້ຊຸກຍູ້ເຍົາວະຊົນ. ໃນລະຫວ່າງນັ້ນ, ຂໍແນະນຳໃຫ້ຈົບພາກນີ້ດ້ວຍການທົບທວນເຖິງຜົນທີ່ຕາມມາ ຈາກຄວາມພະຍາຍາມທີ່ເຈົ້າກຳລັງດຳເນີນການຢູ່ຂະນະນີ້. ຖ້ອຍຄຳຂອງທັມມະສະພາຍຸຕິທັມສາກົນ ກ່າວເຖິງຊາວໜຸ່ມທົ່ວໂລກ, ສາມາດນຳໄປໃຊ້ໄດ້ກັບທຸກຄົນ ທີ່ຕ້ອງການເດີນຕາມເສັ້ນທາງແຫ່ງການຮັບໃຊ້:

> **"ບໍ່ໜ້າແປກໃຈເລີຍ ທີ່ກຸ່ມອາຍຸຂອງເຈົ້າໄດ້ຮັບປະສົບການຫຼາຍທີ່ສຸດ ໃນການຊ່ວຍເຫຼືອເຍົາວະຊົນ ແລະ ເດັກນ້ອຍເຊັ່ນກັນ ໃນການພັດທະນາຄຸນນະທັມ ແລະ ຈິດວິນຍານ, ສົ່ງເສີມໃຫ້ພວກເຂົາມີຄວາມສາມາດໃນການຮັບໃຊ້ຮ່ວມກັນ ແລະ ມິດຕະພາບທີ່ແທ້ຈິງ. ເມື່ອຮູ້ດີວ່າວິນຍານຂອງຊາວໜຸ່ມເລົ່ານີ້ຕ້ອງເດີນທາງ ໃນໂລກທີ່ເຕັມໄປດ້ວຍອຸປະສັກ ແລະ ໂອກາດຕ່າງໆ ເຈົ້າກໍຈະເຂົ້າໃຈເຖິງຄວາມສຳຄັນຂອງການເສີມຄວາມເຂັ້ມແຂງ ແລະ ການກະກຽມຄວາມພ້ອມທາງຈິດວິນຍານ. ດ້ວຍຄວາມຕະໜັກຂອງເຈົ້າວ່າ ພຣະບາຮາອຸລລາຫ໌ ສະເດັດມາເພື່ອປ່ຽນແປງທັງຊີວິດພາຍໃນ ແລະ ສະພາບພາຍນອກຂອງມະນຸດຊາດ, ເຈົ້າກຳລັງຊ່ວຍເຫຼືອຜູ້ທີ່ອາຍຸນ້ອຍກວ່າເຈົ້າ ໃນການເສີມສ້າງບຸກຄະລິກຂອງພວກເຂົາ ແລະ ກະກຽມທີ່ຈະຮັບຜິດຊອບຕໍ່ຄວາມເປັນຢູ່ທີ່ດີຂອງຊຸມຊົນຂອງພວກເຂົາ. ຂະນະທີ່ພວກເຂົາເຂົ້າສູ່ໄວລຸ້ນ**

ຕອນຕົ້ນ, ເຈົ້າກຳລັງຊ່ວຍໃຫ້ພວກເຂົາເພີ່ມພູນພະລັງແຫ່ງການສະແດງອອກ, ຕະຫຼອດຈົນຊ່ວຍໃຫ້ຄວາມຮູ້ສຶກທາງສິນລະທັມອັນແຂງແກ່ນ ຍັ່ງຮາກເລິກໃນຕົວພວກເຂົາ. ໃນການກະທຳເຊັ່ນນີ້, ຈະເຮັດໃຫ້ຄວາມຮູ້ສຶກເຖິງຈຸດມຸ່ງໝາຍຂອງເຈົ້າຊັດເຈນຍິ່ງຂຶ້ນ ເມື່ອເຈົ້າປະຕິບັດຕາມຄຳເຕືອນຂອງ ພຣະບາຮາອຸລລາຫ໌: 'ຂໍໃຫ້ການກະທຳ ເປັນອາພາອນຂອງເຈົ້າ ບໍ່ພຽງແຕ່ຄຳເວົ້າ.'" [52]

## ເອກະສານອ້າງອີງ


1. From a letter dated 11 June 2006 written on behalf of the Universal House of Justice to an individual, in *Social Action: A Compilation Prepared by the Research Department of the Universal House of Justice* (Wilmette: Bahá'í Publishing Trust, 2020), no. 117, p. 62.
2. From a letter dated 19 July 2006 written on behalf of the Universal House of Justice to two individuals.
3. From a letter dated 17 April 1936 written on behalf of Shoghi Effendi to an individual, published in *Directives from the Guardian* (New Delhi: Bahá'í Publishing Trust, 1973), p. 84.
4. 'Abdu'l-Bahá, in the compilation *Social Action*, no. 190, pp. 112–13.
5. From a talk given on 20 September 1912, published in *The Promulgation of Universal Peace: Talks Delivered by 'Abdu'l-Bahá during His Visit to the United States and Canada in 1912* (Wilmette: Bahá'í Publishing, 2012), par. 9, p. 471.
6. From a talk given by 'Abdu'l-Bahá on 4 May 1912, ibid., par. 9, p. 125.
7. Report of 'Abdu'l-Bahá's words as cited by J. E. Esslemont, *Bahá'u'lláh and the New Era: An Introduction to the Bahá'í Faith* (Wilmette: Bahá'í Publishing, 2006, 2017 printing), p. 101.
8. From a talk given by 'Abdu'l-Bahá on 4 May 1912, published in *The Promulgation of Universal Peace*, par. 7, p. 123.
9. From a talk given by 'Abdu'l-Bahá on 26 May 1912, ibid., par. 1, p. 204.
10. 'Abdu'l-Bahá, in *Some Answered Questions* (Wilmette: Bahá'í Publishing, 2014, 2016 printing), no. 84.2, p. 440.
11. *Tablets of Abdul-Baha Abbas* (New York: Bahá'í Publishing Committee, 1915, 1940 printing), vol. 2, p. 276. (authorized translation)
12. *Khitábát: Talks of 'Abdu'l-Bahá* (Hofheim-Langenhain: Bahá'í-Verlag, 1984), pp. 131–32. (authorized translation)
13. From a talk given by 'Abdu'l-Bahá on 4 May 1912, published in *The Promulgation of Universal Peace*, par. 8, p. 124.
14. *Selections from the Writings of 'Abdu'l-Bahá* (Wilmette: Bahá'í Publishing, 2010, 2015 printing), no. 230.1, p. 428.
15. From a talk given on 10 November 1911, published in *Paris Talks: Addresses Given by 'Abdu'l-Bahá in 1911* (Wilmette: Bahá'í Publishing, 2006, 2016 printing), no. 29.41, p. 113.
16. *Abdul Baha on Divine Philosophy* (Boston: The Tudor Press, 1918), p. 30.
17. *Selections from the Writings of 'Abdu'l-Bahá*, no. 24.1, pp. 78–79.
18. *Tablets of Abdul-Baha Abbas* (New York: Bahá'í Publishing Committee, 1909, 1930 printing), vol. 1, p. 63. (authorized translation)
19. *Selections from the Writings of 'Abdu'l-Bahá*, no. 155.4, p. 253.

20. ‘Abdu’l-Bahá, *The Secret of Divine Civilization* (Wilmette: Bahá’í Publishing, 2007, 2016 printing), par. 118, p. 83.

21. *The Tabernacle of Unity: Bahá’u’lláh’s Responses to Mánikchí Ṣáḥib and Other Writings* (Haifa: Bahá’í World Centre, 2006), no. 1.11, pp. 7–8.

22. From a talk given by ‘Abdu’l-Bahá on 27 October 1911, published in *Paris Talks*, no. 12.8, p. 42.

23. *Tablets of Abdul-Baha Abbas*, vol. 1, pp. 71–72.

24. *Selections from the Writings of ‘Abdu’l-Bahá*, no. 97.1, pp. 177–78.

25. *Tablets of Bahá’u’lláh Revealed after the Kitáb-i-Aqdas* (Wilmette: Bahá’í Publishing Trust, 1988, 2005 printing), no. 6.40, p. 72.

26. *The Proclamation of Bahá’u’lláh to the Kings and Leaders of the World* (Haifa: Bahá’í World Centre, 1967, 1978 printing), p. 78.

27. *Gleanings from the Writings of Bahá’u’lláh* (Wilmette: Bahá’í Publishing, 1983, 2017 printing), XLIII, par. 2, p. 104.

28. From a talk given by ‘Abdu’l-Bahá on 3 December 1912, published in *The Promulgation of Universal Peace*, par. 3, pp. 648–49.

29. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 9.20, p. 143.

30. Ibid., no. 11.28, p. 172.

31. *Tablets of Abdul-Baha Abbas*, vol. 1, p. 31. (authorized translation)

32. Ibid., p. 194. (authorized translation)

33. Bahá’u’lláh, *Epistle to the Son of the Wolf* (Wilmette: Bahá’í Publishing Trust, 1988, 2016 printing), p. 12.

34. *Tablets of Bahá’u’lláh Revealed after the Kitáb-i-Aqdas*, no. 11.27, p. 172.

35. Ibid., no. 11.30, pp. 172–73.

36. Ibid., no. 13.15, p. 199.

37. *Gleanings from the Writings of Bahá’u’lláh*, XVIII, par. 1, p. 47.

38. *Prayers and Meditations by Bahá’u’lláh* (Wilmette: Bahá’í Publishing Trust, 1987, 2008 printing), XXXII, p. 41.

39. *The Tabernacle of Unity*, no. 1.2, p. 4.

40. From a talk given by ‘Abdu’l-Bahá on 5 May 1912, published in *The Promulgation of Universal Peace*, par. 3, p. 130.

41. *Prayers and Meditations*, CXIII, p. 191.

42. Bahá’u’lláh, in *Bahá’í Prayers: A Selection of Prayers Revealed by Bahá’u’lláh, the Báb, and ‘Abdu’l-Bahá* (Wilmette: Bahá’í Publishing Trust, 2002, 2017 printing), pp. 181–82.

43. *Prayers and Meditations*, CLXXVIII, p. 299.

44. Ibid., LXXIX, pp. 131–32.

45. Bahá'u'lláh, in *Bahá'í Prayers*, pp. 219–20.

46. 'Abdu'l-Bahá, ibid., pp. 243–44.

47. Ibid., p. 28.

48. Bahá'u'lláh, ibid., p. 183.

49. The Báb, ibid., p. 186.

50. 'Abdu'l-Bahá, ibid., p. 197.

51. *Prayers and Meditations*, XCI, pp. 154–55.

52. From a message dated 1 July 2013 written to the participants in the forthcoming 114 youth conferences throughout the world, published in *Framework for Action: Selected Messages of the Universal House of Justice and Supplementary Material, 2006–2016* (West Palm Beach: Palabra Publications, 2017), no. 27.4, p. 176.